ຄູ່ມືການຝຶກອົບຮົມ
ກ່ຽວກັບວຽກງານຄຸ້ມຄອງ ແລະ ຮັກສາປ່າໄມ້
ແລະ ຜະລິດວັດສະດຸຈາກໄມ້

ສະບັບພາສາລາວ

育林・素材生産作業に関する講習テキスト（ラオス語版）

ສາລະບານ

ภาคที่ I

■ການສົ່ງເສີມບໍ່ໃຫ້ມີອຸບັດຕິເຫດ, ການເຮັດວຽກເປັນທີມ ແລະ ການສື່ສານ

No.01 ຄວາມປອດໄພຢູ່ສະຖານທີ່ເຮັດວຽກ — 2

ຄວາມຮັບຮູ້ ແລະ ທັດສະທີ່ສຳຄັນ ເພື່ອຮັບປະກັນຄວາມປອດໄພ ທັດສະວິທີການຮຽນຮູ້ຄວາມປອດໄພ ແລະ ການສຶກສາສຸຂະພາບ 3

ຄວາມສຳຄັນຂອງການສື່ສານ ① ການສ້າງ ແລະ ແບ່ງປັນ ແຜນການເຮັດວຽກ 7

ຄວາມສຳຄັນຂອງການສື່ສານ ② ການສື່ສານເປັນສິ່ງທີ່ຈຳເປັນໃນການເຮັດວຽກໃຫ້ປອດໄພ 14

ພື້ນຖານ ໃນການປ້ອງກັນອຸບັດຕິເຫດ ໃນຄະນະປະຕິບັດວຽງານ 1

ອຸປະກອນຄວາມປອດໄພສຳລັບແຕ່ລະປະເພດ ໃນການເຮັດວຽກ 16

ພື້ນຖານການປ້ອງກັນອຸບັດຕິເຫດຢູ່ບ່ອນເຮັດວຽກ 2

ຫຼັກການ ຂອງການປະຕິບັດວຽກງານ ປ້ອງກັນອຸບັດຕິເຫດ, ຄວາມປອດໄພ ແລະ ສຸຂະພາບ ແຕ່ລະກິດຈະກຳ.....19

No.02 ການດູແລສຸຂະພາບ — 26

ການເຮັດວຽກຢູ່ກາງແຈ້ງ ແລະ ການຮັກສາ ສຸຂະພາບ 1 ຂໍ້ຄວນລະມັດລະວັງ ຂອງການເຮັດວຽກຢູ່ກາງແຈ້ງ 27

ການເຮັດວຽກກາງແຈ້ງ ແລະ ການຮັກສາ ສຸຂະພາບ 2 ແລະ ການພັກຜ່ອນໃຫ້ພຽງພໍ 31

ການເຮັດວຽກກາງແຈ້ງ ແລະ ການຮັກສາ ສຸຂະພາບ 3 ການປ້ອງກັນການເປັນວິນ (ໂລກລົມຊັກ)..... 34

ການຮັກສາ ສຸຂະພາບ ແລະ ອາຫານ 1 ຄວາມສົມດຸນທາງດ້ານອາຫານ ແລະ ພຶດຕິກຳກ ໃນການບໍລິໂພກອາຫານ 43

ການຮັກສາ ສຸຂະພາບ ແລະ ອາຫານ 2 ການບໍລິຫານ, ຮັດສາສຸຂະພາບຈິດໃຈ ແລະ ຮ່າງກາຍ 47

ภาคที่ II

■ ການບຳລຸງຮັກສາ

No.03 ການບຳລຸງຮັກສາເຄື່ອງຕັດຫຍ້າ — 54

ຄວາມສຳຄັນໃນການບຳລຸງຮັກສາເຄື່ອງຕັດໄມ້/ຫຍ້າ 55

ປະເພດ ແລະ ໂຄງສ້າງ ຂອງເຄື່ອງຕັດໄມ້/ຫຍ້າ 56

ການກວດກາອຸປະກອນຄວາມປອດໄພຂອງເຄື່ອງຕັດໄມ້/ຫຍ້າ 60

ການກວດກາເຄື່ອງຕັດໄມ້/ຫຍ້າ (ການອະນາໄມ) ການບຳລຸງຮັກສາ 62

ມາດຕະຖານ ແລະ ປະເພດ ຂອງໃບມີດຕັດໄມ້/ຫຍ້າ 64

ການລັບຄົມໃບມີດຕັດໄມ້/ຫຍ້າ 66

ນ້ຳມັນປະສົມ 69

No.04 ການບຳລຸງຮັກສາຈັກເລື່ອຍໄມ້ (ຈັກສະຕິນ) — 71

ຄວາມສຳຄັນໃນການບຳລຸງຮັກສາຈັກເລື່ອຍໄມ້ 72

ໂຄງປະກອບສ້າງຂອງຈັກເລື່ອຍໄມ້ 74

ການກວດກາສາຍໂສ້ (ການອະນາໄມ)/ການບຳລຸງຮັກສາສາຍໂສ້ຈັກເລື່ອຍໄມ້ 76

ສາຍໂສ້ (ເລື່ອຍໂສ້) 78

เປັນຫຍັງ ການລັບຄົມຈຶ່ງມີຄວາມຈຳເປັນ—ການລັບຄົມທີ່ຖືກຕ້ອງ 81
ນ້ຳມັນເຊື້ອເພີງ ແລະ ນ້ຳມັນເຄື່ອງໂສ້ 86

No.05 ການບຳລຸງຮັກສາເຄື່ອງມື ແລະ ອຸປະກອນ ——— 88
ການບຳລຸງຮັກສາ ສາຍສະລິງ, ອຸປະກອນ ແລະ ອື່ນໆ 89
ການນຳໃຊ້ເຊືອກ 100
ການບຳລຸງຮັກສາ ເຄື່ອງມື, ອຸປະກອນ ແລະ ອື່ນໆ 104

ภาคผนวก และ รวมคำศัพท์ III

■ ການປູກປ່າ

No.06 ປະເພດແລະຈຸດປະສົງຂອງວຽກງານການປູກປ່າ ——— 109
ພາລະບົດບາດ ແລະ ຄວາມສຳຄັນ ຂອງນະວັດວິທະຍາດ້ານປ່າໄມ້ 110
ພື້ນຖານການກະກຽມດິນ 112
ພື້ນຖານຂອງການປູກເບ້ຍໄມ້ 115
ການປົກປັກຮັກສາປ່າໄມ້ ໃນພື້ນທີ່ປູກໄມ້ 124

No.07 ວຽກງານການປູກປ່າທີ່ປອດໄພ ——— 131
ສຳລັບວຽກງານປູກຕົ້ນໄມ້ທີ່ປອດໄພ 132
ວຽກງານການກະກຽມພື້ນທີ່ຕົວຈິງ 138
ວຽກງານການປູກເບ້ຍໄມ້ຕົວຈິງ 141
ມາດຕະການຕົວຈິງ ຕໍ່ກັບຄວາມເສຍຫາຍ ທີ່ເກີດຈາກສັດປ່າ ໃນພື້ນທີ່ປູກຕົ້ນໄມ້ 147

■ ການຮັກສາປ່າໄມ້

No.08 ປະເພດແລະຈຸດປະສົງຂອງການຮັກສາປ່າໄມ້ ——— 156
ບົດບາດ ແລະ ຄວາມສຳຄັນ ຂອງນະວັດວິທະຍາດ້ານປ່າໄມ້ 157
ການຕັດຫຍ້າ 158
ການຕັດເຄືອໄມ້ 167
ການຖາກຖາງ 168
ການຕັດງ່າໄມ້ 169
ການອາມາໄມຫິມະ ອອກຈາກຕົ້ນໄມ້ທີ່ປູກ 174

No.09 ວຽກງານການຮັກສາປ່າໄມ້ທີ່ປອດໄພ ——— 176
ການຢືນຢັນຄວາມປອດໄພກ່ອນການເຮັດວຽກ (ການຝຶກອົບຮົມ ພາກປະຕິບັດຕົວຈິງ) 177
ວຽກງານການຕັດຫຍ້າ 179
ວຽກຕັດເຄືອໄມ້ 189

ວຽກງານຖາກຖາງ 190
ວຽກງານຕັດງ່າໄມ້ 191
ວຽກງານການເອົາຕົ້ນໄມ້ຂຶ້ນຈາກຫິມະ (ການເອົາຕົ້ນໄມ້ທີ່ລົ້ມຍ້ອນຫິມະຕັ້ງຂຶ້ນ)..... 193

ภาคผนวกที่ IV

■ການຕັດໄມ້ດ້ວຍເຄື່ອງເລື່ອຍໄມ້ - ການແປຮູບໄມ້ - ການເກັບຮັກສາໄມ້

No.10 ການດຳເນີນການຜະລິດວັດສະດຸຈາກໄມ້ ໂດຍການນຳໃຊ້ຈັກເລື່ອຍໄມ້ ——— 196
ອັນຕະລາຍໃນວຽກງານການຕັດໄມ້ ແລະ ການຮັບປະກັນຄວາມປອດໄພ..... 197
ການສຳຫຼວດພື້ນທີ່ຕັດໄມ້ເບື້ອງຕົ້ນ 201
ການປະຊຸມກ່ອນເລີ່ມເຮັດວຽກ 207
ການກຳຈັດງ່າໄມ້ 209
ການຕັດໄມ້ທ່ອນ (ບັ່ນທ່ອນ) 212

No.11 ວຽກງານການແປຮູບໄມ້ທີ່ປອດໄພ ——— 215
ການກວດກາຄວາມປອດໄພກ່ອນການເຮັດວຽກ (ກວດກາກ່ອນການຝຶກປະຕິບັດ) 216
ການຝຶກອົບຮົມ ການປະຕິບັດງານການກຳຈັດກິ່ງງ່າລຳຕົ້ນ..... 217
ພື້ນຖານຂອງການຕັດໄມ້ທ່ອນ (ບັ່ນທ່ອນ), ການປະຕິບັດຕົວຈິງກ່ຽວກັບການຕັດໄມ້ທ່ອນ 226

ໂຮມຄຳສັບ ——— 233
ลายภาพอุปะกอบถอามปอดไพ ——— 237
ดัดชะนี ——— 238

I
ທົ່ວໄປ

ການສົ່ງເສີມບໍ່ໃຫ້ມີອຸບັດຕິເຫດ, ການເຮັດວຽກເປັນທີມ ແລະ ການສື່ສານ

No.01 ຄວາມປອດໄພຢູ່ສະຖານທີ່ເຮັດວຽກ

No.02 ການດູແລສຸຂະພາບ

ການສົ່ງເສີມບໍ່ໃຫ້ມີອຸບັດຕິເຫດ, ການເຮັດວຽກເປັນທີມ ແລະ ການສື່ສານ

No.01 ຄວາມປອດໄພຢູ່ສະຖານທີ່ເຮັດວຽກ

ເປົ້າໝາຍຂອງການບັນລະຍາຍ

ການເຮັດໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມ ເຂົ້າໃຈກ່ຽວກັບຄວາມປອດໄພ ໃນການຮຽນຮູ້ ທາງດ້ານວຽງວິຊາສະເພາະ ແລະ ໃນການປະຕິບັດວຽກງານໃຫ້ປອດໄພ ແລະ ການສົ່ງເສີ້ມ ທາງດ້ານຄວາມປອດໄພ ທີ່ມີຄວາມສຳຄັນສຳລັບພວກເຂົາ ຢູ່ບ່ອນເຮັດວຽກ.

ຄຳສຳຄັນ

ແຜນວຽກ, ເຫດການທີ່ພາໃຫ້ເກີດອຸບັດຕິເຫດ (ເຫດການ HH), ກົດເກນຂອງໄຮຣິດ (Heinrich), ກິດຈະກຳການຄາດ ຄະ ເນອັນຕະລາຍ, ການຝຶກອົບຮົມ ກ່ຽວກັບ ການຄາດຄະເນອັນຕະ ລາຍ (KYT), ກອງປະຊຸມຄາດຄະເນ ອັນຕະລາຍ, ການໃຊ້ມືຊີ້ໄປພ້ອມເວົ້າໄປພ້ອມ, ການ ປະເມີນຄວາມສ່ຽງ, ກິດຈະກຳທີ່ເຮັດໃຫ້ເບິ່ງເຫັນອັນຕະລາຍ

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

ພວກເຮົາຄິດວ່າ ການປະຕິບັດຕາມ ມາດຕະການຄວາມປອດໄພແລ້ວ ພວກເຮົາກໍຈະປອດໄພ ແລະ ບໍ່ມີຄວາມອັນຕະລາຍ, ແຕ່ວ່າ ການຄິດແບບນັ້ນ ມັນບໍ່ໄດ້ໝາຍຄວາມວ່າ ຕົ້ນຕໍຂອງຄວາມອັນຕະລາຍນັ້ນ ຈະຫາຍໄປ. ການພັດທະນາ ຄວາມສາມາດໃນການເບິ່ງເຫັນຄວາມອັນຕະລາຍຢ່າງສະໝ່ຳສະເໝີ. ໃຫ້ເອົາໃຈໃສ່ວ່າ ເຖິງຈະເປັນສະຖານທີ່ດຽວກັນ ກໍຕາມ, ແຕ່ຄວາມສາມາດໃນການຮູ້ສຶກເຖິງຄວາມອັນຕະລາຍຂອງແຕ່ລະຄົນນັ້ນ ຈະບໍ່ຄືກັນ.

ຄວາມຮັບຮູ້ ແລະ ທັດສະທີ່ສຳຄັນ ເພື່ອຮັບປະກັນຄວາມປອດໄພ ທັດສະວິທີການຮຽນຮູ້ຄວາມປອດໄພ ແລະ ການສຶກສາສຸຂະພາບ

ຍົກສູງຄວາມຮັບຮູ້ ໃນການຮັບປະກັນ ແລະ ການຮັກສາຄວາມປອດໄພ, ການພັດທະນາທັດສະໃນການປະຕິບັດ.

ສິ່ງທີ່ສຳຄັນທີ່ສຸດໃນເວລາຮຽນຮູ້ ກ່ຽວກັບຄວາມປອດໄພ ແລະ ການຮັກສາສຸຂະພາບ, ບໍ່ພຽງແຕ່ຈຳຂໍ້ກຳນົດ ແລະ ກົດລະບຽບຄວາມປອດໄພ ເທົ່ານັ້ນ. ການຈື່ກົດລະບຽບ ເປັນສິ່ງທີ່ສຳຄັນ, ແຕ່ສຳຄັນທີ່ສຸດ ຕ້ອງມີສະຕິຢູ່ຕະຫຼອດເວລາ ໃນການຮັກສປະຕິບັດກົດລະບຽບ ເພື່ອຮັບປະກັນ ຄວາມປອດໄພ. ເຊັ່ນດຽວກັນກັບຜູ້ສອນ, ເຊິ່ງຜູ້ສອນບໍ່ແມ່ນພຽງແຕ່ຖ່າຍທອດ ກົດລະບຽບເທົ່ານັ້ນ, ແຕ່ຜູ້ສອນຕ້ອງຮູ້ວ່າ ຕ້ອງເຮັດແນວໃດ ຈຶ່ງຈະສະມາດສົ່ງຄວາມຮັບຮູ້ ກ່ຽວກັບ ການຮັບປະກັນ ແລະ ການ ຮັກສາຄວາມປອດໄພ.

ການແນະນຳ ກ່ຽວກັບ ວິທີການຮຽນຮູ້ (ວິທີການດຳເນີນການ) ເຊິ່ງເປັນເຕັກນິກທາງການສຶກສາ ກ່ຽວກັບ ຮັກສາສຸຂະສຶກສາ ແລະ ຄວາມປອດໄພ, ເຊິ່ງເຕັກນິກເຫຼົ່ານັ້ນ ແມ່ນຈະແນະນຳ ໂດຍກົມ ແຮງງານ ແລະ ສະຫວັດດີການປະຈຳທ້ອງຖິ່ນ ແລະ ຫ້ອງການ ກວດກາ ມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ, ສິ່ງນີ້ ຖືກສ້າງຂຶ້ນມາ ສຳລັບ ຜູ້ອອກແຮງງານທີ່ຍັງບໍ່ຊຳນິ ຊຳນານ (ອຸດສາຫະກຳການຜະລິດ) ທີ່ເປັນຜູ້ອອກແຮງງານທີ່ມີປະສົບການບໍ່ເທົ່າໃດປີ, ເຊິ່ງມັນໄດ້ຮວບຮວມ ກ່ຽວກັບ ສິ່ງທົ່ວໄປ ໃນບ່ອນ ເຮັດວຽກທີ່ກ່ຽວຂ້ອງກັບປ່າໄມ້ ແລະ ແນວຄວາມຄິດທີ່ສຳຄັນໃນການຮຽນຮູ້ທັດສະນະຄະຕິ ແລະ ຄວາມຮັບຮູ້ ກ່ຽວກັບການຮັບປະກັນ ແລະ ຮັກສາຄວາມປອດໄພ.

> ເອກະສານ: "ຄູ່ມື ກ່ຽວກັບ ສຸຂະພາບ ແລະ ຄວາມປອດໄພ ສຳລັບຜູ້ອອກແຮງງານທີ່ຍັງບໍ່ຊຳນິຊຳນານດ້ານອຸດສາຫະກຳການຜະລິດ" 03/2016 ກົມແຮງງານປະຈຳທ້ອງຖິ່ນ ແລະ ຫ້ອງການກວດກາມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຈຸດສຳຄັນ ຂອງ ວິທີການຮຽນຮູ້ (ວິທີການສອນ) ກ່ຽວກັບຄວາມປອດໄພ ທີ່ຈະແນະນຳ ແມ່ນ ໄດ້ສະຫຼຸບ ຕາມດ້ານລຸ່ມນີ້.

- ຈຸດທີ 1: ຮຽນຮູ້ ດ້ວຍ 3 ຂັ້ນຕອນ
- ຈຸດທີ 2: ຮຽນຮູ້ ກ່ຽວກັບເຫດຜົນ ແລະ ພື້ນຖານທີ່ວ່າ ເປັນຫຍັງມັນຈຶ່ງເປັນອັນຕະລາຍ

ກ່ອນການຈົດຈຳ ກ່ຽວກັບວິທີການດຳເນີນການປ້ອງກັນອຸບັດຕິເຫດແລະ ກົດລະບຽບ ຄວາມປອດໄພ, ທຳອິດ ຜູ້ເຂົ້າຝຶກອົບຮົມເອງ ຕ້ອງຮູ້ ກ່ອນວ່າ ຄວາມອັນຕະລາຍ ທີ່ຢູ່ໃກ້ໂຕເຂົາເຈົ້ານັ້ນ ມີຫຍັງແນ່ ທີ່ອາດຈະເກີດຂຶ້ນໄດ້ ແລະ ການຍົກສູງຄວາມມີສະຕິຕື່ນໂຕ ວ່າ:"ຈະເຮັດແນວໃດດີ ເພື່ອປ້ອງກັນບໍ່ໃຫ້ມັນເກີດຂຶ້ນ" ນັ້ນ ຈະເປັນວິທີການທີ່ມີປະສິດຕິພາບສູງຕໍ່ການຮຽນຮູ້. ວິທີການບັນລະຍາຍເພື່ອບັນລຸສິ່ງນັ້ນ ມີ 3 ຂັ້ນຕອນ.

ຂັ້ນຕອນ ທີ 1: ການຮຽນຮູ້ ໃນບ່ອນເຮັດວຽກ ວ່າ: ມີສິ່ງອັນຕະລາຍຕ່າງໆແນວໃດ (ການເກີດອຸບັດຕິເຫດແຮງງານ, ເຫດການທີ່ເກືອບຈະເກີດອຸບັດຕິເຫດ ເປັນຕົ້ນ)

ສິ່ງທຳອິດທີ່ຕ້ອງເຮັດ ແມ່ນການກວດກາ ສິ່ງທີ່ຈະພາໃຫ້ເກີດອຸບັດຕິເຫດແຮງງານ ທີ່ອາດຈະເກີດຂຶ້ນຕົວຈິງຢູ່ບ່ອນເຮັດວຽກ ດ້ວຍຕົນເອງ (ເບິ່ງຕົວຢ່າງຕ່າງໆຢູ່ໃນເວັບໄຊດ້ານລຸ່ມນີ້) ແລະ ການຮຽນຮູ້ ກ່ຽວກັບອັນຕະລາຍທີ່ມີຢູ່ໃນບ່ອນເຮັດວຽກ. ສິ່ງເລົ່ານີ້ຈະຊ່ວຍໃຫ້ຮັບຮູ້ເຖິງ ອັນຕະລາຍທີ່ຢູ່ໃກ້ໂຕ ຂອງທ່ານ ແລະ ອັນຕະລາຍ ທີ່ອາດຈະເກີດຂຶ້ນກັບໂຕທ່ານເອງ. ເຊັ່ນດຽວກັນກັບເຫດການທີ່ເກືອບຈະເກີດອຸບັດຕິເຫດ.


- ເວັບໄຊທີ່ຂຽນກ່ຽວກັບອຸບັດຕິເຫດແຮງງານທີ່ກ່ຽວຂ້ອງກັບວຽກງານປ່າໄມ້

  "ເວັບໄຊກ່ຽວກັບຄວາມປອດໄພຢູ່ບ່ອນເຮັດວຽກ" ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ສາເຫດ, ສະພາບການ ທີ່ພາໃຫ້ເກີດອຸບັດຕິເຫດ

ບົດລາຍງານທີ່ຮວບຮວມໂດຍລັດຖະບານ ກ່ຽວກັບ ສະພາບການເກີດອຸບັດຕິເຫດແຮງງານໃນຂົງເຂດວຽກງານປ່າໄມ້ (ປະເພດຂອງ ວຽກງານ) ແມ່ນ ໄດ້ຖືກວິເຄາະໄຈແຍກ ດັ່ງທີ່ສະແດງຢູ່ໃນຮູບ 1-1 ຫາ 1-3. ເຫັນໄດ້ວ່າ ມັນເກີດຂຶ້ນຈຳນວນຫຼາຍຄັ້ງໃນລະຫວ່າງການຕັດ ຕົ້ນໄມ້ (ໃນນັ້ນ, ໂດຍສະເພາະ ແມ່ນ ວຽກງານການນຳໃຊ້ຈັກເລື່ອຍໄມ້).

ຂັ້ນຕອນ ທີ 2: ຮັບຮູ້ເຖິງອັນຕະລາຍ (ຮູ້ກ່ຽວກັບອັນຕະລາຍທີ່ເປັນໄປໄດ້ທັງຄົນ ແລະ ສິ່ງຂອງ ຕ່າງໆ)



ຮູບທີ 1-1 ຈຳນວນຜູ້ເສຍຊີວິດຕາມປະເພດໜ້າວຽກໃນວຽກງານປ່າໄມ້ (2020)

ເອກະສານ: ການລາຍງານ ກ່ຽວກັບການບາດເຈັບ ແລະ ເສຍຊີວິດຂອງຜູ້ອອກແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ອຸບັດຕິເຫດແຮງງານທີ່ໄດ້ເຫັນໃນຂັ້ນຕອນທີ 1 ສາມາດເກີດຂຶ້ນຈາກຄົນ ຫຼື ສິ່ງຂອງຕ່າງໆໄດ້. ຕົວຢ່າງ “ທີ່ອາດຈະ” ເກີດຈາກຄົນ ຫຼື ຈະເກີດຈາກວັດຖຸສິ່ງຂອງ.

ອຸບັດຕິເຫດທີ່ຈະເກີດ ເຊັ່ນ: ຄົນອາດຈະລົ້ມ, ຕົກ, ເສຍການຊົ່ງຕົວເວລາຢູ່ເທິງຄ້ອຍ ແລະ ມົ້ນລົ້ມ ກໍເປັນໄປໄດ້, ງ່າໄມ້ທີ່ແຫ່ວ ຫຼື ຕາຍ ອາດຈະຕົກລົງມາກໍເປັນໄດ້, ຕົ້ນໄມ້ອາດຈະໂຫຍລົງມາຍ້ອນພາຍຸກໍເປັນໄດ້, ໃນຂະນະທີ່ລົດຕັດໄມ້ ກຳລັງຕັດໄມ້ຢູ່ໂສ້ອາດ ຈະຂາດ ແລະ ແຫວນລັອກໂສ້ທີ່ແຫຼມ ອາດຈະຟ້ຽງອອກມາ, ເຫຼົ່ານີ້ເປັນຕົ້ນ. ໃຫ້ລອງຍົກຕົວຢ່າງ ກ່ຽວກັບ ຕົ້ນຕໍ່ຂອງອັນຕະລາຍ “ທີ່ອາດຈະເກີດຂຶ້ນ” ໃນລັກສະນະນີ້ ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ແລ້ວໃຫ້ກວດເບິ່ງນຳກັນກັບອາຈານ.

ຄວນຈົດຈຳຂໍ້ມູນການວິເຄາະ (ຮູບ 1-2 ແລະ 1-3) ທີ່ລະບຸກ່ຽວກັບ ປະເພດອຸບັດຕິເຫດ ແລະ ປັດໃຈທີ່ເປັນສາເຫດ ພາໃຫ້ເກີດອຸບັດຕິເຫດ (ບາດເຈັບ ຫຼື ການເສຍຊີວິດ) ໃນວຽກງານປ່າໄມ້.

ສິ່ງສຳຄັນ ແມ່ນຈະຕ້ອງຮັບຮູ້ ຢ່າງລະອຽດ ຕໍ່ກັບອັນຕະລາຍທີ່ຢູ່ໃກ້ໂຕ ທີ່ອາດຈະເກີດຂຶ້ນກັບຜູ້ໃດກໍໄດ້ ຫຼື ໂຕເຮົາ ແລະ ທຸດໆບ່ອນ ທີ່ເອີ້ນວ່າ “ອາດຈະ” ເກີດຈາກຄົນ ຫຼື “ອາດຈະ” ເກີດຈາກສິ່ງຂອງຕ່າງໆ ເຫຼົ່ານີ້ ອາດຈະນຳພາໄປສູ່ອຸບັດຕິເຫດແຮງງານອັນຮ້າຍແຮງ.

ຂັ້ນຕອນທີ 3: ການຮຽນຮູ້ ກ່ຽວກັບພື້ນຖານຂອງການປ້ອງກັນອຸບັດຕິເຫດແຮງງານ (ຂັ້ນຕອນການເຮັດວຽກທີ່ຖືກຕ້ອງ, ກົດລະບຽບ, ກິດຈະກຳປ້ອງກັນອຸບັດຕິເຫດແຮງງານ ເປັນຕົ້ນ)


ຮຽນຮູ້ກ່ຽວກັບກົດລະບຽບພື້ນຖານການປ້ອງກັນອຸບັດຕິເຫດແຮງງານ ຜ່ານຂັ້ນຕອນທີ 1 ແລະ ຂັ້ນຕອນທີ 2. ອຸປະກອນຄວາມປອດໄພ - ເຄື່ອງນຸ່ງຫົ່ມ, ຂັ້ນຕອນ ແລະ ວິທີການ ເຮັດວຽກທີ່ຖືກຕ້ອງ (ມີການອະທິບາຍຢ່າງລະອຽດ ແຕ່ລະຫົວຂໍ້ ໃນປຶ້ມດັ່ງກ່າວນີ້).

ນອກຈາກນັ້ນ, ຍັງຈະໄດ້ຮຽນຮູ້ ກ່ຽວກັບກິດຈະກຳປ້ອງກັນອຸບັດຕິເຫດແຮງງານ ທີ່ເອີ້ນວ່າ ເຫດການທີ່ເກືອບຈະເກີດອຸບັດຕິເຫດ (ລາຍງານກ່ຽວກັບປະສົບການໃນເຫດການທີ່ເກືອບຈະເກີດອຸບັດຕິເຫດ, ການແບ່ງປັນ, ການເອົາໄປນຳໃຊ້ເຂົ້າໃນການປັບປຸງໃຫ້ດີຂຶ້ນ), ການຄາດຄະເນອັນຕະລາຍ (KYT), ທັງຈະໄດ້ຮຽນຮູ້ກ່ຽວກັບການປະເມີນຄວາມສ່ຽງຢູ່ບ່ອນເຮັດວຽກ ຄືນອີກດ້ວຍ.

ຮັບຮູ້ ກ່ຽວກັບ ພື້ນຖານ, ເຫດຜົນ - ຈຸດສຳຄັນຂອງການຮຽນຮູ້ ແລະ ເຂົ້າໃຈກ່ຽວກັບມັນ


ໃນເວລາຮຽນຮູ້ກ່ຽວກັບກົດລະບຽບໃນການເຮັດວຽກຢ່າງປອດໄພ, ສິ່ງສຳຄັນ ແມ່ນ ໃຫ້ເຂົ້າໃຈກ່ຽວກັບເຫດຜົນຂອງມັນ.

ມັນເປັນສິ່ງຈຳເປັນທີ່ຈະຕ້ອງຟັງ ກ່ຽວກັບ ການອະທິບາຍເຫດຜົນທີ່ວ່າ ເປັນຫຍັງຈຶ່ງຫ້າມເຮັດສິ່ງນັ້ນ, ເປັນຫຍັງຕ້ອງເຮັດດ້ວຍວິທີນີ້, ແລ້ວ ໃຫ້ທຳຄວາມເຂົ້າໃຈຢ່າງດີກ່ຽວກັບມັນ. ການຈື່ພຽງແຕ່ກົດລະບຽບ, ໂດຍປາສະຈາກຄວາມເຂົ້າໃຈ ກ່ຽວກັບເຫດຜົນ ແລະ ພື້ນຖານຂອງວິທີການເຮັດວຽກ ແມ່ນ ຈະບໍ່ມີປະສິດຕິພາບພຽງພໍ ສຳລັບການຮຽນຮູ້ກ່ຽວກັບເຕັກນິກຄວາມປອດໄພ. ຍ້ອນວ່າ ການປະຕິບັດຢ່າງຕໍ່ເນື່ອງຕາມທີ່ລະບຸຢູ່ໃນກົດລະບຽບນັ້ນ ເປັນ ສິ່ງທີ່ຍາກຢ່າງຍິ່ງສຳລັບທຸກຄົນ. ການເລີ່ມຮັບຟັງກ່ຽວກັບເຫດຜົນ ແລະ ຍອມຮັບມັນ ຈະນຳໄປ



ຮູບທີ 1-2 ສາເຫດຂອງການເກີດອຸບັດເຫດທີ່ມີການເສຍຊີວິດໃນວຽກງານປ່າໄມ້ (2020)

ທີ່ມາ: "ເວັບໄຊ ກ່ຽວກັບຄວາມປອດໄພຢູ່ບ່ອນເຮັດວຽກ" ເວັບໄຊ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ,



ຮູບທີ 1-3 ປະເພດຂອງອຸບັດເຫດທີ່ມີການເສຍຊີວິດໃນວຽກງານປ່າໄມ້ (2020)

ທີ່ມາ: "ເວັບໄຊ ກ່ຽວກັບຄວາມປອດໄພຢູ່ບ່ອນເຮັດວຽກ" ເວັບໄຊ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ,

ສູ່ການຈັດຕັ້ງປະຕິບັດ ແລະ ຈະໄດ້ຮັບທັກສະໃນການປະຍຸກໃຊ້ - ທັກສະໃນການປະຕິບັດວຽກງານ ທີ່ອີງໃສ່ ພື້ນຖານ ແລະ ເຫດຜົນ ບໍ່ວ່າຈະຢູ່ສະຖານະການແບບໃດກໍຕາມ. ສິ່ງນີ້ ຖືວ່າ ເປັນຈຸດສຳຄັນໃນການຮັບປະກັນຄວາມປອດໄພ.

ເຖິງຢ່າງໃດກໍຕາມ, ມັນກໍອາດຈະດີທີ່ເຮົາສາມາດອະທິບາຍທາງວິທະຍາສາດກ່ຽວກັບທຸກແງ່ມຸມຂອງການຕັດຕົ້ນໄມ້, ແຕ່ປັດຈຸບັນກໍຍັງມີບາງຂົງເຂດທີ່ຍັງບໍ່ທັນມີຄວາມກ້າວໜ້າທາງດ້ານການວິໄຈຄົ້ນຄວ້າ. ດັ່ງນັ້ນ, ການຮັບຟັງການອະທິບາຍ ກ່ຽວກັບ ພື້ນຖານຕ່າງໆທີ່ປະກອບດ້ວຍເຕັກນິກ, ຫຼັກຖານສະໜັບສະໜູນຂອງຫຼັກການທົ່ວໄປຂອງຜູ້ສອນ ແລະ ອາຈານ ກໍເປັນອີກວິທີໜຶ່ງທີ່ມີປະສິດຕິພາບ.

ຍົກຕົວຢ່າງ: ຄູສອນຜູ້ທີ່ມີປະຫວັດການສອນທີ່ຍາວນານ, ຈາກປະສົບການທີ່ອາຈານຄົນດັ່ງກ່າວ ໄດ້ສັງເກດກ່ຽວກັບການນຳໃຊ້ຈັກເລື່ອຍໄມ້ (ຮອຍບາກຫຼັກ) ຂອງຜູ້ທີ່ບໍ່ມີຄວາມຊຳນິຊຳນານ, ການສັງເກດດັ່ງກ່າວຊີ້ໃຫ້ເຫັນວ່າ “ສາເຫດທີ່ບໍ່ສາມາດເຮັດໃຫ້ຮອຍບາກຫຼັກອອກມາໄດ້ຮາບພຽງ ນັ້ນ ຍ້ອນວ່າ ແຜ່ນບັງຄັບໂສ້ຂອງຈັກເລື່ອຍໄມ້ ງໍ” ເຊິ່ງກ່ຽວກັບການງໍຂອງໃບເລື່ອຍ ແມ່ນ ໄດ້ອະທິບາຍວ່າ ກົນໄກການເຄື່ອນໄຫວຂອງຮ່າງກາຍເຊິ່ງມີສາເຫດເກີດມາຈາກການຢູ່ໃນທ່າຢຽດແອວຊື່.

ມັນບໍ່ແມ່ນພຽງແຕ່ການສອນວ່າ “ຕ້ອງຕັດໃຫ້ພຽງ” ຢ່າງດຽວເທົ່ານັ້ນ, ຕ້ອງໃຫ້ຜູ້ເຂົ້າຝຶກອົບຮົມຍອມຮັບກ່ຽວກັບສາເຫດ ແລະ ເຫດຜົນ ກ່ຽວກັບ “ທ່າຢຽດແອວຊື່ທີ່ບໍ່ຖືກຕ້ອງ” ແລ້ວແກ້ໄຂໃຫ້ມັນດີຂຶ້ນຢ່າງຮີບດ່ວນ.

ເອກະສານ: “ຄູ່ມື ກ່ຽວກັບ ສຸຂະພາບ ແລະ ຄວາມປອດໄພ ສຳລັບຜູ້ອອກແຮງງານທີ່ຍັງບໍ່ຊຳນິຊຳນານດ້ານອຸດສາຫະກຳການຜະລິດ” 03/2016 ກົມແຮງງານປະຈຳທ້ອງຖິ່ນ ແລະ ຫ້ອງການກວດກາມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຄວາມສຳຄັນຂອງການສື່ສານ ① ການສ້າງ ແລະ ແບ່ງປັນ ແຜນການເຮັດວຽກ

ແຈ້ງ ແລະ ແບ່ງປັນ ວິທີການ ແລະ ຂັ້ນຕອນຂອງການເຮັດວຽກໃຫ້ທຸກຄົນຮູ້, ການແບ່ງປັນຈະຊ່ວຍປ້ອງກັນອຸບັດຕິເຫດ.

ນອກເໜືອຈາກການສື່ສານເຊິ່ງເປັນສິ່ງສຳຄັນສຳລັບວຽກງານປ່າໄມ້, ການສື່ສານທົ່ວໄປ (ມາລະຍາດໃນບ່ອນເຮັດວຽກ ເຊັ່ນ: ການທັກທາຍ, ການລາຍງານ, ການຕິດຕໍ່, ການປຶກສາຫາລື ຕ່າງໆ) ຍັງມີບົດບາດສຳຄັນໃນການແບ່ງປັນຂໍ້ມູນກ່ຽວກັບເນື້ອໃນການເຮັດວຽກ ແລະ ການຮັບປະກັນຄວາມປອດໄພ.

ໃນສະຖານທີ່ນີ້, ແມ່ນໄດ້ອະທິບາຍກ່ຽວກັບການສ້າງແຜນການເຮັດວຽກທີ່ເປັນວິທີ ໃນການແບ່ງປັນຂໍ້ມູນ ກ່ຽວກັບການສຳຫຼວດ ສະຖານທີ່ເຮັດວຽກເບື້ອງຕົ້ນ ແລະ ວິທີການເຮັດວຽກ ໃນບັນດາ ການແບ່ງປັນຂໍ້ມູນທີ່ຈຳເປັນເພື່ອຮັບປະກັນຄວາມປອດໄພ.

ກ່ຽວກັບການສ້າງແຜນການເຮັດວຽກ, ແມ່ນ ຕ້ອງໄດ້ສ້າງຕາມກົດໝາຍຂະແໜງຂອງອຸດສາຫະກຳຕ່າງໆ ເຊັ່ນ ການກໍ່ສ້າງ ແລະ ໂຍທາທິການ ເປັນຕົ້ນ, ສ່ວນຂະແໜງປ່າໄມ້ ການສ້າງແຜນເຮັດວຽກສຳລັບເຄື່ອງຈັກຕັດໄມ້ທີ່ໃຊ້ພາຫະນະ, ອຸປະກອນເກັບກ່ຽວໄມ້ແບບກົນຈັກ ແລະ ລະບົບການແລ່ນສາຍໄຟແບບງ່າຍດາຍ ແມ່ນ ລ້ວນແລ້ວແຕ່ຖືກກຳນົດໄວ້ໃນກົດໝາຍແລ້ວ (ກົດລະບຽບແຮງງານ ຄວາມປອດໄພ ແລະ ສຸຂະອະນາໄມ). ກ່ຽວກັບການຕັດໄມ້ ແລະ ການແປຮູບໄມ້ ແມ່ນ ໄດ້ຖືກລະບຸກ່ຽວກັບການສ້າງແຜນການເຮັດວຽກ ໃນ “ແນວທາງໃນການດຳເນີນວຽກງານທີ່ກ່ຽວຂ້ອງກັບຄວາມປອດໄພຂອງວຽກງານການຕັດໄມ້ຕ່າງໆດ້ວຍຈັກເລື່ອຍໄມ້” (ສະບັບປັບປຸງ 31/01/2020) ຂອງ ກະຊວງ ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ.

ອີງຕາມບົດລາຍງານຂອງລັດຖະບານຍີ່ປຸ່ນ ກ່ຽວກັບ ມາດຕະການຄວາມປອດໄພໃນການຕັດໄມ້ ແລະ ການປະຕິບັດວຽກງານອື່ນໆ, ກ່ຽວກັບ ວຽກງານ “ການຕັດໄມ້ ແລະ ການແປຮູບໄມ້” ແມ່ນ ມີການເກີດອຸບັດຕິເຫດ ເນື່ອງຈາກປັດໃຈຕ່າງໆ, ເປັນຕົ້ນ ແມ່ນ ການຍັງບໍ່ທັນໄດ້ຮັບການກວດສອບກ່ຽວກັບພູມສັນຖານຕ່າງໆເທົ່າທີ່ຄວນ ແລະ ການບໍ່ໄດ້ໃຊ້ວິທີການຕັດໄມ້ທີ່ເໝາະສົມຕາມລັກສະນະຮູບຮ່າງຂອງຕົ້ນໄມ້ທີ່ຈະຕັດ. ເຊື່ອວ່າເຫດການເຫຼົ່ານີ້ຈະສາມາດປ້ອງກັນໄດ້ ຖ້າຫາກວ່າໄດ້ມີການສຳຫຼວດ ຫຼື ສ້າງແຜນການເຮັດວຽກງານລ່ວງໜ້າ ຢ່າງຖືກຕ້ອງ.

ນອກຈາກນີ້, ໄດ້ຖືກຊີ້ໃຫ້ເຫັນວ່າ ອຸບັດຕິເຫດ ເຫຼົ່ານັ້ນກຳລັງ ເກີດຂຶ້ນ.

· ອຸບັດຕິເຫດ ທີ່ເກີດຈາກພະນັກງານຄົນ ອື່ນເຂົ້າມາໃນ ພື້ນທີ່ຕັດໄມ້
· ອຸບັດຕິເຫດ ທີ່ເກີດຈາກການລົ້ມລົງຂອງຕົ້ນໄມ້ທີ່ລົ້ມຜິດທິດທາງ
· ອຸບັດຕິເຫດ ທີ່ເກີດຈາກວິທີການເຮັດວຽກທີ່ບໍ່ ຖືກຕ້ອງ
· ອຸບັດຕິເຫດ ທີ່ເກີດຈາກການຈັດການ ຕົ້ນໄມ້ທີ່ລົ້ມມາຄ້າງຢູ່ຕົ້ນອື່ນ ທີ່ບໍ່ເໝາະສົມ

ດ້ວຍເຫດນີ້, ເມື່ອດຳເນີນການກ່ຽວກັບວຽກງານຕັດໄມ້ ຈຶ່ງໄດ້ຊີ້ໃຫ້ເຫັນກ່ຽວກັບລາຍລະອຽດເນື້ອໃນຂອງການການສ້າງແຜນເຮັດວຽກດັ່ງລຸ່ມນີ້.

· ຂອບເຂດການຕັດ
· ວິທີການ ແລະ ລຳດັບ ຂອງ ການເຮັດວຽກງານ
· ວິທີການເລືອກສະຖານທີ່ເພື່ອອົບພະຍົກລີ້ໄພ
· ວິທີການຄ້ຳຕົ້ນໄມ້
· ມາດຕະການປ້ອງກັນບໍ່ໃຫ້ຕົ້ນໄມ້ລົ້ມທັບພະນັກງານ (ບໍ່ໃຫ້ເກີດອຸບັດຕິເຫດ)
· ມາດຕະການສຸກເສີນໃນກໍລະນີເກີດອຸບັດຕິເຫດແຮງງານ
· ວິທີການນຳສົ່ງຄົນເຈັບ

ນີ້ສະແດງໃຫ້ເຫັນເນື້ອໃນຂອງແຜນການເຮັດວຽກ.

ຈຸດສຳຄັນໃນການສ້າງແຜນເຮັດວຽກ ແມ່ນ:

· ໃນເວລາສ້າງແຜນ ແມ່ນ ໃຫ້ບັນທຶກຜົນຂອງການສຳຫຼວດສະຖານທີ່ເຮັດວຽກທີ່ໄດ້ດຳເນີນການສຳຫຼວດລ່ວງໜ້າ.
· ແບ່ງປັນແຜນການເຮັດວຽກທີ່ສ້າງຂຶ້ນກັບສະມາຊິກທັງຫມົດຂອງທີມງານ.

ມັນເປັນສິ່ງສຳຄັນສຳລັບທຸກຄົນໃນທີມງານທີ່ຈະເຂົ້າໃຈວ່າສະຖານທີ່ໃດ, ຂັ້ນຕອນໃດ, ໃຊ້ເຄື່ອງຈັກໃດ, ໃຜເປັນຜູ້ຮັບຜິດຊອບຢູ່ບ່ອນໃດ (ລາຍລະອຽດແຜນການເຮັດວຽກ) ເປັນຕົ້ນ, ເຊິ່ງມັນບໍ່ແມ່ນພຽງການເຂົ້າໃຈກ່ຽວກັບຄວາມຮັບຜິດຊອບພຽງແຕ່ຂອງຕົນເອງເທົ່ານັ້ນ ແຕ່ການເຂົ້າໃຈກ່ຽວກັບຂະບວນການທັງຫມົດ ເປັນສິ່ງສຳຄັນທີ່ສຸດໃນການຮັບປະກັນຄວາມປອດໄພ.

ວິທີການສ້າງ ແລະ ແບ່ງປັນແຜນການເຮັດວຽກ

ແຜນການເຮັດວຽກ ແມ່ນ ຜູ້ຄຸ້ມຄອງພະນັກງານເປັນຜູ້ສ້າງຂຶ້ນ, ແລ້ວໃຫ້ພະນັກງານປະຈຳພາກສະໜາມ ອ່ານ ແລະ ຈັບໃຈຄວາມຢ່າງຖືກຕ້ອງ ໂດຍບໍ່ໃຫ້ມີບ່ອນເຂົ້າໃຈຜິດ ກ່ຽວກັບຮູບແບບ ແລະ ລາຍລະອຽດເນື້ອໃນທີ່ລະບຸ ພ້ອມທັງພະຍາຍາມທຳຄວາມເຂົ້າໃຈກ່ຽວກັບມັນ.

ແຜນການເຮັດວຽກທີ່ສ້າງຂຶ້ນມາ ແມ່ນ ໃຫ້ແບ່ງປັນກັບຜູ້ຄຸມຄ້ອງພະນັກງານ ແລະ ພະນັກງານປະຈຳພາກສະໜາມໝົດທຸກຄົນ ແລະ ເພື່ອທີ່ຈະເຮັດໃຫ້ເຂົ້າໃຈກ່ຽວກັບຫົວຂໍ້ທັງໝົດທີ່ລະບຸ ແມ່ນ ມີວິທີການນຳໃຊ້ດັ່ງຕໍ່ໄປນີ້:

· ແຈ້ງໃຫ້ທຸກຄົນຮັບຮູ້ໃນການລວມຕອນເຊົ້າ ແລະ ໃນກິດຈະກຳການຄາດຄະເນຄວາມສ່ຽງ (ກອງປະຊຸມຄາດຄະເນຄວາມສ່ຽງ ຕ່າງໆ) ເພື່ອຢືນຢັນມາດຕະການຄວາມປອດໄພກ່ອນການເຮັດວຽກ.

· ນຳໃຊ້ ເອກະສານ ແລະ ຢືນຢັນຂັ້ນຕອນຂອງການເຮັດວຽກ ກ່ອນການເຄື່ອນຍ້າຍ ໄປ ພາກສະໜາມ (ບ່ອນເຮັດວຽກ).

· ຕິດປະກາດແຜນການເຮັດວຽກໃນຕອນພັກຜ່ອນ ເພື່ອໃຫ້ ພະນັກງານສາມາດກວດສອບກ່ຽວກັບລາຍລະອຽດວຽກງານ ໄດ້ສະເໝີ.

· ນຳເອົາເອກະສານຝຶກອົບຮົມ ກ່ຽວກັບຄວາມປອດໄພໄປນຳໃຊ້ພາຍໃນບໍລິສັດ ແລະ ໃຊ້ກັບກຸ່ມຄົນທີ່ເຮັດວຽກດ້ານນີ້.

ເນື້ອໃນທີ່ລະບຸກ່ຽວກັບແຜນການເຮັດວຽກ

ສ້າງແຜນລະອຽດສຳລັບພາກສະໜາມ (ບ່ອນເຮັດວຽກ) ແຕ່ລະບ່ອນ. ເນື້ອໃນທີ່ລະບຸຕົ້ນຕໍ ແມ່ນ ດັ່ງຕໍ່ໄປນີ້ (ຮູບ 1-4, ຮູບ 1-5).

ຊື່ ບ່ອນດຳເນີນທຸລະກິດ (ພາກສະໜາມ - ອາຄານ) /ສະຖານທີ່ເຮັດວຽກ (ທີມງານປ່າໄມ້ ຕ່າງໆ) / ຊື່ທີມງານ

ຊື່ ແລະ ຂໍ້ມູນຕິດຕໍ່ຂອງຜູ້ຄຸ້ມຄອງວຽກງານ

ໄລຍະເວລາ ໃນການເຮັດວຽກ

ພາບລວມຂອງພື້ນທີ່ເຮັດວຽກ

· ສະພາບພູມສັນຖານ: ຄວາມຄ້ອຍຊັນ ດິນຮາບພຽງ, ດິນຄ້ອຍ, ດິນທີ່ມີພື້ນຕ່າງລະດັບ

· ສະພາບທາງທໍລະນີສາດ - ການລະບາຍນ້ຳ: ພື້ນດິນທີ່ມີຫີນ - ດິນເຈື່ອນ/ຫີນເຈື່ອນ - ຫີນໄຫຼ (ຫີນກ້ອນໃຫຍ່ທີ່ນ້ຳພັດມາ ຫຼື ຕົກຈາກພູ) / ຮ່ອງລະບາຍນ້ຳ

· ສະພາບຄວາມໃກ້ຄຽງຂອງ ລະບົບສາຍໄຟ - ທໍ່ນ້ຳໃຕ້ດິນ ແລະ ສາຍໄຟລອຍຟ້າ: ລະບົບສາຍໄຟ-ທໍ່ນ້ຳໃຕ້ດິນ / ສາຍໄຟລອຍຟ້າ

· ສະພາບຂອງຕົ້ນໄມ້ຢືນຕົ້ນທີ່ຈະຖືກຕັດ: ປະເພດຕົ້ນໄມ້ / ອາຍຸຕົ້ນໄມ້ / ຂະໜາດຕົ້ນໄມ້ / ການປ່ຽນແປງຂະໜາດ / ຄວາມໜາແໜ້ນຂອງຕົ້ນໄມ້ຢືນຕົ້ນ

· ສະພາບຂອງເຄືອໄມ້ ແລະ ກິ່ງໄມ້ພັນກັນ

· ສະພາບຂອງຕົ້ນໄມ້ທີ່ຕາຍແລ້ວ: ຕົ້ນໄມ້ຕາຍ / ຕົ້ນໄມ້ທີ່ຖືກລົມພັດແຮງຈົນລົ້ມ

· ສະພາບຂອງພືດພັນລະດັບລຸ່ມ: ພຸ່ມໄມ້ / ຕົ້ນຫຍ້າ

ເນື້ອໃນຂອງແຜນການເຮັດວຽກ

· ວິທີການເຮັດວຽກ: ການນຳໃຊ້ຈັກເລື່ອຍໄມ້ / ການນຳໃຊ້ເຄື່ອງຕັດໄມ້ທີ່ທີ່ເປັນພາຫະນະ / ອື່ນໆ

· ວິທີການຂອງການຕັດໄມ້: ການຕັດຕອນ (ຮູບແບບຄຸນນະພາບ, ເປັນແຖວຍາວ) / ການຕັດໃຫ້ກ້ຽງ / ການເລືອກຕັດ / ການຕັດຖິ້ມ / ອື່ນໆ

· ລຳດັບການຕັດ: ຈາກສັນພູໄປຫາຮ່ອມພູ / ຈາກຮ່ອມພູໄປຫາສັນພູ / ອື່ນໆ

· ວິທີການຈັດການຕົ້ນໄມ້ທີ່ລົ້ມມາຄ້າງຢູ່ຕົ້ນອື່ນ : ເຄື່ອງຕັດໄມ້ທີ່ໃຊ້ໃນພາຫະນະ / ຄັນໂຍກ / ສາຍເຊືອກ / ອື່ນໆ

· ເຄື່ອງໝາຍສະຖານທີ່ອົບພະຍົກ: ໝາຍດ້ວຍສາຍເຊືອກ / ອື່ນໆ

· ເຄື່ອງໝາຍຫ້າມຜ່ານ: ກະດານເຄື່ອງໝາຍ, ການກຳນົດຂອບເຂດ, / ຈອຍທີ່ເປັນສີ / ອື່ນໆ

· ວິທີການໃຫ້ສັນຍານ: ໝາກຫວີດ / ວິທະຍຸສື່ສານ / ທຸງ / ອື່ນໆ

· ມາດຕະການເພື່ອປ້ອງກັນບໍ່ໃຫ້ຕົ້ນໄມ້ທີ່ລົ້ມ ກິ້ງລົງ - ເຄື່ອນທີ່ / ຕອກເສົາເຂັມ / ໄມ້ຄ້ຳ / ຫ້າມຜ່ານເຂົ້າໄປດ້ານລຸ່ມ / ອື່ນໆ

· ມາດຕະການຄວາມປອດໄພອື່ນໆ

ແຜນວາດໂດຍລວມຂອງສະຖານທີ່ເຮັດວຽກ ແລະ ວິທີການເຮັດວຽກ

ທີມງານເຮັດວຽກ

· ຊື່ພະນັກງານ / ໃຊ້ຈັກເລື່ອຍໄມ້ ຫຼື ບໍ່, ຍີ່ຫໍ້ຈັກເລື່ອຍໄມ້, ຈຳນວນຈັກເລື່ອຍໄມ້

ການຮັບມືຍາມສຸກເສີນ

· ເສັ້ນທາງແລ່ນລົດສຸກເສີນ, ເບີໂທຕິດຕໍ່ສຸກເສີນ

· ຂອບເຂດພື້ນທີ່ທີ່ສາມາດຕິດຕໍ່ສື່ສານດ້ວຍໂທລະສັບ ແລະ ວິທະຍຸສື່ສານ

ແຜນກ່ຽວກັບວຽກງານການຕັດໄມ້ - ການແປຮູບໄມ້ດ້ວຍຈັກເລື່ອຍໄມ້

(ສາມາດໃຊ້ສຳລັບການສຳຫຼວດ - ບັນທຶກ)

ການສຳຫຼວດ - ບັນທຶກ: ປີ Reiwa ທີ ເດືອນ ວັນທີ

ສ້າງຂຶ້ນ ໃນ: ປີ Reiwa ທີ ເດືອນ ວັນທີ

ສະບັບປັບປຸງຄັ້ງທີ: ປີ Reiwa ທີ ເດືອນ ວັນທີ

ຊື່ທຸລະກິດ	(ເຄື່ອງໝາຍ)
ຊື່ນາມສະກຸນ ຕຳແໜ່ງຂອງຜູ້ສຳຫຼວດ - ບັນທຶກ	
ຊື່ນາມສະກຸນ ຕຳແໜ່ງຂອງຜູ້ສ້າງແຜນການ	

ຊື່ສະຖານທີ່ທຸລະກິດ (ບ່ອນເຮັດວຽກ - ເຂດນິຄົມ) ສະຖານທີ່ເຮັດວຽກ (ທີມງານດູແລຮັກສາປ່າໄມ້ຕ່າງໆ) ຊື່ທີມງານເຮັດວຽກ		
ຊື່ ແລະ ຂໍ້ມູນຕິດຕໍ່ຂອງຜູ້ຄຸ້ມຄອງວຽກງານ		
ໄລຍະເວລາເຮັດວຽກ		ຈາກ ປີ Reiwa ທີ ເດືອນ ວັນທີ ~ ເຖິງ ປີ Reiwa ທີ ເດືອນ ວັນທີ
ມາດຕະການປ້ອງກັນໂຣກຕາຍຂອງຕົ້ນໄມ້	① ສະພາບທາງພູມສາດ	(ຄວາມລາດຊັນ) ພື້ນທີ່ຮາບພຽງ ພື້ນທີ່ລາດຊັນ ພື້ນທີ່ຕ່າງລະດັບ (ກໍລະນີເປັນພື້ນທີ່ລາດຊັນ) ລາດຊັນມຸມສູງ ປານກາງ ເລັກໜ້ອຍ (ຄວາມລາດຊັນສະເລ່ຍ °) (ທິດທາງຂອງພື້ນທີ່ລາດຊັນ) ແສງແດດດີ (ປ່ຽນໄປທາງທິດໃຕ້ຕ່າງໆ) ນອກຈາກນັ້ນ (ປ່ຽນໄປທາງທິດເໜືອຕ່າງໆ) (*ຈຸດທີ່ຕ້ອງເອົາໃຈໃສ່)
	② ເງື່ອນໄຂທາງທໍລະນີສາດ - ການລະບາຍນ້ຳ	(ພື້ນທີ່ຫີນ - ພື້ນທີ່ດິນເຈື່ອນ) ໃຫຍ່ ກາງ ນ້ອຍ (*ຈຸດທີ່ຕ້ອງເອົາໃຈໃສ່) (ຫີນເຈື່ອນ - ຫີນໄຫຼ) ຫຼາຍ ປານກາງ (*ຈຸດທີ່ຕ້ອງເອົາໃຈໃສ່) (ການລະບາຍນ້ຳ) ດີ ປານກາງ ບໍ່ດີ (*ຈຸດທີ່ຕ້ອງເອົາໃຈໃສ່)
	③ ສະພາບການຢູ່ໃກ້ກັບ ອຸປະກອນໃຕ້ດິນ - ລະບົບສາຍໄຟເໜືອຫົວ	(ອຸປະກອນໃຕ້ດິນ) ບໍ່ມີ ມີ ( ) (*ຈຸດທີ່ຕ້ອງເອົາໃຈໃສ່) (ລະບົບສາຍໄຟເໜືອຫົວ) ບໍ່ມີ ມີ ( ) (*ຈຸດທີ່ຕ້ອງເອົາໃຈໃສ່)
	④ ສະພາບຂອງຕົ້ນໄມ້ທີ່ຈະປ້ຳ	(ປະເພດຕົ້ນໄມ້) ຊຶງ ຮິໂນກິ ອື່ນໆ ( ) (ອາຍຸຂອງຕົ້ນໄມ້) ( ) ສ່ວນຫຼາຍ ແມ່ນ ອາຍຸ ປີ (ຄວາມໃຫຍ່) ເສັ້ນຜ່າສູນກາງຄວາມສູງຈຸດໜ້າເອິກ (ປະມານ cm) ຄວາມສູງຂອງຕົ້ນໄມ້ (ປະມານ m) (ການປ່ຽນແປງຂອງຄວາມໃຫຍ່) ໃຫຍ່ ປານກາງ ໜ້ອຍ (*ຈຸດທີ່ຕ້ອງເອົາໃຈໃສ່) (ຄວາມໜາແໜ້ນຂອງທົ່ງໄມ້ຢືນຕົ້ນ) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑤ ສະພາບເຄືອໄມ້ ແລະ ງ່າໄມ້	(ເຄືອໄມ້) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່) (ງ່າໄມ້) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑥ ສະພາບຂອງຕົ້ນໄມ້ທີ່ແຫ່ວແຫ້ງ	(ຕົ້ນໄມ້ທີ່ແຫ່ວແຫ້ງ) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່) (ຕົ້ນໄມ້ທີ່ລົ້ມຍ້ອນລົມ) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑦ ສະພາບພືດພັນຊັ້ນລຸ່ມ	(ພຸ່ມໄມ້) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່) (ຫຍ້າ) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່)
ມາດຕະການປ້ອງກັນໂຣກຕາຍຂອງຕົ້ນໄມ້	⑧ ວິທີການເຮັດວຽກ	ໃຊ້ເລື່ອຍໄຟຟ້າ ການນຳໃຊ້ເຄື່ອງຕັດໄມ້ທີ່ໃຊ້ໃນຍານພາຫະນະ, ແລະອື່ນໆ ( )
	⑨ ວິທີການປ້ຳຕົ້ນໄມ້	ການຕັດຕອນ (ຮູບແບບຄຸນນະພາບ ເປັນແຖວຍາວ) ການຕັດໃຫ້ກ້ຽງ ການເລືອກຕັດ ການຕັດຖິ້ມ ອື່ນໆ ( )
	⑩ ຂັ້ນຕອນການປ້ຳຕົ້ນໄມ້	ຈາກສັນພູໄປຫາຮ່ອມພູ ຈາກຮ່ອມພູໄປຫາສັນພູ ອື່ນໆ ( )
	⑪ ວິທີຈັດການຕົ້ນໄມ້ທີ່ລົ້ມລົງມາຄ້ຳຢູ່ຕົ້ນອື່ນ	ເຄື່ອງຈັກຕັດໄມ້ແບບໃຊ້ຍານພາຫະນະ ຄັນໂຍກ (Felling lever) ເຊືອກ ອື່ນໆ ( )
	⑫ ປ້າຍສະຖານທີ່ອົບພະຍົກ	ເຄື່ອງໝາຍປະເພດເຊືອກ ອື່ນໆ ( )
	⑬ ປ້າຍຫ້າມເຂົ້າ	ປ້າຍບອກທາງ ການກຳນົດຂອບເຂດ ຈວຍສີ ອື່ນໆ ( )
	⑭ ວິທີການໃຫ້ສັນຍານ	ໝາກວີດ ວິທະຍຸສື່ສານ ທຸງ ອື່ນໆ ( )
	⑮ ມາດຕະການປ້ອງກັນຕົ້ນໄມ້ຕ່າງໆ ທີ່ປ້ຳລົງມາບໍ່ໃຫ້ກິ້ງລົງ - ສະໄລ້ລົງ	ເສົາເຂັມ ໄມ້ຄ້ຳ ຫ້າມເຂົ້າໄປດ້ານລຸ່ມ ອື່ນໆ ( )
	⑯ ມາດຕະການປອດໄພອື່ນໆ	

ຮູບ 1-4 ວຽກງານໂດຍສັງເຂບ ຕົວຢ່າງການຂຽນແຜນການເຮັດວຽກ (ວຽກງານຕັດໄມ້ ແລະ ແປຮູບໄມ້) ①

(ເອກະສານຄັດຕິດ 1)

ແຜນວາດໂດຍລວມຂອງສະຖານທີ່ເຮັດວຽກ ແລະ ວິທີການເຮັດວຽກ

* ຄວາມສາມາດໃນການຕື່ມຂໍ້ມູນກ່ຽວກັບ ເສັ້ນທາງລົດສຸກເສີນ, ແລະ ຄວາມສາມາດໃນການຕິດຕໍ່ສື່ສານດ້ວຍໂທລະສັບມືຖື ແລະ ວິທະຍຸສື່ສານ ຕ່າງໆເປັນຕົ້ນ, ໃນກໍລະນີທີ່ໄດ້ມີການສ້າງແຜນວາດທີ່ສະແດງໃຫ້ເຫັນເຖິງສະຖານທີ່ເຮັດວຽກ (ແຜນວາດກ່ຽວກັບວຽກງານ, ແຜນວາດກ່ຽວກັບປ່າໄມ້, ແຜນຜັງຕາດິນ ຕ່າງໆ ເປັນຕົ້ນ), ແມ່ນ ສາມາດຂ້າມຂັ້ນຕອນໃນການຕື່ມຂໍ້ມູນທີ່ຄັດຕິດມາກັບແບບຟອມນີ້ໄດ້.

ບຸກຄົນທີ່ເຮັດວຽກ	ຊື່ຜູ້ອອກແຮງງານ	ບໍ່ມີການນຳໃຊ້ຈັກເລື່ອຍໄມ້ໄຟຟ້າ (ເລື່ອຍໄມ້ໄຟຟ້າ)	ຍີ່ຫໍ້ຈັກເລື່ອຍໄມ້	ຈຳນວນເຄື່ອງຈັກ
		ມີ ບໍ່ມີ		
		ມີ ບໍ່ມີ		
		ມີ ບໍ່ມີ		
		ມີ ບໍ່ມີ		

ການຈັດການເພື່ອຄວາມປອດໄພ			
	⑰ ເສັ້ນທາງແລ່ນລົດສຸກເສີນ, ເບີໂທຕິດຕໍ່ສຸກເສີນ	ທີມງານດູແລຮັກສາປ່າໄມ້ ທີມນ້ອຍ	GPS ເສັ້ນຂະໜານ: ເສັ້ນແວ່ງ:
		ພະແນກດັບເພີງ (ໂທລະສັບ), ໂຮງໝໍ (ໂທລະສັບ) ສະຖານທີ່ລໍຖ້າລົດສຸກເສີນ (ຊື່ - ຕຳແໜ່ງຂອງເສັ້ນທາງໃນປ່າໄມ້) ບໍລິສັດ (ຫ້ອງການ〇〇) (ໂທລະສັບ)	
	⑱ ຂອບເຂດທີ່ສາມາດຕິດຕໍ່ສື່ສານດ້ວຍ-ໂທລະສັບມືຖື ແລະ ວິທະຍຸສື່ສານຕ່າງໆ	ຊື່ - ຕຳແໜ່ງຂອງເສັ້ນທາງໃນປ່າໄມ້ຕ່າງໆ	
	⑲ ໝາຍເຫດ		

(*1) ສຳລັບ ແຕ່ລະຖັນ, ສາມາດເລືອກຄຳຕອບທີ່ສອດຄ່ອງ ໄດ້ຫຼາຍຂໍ້ ໂດຍການໝາຍດ້ວຍເຄື່ອງໝາຍ 〇, ໂດຍອີງຕາມສະພາບຕົວຈິງຂອງວຽກງານ.
(*2) ເມື່ອຕື່ມຂໍ້ມູນ, ຕ້ອງຕື່ມເນື້ອໃນທີ່ສອດຄ່ອງກັບສະພາບຕົວຈິງຂອງແຜນການ. ສາມາດປ່ຽນແປງຕ່າງໆ ກ່ຽວກັບ ຊື່ຂອງຫົວຂໍ້, ເລື່ອງທີ່ຈະຂຽນຕາມຄວາມຈຳເປັນ. ນອກຈາກນັ້ນ, ຕ້ອງກວດເບິ່ງເພີ່ມຕື່ມ ກ່ຽວກັບ “ຕົວຢ່າງການຕື່ມຂໍ້ມູນ” ແລະ “ເລື່ອງຕ່າງໆທີ່ຕ້ອງໄດ້ເອົາໃຈໃສ່ໃນການຕື່ມຂໍ້ມູນ” ທີ່ຢູ່ດ້ານຫຼັງ.

ຮູບທີ 1-4 ວຽກງານໂດຍສັງເຂບ ຕົວຢ່າງການຂຽນແຜນວຽກ (ວຽກງານຕັດ ແລະ ແປຮູບ) ②

ແຫຼ່ງທີ່ມາ: “ບົດແນະນຳຄວາມປອດໄພຂອງການຕັດໄມ້ດ້ວຍຈັກເລື່ອຍໄມ້” ວັນທີ 31/1/2020 ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

2. ຕົວຢ່າງການຂຽນກ່ຽວກັບແຜນການເຮັດວຽກ

ວິທີການຕັດພື້ນຜິວທີ່ຈະຕັດ		ພື້ນທີ່ການຕັດ ແຫ່ງ ການວັດແທກພື້ນທີ່ທີ່ມີການເຮັດວຽກໃນເວລາດຽວກັນ ແຫ່ງ
ວິທີການຕັດຕົ້ນໄມ້ - ວິທີການຕັດໄມ້ທ່ອນມົນ ແລະ ການກຳຈັດງ່າໄມ້		ການຕັດໄມ້: ຈັກເລື່ອຍໄມ້ - ລົດຈົກຕັດໄມ້ - ລົດເກັບກ່ຽວໄມ້ - ອື່ນໆ ການຕັດໄມ້ທ່ອນມົນ ແລະ ການກຳຈັດງ່າໄມ້: ຈັກເລື່ອຍໄມ້ - ລົດກຳຈັດງ່າໄມ້ - ລົດເກັບກ່ຽວໄມ້ - ອື່ນໆ
ວິທີການເກັບກ່ຽວ		[ຕົ້ນໄມ້ - ລຳຕົ້ນ - ລຳຕົ້ນສັ້ນ ທັງໝົດ] ແຮງງານຄົນ - ກຳລັງແຮງ - ມ້າ - ລົດດຸດ - ລົດໄຖ - ລົດຈັບໄມ້, ໝາກລໍ້ດຶງ - ເຄື່ອງເກັບກ່ຽວ - ລົດລະລິງ - ເສົາສະລິງ -ລົດລາກໄມ້ - ລົດສົ່ງໄມ້ - ລົດຂົນສົ່ງໄມ້ໃນປ່າ (ຕ່ຳກວ່າ 1 ໂຕນ) - ລົດບັນທຸກ - ( )
ຂະບວນການເຮັດວຽກ ① ຕົວເລກໃນ [ ] ແມ່ນ ຊີ້ບອກຈຳນວນຂອງຜູ້ຄຸ້ມຄອງວຽກງານ ② ໄລຍະເວລາການເຮັດວຽກ ແມ່ນ ລະບຸໄວ້ໂດຍ ▨ ③ ຕົວເລກໃນ ( ) ແມ່ນ ຊີ້ບອກຈຳນວນຂອງຜູ້ອອກແຮງງານທີ່ມີສ່ວນຮ່ວມ	ຜູ້ຄຸ້ມຄອງວຽກງານ ການຕັດໄມ້ [_____]	ເດືອນ (ຄົນ) (ຄົນ) (ຄົນ) (ຄົນ) (ຄົນ)
	ຜູ້ຄຸ້ມຄອງວຽກງານ ການແປຮູບໄມ້ - ການເກັບກ່ຽວໄມ້ [_____]	ເດືອນ (ຄົນ) (ຄົນ) (ຄົນ) (ຄົນ) (ຄົນ)
	ຜູ້ຄຸ້ມຄອງວຽກງານ ວຽກງານການກອງໄມ້ທ່ອນ [_____]	ເດືອນ (ຄົນ) (ຄົນ) (ຄົນ) (ຄົນ) (ຄົນ)
	ຜູ້ຄຸ້ມຄອງວຽກງານ ການຂົນສົ່ງວັດສະດຸໄມ້ຂອງລົດບັນທຸກ [_____]	ເດືອນ (ຄົນ) (ຄົນ) (ຄົນ) (ຄົນ) (ຄົນ)
	ຜູ້ຄຸ້ມຄອງວຽກງານ ວິສະວະກຳໂຍທາ [_____]	ເດືອນ (ຄົນ) (ຄົນ) (ຄົນ) (ຄົນ) (ຄົນ)
ພາບລວມຂອງໂຄງສ້າງການເຮັດວຽກຂອງຜູ້ຕັດໄມ້ (1 ມື້, 1 ອາທິດ) * ແຜນການຕັດໄມ້ລາຍວັນທີ່ລະອຽດຕ້ອງເປັນໄປຕາມ “ແຜນວຽກງານທີ່ໄດ້ມີການນຳໃຊ້ອຸປະກອນສັ່ນສະເທືອນ” (ແບບຟອມ-6). * ໂຄງສ້າງການເຮັດວຽກຂອງຜູ້ຕັດໄມ້ທີ່ກ່ຽວຂ້ອງກັບວຽກງານວິສະວະກຳໂຍທາ ຕ້ອງ ໄດ້ຮັບການຂຽນອະທິບາຍຢູ່ໃນແຖວດ້ານລຸ່ມ.	ຫົວໜ່ວຍໂຄງສ້າງ	ສະຖານະພາບຂອງສັນຍາຍ່ອຍ ຄົນ	ອື່ນໆ ຄົນ
	ຫົວໜ່ວຍໂຄງສ້າງ	ສະຖານະພາບຂອງສັນຍາຍ່ອຍ ຄົນ	ອື່ນໆ ຄົນ
ສະພາບຂອງການຮັບເໝົາຊ່ວງຕໍ່	ເນື້ອໃນຂອງວຽກງານທີ່ໃຫ້ຮັບເໝົາຊ່ວງຕໍ່		ຊື່ຜູ້ຮັບເໝົາຊ່ວງຕໍ່

ຮູບທີ 1-5 ແຜນການເຮັດວຽກກ່ຽວກັບການປ້ຳຕົ້ນໄມ້ (ວຽກງານຕັດ ແລະ ແປຮູບ) ຕົວຢ່າງການຂຽນກ່ຽວກັບແຜນການເຮັດວຽກ ①

๑.ไดตุ๋ดหมู๊ดอนวะกู่	ปุ๋นวนเกื่องจั๊กกิ่นน้ำใช้ เละ เกื่อง				
		เถื่อง	เถื่อง	เถื่อง	เถื่อง
		เถื่อง	เถื่อง	เถื่อง	เถื่อง

ยี่ห้	หมายเลกลุ้น	จำนวนเถื่องจัก	การนำใช้ตั้นต		การแบ่งรูบแบบปะเพดเจ้าของ	
			การตัดไม้	การตัดไม้ท่อมมัน	วันทีเดือมปีที่ซื้	บุกถ์ม - บ๋ลิสัด
						บุกถ์ม - บ๋ลิสัด
						บุกถ์ม - บ๋ลิสัด
						บุกถ์ม - บ๋ลิสัด
						บุกถ์ม - บ๋ลิสัด
						บุกถ์ม - บ๋ลิสัด
ชื่ผู้คุ้มถองเถื่องมีสั่นสะเทือน						

ชื่อุปะกอมเถื่องจั๊ก	จำนวนเถื่องจั๊ก	ผู้บ๋ลิหานคุ้มถอง	รูบแบบถวามเป็นเจ้าของ บุกถ์ม - บ๋ลิสัด	การมีอุปะกอม การเข้าเถิง ที่จำกัด.	ผู้บ๋ลิหานคุ้มถอง
			บุกถ์ม - บ๋ลิสัด	มี • บ่ มี	
			บุกถ์ม - บ๋ลิสัด	มี • บ่ มี	
			บุกถ์ม - บ๋ลิสัด	มี • บ่ มี	
			บุกถ์ม - บ๋ลิสัด	มี • บ่ มี	

สะถานที่พักผ่อม	มี (บ่อมพักเช๊า - บ่อมพักผ่อม (แบบสำเล็ดรูบ - เต้ม - ล็ดตู้ - ล็ดตู้ม้อย - อื่มๆ)) - บ่ มี
อุปะกอมเร็ดถวามร้อม	มี • บ่ มี
มี/บ่มีการพักเช๊าอยู่เหิ่งพู	มี (โถงส้างของบ่อมพัก ถวามกว้างของบ่อมพัก m^2) • บุกถะลาทอม (ถ์ม) บ่ มี

มีการจัดตั้งปะติบัดก่ยวกับการปะเมิ่นถวามส่ยงบ่?	ถวามส่ยง และ อันตะลาย ที่มีละดับถวามรุมแยงสูง (สำลับ ลายละอยด ให้กวดเบิ่งเพิ่มติ่มในบัดลายงานการปะเมิ่น ถวามส่ยง และ อันตะลาย)				
	ลำดับบูลิมะสิด	ผู้ออกแยงงาน	ละบวมการ อุบัดติเหด	การปะเมิ่นถวามส่ยง และ อันตะลาย	พาบลวมของมาดตะการหยิกล่ยง - หยุดผ่อมถวามส่ยง และ อันตะลาย
มี • บ่ มี					
วันทีจัดตั้งปะติบัด					
เดือม วันที					
หมายเหด					

รูบที 1-5 แผมการเร็ดวรฺกก่ยวกับการป้ำต้นไม้ (วรฺกงานตัด และ แปรูบ) ต๋วอย่างการยรมก่ยวกับแผมการเร็ดวรฺก ②

แหฺล่งข้ม้ล: การรับรู้ และ เข้าใจก่ยวกับสะพาบแวดล้อมของป่าไม้ "การสะหบับสะหมูมก่ยวกับการส้างแผมการเร็ดวรฺกที่จำเป้ม สำลับ วรฺกงานที่ปอดไพ" มอบหมาย โดย กะซวงสาทาละมะสุก, แยงงาม และ สะหวัดดิการ 01/2013

ຄວາມສຳຄັນຂອງການສື່ສານ ② ການສື່ສານເປັນສິ່ງທີ່ຈຳເປັນໃນການເຮັດວຽກໃຫ້ປອດໄພ

ແບ່ງປັນຂໍ້ມູນອັນຕະລາຍ ຫຼື ສິ່ງທີ່ພາໃຫ້ເກີດອຸບັດຕິເຫດ

ກ່ອນອື່ນໝົດ ແມ່ນ ຕ້ອງສາມາດປະຕິບັດມາລະຍາດພື້ນຖານໃຫ້ໄດ້ ເຊັ່ນ: ການລາຍງານ - ການຕິດຕໍ່ສື່ສານ - ການປຶກສາຫາລືກ່ຽວກັບວຽກງານຕ່າງໆ ແລະ ການຢືນຢັນຄຳສັ່ງຈາກຫົວໜ້າ. ນອກຈາກນັ້ນ, ຈາກທັດສະນະຂອງການຮັບປະກັນຄວາມປອດໄພ, ຍັງມີການສື່ສານໃນບ່ອນເຮັດວຽກທີ່ກ່ຽວຂ້ອງກັບປ່າໄມ້ ທີ່ຕ້ອງໄດ້ແບ່ງປັນຂໍ້ມູນຂ່າວສານໃຫ້ກັບທຸກຄົນ, ເປັນຕົ້ນ ແມ່ນ ການລາຍງານໃຫ້ຫົວໜ້າຮັບຮູ້ເມື່ອມີການພົບເຫັນສິ່ງທີ່ຈະກໍ່ໃຫ້ເກີດອັນຕະລາຍ.

● ຕົວຢ່າງການແບ່ງປັນຂໍ້ມູນເມື່ອພົບເຫັນສະຖານທີ່ອັນຕະລາຍ

· ຕົ້ນໄມ້ລົ້ມ
· ຂໍ້ມູນກ່ຽວກັບຕົ້ນໄມ້ອັນຕະລາຍ ເຊັ່ນ: ຕົ້ນໄມ້ຕາຍ ແລະ ຕົ້ນໄມ້ເນົ່າເປື່ອຍ
· ຕົ້ນໄມ້ລົ້ມມາຄ້າງຢູ່ຕົ້ນອື່ນ ເຊິ່ງຖືກປະຖິ້ມ
· ບ່ອນທີ່ມີນ້ຳໄຫຼຊຶມເຂົ້າໄປໃນດິນພາຍໃນປ່າ
· ຈຸດທີ່ນ້ຳໄຫຼອອກ ນ້ຳອົບຢູ່ພື້ນຖະໜົນ ເຊັ່ນ: ຖະໜົນບ່ອນເຮັດວຽກ
· ພື້ນທີ່ໄດ້ຮັບຄວາມເສຍຫາຍ ເສັ້ນທາງຂາດ/ທາງມົ່ນ, ແຄມທາງ ແລະ ຮ່ອງຂ້າງທາງທີ່ຈະໃຫ້ພະຫະນະແລ່ນຜ່ານ
· ສຽງຜິດປົກກະຕິ ແລະ ການເຮັດວຽກຜິດປົກກະຕິຂອງເຄື່ອງຈັກປ່າໄມ້
· ດິນເຈື່ອນ, ກອງໄມ້ເຈື່ອນ

ໃນເວລາອະທິບາຍຢູ່ບ່ອນເຮັດວຽກ ແມ່ນ ຈຳເປັນຕ້ອງໄດ້ດັດແປງເນື້ອໃນ ດັ່ງຕໍ່ໄປນີ້. ຕົວຢ່າງ, ຄຳສັບຕ່າງໆ ເຊັ່ນ ການໃຊ້ ຄຳວ່າ “ຂວາ” ແລະ “ຊ້າຍ” ເພື່ອບອກຕຳແໜ່ງ ແມ່ນ ບໍ່ເຫມາະສົມສຳລັບການຊີ້ບອກສະຖານທີ່, ສະນັ້ນ ໃຫ້ໃຊ້ຄຳສັບທີ່ສະແດງເຖິງທິດທາງ. ຕົວຢ່າງ, “ລຽບຕາມເຂດແດນເບື້ອງຕາເວັນຕົກ” ຫຼື “ທາງໃຕ້ຂອງຖະໜົນເຮັດວຽກXX” ເປັນຕົ້ນ. ຖ້າທ່ານຕ້ອງການສື່ສານບາງສິ່ງບາງຢ່າງທີ່ກ່ຽວຂ້ອງກັບການຕັດໄມ້ຢູ່ພາກສະໜາມ, ໃຫ້ຂຽນມັນໃສ່ໃນແຜນວາດ (ເຊັ່ນ: ແຜນວາດກ່ຽວກັບແຜນການເຮັດວຽກ) ຫຼື ໃຫ້ໃຊ້ຮູບແຕ້ມທີ່ງ່າຍດາຍກ່ຽວກັບສະໜາມບ່ອນເຮັດວຽກ.

ຕົວຢ່າງການສື່ສານທີ່ນຳໄປສູ່ການປັບປຸງສະພາບແວດລ້ອມການເຮັດວຽກ ແລະ ການເຮັດວຽກເປັນທີມ

ມັນເປັນສິ່ງຈຳເປັນທີ່ຈະໃຊ້ໂອກາດຕໍ່ໄປນີ້ຢ່າງເຂັ້ມແຂງ ແລະ ພະຍາຍາມປັບປຸງການເຮັດວຽກເປັນທີມ.

ຕົວຢ່າງຂອງການສື່ສານກ່ຽວກັບວິທີການດຳເນີນວຽກງານ

ກ່ຽວກັບວິທີການດຳເນີນວຽກງານ (ຮູບ 1-6)


· ເຂົ້າຮ່ວມກອງປະຊຸມທີ່ພະນັກງານເຂົ້າຮ່ວມ ແລະ ປຶກສາຫາລືກ່ຽວກັບວິທີການດຳເນີນວຽກງານ.
· ນຳໃຊ້ກະດານພາຍໃນຫ້ອງການ, ກະດານຂ່າວ, ເອກະສານທີ່ແບ່ງປັນ ເພື່ອສາມາດແບ່ງປັນຂໍ້ມູນທີ່ຈຳເປັນໃຫ້ທຸກຄົນ.

ສິ່ງທີ່ກ່ຽວຂ້ອງກັບການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ການພົວພັນກັນຢູ່ໃນບ່ອນເຮັດວຽກ

· ແກ້ໄຂບັນຫາຂອງຕົນເອງ, ປຶກສາຫາລືເພື່ອນຮ່ວມງານ ແລະ ຫົວໜ້າ, ຂໍຄວາມຊ່ວຍເຫຼືອ ແລະ ຄຳແນະນຳເພື່ອແກ້ໄຂບັນຫາທີ່ເປັນບັນຫາ.
· ນຳໃຊ້ການພົບປະເລັກໆນ້ອຍໆ ແລະ ບົດລາຍງານປະຈຳວັນ ເພື່ອເຮັດໃຫ້ເພື່ອນຮ່ວມງານສາມາດລາຍງານ ແລະ ປຶກສາຫາລືກ່ຽວກັບບັນຫາວຽກງານໄດ້ງ່າຍຂຶ້ນ.
· ດັດແປງໃຫ້ມີການຮູ້ຈັກຢ່າງກ່າວຄຳຂອບໃຈໃນທຸກໆມື້, ຈັດງານລ້ຽງສາມັກຄີ ແລະ ເຂົ້າຮ່ວມງານດັ່ງກ່າວ ເພື່ອເປັນການສ້າງບັນຍາກາດແຫ່ງຄວາມເຂົ້າໃຈ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຢູ່ບ່ອນເຮັດວຽກ.
· ເຂົ້າຮ່ວມການຝຶກອົບຮົມ ແລະ ການຝຶກຝົນຢູ່ສະຖານທີ່ເຮັດວຽກເພື່ອປັບປຸງຂີດຄວາມສາມາດ ແລະ ສີມືແຮງງານ.

ເອກະສານ: “ຄູ່ມືການປັບປຸງສະພາບແວດລ້ອມການເຮັດວຽກແບບມີສ່ວນຮ່ວມເພື່ອສ້າງບ່ອນເຮັດວຽກທີ່ມີຊີວິດຊີວາ” ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ “ສະບັບປັບປຸງປີ 2018”





ຮູບທີ 1-6 ຕົວຢ່າງຂອງການສື່ສານພາຍໃນບ່ອນເຮັດວຽກທີ່ກ່ຽວຂ້ອງກັບວິທີການດຳເນີນວຽກງານ

ແບ່ງປັນຂໍ້ມູນໃນກອງປະຊຸມທີ່ມີຜູ້ເຂົ້າຮ່ວມທັງໝົດແບບສັ້ນໆ ແລະ ນຳໃຊ້ກະດານຂ່າວຕ່າງໆເພື່ອແບ່ງປັນຂໍ້ມູນທີ່ຈຳເປັນ.

ພື້ນຖານ ໃນການປ້ອງກັນອຸບັດຕິເຫດ ໃນຄະນະປະຕິບັດວຽງານ 1 ອຸປະກອນຄວາມປອດໄພສຳລັບແຕ່ລະປະເພດ ໃນການເຮັດວຽກ

ຄຳແນະນຳສຳລັບຄວາມປອດໄພໃນເວລາຮັດວຽກທີ່ນຳໃຊ້ຈັກເລື່ອຍໄມ້ໃນການຕັດຕົ້ນໄມ້ ເປັນຕົ້ນ

ອຸປະກອນຄວາມປອດໄພ ທີ່ເປັນ ອຸປະກອນປ້ອງກັນຕ່າງໆ ແມ່ນ ມີຄວາມສຳຄັນ ເນື່ອງຈາກວ່າ ມັນເປັນແນວປ້ອງກັນອັນສຸດທ້າຍ ໃນເວລາມີບາງສິ່ງບາງຢ່າງ ເຊັ່ນ: ສາຍໂສ້ຂອງໃບເລື່ອຍໃກ້ຈະເຂົ້າມາຖືກຮ່າງກາຍສ່ວນໃດສ່ວນໜຶ່ງ ເປັນຕົ້ນ. ເພື່ອຮັບປະກັນຄວາມປອດໄພ ແມ່ນ ໃຫ້ເອົາໃຈໃສ່ກ່ຽວກັບຈຸດຕໍ່ໄປນີ້ ເພື່ອເຮັດໃຫ້ແນ່ໃຈວ່າ ໄດ້ມີການສວມໃສ່ ອຸປະກອນປ້ອງກັນ ເຊັ່ນ ອຸປະກອນນິລະໄພຢ່າງເຄັ່ງຄັດແລ້ວ.

ມາດຕະຖານໃນການຄັດເລືອກອຸປະກອນນິລະໄພ

ໃນເວລາປະຕິບັດວຽກງານຢູ່ສະຖານທີ່ເຮັດວຽກ ເຊັ່ນ: ການດູແລປ່າໄມ້ (ການປູກຝັງ, ການປູກຕົ້ນໄມ້, ການຖາກຖາງເພື່ອບົວລະບັດ ແລະອື່ນໆ), ການຜະລິດວັດສະດຸໄມ້ (ການຕັດໄມ້, ການແປຮູບໄມ້, ການເກັບກ່ຽວໄມ້) ແມ່ນ ໃຫ້ໃສ່ອຸປະກອນປ້ອງກັນໃຫ້ຖືກຕ້ອງ ເພື່ອຮັກສາຄວາມປອດໄພ. (ຮູບ 1- 7, ຮູບ 1-8, ຮູບ 1-9, ຕາຕະລາງ 1-1). ສິ່ງສຳຄັນ ແມ່ນ ຕ້ອງສວມໃສ່ໃຫ້ຖືກຕ້ອງ ແລະ ຕ້ອງເປັນເຄື່ອງທີ່ມີປະສິດທິພາບໃນການປ້ອງກັນໄພສູງ, ເຮັດວຽກໄດ້ດີ, ເບິ່ງເຫັນໄດ້ຢ່າງຊັດເຈນ ແລະ ນຳໃຊ້ງ່າຍສຳລັບສະລິລະຂອງຮ່າງກາຍ.

ໃນການເລືອກອຸປະກອນນິລະໄພ ເຊັ່ນ: ອຸປະກອນປ້ອງກັນ ແມ່ນ ໃຫ້ເອົາໃຈໃສ່ສິ່ງຕໍ່ໄປນີ້.

1. ໂສ້ງນິລະໄພ (ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້)

ຕ້ອງນຳໃຊ້ໂສ້ງທີ່ດ້ານໜ້າຂອງໂສ້ງມີວັດສະດຸປ້ອງກັນຄວາມເສຍຫາຍຈາກສາຍໂສ້ ແລະ ຕ້ອງເປັນໂສ້ງນິລະໄພທີ່ຜ່ານມາດຖານອຸດສາຫະກຳຂອງປະເທດຍີ່ປຸ່ນ (JIS) T8125-2 ຫຼື ໂສ້ງທີ່ມີປະສິດທິພາບທຽບເທົ່າ ຫຼື ສູງກວ່າ. ຫ້າມໃຊ້ອຸປະກອນທີ່ມີ ທີ່ເຊື່ອມຄຸນນະພາບ ເຊັ່ນ: ໂສ້ງທີ່ຖືກແຂ້ວຂອງໃບເລື່ອຍແລ້ວ ເສັ້ນໄຍຂອງໂສ້ງຖືກດຶງອອກ (ໂສ້ງເສຍຄຸນ).

2. ເຄື່ອງນຸ່ງຫົ່ມ

ກ. ເຄື່ອງນຸ່ງຮົ່ມ ແມ່ນ ເຄື່ອງທີ່ໃຊ້ສຳລັບການປົກປິດຜິວໜັງ ເພື່ອບໍ່ໃຫ້ຜິວໜັງສຳຜັດໂດຍກົງ ກັບ ໃບມີດ, ອຸປະກອນ, ເຄື່ອງມື, ສັດພືດທີ່ອັນຕະລາຍ ແລະ ງ່າໄມ້ ເປັນຕົ້ນ, ແລະ ຕ້ອງສວມໃສ່ເສື້ອແຂນຍາວ ແລະ ໂສ້ງຂາຍາວທີ່ເໝາະສົມກັບຄວາມສູງຂອງຮ່າງກາຍ. ນອກຈາກນັ້ນ, ເພື່ອປ້ອງກັນບໍ່ໃຫ້ໄປຄາຢູ່ສິ່ງຂອງ ຫຼື ເຄື່ອງຈັກທີ່ຢູ່ອ້ອມຂ້າງ, ດັ່ງນັ້ນຈຶ່ງໃຫ້ເລືອກເອົາເສື້ອຜ້າໂຕທີ່ມີແຂນຂາ ແລະ ແຂບທີ່ດີ.

ຂ. ສຳລັບວັດສະດຸຂອງເສື້ອຜ້າ ແມ່ນ ໃຫ້ເລືອກອຸປະກອນເຄື່ອງນຸ່ງທີ່ມີປະສິດທິພາບໃນການໃຊ້ງານໄດ້ສູງ ພ້ອມທັງກັນນ້ຳ ແລະ ລະບາຍອາກາດໄດ້ດີ.

ຂ. ເມື່ອເຮັດວຽກໃນສະພາບແວດລ້ອມທີ່ໜາວເຢັນ, ຕ້ອງສວມໃສ່ຊຸດຊ້ອນໃນທີ່ຖືກອອກແບບມາເພື່ອປົກປ້ອງຈາກຄວາມເຢັນ.

3. ຖົງມື

ຕ້ອງນຳໃຊ້ຖົງມືທີ່ງ່າຍຕໍ່ການປະຕິບັດວຽກງານ ພ້ອມທັງມີປະໂຫຍດໃນການປ້ອງກັນການສັ່ນສະເທືອນ ແລະ ຄວາມເຢັນ.

4. ເກີບນິລະໄພ

ຕ້ອງນຳໃຊ້ເກີບນິລະໄພ ທີ່ເຮັດຈາກວັດສະດຸທີ່ສາມາດປ້ອງກັນ ນິ້ວຕີນ, ສັນຕີນ, ຂໍ້ຕີນ ແລະ ເຄິ່ງໜ້າຂອງບີແຂ່ງ ບໍ່ໃຫ້ຮັບຄວາມເສຍຫາຍຈາກໂສ້, ເຊິ່ງຕ້ອງເປັນເກີບທີ່ຜ່ານມາດຕະຖານ JIS T8125-3 ຫຼື ເກີບທີ່ມີຄຸນສົມບັດທຽບເທົ່າ ຫຼື ດີກວ່າ.

5. ໝວກນິລະໄພ, ຕາໜ່າງນິລະໄພ - ແວ່ນຕານິລະໄພ, ແລະ ອຸປະກອນປ້ອງກັນສຽງ

ກ. ຕ້ອງໃສ່ໝວກນິລະໄພສະເໝີ ເພື່ອປ້ອງກັນອັນຕະລາຍໃຫ້ພະນັກງານ ໃນກໍລະນີມີສິ່ງຂອງປົວມາ, ຕຳ ແລະ ຕົກມາໃສ່.ຕ້ອງເລືອກໝວກ ກັນກະທົບ ທີ່ໄດ້ມາດຕະຖານ (ແຈ້ງການ ກະຊວງແຮງງານ ສະບັບເລກທີ 66 ປີ 1975) ແລະ ຕ້ອງມີເຄື່ອງໝາຍຢັ້ງຢືນຮັບຮອງປະເພດຂອງໝວກຕິດຢູ່.

ຂ. ໃຊ້ຕາຫນ່າງນິລະໄພ (ໜ້າກາກນິລະໄພ) ຫຼື ແວ່ນຕານິລະໄພ ເພື່ອປົກປ້ອງໃບຫນ້າ ແລະ ຕາ ຈາກເສດໄມ້ ແລະ ເສດຫີນ.

ຄ. ຕ້ອງໃຊ້ແນວອັດຫູ (ແນວປົດຫູ) ເພື່ອປ້ອງກັນສຽງລົບກວນ, ໃນເວລາເປີດໃຊ້ເຄື່ອງຈັກຂອງຈັກເລື່ອຍໄມ້ ແລະ ເຄື່ອງຕັດ ເປັນຕົ້ນ.



ຮູບທີ 1-7 ຕົວຢ່າງຂອງອຸປະກອນຄວາມປອດໄພ (ວຽກງານປູກໄມ້ - ປູກຝັງ)



ຮູບທີ 1-8 ຕົວຢ່າງຂອງອຸປະກອນຄວາມປອດໄພ (ວຽກງານຕັດຫຍ້າ)



ຮູບທີ 1-9 ຕົວຢ່າງຂອງອຸປະກອນຄວາມປອດໄພ (ວຽກງານຕັດໄມ້, ແປຮູບໄມ້, ເກັບກ່ຽວໄມ້)

ຕາຕະລາງ 1-1 ບັນຊີລາຍຊື່ອຸປະກອນຄວາມປອດໄພ

ວຽກງານປູກຕົ້ນໄມ້	ວຽກງານກະກຽມດິນ	ໝວກກັນກະທົບ, ໝາກຫວີດ, ໜ້າກາກນິລະໄພ (ແວ່ນຕາ), ແນວອັດຫູ (ແນວປິດຫູ), ຕາໜ່າງກັນເຜິ້ງ, ຖົງມືປ້ອງກັນການສັ່ນສະເທືອນ, ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້, ສາຍຫັດແອວ ເຄື່ອງຕັດຫຍ້າ, ສາຍຫັດຕົ້ນຂາ, ສະໜັບປ້ອງກັນບິແຂ່ງ, ເກີບໂບກນິລະໄພ, ເກີບນິລະພັນ ເປັນຕົ້ນ. →ໃຫ້ເລືອກເອົາຕາມຄວາມຈຳເປັນ
	ວຽກງານຕັດແຕ່ງ	ໝວກກັນກະທົບ, ໝາກຫວີດ, ໜ້າກາກນິລະໄພ (ແວ່ນຕາ), ຕາໜ່າງກັນເຜິ້ງ, ຖົງມື, ເກີບໂບກນິລະໄພ, ເກີບນິລະໄພ ເປັນຕົ້ນ. →ໃຫ້ເລືອກເອົາຕາມຄວາມຈຳເປັນ
ວຽກງານປູກຝັງ	ວຽກງານຖາງຫຍ້າ	ຫມວກກັນກະທົບ, ໝາກຫວີດ, ຫນ້າກາກນິລະໄພ (ແວ່ນຕາ), ແນວອັດຫູ (ແນວປິດຫູ), ຕາຫນ່າງກັນເຜິ້ງ, ຖົງມືປ້ອງກັນການສັ່ນສະເທືອນ, ສາຍຫັດແອວ ເຄື່ອງຕັດຫຍ້າ, ສາຍຫັດຕົ້ນຂາ, ສະໜັບປ້ອງກັນບິແຂ່ງ, ເກີບໂບກນິລະໄພ, ເກີບນິລະພັນ ເປັນຕົ້ນ.
ວຽກງານຕັດໄມ້	ການຄັດສັນຕົ້ນກ້າ ການໃຊ້ປະໂຫຍດ ຈາກການຕອນ ການຕັດຕົ້ນໄມ້	ຫມວກກັນກະທົບ, ໝາກຫວີດ, ຫນ້າກາກນິລະໄພ (ແວ່ນຕາ), ແນວອັດຫູ (ແນວປິດຫູ), ຖົງມືກັນການສັ່ນສະເທືອນ, ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້ (ໂສ້ງນິລະໄພ), ເກີບໂບກນິລະໄພ, ເກີບນິລະໄພ ເປັນຕົ້ນ.
ວຽກງານ ແປຮູບໄມ້	ວຽກງານແປຮູບໄມ້	ຫມວກກັນກະທົບ, ໝາກຫວີດ, ຫນ້າກາກນິລະໄພ (ແວ່ນຕາ), ແນວອັດຫູ (ແນວປິດຫູ), ຖົງມືກັນການສັ່ນສະເທືອນ, ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້ (ໂສ້ງນິລະໄພ), ເກີບໂບກນິລະໄພ, ເກີບນິລະໄພ ເປັນຕົ້ນ.
ວຽກງານ ເກັບກ່ຽວໄມ້	ວຽກງານເກັບກ່ຽວ ໄມ້	ຫມວກກັນກະທົບ, ໝາກຫວີດ, ຫນ້າກາກນິລະໄພ (ແວ່ນຕາ), ແນວອັດຫູ (ແນວປິດຫູ), ຖົງມືກັນການສັ່ນສະເທືອນ, ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້ (ໂສ້ງນິລະໄພ), ເກີບໂບກນິລະໄພ, ເກີບນິລະໄພ ເປັນຕົ້ນ.

ເອກະສານ: ສະຫະພັນປ່າໄມ້ແຫ່ງຊາດ "ບົດລາຍງານຂອງຄະນະກຳມະການກວດກາ ກ່ຽວກັບ ການປັບປຸງການຝຶກອົບຮົມກຸ່ມ FW" 03/2019

ຕ້ອງເອົາໃຈໃສ່ຕໍ່ມາດຕະຖານການປະຕິບັດ

- ○ ຕ້ອງໃຊ້ໂສ້ງນິລະໄພ ແລະ ເກີບນິລະໄພທີ່ໄດ້ມາດຕະຖານ JIS, ISO ຫຼື EN.
- ○ ເກີບ ຈິກະຕາບິ (ເກີບແບບຍີ່ປຸ່ນທີ່ມີຮອຍແຍກຢູ່ນິ້ວຕີນ) ທີ່ໄດ້ມາດຕະຖານ JIS ຕ່າງໆ ແລະ ມີສ່ວນປະກອບຂອງວັດສະດຸນິລະໄພ ຈະຕ້ອງກົງກັບແນວທາງໃນການປະຕິບັດ.
- ○ ຖ້າເຄິ່ງດ້ານໜ້າຂອງບີແຄ່ງຂອງເກີບນິລະໄພ ບໍ່ມີວັດສະດຸປ້ອງກັນ ແມ່ນ ໃຫ້ສວມໃສ່ສະໜັບປ້ອງກັນຂາ.

ເອກະສານ: “ແນວທາງການປະຕິບັດຕາມຄວາມປອດໄພໃນການຕັດໄມ້ດ້ວຍຈັກເລື່ອຍໄມ້” ວັນທີ 31/1/2020, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ພື້ນຖານການປ້ອງກັນອຸບັດຕິເຫດຢູ່ບ່ອນເຮັດວຽກ 2 ຫຼັກການ ຂອງການປະຕິບັດວຽກງານ ປ້ອງກັນອຸບັດຕິເຫດ, ຄວາມປອດໄພ ແລະ ສຸຂະພາບ ແຕ່ລະກິດຈະກຳ

ການບັງຄັບໃຊ້ຂັ້ນຕອນການເຮັດວຽກ

ໃນການປະຕິບັດວຽກງານຢູ່ສະໜາມວຽກ ເຊັ່ນ: ການບຳລຸງຮັກສາປ່າໄມ້ ແລະ ການຜະລິດວັດສະດຸຈາກປ່າໄມ້ ແມ່ນ ຈະຕ້ອງໄດ້ກຳນົດຂັ້ນຕອນການເຮັດວຽກ. ພື້ນຖານ ແມ່ນ ອີງໃສ່ຂໍ້ກຳນົດໃນກົດໝາຍທີ່ກ່ຽວຂ້ອງໃນການຮັບປະກັນຄວາມປອດໄພ “ຄູ່ມືຄວາມປອດໄພຂອງການຕັດໄມ້ດ້ວຍຈັກເລື່ອຍໄມ້ ຕ່າງໆ” ໂດຍ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຕົວຢ່າງ, ໃນການຕັດໄມ້, ມີຂັ້ນຕອນດັ່ງຕໍ່ໄປນີ້:

·ການກະກຽມກ່ອນທີ່ຈະເຮັດວຽກ (ການຢືນຢັນກ່ຽວກັບ ທີ່ຕັ້ງ, ພູມສັນຖານ, ທິດທາງຂອງລົມ, ຄວາມໄວຂອງລົມ, ຊະນິດຂອງຕົ້ນໄມ້, ສະພາບຂອງເຄື່ອໄມ້ - ກິ່ງກ້ານ, ມີກິ່ງກ້ານທີ່ຕາຍ ຫຼືບໍ່ ເປັນຕົ້ນ)

·ການຢືນຢັນກ່ຽວກັບການອົບພະຍົບ ແລະ ເຂດຫ້າມຜ່ານ

·ວຽກງານການຕັດໄມ້ (ຮອຍບາກດ້ານໜ້າ, ຮອຍບາກຫລັງ, ການຕອກເຫຼັກລິ້ມ, ການລົ້ມຂອງຕົ້ນໄມ້ ແລະ ການອົບພະຍົກ)

ການກຳນົດຂັ້ນຕອນການເຮັດວຽກແຕ່ລະພື້ນທີ່ຂອງວຽກງານ, ໂດຍຫຼັກໆແລ້ວ ແມ່ນ ເພື່ອຮັບປະກັນຄວາມປອດໄພຂອງການເຮັດວຽກ ແລະ ຍັງເປັນການປັບປຸງຄຸນນະພາບຂອງຜົນການເຮັດວຽກ ແລະ ການເຮັດວຽກເປັນທີມກໍມີປະສິດທິພາບດີ.

ຈຸດສຳຄັນຫຼັກຂອງຂັ້ນຕອນການດຳເນີນວຽກງານ ແມ່ນການຄຳໝຶງເຖິງຄວາມປອດໄພ ແລະ ສຸຂະພາບ, ສະນັ້ນ ຈຶ່ງຕ້ອງໄດ້ກຳນົດກ່ຽວກັບສິ່ງສຳຄັນບົນພື້ນຖານ ຂອງຄວາມປອດໄພ ແລະ ສຸຂະອະນາໄມ ແລະ ສິ່ງທີ່ຫ້າມປະຕິບັດ ເປັນຕົ້ນ, ຈຶ່ງຕ້ອງໄດ້ຮຽນຮູ້ວ່າ ເປັນຫຍັງຈຶ່ງມີກົດລະບຽບແບບນັ້ນ ແລະ ຕ້ອງເຮັດວຽກຕາມຂັ້ນ ຕອນຢ່າງເຄັ່ງຄັດ.

ຫົວຂໍ້ທີ່ຕ້ອງໄດ້ເອົາໃຈໃສ່ ແມ່ນ ມີລາຍລະອຽດດັ່ງລຸ່ມນີ້.

·ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ກົດລະບຽບຂອງບ່ອນເຮັດວຽກ ກ່ຽວກັບສິ່ງທີ່ຄວນເຮັດ ແລະ ສິ່ງທີ່ບໍ່ຄວນເຮັດບົນພື້ນຖານ ຄວາມປອດໄພ.

·ເວລາບໍ່ເຂົ້າໃຈຂັ້ນຕອນການເຮັດວຽກ, ບໍ່ໃຫ້ປະໄວ້ແບບນັ້ນ ແລ້ວໃຫ້ຢືນຢັນກັບຜູ້ຮັບຜິດຊອບ (ຫົວໜ້າທີມງານ ເປັນຕົ້ນ) ສະເໝີ.

·ຕ້ອງເອົາໃຈໃສ່ລະມັດລະວັງບໍ່ໃຫ້ບາດເຈັບຈາກຄວາມເຄັ່ຍຊິນ, ຫ້າມກະທຳຄວາມຮຸນແຮງ ແລະ ການກະທຳໂດຍພາລະການ.

ນອກຈາກນີ້, ສິ່ງສຳຄັນໃນຂັ້ນຕອນການເຮັດວຽກ ແມ່ນ ບ່ອນເຮັດວຽກຕ້ອງດຳເນີນການປະເມີນຄວາມສ່ຽງ ແລະ ທົບທວນຄືນເພື່ອເຮັດໃຫ້ມີຄວາມປອດໄພຍິ່ງຂຶ້ນ.

ພາບລວມຂອງເຫດການທີ່ເກືອບຈະເກີດອຸບັດຕິເຫດ

ເຫດການທີ່ເກືອບຈະເກີດອຸບັດຕິເຫດ (ເຫດການ HH) ເປັນເຫດການທີ່ຍົກຕົວຢ່າງຂອງເຫດການ “ເກືອບພາດ” ຫຼື “ຄວາມຕົກໃຈ” ເຊັ່ນ: ຄົນທີ່ເກືອບໄດ້ຮັບບາດເຈັບໃນຂະນະທີ່ເຮັດວຽກ, ແລ້ວເຊື່ອມໂຍງໄປສູ່ການປ້ອງກັນອຸບັດຕິເຫດ. ວິທີທີ່ມີປະສິດທິຜົນ ຕໍ່ກັບຄວາມເຂົ້າໃຈ ຢູ່ບ່ອນເຮັດວຽກ ທີ່ມີຄວາມອັນຕະລາຍປະເພດໃດແມ່ (ຮູບ 1-10).


ຈຸດສຳຄັນສຳລັບການຈັດຕັ້ງປະຕິບັດ “ເຫດການທີ່ໃກ້ຈະພາດ”

① ການລາຍງານເຫດການທີ່ໃກ້ຈະພາດ

ການຂາດສະຕິ ຫຼື ການຈົດຈຳ ຫຼຸດລົງໄປຕາມການເວລາ. ການລາຍງານແບບຟອມທີ່ກຳນົດໄວ້ ໃນຕອນທ້າຍ (ຕອນເລີກວຽກ) ຂອງມື້ (ຮູບ 1-11).


② ຄວາມຮັບຜິດຊອບ ບໍ່ແມ່ນຂຶ້ນກັບຜູ້ລາຍງານ

ເຫດການທີ່ໃກ້ຈະເກີດອຸບັດຕິເຫດ ແມ່ນ ເກີດຈາກການກະທຳທີ່ບໍ່ປອດໄພ ສະນັ້ນ ຈຶ່ງບໍ່ແມ່ນຄວາມຮັບຜິດຊອບຂອງຜູ້ລາຍງານ ແລະ ໃຫ້ກວດສອບໃຫ້ແນ່ໃຈວ່າ ມັນໃຊ້ສຳລັບກິດຈະກຳຄວາມປອດໄພຂອງບ່ອນເຮັດວຽກເທົ່ານັ້ນ. ຖ້າຫາກຄວາມຮັບຜິດຊອບ ແມ່ນຂຶ້ນກັບຜູ້



ຮູບທີ 1-10 ວິທີການດຳເນີນເຫດການທີ່ເກືອບຈະເກີດອຸບັດຕິເຫດ (ພາບວາດ)

ແຫຼ່ງຂໍ້ມູນ: “(ຕົວຢ່າງ) ກ່ຽວກັບການນຳເອົາລະບົບການລາຍງານ ເຫດການທີ່ເກືອບຈະເກີດອຸບັດຕິເຫດ - ຄາດຄະເນວ່າໃກ້ຈະເກີດ ອຸບັດຕິເຫດ ເຂົ້າມານຳໃຊ້” ເວັບໄຊກົມແຮງງານ ກະຊວງສາທາລະນະສຸກ ແຮງງານ ແລະ ສະຫວັດດີການ ແຂວງ ນີງາຕະ



ປະເພດຂອງບັດລາຍງານ: ໃຫ້ໝາຍ ○ ໃສ່ ຂ້ໃດຂໍ້ໜຶ່ງ
↑ ລະຫວ່າງເຫດການທີ່ເກືອບຈະເກີດອຸບັດຕິເຫດ - ເຫດການທີ່ເກືອບຈະເກີດອຸບັດຕິເຫດແບບຄາດຄະເນ.

ການລາຍງານ ເຫດການທີ່ເກືອບຈະເກີດອຸບັດຕິເຫດ - ເຫດການທີ່ເກືອບຈະເກີດອຸບັດຕິເຫດແບບຄາດຄະເນ

ຊື່ບ່ອນສັງກັດ			
ເມື່ອໃດ	ປີ Heisei ທີ ເດືອນ ວັນທີ (ວັນ))ປະມານ ໂມງ ນາທີ		
ຢູ່ໃສ		ໃນເວລາທີ່ໄດ້ເຮັດຫຍັງຢູ່	
ສະຫຼຸບສັງລວມ ກ່ຽວກັບ ເວລາທີ່ຮູ້ສຶກວ່າເປັນເຫດການ ທີ່ເກືອບຈະເກີດອຸບັດຕິເຫດ ຫຼື ຮູ້ສຶກວ່າ ມີຄວາມສ່ຽງ ແລະ ອັນຕະລາຍ			

ໄດ້ມີບັນຫາ (ສະພາບຕົວຈິງທີ່ບໍ່ປອດໄພ ຫຼື ການກະທຳ) ແບບໃດບໍ?
[ກະລຸນາຕື່ມຂໍ້ມູນກ່ຽວກັບມາດຕະການທີ່ຄິດວ່າເປັນໄປໄດ້ ແລະ ສະພາບຕົວຈິງໃນເວລານັ້ນ ໃສ່ໃນຖັນຂອງຫົວຂໍ້ທີ່ມີບັນຫາ.]

① ບັນຫາກ່ຽວກັບສະພາບແວດລ້ອມບ່ອນເຮັດວຽກ

② ບັນຫາກ່ຽວກັບອຸປະກອນ

③ ບັນຫາກ່ຽວກັບວິທີການເຮັດວຽກ

ບັນຫາຂອງເຈົ້າເອງ

ວິເຄາະຈິດໃຈ ແລະ ຮ່າງກາຍ
(ໝາຍ ○ ໃສ່ຫົວຂໍ້ທັ້ງໝົດທີ່ສອດຄ່ອງ)
1. ບໍ່ເຫັນ (ບໍ່ໄດ້ຍິນ) ດີ
2. ບໍ່ໄດ້ສັງເກດ
3. ລືມ
4. ບໍ່ຮູ້
5. ບໍ່ໄດ້ຄິດເລິກໆ
6. ຄິດວ່າບໍ່ເປັນຫຍັງ
7. ຮີບຮ້ອນ
8. ຮູ້ສຶກບໍ່ເພິ່ງປະສົງ
9. ເມື່ອຍ
10. ເຄື່ອນເໜັງມືໂດຍບໍ່ຮູ້ໂຕ
11. ມັນຍາກທີ່ຈະເຮັດ
12. ສູນເສຍຄວາມສົມດຸນຂອງຮ່າງກາຍ

ມາດຕະການໃນອະນາຄົດ (ຢາກໃຫ້ເຮັດແບບນີ້ - ເຮັດແນວນີ້ດີກ່ອນ)

* ສຳລັບຖັນທີ່ຕ້ອງຕື່ມຂໍ້ມູນຂອງຜູ້ຄຸ້ມຄອງຄວາມປອດໄພ: ແມ່ນ ບໍ່ໃຫ້ຜູ້ລາຍງານ ຕື່ມຂໍ້ມູນໃສ່

ຮູບທີ 1-11 ຕົວຢ່າງແບບຟອມການລາຍງານເຫດການທີ່ເກືອບຈະ ເກີດອຸບັດຕິເຫດ

ແຫຼ່ງຂໍ້ມູນ: ເວັບໄຊກົມແຮງງານ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ແຂວງ ນີງາຕະ
“(ຕົວຢ່າງ) ກ່ຽວກັບການນຳເອົາລະບົບການລາຍງານ ເຫດການທີ່ ເກືອບຈະເກີດອຸບັດຕິເຫດ - ຄາດຄະເນວ່າໃກ້ຈະເກີດອຸບັດຕິເຫດ ເຂົ້າມານຳໃຊ້”

ລາຍງານ ກໍ່ຈະບໍ່ມີການລາຍງານ.

③ ນຳໃຊ້ ເຫດການທີ່ເກືອບຈະເກີດອຸບັດຕິເຫດ ເພື່ອນຳມາເປັນບົດຮຽນ ແລະ ປັບປຸງແກ້ໄຂ

ຫຼັງຈາກການລາຍງານ, ຜູ້ຄຸ້ມຄອງ ຜູ້ບໍລິຫານ ຈະຕ້ອງດຳເນີນການປັບປຸງໃຫ້ດີຂຶ້ນ ແລ້ວແບ່ງປັນໃຫ້ພະນັກງານຮັບຮູ້ນຳ. ມັນຈະເປັນການກະຕຸ້ນໃຫ້ມີການເຂົ້າຮ່ວມໃນເຫດການທີ່ເກືອບຈະພາດ. ມັນເປັນສິ່ງສຳຄັນທີ່ຈະຍ້ອນກັບໄປຫາສາເຫດຂອງໄພອັນຕະລາຍທີ່ເຊື່ອມໂຍງໄປສູ່ເຫດການທີ່ເກືອບຈະເປັນອຸບັດຕິເຫດ ແລ້ວນຳໃຊ້ມາດຕະການໃນການປ້ອງກັນ.

④ ການແບ່ງປັນຂໍ້ມູນກ່ຽວກັບເຫດການທີ່ໃກ້ຈະເກີດອຸບັດຕິເຫດ

ກ່ຽວກັບຂໍ້ມູນຂອງເຫດການທີ່ໃກ້ຈະເກີດອຸບັດຕິເຫດ ແມ່ນ ໃຫ້ຮີບຮ້ອນແຈ້ງຕໍ່ພະນັກງານຜູ້ທີ່ກຳລັງປະຕິບັດໜ້າທີ່ດຽວກັນໃນບ່ອນເຮັດວຽກ ເພື່ອປ້ອງກັນບໍ່ໃຫ້ເກີດເຫດການແບບດຽວກັນນີ້ເກີດຂຶ້ນອີກ.

ຕົວຢ່າງຂອງຮູບແບບບົດລາຍງານກ່ຽວກັບເຫດການທີ່ໃກ້ຈະເກີດອຸບັດຕິເຫດໂດຍ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ແມ່ນ ສະແດງໃຫ້ເຫັນຂ້າງລຸ່ມນີ້.

ກົດເກນຂອງໄຮຣິດ (Heinrich)

ການວິເຄາະອຸບັດເຫດທາງອຸດສາຫະກຳຈຳນວນຫຼາຍ ຈະເຫັນ ວ່າ: ກໍລະນີເກີດອຸບັດຕິເຫດ ຮ້າຍແຮງ ຫຼື ເສຍຊີວິດ ແມ່ນ 1 ກໍລະນີ ຈະມີຜູ້ບາດເຈັບເລັກນ້ອຍ 29 ກໍລະນີ ທີ່ເກີດຈາກສາເຫດດຽວກັນ ແລະ ອຸບັດຕິເຫດ ທີ່ບໍ່ໄດ້ຮັບບາດເຈັບໃນລັກສະນະດຽວກັນ 300 ກໍລະນີ. ອັນນີ້ ເອີ້ນວ່າ ກົດເກນຂອງໄຮຣິດ Heinrich.

ໂດຍການຫຼຸດຜ່ອນອຸບັດຕິເຫດທີ່ບໍ່ມີການບາດເຈັບ (ເຫດການທີ່ເກືອບຈະເກີດອຸບັດຕິເຫດ) 300 ກໍລະນີນີ້, ສາມາດຄາດຫວັງໄດ້ວ່າຈະສາມາດຫຼຸດຜ່ອນຈຳນວນການບາດເຈັບເລັກນ້ອຍ ແລະ ບາດເຈັບຮ້າຍແຮງ ໄດ້, ດັ່ງນັ້ນ ຂໍ້ມູນນີ້ ແມ່ນ ເປັນປະໂຫຍດສຳລັບການປ້ອງກັນລ່ວງໜ້າໃນການເສຍຊີວິດ ແລະ ການບາດເຈັບ.

ເອກະສານ: "ຄູ່ມືການສຶກສາດ້ານຄວາມປອດໄພ ແລະ ສຸຂະພາບສຳລັບຜູ້ອອກແຮງງານທີ່ບໍ່ຊຳນິຊຳນານໃນດ້ານອຸດສາຫະກຳການຜະລິດ" 03/2016, ຫ້ອງການກວດກາມາດຕະຖານແຮງງານ, ພະແນກແຮງງານແຂວງ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ພາບລວມຂອງການຝຶກອົບຮົມການຄາດຄະເນອັນຕະລາຍ

ຄິດວ່າ ມະນຸດເຮົາທຸກຄົນ ເຄີຍມີປະສົບການໃນການເຂົ້າໃຈຜິດ, ການຫຼົງຄິດ, ແລະ ເຮັດຜິດພາດແບບບໍ່ຄາດຄິດ. ຄວາມຜິດພາດຂອງມະນຸດເຫຼົ່ານີ້ກວມເອົາອັດຕາສ່ວນໃຫຍ່ຂອງສາເຫດຂອງອຸປະຕິເຫດແຮງງານ. ການຝຶກອົບຮົມກ່ຽວກັບການຄາດຄະເນອັນຕະລາຍ (KYT) ແມ່ນ ຫນຶ່ງໃນວິທີການປ້ອງກັນອຸປະຕິເຫດແຮງງານທີ່ເກີດຈາກຄວາມຜິດພາດຂອງມະນຸດ. ຕົວອັກສອນໂລມັນ KYT ແມ່ນ ການປະສົມປະສານຂອງ K ສຳລັບອັນຕະລາຍ, Y ສຳລັບການຄາດຄະເນ, ແລະ T ສຳລັບການຝຶກອົບຮົມ.

ການຝຶກອົບຮົມການຄາດຄະເນອັນຕະລາຍ ແມ່ນ ຂັ້ນຕອນການປຶກສາຫາລືກ່ຽວກັບອັນຕະລາຍໃນການເຮັດວຽກ ແລະ ບ່ອນເຮັດວຽກ. ມີ ໂຕຜັນແປ ຈຳນວນ 15 ຫາ 20 ໂຕ, ໃນນັ້ນສິ່ງທີ່ເປັນພື້ນຖານ ແມ່ນ ວິທີການພື້ນຖານ 4R (ຮອບ) ໃນການຝຶກອົບຮົມກ່ຽວກັບການຄາດຄະເນອັນຕະລາຍ. ໃນວິທີການນີ້ ຮອບທີ 1 ຂອງການດຳເນີນວຽກງານ ແມ່ນ ການປຶກສາຫາລືເພື່ອຄາດຄະເນ ແລະ ປຶກສາຫາລືກ່ຽວກັບ ກ່ອນ ແລະ ຫຼັງ ຂະບວນການຜະລິດ ວ່າ ມີອັນຕະລາຍໃດແນ່ທີ່ກຳລັງລໍ້ຊ້ອນຢູ່? ໃນເວລານີ້, ຖ້າຫາກວ່າມີເຈ້ຍຮູບແຕ້ມງ່າຍດາຍເຊິ່ງສະແດງໃຫ້ເຫັນວິທີການເຮັດວຽກ ກໍຈະເຮັດໃຫ້ການສົນທະນາລົງເລິກໄດ້ດີ. ໃນຮອບທີ 2 ໃຫ້ ຕັ້ງຄ ຈຸດອັນຕະລາຍທີ່ສຸດຈາກບັນຫາທັງໝົດທີ່ມີໃນຮອບທີ 1 ໃຫ້ ແຄບລົງ, ແລ້ວໃຫ້ຢືນຢັນໂດຍການຊີ້ໄປພ້ອມ ເວົ້າໄປພ້ອມ, ໃນຮອບທີ 3 ໃຫ້ອອກມາດຕະການໃນການຮັບມືກັບຈຸດທີ່ອັນຕະລາຍ. ໃນຮອບທີ 4, ຈາກມາດຕະການທັງໝົດ ແມ່ນ ໃຫ້ກຳນົດເອົາມາດຕະການທີ່ມີປະສິດຕິຜົນ ແລະ ເປັນມາດຕະການທີ່ສາມາດນຳມາປະຕິບັດໄດ້ ແລະ ສ້າງເປົ້າຫມາຍຂອງການປະຕິບັດສຳລັບທີມງານ ແລ້ວໃຫ້ທຸກຄົນໃຊ້ມືຊີ້ໄປພ້ອມ ເວົ້າໄປພ້ອມ. ເພື່ອເປັນການຢືນຢັນຄັ້ງສຸດທ້າຍ, ໃຫ້ກຳນົດລາຍການຫົວຂໍ້ການຊີ້ໄປພ້ອມເວົ້າໄປພ້ອມ, ແລ້ວໃຫ້ທຸກຄົນຊີ້ໄປພ້ອມ ເວົ້າໄປພ້ອມ 3 ຄັ້ງ ເພື່ອສະແດງໃຫ້ເຫັນເຖິງຄວາມຕັ້ງໃຈທີ່ຈະປະຕິບັດຕົວຈິງ (ຮູບ 1-1).

ວິທີການພື້ນຖານ 4R ເປັນວິທີການທີ່ກ່ຽວຂ້ອງກັບການບັນທຶກຄວາມຄືບຫນ້າຂອງການສົນທະນາໃສ່ເຈ້ຍ, ເຊິ່ງການດຳນານວິທີນີ້ ແມ່ນ



ຮູບພາບ 1-1 ສຳເລັດການຝຶກອົບຮົມກ່ຽວກັບການຄາດຄະເນອັນຕະລາຍ
“Touch and Call: ການຈັບມືກັນ ແລ້ວເວົ້າພ້ອມກັນ”

ຈະເຮັດໃຫ້ແລ້ວພາຍໃນເວລາບໍ່ພໍເທົ່າໃດນາທີ ເອີ້ນວ່າ “ຫນຶ່ງຈຸດ KYT” ມັນເປັນວິທີການປະຕິບັດຕົວຈິງສຳລັບການເຮັດວຽກພາກສະຫນາມ.

ສິ່ງສຳຄັນໃນການສ້າງເປົ້າຫມາຍຂອງການປະຕິບັດ ແມ່ນ ເພື່ອສະແດງອອກຢ່າງເປັນຮູບປະທຳ ແລະ ໃນທາງບວກ. ມັນບໍ່ແມ່ນ “ເອົາລະ, ພະຍາຍາມທີ່ຈະບໍ່ຕ້ອງເຮັດຫຍັງເລີຍ ກັນເທາະ”. ແຕ່ ໃຫ້ສະແດງອອກໃນແງ່ບວກວ່າ “ມາເຮັດຫຍັງບາງຢ່າງກັນເທາະ” "ມາເຮັດຫຍັງ!" ແທນ "Yoshi" ສະແດງອອກໃນແງ່ບວກ. ຕົວຢ່າງ, ມັນບໍ່ແມ່ນຄວາມຄິດທີ່ດີທີ່ຈະເວົ້າວ່າ, “ເວລາຕົ້ນໄມ້ລົ້ມ ຢ່າລືມກວດເບິ່ງສະຖານທີ່ອົບພະຍົກເດ້” ຖ້າແບບນັ້ນ ແມ່ນ ຈະບໍ່ຮູ້ວ່າໃຫ້ລະມັດລະວັງແນວໃດ. ຕ້ອງມີມາດຕະການທີ່ຊັດເຈນຫຼາຍຂຶ້ນ. ຕົວຢ່າງ, ໃຫ້ເວົ້າວ່າ “ໃຫ້ອົບພະຍົບໄປຕາມແນວລາດຊັນສະຫຼຽງຂຶ້ນເທິງຄ້ອຍ”

ເປົ້າໝາຍຂອງການດຳເນີນວິທີຊີ້ໄປພ້ອມເວົ້າໄປພ້ອມ ໃນວຽກງານນີ້ ແມ່ນ ເພື່ອສະແດງເຖິງຄວາມມຸ້ງຫມັ້ນຂອງທີມທີ່ວ່າ “ຈະຕ້ອງປະຕິບັດຕາມສິ່ງນີ້” ເຊິ່ງວ່າກັນວ່າ ດ້ວຍວິທີການຊີ້ໄປພ້ອມເວົ້າໄປພ້ອມ ຈະເຮັດໃຫ້ອັດຕາຄວາມຜິດພາດຫຼຸດລົງ 1 ສ່ວນ 6 ໃນເວລາທີ່ບໍ່ເຮັດຫຍັງເລີຍ. ຍ້ອນວ່າ ການໃຊ້ກ້າມເນື້ອຂອງແຂນ ແລະ ປາກ ຈະຊ່ວຍກະຕຸ້ນເສັ້ນປະສາດ, ແລ້ວມັນກໍຈະກະຕຸ້ນສະໝອງ ແລ້ວເຮັດໃຫ້ລະດັບຂອງການມີສະຕິສູງຂຶ້ນ.

ສ່ວນສຸດທ້າຍຂອງການຝຶກອົບຮົມການຄາດຄະເນອັນຕະລາຍ ແມ່ນ ດຳເນີນ “Touch and Call: ການຈັບມືກັນ ແລ້ວເວົ້າພ້ອມກັນ” ເອົາມືຊ້ອນກັນເພື່ອສຳພັດມືກັນ ແລະ ກັນ ແລ້ວເວົ້າພ້ອມກັນວ່າ “ເອົາລະ! ຈົ່ງໄປສູ່ໄພພິບັດສູນ” ອັນນີ້ ຈະສາມາດຍົກສູງການເຮັດວຽກເປັນທີມ. ມັນບໍ່ແມ່ນພຽງແຕ່ວິທີການຄວາມປອດໄພຢ່າງດຽວເທົ່ານັ້ນ, ແຕ່ມັນ ແມ່ນ ແນວຄິດກ່ຽວກັບການເຄົາລົບຜູ້ຄົນ ແລະ ໃຫ້ຄວາມສຳຄັນກັບບ່ອນເຮັດວຽກ.

ພາບລວມຂອງກິດຈະກຳການປະເມີນຄວາມສ່ຽງ


ການປະເມີນຄວາມສ່ຽງ ແມ່ນ ວິທີການຊອກໃຫ້ເຫັນເຖິງ “ຄວາມອັນຕະລາຍ ຫຼື ຄວາມເປັນໄພ” ທີ່ອາດຈະລີ້ຊ້ອນຢູ່ໃນບ່ອນເຮັດວຽກ, ແລ້ວໃຫ້ຈັດລຳດັບບູລິມະສິດໂດຍອີງໃສ່ລຳດັບຄວາມສ່ຽງ, ແລ້ວໃຫ້ກຳຈັດ ຫຼື ຫຼຸດຜ່ອນມັນ. ນີ້ ແມ່ນ ວິທີທີ່ມີປະສິດທິຜົນໃນການປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດໄດ້, ແລະ ເຖິງແມ່ນວ່າມັນຈະເກີດຂຶ້ນກໍ່ຕາມ ແຕ່ກໍເປັນວິທີທີ່ສາມາດປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງໄດ້.

ການປະເມີນຄວາມສ່ຽງ ຍັງສາມາດປະຕິບັດໄດ້ ໂດຍອີງໃສ່ຂໍ້ມູນເຫດການທີ່ເກືອບຈະເກີດອຸບັດຕິເຫດ ແລະ ປຶ້ມຄູ່ມືຂັ້ນຕອນການເຮັດວຽກ, ດັ່ງນັ້ນ ມັນ ຈຶ່ງເປັນວິທີການທີ່ມີປະສິດທິພາບ ສຳລັບ ຜູ້ເຮັດວຽກທີ່ມີປະສົບການເຮັດວຽກຢູ່ພາກສະໜາມຫນ້ອຍ ເຊິ່ງມັນຈະໃຫ້ພວກເຂົາເຫຼົ່ານັ້ນສາມາດດຳເນີນການເຮັດວຽກຢ່າງປອດໄພ.

ການປະເມີນຄວາມສ່ຽງ ຈະຖືກດຳເນີນ ໂດຍ ພະນັກງານປະຈຳພາກສະໜາມຫຼາຍຄົນ (ປະມານ 3 ຫາ 5 ຄົນ), ຜູ້ຄຸ້ມຄອງວຽກງານຢູ່ພາກສະໜາມ ເຊັ່ນ: ຜູ້ຈັດການ, ຜູ້ສົ່ງເສີມຄວາມປອດໄພ ແລະ ສຸຂະອະນາໄມ ແລະ ຫົວໜ້າທີມງານ, ດັ່ງນັ້ນ ຂັ້ນຕອນທຳອິດ ແມ່ນ ການກຳນົດວ່າໃຜຈະເປັນຜູ້ດຳເນີນ. ຂັ້ນຕອນ ແມ່ນ ດັ່ງສະແດງຢູ່ໃນຮູບ 1-12.

ຈຸດຕົ້ນຕໍ ກ່ຽວກັບ ວິທີການດຳເນີນການ ແມ່ນ ດັ່ງຕໍ່ໄປນີ້.

- ໃນຂັ້ນຕອນທີ 1 “ການກວດສອບລົງເລິກກ່ຽວກັບອັນຕະລາຍ ແລະ ປັດໄຈອັນຕະລາຍ” ແມ່ນຈະກວດກາເບິ່ງລັກສະນະຕ່າງໆ ເຊັ່ນ: ຄົນ



ຮູບທີ 1-12 ວິທີການດຳເນີນການປະເມີນຄວາມສ່ຽງ

ທີ່ມາ: "ຄູ່ມືການສຶກສາດ້ານຄວາມປອດໄພ ແລະ ສຸຂະພາບສຳລັບຄົນງານທີ່ບໍ່ຊຳນິຊຳນານສຳລັບອຸດສາຫະກຳການຜະລິດ" 03/2016 ຫ້ອງການກວດກາມາດຕະຖານແຮງງານ, ພະແນກແຮງງານແຂວງກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

(ການເຮັດວຽກ - ພຶດຕິກຳ), ສິ່ງຂອງ (ເຄື່ອງມື, ເຄື່ອງຈັກປ່າໄມ້, ອຸປະກອນ) ແລະ ສະພາບແວດລ້ອມຕ່າງໆນາໆໃນການເຮັດວຽກ.

ຍົກຕົວຢ່າງ, ເປັນການກວດກາລົງເລິກກ່ຽວກັບອັນຕະລາຍ ແລະ ປັດໃຈອັນຕະລາຍຕ່າງໆນາໆ ດັ່ງລຸ່ມນີ້:

· ຕົ້ນໄມ້ທີ່ເປັນອັນຕະລາຍໃນລະຫວ່າງການເກັບກ່ຽວຕົ້ນໄມ້

· ການທີ່ພະນັກງານຫຼາຍຄົນເຂົ້າໄປໃນເຂດອັນຕະລາຍໃນລະຫວ່າງການເຮັດວຽກເກັບກ່ຽວຕົ້ນໄມ້ (ພຶດຕິກຳຂອງມະນຸດ)

- ໃນຂັ້ນຕອນທີ 2 ແມ່ນ "ການປະເມີນຄວາມສ່ຽງ" ເຊິ່ງຈະປະເມີນຄວາມສ່ຽງຈາກມຸມມອງຂອງຄວາມໃຫຍ່ຂອງໄພ - ອັນຕະລາຍ (ຄວາມຮຸນແຮງ) ແລະ ຄວາມເປັນໄປໄດ້ຂອງການເກີດອັນຕະລາຍ (ລະດັບຄວາມເປັນໄປໄດ້). ຕົວຢ່າງຂອງມັນ ແມ່ນ ມີດັ່ງຕໍ່ໄປນີ້.

(ຂັ້ນຕອນທີ 1)

· ຈັດປະເພດ "ຄວາມເປັນໄປໄດ້ຂອງໄພພິບັດ" ແລະ "ລະດັບຄວາມຮຸນແຮງຂອງການບາດເຈັບໃນກໍລະນີທີ່ເກີດໄພພິບັດ" ຕາມມາດຕະຖານ ການຈຳແນກປະເພດເຂດແດນທີ່ໄດ້ກຳນົດໄວ້ລ່ວງໜ້າຢູ່ພາກສະໜາມ (ບ່ອນເຮັດວຽກ).

· "ຄວາມເປັນໄປໄດ້ຂອງການເກີດໄພພິບັດ" → "ສູງ×, ເປັນໄປໄດ້ △, ເກືອບເປັນໄປບໍ່ໄດ້○"

· "ລະດັບຄວາມຮຸນແຮງຂອງໄພພິບັດ" → "ຮ້າຍແຮງ ×, ລະດັບປານກາງ △, ລະດັບເບົາ ○"

(ຂັ້ນຕອນທີ 2)

ອີງຕາມການຈັດປະເພດ 2 ຢ່າງ ຂ້າງເທິງນີ້, ຄວາມສ່ຽງ ແມ່ນ ຖືກຄາດຄະເນໂດຍໃຊ້ຕາຕະລາງການປະເມີນທີ່ຖືກສ້າງຂຶ້ນແຍກຕ່າງຫາກ. ຢູ່ບ່ອນນີ້ ຈະນຳໃຊ້ຕາຕະລາງການຄາດຄະເນ (ວິທີການມາຕິກ matrix) ທີ່ສະແດງຢູ່ໃນຕາຕະລາງຄາດຄະເນ 1-2.

- ໃນຂັ້ນຕອນທີ 3 ແມ່ນ "ການຫຼຸດຜ່ອນຄວາມສ່ຽງ" ເຊິ່ງຈະກຳນົດລະດັບບູລິມະສິດຂອງມາດຕະການຮັບມືໂດຍອີງໃສ່ການປະເມີນຄວາມສ່ຽງ ທີ່ດຳເນີນໃນຂັ້ນຕອນທີ 2 ທີ່ຢູ່ດ້ານເທິງ (ຕາຕະລາງ 1-3).

ກິດຈະກຳການເບິ່ງເຫັນອັນຕະລາຍ

"ການເຮັດໃຫ້ສາມາດເບິ່ງເຫັນອັນຕະລາຍ" ໝາຍເຖິງ ການຈັດກິດຈະກຳປອດໄພທີ່ມີປະສິດຕິພາບຫຼາຍຂຶ້ນ ໂດຍການເບິ່ງເຫັນອັນຕະລາຍ ທີ່ລີ້ຊ້ອນຢູ່ໃນບ່ອນເຮັດວຽກ ແລະ ເລື່ອງທີ່ຄວນສັງເກດເພື່ອຄວາມປອດໄພ.

"ການເຮັດໃຫ້ສາມາດເບິ່ງເຫັນອັນຕະລາຍ" ເປັນເຄື່ອງມືທີ່ມີປະສິດທິພາບ ເຊິ່ງມັນສາມາດເຮັດໃຫ້ເຂົ້າໃຈງ່າຍກ່ຽວກັບການຮັບຮູ້ເຖິງອັນ

ຕາຕະລາງ 1-2 ວິທີການປະເມີນຄວາມສ່ຽງ (ຕາຕະລາງການປະເມີນ)

ລະດັບຄວາມຮຸນແຮງ / ຄວາມເປັນໄປໄດ້		ຮ້າຍແຮງ ×	ລະດັບປານກາງ △	ລະດັບເບົາ ○
ສູງ	×	Ⅲ	Ⅲ	Ⅱ
ມີຄວາມເປັນໄປໄດ້	△	Ⅲ	Ⅱ	Ⅰ
ບໍ່ມີປານໃດ	○	Ⅱ	Ⅰ	Ⅰ

III: ຄວາມສ່ຽງຮ້າຍແຮງ, II: ຈຳເປັນຕ້ອງຫຼຸດຜ່ອນຄວາມສ່ຽງທັນທີ, I: ຫຼຸດຜ່ອນຄວາມສ່ຽງຕາມຄວາມຈຳເປັນ

ເອກະສານ: "ປຶ້ມແບບຮຽນສຳລັບຜູ້ເຂົ້າຝຶກອົບຮົມ ໂຄງການຝຶກອົບຮົມການປະເມີນຄວາມສ່ຽງ ປີ 2012" ສະມາຄົມທີ່ປຶກສາດ້ານແຮງງານ ຄວາມປອດໄພ ແລະ ອະນາໄມ ຂອງ ປະເທດຍີ່ປຸ່ນ ເຊິ່ງໄດ້ຮັບມອບໝາຍໂດຍ ກະຊວງສາທາລະນະສຸກ, ແຮງງານ, ສະຫວັດດີການ

ຕາຕະລາງ 1-3 ການກຳນົດລະດັບບູລິມະສິດກ່ຽວກັບມາດຕະການຮັບມືຈາກການປະເມີນຄວາມສ່ຽງ

ລະດັບຄວາມສ່ຽງ (ລະດັບບູລິມະສິດ)	ລະດັບຄວາມສ່ຽງ	ມາດຕະການຮັບມື
Ⅲ	ຄວນແກ້ໄຂທັນທີ ຫຼື ມີຄວາມສ່ຽງທີ່ຮ້າຍແຮງ.	ຕ້ອງຢຸດຕິການດຳເນີນການ ຈົນກວ່າຈະມີມາດຕະການ. ມີຄວາມຈຳເປັນຕ້ອງໄດ້ເພີ່ມຊັບພະຍາກອນທາງການບໍລິຫານ (ຄ່າໃຊ້ຈ່າຍ ແລະ ກຳລັງແຮງງານ) ໃຫ້ພຽງພໍ.
Ⅱ	ມີຄວາມສ່ຽງທີ່ຄວນຫາມາດຕະການໃນການຫຼຸດຜ່ອນຄວາມສ່ຽງໃນທັນທີ.	ບໍ່ຢາກໃຫ້ດຳເນີນການໃດໆຈົນກວ່າຈະມີມາດຕະການ. ມີຄວາມຈຳເປັນຕ້ອງໄດ້ເພີ່ມຊັບພະຍາກອນທາງການບໍລິຫານ (ຄ່າໃຊ້ຈ່າຍ ແລະ ກຳລັງແຮງງານ) ຢ່າງເປັນບູລິມະສິດສຳຄັນ.
Ⅰ	ມີຄວາມສ່ຽງທີ່ຄວນປະຕິບັດມາດຕະການໃນການຫຼຸດຜ່ອນຄວາມສ່ຽງຕາມຄວາມຈຳເປັນ.	ປະຕິບັດມາດຕະການຫຼຸດຜ່ອນຄວາມສ່ຽງຕາມຄວາມຈຳເປັນ.

ເອກະສານ: ສະມາຄົມທີ່ປຶກສາດ້ານແຮງງານ ຄວາມປອດໄພ ແລະ ອະນາໄມ ຂອງ ປະເທດຍີ່ປຸ່ນ ເຊິ່ງໄດ້ຮັບມອບໝາຍໂດຍ ກະຊວງສາທາລະນະສຸກ, ແຮງງານ, ສະຫວັດດີການ
"ປຶ້ມແບບຮຽນສຳລັບຜູ້ເຂົ້າຝຶກອົບຮົມ ໂຄງການຝຶກອົບຮົມການປະເມີນຄວາມສ່ຽງ ປີ 2012"

ຕະລາຍ ແລະ ການກະຕຸ້ນໃຫ້ມີຄວາມລະມັດລະວັງໃນຂະນະເຮັດວຽກ, ທັງຍັງເປັນການງ່າຍຕໍ່ການເຂົ້າຮ່ວມຂອງພະນັກງານຜູ້ທີ່ມີປະສົບການໜ້ອຍ ແລະ ຮັບປະກັນຄວາມປອດໄພ. ໃນເວລາປະຕິບັດ "ການເຮັດໃຫ້ສາມາດເບິ່ງເຫັນອັນຕະລາຍ", ຜູ້ຄຸ້ມຄອງວຽກງານ (ຫົວໜ້າກຸ່ມ) ຈະຕ້ອງໄດ້ຮຽນຮູ້ໄວ້ວ່າ ຈະປະຕິບັດວຽກງານໃຫ້ໄດ້ຢ່າງປອດໄພແນວໃດ.

ວິທີການທີ່ສາມາດເຮັດໃຫ້ເຫັນອັນຕະລາຍ

ກ່ອນອື່ນໝົດ, ແມ່ນ ມີວິທີ ໃນການນຳໃຊ້ເຄື່ອງມືທີ່ສາມາດເຮັດໃຫ້ເບິ່ງເຫັນອັນຕະລາຍ ແລະ ວິທີການລະບຸບ່ອນທີ່ອັນຕະລາຍ. ແຜນທີ່ທີ່ສະແດງເຖິງອັນຕະລາຍ, ເຄື່ອງໝາຍທີ່ສະແດງເຖິງອັນຕະລາຍ, ສະຕິກເກີ້ທີ່ສະແດງເຖິງອັນຕະລາຍ ຕ່າງໆ ລວມທັງວິທີນຳໃຊ້ ແມ່ນ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ເປັນຜູ້ກຳນົດ.

· ແຜນທີ່ທີ່ສະແດງເຖິງອັນຕະລາຍ ເປັນ ສິ່ງທີ່ລະບຸ ກ່ຽວກັບ ບ່ອນທີ່ຄາດວ່າຈະມີອັນຕະລາຍ ແລະ ກໍ່ໃຫ້ເກີດອຸບັດຕິເຫດແຮງງານ, ເຊິ່ງຈະລະບຸໃສ່ແຜນຜັງຂອງບ່ອນເຮັດວຽກ ເພື່ອເປັນການກະຕຸ້ນໃຫ້ມີຄວາມລະມັດລະວັງ.

· ເຄື່ອງໝາຍທີ່ສະແດງເຖິງອັນຕະລາຍ (ຮູບທີ 1-13) ຈະຖືກຕິດໄວ້ຢູ່ພື້ນທີ່ອັນຕະລາຍເທິງແຜນທີ່ , ເຊິ່ງຂໍ້ຄວາມທີ່ກ່ຽວກັບຫົວຂໍ້ທີ່ຕ້ອງໄດ້ປະຕິບັດຕາມ ແມ່ນ ຈະຖືກລະບຸດ້ວຍເຈ້ຍບັນທຶກ.

· ສະຕິກເກີອັນຕະລາຍ (ຮູບທີ 1-14) ຖືກວາງໃສ່ພື້ນທີ່ອັນຕະລາຍ ແລະ ອື່ນໆ ເພື່ອເຕືອນເຂດອັນຕະລາຍ ແລະ ລາຍລະອຽດອັນຕະລາຍ. ຢູ່



ຮູບທີ 1-13 ຕົວຢ່າງຂອງເຄື່ອງໝາຍທີ່ສະແດງອັນຕະລາຍ



ຮູບທີ 1-14 ຕົວຢ່າງຂອງສະຕິກເກີທີ່ສະແດງເຖິງອັນຕະລາຍ

ພື້ນທີ່ຫວ່າງ ແມ່ນ ໃຫ້ຂຽນກ່ຽວກັບລາຍລະອຽດຂອງອັນຕະລາຍ, ຂໍ້ຄວນລະວັງ
ສຳລັບອັນຕະລາຍ ແລະ ຫົວຂໍ້ທີ່ຄວນຕ້ອງປະຕິບັດຕາມເພື່ອຄວາມປອດໄພ.

ການທີ່ສາມາດເບິ່ງເຫັນ ແລະ ຮັບຮູ້ກ່ຽວກັບສ່ວນທີ່ເປັນອັນຕະລາຍຢູ່ບ່ອນເຮັດວຽກ ຖືວ່າເປັນສິ່ງທີ່ມີປະສິດທິພາບ ແລະ ໃຫຍ່ຫຼວງຫຼາຍ. ສຳລັບເຫດຜົນນີ້, ທຸກໆບ່ອນເຮັດວຽກ ຈຳເປັນຕ້ອງໄດ້ຄິດຄົ້ນຫາວິທີ ເພື່ອພະຍາຍາມເຮັດໃຫ້ເບິ່ງເຫັນອັນຕະລາຍ. ຢູ່ບ່ອນເຮັດວຽກຂອງທ່ານ ກໍລອງເອົາຕົວຢ່າງເຫຼົ່ານີ້ ມາເປັນສິ່ງອ້າງອີງ ເພື່ອພະຍາຍາມເຮັດໃຫ້ເບິ່ງເຫັນອັນຕະລາຍລອງເບິ່ງເດີ້.

ຕົວຢ່າງ, ມີຫຼາຍສິ່ງທີ່ສາມາດເຮັດໄດ້ ເຊັ່ນ: ການສ້າງແຜນທີ່ ທີ່ສະແດງໃຫ້ເຫັນເຖິງຕົ້ນໄມ້ອັນຕະລາຍ (ຕົ້ນໄມ້ຕາຍ, ຕົ້ນໄມ້ທີ່ເສື່ອມໂຊມ ເປັນຕົ້ນ), ການໃຊ້ສາຍພັນອ້ອມຮອບຕົ້ນໄມ້ທີ່ອັນຕະລາຍ ຕ່າງໆເປັນຕົ້ນ.

ການສົ່ງເສີມບໍ່ໃຫ້ມີອຸບັດຕິເຫດ, ການເຮັດວຽກເປັນທີມ ແລະ ການສື່ສານ

No.02 ການດູແລສຸຂະພາບ

ຈຸດປະສົງຂອງການບັນລະຍາຍ

ການປູກຈິດສຳນຶກ ດ້ານຮາກຖານຊີວິດ ກ່ຽວກັບການເຮັດວຽກ ດ້ວຍການຮັກສາສຸຂະພາບທັງດ້ານຮ່າງກາຍ ແລະ ຈິດໃຈ ແມ່ນມີຄວາມສຳຄັນ ສຳລັບການເຮັດວຽກໃນອຸດສາຫະກຳປ່າໄມ້ ແລະ ການຮຽນຮູ້ກ່ຽວກັບພື້ນຖານໃນການດູແລ ສຸຂະພາບ ໂດຍທົ່ວໄປ ແລ້ວ ໂອກາດໄດ້ຮຽນຮູ້ດ້ານນີ້ ແມ່ນຈຳກັດ

ຄຳສຳຄັນ

ການເຈັບຫຼັງເຈັບແອວ, ການປ້ອງກັນການລົ້ມ, ການສູນເສຍຍ້ອນເຮັດວຽກບໍ່ໄດ້ຕາມທີ່ຄາດຫວັງຍ້ອນສະພາບຮ່າງ ກາຍ ແລະ ຈິດໃຈບໍ່ອຳນວຍ, ຄວາມສ່ຽງຈາກຄວາມຊິນເຄີຍໃນການດຳລົງຊີວິດ, ໂລກລົມແດດ, ເປັນລົມໝົດສະຕິຍ້ອນ ຄວາມຮ້ອນ, ການຊັກຍ້ອນຄວາມຮ້ອນ, ໂລກເມື່ອຍຍ້ອນຄວາມຮ້ອນ, ໂລກແພ້ຄວາມຮ້ອນ, ແນວທາງອາຫານສົມດູນ, ລະດັບຄວາມເມື່ອຍລ້າສະສົມ.

ການເຮັດວຽກຢູ່ກາງແຈ້ງ ແລະ ການຮັກສາ ສຸຂະພາບ 1 ຂໍ້ຄວນລະມັດລະວັງ ຂອງການເຮັດວຽກຢູ່ກາງແຈ້ງ

ຄວາມສຳຄັນຂອງການອອກກຳລັງກາຍເພື່ອອົບອຸ່ນຮ່າງກາຍກ່ອນການເຮັດວຽກ

ການອອກກຳລັງກາຍ ເປັນສິ່ງທີ່ປະຕິບັດກ່ອນທີ່ຈະເລີ່ມຕົ້ນເຮັດວຽກຢູ່ບ່ອນເຮັດວຽກຕ່າງໆ. ເຊັ່ນດຽວກັນກັບໃນວຽກອຸດສາຫະກຳປ່າໄມ້, ການອອກກຳລັງກາຍ ແມ່ນມີຄວາມສຳຄັນທີ່ສຸດໃນວຽກອຸດສາຫະກຳປ່າໄມ້ ປຽບເໝືອນ ກັບການຜ່ອນຄາຍຮ່າງກາຍ, ການຮັກສາສຸຂະພາບ ຂອງພະນັກງານ ແລະ ປ້ອງກັນອຸປະຕິເຫດ.

ໂດຍສະເພາະ ຢູ່ສະໜາມວຽກຂອງອຸດສາຫະກຳປ່າໄມ້ ແມ່ນ ຈຳເປັນຕ້ອງໄດ້ມີການກະກຽມຮ່າງກາຍ ໂດຍການຄຳນຶງເຖິງສະພາບແວດລ້ອມຂອງວຽກງານ ດັ່ງຕໍ່ໄປນີ້:

· ວຽກທີ່ກ່ຽວຂ້ອງກັບການຈັດການອັດຖຸໜັກ (ຕ້ອງມີມາດຕະການປ້ອງກັນການເຈັບແອວເຈັບຫຼັງ)
· ການມີຄວາມສ່ຽງທີ່ຈະລົ້ມຢູ່ບ່ອນຄ້ອຍຊັນ (ຕ້ອງມີມາດຕະການປ້ອງກັນການລົ້ມ)
· ການເຮັດວຽກຢູ່ໃນສະພາບແວດລ້ອມທີ່ຮ້ອນເອົ້າຢ່າງຫຼີກລ່ຽງບໍ່ໄດ້ (ຕ້ອງມີມາດຕະການກ່ຽວກັບການຮັບມືໂລກລົມແດດ; ຈະອະທິບາຍຕື່ມໃນພາຍຫຼັງ)

ການອອກກຳລັງກາຍເພື່ອປ້ອງກັນບໍ່ໃຫ້ເຈັບແອວເຈັບຫຼັງ

ລັດຖະບານແຫ່ງປະເທດຍີ່ປຸ່ນ ໄດ້ກຳນົດວ່າ ໃນເວລາເຮັດວຽກກ່ຽວກັບອັດຖຸໜັກ, ຢູ່ບ່ອນເຮັດວຽກ ຕ້ອງມີມາດຕະການປ້ອງກັນການເຈັບຫຼັງເຈັບແອວ. (“ຄຳແນະນຳສຳລັບການປ້ອງກັນການເຈັບຫຼັງເຈັບແອວ ຢູ່ບ່ອນເຮັດວຽກ” 2013 ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ)

ອີງຕາມແນວທາງນະໂຍບາຍ ໃນການປະຕິບັດວຽກງານ ແຫ່ງປະເທດຍີ່ປຸ່ນ ກ່ຽວກັບວິທີການປ້ອງກັນການເຈັບຫຼັງເຈັບແອວ ແມ່ນ ໄດ້ມີຄຳຊີ້ນຳຕໍ່ຜູ້ປະກອບການ ດັ່ງນີ້:

· ຕ້ອງອອກກຳລັງກາຍ ເພື່ອປ້ອງກັນອາການເຈັບຫຼັງເຈັບແອວໂດຍມີຈຸດປະສົງເພື່ອຍົກສູງຄວາມເໝາະສົມ, ການຟື້ນຕົວຈາກຄວາມເມື່ອຍລ້າ ຂອງກ້າມຊີ້ນ, ເພີ່ມຄວາມຫົດຢືດ ແລະ ການຜ່ອນຄາຍ.
· ໂດຍປົກກະຕິ ການອອກກຳລັງກາຍເພື່ອປ້ອງກັນການແຈ້ບແອວເຈັບຫຼັງ ແມ່ນ ຈະປະຕິບັດ ກ່ອນການເລີ່ມວຽກ, ໃນຂະນະເຮັດວຽກ ຫຼື ພາຍຫຼັງເລີກວຽກ, ເຊິ່ງຕ້ອງໄດ້ເອົາໃຈໃສ່ຕື່ມກ່ຽວກັບຄວາມສາມາດໃນການຈັດສັນເວລາ ແລະ ສະຖານທີ່ໃນການອອກກຳລັງກາຍນີ້, ໂດຍອີງຕາມຄວາມເໝາະສົມຂອງລະດັບຄວາມເມື່ອຍລ້າທີ່ສະສົມ ເປັນຕົ້ນ.

ເຊິ່ງໄດ້ມີການກຳນົດວ່າຈະຕ້ອງອອກກຳລັງກາຍ ແລະ ການຢືດເສັ້ນຢືດສາຍໃນລັກສະນະແບບນີ້ ເພື່ອປ້ອງກັນການເຈັບຫຼັງເຈັບແອວ, ສະນັ້ນ ຜູ້ເຂົ້າຝຶກອົບຮົມເອງກໍຕ້ອງໄດ້ມີສ່ວນຮ່ວມ ແລະ ມີຄວາມຄິດລິເລີ່ມໃນການອອກກຳລັງກາຍໃນການປ້ອງກັນການເຈັບແອວເຈັບຫຼັງ.

ການຢືດເສັ້ນຢືດສາຍທີ່ເປັນມາດຕະການໃນການປ້ອງກັນການເຈັບແອວ

ເມື່ອເບິ່ງກ່ຽວກັບທຸກໆປະເພດຂອງອຸດສາຫາກຳແລ້ວ, ແມ່ນມີແນວໂນ້ມທີ່ອຸບັດຕິເຫດ ທີ່ເກີດຈາກການລົ້ມ ຈະມີຫຼາຍທີ່ສຸດ (ວຽກງານອຸດສາຫະກຳປ່າໄມ້ທີ່ມີໄລຍະເວລາ 4 ມື້ຂຶ້ນໄປ) ນອກຈາກນັ້ນ, ໄລຍະເວລາໃນການພັກວຽກກໍຍັງມີໄລຍະເວລາທີ່ຍາວ (ການພັກວຽກທີ່ມີໄລຍະເວລາ 1 ເດືອນຂຶ້ນໄປ ແມ່ນມີປະມານ 60%). ເພື່ອປ້ອງກັນອຸບັດຕິເຫດກ່ຽວກັບການລົ້ມ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ໄດ້ຮ່ວມມືກັບອົງການປ້ອງກັນອຸປະຕິເຫດທາງອາຊີບ ເພື່ອຂັບເຄື່ອນ “ໂຄງການ ຢຸດ! ອຸບັດຕິເຫດກ່ຽວກັບການລົ້ມ”

ມີການນຳສະເໜີຢ່າງຫ້າວຫັນໃຫ້ມີການອອກກຳລັງກາຍເພື່ອປ້ອງກັນການລົ້ມ ແລະ ການອອກກຳລັງກາຍເພື່ອຢືດເສັ້ນຢືດສາຍ ເຊິ່ງມັນກໍເປັນ 1 ໃນມາດຕະການປ້ອງກັນ.

ການອອກກຳລັງກາຍໃນເວລາທີ່ເຮັດວຽກກ່ຽວກັບຈັກເລື່ອຍໄມ້ ແລະ ເຄື່ອງຕັດຫຍ້າ

ເມື່ອນຳໃຊ້ຈັກເລື່ອຍໄມ້ ແລະ ເຄື່ອງຕັດຫຍ້າ, ການສັ່ນສະເທືອນຂອງເຄື່ອງຈັກ ສາມາດສົ່ງຜົນກະທົບຕໍ່ຮ່າງກາຍ, ດັ່ງນັ້ນ ການອອກກຳລັງກາຍ ຈຶ່ງຈຳເປັນໃນການປ້ອງກັນສິ່ງນີ້.

ອີງຕາມ “ແນວທາງໃນການນຳໃຊ້ຈັກເລື່ອຍໄມ້” (ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ) ໄດ້ກຳນົດວ່າໃຫ້ “ອອກກຳລັງກາຍ ຕ່າງໆ” ໃນເວລານຳໃຊ້ເລື່ອຍໄຟຟ້າໃນວຽກງານ ດັ່ງນີ້:

“ເພື່ອບັນເທົາຄວາມເມື່ອຍລ້າສ່ວນໃດສ່ວນໜຶ່ງຂອງກ້າມຊີ້ນ ແລະຮັກສາສຸຂະພາບທາງດ້ານຮ່າງກາຍ ຈະຕ້ອງໄດ້ອອກກຳລັງກາຍ ແລະ

ນອດ ທຸກໆມື້ ໃນຕອນກ່ອນເລີ່ມເຮັດວຽກ ໃນເວລາເຮັດວຽກ ຫຼື ໃນເວລາແລ້ວວຽກ ໂດຍເນັ້ນໄປທີ່ ການໝຸນຄໍ ແລະ ບ່າໄຫ່ຼ, ຢືດງໍ ຂໍ້ສອກ ມື ແລະ ນິ້ວມື, ບິດແອວ ແລະ ໝຸນແອວ.”

ແລະ ໃນຍາມເຮັດວຽກດ້ວຍເຄື່ອງຕັດຫຍ້າ ກໍຕ້ອງໄດ້ປະຕິບັດແນວນັ້ນເຊັ່ນກັນ.

ໃນເວລາທີ່ເຮັດວຽກທີ່ໃຊ້ຈັກເລື່ອຍໄມ້ ຫຼື ເຄື່ອງຕັດຫຍ້າ, ຈະຕ້ອງກວດໃຫ້ແນ່ໃຈວ່າ ໄດ້ມີການງໍ ແລະ ຢືດ ພາກສ່ວນຮ່າງກາຍຕາມທີ່ລະບຸດ້ານເທິງ ຫຼືບໍ່.

ເພື່ອປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດຮ້າຍແຮງ

ໃນປຶ້ມຫົວນີ້ ໄດ້ນຳສະເໜີ ກ່ຽວກັບກິດຈະກຳຄວາມປອດໄພ ແລະ ການຮັກສາສຸຂະພາບດ້ວຍຕົນເອງ ທີ່ປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດ ເຊັ່ນ: ເຫດການທີ່ເກືອບຈະເກີດອຸບັດຕິເຫດ, ກິດຈະກຳການ ຄາດຄະເນອັນຕະລາຍ (KYT), ແລະ ການປະເມີນຄວາມສ່ຽງ ໃນ “No. 01 ທັກສະກ່ຽວກັບຄວາມປອດໄພຢູ່ບ່ອນເຮັດວຽກ”. ສິ່ງທີ່ຄວນເອົາໃຈໃສ່ໃນການດູແລສຸຂະພາບເພື່ອປ້ອງກັນການເກີດອຸປະຕິເຫດຮ້າຍແຮງ ປະກອບມີ ການອອກກຳລັງກາຍ ແລະ ການຢືດເສັ້ນຢືດສາຍເພື່ອປ້ອງກັນບໍ່ໃຫ້ເກີດອຸບັດຕິເຫດກ່ຽວກັບການລົ້ມ ເຊິ່ງໄດ້ຍົກຂຶ້ນມາກ່າວໄວ້ໃນພາກກ່ອນ.

ຈຸດສຳຄັນອີກຢ່າງຫນຶ່ງແມ່ນການເຂົ້າໃຈລ່ວງຫນ້າກ່ຽວກັບພະຍາດຫຼື ບັນຫາທາງດ້ານຮ່າງກາຍທີ່ສາມາດນຳໄປສູ່ອຸບັດຕິເຫດ. ກົດໝາຍດັ່ງກ່າວ ໄດ້ກຳນົດໃຫ້ຜູ້ອອກແຮງງານຕ້ອງໄດ້ກວດກາສຸຂະພາບໃຫ້ຜູ້ອອກແຮງງານເປັນປະຈຳ ປີລະ 1 ຄັ້ງ, ດັ່ງນັ້ນ ຜູ້ເຂົ້າຝຶກອົບຮົມທຸກຄົນຕ້ອງໄດ້ຮັບການກວດສຸຂະພາບຄັກແນ່.

ນອກຈາກນີ້, ກົດໝາຍດັ່ງກ່າວ ຍັງໄດ້ກຳນົດໃຫ້ມີການກວດສຸຂະພາບເປັນພິເສດຕໍ່ຜູ້ອອກແຮງງານໃນວຽກງານສະເພາະໃດໜຶ່ງ (ໜຶ່ງຄັ້ງໃນຫົກເດືອນ), ເຊິ່ງໃນວຽກອຸດສາຫະກຳປ່າໄມ້ ຫົວຂໍ້ນີ້ ແມ່ນ ກ່ຽວກັບວຽກທີ່ກ່ຽວຂ້ອງກັບການໃຊ້ຈັກເລື່ອຍໄມ້ ແລະ ເຄື່ອງຕັດຫຍ້າ ເຊິ່ງມີການສັ່ນສະເທືອຂອງເຄື່ອງຈັກ ແລະ ອາດສົ່ງຜົນກະທົບຕໍ່ຮ່າງກາຍໄດ້. (“ແນວທາງໃນການດູແລສຸຂະພາບຂອງຜູ້ອອກແຮງງານທີ່ເຮັດວຽກກ່ຽວຂ້ອງກັບການນຳໃຊ້ເລື່ອຍໄຟຟ້າ” ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ).

ໃນເວລາທີ່ຜູ້ເຂົ້າຝຶກອົບຮົມທຸກຄົນມີສ່ວນຮ່ວມໃນການເຮັດວຽກທີ່ໃຊ້ອຸປະກອນການສັ່ນສະເທືອນດັ່ງກ່າວ ແມ່ນ ຈະຕ້ອງເຂົ້າໃຈກ່ຽວກັບຫົວຂໍ້ທີ່ລະບຸດ້ານເທິງ ແລະ ຈະຕ້ອງເຂົ້າຮັບການກວດສຸຂະພາບແບບພິເສດ.

ເອກະສານ: “ເພື່ອປ້ອງກັນຄວາມຜິດປົກກະຕິຂອງແຮງສັ່ນສະເທືອນ” ຫ້ອງການກວດກາມາດຕະຖານແຮງງານ, ພະແນກແຮງງານແຂວງ, ກົມມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ


ຜົນກະທົບຂອງການດູແລສຸຂະພາບຂອງຕົນເອງ ຕໍ່ ຫົວໜ່ວຍທຸລະກິດ (ວຽກງານ)

ປ້ອງກັນການຫຼຸດລົງຂອງຜົນຜະລິດ ດ້ວຍ ການດູແລສຸຂະພາບ

ການເອົາໃຈໃສ່ດູແລສຸຂະພາບ ແລະ ສາມາດສືບຕໍ່ເຮັດວຽກໄດ້ດ້ວຍສະພາບຮ່າງກາຍທີ່ສົມບູນ ແມ່ນ ມີຄວາມສຳຄັນຫຼາຍສຳລັບຄວາມສຸກຂອງຕົນເອງ ແລະ ຄອບຄົວ. ນອກຈາກນັ້ນ, ການຮັກສາສຸຂະພາບຂອງພະນັກງານຍັງມີຄວາມສຳຄັນຫຼາຍສຳລັບການບໍລິຫານບໍລິສັດ ແລະ ອົງການຈັດຕັ້ງທີ່ເຮັດວຽກ. ທັງນີ້ກໍຍ້ອນວ່າ ພວກເຮົາຮັບຮູ້ວ່າ ຫາກສຸຂະພາບຂອງພະນັກງານໄດ້ຮັບຄວາມເສຍຫາຍ, ມັນກໍຈະສົ່ງຜົນເສຍຫາຍຕໍ່ທຸລະກິດເຊັ່ນກັນ. ສະນັ້ນ, ຜູ້ບໍລິຫານ ຕ້ອງສົ່ງເສີມການດູແລສຸຂະພາບຂອງພະນັກງານ ເພື່ອໃຫ້ພະນັກງານ, ຄອບຄົວ, ການບໍລິຫານບໍລິສັດ ແລະ ອົງການຈັດຕັ້ງ ສາມາດດຳເນີນງານໄດ້ຢ່າງຕໍ່ເນື່ອງ ແລະ ມີສຸຂະພາບແຂງແຮງ. ລັດຖະບານກຳລັງສົ່ງເສີມການຂະຫຍາຍ “ການບໍລິຫານສຸຂະພາບ” ເຊິ່ງມັນໄດ້ລວມເອົາແນວຄວາມຄິດດັ່ງທີ່ກ່າວດ້ານເທິງ. ການຮັກສາສະຖຽນລະພາບ ແລະ ຍືນຍົງໃນການບໍລິຫານບໍລິສັດ ໂດຍ ຜ່ານການສົ່ງເສີມການບໍລິຫານສຸຂະພາບ ແມ່ນ ມີຄວາມສຳຄັນ ເພາະວ່າມັນຈະພາໄປສູ່ ບ່ອນເຮັດວຽກທີ່ຫມັ້ນຄົງ ແລະ ປອດໄພສຳລັບພະນັກງານ.

ໃນແງ່ມຸມມອງຄວາມສຳພັນລະຫວ່າງການດູແລສຸຂະພາບ ແລະ ຄ່າໃຊ້ຈ່າຍໃນການບໍລິຫານທຸລະກິດ ແມ່ນ ມີຜົນການວິເຄາະວ່າ ຫາກສຸຂະພາບຂອງພະນັກງານມີຄວາມບົກຜ່ອງ, ບໍ່ພຽງແຕ່ຈະມີຄ່າໃຊ້ຈ່າຍທີ່ເກີດຂຶ້ນເນື່ອງຈາກການຂາດວຽກຂອງພະນັກງານເທົ່ານັ້ນ, ແຕ່ຍັງລວມເຖິງພະນັກງານທີ່ຕ້ອງມາເຮັດວຽກ ແຕ່ຕ້ອງທົນທຸກທໍລະມານຈາກພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄີຍໃນການດຳລົງຊີວິດ, ສະພາບທາງດ້ານຮ່າງກາຍທີ່ບໍ່ດີ, ອາການພູມແພ້, ບັນຫາສຸຂະພາບຈິດ ແລະ ອື່ນໆ, ເຊິ່ງສິ່ງເຫຼົ່ານີ້ ມັນຈະເຊື່ອມໂຍງໄປສູ່ການຜະລິດທີ່ຫຼຸດລົງ ແລະ ການເພີ່ມຂຶ້ນທາງດ້ານລາຍຈ່າຍບໍລິຫານແບບທາງອ້ອມ. (ເອີ້ນວ່າ ການສູນເສຍຍ້ອນເຮັດວຽກບໍ່ໄດ້ຕາມທີ່ຄາດຫວັງຍ້ອນສະພາບຮ່າງກາຍ ແລະ ຈິດໃຈບໍ່ອຳນວຍ).

ການຫຼຸດຜ່ອນຄ່າໃຊ້ຈ່າຍທັງຫມົດ ທີ່ກ່ຽວຂ້ອງກັບສຸຂະພາບທີ່ເກີດຂຶ້ນໃນການບໍລິຫານບໍລິສັດໃນລັກສະນະແບບນີ້ ແມ່ນ ເປັນໜຶ່ງໃນເປົ້າໝາຍຂອງການບໍລິຫານສຸຂະພາບ. (ຮູບ 2-1).



ຮູບທີ 2-1 ການຫຼຸດຜ່ອນຄ່າໃຊ້ຈ່າຍທັງໝົດທີ່ກ່ຽວຂ້ອງກັບສຸຂະພາບດ້ວຍການສົ່ງເສີມການບໍລິຫານສຸຂະພາບ

ໃນມຸມມອງຂອງຕົ້ນທຶນດ້ານສຸຂະພາບຂອງພະນັກງານທີ່ໄດ້ຮັບຄວາມເສຍຫາຍ (ການສູນເສຍ: loss), ແມ່ນ ມີສັດສ່ວນຂອງການສູນເສຍທີ່ສູງ ເນື່ອງຈາກວ່າພະນັກງານຕ້ອງໄດ້ເຮັດວຽກໃນຂະນະທີ່ເປັນພະຍາດ ຫຼື ມີອາການບໍ່ສະບາຍບາງຢ່າງ ແລະ ຄວາມສາມາດໃນການປະຕິບັດວຽກງານ ຫຼື ກຳລັງການຜະລິດແຮງງານກໍຕ່ຳ (presenteeism : ການເຮັດວຽກ ໃນຂະນະທີ່ ເຈັບປ່ວຍ ຫຼື ມີສະພາບຮ່າງກ່າຍ ຫຼື ຈິດໃຈບໍ່ພ້ອມ). ມັນເປັນສິ່ງຈຳເປັນທີ່ຈະຕ້ອງຫຼຸດຜ່ອນຄ່າໃຊ້ຈ່າຍທັງຫມົດເຫຼົ່ານີ້ ຜ່ານການບໍລິຫານສຸຂະພາບ.

ແຫຼ່ງຂໍ້ມູນ: "ຄູ່ມືການຮ່ວມມືເພື່ອສົ່ງເສີມສຸຂະພາບຂໍ້ມູນ ແລະ ການບໍລິຫານສຸຂະພາບ" 07/2017, ພະແນກປະກັນ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ



ຮູບ 2-2 Presenteeism loss (ການສູນເສຍຍ້ອນເຮັດວຽກບໍ່ໄດ້ຕາມທີ່ຄາດຫວັງຍ້ອນສະພາບຮ່າງກາຍ ແລະ ຈິດໃຈບໍ່ອຳນວຍ) ເນື່ອງຈາກຜົນຜະລິດແຮງງານຫຼຸດລົງ


Presenteeism loss ຍ້ອນການຜະລິດແຮງງານຫຼຸດລົງ ແມ່ນ ມີຄວາມກ່ຽວຂ້ອງກັນຢ່າງແຮງກ້າ ກັບ ຄວາມສ່ຽງຂອງຄວາມລຶ້ງເຄີຍໃນການດຳລົງຊີວິດ (ການສູບຢາ, ນິໄສການອອກກຳລັງກາຍ, ການນອນ ແລະ ການພັກຜ່ອນ) ແລະ ຄວາມສ່ຽງທາງດ້ານຈິດໃຈ (ຄວາມຮູ້ສຶກສ່ວນຕົວກ່ຽວກັບສຸຂະພາບ, ຄວາມພໍໃຈໃນຊີວິດ, ຄວາມພໍໃຈໃນການເຮັດວຽກ, ຄວາມເຄັ່ງຄຽດ).

ແຫຼ່ງຂໍ້ມູນ: "ຄູ່ມືການຮ່ວມມືເພື່ອສົ່ງເສີມສຸຂະພາບຂໍ້ມູນ ແລະ ການບໍລິຫານສຸຂະພາບ" 07/2017, ພະແນກປະກັນ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຄວາມສ່ຽງຕໍ່ຄວາມລຶ້ງເຄີຍໃນການດຳລົງຊີວິດ ແລະ ຄວາມສ່ຽງທາງດ້ານຈິດໃຈ

ອີງຕາມຜົນໄດ້ຮັບຈາກການວິເຄາະຄ່າໃຊ້ຈ່າຍທັງຫມົດທີ່ກ່ຽວຂ້ອງກັບສຸຂະພາບສຳລັບອົງການຈັດຕັ້ງສະເພາະໃດຫນຶ່ງ, ພາຍຫຼັງຈັດປະເພດຄວາມສ່ຽງທີ່ຂັດຂວາງສຸຂະພາບຂອງພະນັກງານ ອອກເປັນຄວາມສ່ຽງດ້ານຊີວະວິທະຍາ, ຄວາມສ່ຽງຕໍ່ຄວາມເຄັຍຊິນໃນການດຳລົງຊີວິດ ແລະ ຄວາມສ່ຽງທາງດ້ານຈິດໃຈ, ຈະພົບເຫັນວ່າ ການສູນເສຍຍ້ອນເຮັດວຽກບໍ່ໄດ້ຕາມທີ່ຄາດຫວັງຍ້ອນສະພາບຮ່າງກາຍ ແລະ ຈິດໃຈບໍ່ອຳນວຍ ອັນເນື່ອງມາຈາກຜົນການຜະລິດຫຼຸດລົງ ນີ້ ໄດ້ຊີ້ໃຫ້ເຫັນເຖິງຄວາມສຳພັນທີ່ເຂັ້ມແຂງ ລະຫວ່າງ ຄວາມສ່ຽງຕໍ່ຄວາມລຶ້ງເຄັຍໃນການດຳລົງຊີວິດ (ການສູບຢາ, ນິໄສການອອກກຳລັງກາຍ, ການນອນ ແລະ ການພັກຜ່ອນ) ແລະ ຄວາມສ່ຽງທາງດ້ານຈິດໃຈ (ຄວາມຮູ້ສຶກກ່ຽວກັບສຸຂະພາບ, ຄວາມພໍໃຈໃນຊີວິດ, ລະດັບຄວາມພໍໃຈໃນການເຮັດວຽກ ແລະ ຄວາມກົດດັນ) (ຮູບ 2-2).

ການທີ່ພວກທ່ານທຸກຄົນໆເອົາໃຈໃສ່ດູແລສຸຂະພາບ ແລະ ຮັກສາສຸຂະພາບ ແມ່ນ ມີຄວາມສຳຄັນຫຼາຍຕໍ່ຕົນເອງ ແລະ ຄອບຄົວ. ໃນອີກດ້ານຫນຶ່ງກໍເພື່ອເປັນການສົ່ງເສີມດ້ານການບໍລິຫານສຸຂະພາບ ແລະ ສ້າງສະຖານທີ່ ເຮັດວຽກທີ່ຜູ້ຄົນສາມາດເຮັດວຽກດ້ວຍຄວາມກະຕືລືລົ້ນ (ມີຄວາມຫາວຫັນ). (ຮູບ 2.-3).



ຮູບພາບ 2-3 ການຮັກສາສຸຂະພາບຂອງພະນັກງານ ນຳໄປສູ່ການສົ່ງເສີມການບໍລິຫານສຸຂະພາບ ແລະ ສ້າງບ່ອນເຮັດວຽກທີ່ພະນັກງານສາມາດເຮັດວຽກໄດ້ຢ່າງມີຊີວິດຊີວາ.

ແຫຼ່ງຂໍ້ມູນ: "ຄູ່ມືການຮ່ວມມືເພື່ອສົ່ງເສີມສຸຂະພາບຂໍ້ມູນ ແລະ ການບໍລິຫານສຸຂະພາບ" 07/2017, ພະແນກປະກັນ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ການເຮັດວຽກກາງແຈ້ງ ແລະ ການຮັກສາ ສຸຂະພາບ 2 ແລະ ການພັກຜ່ອນໃຫ້ພຽງພໍ

ການເຮັດວຽກກາງແຈ້ງ ແລະ ການຟື້ນຟູຄວາມເມື່ອຍລ້າ

ຄວາມເມື່ອຍລ້າ ສາມາດແບ່ງອອກເປັນ 3 ປະເພດ: ຄວາມເມື່ອຍລ້າທາງດ້ານຮ່າງກາຍ, ຄວາມເມື່ອຍລ້າທາງດ້ານຈິດໃຈ ແລະ ຄວາມເມື່ອຍລ້າທາງເສັ້ນປະສາດ. ເຖິງແມ່ນວ່າ ເຄື່ອງກົນຈັກປ່າໄມ້ຈະມີຄວາມກ້າວໜ້າ ກໍຕາມ, ແຕ່ ການອອກແຮງງານໜັກ ຢູ່ປ່າໄມ້ ກໍຍັງມີຫຼາຍ ແລະ ການອອກແຮງງານທີ່ຕ້ອງໃຊ້ກ້າມຊີ້ນເພື່ອການເຄື່ອນໄຫວ ແລະ ທ່າທາງໃນການເຮັດວຽກ ກໍຍັງເປັນລັກສະນະສະເພາະຂອງພາລະໜ້າທີ່ໃນການເຮັດວຽກກ່ຽວປ່າໄມ້. ນອກຈາກນັ້ນ, ຍັງມີພາລະທາງດ້ານອິດທິພົນຂອງສິ່ງແວດລ້ອມພາຍນອກອີກດ້ວຍ ເຊັ່ນ: ຄວາມຮ້ອນ, ຄວາມເຢັນ ເປັນຕົ້ນ, ຕະຫຼອດຈົນເຖິງພາລະທາງຈິດໃຈ ແລະ ເສັ້ນປະສາດທີ່ເກີດຈາກຄວາມເຄັ່ງຄຽດທີ່ກ່ຽວຂ້ອງກັບການຮັບປະກັນຄວາມປອດໄພໃນການເຮັດວຽກ, ການໃຊ້ເຄື່ອງກົນຈັກປ່າໄມ້ ແລະ ຜົນຜະລິດ, ເຊິ່ງທັງໝົດນີ້ລ້ວນແລ້ວແຕ່ກ່ຽວຂ້ອງກັບຄວາມເມື່ອຍລ້າໃນການເຮັດວຽກກ່ຽວກັບປ່າໄມ້.

ສາເຫດຕົ້ນຕໍຂອງຄວາມເມື່ອຍລ້າທາງດ້ານຮ່າງກາຍ ແມ່ນ ການຂາດພະລັງງານໃນການເຄື່ອນໄຫວກ້າມຊີ້ນ ແລະ ການສະສົມຂອງສານຄວາມເມື່ອຍລ້າ (ກົດ lactic). ກົດ lactic ເປັນກົດທີ່ໄດ້ມາຈາກການແຍກທາດຄາໂບໄຮເດດ ອອກມາເປັນ ພະລັງງານ. ກ້າມຊີ້ນເອງ ແມ່ນ ມີຄວາມອ່ອນໄຫວຕໍ່ກັບຄວາມເປັນກົດ, ເຊິ່ງຫາກຈຳນວນ ກົດ lactic ໄດ້ຮັບການສະສົມຫຼາຍ, ພວກມັນຈະບໍ່ສາມາດເຮັດວຽກໄດ້ຢ່າງຖືກຕ້ອງ. ນີ້ສະແດງອອກເຖິງ ຄວາມເມື່ອຍ, ຄວາມເມື່ອຍລ້າ ແລະ ຄວາມເຄັ່ງຂອງກ້າມຊີ້ນ.

ຕົ້ນຕໍທີ່ມີປະສິດທິພາບໃນການຟື້ນຟູຈາກຄວາມເມື່ອຍລ້າ ແມ່ນ ການພັກຜ່ອນ, ການນອນ, ການອອກກຳລັງກາຍ ແລະ ການກິນອາຫານ. ລອງມາເບິ່ງຈຸດຕ່າງໆລຸ່ມນີ້.

ການພັກຜ່ອນທີ່ມີປະສິດທິພາບ

ການພັກຜ່ອນ ມີຄວາມສຳຄັນຢ່າງຍິ່ງໃນການເຮັດວຽກຢູ່ພາກສະໜາມ. ການອາບນ້ຳຫຼັງຈາກກັບຄືນເຮືອນ, ຄວາມດັນ ແລະ ອຸນຫະພູມຂອງນ້ຳ ຈະຊ່ວຍຜ່ອນຄາຍກ້າມຊີ້ນ ແລະ ຊ່ວຍການໄຫຼວຽນຂອງເລືອດ. ໃນເວລາດຽວກັນ, ມັນກໍຈະກຳຈັດສິ່ງສົ່ງກະປົກ ຫຼື ສານຜິດ/ສິ່ງເຈືອປົນ ອອກຈາກຮ່າງກາຍ ແລະ ບັນເທົາຄວາມເຄັ່ງຕຶງທາງເສັ້ນປະສາດ. ການອາບນ້ຳອຸ່ນ ແລະ ຜ່ອນຄາຍ ຮ່າງກາຍ ນອກຈາກນັ້ນແລ້ວ ການນວດກ້າມຊີ້ນທີ່ເມື່ອຍລ້າໃນອ່າງອາບນ້ຳ ກໍມີປະສິດທິພາບເຊັ່ນກັນ.

ການນອນແບບມີປະສິດທິພາບ

ການນອນ ບໍ່ພຽງແຕ່ເຮັດໃຫ້ສະໝອງ ແລະ ຮ່າງກາຍໄດ້ພັກຜ່ອນເທົ່ານັ້ນ, ແຕ່ຍັງເຮັດໃຫ້ຮໍໂມນຈະເລີນເຕີບໂຕ, ກະຕຸ້ນເຊວ ແລະ ປ່ຽນສານຕ່າງໆໃນຮ່າງກາຍໃຫ້ກາຍເປັນສານທີ່ສາມາດເປັນພະລັງງານໄດ້ອີກດ້ວຍ (ອັນນີ ເອີ້ນວ່າ ການເຜົາຜານ). ການນອນ ແມ່ນ ໄລຍະເວລາທີ່ສຳຄັນຂອງການສ້າງພະລັງງານ ເຊິ່ງຈະເປັນພະລັງງານໃນການພື້ນພະລັງຂອງການເຮັດວຽກໃນມື້ອື່ນ (ກ່ຽວກັບວິທີການນອນຢ່າງມີປະສິດທິພາບ ແມ່ນ ຈະອະທິບາຍໃນພາຍຫຼັງ).

ການເຄື່ອນໄຫວ

ກົດ lactic ທີ່ສະສົມຢູ່ໃນກ້າມຊີ້ນ ຈະຖືກຂັບອອກໄປໄດ້ຢ່າງລຽບງ່າຍໂດຍການເຄື່ອນໄຫວຮ່າງກາຍໃນລະດັບທີ່ເໝາະສົມ. ຫາກບໍ່ມີການເຄື່ອນໄຫວຮ່າງກາຍຍ້ອນຄວາມເມື່ອຍລ້າຈາກການເຮັດວຽກ, ການຂັບຖ່າຍຂອງກົດ lactic ກໍຈະຊັກຊ້າ ແລະ ຈະເຮັດໃຫ້ການບັນເທົາຄວາມເມື່ອຍລ້າເປັນໄປໄດ້ຍາກ. ການອອກກຳລັງກາຍໃນລະດັບທີ່ເໝາະສົມ, ເຊັ່ນ: ການຍ່າງອ້ອມບໍລິເວນເຮືອນຊານ ຈະເປັນຕົວຊ່ວຍໃນການຂັບຖ່າຍ ກົດ lactic, ຊ່ວຍກະຕຸ້ນການເຮັດວຽກຂອງອະໄວຍະວະພາຍໃນ, ແລະ ປັບປຸງການໄຫຼວຽນຂອງເລືອດ, ເຊິ່ງທັງໝົດນີ້ຈະຊ່ວຍສ້າງຮ່າງກາຍໃຫ້ມີສຸຂະພາບດີ ແລະ ເມື່ອຍຍາກ.

ການກິນອາຫານ

ການສົ່ງເສີມໂພສະນາການເພື່ອຟື້ນຟູຈາກຄວາມເມື່ອຍລ້າ ແມ່ນ ຈຳເປັນຕ້ອງພິຈາລະນາຢ່າງລະອຽດກ່ຽວກັບສະພາບແວດລ້ອມການເຮັດວຽກ. ໃນການເຮັດວຽກທີ່ໃຊ້ກ້າມຊີ້ນ ແລະ ການເຮັດວຽກຢູ່ບ່ອນທີ່ມີ ອຸນຫະພູມສູງໃນລະດູຮ້ອນ ແມ່ນຈຳເປັນຕ້ອງໄດ້ດື່ມນ້ຳໃຫ້ພຽງພໍ ແລະ

ນອກຈາກແຮ່ທາດຕ່າງໆ ເຊັ່ນ: ເກືອແລ້, ຈຳເປັນຕ້ອງເສີມວິຕາມິນບີລວມ ແລະ ວິຕາມິນ ຊີ ຕື່ມດ້ວຍ. ໂດຍທົ່ວໄປ, ເມື່ອກ້າມຊີ້ນເມື່ອຍລ້າ, ປະລິມານການນຳໃຊ້ຄາໂບໄຮເດຣດທີ່ຢູ່ໃນເນື້ອເຍື່ອຂອງກ້າມຊີ້ນຈະເພີ່ມຂຶ້ນ, ແລະ ເມື່ອຈິດໃຈຂອງຄົນເຮົາເມື່ອຍລ້າ, ການນຳໃຊ້ກລູໂກດໃນເສັ້ນປະສາດສະໝອງກໍຈະເພີ່ມຂຶ້ນເຊັ່ນກັນ. ໃນທັງສອງກໍລະນີ, ການເສີມດ້ວຍຄາໂບໄຮເດຣດ ແລະ ວິຕາມິນ B ລວມ ແມ່ນ ມີປະສິດທິຜົນ ສຳລັບການຟື້ນຟູຈາກຄວາມເມື່ອຍລ້າ. (ກ່ຽວກັບໂພຊະນາການ ແລະ ການດູແລສຸຂະພາບ ແມ່ນຈະອະທິບາຍຕື່ມໃນຕໍ່ໄປ).

ລາຍການຟຸ້ມເຟືອຍ

ນອກເໜືອໄປຈາກຂ້າງເທິງນີ້ແລ້ວ, ສິນຄ້າຟຸ່ມເຟືອຍຕໍ່ໄປນີ້ ໄດ້ຖືກກ່າວເຖິງວ່າມີຜົນຕໍ່ການບັນເທົາຄວາມເມື່ອຍລ້າ, ດັ່ງນັ້ນ ຈຶ່ງເພີດເພີນກັບພວກມັນໃນລະດັບທີ່ເໝາະສົມເພື່ອບັນເທົາຄວາມເມື່ອຍລ້າຈາກການເຮັດວຽກ. ເຫຼົ້າໃນປະລິມານເລັກໜ້ອຍ ສາມາດຄາດຫວັງໄດ້ວ່າຈະມີປະສິດທິພາບໃນການຟື້ນຟູຈາກຄວາມເມື່ອຍລ້າທາງຈິດໃຈ ໂດຍມັນຈະຊ່ວຍຜ່ອນຄາຍລະບົບປະສາດຊິມພາເຕຕິກ (Sympathetic) ແລະ ເຮັດໃຫ້ນອນຫລັບເລິກໄດ້. ເຫຼົ້າຍັງຊ່ວຍປັບປຸງການໄຫຼວຽນຂອງເລືອດ, ເລັ່ງການເຜົາຜານອາຫານ ແລະ ເພີ່ມຄວາມຢາກອາຫານ, ສະນັ້ນ ມັນຈຶ່ງມີປະສິດທິພາບໃນການບັນເທົາຄວາມເມື່ອຍລ້າ.

ກາເຟ ແລະ ຊາ ເປັນທີ່ຮູ້ຈັກວ່າ ມັນມີປະສິດຕິພາບໃນການຟື້ນຟູຄວາມເມື່ອຍລ້າ ອັນມີຜົນມາຈາກລິດຂອງຄາເຟອີນທີ່ເປັນສ່ວນປະສົມ. ນອກຈາກນັ້ນແລ້ວ ມັນຍັງມີປະສິດຕິພາບທາງຈິດຕະວິທະຍາຢ່າງໃຫຍ່ຫຼວງ, ຍ້ອນວ່າ ມັນໄດ້ເຮັດໃຫ້ມີການປ່ຽນແປງທາງດ້ານອາລົມນຳອີກດ້ວຍ. ການຕື່ມນ້ຳຕານລົງໄປໃນເຄື່ອງດື່ມເຫຼົ່ານີ້, ຍັງສາມາດຄາດຫວັງໄດ້ວ່າ ມີຈະປະສິດຕິພາບໃນການບັນເທົາຄວາມເມື່ອຍລ້າຈາກຄາໂບໄຮເດຣດໄດ້.

ແຕ່ວ່າ, ສິນຄ້າຟຸ່ມເຟືອຍເຫຼົ່ານີ້ ເປັນສິນຄ້າຫ້າມບໍລິໂພກກ່ອນການເຂົ້ານອນ. ຫາກດື່ມເຄື່ອງດື່ມແອວກໍຮໍ ແທນ ຢານອນລັບ, ມັນຈະລົບກວນການນອນລັບໃນຕອນເດິກ ເຊິ່ງມັນຈະ ເຮັດໃຫ້ບໍ່ສາມາດນອນຫລັບຝັນດີໄດ້.

ແຫຼ່ງຂ່າວ: e-Health Net “ການພັກຜ່ອນ ແລະ ສຸຂະພາບຈິດ” ເວັບໄຊຂໍ້ມູນຂ່າວສານດ້ານສຸຂະພາບເພື່ອປ້ອງກັນພະຍາດທີ່ເກີດຈາກຄວາມລຶ້ງເຄີຍໃນການດຳລົງຊີວິດ - ສະຖາບັນບໍລິຫານເອກະລາດແຫ່ງຊາດ ສູນຈິດຕະສາດ ແລະ ປະສາດວິທະຍາ (ສະຖາບັນຄົ້ນຄວ້າສຸຂະພາບຈິດ - ພາກຈິດຕະວິທະຍາ ແລະ ຟີຊິກສາດ) / ສະມາຄົມສຸຂະອະນາໄມອຸສາຫະກຳແຫ່ງປະເທດຍີ່ປຸ່ນ - ກຸ່ມສຶກສາຄວາມເມື່ອຍລ້າທາງອຸດສາຫະກຳ ກຸ່ມວິໄຈກອງບັນນາທິການ “ຄູ່ມືຄວາມເມື່ອຍລ້າທາງອຸດສາຫະກຳໃໝ່” ກຸ່ມວິໄຈມາດຖານແຮງງານ / ເວັບໄຊຂໍ້ມູນດ້ານສຸຂະພາບຂອງສູນສຸຂະພາບເຂດເຊຕາກາຢະ “ວິທີພັກຜ່ອນຮ່າງກາຍຢ່າງມີປະສິດຕິພາບ” ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ


ວິທີການນອນຢ່າງມີປະສິດທິພາບ

ວິທີການກະກຽມສະພາບແວດລ້ອມຂອງບ່ອນນອນ

ການສ້າງສະພາບແວດລ້ອມໃນການນອນຫຼັບທີ່ດີ ເປັນເງື່ອນໄຂສຳຄັນສຳລັບການນອນ. ກ່ອນອື່ນໝົດ, ການເລືອກເຄື່ອງນອນເຊິ່ງເປັນສະພາບແວດລ້ອມຂອງບ່ອນນອນ ຖືວ່າເປັນ ຈຸດສຳຄັນສຳລັບການນອນຫລັບຝັນດີ. ເຄື່ອງນອນໃນລັກສະນະດັ່ງນີ້: ໝອນທີ່ບໍ່ເຮັດໃຫ້ ຄໍ ແລະ ບ່າ ເຄັ່ງຕຶງ, ຜ້າເສື່ອ ຫຼື ບ່ອນນອນທີ່ມີຄວາມແຂງໃນລະດັບທີ່ເໝາະສົມ ແລະ ຜ້າຮົ່ມທີ່ມີຄວາມພໍດີ ຈະເຮັດໃຫ້ສາມາດຮັກສາທ່ານອນ ແລະ ເຮັດໃຫ້ຮ່າງກາຍມີຄວາມເຄັ່ງຄຽດໜ້ອຍລົງ, ສະນັ້ນ ມັນຈຶ່ງເປັນຄວາມຄິດທີ່ດີທີ່ຕ້ອງເລືອກເຄື່ອງນອນທີ່ມີຄຸນສົມບັດໃນການຮັກສາຄວາມຮ້ອນ, ດູດຊຶມຄວາມຊຸ່ມ ແລະ ລະບາຍຄວາມຊຸ່ມໄດ້ດີ.

ຜ້າປູບ່ອນນອນ ມີ 2 ໜ້າທີ່ໃຫຍ່ ຄື: ຮັກສາຄວາມອົບອຸ່ນໃນເວລານອນ ແລະ ຮັກສາທ່າທາງຂອງການນອນໃຫ້ດີ, ເຊິ່ງມັນຈະເຮັດໃຫ້ຮ່າງກາຍຮູ້ສຶກເມື່ອຍໜ້ອຍລົງ. ເຮົາຈະນອນລັບ ເມື່ອໂມງແຫ່ງຊີວິດຂອງເຮົາເລີ່ມເຮັດວຽກ ແລະ ຮ່າງກາຍຂອງຄົນເຮົາກໍຈະມີອຸນຫະພູມທີ່ຫຼຸດລົງ, ແລະ ເພື່ອຈະເຮັດໃຫ້ຮ່າງກາຍສາມາດລັບເລິກຕໍ່ໄປໄດ້ ຮ່າງກາຍຈະປ່ອຍຄວາມຮ້ອນອອກມາ ເຊິ່ງຈະເຮັດໃຫ້ມີເຫື່ອອກ. ດ້ວຍເຫດຜົນນີ້, ເຄື່ອງນອນຈະຕ້ອງມີຄຸນສົມບັດໃນການດູດຊຶມຄວາມຊຸ່ມ ແລະ ລະບາຍຄວາມຊຸ່ມໄດ້ດີ, ພ້ອມໆກັບການຮັກສາຄວາມຮ້ອນທີ່ດີ.

ສະພາບແວດລ້ອມການນອນ ແມ່ນ ມີຄວາມສຳຄັນໂດຍສະເພາະໃນລະດູໜາວ. ໃນລະດູໜາວ, ຫາກກະກຽມຜ້າຫົ່ມ ເຄື່ອງນອນ ຕ່າງໆໃຫ້ອຸ່ນກ່ອນການເຂົ້ານອນ ກໍຈະເຮັດໃຫ້ນອນຫລັບໄດ້ດີຂຶ້ນ. ຫາກບ່ອນນອນເຢັນ, ມັນຈະຂັດຂວາງການແຜ່ລັງສີຂອງຂອງຄວາມຮ້ອນໃນຮ່າງກາຍ ແລະ ເຮັດໃຫ້ຄົນເຮົານອນຢູ່ໃນທ່າທີ່ຜິດທຳມະຊາດ. ໃນເວລາທີ່ອາກາດໜາວທີ່ສຸດ, ການອຸ່ນບ່ອນນອນດ້ວຍຖົງນ້ຳຮ້ອນ ຫຼື ຜ້າຫົ່ມໄຟຟ້າ ກ່ອນທີ່ຈະເຂົ້ານອນ ກໍຈະຊ່ວຍເຮັດໃຫ້ນອນຫລັບໄດ້ງ່າຍຂຶ້ນ.



ຮູບທີ 2-4 ເຄັດລັບການເລືອກໝອນໃຫ້ນອນຫຼັບຝັນດີ

ຄວາມສູງຂອງ “ໝອນ” ສຳລັບການນອນຫລັບທີ່ດີ ແມ່ນ ເທົ່າໃດ?

ຫາກຕື່ນນອນມາແລ້ວຮູ້ສຶກວ່າ ຄໍ ແລະ ບ່າ ແຂງ, ນັ້ນໝາຍຄວາມວ່າໝອນທີ່ໃຊ້ນອນນັ້ນ ບໍ່ພໍດີ. ພາລະບົດບາດຂອງໝອນ ແມ່ນ ເພື່ອຕື່ມຊ່ອງວ່າງລະຫວ່າງບ່ອນນອນ ຫຼື ເສື້ອນອນ ແລະ ດ້ານຫຼັງຂອງຫົວ ແລະ ຄໍ ແລະ ຊ່ວຍຮັກສາທ່າທາງແບບທຳມະຊາດ. ຊ່ອງວ່າງນີ້ ແຕກຕ່າງກັນຢ່າງຫຼວງຫຼາຍ ໃນແຕ່ລະບຸກຄົນ, ແລະ ໝອນທີ່ເໝາະສົມສຳລັບຊ່ອງວ່າງນັ້ນ ກໍຍັງແຕກຕ່າງກັນໄປແຕ່ລະບຸກຄົນນຳອີກ, ສະນັ້ນ ມັນຈຶ່ງເປັນຄວາມຄິດທີ່ດີທີ່ຕ້ອງຮູ້ຄວາມສູງຂອງໝອນທີ່ເໝາະສົມກັບປະເພດຂອງຮ່າງກາຍ ແລ້ວເລືອກໝອນທີ່ໃຫ້ໃຫ້ຄວາມຮູ້ສຶກທີ່ໝັ້ນຄົງ.

ໂດຍສະເພາະ, ມັນໄດ້ຖືກກ່າວວ່າ ອີງຕາມຫລັກການແລ້ວ, ມຸມລະຫວ່າງບ່ອນນອນ ຫຼື ຜ້າເສື່ອ ແລະ ຄໍ ຄວນຢູ່ທີ່ປະມານ 5 ອົງສາ. ຄວາມຍາວຂອງຄໍ ຈະແຕກຕ່າງກັນໄປຕາມແຕ່ລະບຸກຄົນ (ໂດຍທົ່ວໄປ ແມ່ນ 1 ຫາ 6 ຊັງຕີແມັດ) ແຕ່ເວົ້າກັນວ່າ ການເລືອກໝອນທີ່ມີຄວາມສູງກົງກັບຄວາມຍາວນີ້ ຈະຊ່ວຍຫຼຸດຜ່ອນພາລະຂອງຄໍ ແລະ ບ່າ ແລ້ວ ເຮັດໃຫ້ນອນງ່າຍຂຶ້ນ (ຮູບທີ 2-4).

ປັບຄວາມລຶ້ງເຄີຍໃນການດຳລົງຊີວິດເພື່ອການນອນຫຼັບດີ

ຄວາມລຶ້ງເຄີຍໃນການດຳລົງຊີວິດສຳລັບການນອນຫຼັບຝັນດີ ມີ 2 ບົດບາດ. ອັນທີ 1 ແມ່ນ ບົດບາດໂດຍກົງ, ເຊິ່ງຄວາມລຶ້ງເຄີຍຕ່າງໆໃນໂຕຂອງມັນເອງ ເຊັ່ນ ໃນ “ການອອກກຳລັງກາຍ” ຫຼື “ການອາບນ້ຳ” ຈະສົ່ງຜົນໂດຍກົງ ເລະ ເຮັດໃຫ້ນອນຫຼັບສະບາຍ. ອີກຢ່າງໜຶ່ງ ແມ່ນ ພາລະບົດບາດທາງອ້ອມ: ຫາກປັບໂມງແຫ່ງຊີວິດ ເປັນ 24 ຊົ່ວໂມງໃຫ້ໄດ້ຢ່າງເໝາະສົມ ດ້ວຍຄວາມລຶ້ງເຄີຍໃນການດຳລົງຊີວິດທີ່ດີ, ກໍຈະເຮັດໃຫ້ມີຄວາມລຶ້ງເຄີຍໃນການນອນລັບທີ່ຖືກຕ້ອງ ແລະ ນອນລັບສະບາຍໄດ້.

ໃນການຄົ້ນຄວ້າກ່ຽວກັບການລະບາດຂອງພະຍາດທີ່ຢູ່ພາຍໃນ ແລະ ຕ່າງປະເທດ (ແບບສອບຖາມສຳລັບປະຊາຊົນຫຼາຍພັນຄົນ) ໄດ້ສະແດງໃຫ້ເຫັນວ່າ ຜູ້ທີ່ອອກກຳລັງກາຍເປັນປົກກະຕິ ຈະບໍ່ຄ່ອຍມີອາການນອນບໍ່ຫລັບ. ໂດຍສະເພາະ, ການອອກກຳລັງກາຍເປັນປົກກະຕິ ເບິ່ງຄືວ່າຈະມີປະສິດທິພາບໃນການຮັກສາການນອນໄດ້ດີ. ປະເພດຂອງການອອກກຳລັງກາຍ ກໍສົ່ງຜົນຕໍ່ການນອນເຊັ່ນກັນ. ການອອກກຳລັງກາຍພຽງແຕ່ຄັ້ງດຽວຈະບໍ່ມີປະສິດທິພາບ, ດັ່ງນັ້ນ, ມັນຈຶ່ງເປັນສິ່ງສຳຄັນທີ່ຈະສືບຕໍ່ອອກກຳລັງກາຍເປັນປົກກະຕິ. ຜົນການພະຍາຍາມດັ່ງກ່າວ ຈະເຮັດໃຫ້ສາມາດນອນລັບ ແລະ ລັບໄດ້ເລິກດີຂຶ້ນ. ການອອກກຳລັງກາຍທີ່ຮຸນແຮງສາມາດລົບກວນການນອນໄດ້, ສະນັ້ນ ມັນຈະດີທີ່ສຸດທີ່ຈະເຂົ້າຮ່ວມການອອກກຳລັງກາຍແບບແອໂຣບິກທີ່ໃຊ້ເວລາໃນການອອກກຳລັງກາຍດົນ ແລະ ມີຜົນກະທົບໜ້ອຍ (ເຊັ່ນ: ການຍ່າງ ໄອ ຫຼື ການແລ່ນຄ່ອຍໆ).

ເອກະສານ: “ການພັກຜ່ອນ - ສຸຂະພາບຈິດ” ເວັບໄຊຂໍ້ມູນຂ່າວສານດ້ານສຸຂະພາບເພື່ອປ້ອງກັນພະຍາດທີ່ກ່ຽວຂ້ອງກັບຄວາມລຶ້ງເຄີຍໃນການດຳລົງຊີວິດ / ສະຖາບັນເອກະລາດ ສູນປະສາດ ແລະ ຈິດຕະວິທະຍາແຫ່ງຊາດ (ສະຖາບັນສຸຂະພາບຈິດ - ກົມຈິດຕະວິທະຍາ) ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ e-Health Net

ການເຮັດວຽກກາງແຈ້ງ ແລະ ການຮັກສາ ສຸຂະພາບ 3 ການປ້ອງກັນການເປັນລົມ (ໂລກລົມຊັກ)

ຕົວຢ່າງ ໂລກລົມແດດ (ກໍລະນີຢູ່ໃນສະໜາມເຮັດວຽກປ່າໄມ້ ຕ່າງໆ)

ນີ້ ແມ່ນ ຕົວຢ່າງຂອງຄົນທີ່ເສຍຊີວິດຍ້ອນໂລກລົມແດດໃນຂະນະຕັດຫຍ້າ.

--ເວລາປະມານ 10:30 ໂມງ, ຮອດເວລາພັກຜ່ອນຕອນເຊົ້າແລ້ວ ແຕ່ຜູ້ເຄາະຮ້າຍບໍ່ໄດ້ລົງມາທີ່ບ່ອນພັກຜ່ອນ, ເພື່ອນຮ່ວມງານຈຶ່ງໄປເບິ່ງ ບໍລິເວນທີ່ຜູ້ເຄາະຮ້າຍເຮັດວຽກ ແລະ ພົບເຫັນວ່າຜູ້ເຄາະຮ້າຍນອນຄ້ວ່າມຢູ່ໃນຂະນະທີ່ມືຂອງລາວຍັງຈັບເຄື່ອງຕັດຫຍ້າຢູ່.

ດັ່ງນັ້ນ, ເພື່ອນຮ່ວມງານຂອງລາວຈຶ່ງໄດ້ຂັບລົດໄປເຮືອນຂອງປະຊາຊົນທັນທີ ໂດຍໃຊ້ເວລາປະມານ 10 ນາທີ, ໄດ້ຢືມໂທລະສັບ, ແລະ ຕິດຕໍ່ ຫາ ໝໍ່ຍກູ້ໄພ, ຜູ້ເຄາະຮ້າຍໄດ້ຖືກສົ່ງ ໂດຍເຮລິຄອບເຕີໄປໂຮງໝໍ, ແຕ່ລາວໄດ້ເສຍຊີວິດໃນຕໍ່ມາຍ້ອນ ຫົວໃຈຢຸດເຕັ້ນ.

ສະພາບອາກາດໃນພື້ນທີ່ຮາບພຽງໃນມື້ນັ້ນ ແມ່ນ 28,3-29,8 ອົງສາ ແລະ ຄວາມຊຸ່ມ ແມ່ນ 51-55%. ເຖິງແມ່ນວ່າ ຈະບໍ່ສາມາດເວົ້າໄດ້ວ່າ ມັນເປັນມື້ທີ່ຮ້ອນທີ່ສຸດ, ແຕ່ກໍມີຄວາມສ່ຽງສູງທີ່ລາວຈະເປັນໂລກລົມແດດຍ້ອນເຮັດວຽກຢູ່ພາຍໃຕ້ແສງແດດທີ່ແຜດເຜົາ. ເຖິງຢ່າງໃດກໍຕາມ, ຜູ້ເຄາະຮ້າຍເຫຼົ່ານັ້ນ ແມ່ນ ຍັງບໍ່ມີຄວາມຮູ້ພຽງພໍກ່ຽວກັບອັນຕະລາຍຂອງໂລກລົມແດດ ແລະ ວິທີການປ້ອງກັນມັນ, ໂດຍໄດ້ພາກັນກະກຽມ ຂວດນ້ຳຊາຈຳນວນເລັກໜ້ອຍທີ່ໃສ່ເກືອລົງໄປຕາມປະສົບການຂອງເຂົາເຈົ້າ.

ນອກຈາກນັ້ນ, ຍັງບໍ່ມີການສ້າງປື້ມຄູ່ມື, ການຝຶກອົບຮົມກ່ຽວກັບການບໍລິຫານວຽກງານ ແລະ ການດູແລສຸຂະພາບທີ່ກ່ຽວຂ້ອງກັບຊົ່ວໂມງ ເຮັດວຽກ, ເວລາພັກຜ່ອນ ແລະ ວິທີການຕິດຕໍ່ສຸກເສີນ ຕ່າງໆອີກດ້ວຍ.

ກ່ຽວກັບການກວດສຸຂະພາບ ແມ່ນ ໄດ້ຮັບການກວດສຸຂະພາບໂດຍອົງການຈັດຕັ້ງທ້ອງຖິ່ນ ກ່ອນການເຂົ້າເຮັດວຽກກ່ອນໜ້ານີ້ 7 ປີ, ຫຼັງ ຈາກນັ້ນ ກໍບໍ່ໄດ້ເຂົ້າຮັບການກວດສຸຂະພາບປະຈຳປີເລີຍ, ເຊິ່ງເຈົ້າຂອງກິດຈະການເອງກໍບໍ່ໄດ້ຮັບຮູ້ກ່ຽວກັບສະພາວະທາງດ້ານສຸຂະພາບຂອງ ຜູ້ເຄາະຮ້າຍເຫຼົ່ານັ້ນ. ---

ເອກະສານ: "ເວັບໄຊຄວາມປອດໄພຂອງບ່ອນເຮັດວຽກ - ກໍລະນີອຸບັດຕິເຫດແຮງງານ" ເວັບໄຊ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ມັນເປັນທີ່ຊັດເຈນວ່າ ການຂາດຄວາມຮູ້, ຄວາມເຂົ້າໃຈ ແລະ ມາດຕະການປ້ອງກັນກ່ຽວກັບໂລກລົມແດດ ອາດຈະສ້າງອັນຕະລາຍໄດ້ຢ່າງ ຫຼວງຫຼາຍ. ມາຮຽນຮູ້ກ່ຽວກັບ ສາເຫດ ແລະ ອາການ ຂອງໂລກລົມແດດ ແລ້ວດຳເນີນການປ້ອງກັນ.

ໃນໂລກລົມແດດ ແມ່ນ ຈະມີອາການຕ່າງໆນາໆ

"ໂລກລົມແດດ" ເປັນຊື່ເອີ້ນທົ່ວໄປຂອງຄວາມເສຍຫາຍທີ່ເກີດຈາກການຢູ່ພາຍໃຕ້ສະພາບແວດລ້ອມທີ່ຮ້ອນເອົ້າ, ຍ້ອນຮ່າງກາຍ ຂາດ ນ້ຳ ແລະ ເກືອ (ໂຊດຽມຕ່າງໆ) ຈຶ່ງເກີດຄວາມບໍ່ສົມດຸນ ແລະ ໜ້າທີ່ການ ທີ່ເຮັດວຽກປັບຄວາມສົມດຸນຕ່າງໆທີ່ສຳຄັນໃນຮ່າງກາຍກໍໄດ້ຮັບ ຄວາມເສຍຫາຍ ເຊັ່ນ: ລະບົບປັບອຸນຫະພູມຂອງຮ່າງກາຍ ແລະ ລະບົບປັບການໄຫຼວຽງຂອງເລືອດເປັນຕົ້ນ.

ອາການຕ່າງໆ ຄື: ວິນຫົວ - ອ່ອນເພຍ, ເຈັບກ້າມຊີ້ນ - ກ້າມຊີ້ນແຂງ, ເຫື່ອອອກຫຼາຍ, ເຈັບຫົວ - ຮູ້ສຶກບໍ່ສະບາຍ, ປວດຮາກ - ຮາກ, ຮູ້ສຶກ ເມື່ອຍລ້າ - ຮູ້ສຶກອ່ອນເພຍ, ເສຍສະຕິ - ຊັກ - ມີບັນຫາໃນການເຄື່ອນໄຫວຂອງແຂນຂາ, ອຸນຫະພູມຮ່າງກາຍສູງ ເປັນຕົ້ນ.

ໃນໂລກລົມແດດຈະສະແດງອາການທີ່ຫຼາກຫລາຍ, ເຊິ່ງແຕ່ລະຢ່າງຈະມີຊື່ເອີ້ນພະຍາດທີ່ຕ່າງກັນ.

- **"ເປັນລົມໝົດສະຕິຍ້ອນຄວາມຮ້ອນ"**

ອາການວິນຫົວທີ່ເກີດຈາກການໄຫຼວຽນຂອງເລືອດໄປຍັງສະໝອງຫຼຸດລົງຊົ່ວຄາວ ເນື່ອງຈາກວ່າເລືອດໄດ້ໄຫຼວຽນໄປສູ່ຜິວໜັງຫຼາຍຂຶ້ນ ແລະ ມີເຫື່ອອອກຫຼາຍເກີນໄປ ໃນສະພາບທີ່ອາກາດຮ້ອນ.

- **"ການຊັກຍ້ອນຄວາມຮ້ອນ"**

ເປັນ ການປວດ ແລະ ເຈັບກ້າມຊີ້ນທີ່ເກີດຈາກການຂາດເກືອເຊິ່ງໄດ້ສູນເສຍຍ້ອນເຫື່ອອອກ.

- **"ໂລກເມື່ອຍຍ້ອນຄວາມຮ້ອນ" "ໂລກແພ້ຄວາມຮ້ອນ"**

ເວົ້າກັນວ່າ ເປັນສະພາບທີ່ລະດັບການມີສະຕິຫຼຸດລົງ ຍ້ອນມີອາການຂາດນ້ຳ ແລະ ຮ່າງກາຍອ່ອນເພຍ ແລະ ຄວາມສາມາດໃນການຕັ້ງຈິດ ຕັ້ງໃຈກໍຫຼຸດລົງ, ດັ່ງນັ້ນ ມັນຈຶ່ງ ເຮັດໃຫ້ເກີດອາການເຈັບຫົວ, ບໍ່ສະບາຍ, ປວດຮາກ, ຮາກ ແລະ ອື່ນໆ, ຖ້າປະໄວ້ໂດຍບໍ່ໄດ້ຮັບການປິ່ນປົວ, ຈະນຳໄປສູ່ການເປັນ "ໂລກແພ້ຄວາມຮ້ອນ" ເຊິ່ງອັນຕະລາຍຕໍ່ຊີວິດໄດ້. ມັນຈະສະແດງອາການຕ່າງໆ ເຊັ່ນ: ການເວົ້າ ແລະ ການກະທຳທີ່ຕ່າງ

ຈາກປົກກະຕິ ຫຼື ການຍ່າງໂຊເຊ, ເສຍສະຕິ ແລະ ອາການຊັກ ເປັນຕົ້ນ, ເຊິ່ງທັງໝົດນີ້ ແມ່ນ ເກີດຈາກຄວາມຜິດປົກກະຕິຂອງລະບົບປະສາດສ່ວນກາງ, ໝາກໄຂ່ຫຼັງ ແລະ ຕັບ.

ຢ່າງໃດກໍຕາມ, ຢູ່ໃນສະໜາມວຽກໂຕຈິງ, ອາດຈະເກີດມີອາການເຫຼົ່ານີ້ປະປົນກັນ, ສະນັ້ນ ເມື່ອເປັນໂລກລົມແດດ ແມ່ນ ໃຫ້ແຍກປະເພດເບົາ (ລະດັບ I), ປານກາງ (ລະດັບ II), ແລະ ຮ້າຍແຮງ (ລະດັບ III) ຕາມຄວາມຮ້າຍແຮງ, ດັ່ງທີ່ສະແດງຢູ່ໃນຕາຕະລາງ 2-1.

ເງື່ອນໄຂທີ່ເຮັດໃຫ້ເປັນໂລກລົມແດດໄດ້ງ່າຍ

ເງື່ອນໄຂທີ່ເຮັດໃຫ້ເກີດໂລກລົມແດດໄດ້ງ່າຍ ແມ່ນ ແບ່ງຕາມສະພາບແວດລ້ອມ, ການເຮັດວຽກ ແລະ ຜູ້ຄົນ.

ສະພາບແວດລ້ອມ:

ກ່ອນອື່ນໝົດ, ສະພາບແວດລ້ອມທີ່ ເຮັດໃຫ້ເກີດໂລກລົມແດດໄດ້ງ່າຍ ໝາຍເຖິງ ສະພາບທີ່ມີອຸນຫະພູມ ແລະ ຄວາມຊຸ່ມສູງ, ສະພາບທີ່ມີຄວາມຮ້ອນເຊິ່ງອອກມາຈາກລັງສີອິນຟາເລດທີ່ຖືກປ່ອຍອອກມາຈາກອົງປະກອບຂອງຄວາມຮ້ອນ (ຄວາມຮ້ອນຈາກການແຜ່ລັງສີ) ແລະ ສະພາບທີ່ບໍ່ມີລົມພັດ. ໃນສະພາບແວດລ້ອມດັ່ງກ່າວ, ມັນກາຍເປັນເລື່ອງຍາກທີ່ເຫື່ອຈະລະເຫີຍ ແລະ ເຫື່ອກໍຈະອອກຫຼາຍຂຶ້ນ ຍ້ອນໜ້າທີ່ການ ທີ່ເຮັດວຽກຄວບຄຸມອຸນຫະພູມຂອງຮ່າງກາຍບໍ່ໄດ້ປະສິດທິພາບ ແລະ ມີແນວໂນ້ມທີ່ຈະເປັນພາວະຂາດນ້ຳຫຼາຍຂຶ້ນ.

ວຽກງານ:

ວຽກທົ່ວໄປທີ່ພາໃຫ້ເກີດໂລກລົມແດດໄດ້ງ່າຍ ແມ່ນ ວຽກທີ່ສ້າງພາລະອັນໃຫຍ່ຫຼວງໃຫ້ແກ່ຮ່າງກາຍໃນມື້ທຳອິດທີ່ເລີ່ມເຮັດວຽກ ເຊິ່ງໄດ້ສືບຕໍ່ເຮັດວຽກເປັນໄລຍະເວລາດົນ ໂດຍບໍ່ພັກຜ່ອນ. ນອກຈາກນັ້ນ, ຫາກເຮັດວຽກໃນຂະນະທີ່ໃສ່ເຄື່ອງນຸ່ງ ຫຼື ເຄື່ອງປ້ອງກັນທີ່ລະບົບລະບາຍອາກາດບໍ່ດີ ຫຼື ການຊຶມຜ່ານຂອງຄວາມຊຸ່ມບໍ່ດີ, ເຫື່ອກໍຈະອອກ ແຕ່ ອຸນຫະພູມຂອງຮ່າງກາຍຈະບໍ່ຫຼຸດ ເຊິ່ງມັນຈະງ່າຍຕໍ່ການເປັນໂລກລົມແດດ.

ນອກຈາກນັ້ນແລ້ວ ໂລກລົມແດດ ຍັງມີແນວໂນ້ມທີ່ຈະເກີດຂຶ້ນງ່າຍ, ຫາກເຮັດວຽກຢູ່ໃນຊ່ວງທີ່ອາກາດເລີ່ມຮ້ອນຂຶ້ນກະທັນຫັນນັບຕັ້ງແຕ່ລະດູຝົນ ເຖິງ ລະດູຮ້ອນ.

ຜູ້ຄົນ:

ທີ່ຈິງແລ້ວ, ບໍ່ວ່າ ໂລກລົມແດດ ຈະເກີດຂຶ້ນຫຼືບໍ່ ມັນກໍມີມີຜົນກະທົບຢ່າງຫຼວງຫຼາຍ, ຕາມສະພາບສຸຂະພາບຂອງຜູ້ອອກແຮງງານແຕ່ລະຄົນ. ຄວນລະມັດລະວັງກ່ຽວກັບພະຍາດເບົາຫວານ, ຄວາມດັນເລືອດສູງ, ພະຍາດຫົວໃຈ, ແລະ ໄຕວາຍ.

ເມື່ອໃຊ້ຢາທີ່ມີຜົນກະທົບຕໍ່ລະບົບປະສາດອັດຕະໂນມັດ autonomic nervous system (ຢາປິ່ນປົວພະຍາດເສັ້ນປະສາດບໍລິເວນກ້ານສະມອງເສື່ອມ (Parkinson), ຢາກັນຊັກ, ຢາຕ້ານອາການຊຶມເສົ້າ, ຢາຕ້ານຄວາມວິຕົກກັງວົນ, ຢານອນຫລັບ, ແລະອື່ນໆ) ຈະເຮັດໃຫ້ ເຫື່ອອອກ ແລະ ໜ້າທີ່ການ ທີ່ມີໜ້າທີ່ຄວບຄຸມອຸນຫະພູມຂອງຮ່າງກາຍ ກໍຈະບົກຜ່ອງງ່າຍຂຶ້ນ, ແລະ ໂລກຜິວໜັງຫຼາຍຊະນິດອາດຈະເຮັດໃຫ້ເຫື່ອອອກບໍ່ພຽງພໍ ເຊິ່ງອາການເຫຼົ່ານີ້ອາດຈະສົ່ງຜົນກະທົບຕໍ່ການເລີ່ມຕົ້ນຂອງການເປັນ ໂລກລົມແດດ.

ນອກຈາກນັ້ນ, ຜູ້ທີ່ເປັນໄຂ້ຍ້ອນເປັນຫວັດ ຫຼື ພະຍາດອື່ນໆ, ຜູ້ທີ່ຂາດນ້ຳເນື່ອງຈາກຖອກທ້ອງ ຫຼື ຜູ້ທີ່ມີໄຂມັນໃຕ້ຜິວໜັງໜາ ກໍອາດມີຄວາມສ່ຽງທີ່ຈະເປັນໂລກລົມແດດ.

ກ່ຽວກັບມາດຕະການດູແລສຸກເສີນ ກ່ຽວກັບ ໂລກລົມແດດ

ເມື່ອເຮັດວຽກຢູ່ບ່ອນຮ້ອນ ແລະ ຊຸ່ມ, ຜູ້ຈັດການ ຄວນຮູ້ສະຖານທີ່ ແລະ ຂໍ້ມູນການຕິດຕໍ່ຂອງໂຮງໝໍ, ຄລີນິກ ແລະ ອື່ນໆ ລ່ວງໜ້າ ໃນກໍລະນີທີ່ຜູ້ອອກແຮງງານເປັນໂລກລົມແດດ, ສ້າງເຄືອຂ່າຍຕິດຕໍ່ສຸກເສີນ ແລະ ເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ.

ໃນຂະນະທີ່ເຮັດວຽກ, ທ່ານ ຫຼື ເພື່ອນຮ່ວມງານຂອງທ່ານອາດຈະໄດ້ຮັບຄວາມຮ້ອນ! ແລະ “ການສົ່ງໄສ” ເປັນບາດກ້າວທຳອິດໃນມາດຕະການດູແລສຸກເສີນໃນສະຖານທີ່ເຮັດວຽກ. ກ໊ລະນີມີອາການທີ່ຊີ້ໃຫ້ເຫັນເຖິງ ໂລກລົມແດດ, ແມ່ນ ໃຫ້ຢູ່ບ່ອນທີ່ອາກາດເຢັນ ແລ້ວເຮັດໃຫ້ຮ່າງກາຍເຢັນລົງ, ກິນນ້ຳ ຫຼື ເຄື່ອງດື່ມທີ່ມີສ່ວນປະສົມຂອງເກືອແຮ່. ນອກຈາກນັ້ນ, ໃຫ້ໂທເອີ້ນໝ່ວຍກູ້ໄພຕາມຄວາມຈຳເປັນ ຫຼື ໄປກວດນຳທ່ານໝໍ.

ຕາຕະລາງ 2-1 ອາການ ແລະ ການຈັດປະເພດຂອງໂລກລົມແດດ ①

	ອາການ	ລະດັບຄວາມຮ້າຍແຮງ	ການປິ່ນປົວ	ການຈັດປະເພດໂດຍອີງໃສ່ການຮັກສາຄົນເຈັບ
ລະດັບI (ການປະຖົມພະຍາບານເບື້ອງຕົ້ນ ແລະ ການຕິດຕາມ)	ວິນຫົວ, ມຶນຫົວ, ຫາວນອນ ເຫື່ອອອກຫຼາຍ ເຈັບກ້າມຊີ້ນ, ກ້າມຊີ້ນປັ້ນ (ຕະຄິວ) ບໍ່ຮັບຮູ້ກ່ຽວກັບການໝົດສະຕິ (JCS = 0)		ໂດຍປົກກະຕິແລ້ວສາມາດເບິ່ງແຍງໄດ້ຢູ່ບ່ອນເຮັດວຽກ → ພັກຜ່ອນຢູ່ບ່ອນຮົ່ມເຢັນ, ເຮັດໃຫ້ຜິວໜັງເຢັນລົງ, ດື່ມນ້ຳທາງປາກແລະ ເສີມ Na.	ກໍລະນີທີ່ອາການເລີ່ມຄ່ອຍໆດີຂຶ້ນ ໃນລະດັບ I ກໍ່ສາມາດດຳເນີນການປະຖົມພະຍາບານຂັ້ນຕົ້ນ ແລະ ຕິດຕາມອາການຢູ່ບ່ອນເຮັດວຽກ (ພາກສະໜາມ) ໄດ້ ອາການຊັກຍ້ອນຄວາມຮ້ອນ ເປັນລົມຍ້ອນຄວາມຮ້ອນ
ລະດັບII (ສະຖານທີ່ປິ່ນປົວ)	ເຈັບຫົວ, ປວດຮາກ, ມີຄວາມຮູ້ສຶກເມື່ອຍ - ອ່ອນເພຍ, ຂາດສະມາທິ ແລະ ການຕັດສິນໃຈຫຼຸດລົງ (JCS ≤ 1)		ຈຳເປັນຕ້ອງໄດ້ຮັບການປິ່ນປົວຢູ່ສະຖາບັນການແພດ → ການຄວບຄຸມອຸນຫະພູມຂອງຮ່າງກາຍ, ການພັກຜ່ອນໃຫ້ພຽງພໍ, ໃຫ້ນ້ຳ ແລະ ໂຊດຽມພຽງພໍ (ຖ້າການກິນທາງປາກ ບໍ່ໄດ້, ໃຫ້ໃຊ້ຢາທາງເສັ້ນເລືອດ)	ຖ້າຫາກສະແດງອາການລະດັບ II ແລະ ບໍ່ມີອາການດີຂຶ້ນມາໃນລະດັບ I ແມ່ນ ໃຫ້ນຳສົ່ງຄົນເຈັບໄປໂຮງໝໍທັນທີ (ຄົນອ້ອມຂ້າງເປັນຄົນຕັດສິນໃຈ). ອາການເມື່ອຍລ້າຈາກ ຄວາມຮ້ອນ
ລະດັບIII (ການປິ່ນປົວຢູ່ໂຮງໝໍ)	ມີຂໍ້ໃດໜຶ່ງ ໃນ 3 ຂໍ້ທີ່ລະບຸຢູ່ດ້ານລຸ່ມ (C) ຄວາມຜິດປົກກະຕິ ຂອງລະບົບປະສາດສ່ວນກາງ (ຄວາມບົກຜ່ອງ ທາງດ້ານສະຕິ JCS ≥ 2, ຄວາມຜິດປົກກະຕິຂອງສະໝອງສ່ວນລຸ່ມ, ເກີດອາການຊັກກະທັນຫັນ) (H/K) ໜ້າທີ່ການຕັບ - ໝາກໄຂ່ຫຼັງເຮັດວຽກຜິດປົກກະຕິ (ຕັບ ຫຼື ໝາກໄຂ່ຫຼັງມີບັນຫາ ຕ້ອງເຂົ້າປິ່ນປົວຢູ່ໃນໂຮງໝໍ ເພື່ອຕິດຕາມ ແລະ ຮັກສາໃຫ້ທັນການ) (D) ຄວາມຜິດປົກກະຕິຂອງການແຂງໂຕຂອງເລືອດ (ວິນິດໄສເປັນ DIC ຕາມເງື່ອນໄຂການວິນິດໄສ DIC ໄລຍະຮ້າຍແຮງ (ສະມາຄົມການແພດສຸກເສີນຍີ່ປຸ່ນ) ⇒ແມ່ນແຕ່ໃນລະດັບ III ກໍເປັນປະເພດຮ້າຍແຮງ.		ການປິ່ນປົວໃນໂຮງຫມໍ (ການປິ່ນປົວແບບສຸມໃນບາງກໍລະນີ) → ການວັດອຸນະພູມຂອງຮ່າງກາຍ (ນອກຈາກການຫຼຸດອຸນະພູມທາງຜິວໜັງແລ້ວ ຄວນມີການຫຼຸດອຸນະພູມພາຍໃນຮ່າງກາຍ, ການລະບາຍຄວາມຮ້ອນໃນຫຼອດເລືອດ) ການຫາຍໃຈ, ການປິ່ນ ປົວ DIC ການບໍລິຫານ ການໝຸນວຽນຂອງເລືອດ	ບໍ່ວ່າຈະລະດັບ III ຫຼື ບໍ່ກໍຕາມ ແມ່ນ ຈະໄດ້ຮັບ ການກວດກາ - ການຮັກສາໂດຍໜ່ວຍກູ້ໄພ ຫຼື ການກວດກາທາງການແພດພາຍຫຼັງຮອດ ໂຮງໝໍ. ໂລກແພ້ຄວາມຮ້ອນ

ຕາຕະລາງ 2-1 ອາການ ແລະ ການຈັດປະເພດຂອງໂລກລົມແດດ ②

ສະມາຄົມການແພດສຸກເສີນຂອງຍີ່ປຸ່ນ ການຈັດປະເພດໂລກລົມແດດ ປີ 2015: ໝາຍເຫດເສີມ

- ຫາກຮູ້ສຶກ<u>ບໍ່ສະບາຍຫຼັງຈາກຢູ່ໃນ ຫຼື ກຳລັງຢູ່ໃນສະພາບແວດລ້ອມທີ່ຮ້ອນ</u> ແມ່ນມີ**ໂອກາດທີ່ຈະເປັນໂລກລົມແດດ**.
- ອາການໃນແຕ່ລະລະດັບຄວາມຮ້າຍແຮງ ເປັນ ອາການທົ່ວໄປທີ່ສາມາດພົບເຫັນ ແລະ ຄວາມຮຸນແຮງ<u>ບໍ່ໄດ້ໝາຍຄວາມວ່າ</u>ຈະເກີດຂຶ້ນ ຫຼື ຖ້າບໍ່ເກີດຂຶ້ນກໍຈະຈັດເປັນລະດັບຄວາມຮ້າຍແຮງທີ່ແຕກຕ່າງກັນ.
- ສະພາບຂອງໂລກລົມແດດ (ຄວາມຮ້າຍແຮງ) ຂອງ ໂລກລົມແດດ**ປ່ຽນແປງໄປເປັນແຕ່ລະໄລຍະ**ຂຶ້ນກັບໄລຍະເວລາ ແລະ ລາຍລະອຽດຂອງການປິ່ນປົວ ແລະ ສະພາບຂອງຄົນເຈັບ. ຄວນເອົາໃຈໃສ່ເປັນພິເສດຕໍ່ລະດັບຄວາມບົກຜ່ອງຂອງສະຕິ, ອຸນຫະພູມຮ່າງກາຍ (ໂດຍສະເພາະອຸນຫະພູມຜິວໜັງຂອງຮ່າງກາຍ) ແລະ ລະດັບເຫື່ອອອກ, ຍ້ອນວ່າມັນສາມາດປ່ຽນແປງຢ່າງຫຼວງຫຼາຍໃນໄລຍະເວລາສັ້ນໆ.
- ດັ່ງນັ້ນ, ຈຶ່ງບໍ່ມີການໂຕ້ຖຽງວ່າ ການປ້ອງກັນ ເປັນ ສິ່ງທີ່ສຳຄັນທີ່ສຸດ, ແຕ່ຖ້າຫາກວ່າຮັບຮູ້ຕັ້ງແຕ່ໄລຍະເລີ່ມຕົ້ນ ແລະ ປິ່ນປົວຕັ້ງແຕ່ໄລຍະເລີ່ມຕົ້ນ ກໍຈະສາມາດປ້ອງກັນການເສຍຊີວິດໄດ້.
- ລະດັບ I ເປັນສະພາບການເຈັບປ່ວຍທີ່ສາມາດ**ປິ່ນປົວຢູ່ບ່ອນໄດ້**, ລະດັບ II ເປັນສະພາບການເຈັບປ່ວຍທີ່ຈຳເປັນຕ້ອງໄດ້ຮັບການດູແລຈາກ**ສະຖານທີ່ປິ່ນປົວ**ໃນທັນທີ, ລະດັບ III ເປັນສະພາບການເຈັບປ່ວຍທີ່ຈຳເປັນຕ້ອງກວດເລືອດ ແລະ **ເຂົ້າໂຮງໝໍ** (ໄດ້ຮັບການປິ່ນປົວໃນລະດັບສູງ) ຕາມການພິຈາລະນາຈາກທ່ານໝໍ.
- ການຈັດປະເພດໂດຍອີງໃສ່ການຮັກສາຄົນເຈັບທີ່ໃຊ້ໃນເອີຣົບ ແລະ ອາເມລິກາ ແມ່ນ ລະບຸຄຽງຄູ່ກັນໄວ້ໃນດ້ານຂວາ.
- ລະດັບ III ຈະຕື່ມຂໍ້ມູນໂຕໜັງສືທຳອິດ ຂອງອະໄວຍະວະທີ່ໄດ້ຮັບຄວາມເສຍຫາຍ ໃສ່ມຸມດ້ານຂວາທີ່ຢູ່ດ້ານລຸ່ມ ຄື IIIC, IIIH, IIIHK, IIICHKD
- ໃນການຮັກສາ ທຳອິດ ແມ່ນ ໃຫ້ແຍກລະຫວ່າງ **ການອອກກຳລັງແຮງ ຫຼື ບໍ່ມີການອອກກຳລັງແຮງ** ເຊິ່ງຈະຊ່ວຍໃນການກຳນົດແຜນການປິ່ນປົວໃນພາຍຫຼັງ, ຈັດການພະຍາດແຊກຊ້ອນ ແລະ ການຄາດຄະເນພະຍາດ.
- DIC ມັກມີຄວາມຊັບຊ້ອນຍ້ອນຄວາມຜິດປົກກະຕິ ຂອງອະໄວຍະວະອື່ນໆ, ເມື່ອເກີດຂຶ້ນ ຈະຖືວ່າເປັນພາວະຮຸນແຮງທີ່ສຸດ ແລະ ຈະໄດ້ຮັບການຮັກສາຢູ່ຫ້ອງມໍລະສຸມ.
- ຂໍ້ມູນນີ້ ອີງຕາມ<u>ການຈັດໝວດ/ໝູ່ ຂອງຄະນະ Yasuoka</u> ເຊິ່ງໄດ້ຮັບການປັບປຸງເພື່ອໃຫ້ເຂົ້າໃຈການວິນິໄສ ແລະການດູແລປະຊາຊົນ ທົ່ວໄປ, ການດູແລພະຍາບານນອກໂຮງໝໍ, ການກວດຮັກສາໂດຍສະຖານທີ່ປິ່ນປົວ ແລະການດູແລຮັກສາ, ເຊິ່ງໃນ**ອະນາຄົດ ແມ່ນມີ ຄວາມເປັນໄປໄດ້ທີ່ຈະໄດ້ຮັບການປ່ຽນແປງຕື່ມ**.

ແຫຼ່ງຂໍ້ມູນ: “ຄູ່ມືມາດຕະການປ້ອງກັນໂລກລົມແດດຢູ່ວຽກພາກສະໜາມ” 03/2018, ໜ່ວຍແຮງງານ ແລະ ສຸຂະອະນາໄມ, ພະແນກຄວາມປອດໄພ ແລະ ສຸຂະອະນາໄມ, ກົມມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ມາດຕະການດູແລສຸກເສີນຢູ່ບ່ອນເຮັດວຽກ

ມາດຕະການດູແລສຸກເສີນຢູ່ບ່ອນເຮັດວຽກ ແມ່ນ ສະແດງຢູ່ໃນຮູບ 2-5.

ກ່ອນອື່ນໝົດ, ກວດກາກ່ຽວກັບສະຕິ. ຖ້ວຢ່າງ: ຫາກສາມາດຕອບຮັບຄຳຖາມຕໍ່ໄປນີ້ໄດ້ຢ່າງຖືກຕ້ອງ ຈະຖືກພິຈາລະນາວ່າ ມີສະຕິດີ, “ມື້ນີ້ ແມ່ນ ວັນທີເທົ່າໃດ ເດືອນໃດ?” “ຕອນນີ້ເວລາຈັກໂມງ?” “ເຈົ້າຊື່ຫຍັງ?” “ຂ້ອຍແມ່ນໃສ?” ແລະ “ເຈົ້າຢູ່ໃສ?” ເປັນຕົ້ນ
ຫາກບໍ່ສາມາດຕອບຄຳຖາມໃດໜຶ່ງຢ່າງຈະແຈ້ງໄດ້, ແມ່ນ ຈະຖືກພິຈາລະນາ ວ່າ “ບໍ່ມີສະຕິ” ເປັນໂລກລົມຮ້ອນ ລະດັບ Ⅲ ທີ່ຮ້າຍແຮງ. ໃນກໍລະນີນີ້, ໃຫ້ໂທເອີ້ນໜ່ວຍກູ້ໄພ.

ເຖິງແມ່ນຈະມີສະຕິດີກໍຕາມ, ບໍ່ວ່າຈະໂທເອີ້ນໜ່ວຍກູ້ໄພ ຫຼື ບໍ່ໄດ້ໂທເອີ້ນ, ສິ່ງທຳອິດທີ່ຕ້ອງເຮັດ ແມ່ນ 1) ຍ້າຍຄົນເຈັບໄປບ່ອນທີ່ອາກາດເຢັນ, ແລະ 2) ເລີ່ມແກ້ເຄື່ອງນຸ່ງ ແລະ ລະບາຍຄວາມຮ້ອນ. ໂດຍສະເພາະ,ໃຫ້ປະຕິບັດຕາມຂັ້ນຕອນ 1 ແລະ 2 ດັ່ງລຸ່ມນີ້:

① ຍ້າຍອອກຈາກບ່ອນຮ້ອນໄປຫາບ່ອນຮົ່ມເຢັນ ຫຼື ຫ້ອງທີ່ມີເຄື່ອງປັບອາກາດ.

② ແກ້ເຄື່ອງນຸ່ງອອກເພື່ອຊ່ວຍລະບາຍຄວາມຮ້ອນອອກຈາກຮ່າງກາຍ. ນອກຈາກນັ້ນ, ໃຫ້ສີດນ້ຳໃສ່ຜິວໜັງ ແລະ ຮ່າງກາຍສ່ວນທີ່ສຳຜັດໄດ້ໃຫ້ຫຼາຍເທົ່າທີ່ເປັນໄປໄດ້, ແລ້ວໃຊ້ວີ ຫຼື ພັດລົມ ພັດໃສ່. ໃຫ້ນອນພຽງ ແລ້ວຍົກຂາຂຶ້ນ, ເພື່ອໃຫ້ເລືອດທີ່ຢູ່ຂາ ໄປສະສົມຢູ່ “ສ່ວນພາຍໃນ”ຕ່າງໆຂອງຮ່າງກາຍໃຫ້ຫຼາຍຂຶ້ນ. ກໍລະນີຄົນເຈັບບໍ່ມີສະຕິ, ແມ່ນ ໃຫ້ເລີ່ມວິທີການເຫຼົ່ານີ້ ກ່ອນທີ່ໜ່ວຍກູ້ໄພຈະມາຮອດ.

ກໍລະນີຄົນເຈັບມີສະຕິ, ໃຫ້ປະຕິບັດຕາມຂັ້ນຕອນ 1 ແລະ 2 ຕາມທີ່ລະບຸໄວ້ດ້ານເທິງ, ແລ້ວໃຫ້ພິຈາລະນາວ່າ ຄົນເຈັບສາມາດດື່ມນ້ຳດ້ວຍຕົນເອງໄດ້ ຫຼື ບໍ່. ໃນຈຸດນີ້, ຫາກວ່າຄົນເຈັບຮູ້ສຶກປວດຮາກ ຫຼື ໄດ້ຮາກສິ່ງທີ່ຢູ່ໃນກະເພາະອອກມາ ແມ່ນ ຈະພິຈາລະນາວ່າ “ບໍ່ສາມາດດື່ມນ້ຳໄດ້”.


ໃນກໍລະນີນີ້, ມັນຈຳເປັນຕ້ອງພິຈາລະນາກ່ຽວກັບການໃຫ້ນ້ຳໂດຍຜ່ານການໃສ່ນ້ຳຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວຕ່າງໆ. ຕອນນີ້ ໃຫ້ ພິຈາລະນາ ກ່ຽວກັບການເອີ້ນໜ່ວຍກູ້ໄພ.

ຫາກບໍ່ມີອາການປວດຮາກ ຫຼື ບໍ່ຮາກ ແລະ ສາມາດດື່ມນ້ຳໄດ້ດ້ວຍຕົນເອງ ກໍສາມາດໃຫ້ດື່ມນ້ຳໄດ້. ວິທີການສະເພາະ ແມ່ນ ສະແດງຢູ່ໃນຂໍ້ ③ ດ້ານລຸ່ມນີ້.

③ ໃຫ້ກິນຊາເຂັ້ມຂົ້ນ ຫຼື ນ້ຳໝາກໄມ້ທີ່ເຢັນ ຫຼື ນ້ຳກ້ອນ ຕ່າງໆເປັນຕົ້ນ.

ໃນເວລາທີ່ກຳລັງເຮັດວຽກ, ຄາດວ່າ ບໍ່ພຽງແຕ່ເສຍນ້ຳເທົ່ານັ້ນ, ແຕ່ຍັງສູນເສຍເກືອນຳອີກ, ເຊິ່ງວິທີການທີ່ງ່າຍດາຍ ກໍຄື ການໃຫ້ ໂອລາລິດ ຫຼື ເຄື່ອງດື່ມເສີມກຳລັງທີ່ມີສ່ວນປະສົມຂອງເກືອ, ແຕ່ນອກຈາກນັ້ນແລ້ວ, ກໍສາມາດເຮັດນ້ຳເກືອໃຫ້ຄົນເຈັບກິນໄດ້ ໂດຍການເອົາ ເມັດໂຊດ້ຽມຄໍໄລທີ່ມີຂາຍທົ່ວໄປ (1 ເມັດ 0,5 ກຣາມ) ຫຼື ເກືອ ລະລາຍໃນນ້ຳ 500 ມລ.

ຢູ່ບ່ອນນີ້ ສິ່ງສຳຄັນ ແມ່ນ ຈະຕ້ອງໃຫ້ຜູ້ໃດຜູ້ໜຶ່ງຢູ່ເຝົ້າຄົນເຈັບ. ຫາກອາການບໍ່ດີຂຶ້ນ ຫຼື ຮ້າຍແຮງຂຶ້ນ, ຈະຕ້ອງໄດ້ນຳສົ່ງໄປໂຮງໝໍ. ຢ່າລັງເລທີ່ຈະໂທເອີ້ນລົດສຸກເສີນເພື່ອນຳສົ່ງໄປຍັງໂຮງໝໍ. ຖ້າຮູ້ສຶກວ່າມີບາງຢ່າງຜິດປົກກະຕິ ເຖິງຈະຜິດປົກກະຕິ ຫຼື ບໍ່ຮູ້ເຫດຜົນພຽງເລັກໜ້ອຍກໍຕາມ ທ່ານຄວນໂທເອີ້ນໜ່ວຍກູ້ໄພ. ນອກຈາກນັ້ນ, ຍັງບໍ່ສາມາດເວົ້າໄດ້ວ່າ ຫຼັງຈາກກິນນ້ຳແລ້ວ ຈະບໍ່ຮາກອອກມາ. ໃນກໍລະນີດັ່ງກ່າວ, ແມ່ນ ຈຳເປັນຕ້ອງໃຫ້ຄົນເຈັບນອນສະແຕງ ເພື່ອລະມັດລະວັງບໍ່ໃຫ້ສິ່ງທີ່ຮາກອອກມາໄຫຼເຂົ້າໄປ (ສະໝັກ) ໃນທາງເດີນລະບົບຫາຍໃຈ “ຄໍ ຫາ ຫຼອດລົມ”



ຮູບທີ 2-5 ການປະຖົມພະຍາບານໂລກລົມແດດ (ການປະຖົມພະຍາບານຢູ່ບ່ອນເຮັດວຽກພາກສະໜາມ)

ແຫຼ່ງຂໍ້ມູນ: “ຄູ່ມືມາດຕະການປ້ອງກັນໂລກລົມແດດຢູ່ວຽກພາກສະໜາມ” 03/2018, ໜ່ວຍງແຮງງານ ແລະ ສຸຂະອະນາໄມ, ພະແນກຄວາມປອດໄພ ແລະ ສຸຂະອະນາໄມ, ກົມມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ



ຮູບ 2-1 ເຄື່ອງວັດແທກດັດຊະນີ WBGT ແບບພົກພາ

ມາດຕະການປ້ອງກັນ ແລະ ຮັບມື ກ່ຽວກັບ ໂລກລົມແດດ

ຄວາມສ່ຽງໃນການເກີດໂລກລົມແດດ

ເພື່ອປະເມີນຢ່າງເປັນກາງວ່າ ສະຖານທີ່ເຮັດວຽກເປັນສະພາບແວດລ້ອມທີ່ຮ້ອນເຊິ່ງມີຄວາມສ່ຽງຕໍ່ການເກີດໂລກລົມແດດ ຫຼືບໍ່, ຈຳເປັນຕ້ອງໄດ້ຄຳນຶງ ບໍ່ພຽງແຕ່ອຸນຫະພູມເທົ່ານັ້ນ ແຕ່ຍັງຕ້ອງຄຳນຶງເຖິງຄວາມຊຸ່ມ, ຄວາມໄວຂອງລົມ, ຄວາມຮ້ອນຈາກການແຜ່ລັງສີ, ຄວາມແຮງຂອງການເຮັດວຽກທີ່ໃຊ້ຮ່າງກາຍ ແລະ ລັກສະນະທາງຄວາມຮ້ອນຂອງເສື້ອຜ້າ ນຳອີກດ້ວຍ.

ດ້ວຍເຫດນີ້, ຈຶ່ງຕ້ອງໄດ້ນຳໃຊ້ປະໂຫຍດຂອງດັດຊະນີ WBGT (ດັດຊະນີວັດແທກຄວາມຮ້ອນໃນສິ່ງແວດລ້ອມການເຮັດວຽກ), ໂດຍການນຳປັດໃຈທັງໝົດເຫຼົ່ານີ້ມາພິຈາລະນາ (ຮູບ 2-1).

ດັດຊະນີ WBGT ແມ່ນ ດັດຊະນີທີ່ດັດກອງຄວາມສ່ຽງຕໍ່ການເກີດໂລກລົມແດດ ໂດຍການປະເມີນລະດັບຄວາມຄຽດຈາກຄວາມຮ້ອນໃນສະພາບແວດລ້ອມທີ່ຮ້ອນ ຫຼື ເອີ້ນອີກຢ່າງໜຶ່ງວ່າ ດັດສະນີຄວາມຮ້ອນ ໃນປະເທດຍີ່ປຸ່ນ. ແນະນຳໃຫ້ກຳນົດຄ່າ WBGT ດ້ວຍ ການຕິດຕັ້ງເຄື່ອງວັດແທກດັດຊະນີ WBGT ຢູ່ສະຖານທີ່ເຮັດວຽກ.

ຄ່າມາດຕະຖານ ຂອງ WBGT ຖືກ ກຳນົດໂດຍການອີງຕາມເນື້ອໃນການເຮັດວຽກ, ເຊິ່ງຫາກຄ່ານີ້ເກີນມາດຕະຖານ ແມ່ນ ຈຳເປັນຕ້ອງມີມາດຕະການຫຼຸດຜ່ອນຄ່ານັ້ນ.

ມາດຕະການປ້ອງກັນໂລກລົມແດດ

ກ່ຽວກັບສະພາບແວດລ້ອມໃນການເຮັດວຽກ, ຈັດບ່ອນພັກຜ່ອນທີ່ມີຮົ່ມເງົາ ແລະ ເຢັນ ໂດຍມີພື້ນທີ່ພຽງພໍທີ່ຈະນອນພັກຜ່ອນ.

ໃນສ່ວນຂອງວຽກນັ້ນໆ, ກໍຈຳເປັນຕ້ອງໄດ້ມີການດຳເນີນມາດຕະການປ້ອງກັນໂລກລົມແດດຕາມສະຖານະການຕ່າງໆຂອງການເຮັດວຽກ ເຊັ່ນ: ມີເວລາພັກວຽກ ຫຼື ເວລາພັກຜ່ອນ, ການຫຼຸດໄລຍະເວລາໃນການເຮັດວຽກຢ່າງຕໍ່ເນື່ອງໃນພື້ນທີ່ເຮັກວຽກທີ່ຮ້ອນເອົ້າ ແລະ ການປ່ຽນສະຖານທີ່ເຮັດວຽກເປັນຕົ້ນ.

- ການໄດ້ຮັບນ້ຳ ແລະ ເກືອ

ມັນເປັນສິ່ງຈຳເປັນທີ່ຈະຕ້ອງຮູ້ວ່າ ການຂາດນ້ຳ ອາດຈະຮ້າຍແຮງກວ່າອາການທີ່ສັງເກດເຫັນ, ສະນັ້ນ ຈຶ່ງຄວນດື່ມນ້ຳ ແລະ ເກືອເປັນປະຈຳ ໃນກ່ອນເຮັດວຽກ, ໃນເວລາເຮັດວຽກ ແລະ ຫຼັງການເຮັດວຽກ, ບໍ່ວ່າ ຈະສັງເກດເຫັນອາການ ຫຼືບໍ່ ກໍຕາມ.

ກ່ຽວກັບການກິນນ້ຳ ແລະ ເກືອ ເປັນປະຈຳ, ປະລິມານທີ່ຕ້ອງການ ຈະແຕກຕ່າງກັນໄປຕາມຄວາມແຮງຂອງການເຮັດວຽກ, ແຕ່ຖ້າຫາກເກີນຄ່າມາດຕະຖານ WBGT, ແນະນຳໃຫ້ດື່ມເຄື່ອງດື່ມເກືອແຮ່ ຫຼື ໂອລະລິດ ທີ່ມີ ເກືອແຮ່ 0,1 ຫາ 0,2 % ຫຼື ນາໂຕລ້ຽມ 40 ຫາ 80 ມກ/100 ມລ ຢ່າງໜ້ອຍ 1 ຫາ 2 ຈອກ (200 ຫາ 400 ມິນລິລິດ) ທຸກໆ 20 ຫາ 30 ນາທີ.

ກວດກາສະພາບຂອງສຸຂະພາບກ່ອນທີ່ຈະເຮັດວຽກ

ໂລກແຄດລົມ ຍັງມີຫຼາຍຢ່າງທີ່ກ່ຽວຂ້ອງກັບ ສະພາບທາງດ້ານຮ່າງກາຍຂອງຜູ້ອອກແຮງງານ. ຍົກຕົວຢ່າງຂອງມາດຕະການທີ່ຊັດເຊນ, ຢູ່ບ່ອນເຮັດວຽກບາງບ່ອນ ໃນລະຫວ່າງການລວມຕອນເຊົ້າກ່ອນການເຮັດວຽກ ຜູ້ບໍລິຫານທຸລະກິດ - ຜູ້ຈັດການ ຈະນຳໃຊ້ “ລາຍການກວດກາສຸຂະພາບຮ່າງກາຍ” ເພື່ອກວດເບິ່ງ ຈຳນວນການນອນໃນຄືນກ່ອນ, ການຟື້ນຟູຈາກຄວາມເມື່ອຍລ້າຈາກມື້ກ່ອນ, ກິນອາຫານເຊົ້າ ຫຼື ບໍ່ ແລະ ອື່ນໆ.

ຜົນຂອງການກວດກາ, ຖ້າຜູ້ອອກແຮງງານຖືກກວດພົບວ່າ ມີຄວາມສ່ຽງຕໍ່ການໂລກລົມແດດ, ກໍຈະນຳໃຊ້ມາດຕະການ ໂດຍການມອບໝາຍໃຫ້ໄປເຮັດວຽກວຽກທີ່ມີພາລະໜ້ອຍ ເປັນຕົ້ນ.

ຕົວຢ່າງ “ລາຍການກວດກາສະພາບຮ່າງກາຍ” ສຳລັບການກວດກາສະພາບຮ່າງກາຍຂອງທຸກຄົນທີ່ເຮັດວຽກຢູ່ພາກສະໜາມ ແມ່ນ ດັ່ງທີ່ສະແດງໃຫ້ເຫັນດ້ານລຸ່ມນີ້ (ຕາຕະລາງ 2-2).

ຕາຕະລາງ 2-2 ລາຍການກວດກາສະພາບຂອງສຸຂະພາບກ່ຽວກັບໂລກລົມແດດດ້ວຍຕົນເອງ

ເອກະສານກວດກາສະພາບຂອງສຸຂະພາບດ້ວຍຕົນເອງກ່ຽວກັບໂລກແດດລົມ										
ຊື່ວຽກກໍ່ສ້າງ:							ສັງກັດຢູ່ບໍລິສັດ/ການຈັດຕັ້ງ:			
							ຊື່ ແລະ ນາມສະກຸນ:			
● "ໃບກວດກາ" ນີ້ ແມ່ນ "ໃບກວດກາ" ສຳລັບຜູ້ອອກແຮງງານໃນການກວດສະພາບຮ່າງກາຍຂອງຕົນເອງໃນທຸກໆມື້. ● ໃຫ້ກວດກາສະພາບຂອງຮ່າງກາຍ ໃນເວລາປະຊຸມຕອນເຊົ້າ ແລະ ຕອນພັກຜ່ອນ. ● ສຳລັບຜູ້ທີ່ພົບອາການໃນການກວດກາ ໃນເວລາພັກຜ່ອນ ແມ່ນ ໃຫ້ແຈ້ງຫົວໜ້າ ຫຼື ພະນັກງານ. ● ສຳລັບຫົວໜ້າ ໃຫ້ເບິ່ງເຈ້ຍກວດກາຂອງຜູ້ອອກແຮງງານແຕ່ລະຄົນແລ້ວ ຫົວໜ້າຄວນເບິ່ງໃບກວດກາຂອງພະນັກງານແຕ່ລະຄົນ ແລ້ວພະຍາຍາມຮັບມືຢ່າງຮີບດ່ວນ.										
ການຈັດປະເພດ		No.	ລາຍການກວດກາ	/	/	/	/	/	/	
ເຈົ້າຕອງສັງເກດເບິ່ງຜູ້ທີ່ມີອາການເຫຼົ່ານີ້	ວິທີປ້ອງກັນ ແລະ ການຮັກສາ		ບຸກຄົນຕໍ່ໄປນີ້ເປັນຄົນທີ່ເປັນໂລກລົມແດດງ່າຍ.							
		1	ຜູ້ສູງອາຍຸ (ອາຍຸ 65 ປີຂຶ້ນໄປ).							
		2	ເຄີຍເປັນໂລກກ້າມເນື້ອຫົວໃຈຕາຍ ແລະ ໂລກຫຼອດເລືອດຫົວໃຈ.							
		3	ທີ່ຜ່ານມາເຄີຍເປັນໂລກລົມແດດ.							
		4	ມີຄວາມດັນເລືອດສູງ.							
		5	ຕຸ້ຍ.							
		6	ເປັນຫວັດ ແລະ ເປັນໄຂ້.							
		7	ມີອາການຖອກທ້ອງ.							
		8	ເມົາຄ້າງ.							
		9	ບໍ່ໄດ້ກິນເຂົ້າເຊົ້າ.							
		10	ນອນບໍ່ພໍ.							
ການຮັກສາເບື້ອງຕົ້ນ	I ໂຣກກ່ຽວກັບຜິວໜັງ		ບຸກຄົນຕໍ່ໄປນີ້ເປັນຄົນທີ່ເປັນໂລກລົມແດດ.							
		11	ວິນຫົວ, ເມົາຫົວ.							
		12	ເຖິງຈະເຊັດ ເຫື່ອກະຍັງອອກ.							
		13	ຮູ້ສຶກປວດແຂນຂາ ແລະ ຮ່າງກາຍບາງສ່ວນ.							
	II ໂຣກກ່ຽວກັບລະບົບປະສາດ	14	ເຈັບຫົວ.							
		15	ຮູ້ສຶກປວດຮາກ.							
		16	ຮູ້ສຶກບໍ່ມີແຮງ.							
		17	ຄວາມສາມາດໃນການພິຈາລະນາ - ຄວາມສາມາດໃນການຕັ້ງສະຕິ ຫຼຸດລົງ.							
	III ໂຣກກ່ຽວກັບລະບົບໄຫຼວຽນ	18	ບໍ່ມີສະຕິ (ໝົດສະຕິ).							
		19	ມີອາການຊັກ ຫຼື ສັ່ນ.							
		20	ອຸນຫະພູມຮ່າງກາຍສູງ.							
		21	ບໍ່ຕອບສະໜອງຕໍ່ການເອີ້ນ (ບໍ່ໄດ້ຍິນ/ຫູອື້).							
		22	ບໍ່ສາມາດຍ່າງຊື່ໄດ້. ບໍ່ສາມາດແລ່ນໄດ້.							
●ມີວິທີການກວດອຸນຫະພູມຮ່າງກາຍ ແລະ ກຳມະຈອນ ເປັນຫຼັກການໃນການພິຈາລະນາກ່ຽວກັບໂລກລົມແດດ. ຫາກມີ ອຸນຫະພູມ ສູງກວ່າຄ່າລຸ່ມນີ້ ແມ່ນມີຄວາມເປັນໄປໄດ້ທີ່ຈະເປັນໂລກແດດລົມ. ●ໃນກໍລະນີທີ່ສົງໄສວ່າເປັນໂລກລົມແດດ ແມ່ນໃຫ້ຮີບຮ້ອນໄປພົບແພດໝໍເພື່ອຮັບການ ເຊັກສຸຂະພາບ ແລະ ປິ່ນປົວ.										

ແຫຼ່ງທີ່ມາ: "ຄູ່ມືມາດຕະການປ້ອງກັນໂລກລົມແດດຢູ່ວຽກພາກສະໜາມ" 03/2018, ໜ່ວຍງແຮງງານ ແລະ ສຸຂະອະນາໄມ, ພະແນກຄວາມປອດໄພ ແລະ ສຸຂະອະນາໄມ, ກົມມາດຕະຖານແຮງງານ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ການຮັກສາ ສຸຂະພາບ ແລະ ອາຫານ 1 ຄວາມສົມດຸນທາງດ້ານອາຫານ ແລະ ພຶດຕິກຳການ ໃນການບໍລິໂພກອາຫານ

ຄຳແນະນຳກ່ຽວກັບອາຫານ - ວິທີການກິນອາຫານທີ່ດີຕໍ່ຄວາມສົມດຸນທາງໂພຊະນາການ

ຄູ່ມືອາຫານ ແມ່ນ ຄຳສັບທົ່ວໄປ ສຳລັບສື່ສານຄວາມຮູ້ດ້ານໂພຊະນາການທີ່ສະແດງໃຫ້ເຫັນວ່າກິນຫຍັງ ແລະ ປະລິມານເທົ່າໃດ ເພື່ອສຸຂະພາບທີ່ດີ. ຄູ່ມືອາຫານ ແມ່ນ ໄດ້ຮັບການພັດທະນາຢ່າງເປັນເອກະລາດໂດຍແຕ່ລະປະເທດທົ່ວໂລກ. ໃນປະເທດຍີ່ປຸ່ນ, ຄູ່ມືອາຫານໄດ້ຖືກສ້າງຂຶ້ນຮ່ວມກັນກັບກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ແລະ ກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ ໃນປີ 2005 (ຫຼັງຈາກນັ້ນ ມີການປ່ຽນແປງຕາມການດັດແກ້ມາດຕະຖານການບໍລິໂພກອາຫານສຳລັບຄົນຍີ່ປຸ່ນ (ສະບັບປີ 2010)). ມັນ ແມ່ນ “ຄູ່ມືອາຫານສົມດູນ” (ຮູບ 2-6).

ລັກສະນະຕົ້ນຕໍຂອງຄູ່ມືອາຫານສົມດູນ ແມ່ນ ມັນຊີ້ໃຫ້ເຫັນວ່າ ໃນສະພາບທີ່ຢູ່ໂຕະອາຫານ ແລະ ສິ່ງທີ່ເບິ່ງເຫັນ ຄວນຈະກິນ “ຫຍັງ” ດີ ແລະ ໃນ “ປະລິມານເທົ່າໃດ” ຫຼືເວົ້າງ່າຍໆ ກໍຄື “ອາຫານ”. ການນຳໃຊ້ຮູບຮ່າງຂອງເຄື່ອງຫຼິ້ນແບບດັ້ງເດີມຂອງຍີ່ປຸ່ນ ເພື່ອບອກລາຍການອາຫານທີ່ຄວນກິນຫຼາຍທີ່ສຸດຕໍ່ມື້ ເຊິ່ງແບ່ງອອກເປັນ 5 ຊະນິດ, ຈາກເທິງລົງລຸ່ມ: “ອາຫານຫຼັກ”, “ແນວກິນກັບ”, “ຂອງກິນຈານຫຼັກ”, “ນົມ - ຜະລິດຕະພັນນົມ” ແລະ “ໝາກໄມ້”. ອາຫານຫຼັກ ແມ່ນ ເຂົ້າ, ເຂົ້າຈີ່, ໝໍ່ໄມ້, ແລະອື່ນໆ, ແນວກິນກັບ ແມ່ນ ອາຫານທີ່ມີສ່ວນປະກອບຕົ້ນຕໍເປັນຜັກ, ມັນຕົ້ນ, ສາລີ, ແລະ ເຫັດ, ແລະ ຂອງກິນຈານຫຼັກ ແມ່ນ ອາຫານທີ່ມີສ່ວນປະກອບຕົ້ນຕໍ ປາ, ຊີ້ນ, ໄຂ່, ຖົ່ວເຫຼືອງ, ຜະລິດຕະພັນຖົ່ວເຫຼືອງ.

ການແນະນຳສິ່ງທີ່ຄວນກິນ ແລະ ຄວນກິນປະລິມານເທົ່າໃດ


ສະນັ້ນ ໃຫ້ໃຊ້ “ຄູ່ມືອາຫານສົມດູນ” ເພື່ອໃຫ້ທຸກຄົນຊອກເບິ່ງວ່າ ຄວນກິນສິ່ງໃດ ແລະ ຄວນກິນຫຼາຍປານໃດ. ຂັ້ນຕອນ ແມ່ນ ມີດັ່ງນີ້:

① ທຳອິດ, ນັບຈຳນວນອາຫານຫຼັກ, ແນວກິນກັບ, ຂອງກິນຈານຫຼັກ, ແລະ ອື່ນໆ (ຈຳນວນໜ່ວຍບໍລິໂພກ) ໂດຍອີງໃສ່ປະລິມານກິດຈະກຳປະຈຳວັນໃນ 1 ມື້ຂອງທ່ານ (ຕາຕະລາງ 2-3). ຈຳນວນໜ່ວຍບໍລິໂພກ ຈະນັບເປັນ “x ອັນ”.

② ເລືອກອາຫານຈາກຕາຕະລາງຕາມຈຳນວນທີ່ນັບໄດ້ໃນຂໍ້ ① (ຈຳນວນໜ່ວຍບໍລິໂພກ). ນີ້ ແມ່ນ ຄຳແນະນຳປະຈຳວັນກ່ຽວກັບການກິນອາຫານທີ່ສົມດູນດີ.

ຕົວຢ່າງ, ຈາກຕາຕະລາງ 2-4, ສຳລັບຈຳນວນການບໍລິໂພກ (ປະລິມານກິດຈະກຳ ແມ່ນ ຫຼາຍ) ເຊິ່ງຕໍ່ໄປນີ້ ສາມາດຖືວ່າ ເປັນອາຫານທີ່ສົມດູນດີ ສຳລັບ 1 ມື້.

· ສຳລັບ ອາຫານຫຼັກ (ຈຳນວນໜ່ວຍບໍລິໂພກ/8), ເຂົ້າຖ້ວຍໃຫຍ່ 3 ຖ້ວຍ (2 ໜ່ວຍບໍລິໂພກ x 3) = 6, ລວມ ອຸດົ້ງ 2, ເທົ່າກັບ 8 ໜ່ວຍບໍລິໂພກ.
· ແນວກິນກັບ (ຈຳນວນໜ່ວຍບໍລິໂພກຂອງຕົນເອງ/7): ຖົ່ວຂຽວ 1, ຜັກສະຫຼັດດິບ 1, ຄົມປຸລະໂງໂບ 1, ຂົ້ວຜັກ 2, ແກງມິໂຊ 1 ແລະ ນ້ຳປັ່ນຜັກ 1, ລວມ ເປັນ 7 ໜ່ວຍບໍລິໂພກ.
· ສຳລັບຂອງກິນຈານຫຼັກ (ຈຳນວນໜ່ວຍບໍລິໂພກຂອງຕົນເອງ/6), ປີ້ງໄກ່ 2, ແຮັມເບີເກີ 3, ແລະ ໄຂ່ດາວ 1, ລວມເປັນ 6 ໜ່ວຍບໍລິໂພກ.
· ສຳລັບນົມ/ຜະລິດຕະພັນນົມ (ຈຳນວນໜ່ວຍບໍລິໂພກຂອງຕົນເອງ/3), ນົມ 2 (200ml) ແລະ ໂຢເກີດ 1 (1 ປ່ອງ) ທັງໝົດ 3 ໜ່ວຍບໍລິໂພກ.
· ໝາກໄມ້ (ຈຳນວນໜ່ວຍບໍລິໂພກຂອງຕົນເອງ/3): ໝາກກ້ຽງ 1, ໝາກແອັບເປີ້ນ 1 ແລະ ໝາກກ້ວຍ 1, ລວມທັງໝົດ ເປັນ 3 ໜ່ວຍບໍລິໂພກ



ຄູ່ມືການກິນຢ່າງສົມດຸນ

ການກິນເຂົ້າຂອງເຈົ້າ ໂອເຄບໍ່?

ສ່ວນ 1 ມື້	ຕົວຢ່າງອາຫານ
ປະລິມານພະລັງງານທີ່ຄາດຄະເນ 2.200Kcal ± 200Kcal (ຮູບແບບພື້ນຖານ)	
5~7 ສ່ວນບໍລິໂພກ (SV) **ອາຫານຫຼັກ** (ເຂົ້າ, ເຂົ້າຈີ່, ເສັ້ນໝີ່) ຖ້າເປັນເຂົ້າຈ້າວ (ຖ້ວຍກາງ) ແມ່ນ ປະມານ 4 ຖ້ວຍ	1 ສ່ວນບໍລິໂພກ = ເຂົ້າຈ້າວ 1 ຖ້ວຍນ້ອຍ = ເຂົ້າປັ້ນ 1 ໜ່ວຍ = ເຂົ້າຈີ່ແຜ່ນ 1 ແຜ່ນ = ເຂົ້າຈີ່ 2 ກ້ອນ 1,5 ສ່ວນບໍລິໂພກ = ເຂົ້າຈ້າວ 1 ຖ້ວຍກາງ; 2 ສ່ວນບໍລິໂພກ = ເສັ້ນຕົ້ງ 1 ຖ້ວຍ = ເສັ້ນໂຊບະ 1 ຈານ = ສະປາເກັດຕີ
5~6 ສ່ວນບໍລິໂພກ (SV) **ແນວກິນກັບ** (ອາຫານປະເພດຜັກ, ເຫັດ, ມັນ, ສາລ່ຍທະເລ) ອາຫານປະເພດຜັກ ປະມານ 5 ຖ້ວຍ	1 ສ່ວນບໍລິໂພກ = ສະຫຼັດຜັກ = ໝາກແຕງດອງ ແລະ ສາລ່ຍວາກາອາເມ = ພາງ ມິໂສະລວມ = ຕົ້ມຜັກຫົ່ມ = ເຄື່ອງ ຕົ້ມໂຍເສ ສາລ່ຍຮິຈິກິ = ຖົ່ວຕົ້ມ = ຂົ້ວເຫັດ 2 ສ່ວນບໍລິໂພກ = ຕົ້ມຜັກ = ຂົ້ວຜັກ = ມັນຕົ້ມ
3~5 ສ່ວນບໍລິໂພກ (SV) **ຂອງກິນຈານຫຼັກ** (ອາຫານປະເພດຊີ້ນ, ປາ, ໄຂ່, ຖົ່ວເຫຼືອງ) ປະມານ 3 ຖ້ວຍຈາກອາຫານປະເພດຊີ້ນ - ປາ - ໄຂ່ - ຖົ່ວເຫຼືອງ	1 ສ່ວນບໍລິໂພກ = ເຕົ້າຫູ້ເປັນ = ນັດໂຕ (ໝາກຖົ່ວເນ້ຍີ່ປຸ່ນ) = ຈີນໄຂ່ຕົ້ວ 1-ຈານ; 2 ສ່ວນບໍລິໂພກ = ປີ້ງປາ = ປາຊຸບແປ້ງທອດ = ປາທູນາ ແລະ ປານົກ ຕົ້ນ 3 ສ່ວນບໍລິໂພກ = ສະເຕກແຮມເນີກິ = ປີ້ງໝູໃສ່ຂີ້ງ = ໄກ່ຊຸບແປ້ງທອດ
2 ສ່ວນບໍລິໂພກ (SV) **ນົມ - ຜະລິດຕະພັນນົມ** ຖ້າເປັນນົມ ແມ່ນ ປະມານ 1 ຕຸກ	1 ສ່ວນບໍລິໂພກ = ນົມເຄັ່ງຈອກ = ຊີດ 1 ສ່ວນ = ຊີດແຜ່ນ 1 ແຜ່ນ = ໂຢເກີດ 1 ກ່ອງ; 2 ສ່ວນບໍລິໂພກ = ນົມ 1 ຕຸກ
2 ສ່ວນບໍລິໂພກ (SV) **ໝາກໄມ້** ຖ້າເປັນໝາກກ້ຽງ ແມ່ນ ປະມານ 2 ໜ່ວຍ	1 ສ່ວນບໍລິໂພກ = ໝາກກ້ຽງ 1 ໜ່ວຍ = ໝາກແອັບເປິ້ນເຄັ່ງໜ່ວຍ = ໝາກພັນ 1 ໜ່ວຍ = ໝາກຫລີ່ເຄັ່ງໜ່ວຍ = ໝາກອະງຸ່ນຕື່ມ 1 ໜ່ວຍ = ໝາກກາຍ 1 ໜ່ວຍ

ຂໍ້ຕົກລົງຂອງກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ແລະ ກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ


* SV ແມ່ນ ໂຕຫຍໍ້ສຳລັບການເສີບ (ຫົວໜ່ວຍປະລິມານອາຫານທີ່ເສີບ)

ຮູບ 2-6 “ຄູ່ມືອາຫານສົມດຸນ” ຂອງປະເທດຍີ່ປຸ່ນ

ຮູບດ້ານເທິງ: ປະກອບດ້ວຍອາຫານ 5 ກຸ່ມ (ອາ ຫານຫຼັກ, ຂອງກິນຈານຫຼັກ, ນົມ - ຜະລິດຕະພັນນົມ, ໝາກໄມ້), ໃນນັ້ນ ຫາກຂາດສິ່ງໃດສິ່ງໜຶ່ງກໍ່ຈະເຮັດໃຫ້ ຮ່າງກາຍບໍ່ແຂງແຮງດີ (ພຶດຕິກຳການກິນອາຫານໃຫ້ສົມດຸນ).
ການອອກກຳລັງກາຍ: ຈຳເປັນຕ້ອງໄດ້ມີການອອກກຳລັງກາຍ ຄ້າຍໆກັບການປີ່ນໝາກຄ່າງເພື່ອໃຫ້ມັນຢູ່ໃນທ່າທາງທີ່ໝັ້ນຄົງ.
ນ້ຳ - ນ້ຳຊາ: ນ້ຳ ເຊັ່ນ: ນ້ຳດື່ມ ແລະ ນ້ຳຊາ ແມ່ນ ເປັນສິ່ງຈຳເປັນ ສຳລັບຮ່າງກາຍ, ເປັນຫຼັກ
ເຂົ້າຫນົມຫວານ ແລະ ເຄື່ອງດື່ມ ໃນປະລິມານທີ່ເໝາະສົມ: ເຮັດໜ້າທີ່ເປັນເຊືອກທີ່ໃຊ້ໃນການໝຸນ ຮ່າງກາຍ ຂອງຄົນເຮົາ

ແຫຼ່ງຂໍ້ມູນ: ເວັບໄຊກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ “ກ່ຽວກັບ “ຄູ່ມືອາຫານສົມດຸນ””

ຕາຕະລາງ 2-3 ນັບຈຳນວນໜ່ວຍບໍລິໂພກຂອງຕົນເອງ (ໜ່ວຍບໍລິໂພກ ຕໍ່ 1 ມື້)



ໝວດອາຫານ	ຈຳນວນການໃຫ້ບໍລິການ (ຫນຶ່ງ)			ໝາຍເລກຂອງຂ້ອຍ
ອາຫານຫຼັກ (ເຂົ້າຈ້າວ, ເຂົ້າໜົມປັງ, ເສັ້ນ)	4~5	5~7	7~8	
ແນວກິນກັບ ອາຫານເສີມ (ອາຫານປະເພດຜັກ)	5~6	5~6	6~7	
ອາຫານຈານຫລັກ (ອາຫານປະເພດຊີ້ນ - ປາ)	3~4	3~5	4~6	
ນົມ - ຜະລິດຕະພັນຈາກນົມ	2	2	2~3	
ໝາກໄມ້	2	2	2~3	
ພະລັງງານ (Kcal)	1800 ±200	2200 ±200	2600 ±200	

*** ວິທີການເບິ່ງຈຳນວນກິດຈະກຳ**

"ຕ່ຳ" : ນັ່ງເກືອບໝົດມື້

ໃນກໍລະນີ ເປັນ ພະນັກງານປ່າໄມ້, ຫາກປະລິມານການເຮັດກິດຈະກຳຂອງລາວ ສູງກວ່າ "ປົກກະຕິ", ແມ່ນ ຈະກຳນົດໃຫ້ເປັນ ອາຫານຫຼັກ 7 ຫາ 8ໜ່ວຍ ແລະ ແນວກິນກັບ 6 ຫາ 7ໜ່ວຍ. ໂດຍສະເພາະ ຫາກລະດັບກິດຈະກຳ ມີ ລະດັບທີ່ສູງ ແມ່ນ ໃຫ້ເພີ່ມຂຶ້ນໄປຕາມຄວາມເໝາະສົມ. ໃຫ້ຕື່ມຂໍ້ມູນໃສ່ໃນຊ່ອງ "ຈຳນວນຂອງຂ້ອຍ" ທີ່ຢູ່ເບື້ອງຂວາມື.

ແຫຼ່ງຂໍ້ມູນ: ເວັບໄຊກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ "ກ່ຽວກັບ "ຄູ່ມືອາຫານສົມດູນ""

ຕາຕະລາງ 2-4 ຕາຕະລາງອ້າງອີງດ່ວນ ສຳລັບ ຈຳນວນໜ່ວຍບໍລິໂພກ (SV) ຂອງ ອາຫານ - ແນວກິນຫຼັກ

ລາຍການອ້າງອີງດ່ວນຂອງອາຫານຫຼັກ/ອາຫານ (SV)

	ຊື່ອາຫານ	ອາຫານຈານຫຼັກ	ອາຫານເສີມ	ຂອງກິນຈານຫຼັກ	ຜັກ-ໝາກໄມ້	ໝາກໄມ້
ອາຫານຫຼັກ	ເຂົ້າຈ້າວ (ຖ້ວຍນ້ອຍ)	1	—	—	—	—
	ເຂົ້າຈ້າວ (ຖ້ວຍທຳມະດາ)	1.5	—	—	—	—
	ເຂົ້າຈ້າວ (ຖ້ວຍໃຫຍ່)	2	—	—	—	—
	ເຂົ້າປະສົມ (ຖ້ວຍທຳມະດາ)	1.5	—	—	—	—
	ເຂົ້າປັ້ນ	1	—	—	—	—
	ຊູຊິ (ຊູຊິແບບປັ້ນ 8 ກ້ອນ)	2	—	2	—	—
	ໂອຢາໂກດົງ	2	1	2	—	—
	ເຕັນດົງ	2	—	1	—	—
	ຄັດຊຸດົງ	2	1	3	—	—
	ເຂົ້າລາດໜ້າກະລ	2	2	2	—	—
	ເຂົ້າພັດ	2	1	2	—	—
	ມາກາໂລນີຄຸລາຕັນ	1	—	—	2	—
	ເຂົ້າໜົມປັງ (6 ແຜ່ນ)	1	—	—	—	—
	ເຂົ້າໜົມປັງມ້ວນ (2 ກ້ອນ)	1	—	—	—	—
	ແຊນວິດປະສົມ	1	1	1	1	—
	ແຮມເບີເກີ້	1	—	2	—	—
	ອຸດົງ/ໂຊບະ/ລາເມັງ	2	—	—	—	—
	ສະປາເກັດຕີ້	2	1	—	—	—
	ຢາກິໂຊບະ	1	2	1	—	—
	ສາລະເປົາຊີ້ນ	1	—	—	—	—
	ໂອໂຄໂນມິຢາກິ	1	1	3	—	—
	ທາໂກຢາກິ	1	—	1	—	—
ກຸ່ມຜັກ-ໝາກໄມ້	ໝາກເລັ່ນ/ຖົ່ວລັນເຕົາ	—	1	—	—	—
	ສະລັດຜັກ	—	1	—	—	—
	ຂອງດອງ/ຜັກໜົມຕົ້ມ	—	1	—	—	—
	ນ້ຳສະລັດອາເອໂມະໂນ/ນ້ຳສະລັດງ່າ	—	1	—	—	—
	ຄິງປຸລະໂງໂບ	—	1	—	—	—
	ຂົ້ວຜັກ	—	2	—	—	—
	ຕົ້ມແຜກ (ໂຄະບາຈິ)	—	1	—	—	—
	ຕົ້ມແຜກ (ນາກາບາຈິ)	—	2	—	—	—
	ສະລັດມັນຝຣັ່ງ	—	1	—	—	—
	ຈຶ່ນມັນຝຣັ່ງ	—	1	—	—	—
	ໂຄລົກເກາະ	—	2	—	—	—
	ຕົ້ມມັນດ່ຳ	—	2	—	—	—
	ຂົ້ວເຫັດ	—	1	—	—	—
	ສະລັດສາລ່າຍ	—	1	—	—	—
	ຣິຈິກິນິໂມໂນະ	—	1	—	—	—
	ແກງມິໂຊະກຸດະກຸຊັ່ງ	—	1	—	—	—
	ແກງສາລີ	—	1	—	—	—
	ນ້ຳຜັກ	—	1	—	—	—

	ຊື່ອາຫານ	ອາຫານຈານຫຼັກ	ອາຫານເສີມ	ຂອງກິນຈານຫຼັກ	ຜັກ-ໝາກໄມ້	ໝາກໄມ້
ຊີ້ນ	ໄສ້ກອກ	—	—	1	—	—
	ໄກ່ປີ້ງ (2 ຕ່ອນ)	—	—	2	—	—
	ຄາລາອາເກະ (3 ກ້ອນ)	—	—	3	—	—
	ກ້ຽວຊ້ຳ - ຕົ້ມຊ້ຳ (5 ກ້ອນ)	—	1	2	—	—
	ພັດຊີ (3 ຕ່ອນ)	—	—	3	—	—
	ທົງຄັດຊຸ	—	—	3	—	—
	ແຮມເບີກ	—	1	3	—	—
	ມິນິແຮມເບີກ	—	—	1	—	—
	ຂົ້ວຜັກໃສ່ຊີ້ນ	—	2	2	—	—
	ຂົ້ວມັນຝຣັ່ງໃສ່ຊີ້ນ(ນາກາບາຈິ)	—	3	1	—	—
	ລາກູຄິມ	—	3	2	1	—
	ຊາຊິມິ(ປະມານ 6 ປ່ຽງ)	—	—	2	—	—
	ປີ້ງປາ/ຕົ້ມປາ	—	—	2	—	—
	ຈຶ່ນປາ	—	—	2	—	—
	ເທັມປູລະລວມ	—	1	2	—	—
	ໄຂ່ດາວ/ຈຶ່ນໄຂ່ (ສ່ວນ ໄຂ່ 1 ໜ່ວຍ)	—	—	1	—	—
	ຈຶ່ນໄຂ່ (ສ່ວນ ໄຂ່ 2 ໜ່ວຍ)	—	—	2	—	—
	ນັດໂຕ	—	—	1	—	—
	ເຕົາຮູ້ເຢັນ	—	—	1	—	—
	ຂົ້ວເຕົາຮູ້	—	—	2	—	—
ຜັກ-ໝາກໄມ້	ນົມງົວ (200 ml)	—	—	—	2	—
	ໂຢເກີດ (1 ກ່ອງ)	—	—	—	1	—
	ຊີດປຸງແຕ່ງ (1 ແຜ່ນ)	—	—	—	1	—
ໝາກໄມ້	ໝາກກ້ຽງ/ໝາກພັບ (1 ໜ່ວຍ)	—	—	—	—	1
	ໝາກແອັບເປິ້ນ/ໝາກສາລີ້ (ເຄິ່ງໜ່ວຍ)	—	—	—	—	1
	ສະຕໍເບີຣີ (6 ໜ່ວຍ)	—	—	—	—	1
	ກ້ວຍ (1 ໜ່ວຍ)	—	—	—	—	1
	ນ້ຳໝາກໄມ້ 100%	—	—	—	—	1

*"ໜ່ວຍບໍລິໂພກ (SV)" ແມ່ນ ຄິດໄລ່ໂດຍອີງໃສ່ປະລິມານມາດຕະຖານທີ່ຜູ້ໃຫຍ່ກິນ. ສຳລັບເດັກນ້ອຍ, ປະລິມານສຳລັບ 1 ຄົນ ບາງຄັ້ງກໍອາດຈະໜ້ອຍກ່ອນນີ້.

ຕາຕະລາງອ້າງອີງແຄລໍລີແບບດ່ວນຂອງ Himo (ຂອງຫວານ - ເຄື່ອງດື່ມ)

ຊື່	kcal
ເຂົ້າຈີ່ເມລ້ອນ (1 ກ້ອນ)	443kcal
ເຄັກ (1 ປ່ຽງ)	378kcal
ກະແລ້ມ(1 ກ້ອນນ້ອຍ)	270kcal
ເຂົ້າໜົມໄດຟຸຄຸໂມຈິ (1 ກ້ອນ)	255kcal
ເຂົ້າໜົມໂດລາຢາກິ (1 ກ້ອນ)	241kcal
ເຂົ້າໜົມຄຸກກີ້ (6 ແຜ່ນ)	233kcal
ນ້ຳໂຄລາ (500 ml)	230kcal
ເຂົ້າໜົມຢັດໄສ້ອັງປັ່ງ (1 ກ້ອນ)	218kcal

ຊື່	kcal
ເຂົ້າໂຄບ (3 ແຜ່ນ)	206kcal
ເຂົ້າຈີ່ຄີມ (1 ກ້ອນ)	201kcal
ເຂົ້າໜົມຊູຄີມ (1 ກ້ອນ)	191kcal
ໂດນັດ (1 ກ້ອນ)	177kcal
ມັນຝຣັ່ງທອດ (ປະມານ 1/2 ຖົງ)	166kcal
ເຄື່ອງດື່ມຊູກຳລັງ (500 ml)	135kcal
ເຄັກຄາດສະຕາດ (1 ກ້ອນ)	128kcal
ພຸດດິ້ງ (1 ກ້ອນ)	113kcal

ຊື່	kcal
ວຸ້ນ (1 ກ້ອນ)	102kcal
ເຂົ້າໜົມອົມຊ໊ອກໂກແລັດ (20 g)	100kcal
ຊ໊ອກໂກແລັດ (ປະມານ 1/4 ແຜ່ນ)	84kcal
ເຂົ້າໜົມອົມ (3 ກ້ອນ)	78kcal
ກາເຟກະປ໋ອງ	72kcal
ກະແລ້ມເຊີເບັດ (1 ກ້ອນ)	70kcal

* ຈຳນວນແຄລໍລີ ໃນກໍລະນີທີ່ອີງໃສ່ປະລິມານມາດຕະຖານ. ບາງຄັ້ງ ມັນອາດຈະແຕກຕ່າງກັນໄປໂດຍຂຶ້ນກັບຄວາມໃຫຍ່.

(ກ່ຽວກັບຮູບທີ 2-6) ຄຳວ່າ ເຊືອກ ໃນຕາຕະລາງ "ເຊືອກ (ຂອງ ຫວານ - ເຄື່ອງດື່ມ)" ໝາຍເຖິງ ເຊືອກທີ່ໃຊ້ໝຸນ ຮ່າງກາຍ ຂອງຄົນເຮົາ. ຄວາມຄ້າຍຄືກັນກັບຄວາມຮັບຜິດຊອບສຳລັບການ ປັ້ນໝາກຄ່າງ (ພຶດຕິກຳການກິນອາຫານໃຫ້ສົມດຸນ).

ແຫຼ່ງຂໍ້ມູນ: ເວັບໄຊກະຊວງກະສິກຳ, ປ່າໄມ້ ແລະ ການປະມົງ "ກ່ຽວກັບ "ຄູ່ມືອາຫານສົມດຸນ""

ການຮັກສາ ສຸຂະພາບ ແລະ ອາຫານ 2 ການບໍລິຫານ, ຮັດສາສຸຂະພາບຈິດໃຈ ແລະ ຮ່າງກາຍ

ການກວດກາຮ່າງກາຍ ແລະ ຈິດໃຈ - ດູແລສຸຂະພາບ ດ້ວຍລາຍການກວດກາສຸຂະພາບດ້ວຍຕົນເອງຂອງ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຄວາມເມື່ອຍລ້າສະສົມທີ່ບໍ່ສາມາດຟື້ນຟູນໄດ້ຈາກການນອນລັບ ແລະ ການກິນ ຈະນຳໄປສູ່ຄວາມເສຍຫາຍຕໍ່ສຸຂະພາບໄດ້. ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ໄດ້ສ້າງລາຍການກວດກາທີ່ອະນຸຍາດໃຫ້ຜູ້ອອກແຮງງານສາມາດກວດກາຄວາມເມື່ອຍລ້າສະສົມດ້ວຍຕົນເອງ (ຕາຕະລາງ 2-5 ແລະ 2-6). ກ່ອນທີ່ຈະຮູ້ສຶກວ່າມີຄວາມເມື່ອຍລ້າສະສົມ ກໍສາມາດໃຊ້ລາຍການກວດການີ້ໄດ້ ເພື່ອຊ່ວຍຮັກສາສຸຂະພາບ.

ການກວດກາຈິດໃຈ - ລາຍການກວດກາຄວາມຄຽດຢູ່ບ່ອນເຮັດວຽກດ້ວຍຕົນເອງ

ທຸກສິ່ງທຸກຢ່າງທີ່ເກີດຂຶ້ນຢູ່ອ້ອມຕົວ, ລວມທັງສະພາບແວດລ້ອມການເຮັດວຽກ, ເນື້ອໃນການເຮັດວຽກ, ການພົວພັນລະຫວ່າງບຸກຄົນ ແລະ ອື່ນໆ, ສາມາດເປັນຄວາມເຄັ່ງຄຽດສຳລັບພວກເຮົາໄດ້. ເມື່ອຄວາມເຄັ່ງຄຽດເພີ່ມຂຶ້ນ ແລະ ສືບຕໍ່ເປັນເວລາດົນນານ, ຮ່າງກາຍຂອງພວກເຮົາຈະກາຍຂີດຈຳກັດໃນການປັບຕົວຂອງມັນ, ເຊິ່ງສົ່ງຜົນໃຫ້ເກີດການພັດທະນາສະພາວະທາງດ້ານຮ່າງກາຍ ແລະ ຈິດໃຈ ທີ່ເອີ້ນວ່າ ໂລກທີ່ກ່ຽວຂ້ອງກັບຄວາມເຄັ່ງຄຽດ.

ຄວາມເຄັ່ງຄຽດເປັນສິ່ງທີ່ເຮົາຫຼີກລ່ຽງບໍ່ໄດ້ໃນຊີວິດ, ແຕ່ຕາບໃດທີ່ເຮົາຮູ້ ແລະ ສາມາດຮັບມືກັບມັນໄດ້, ມັນຈະບໍ່ມີບັນຫາ. ນອກຈາກນັ້ນ, ຫາກໄດ້ຮັບການສະໜັບສະໜູນຈາກຫຼາຍຄົນຕາມຄວາມຮຽກຮ້ອງຕ້ອງການ ແລະ ຕອບສະໜອງຢ່າງເໝາະສົມ, ທ່ານຈະສາມາດມີຊີວິດທີ່ອຸດົມສົມບູນ ແລະ ປະສົບຜົນສຳເລັດໄດ້. ຖ້າຫາກຮູ້ສຶກເຄັ່ງຄຽດ, ຄວນປຶກສາຜູ້ຊ່ຽວຊານໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອປ້ອງກັນບໍ່ໃຫ້ມັນກາຍເປັນບັນຫາຮ້າຍແຮງ.

ນອກຈາກນັ້ນ, ສະຖານທີ່ເຮັດວຽກທີ່ມີຜູ້ອອກແຮງງານ 50 ຄົນຂຶ້ນໄປ ແມ່ນ ຕ້ອງປະຕິບັດລະບົບການກວດກາຄວາມເຄັ່ງຄຽດໂດຍອີງໃສ່ກົດໝາຍວ່າດ້ວຍການອອກແຮງງານ ຄວາມປອດໄພ ແລະ ສຸຂະອະນາໄມ (ປະກາດໃຊ້ໃນວັນທີ 25/06/2014, ບັງຄັບໃຊ້ໃນວັນທີ 1/12/2015). ການກວດກາຄວາມເຄັ່ງຄຽດ ແມ່ນ ດຳເນີນການໂດຍຜູ້ຊ່ຽວຊານພາຍນອກ ເຊັ່ນ: ທ່ານໝໍ ແລະ ພະຍາບານສຸຂະພາບ, ເຊິ່ງຜູ້ອອກແຮງງານຈະໄດ້ຮັບຜົນການກວດກາໂດຍກົງ ແລະ ກໍມີຂໍ້ຫ້າມໃນການສົ່ງຜົນດັ່ງກ່າວໄປຍັງບ່ອນເຮັດວຽກໂດຍບໍ່ໄດ້ຮັບຄວາມຍິນຍອມຈາກຜູ້ອອກແຮງງານ. ສາມາດເວົ້າໄດ້ວ່າ ຜູ້ອອກແຮງງານ ສາມາດນຳໄປໃຊ້ໄດ້ດ້ວຍຄວາມສະບາຍໃຈ.

ສຳລັບທຸລະກິດ ແມ່ນ ມີຜົນປະໂຫຍດມີດັ່ງນີ້:

- ຄວາມເປັນໄປໄດ້ທີ່ຈະເຂົ້າໃຈກ່ຽວກັບບັນຫາຂອງບ່ອນເຮັດວຽກທີ່ກ່ຽວຂ້ອງກັບສຸຂະພາບຈິດຂອງຜູ້ອອກແຮງງານ ເຊິ່ງໂດຍປົກກະຕິແລ້ວ ບັນຫານີ້ ເປັນສິ່ງຍາກທີ່ຕໍ່ການຮັບຮູ້ກ່ອນທີ່ມັນຈະກາຍເປັນບັນຫາທີ່ຮ້າຍແຮງ.
- ຈາກການທຳຄວາມເຂົ້າໃຈກ່ຽວກັບສະພາບການໃນປັດຈຸບັນ ຈະຊ່ວຍໃຫ້ສາມາດພິຈາລະນາກ່ຽວກັບປັບປຸງສະຖານທີ່ເຮັດວຽກຢ່າງເປັນຮູບປະທຳໄດ້ງ່າຍຂຶ້ນ.
- ການໃຊ້ມາດຕະການປັບປຸງບ່ອນເຮັດວຽກທີ່ໄດ້ຮັບການພິຈາລະນາ ຈະເປັນປະໂຫຍດຕໍ່ການດຳເນີນທຸລະກິດ ເຊັ່ນ: ຄວາມເຄັ່ງຄຽດຂອງພັກງານຈະຫຼຸດລົງ ແລະ ເຮັດໃຫ້ການຜະລິດແຮງງານດີຂຶ້ນ.

ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ໄດ້ສ້າງເວັບໄຊ ໄວ້ສຳລັບໃຫ້ທ່ານສາມາດກວດກາລະດັບຄວາມເຄັ່ງຄຽດໃນບ່ອນເຮັດວຽກດ້ວຍຕົນເອງໄດ້. ທ່ານສາມາດຮຽນຮູ້ກ່ຽວກັບລະດັບຄວາມເຄັ່ງຄຽດຂອງພະນັກງານຢູ່ບ່ອນເຮັດວຽກໄດ້ ໂດຍການຖາມຄຳຖາມງ່າຍໆໃນ 4 ຂັ້ນຕອນ. ກະລຸນາລອງນຳໃຊ້ຢູ່ໃນເວັບໄຊຂ້າງລຸ່ມນີ້.

ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ: ເວັບໄຊ “ກວດກາຄວາມເຄັ່ງຄຽດໃນບ່ອນເຮັດວຽກພາຍໃນ 5 ນາທີ”
(ນີ້ ແມ່ນ ການກວດກາດ້ວຍຕົນເອງ ທີ່ສ້າງຂຶ້ນໂດຍ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ພາຍໃຕ້ “ໂຄງການຕອບແບບສອບຖາມຄວາມເຄັ່ງຄຽດໃນການເຮັດວຽກແບບງ່າຍດາຍ”. ກ່ຽວກັບ “ລະບົບການກວດກາຄວາມເຄັ່ງຄຽດ ພື້ນຖານກົດໝາຍວ່າດ້ວຍຄວາມປອດໄພຂອງແຮງງານ ຄວາມປອດໄພ ແລະ ສຸຂະອະນາໄມ” ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ ເດືອນ 12 ປີ 2015, ການດຳເນີນ “ການກວດກາຄວາມເຄັ່ງຄຽດໃນບ່ອນເຮັດວຽກ 5 ນາທີດ້ວຍຕົນເອງ” ພຽງຢ່າງດຽວ ບໍ່ຖືວ່າເປັນການກວດກາຄວາມເຄັ່ງຄຽດຕາມກົດໝາຍ.

ເອກະສານ: ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ “Kokoro no mimi: ເວັບໄຊສຸຂະພາບຈິດສຳລັບຄົນເຮັດວຽກ”

ຕາຕະລາງ 2-5 ລາຍການກວດກາລະດັບຄວາມເມື່ອຍລ້າສະສົມຂອງຜູ້ອອກແຮງງານ ດ້ວຍຕົນເອງ 1

● ລາຍການກວດກາດ້ວຍຕົນເອງກ່ຽວກັບລະດັບຄວາມເມື່ອຍລ້າຂອງຜູ້ອອກແຮງງານ ●

ວັນທີການຂຽນ ປີ ເດືອນ ວັນ

ລາຍການກວດການີ້ ເປັນສິ່ງທີ່ກຳນົດຄວາມເມື່ອຍລ້າສະສົມຂອງຜູ້ອອກແຮງງານຈາກການເຮັດວຽກ ໂດຍອີງໃສ່ອາການສ່ວນຕົວ ແລະ ເງື່ອນໄຂການເຮັດວຽກ.

1 ກ່ຽວກັບອາການສ່ວນຕົວຂອງທ່ານໃນ 1 ເດືອນທີ່ຜ່ານມາ, ກະລຸນາໝາຍ ✓ ໃສ່ ☐ ທີ່ກົງກັບຄຳຖາມແຕ່ລະຂໍ້ທີ່ສຸດ.

1. ຫນຸດຫງິດ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
2. ກັງວົນ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
3. ກະວົນກະວາຍ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
4. ຮູ້ສຶກຊຶມເສົ້າ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
5. ບໍ່ສາມາດນອນຫຼັບດີ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
6. ຮູ້ສຶກບໍ່ສະບາຍ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
7. ບໍ່ມີສະມາທິໃນສິ່ງຕ່າງໆໄດ້	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
8. ມີຄວາມຜິດພາດຫຼາຍໃນສິ່ງທີ່ເຮັດ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
9. ຮູ້ສຶກເຫງົານອນຫຼາຍໃນຂະນະທີ່ເຮັດວຽກ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
10. ບໍ່ມີຄວາມກະຕືລືລົ້ນທີ່ຈະເຮັດ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
11. ເມື່ອຍລ້າ (ຍົກເວັ້ນຫຼັງຈາກອອກກຳລັງກາຍ)	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
12. ຕອນເຊົ້າ, ໃນເວລາຕື່ນນອນ, ຮູ້ສຶກອິດເມື່ອຍ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)
13. ເມື່ອຍງ່າຍກວ່າແຕ່ກ່ອນ	☐ ບໍ່ມີປານໃດ (0)	☐ ບາງຄັ້ງ (1)	☐ ຕະຫຼອດ (3)

ການປະເມີນຜົນຂອງອາການສ່ວນຕົວ ເພີ່ມຕົວເລກທັງໝົດໃນ ( ) ສຳລັບແຕ່ລະຄຳຕອບ. **ທັງໝົດ** _____ **ຄະແນນ**

I	0 ~ 4 ຄະແນນ	**II**	5 ~ 10 ຄະແນນ	**III**	11 ~ 20 ຄະແນນ	**IV**	21 ຄະແນນຂຶ້ນໄປ

2 ກ່ຽວກັບສະພາບເຮັດວຽກຂອງທ່ານໃນ 1 ເດືອນທີ່ຜ່ານມາ, ກະລຸນາໝາຍ ✓ ໃສ່ ☐ ທີ່ກົງກັບຄຳຖາມແຕ່ລະຂໍ້ທີ່ສຸດ.

1. ເຮັດວຽກລ່ວງເວລາ 1 ເດືອນ	☐ ບໍ່ມີ ຫຼື ເໝາະສົມ (0)	☐ ຫຼາຍ (1)	☐ ຫຼາຍເປັນຢ່າງຍິ່ງ (3)
2. ການເຮັດວຽກທີ່ບໍ່ປົກກະຕິ (ການປ່ຽນແປງຕາຕະລາງ, ການເຮັດວຽກກະທັນຫັນ)	☐ ໜ້ອຍ (0)	☐ ຫຼາຍ (1)	☐ -
3. ພາລະທີ່ກ່ຽວຂ້ອງກັບການເດີນທາງທາງທຸລະກິດ (ຄວາມຖີ່, ເວລາວຽກ, ຄວາມແຕກຕ່າງຂອງເວລາ ຕ່າງໆເປັນຕົ້ນ)	☐ ບໍ່ມີ ຫຼື ນ້ອຍ (0)	☐ ໃຫຍ່ (1)	☐ -
4. ພາລະທີ່ກ່ຽວຂ້ອງກັບວຽກກາງກະເດິກ (★1)	☐ ບໍ່ມີ ຫຼື ນ້ອຍ (0)	☐ ໃຫຍ່ (1)	☐ ໃຫຍ່ຫຼາຍ (3)
5. ຈຳນວນຂອງຊົ່ວໂມງພັກ - ນອນ ແລະ ສິ່ງອຳນວຍຄວາມສະດວກ	☐ ເໝາະສົມ (0)	☐ ບໍ່ເໝາະສົມ (1)	☐ -
6. ພາລະທາງຈິດໃຈກ່ຽວກັບການເຮັດວຽກ	☐ ນ້ອຍ (0)	☐ ໃຫຍ່ (1)	☐ ໃຫຍ່ຫຼາຍ (3)
7. ພາລະທາງກາຍກ່ຽວກັບການເຮັດວຽກ (★2)	☐ ນ້ອຍ (0)	☐ ໃຫຍ່ (1)	☐ ໃຫຍ່ຫຼາຍ (3)

★1: ກະລຸນາພິຈາລະນາຢ່າງຖີ່ຖ້ວນຈາກຄວາມຖີ່ ແລະ ຈຳນວນຊົ່ວໂມງໃນການເຮັດວຽກເດິກ (ໂອທີ) ເປັນຕົ້ນ. ການເຮັດວຽກກະເດິກ (ໂອທີ) ໝາຍເຖິງ ວຽກທີ່ລ່ວງເວລາກາງຄືນບາງສ່ວນ ຫຼື ທັງໝົດຂອງເວລາກາງຄືນ (22:00 ຫາ 05:00).
★2: ພາລະທາງກາຍ ເຊັ່ນ: ການເຮັດວຽກທາງດ້ານຮ່າງກາຍ ລວມມີການເຮັດ ວຽກເຢັນ - ວຽກຮ້ອນ

ການປະເມີນສະພາບການເຮັດວຽກ ເພີ່ມຕົວເລກທັງໝົດໃນ ( ) ສຳລັບແຕ່ລະຄຳຕອບ. **ທັງໝົດ** _____ **ຄະແນນ**

A	0 ຄະແນນ	**B**	1~ 2 ຄະແນນ	**C**	3 ~ 5 ຄະແນນ	**D**	6 ຄະແນນຂຶ້ນໄປ

ແຫຼ່ງຂໍ້ມູນ: "ການກວດກາລະດັບຄວາມເມື່ອຍລ້າສະສົມຂອງຜູ້ອອກແຮງງານ - ສຳລັບບຸກຄົນ - ສຳລັບຄອບຄົວ" ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ตาตะลาง 2-6 ลายการกวดกาละดับถวามเมื่อยล้าสะส์มของผู้ออกแรงงาน ด้วยต์นเอง1

ການປະເມີນລວມ

ນຳໃຊ້ຕາຕະລາງດ້ານລຸ່ມນີ້, ຄິດໄລ່ຄະແນນ (0 ~ 7) ສຳລັບ ຄວາມຮັບຜິດຊອບທີ່ເກີດຈາກການເຮັດວຽກ ຂອງທ່ານໂດຍອີງໃສ່ອາການສ່ວນຕົວ ແລະ ປະເມີນສະພາບການເຮັດວຽກ ຂອງທ່ານ.

ตาตะลางถะแนมถวามรับผิดชอบวรฺกงาน

		สะพาบของการเรัดวรฺก			
		A	B	C	D
ระดับอาการ	I	0	0	2	4
	II	0	1	3	5
	III	0	2	4	6
	IV	1	3	5	7

* สำลับท่านมีพะยาด เช่น: พะยาดเบิาหวาน ຫຼື พะยาดตั่งชั่, บางถั้งการปะเมินอาดจะบ่ถืกต้อง.

ถะแนม ถวามรับผิดชอบ วรฺกของเจ้าแม่น: [ ] ถะแนม (0 ~ 7)

	ถะแนม	ถวามรับผิดชอบ จากการเรัดวรฺก
การปะเมิน	0 ~ 1	ถืว่าต่ำ
	2 ~ 3	ถืว่าสูงพ้อยหนึ่ง
	4 ~ 5	ถืว่าสูง
	6 ~ 7	ถืว่าสูงหลาย

◯ มาดตะการป้องกันถวามเมื่อยล้าสะส์ม

ถวามรับผิดชอบของการเรัดวรฺกของท่านเป็นแนวใด? ลายการกวดกานี้ ช่วยให้ท่านสามาดกำนัด ถวามรับผิดชอบ ของ การเรัดวรฺกจากมุมมองการป้องกัน บันหาสุขะพาบ โดยพิจาละนาผ์นการสึกสาถื้นถว้า ทางการแพดที่ผ่านมา. ผู้ที่มี ถวามรับผิดชอบ 2 ~ 7 ถะแนม แม่น มีถวามเป็นไปได้ในการเมื่อยล้าสะส์ม เรื่มมี ถวามจำเป็นที่ต้องได้ปับปุง “สะพาบการเรัดวรฺก” (ลายการที่มีถะแนม 1 และ 3) ที่ละบุไว้ในลายการกวดกา ลายการที 2 (ตาตะลาง 2-5). สำลับหัวข้อที่สามาดปับปุงได้ด้วยดุมพิมิดของต์นเอง แม่น กะลุนาปับปุงแต่ละหัว ข้อด้วยต์นเอง. สำลับลายการที่บ่สามาดปับปุงได้ตามดุมพิมิดของต์นการตัดสินใจของเจ้าเอง, กะลุนาปึกสากับ ผู้คุมวรฺกของเจ้า, ຫຼື แพดอุดสาหะกำ แล้วให้พะยายามปับปุงสะพาบการเรัดวรฺกให้ดีขึ้น. อิกย่าง แม่น มิหลายอา การส่วนตัวที่เกิด จากสาเหดของการใช้ชิวิด เรื่งยู่นอกเหนือวรฺก สะนั้น จึ่งมีถวามสำถันย่างยิ่งที่ต้องได้เบิ่งถืน ก่รวกับการนอน ແລะ การพักผ่อน. เพื่อป้องกันบ่ให้มีถวามถวามเมื่อล้าสะส์ม แม่น เป็นสิ่งสำถันที่จะต้อง หุด ผ่อนพาละ ในละนะดรวกันกໍต้องนอนหลับ ແລะ พักผ่อนเป็นย่างดิ. การหุดชั่วโมงเรัดวรฺกให้สั้นล์ง ถืได้ว่าเป็น วิทีหนึ่งที่มีประสิดดิผ์นในการป้องกันการสะส์มของถวามเมื่อยล้า, เพาะมันช่วยหุดพาละของการเรัดวรฺก ແລะ เรัดให้นอนหลับง่ายขึ้น. หากเวลาเรัดวรฺกล่วงเวลาของเจ้าเกิน 45 ชั่วโมงต่เดือน, กะลุนาพิจาละนาก่รวกับการ หุดชั่วโมงเรัดวรฺกของเจ้า.

ที่มา: “การกวดกาละดับถวามเมื่อยล้าสะส์มของผู้ออกแรงงาน - สำลับบุกถ์น - สำลับถอบถ์ว” กะซวงสาทาละนะสุก, แรงงาน ແລะ สะหวัดดิการ

ຄຳແນະນຳໃນການປ້ອງກັນພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄັຍໃນການດຳລົງຊີວິດ

ພະຍາດຄວາມລົ້ງເຄັຍໃນການດຳລົງຊີວິດ ໝາຍເຖິງ ກຸ່ມພະຍາດທີ່ເລີ່ມມີອາການ ແລະ ລຸກລາມ ເຊິ່ງມັນໄດ້ຮັບອິດທິພົນຈາກພຶດຕິກຳໃນການໃຊ້ຊີວິດ ເຊັ່ນ ພຶດຕິກຳການກິນ, ພຶດຕິກຳການອອກກຳລັງກາຍ, ການພັກຜ່ອນ, ການສູບຢາ ແລະ ການດື່ມເຫຼົ້າ ແລະ ລວມເຖິງພະຍາດຕ່າງໆດັ່ງຕໍ່ໄປນີ້.

ພຶດຕິກຳການກິນອາຫານ: ພະຍາດເບົາຫວານທີ່ບໍ່ເພິ່ງພາອິນຊູລິນ, ໂລກອ້ວນ, ພາວະໄຂມັນໃນເສັ້ນເລືອດສູງ (ຍົກເວັ້ນພັນທຸກຳ), ພາວະກົດຢູລິກໃນເລືອດສູງ, ໂລກຫົວໃຈ ແລະ ຫຼອດເລືອດ (ຍົກເວັ້ນພັນທຸກຳ), ມະເຮັງລຳໄສ້ໃຫຍ່ (ຍົກເວັ້ນພັນທຸກຳ), ໂລກເຫືອກອັກເສບ ແລະ ອື່ນໆ.

ພຶດຕິກຳການອອກກຳລັງກາຍ: ພະຍາດເບົາຫວານທີ່ບໍ່ເພິ່ງພາອິນຊູລິນ, ໂລກຕຸ້ຍ, ພາວະໄຂມັນໃນເສັ້ນເລືອດສູງ (ຍົກເວັ້ນພັນທຸກຳ), ໂລກຄວາມດັນເລືອດສູງ ແລະອື່ນໆ.

ການສູບຢາ: ມະເຮັງປອດຂອງຈຸລັງສະຄວັມມັດ, ໂລກຫົວໃຈ ແລະ ຫຼອດເລືອດ (ບໍ່ລວມເປັນມາແຕ່ກຳເນີດ), ຫຼອດຫຼອດລົມອັກເສບຊຳເຮື້ອ, ໂລກຖົງລົມໃນປອດໂພງ, ໂລກເຫືອກອັກເສບ ແລະອື່ນໆ.

ດື່ມເຫຼົ້າ: ພະຍາດຕັບ, ແລະ ອື່ນໆ.

ຕໍ່ໄປນີ້ ເປັນ ຄຳແນະນຳ ສຳລັບການປ້ອງກັນພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄັຍໃນການດຳລົງຊີວິດ ເຊິ່ງແນະນຳໂດຍກະຊວງສາທາລະນະສຸກ, ແຮງງານແລະ ສະຫວັດດີການ.

- **ການອອກກຳລັງກາຍ - ການເຄື່ອນໄຫວຮ່າງກາຍ**

ການເຄື່ອນໄຫວຮ່າງກາຍຢ່າງແຂງແຮງ ແລະ ເປັນປະຈຳ, ສາມາດຫຼຸດຜ່ອນຄວາມສ່ຽງຂອງການເປັນເບົາຫວານ, ໂລກຫົວໃຈ, ໂລກເສັ້ນເລືອດໃນສະໝອງ, ມະເຮັງ, ອາການເຈັບຂາ ແລະ ແອວ, ອາການຊຶມເສົ້າ, ໂລກສະໝອງເສື່ອມ, ແລະ ອື່ນໆ.

ຕົວຢ່າງ, ລອງມາເຄື່ອນໄຫວຮ່າງກາຍທຸກໆມື້ ຈາກຕອນນີ້ໄປ ຫຼາຍຂຶ້ນມື້ລະ 10 ນາທີ ດີບໍ?

- **ໂພຊະນາການ - ພຶດຕິກຳໃນການກິນອາຫານ**

ການກິນອາຫານທີ່ສົມດູນເປັນປະຈຳ 3 ຄາບ ຕໍ່ມື້ ໃນປະລິມານ ແລະ ຄຸນນະພາບທີ່ເໝາະສົມຕໍ່ມື້ ແມ່ນ ພື້ນຖານຂອງຮ່າງກາຍທີ່ແຂງແຮງ. ເພື່ອປ້ອງກັນພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄັຍໃນການດຳລົງຊີວິດ ແມ່ນ ຈຳເປັນຕ້ອງໄດ້ປັບພຶດຕິກຳໃນການກິນອາຫານ. ນ້ຳຫນັກ ແມ່ນ ໂຕຊີ້ວັດທີ່ສຳຄັນຕໍ່ສະພາບຂອງສຸຂະພາບ ແລະ ໂພ ສະນາການ. ການມີນ້ຳໜັກເກີນ ອາດຈະພາໃຫ້ເກີດພະຍາດຕ່າງໆທີ່ກ່ຽວຂ້ອງກັບ ຄວາມລົ້ງເຄັຍໃນການດຳລົງຊີວິດ ເຊັ່ນ: ມະເຮັງ, ໂລກຫຼອດເລືອດໃນຫົວໃຈ ແລະ ພະຍາດເບົາຫວານ, ໃນຂະນະທີ່ການມີນ້ຳໜັກເກີນຍັງສາມາດເຮັດໃຫ້ເກີດການສູນເສຍຄວາມແຂງແຮງຂອງກະດູກໃນເພດຍິງ ແລະ ມີຄວາມສ່ຽງທີ່ຈະເກີດລູກທີ່ມີນ້ຳໜັກໜ້ອຍ ແລະ ເປັນເຫດເຮັດໃຫ້ເກີດຄວາມອ່ອນແອໃນຜູ້ສູງອາຍຸ. ມາຮູ້ຈັກກ່ຽວກັບນ້ຳໜັກທີ່ເໝາະສົມຂອງຕົນເອງ ແລະ ພະຍາຍາມຮັກສານ້ຳໜັກນັ້ນໄວ້.

ສຳລັບການກິນອາຫານ, ໃຫ້ກິນອາຫານໃນປະລິມານທີ່ເໝາະສົມ ໂດຍປະສົມປະສານ ອາຫານຫຼັກ, ຂອງກິນຈານຫຼັກ ແລະ ແນວກິນກັບ ດັ່ງທີ່ສະແດງຢູ່ໃນຕາຕະລາງ 2-3 ແລະ 2-4.

- **ການດື່ມເຫຼົ້າ**

ການດື່ມເຫຼົ້າຫຼາຍເກີນໄປສາມາດເຮັດໃຫ້ເກີດບັນຫາສຸຂະພາບຕ່າງໆ.

“ການດື່ມເຫຼົ້າກ່ອນນອນ” ກໍຍັງເປັນບັນຫາທີ່ໃຫຍ່. ການດື່ມເຫຼົ້າກ່ອນນອນຈະຊ່ວຍໃຫ້ນອນຫລັບໄດ້ດີຂຶ້ນ, ແຕ່ຈະບໍ່ສາມາດນອນຫລັບເລິກໄດ້ ແລະ ຄຸນນະພາບຂອງການນອນກໍຈະບໍ່ດີ. ຫາກມີບັນຫາໃນການນອນຫຼັບແທ້ໆ, ການໃຊ້ຢານອນຫຼັບໃນປະລິມານທີ່ເໝາະສົມຈະດີຕໍ່ສຸຂະພາບຫຼາຍກວ່າການດື່ມເຫຼົ້າກ່ອນນອນ. ກະລຸນາປຶກສາທ່ານໝໍ ປະຈຳຄອບຄົວ (ປະຈຳຕົວ) ຫຼື ຄລີນິກສຸຂະ ພາບຈິດ..

- **ຢາສູບ**

ເຖິງແມ່ນວ່າຈະສູບຢາມາຫຼາຍປີແລ້ວ ແຕ່ກໍບໍ່ເຄັຍຊ້າເກີນໄປຫາກຈະເຊົາສູບ. ຫາກເຊົາສູບຢາ, ຄວາມສ່ຽງຂອງພະຍາດຫົວໃຈຈະຫຼຸດລົງພາຍໃນ 24 ຊົ່ວໂມງ, ການເຮັດວຽກຂອງປອດຈະດີຂຶ້ນຫຼັງຈາກ 1 ປີ, ຄວາມສ່ຽງຕໍ່ການເປັນມະເຮັງປອດຈະເລີ່ມຫຼຸດລົງຫຼັງຈາກ 5 ປີ, ດັ່ງນັ້ນ ສຸຂະພາບຈະດີຂຶ້ນແນ່ນອນ.

ນອກຈາກນັ້ນ, ເຖິງແມ່ນວ່າຈະເປັນພະຍາດຢູ່ແລ້ວ, ຫາກເຊົາສູບຢາ ກໍຈະສາມາດຄາດຫວັງໄດ້ວ່າສຸຂະພາບຈະດີຂຶ້ນ, ສິ່ງສຳຄັນ ບໍ່ແມ່ນ ພຽງແຕ່ການປ້ອງກັນພະຍາດ ແຕ່ເປັນການຮັກສາສຸຂະພາບຂອງຕົນເອງນຳ.

ນອກຈາກນັ້ນ, ການກວດສຸຂະພາບເປັນປະຈຳ ແລະ ຮຽນຮູ້ກ່ຽວກັບພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄີຍໃນການດຳລົງຊີວິດທີ່ລະບຸໄວ້ດ້ານເທິງຍັງຈະຊ່ວຍໃຫ້ທ່ານປ້ອງກັນພະຍາດໄດ້ອີກດ້ວຍ.

ເອກະສານ: "ມາຮຽນຮູ້ກ່ຽວກັບພະຍາດທີ່ກ່ຽວຂ້ອງກັບຄວາມລົ້ງເຄີຍ ໃນການດຳລົງຊີວິດ!" ເວັບໄຊ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ໂຄງການຊີວິດອັດສະລິຍະ (Smart life project)

ຫົວຂໍ້

ເລີ່ມລະບົບການບໍລິຫານຄຸ້ມຄອງປ່າໄມ້ ແລະ ອາກອນປະກອບສ່ວນສິ່ງແວດລ້ອມປ່າໄມ້


ປ່າໄມ້ໃນປະເທດຍີ່ປຸ່ນ ເປັນ ປ່າໄມ້ທີ່ກ້າວເຂົ້າສູ່ຍຸກໃໝ່ ແລະ ມີການນຳໃຊ້ປ່າຢ່າງຮອບດ້ານ, ທີ່ເວົ້າວ່າ ພາຍຫຼັງສິ້ນສຸດສົງຄາມ, ການປູກປ່າ ຫຼ ປ່າທີ່ສ້າງຂຶ້ນໂດຍມະນຸດໃນຊ່ວງໄລຍະເວລາທີ່ມີການຈະເລີນເຕີບໂຕທາງເສດຖະກິດສູງ ໄດ້ຖືກດູແລ ໃຫ້ເຕີບໃຫຍ່ ແລະ ພ້ອມທີ່ຈະຕັດມານຳໃຊ້ ດັ່ງນັ້ນ ຈຶ່ງ ມີແນວຄວາມຄິດ “ຕັດ, ນຳໃຊ້ ແລະ ປູກ”

ພາຍໃຕ້ສະພາບການດັ່ງກ່າວ, ແມ່ນ ໄດ້ວາງເປົ້າໝາຍທີ່ຈະຮັບຮູ້ກ່ຽວກັບປ່າໄມ້ໃນຖານະອຸດສາຫະກຳທີ່ມີການຈະເລີນເຕີບໂຕ ແລະ ການຈັດການ ຊັບພະຍາກອນຢ່າງເໝາະສົມ, ດັ່ງນັ້ນ ໃນວັນທີ 01/04/2019 ຈຶ່ງໄດ້ປະກາດນຳໃຊ້ “ກົດໝາຍ ວ່າດ້ວຍການບໍລິຫານຄຸ້ມຄອງປ່າໄມ້” ແລະ ໄດ້ ເລີ່ມ ລະບົບບໍລິຫານຄຸ້ມຄອງປ້າໄມ້.

ໃນລະບົບການຄຸ້ມຄອງປ່າໄມ້ ແມ່ນໄດ້ມີການສ້າງລະບົບທີ່ອົງການປົກຄອງລະດັບບ້ານ ແລະ ເມືອງ ເຮັດໜ້າທີ່ເປັນໂຕກາງໃນການເຊື່ອມໂຍງ ເຈົ້າຂອງກຳມະສິດປ່າ ແລະ “ຜູ້ບໍລິຫານວຽກງານປ່າໄມ້” ເພື່ອໃຫ້ມີການດຳເນີນການບໍລິຫານຄຸ້ມຄອງປ່າໄມ້ໃຫ້ໄດ້ຢ່າງເໝາະສົມ (*1) ແລະ ມີການ ລວບລວມ - ສະສົມ ວິທີການບໍລິຫານຄຸ້ມຄອງປ່າໃຫ້ມີຄວາມເໝາະສົມ ໃຫ້ແກ່ຜູ້ປະກອບການປ່າໄມ້ ຕາມການບໍລິຫານອຸດສາຫະກຳປາໄມ້ ໄປພ້ອມ ໆກັບການໃຫ້ອົງການປົກຄອງລະດັບບ້ານ ແລະ ເມືອງ ເຂົ້າມາບໍລິຫານຄຸ້ມຄອງປ່າໄມ້ທີ່ບໍ່ໄດ້ຮັບການບໍລິຫານຢ່າງເໝາະສົມດ້ວຍຕົນເອງນຳອີກດ້ວຍ.

ນອກຈາກນັ້ນ, ໃນເດືອນ03/2019 “ກົດໝາຍ ວ່າດ້ວຍ ອາກອນປະກອບສ່ວນສິ່ງແວດລ້ອມປ່າໄມ້ ແລະ ອາກອນສິ່ງແວດລ້ອມປ່າໄມ້” ໄດ້ຮັບ ການປະກາດໃຊ້ ແລະ ນັບຈາກເດືອນ 09 ຂອງປີດຽວກັນ ເປັນຕົ້ນມາ, ກໍໄດ້ມີການປະກອບສ່ວນອາກອນສິ່ງແວດລ້ອມປ່າໄມ້ ໃຫ້ ແກ່ ອົງການປົກ ຄອງຂັ້ນບ້ານ ເມືອງ ແລະ ແຂວງ. ນອກຈາກນັ້ນ, ໃນຊຸມປີມໍ່ໆນີ້ ກໍເຫັນໄດ້ວ່າ ໄດ້ເກີດຄວາມເສຍຫາຍອັນຮ້າຍແຮງທີ່ເກີດມາຈາກໄພພິບັດທາງທຳ ມະຊາດ, ເມື່ອ ອີງຕາມ ທັດສະນະຂອງການປ້ອງກັນໄພພິບັດ, ຈຶ່ງເຫັນວ່າ ການສົ່ງເສີມການຮັກສາປ່າໄມ້ ໄດ້ກາຍເປັນບັນຫາອັນຮີບດ່ວນ, ນັບແຕ່ປີ 2020 ເຖິງ 2024, ຈຳນວນອາກອນປະກອບສ່ວນສິ່ງແວດລ້ອມປ່າໄມ້ ໃນແຕ່ລະປີງົບປະມານ ຈະເກັບໃຫ້ໄດ້ກ່ອນກຳນົດ ແລະ ໃນປະລິມານທີ່ເພີ່ມ ຂຶ້ນ. ຄາດວ່າ, ດ້ວຍການນຳໃຊ້ອາກອນປະກອບສ່ວນສິ່ງແວດລ້ອມປ່າໄມ ສົມທົບກັບ ລະບົບການບໍລິຫານຄຸ້ມຄອງປ່າໄມ້, ຄາດຫວັງວ່າການຮັກສາ ປ່າໄມ້ຈະໄດ້ຮັບຄວາມຄືບໜ້າ ເຊິ່ງຜ່ານມາຖືວ່າຍັງບໍ່ມີຄວາມເປັນໄປໄດ້.

*1 ໃນຈຳນວນປ່າທີ່ປູກຂຶ້ນທັງໝົດຢູ່ປະເທດຍີ່ປຸ່ນ ທີ່ເຈົ້າຂອງເປັນພວກສ່ວນເອກະຊົນ, ປະມານ 2/3 ຂອງປ່າໄມ້ຢູ່ໃນພື້ນທີ່ທີ່ບໍ່ສາມາດຢືນຢັນໄດ້ວ່າ ໄດ້ມີການບໍລິຫານ ຈັດການປ່າໄມ້ຫຼືບໍ່, ເປັນຕົ້ນແມ່ນ ຍັງບໍ່ທັນມີແຜນການກ່ຽວກັບການບໍລິຫານປ່າໄມ້ ແລະ ອື່ນໆ. ນອກຈາກນັ້ນ, ໃນບັນດາປ່າເອກະຊົນຂອງປະເທດຍີ່ປຸ່ນ, ແມ່ນ ກຳລັງມີ ບັນຫາກ່ຽວກັບການບໍ່ຮູ້ວ່າໃຜເປັນເຈົ້າຂອງປ່າ ຫຼື ບັນຫາທີ່ເຈົ້າຂອງປ່າບໍ່ໄດ້ອາໄສຢູ່ພື້ນທີ່ດັ່ງກ່າວ, ນອກນີ້ ກໍເກີດມີບັນຫາທີ່ປ່າດັ່ງກ່າວບໍ່ມີເຂດແດນທີ່ຊັດເຈນ ແລະ ລວມ ທັງບັນຫາທີ່ກ່ຽວກັບສະຖານະການທີ່ກໍ່ໃຫ້ເກີດບັນຫາໃນການບໍລິຫານຈັດການວຽກງານປ່າໄມ້, ດັ່ງນັ້ນ ການແກ້ໄຂບັນຫາເຫຼົ່ານີ້ ຈຶ່ງຖືວ່າເປັນສິ່ງທີ່ສຳຄັນ.



ຂໍ້ມູນອ້າງອີງ: “ເອກະສານນຳສະເໜີຂໍ້ມູນ ແລະ ລາຍລະອຽດຂອງປ່າໄມ້ ແລະ ວຽກງານປ່າໄມ້ ປີ 2019” ອົງການປ່າໄມ້

II
ການຄຸ້ມຄອງສະຖານທີ່ເຮັດວຽກ

ການບຳລຸງຮັກສາ

No.03 ການບຳລຸງຮັກສາເຄື່ອງຕັດຫຍ້າ

No.04 ການບຳລຸງຮັກສາຈັກເລື່ອຍໄມ້ (ຈັກສະຕີນ)

No.05 ການບຳລຸງຮັກສາເຄື່ອງມື ແລະ ອຸປະກອນ

ການບຳລຸງຮັກສາ

No.03 ການບຳລຸງຮັກສາເຄື່ອງຕັດຫຍ້າ

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ກ່ຽວກັບ ຄວາມຮູ້, ເຕັກນິກ ແລະ ທັກສະທີ່ຈຳເປັນສຳລັບການບຳລຸງຮັກສາເຄື່ອງຕັດຫຍ້າ ແລະ ພັດທະນາຄວາມສາມາດໃນການດຳເນີນການບຳລຸງຮັກສາທີ່ຖືກຕ້ອງ.

ຄຳສຳຄັນ

ໃບມີດຕັດຫຍ້າ, ໃບເລື່ອຍ, ໃບຕັດໄມ້ໄຜ່, ໃບເລື່ອຍວົງເດືອນ, ຝາຄອບປ້ອນກັນການຝັ້ງ (ໂກບປ້ອງກັນເສດແຕກຫັກ), ອຸປະກອນປົດລັອກສຸກເສີນ, ລະບົບປ້ອງກັນການດີດກັບ, ການລັບຄົມໃບມີດ, ການໄຂແຂ້ວໃບເລື່ອຍ, ນ້ຳມັນປະສົມ.

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

- ເມື່ອເຮັດວຽກກ່ຽວກັບຈັກຕັດຫຍ້າ, ໃຫ້ໃສ່ຖົງມືປ້ອງກັນການສັ່ນສະເທືອນເພື່ອປ້ອງກັນຮ່າງກາຍ, ໃຫ້ໃສ່ແນວອັດຫູ (ແນວປິດຫູ) ເພື່ອປ້ອງກັນການສູນເສຍການໄດ້ຍິນ ໄປພ້ອມໆກັບການກຳນົດລ່ວງໜ້າວ່າຈະສື່ສານກັນແນວໃດເມື່ອບໍ່ໄດ້ຍິນສຽງ ເພາະວ່າ ຈະມີສຽງຫຼາຍປະເພດທີ່ຈະບໍ່ສາມາດໄດ້ຍິນໄດ້ ແລະ ໃຫ້ໃສ່ແວ່ນຕາປ້ອງກັນ (ໜ້າກາກ).
- ການສັ່ນສະເທືອນທີ່ເກີດຈາກການລັບຄົມໃບມີດຕັດຫຍ້າ ບໍ່ຖືກຕ້ອງ ອາດຈະເຮັດໃຫ້ເກີດ ອາການພະຍາດ ແລະ ຄວາມບົກຜ່ອງທີ່ເກີດຈາກການສັ່ນສະເທືອນ.
- ອັນຕະລາຍທີ່ເກີດ ຈາກການດີດກັບ (ກະດັນ) ເຊິ່ງເກີດຈາກ ໃບມີດຕັດຫຍ້າ ທີ່ກະທົບກັບວັດຖຸແຂງ



ຮູບທີ 3-1 ການບຳລຸງຮັກສາເຄື່ອງຕັດຫຍ້າ ທີ່ຖືກຕ້ອງ

ຄວາມສຳຄັນໃນການບຳລຸງຮັກສາເຄື່ອງຕັດໄມ້/ຫຍ້າ

ໂຄງສ້າງ ແລະ ຄວາມອັນຕະລາຍຂອງເຄື່ອງຕັດຫຍ້າ

ເຄື່ອງຕັດຫຍ້າ ເປັນ ເຄື່ອງມືທີ່ຕ້ອງໃຊ້ມືຈັບ ເພື່ອຕັດຫຍ້າຕ່າງໆ ດ້ວຍໃບມີດທີ່ຫມຸນດ້ວຍຄວາມໄວສູງ. ວຽກງານການຕັດຫຍ້າໃນຂົງເຂດອຸດສາຫະກຳປ່າໄມ້ ເປັນວຽກທີ່ ຕ້ອງໄດ້ເຮັດດ້ວຍການຍ່າງຢູ່ ພູເຂົາເຊິ່ງເປັນພື້ນທີ່ຂຸຂະ ແລະ ມັກເກີດ ອຸບັດຕິເຫດຕ່າງໆນາໆໃນການເຮັດວຽກທີ່ນຳໃຊ້ເຄື່ອງຕັດຫຍ້າ ເຊັ່ນ: ການມົ້ນລົ້ມໃນຂະນະທີ່ເຮັດວຽກ, ໃບມີດດີດກັບ (ໃບມີດຂັດຂ້ອງ) ແລະ ໃບມີດໄປຕຳກັບສິ່ງຂອງບາງຢ່າງ ແລ້ວມີແມວຟີ້ງມາໃສ່ ເປັນຕົ້ນ. ນອກຈາກນີ້, ຕາມລັກສະນະໂຄງສ້າງຂອງເຄື່ອງຕັດຫຍ້າ ໃບມີດຂອງເຄື່ອງຈັກຈະມີລັກສະນະເປີດອອກ, ເຊິ່ງ ອຸບັດຕິເຫດຮ້າຍແຮງທີ່ເກີດຈາກໃບມີດໝຸນແລ້ວ ກໍ່ໃຫ້ເກີດບາດແຜຈີກຂາດ ກໍເຮັດໃຫ້ ມີການເສຍຊີວິດຢ່າງໜ້າສະລົດໃຈເຊັ່ນກັນ.

ຄວາມສຳຄັນໃນການບຳລຸງຮັກສາເຄື່ອງຕັດຫຍ້າ

ເມື່ອປຽບທຽບກັບການການຕັດຫຍ້າໂດຍການນຳໃຊ້ກ່ຽວ, ຈະເຫັນວ່າການນຳໃຊ້ຈັກຕັດຫຍ້າຈະມີປະສິດຕິພາບສູງຂຶ້ນກ່ອນ. ຢ່າງໃດກໍຕາມ, ອຸບັດຕິເຫດ ໄດ້ເກີດຂຶ້ນບໍ່ພຽງແຕ່ຍ້ອນການນຳໃຊ້ທີ່ບໍ່ຖືກຕ້ອງ, ແຕ່ຍັງເປັນຍ້ອນການບຳລຸງຮັກສາທີ່ບໍ່ດີອີກດ້ວຍ. ສິ່ງນີ້ ແມ່ນບໍ່ໄດ້ເຈາະຈົງສະເພາະພຽງແຕ່ການນຳໃຊ້ເຄື່ອງຕັດ ຫຍ້າເທົ່ານັ້ນ, ແຕ່ຈາກມຸມມອງ ຂອງ ຄວາມປອດໄພຂອງຜູ້ອອກແຮງງານ ແລະ ປະສິດທິພາບໃນການເຮັດວຽກແລ້ວ, ຖືວ່າເປັນສິ່ງສຳຄັນທີ່ຕ້ອງໄດ້ກວດກາ ແລະ ບຳລຸງຮັກສາເຄື່ອງຈັກຢ່າງລະອຽດເພື່ອໃຫ້ມັນຢູ່ໃນສະພາບທີ່ດີທີ່ສຸດຕະຫຼອດເວລາ.

ນອກຈາກນັ້ນ, ການສັ່ນສະເທືອນ ຖືວ່າເປັນສິ່ງທຳມະດາທີ່ເກີດຂຶ້ນໃນການເຮັດວຽກດ້ວຍເຄື່ອງຕັດຫຍ້າ. ຂະຫນາດຂອງການສັ່ນສະເທືອນນັ້ນ ຖືວ່າມີຄວາມກ່ຽວຂ້ອງຢ່າງຫຼວງຫຼາຍກ່ຽວກັບສະພາບໃນການບຳລຸງຮັກສາຂອງເຄື່ອງຕັດຫຍ້າ. ໂດຍສະເພາະ, ສ່ວນໃດໜຶ່ງຂອງນັອດ ຫຼົມ ຫຼື ຫຼຸດອອກ, ໃບມີດບໍ່ຄົມ ເປັນຕົ້ນ, ເຫຼົ່ານີ້ຈະເປັນສາເຫດທີ່ເຮັດໃຫ້ມີການສັ່ນສະເທືອນແຮງຂຶ້ນໄດ້. ການບຳລຸງຮັກສາໃຫ້ຖືກວິທີ ເພື່ອປ້ອງກັນການສັ່ນສະເທືອ (ຮູບ 3-1).

ລອງຄິດເຫັນພາບກ່ຽວກັບການຕັດຫຍ້າຢູ່ເທິງພູທີ່ຂຸຂະ ໃນຂະນະທີ່ໃບມີດໂຜ່ອອກມາ ແລະ ກຳລັງໝຸນດ້ວຍໄວສູງ ລອງເບິ່ງ. ຖ້າຫາກວ່າ ໃບມີດຫັກອອກ ແລ້ວຟີ້ງມາໃສ່ເຮົາເອງ ... ຖ້າຫາກວ່າ ໂຄລ້ອກມັນຫຼຸດອອກມາຢ່າງກະທັນຫັນ ...

ການບຳລຸງຮັກສາຢ່າງລະອຽດຖີ່ຖ້ວນ ກໍສາມາດປ້ອງກັນ ອຸບັດຕິເຫດບາງຢ່າງໄດ້. ນອກຈາກນັ້ນ, ໃນລະຫວ່າງການເຮັດວຽກ ຫາກເຄື່ອງຕັດຫຍ້າເຮັດວຽກຜິດປົກກະຕິ, ປະສິດທິພາບຂອງການເຮັດວຽກ ກໍຈະຫຼຸດລົງ. ບົດນີ້ ຈະຊ່ວຍໃຫ້ທ່ານເຂົ້າໃຈຢ່າງເຕັມສ່ວນກ່ຽວກັບໂຄງສ້າງ, ກົນໄກ ແລະ ວິທີການບຳລຸງຮັກສາ ແຕ່ລະພາກສ່ວນຂອງເຄື່ອງຕັດຫຍ້າ.

ປະເພດ ແລະ ໂຄງສ້າງ ຂອງເຄື່ອງຕັດໄມ້/ຫຍ້າ

ປະເພດ ແລະ ໂຄງສ້າງພື້ນຖານຂອງເຄື່ອງຕັດຫຍ້າ

ເຖິງແມ່ນວ່າ ໃນຊຸ່ມປີມໍ່ໆມານີ້ ຈະມີເຄື່ອງຕັດຫຍ້າທີ່ໃຊ້ພະລັງງານແບດເຕີລີ້ປະກົດໂຕຂຶ້ນມາກໍຕາມ, ແຕ່ເຄື່ອງຕັດຫຍ້າແບບໃຊ້ເຄື່ອງຈັກ ແມ່ນ ຍັງຖືກນຳໃຊ້ໂດຍທົ່ວໄປໃນອຽກງານປ່າໄມ້. ດັ່ງນັ້ນ, ເຄື່ອງຕັດຫຍ້າທີ່ສະແດງຢູ່ໃນຂໍ້ຄວາມນີ້ ແມ່ນ ເຄື່ອງຕັດຫຍ້າທີ່ເປັນປະເພດເຄື່ອງຈັກ.

ໃນປັດຈຸບັນ, ປະເພດຂອງເຄື່ອງຕັດຫຍ້າ ສາມາດແບ່ງອອກເປັນ 3 ປະເພດ:

·ເຄື່ອງຕັດຫຍ້າແບບພາຍຢູ່ບ່າ

·ຈັກຕັດຫຍ້າແບບເປ້ຢູ່ຫຼັງ

· ເຄື່ອງຕັດຫຍ້າດ້ວມຈັບສອງດ້ວມ

ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້ວມຈັບ ໂຕ U)

ພາກສ່ວນຂອງເຄື່ອງຈັກ ແລະ ດ້ວມຈັບ ແມ່ນ ເຊື່ອມຕໍ່ກັນໂດຍກົງ, ສະນັ້ນ ຈຶ່ງຈະຄອບຄຸມເຄື່ອງຕັດ ໂດຍການພາດສາຍທີ່ຕິດກັບດ້ວມຄອມ ຄຸມ ໃສ່ບ່າ, ເຊິ່ງສາຍດັ່ງກ່າວ ປະກອບມີ ສາຍຮັດແອວ - ສາຍຄ້ອງແອວ ແລະ ສາຍພາດບ່າ. ການທີ່ມີສາຍຮັດແອວ ນັ້ນ ແມ່ນ ສຳຄັນສຳລັບ ຄວາມປອດໄພ. ໃຊ້ມືກຳດ້ວມຈັບທີ່ເປັນຮູບໂຕ U ແລ້ວບັງຄັບເຄື່ອງຈັກໂດຍການເຄື່ອນເໜັງໃບມີດໄປມາຊ້າຍຂວາ. (ຮູບ 3-2).

ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ

ເປ້ສ່ວນທີ່ເປັນເຄື່ອງຈັກໄວ້ດ້ານຫຼັງ, ແລ້ວໃຊ້ມືຈັບກົບທີ່ຕິດຢູ່ດ້ວມຈັບ ແລະ ດ້ວມຈັບທີ່ເປັນຫ່ວງ, ແລ້ວຄອບຄຸມເຄື່ອງຕັດໂດຍການເຄື່ອນ ເໜັງໃບມີດໄປມາຊ້າຍຂວາ. (ຮູບ 3-3).

ເຄື່ອງຕັດຫຍ້າສອງດ້ວມຈັບ


ປະເພດ ພາກສ່ວນຂອງເຄື່ອງຈັກ, ດ້ວມຄອບຄຸມ ແລະ ສາຍພາດບ່າ ແມ່ນ ຄືກັນກັບເຄື່ອງຕັດຫຍ້າແບບພາຍຢູ່ບ່າ, ເຊິ່ງຈະມີ 2 ປະເພດ ຄື: ປະເພດທີ່ຄອບຄອມໂດຍການຈັບຫ່ວງ ທີ່ບໍ່ແມ່ນດ້ວມຈັບຮູບໂຕ U (ຮູບ 3-1) ແລະ ປະເພດທີ່ໃຊ້ມືເບື້ອງຊ້າຍຈັບດ້ວມຄອບຄຸມໂດຍກົງ (ຮູບ 3-4).

* ໄດ້ນຳສະເໜີກ່ຽວກັບ ເຄື່ອງຕັດຫຍ້າ 3 ປະເພດ ໄປແລ້ວ, ເຊິ່ງຜູ້ຝຶກອົບຮົມ ສຳລັບ "ການຈ້າງງານສີຂຽວ: ການຈ້າງງານແບບຮັກສາສິ່ງແວດລ້ອມ" ຈະໄດ້ນຳໃຊ້ເຄື່ອງຕັດປະເພດ ດ້ວມຈັບທີ່ເປັນຮູບໂຕ U.


ການນຳໃຊ້ ແລະ ຄວາມປອດໄພ ສຳລັບເຄື່ອງຕັດແຕ່ລະປະເພດ

ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້ວມຈັບ ໂຕ U)


ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້ວມຈັບຮູບໂຕ U) ເປັນເຄື່ອງຈັກປະເພດທີ່ນຳໃຊ້ໂດຍການເອົາເຄື່ອງຈັກມາສຳຜັດໂດຍກົງກັບກະດູກແອວ ເບື້ອງຂວາ/ຊ້າຍ, ເຊິ່ງປະເພດນີ້ ຈະນຳໃຊ້ໂດຍການຍ້າຍໄປມາ ເບື້ອງຊ້າຍເບື້ອງຂວາເຊິ່ງຢູ່ອ້ອມຮອບກະດູກແອວ ຫຼື ເວົ້າອີກຢ່າງໜຶ່ງກໍຄື ເລື່ອນ ຂຶ້ນລົງໃນຂະນະທີ່ມັນແນບກັບກະດູກແອວ. ເມື່ອທຽບໃສ່ເຄື່ອງຈັກປະເພດອື່ນໆແລ້ວ ຈະເຫັນວ່າ ໃບມີດຂອງເຄື່ອງຈັກລຸ້ນນີ້ ຈະຢູ່ຫ່າງຈາກຜູ້ ນຳໃຊ້ ເຊິ່ງມັນຈະເປັນການຍາກທີ່ໃບມີດຈະເຄື່ອນເຂົ້າມາໃກ້ຜູ້ນຳໃຊ້ໄດ້, ເຫດຜົນກໍຍ້ອນວ່າ ເຄື່ອງຕັດປະເພດນີ້ ຈະຖືກຈັບຢູ່ແອວຂອງຜູ້ນຳ ໃຊ້ເກືອບແໜ້ນ ສະນັ້ນ ໄລຍະຫ່າງຂອງການເຄື່ອນໜັງຂອງເຄື່ອງຈັກໄປດ້ານໜ້າ ຫຼື ດ້ານຫຼັງ ແມ່ນ ຈະສາມາດເຄື່ອນເໜັງໄດ້ສະເພາະໄລຍະ ສັ້ນໆ, ລວມທັງຄວາມແຕກຕ່າງໃນການຍ້າຍເຄື່ອງຈັກຂຶ້ນລົງ ກໍບໍ່ຫຼາຍ (ບໍ່ສາມາດຍົກເຄື່ອງໃຫ້ສູງຂຶ້ນໄດ້ປານໃດ) ສະນັ້ນ ຈຶ່ງສາມາດເວົ້າໄດ້ ວ່າ ມັນສາມາດຫຼຸດຄວາມສ່ຽງຕ່າງໆທີ່ຈະເກີດຂຶ້ນຈາກການນຳໃຊ້ໄດ້. ແຕ່ວ່າ, ສິ່ງນັ້ນ ແມ່ນ ຫມາຍຄວາມວ່າ ມັນຈະມີລະດັບໃນການນຳໃຊ້ ຢ່າງອິດສະລະ ໜ້ອຍກວ່າເຄື່ອງປະເພດອື່ນໆ.



ຮູບທີ 3-2 ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້າມຈັບຮູບໂຕ U)



ຮູບທີ 3-3 ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ



ຮູບທີ 3-4 ເຄື່ອງຕັດຫຍ້າສອງດ້າມຈັບ

ตาตะลาง 3-1 รูบพาบຂองถวามปอดไพ และ ภานนำใช้เถื่องตัดหย้า

ปะเพดเถื่องตัดหย้า	ภานนำใช้	ถวามปอดไพ
เถื่องตัดหย้าแบบพายยู่บ่า (ด้ามจับ โต U)	○	◎
เถื่องตัดหย้าแบบเป้ยู่หุ้ง	◎	○
เถื่องตัดหย้าสองด้ามจับ	◎	△

ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ

ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ ຈະເປັນເຄື່ອງທີ່ຕ້ອງໄດ້ແບກກຳລັງແຮງຢູ່ຫຼັງ, ເຊິ່ງຢູ່ດ້ານຄວບຄຸມ ຈະມີ ລະບົບສົ່ງກຳລັງເຄື່ອງຈັກທີ່ສາ ມາດເຮັດໃຫ້ເຄື່ອນເໜັງໄປມາໄດ້ຢ່າງອິດສະລະ. ການທີ່ມັນມີລະດັບອິດສະລະໃນການນຳໃຊ້ໃນຂະນະທີ່ເຮັດວຽກ ໝາຍຄວາມວ່າ ຂອບເຂດ ຂອງການເຄື່ອນຍ້າຍໃບມີດໄປມາ ແມ່ນ ມີຂອບເຂດທີ່ກວ້າງ (ຂອບເຂດທີ່ເປັນໄປໄດ້). ອີກດ້ານໜຶ່ງ, ກໍລະນີ ທີ່ດ້ານຄວບຄຸມ ບໍ່ໄດ້ຖືກຈັບໄວ້ຢູ່ ດ້ວຍມື, ດ້ານຈັບໂຕທີ່ຫົດຢືດໄດ້ ຈະມີລະດັບອິດສະຫຼະໃນການເຄື່ອນເໜັງໄປມາສູງຫຼາຍ, ສະນັ້ນ ການເຄື່ອນເໜັງຂອງມັນຈຶ່ງມີລະດັບທີ່ຂ້ອນ ຂ້າງກວ້າງ, ດັ່ງນັ້ນ ໃນຂະນະທີ່ເຮັດວຽກຢູ່ ຫາກລົ້ມແລ້ວເຮັດໃຫ້ມືຫຼຸດອອກຈາກດ້ານຄວບຄຸມ ຫຼື ໃນຕອນທີ່ຂາກຳລັງຈະພະລາດລົ້ມ ແລ້ວໃຊ້ ຂາກະໂດດໄປທາງດ້ານໜ້າ ແມ່ນ ຈະເປັນສິ່ງທີ່ອັນຕະລາຍຫຼາຍ.

ເຄື່ອງຕັດຫຍ້າສອງດ້ານຈັບ

ຍ້ອນວ່າ ເຄື່ອງຈັກ ແລະ ດ້ານຄວບຄຸມຖືກນຳມາຕໍ່ຕິດກັນ, ມັນຈຶ່ງມີໂຄງສ້າງທີ່ງ່າຍດາຍ. ຮູບແບບການນຳໃຊ້, ເງື່ອນໄຂການເຮັດວຽກຕ່າງໆ ແມ່ນ ສາມາດເຫັນໄດ້ຄືກັນກັບ ເຄື່ອງຕັດແບບເປ້ຢູ່ບ່າ. ເນື່ອງຈາກວ່າ ເຄື່ອງຈັກປະເພດນີ້ ສາມາດຍັບຍອກຈາກຮ່າງກາຍໄດ້ງ່າຍກ່ອນ ດັ່ງນັ້ນ ຄວາມສ່ຽງທີ່ເກີດຈາກການນຳໃຊ້ ຈຶ່ງ ມີຫຼາຍກວ່າ. ມີຫລາຍກໍລະນີທີ່ມີການນຳໃຊ້ເຄື່ອງຕັດຫຍ້າໂດຍບໍ່ໃສ່ສາຍພາດບ່າ ເຊິ່ງມັນໃຫ້ຄວາມຮູ້ ສຶກແບບວ່າກຳລັງຕັດຫຍ້າໂດຍການນຳໃຊ້ ງ່ຽວ, ເຊິ່ງເປັນສາເຫດທີ່ພາໃຫ້ເກີດອຸບັດຕິເຫດແບບບໍ່ສິ້ນສຸດ.

ເຄື່ອງຈັກ

ເນື່ອງຈາກວ່າເຄື່ອງຕັດຫຍ້າເຮັດວຽກໃນຂະນະທີ່ມື ແລະ ລຳໂຕຂອງຄົນເຮົາປະຄອງໄວ້, ດັ່ງນັ້ນ ຈຶ່ງນິຍົມໃຊ້ເຄື່ອງຈັກ 2 ຈັງວະແບບລະບາຍ ຄວາມຮ້ອນດ້ວຍອາກາດ ເພາະວ່າມີມັນຂະໜາດນ້ອຍ ແລະ ເບົາ ແຕ່ໃຫ້ກຳລັງສູງ ພ້ອມທັງບໍ່ສົ່ງຜົນກະທົບຕໍ່ການປ່ຽນທ່າທາງໃນການນຳ ໃຊ້. ເຄື່ອງຈັກ 2 ຈັງວະ ເປັນ ເຄື່ອງຈັກທີ່ສ້າງພະລັງງານ ໂດຍການສູບອາກາດ, ການບີບອັດ, ການຂະຫຍາຍ ແລະ ປ່ອຍຄວັນ (ໄລ່ອາກາດ) ຊ້ຳໄປຊ້ຳມາ ໃນລະວ່າງທີ່ລູກສູບ ສູບ 1 ຄັ້ງ ຫຼື ເວົ້າອີກຢ່າງໜຶ່ງວ່າ ໃນຂະນະທີ່ເພົາຂໍ້ວ່ຽງ ມີການ ໝູນ 1 ຄັ້ງ. ວ່າງບໍ່ດົນມານີ້, ໃນລັກສະ ນະຂອງການເຮັດວຽກແບບນີ້ ກໍໄດ້ມີການພັດທະນາເຄື່ອງຈັກ 4 ຈັງວະຂຶ້ນມາ ເຊິ່ງເປັນເຄື່ອງຈັກທີ່ສາມາດສ້າງຄວາມເຢັນໄດ້ດ້ວຍອາກາດ.

ລະບົບສົ່ງກຳລັງເຄື່ອງຈັກ

ລະບົບສົ່ງກຳລັງເຄື່ອງຈັກ ໄປສູ່ໃບມີດ, ເຊິ່ງປະກອບ ດ້ວຍ ຄາດ, ດ້ານຄວບຄຸມ, ເພົາຂັບ ແລະ ກະປຸກເກຍ. ພະລັງງານທີ່ອອກມາ ຈາກເຄື່ອງຈັກ ຈະຖືກສົ່ງໄປຫາເກຍ ຕາມເພົາຂັບທີ່ຢູ່ດ້ານຄວບຄຸມ ຜ່ານ ຄາດແບບແຮງວ່ຽງ. ດ້ານຄວບຄຸມ ແມ່ນ ມີ ດ້ານຄວບຄຸ່ມແບບພາຍ ຢູ່ບ່າ ແລະ ເປ້ຢູ່ຫຼັງ ດ້ານຄວບຄຸມແບບເປ້ຢູ່ຫຼັງ ຈະເປັນດ້ານທີ່ມີລັກສະນະຫົດຢືດໄດ້ ເຊິ່ງ ຄວາມຫົດຢືດທີ່ສາມາດຍັບເຂົ້າມາໃກ້ມືໄດ້ນັ້ນ ຈະ ມີໄລຍະທີ່ຍາວ ແລະ ສາມາດພັບງໍ ໄດ້ຢ່າງອິດສະຫຼະ.


ໃບມີດຕັດຫຍ້າ

ໃບມີດຕັດຫຍ້າ ແມ່ນ ມີຫຼາຍປະເພດທີ່ແຕກຕ່າງກັນ. ໄດ້ມີການສ້າງມາດຕະຖານອຸດສາຫະກຳຂອງປະເທດຍີ່ປຸ່ນ ສຳລັບ ໃບມີດຕັດຫຍ້າ, “ໃບມີດຕັດຫຍ້າແບບໝຸນ ສຳລັບຈັກຕັດຫຍ້າ” (JISB9212) (ສ້າງຂຶ້ນໃນປີ 1978) ເພື່ອເປັນເປົ້າໝາຍໃນການເພີ່ມຄວາມປອດໄພໃນບ່ອນເຮັດວຽກ ໂດຍການສ້າງຄວາມງ່າຍໃນການຈັດຊື້ ແລະ ການສະໜອງໃບມີດຕັດຫຍ້າທີ່ມີຄຸນນະພາບສູງ. ໃນການສ້າງມາດຕະຖານນີ້, ໄດ້ມີການສຳຫຼວດດ້ວຍແບບສອບຖາມ ກ່ຽວກັບ ຮູບຮ່າງ ແລະ ຂະໜາດຂອງໃບມີດຕັດຫຍ້າ, ແລ້ວໄດ້ກຳນົດເອົາຕາມຮູບຮ່າງ ແລະ ຂະໜາດທີ່ມີການນຳໃຊ້ຢ່າງແຜ່ຫຼາຍ, ເຊິ່ງກ່ຽວກັບເສັ້ນຜ່າສູນກາງພາຍນອກ ແມ່ນ ໄດ້ຖືກຕັດອອກຈາກຂອບສຸດຂອງທັງສອງຂ້າງພຽງເລັກໜ້ອຍ ແລ້ວກຳນົດເອົາຂະໜາດມາດຕະຖານໃຫ້ມີຂະໜາດທີ່ເກືອບຈະບໍ່ແຕກຕ່າງກັນເລີຍ ຢູ່ທີ 200 ມມ, 230 ມມ ແລະ 250 ມມ.


ໃນການເຮັດວຽກຕັດຫຍ້າ (ການຕັດຫຍ້າ) ໃນອຸດສາຫະກຳປ່າໄມ້ ແມ່ນ ຈະໃຊ້ ໃບເລື່ອຍມົນ, ໃບເລື່ອຍວົງເດືອນ, ໃບເລື່ອຍໄມ້ໄຜ່ (ໃບມີດແບບເຈາະຮ່ອງ ຈະບໍ່ໄດ້ເອົາມານຳໃຊ້ເຂົ້າໃນການຕັດຫຍ້າ). ໃບມີດຕັດຫຍ້າແຕ່ລະປະເພດ ມີລັກສະນະຂອງຕົນເອງ ເຊັ່ນ: ຄວາມເໝາະສົມຕໍ່ເປົ້າໝາຍທີ່ຈະຕັດ, ຄວາມທົນທານຂອງຄວາມຄົມ ແລະ ຄວາມງ່າຍໃນການລັບຄົມ.

ພາກສ່ວນຄວບຄຸມ (ດ້ານຄວບຄຸມ)

ທັງ ເຄື່ອງຕັດຫຍ້າແບບພາຍຢູ່ບ່າ ແລະ ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ ທັງສອງ ແມ່ນ ຕ້ອງໄດ້ໃຊ້ການຄອມຄຸມໂດຍການຈັບທັງດ້ານຈັບ ແລະ ດ້ານຄັນເລັ່ງນຳກັນ. ໃນເວລານັ້ນ, ຄ່ອຍໆຍ້າຍດ້ານຄວບຄຸມໄປທາງຄວາມໄວສູງ ແລະກຳນົດການໝຸນຂອງໃບມີດຕາມຄວາມເໝາະສົມ. ເມື່ອໃຊ້ມືຄ່ອຍໆປ່ອຍຄັນເລັ່ງອອກ ເຄື່ອງຈັກກໍຈະເດີນເບົາ (ການເດີນໃນຄວາມໄວຕ່ຳ). ຫາກກຳຄັນເລັ່ງເຂົ້າອີກຄັ້ງໜຶ່ງ ກໍຈະເປັນການເພີ່ມຮອບໝຸນຕາມທີ່ຕັ້ງໄວ້.



ຮູບ 3-5 ໃນການປະຕິບັດໜ້າທີ່ ຕ້ອງສວມໃສ່ອຸປະກອນຕາມຕຳແໜ່ງຕ່າງໆທີ່ກຳນົດໄວ້.



ຮູບ 3-6 ອຸປະກອນປົດລັອກສຸກເສີນ ແລະ ສາຍຮັດຕົ້ນຂາ

ການກວດກາອຸປະກອນຄວາມປອດໄພຂອງເຄື່ອງຕັດໄມ້/ຫຍ້າ

ອຸປະກອນຄວາມປອດໄພຂອງເຄື່ອງຕັດຫຍ້າ

ຈັກຕັດຫຍ້າ ມີ ອັນຕະລາຍໃນໂຕ ຂອງມັນເອງ ເຊັ່ນ: ການ ຂັດຂ້ອງຍ້ອນໃບມີດຕັດຫຍ້າ ແລະ ການຟັ້ງກະຈາຍຂອງວັດຖຸ. ໃຫ້ເຂົ້າໃຈສິ່ງເຫຼົ່ານີ້ ແລະ ນຳໃຊ້ຢ່າງຖືກຕ້ອງ. ໂດຍສະເພາະ ຖ້າຫາກວ່ານຳລັງນຳໃຊ້ເຄື່ອງຕັດຄັ້ງທຳອິດ, ກະລຸນາອ່ານຄູ່ມືຄຳແນະນຳຢ່າງລະອຽດ ແລະ ເຂົ້າໃຈຢ່າງພຽງພໍ ກ່ຽວກັບການນຳໃຊ້ ແລະ ຄວາມສ່ຽງກ່ອນທີ່ຈະນຳໃຊ້ມັນ.


ອຸປະກອນປ້ອງກັນການຟັ້ງກະຈາຍ (ໂກບປ້ອງກັນຟັ້ງກະຈາຍ)

ນີ້ ແມ່ນ ອຸປະກອນເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການບາດເຈັບຈາກວັດຖຸຟັ້ງກະຈາຍ (ຮູບ 3-5). ຕິດຕັ້ງໃຫ້ມັນຢູ່ໃນຕຳແໜ່ງທີ່ຖືກຕ້ອງ ຕາມຄູ່ມືຄຳແນະນຳສຳລັບການນຳໃຊ້ເຄື່ອງຕັດຫຍ້າ. ຫາກອຸປະກອນປ້ອງກັນການຟັ້ງກະຈາຍບໍ່ໄດ້ຮັບການຕິດຕັ້ງຢ່າງຖືກຕ້ອງ ແມ່ນ ຫ້າມ ປະຕິບັດວຽກງານເດັດຂາດ.

ອີກຢ່າງໜຶ່ງ ເຖິງແມ່ນວ່າອຸປະກອນປ້ອງກັນການຟັ້ງກະຈາຍຈະຖືກຕິດຕັ້ງແລ້ວກໍຕາມ ມັນບໍ່ໄດ້ໝາຍຄວາມວ່າ ຈະບໍ່ເກີດການຟັ້ງກະຈາຍ. ຍ້ອນວ່າໃບມີດຕັດຫຍ້າເຮັດໃຫ້ວັດຖຸຟັ້ງກະຈາຍ (ເຄື້ອງອອກມາ) ມາຫາງດ້ານໜ້າຂອງຮ່າງກາຍ ສະນັ້ນ ບ່ອນທີ່ຖືກກະທົບ ທີ່ມັກຈະເກີດຂຶ້ນ ເຊັ່ນ: ຕາ, ໃບຫນ້າ ແລະ ສ່ວນອື່ນໆ ນັບແຕ່ຫົວເຂົ່າລົງມາ. ອຸປະກອນປ້ອງກັນການຟັ້ງກະຈາຍ ສາມາດປ້ອງກັນຄວາມເສຍ ຫາຍ ຈາກສ່ວນອື່ນໆ ນັບແຕ່ຫົວເຂົ່າລົງມາໄດ້, ແຕ່ກໍໄດ້ມີລາຍ ງານວ່າຜູ້ນຳໃຊ້ສາມາດຫຼີກເວັ້ນຄວາມເສຍຫາຍໄດ້ ຖ້າພວກເຂົາໄດ້ ປ້ອງກັນໃບໜ້າຂອງພວກເຂົາດ້ວຍອຸປະກອນປ້ອງກັນ ເຊັ່ນ ແວ່ນ ຕາ ເປັນຕົ້ນ.

ອຸປະກອນປົດລັອກສຸກເສີນ

ໂຄງສ້າງນີ້ຊ່ວຍໃຫ້ຜູ້ນຳໃຊ້ສາມາດຕັດການເຊື່ອມຕໍ່ (ຖອດ) ເຄື່ອງຈັກໃນກໍລະນີສຸກເສີນ ຕາມຄວາມຈຳເປັນ ກ່ອນການໃຊ້ງານໄດ້. (ຮູບ 3-6). ມີຄວາມແຕກຕ່າງກັນໃນໂຄງສ້າງຂຶ້ນກັບລຸ້ນຂອງມັນ, ເຊັ່ນ: ເຄື່ອງຕັດຫຍ້າແບບພາຍຢູ່ບ່າ ຫຼື ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ, ແຕ່ມັນ ກໍເປັນກົນໄກທີ່ຊ່ວຍໃຫ້ສາມາດຖອດໂຕເຄື່ອງຫຼັກຂອງເຄື່ອງຕັດຫຍ້າອອກຈາກເຄື່ອງຕັດໄດ້ ໃນເວລາສຸກເສີນ ໂດຍການໃຊ້ມືຊຳພັດພຽງຄັ້ງດຽວ. ກ່ອນທີ່ຈະນຳໃຊ້ມັນ, ຈຳເປັນຕ້ອງກວດກາໃຫ້ແນ່ໃຈວ່າອຸປະກອນ ດັ່ງກ່າວໃຊ້ງານໄດ້ ຫຼືບໍ່, ແລະ ຈຳເປັນຕ້ອງຄຸ້ນເຄີຍກັບວິທີການນຳໃຊ້ມັນກ່ອນ ຈຶ່ງຈະສາມາດໃຊ້ງານໄດ້ໂດຍບໍ່ມີການແຕກຕື່ນ.



ຮູບທີ 3-7 ຕົວຢ່າງ ກົນໄກຄັນເລັ່ງແບບມີເດືອ (ແບບໄກປືນ)

ຮູບພາບສະແດງກົນໄກທີ່ກຳນົດການເປີດຄັນເລັ່ງ ໂດຍໃຊ້ຄັນເລັ່ງແບບຄວບຄຸມ (ຄັນເລັ່ງຄົງທີ່) ເຊິ່ງເມື່ອໄກຄັນເລັ່ງຖືກບີບ ຄວາມໄວໃນການໝຸນຂອງໃບມີດຕັດຫຍ້າກໍຈະເພີ່ມຂຶ້ນຈົນກວ່າຈະເຖິງລະດັບທີ່ກຳນົດ ແລະ ເມື່ອປ່ອຍມືອອກ ກໍຈະກັບມາສູ່ຮອບເດີມເບົາ (ເຄື່ອງບາງລຸ້ນກໍບໍ່ມີຄັນເລັ່ງແບບຄວບຄຸມ).

ສາຍຮັດແອວ, ສາຍຮັດກົກຂາ

ໃນກໍລະນີເກີດອຸບັດເຫດຈາກ “ການລົ້ມ” ຫຼື “ການ ຂັດຂ້ອງຂອງໃບມີດ” ເຊິ່ງການເປັນສາເຫດຂອງການເກີດອຸບັດຕິເຫດທີ່ ກ່ຽວຂ້ອງກັບເຄື່ອງຕັດຫຍ້າ, ໃນເວລາທີ່ມີນພະລາດ ຢູ່ຄ້ອຍ ຫຼື ຕິດກັບ, ເຄື່ອງຕັດຫຍ້າ ຈະເລື່ອນຂຶ້ນ ແລ້ວເຮັດໃຫ້ເກີດອຸບັດຕິເຫດທີ່ໃບມີດຕັດຫຍ້າໄປຕຳໃສ່ຕີນ. ເຖິງແມ່ນວ່າຈະໃສ່ “ສາຍພາດບ່າທີ່ມີສາຍຮັດແອວ” ເຊິ່ງເປັນສາຍທີ່ສາມາດຄົງທີ່ເຄື່ອງຕັດຫຍ້າໄວ້ຕິດກັບຮ່າງກາຍແລ້ວກໍຕາມ , ແຕ່ມັນກໍບໍ່ສາມາດປ້ອງກັນບໍ່ໃຫ້ເຄື່ອງຕັດຫຍ້າເລື່ອນຂຶ້ນເທິງໄດ້. ການໃຊ້ “ສາຍຮັດກົກຂາ” (ຮູບ 3-6) ຮ່ວມນຳ ເພື່ອປ້ອງກັນບໍ່ໃຫ້ເຄື່ອງຈັກເລື່ອນຂຶ້ນ ຈະສາມາດຫຼຸດຜ່ອນຄວາມສ່ຽງທີ່ຈະເກີດອຸບັດຕິເຫດໄດ້.

ການກວດກາປຸ່ມຢຸດ

ໃນກໍລະນີສຸກເສີນ, ໃຫ້ຢຸດເຄື່ອງຈັກໃນທັນທີໂດຍໃຊ້ປຸ່ມຢຸດ. ຫາກມັນບໍ່ຢຸດ,ໃຫ້ເອົາໄປໃຫ້ຕົວແທນຈຳໜ່າຍກວດກາ ແລະ ສ້ອມແປງ.

ຄັນເລັ່ງແບບມີເດືອ (ແບບໄກປືນ)

ເຄື່ອງຕັດຫຍ້າທີ່ຂາຍໃນຊຸມປີມໍ່ໆມານີ້ ເປັນ ເຄື່ອງຈັກທີ່ມີຄັນເລັ່ງແບບມີເດືອ (ຮູບ 3-7). ເປັນກົນໄກທີ່ໃບມີດຕັດຫຍ້າຈະໝຸນເມື່ອເຮົາໃຊ້ມືບີບເດືອຄັນເລັ່ງ, ກໍລະນີປ່ອຍມືອອກຍ້ອນການລົ້ມ ຄວາມໄວຂອງເຄື່ອງຈັກກໍຈະຫຼຸດລົງໃນທັນທີ, ຄາດ ທີ່ເປັນແຮງວ່ຽງກໍຈະຢຸດ ແລ້ວໃບມີດຕັດຫຍ້າກໍຈະໝຸນຊ້າລົງ.

ກ່ອນຊຸມປີມໍ່ໆມານີ້, ຄັນເລັ່ງແບບຕາຍຕົວທີ່ບໍ່ມີອຸປະກອນນິລະໄພມັກຈະຖືກນຳມາໃຊ້, ແຕ່ກໍໄດ້ມີການຢຸດຕິການຜະລິດໃນເດືອນ 09/2011 ຕາມຄວາມສະໝັກໃຈຂອງຜູ້ຜະລິດ.

ເອກະສານ: “ຂໍ້ຕົກລົງກ່ຽວກັບອຸປະກອນຄັນເລັ່ງຂອງເຄື່ອງຕັດຫຍ້າ” 30/04/2010 ອະນຸກຳມະການເຄື່ອງຕັດຫຍ້າ ສະມາຄົມຜູ້ຜະລິດເຄື່ອງຈັກກະສິກຳຍີ່ປຸ່ນ =>

ການກວດກາເຄື່ອງຕັດໄມ້/ຫຍ້າ (ການອະນາໄມ) ການບຳລຸງຮັກສາ

ການກວດກາ ແລະ ບຳລຸງຮັກສາເຄື່ອງຕັດຫຍ້າຢ່າງເປັນປະຈຳ ແລະ ນຳໃຊ້ທີ່ຢູ່ໃນສະພາບດີສະເໝີ ເປັນສິ່ງສຳຄັນຕໍ່ທັງຄວາມປອດໄພ - ປະສິດທິພາບ ແລະ ການຍືດອາຍຸຂອງເຄື່ອງໄດ້.

ນອກຈາກນີ້, ຍັງເກີດອຸບັດຕິເຫດທີ່ເກີດຂຶ້ນແທ້ຍ້ອນເຄື່ອງຫຼຸດອອກລະຫວ່າງການເຮັດວຽກ ອັນເນື່ອງມາຈາກສະລັກຢ່າງຢູ່ສາຍຮັດເຄື່ອງຈັກ ເກີດເສຍຫາຍ ສົ່ງຜົນໃຫ້ເຄື່ອງຫຼຸດລົງມາບາດເອົາຕີນຂອງຜູ້ນຳໃຊ້ ດັ່ງນັ້ນ ການກວດກາ ແລະ ບຳລຸງຮັກສາ ຕ້ອງໄດ້ປະຕິບັດຕາມຄູ່ມືການໃຊ້ງານເຄື່ອງຈັກທີ່ຕິດມາພ້ອມກັບຜະລິດຕະພັນ ໃນ 3 ຄັ້ງ ຄື: ປະຈຳວັນ, ປະຈຳອາທິດ ແລະ ປະຈຳເດືອນ.

ເຄື່ອງມືທີ່ຈຳເປັນ

ການກວດກາ ແລະ ບຳລຸງຮັກສາເຄື່ອງຕັດຫຍ້າ ຕ້ອງໄດ້ໃຊ້ເຄື່ອງມື ເຊັ່ນ: ກະແຈຫົວກະບອກ, ກະແຈຫົກລ່ຽມ ແລະ ໂຕລະບົດ ທີ່ມີສ່ວນສຳຄັນ ໃນການປະກອບ ຫຼື ຖອດອອກ ແລະ ໝູນແຕ່ລະພາກສ່ວນຂອງເຄື່ອງຕັດຫຍ້າໃຫ້ແໜ້ນ, ນອກຈາກນັ້ນແລ້ວຍັງຕ້ອງມີ ແປງຖູຕ່າງໆ ເພື່ອກຳຈັດສິ່ງສົກກະປົກ ຢູ່ເຄື່ອງຟອກອາກາດ ແລະ ກະແລັດຢູ່ເກຍ ເປັນຕົ້ນ.

ຄູ່ມືການກວດກາ - ບຳລຸງຮັກສາ

ໃນເວລາກວດກາ - ບຳລຸງຮັກສາ, ໃຫ້ມອດເຄື່ອງຈັກ ແລະ ລໍຖ້າຈົນກ່ວາມັນຈະເຢັນລົງ.

ເພື່ອທີ່ຈະສາມາດນຳໃຊ້ເຄື່ອງຈັກຕັດຫຍ້າໄດ້ຢ່າງປອດໄພ ແມ່ນ ຈຳເປັນຕ້ອງໄດ້ກວດກາ - ບຳລຸງຮັກສາຢ່າງເປັນປະຈຳ. ຈະແນະນຳກ່ຽວກັບຄຳແນະນຳຕ່າງໆໃນຕາຕະລາງ 3-2 ແລະຕາຕະລາງ 3-3. ຈຳເປັນຕ້ອງຄວາມຮູ້ສະເພາະທາງໃນການກວດກາ - ບຳລຸງຮັກສາ. ກໍລະນີກວດເບິ່ງຢູ່ຄູ່ມືການນຳໃຊ້ເຄື່ອງຈັກແລ້ວບໍ່ສາມາດດຳເນີນການກວດກາ - ບຳລຸງຮັກສາ ຫຼື ແກ້ໄຂບັນຫາດ້ວຍຕົນເອງ ແມ່ນ ໃຫ້ປຶກສານຳຮ້ານຄ້າ ແລະ ອື່ນໆ.

ຕາຕະລາງ 3-2 ການກວດກາ ກ່ອນ ແລະ ຫຼັງ ການເຮັດວຽກ

ດຳເນີນການກວດກາດັ່ງຕໍ່ໄປນີ້ ກ່ອນ ແລະ ຫຼັງ ການເຮັດວຽກ.

ລາຍການກວດກາ			ມາດຕະການດູແລ
1	ໃບມີດຕັດຫຍ້າ	· ນ້ອດກຽວຫຼົ່ມ · ຮອຍແຕກ, ບິ່ນ, ປາຍມີດບ້ຽວ, ງໍ · ປາຍໃບມີດຫ້ຽນ	· ເຄັ່ງ · ປ່ຽນ · ລັບໃຫ້ຄົມອີກຄັ້ງ ຫຼື ປ່ຽນໃໝ່
2	ຝາຄອບປ້ອນກັນການຝຶ້ງ (ໂກບປ້ອງກັນເສດແຕກຫັກ)	· ໂຕຍຶດ ຫຼົ່ມ · ຄວາມເສຍຫາຍ	· ເຄັ່ງ · ປ່ຽນ
3	ດ້າມຈັບ	· ໂຕຍຶດ ຫຼົ່ມ · ງໍ, ຄວາມເສຍຫາຍ	· ເຄັ່ງ · ປ່ຽນ
4	ກິບ	· ຄາບນ້ຳມັນ	· ເຊັດອອກ
5	ຄັນເລັ່ງ	· ການເຄື່ອນໄຫວບໍ່ດີ	· ການສ້ອມແປງ ຫຼື ການປ່ຽນໃໝ່
6	ສາຍຄັນເລັ່ງ	· ຫຼີ້ນຫຼາຍເກີນໄປ / ຫນ້ອຍເກີນໄປ · ການເຄື່ອນໄຫວບໍ່ດີ	· ການສ້ອມແປງ · ການສ້ອມແປງ ຫຼື ການປ່ຽນໃໝ່
7	ສາຍພາດບ່າ	· ຂໍ ຜິດຮູບ ຫຼື ເສຍຫາຍ · ສາຍຫັດຫຸດລຸ້ຍ	· ການສ້ອມແປງ ຫຼື ການປ່ຽນໃໝ່ · ການສ້ອມແປງ ຫຼື ການປ່ຽນໃໝ່
8	ພາກສ່ວນຕ່າງໆທີ່ຕິດຕັ້ງຢູ່ເຄື່ອງຈັກ	· ຫຼົ່ມ	· ເຄັ່ງ
9	ຖັງນ້ຳມັນ	· ໂຕຍຶດ ຫຼົ່ມ · ທໍ່ນ້ຳມັນເສຍຫາຍ · ຊິນເສຍຫາຍ	· ເຄັ່ງ · ປ່ຽນ · ປ່ຽນ
10	ກະປຸກເກຍ	· ເພົາທີ່ຕິດຢູ່ກັບໃບມີດ	· ການສ້ອມແປງ ຫຼື ການປ່ຽນໃໝ່
11	ທໍ່ຄວັນ	· ໂຕຍຶດ ຫຼົ່ມ · ທໍ່ຄວັນຕັນ	· ເຄັ່ງ · ເອົາແມວຕັນອອກດ້ວຍໂຕລະບິດແປ
12	ໂຕປ້ອງກັນ	· ການປ່ຽນຮູບ ແລະ ການປ່ຽນສີຂອງໂຕປ້ອງກັນ	· ການສ້ອມແປງ ຫຼື ການປ່ຽນໃໝ່
13	ຢາງກັນການສັ່ນສະເທືອນ	· ຮອຍຫ້ຽນ, ຮອຍແຕກ, ຜິດຮູບ, ຫຼົ່ມ	· ປ່ຽນ

ອ້າງອີງ: ຄູ່ມືການນຳໃຊ້ເຄື່ອງຕັດຫຍ້າ Zenoah

ຕາຕະລາງ 3-3 ການກວດກາແຕ່ລະໄລຍະ

ກະລຸນາດຳເນີນການກວດກາໃນແຕ່ລະເວລາຂອງການນຳໃຊ້ ເຊິ່ງ ສະແດງຢູ່ດ້ານລຸ່ມນີ້.

ລາຍການກວດກາ ແລະ ບຳລຸງຮັກສາ		ໄລຍະເວລານຳໃຊ້			ໝາຍເຫດ
		25 ຊົ່ວໂມງ	50 ຊົ່ວໂມງ	100 ຊົ່ວໂມງ	
ເຄື່ອງຈັກ	ການອະນາໄມສ່ວນປະກອບຂອງເຄື່ອງຟອກອາກາດ	○			
	ການກວດກາ ແລະ ອະນາໄມໄສ້ກອງນ້ຳມັນ	○			
	ການກວດກາ, ອະນາໄມ ແລະ ການປັບຫົວທຽນ	○			ໄລຍະຫ່າງ 0,6 ຫາ 0,7ມມ
	ການກວດກາ ແລະ ອະນາໄມ ຊ່ອງແອ ແລະ ຊີ້ງລະບາຍຄວາມຮ້ອນ	○			
	ໝູນກ່ຽວຍຶດກະບອກສູບໃຫ້ແໜ້ນ			○	
	ໝູນແຕ່ລະສ່ວນຂອງເຄື່ອງຈັກໃຫ້ແໜ້ນ			○	
	ເຄື່ອງກຳຈັດກາກບອນທໍ່ຄວັນ			○	
	ວິທີການກຳຈັດຝຸ່ນອອກຈາກລູກດ້າມຄາດ			○	
ໂຕຫຼັກ	ວິທີການກຳຈັດກະແລັດຢູ່ກະປຸກເກຍ	○			
	ເພົາຂັບເຄື່ອນ		○		

ອ້າງອີງ: ຄູ່ມືການນຳໃຊ້ເຄື່ອງຕັດຫຍ້າ Zenoah

ມາດຕະຖານ ແລະ ປະເພດ ຂອງໃບມີດຕັດໄມ້/ຫຍ້າ

ມາດຕະຖານຂອງໃບມີດຕັດຫຍ້າ

ໃບມີດຕັດຫຍ້າຂອງເຄື່ອງຕັດຫຍ້າ ແມ່ນ ຖືກຄອບຄຸມໂດຍມາດຕະຖານອຸດສາຫະກຳຂອງຍີ່ປຸ່ນ “ໃບມີດຕັດຫຍ້າສຳລັບເຄື່ອງຕັດຫຍ້າ” (JIS B 9212).

ໃນມາດຕະຖານນີ້ ນອກຈາກປະເພດຂອງໃບມີດຕັດຫຍ້າແລ້ວ ຍັງໄດ້ມີການກຳນົດ ຂະໜາດ, ຈຳນວນແຂ້ວ, ຊື່ເອີ້ນຂອງແຕ່ລະສ່ວນ ແລະ ຄຸນນະພາບ ຕ່າງໆ ເຊັ່ນ: ເສັ້ນຜ່າສູນກາງພາຍນອກ (200 ມມ, 230 ມມ, 255 ມມ), ຄວາມໜາ (1,25 ມມ, 1,4 ມມ, 1,6 ມມ, 1,8 ມມ, ໃບເລື່ອຍວົງເດືອນ 1,25 ມມ, 1,45 ມມ, 1,65 ມມ), ເສັ້ນຜ່າສູນກາງຂອງຮູທາງກາງ (25,4 ມມ).

ປະເພດ ແລະ ໂຄງສ້າງຂອງໃບມີດຕັດຫຍ້າ


ໃບມີດຕັດຫຍ້າ ມີ ຫຼາກຫຼາຍຊະນິດ, ແຕ່ວ່າ ໃບເລື່ອຍວົງມົນ, ໃບເລື່ອຍໄມ້ໄຜ່, ແລະ ໃບເລື່ອຍວົງເດືອນ ມັກຈະຖືກນຳໃຊ້ໃນອຸດສາຫະກຳປ່າໄມ້, ສ່ວນໃບມີດຕັດ ທີ່ມັກໃຊ້ໃນວຽກກະສິກຳ ແມ່ນ ຈະບໍ່ໄດ້ເອົາມານຳໃຊ້ (ຮູບ. 3-8).

ໃບເລື່ອຍວົງມົນ ແມ່ນ ຄ້າຍຄືກັນກັບແຂ້ວຂອງເລື່ອຍມື ທີ່ລຽງຕາມເສັ້ນຮອບວົງນອກ ແລະ ເໝາະສຳລັບການຕັດຫຍ້າໃນພູເຂົາທີ່ມີພຸ່ມໄມ້ຫຼາຍ (ຮູບ 3-1).

ໃບເລື່ອຍຕັດໄມ້ໄຜ່ ມີຮູບຮ່າງຂອງແຜ່ນໃບທີ່ເໝາະສົມສຳລັບການຕັດຫຍ້າໄມ້ໄຜ່ຢ່າງມີປະສິດທິພາບ, ເຊິ່ງມັນຍັງສາມາດໃຊ້ສຳລັບພືດພຸ່ມ ແລະ ເຄື່ອໄມ້ ທີ່ຫຼາກຫຼາຍທີ່ມີຄວາມຫນາປະມານເທົ່າກັບຫຍ້າໄມ້ໄຜ່ (ຮູບ 3-2).

ໃບເລື່ອຍວົງເດືອນ ເປັນ ແຜ່ນເລື່ອຍວົງເດືອນທີ່ມີປາຍຄາໄບຝັງຢູ່ແຂ້ວຂອບຕັດ (ຮູບ 3-3). ເມື່ອງຈາກປາຍໃບມີດມີຄວາມແຂງ ມັນຈຶ່ງມີຄວາມຄົມໄດ້ເປັນເວລາຍາວນານ, ແຕ່ກໍມີຂໍ້ເສຍ ຄື ບໍ່ສາມາດລັບໃຫ້ຄົມດ້ວຍຕະໄບຫໍາມະດາ ແລະ ປາຍມີດ ອາດຈະຫຼຸດອອກ ແລະ ຟັ້ງຫາຍໄປໄດ້.

ນອກຈາກນັ້ນ, ຍັງມີປະເພດທີ່ມີຮູຢູ່ໃນແຜ່ນຕັດເພື່ອເຮັດໃຫ້ພວກມັນມີນ້ຳໜັກເບົາລົງ, ເຊິ່ງໄມ້ພຸ່ມຕ່າງໆອາດຈະຕົດຢູ່ໃນຮູເຫຼົ່ານີ້ ແລະ ຟັ້ງກະຈາຍໄດ້, ດັ່ງນັ້ນຄວນລະມັດລະວັງໃນເວລານຳໃຊ້.



ຮູບທີ 3-8 ປະເພດແຜ່ນຕັດ



ຮູບ 3-1 ใบเลื่อยวีงมีน



ຮູບ 3-2 ใบเลื่อยตัดไม้ไผ่



ຮູบ 3-3 ใบเลื่อยวีงเดือน

ການລັບຄົມໃບມີດຕັດໄມ້/ຫຍ້າ

ຄວາມຄົມຂອງໃບມີດ ເປັນສິ່ງທີ່ກຳນົດປະສິດທິພາບຂອງເຄື່ອງຕັດຫຍ້າ ແລະ ການລັບມັນໃຫ້ຖືກວິທີ ກໍເປັນສິ່ງສຳຄັນທີ່ສຸດໃນການປ້ອງກັນບັນຫາການສັ່ນສະເທືອນ ແລະ ເພື່ອຄວາມປອດໄພ ແລະ ປະສິດທິພາບໃນການເຮັດວຽກ.

ການລັບມີດ ທີ່ເລີ່ມລັບແຕ່ໄລຍະເນີ້ນໆ ຍ່ອມເປັນການດີຕໍ່ໃບມີດ, ເຮັດໃຫ້ເຮັດວຽກໄດ້ງ່າຍຂຶ້ນ ແລະ ເພີ່ມປະສິດທິພາບໃຫ້ສູງຂຶ້ນນຳອີກດ້ວຍ. ການທ້ຽນຂອງໃບມີດຫຼາຍເກີນໄປ ເປັນຜົນມາຈາກການໃຊ້ວຽກມັນໜັກເກີນໄປ ເຊິ່ງບໍ່ພຽງແຕ່ເປືອງນ້ຳມັນເຊື້ອໄຟ ແລະ ແຮງງານເທົ່ານັ້ນ ແຕ່ຍັງສາມາດເຮັດໃຫ້ເຮັດໃຫ້ເຄື່ອງຕັດຫຍ້າໄດ້ຮັບຄວາມເສຍຫາຍໄດ້. ຫາກໃບມີດໝົດຄົມ ຫຼື ຫຼຸຍຫຽນແລ້ວ ແມ່ນໃຫ້ປ່ຽນ ຫຼື ລັບ ໃບມີດທັນທີ.

ເຄື່ອງມືທີ່ຈຳເປັນສຳລັບການລັບຄົມ

·ຕະໄບ (ໃບເລື່ອຍວົງມົນ)
·ໃບເມັນ (ຕິດຢູ່ກັບເຄື່ອງ) ຫຼື ຕະໄບເຄືອບເພັດ (ໃບເລື່ອຍວົງເຄືອນ)
·ຕະໄບ (ໃບເລື່ອຍຕັດໄມ້ໃຜ່)
·ໂຕະຂັດເງົາ
ຖັງກ່າວ/ເຊັ່ນ

ຂັ້ນຕອນສຳລັບການລັບຄົມໃບມີດຕັດຫຍ້າ

ການແນະນຳວິທີການລັບຄົມ ຂອງໃບມີດ sasa-kari ແລະ ໃບມີດຕັດຫຍ້າ ປະເພດຕ່າງໆ. ຕົວຢ່າງ ຂອງວິທີການລັບໃບມີດໂດຍຄຳນຶງເຖິງບໍລິເວນທີ່ມີການຕັດພຸ່ມໄມ້.

ຮູບພາບ 3-4 ຫາ 3-6, 3-9, ແລະ 3-10 ສະແດງໃຫ້ເຫັນຜົນສຳເລັດຂອງການລັບຄົມໃບເລື່ອຍຕັດໄມ້ໃຜ່.

① ເຮັດໃຫ້ເປັນວົງມົນ

ຕິດລໍ້ເພັດໃສ່ໂຕະຂັດເງົາທີ່ມີຂາຍທົ່ວໄປ (ຮູບທີ 3-7) ແລະ ໃຫ້ນຳໃຊ້ມັນເປັນປະຈຳເພື່ອຂັດຜິວໃຫ້ລາດເພື່ອສ້າງເປັນວົງມົນ (ຮູບ 3-8). ການລັບຄົມໃບມີດດ້ວຍມື, ຈະເຮັດໃຫ້ມັນສູນເສຍຮູບຮ່າງຂອງມັນ ແລະ ຈະກໍ່ໃຫ້ເກີດການສັ່ນສະເທືອນ.

② ລັບຄົມ ມຸມອຽງຄົມຕັດ ດ້ວຍຕະໄບ

ຫຼັງຈາກໄດ້ ມຸມລາດ ແລະ ກະກຽມ ມຸມລາດແລ້ວ, ໃຫ້ໃຊ້ຕະໄບມົນ (ເສັ້ນຜ່າກາງ 7 ຫາ 8 ມມ) ລັບ ມຸມອຽງຄົມຕັດ ໃຫ້ຄົມ. ໃນການລັບ ມຸມອຽງຄົມຕັດ ແມ່ນ ໃຫ້ຈັບໃບເລື່ອຍໄມ້ໃຜ່ຕັ້ງຂຶ້ນ ຄືກັນກະຮູບ 3-8 ແລ້ວໃຫ້ເໜັງຕະໄບຄືກັນກັບການລັບຄົມຈັກເລື່ອຍໄມ້(ຮູບທີ 3-9).


③ ດຳເນີນການໄຂແຂ້ວໃບເລື່ອຍ

ການໄຂແຂ້ວໃບເລື່ອຍ ແມ່ນ ດຳເນີນການໂດຍການນຳໃຊ້ “ເຄື່ອງແຍກແຂ້ວໃບເລື່ອຍ” (ຮູບທີ 3-11). ພຽງງ່ໍປ່ຽນແຂ້ວເລັກນ້ອຍ.

④ ຖູ ມຸມລາດປ່ຽນໃບມີດ

ສຸດທ້າຍ, ຄ່ອຍໆຖູ ມຸມລາດປ່ຽນໃບມີດ ດ້ວຍຕະໄບ (ຮູບ 3-10). ຖູ ສ່ວນປ່ຽນຂອງມັນຄ່ອຍໆໃຫ້ໄດ້ມຸມປະມານ 5 ຫາ 10 ອົງສາ.







ຮູບທີ 3-9

ຮູບ 3-4 ມຸມລາດປາຍມີດ

ມຸມລາດປາຍມີດ ຈະເປັນ 5 ຫາ 10 ອົງສາ. ຫາກເວົ້າດ້ວຍການປຽບທຽບໃສ່ ຈັກເລື່ອຍໄມ້ ຈະມີລັກສະນະຄືກັບການລັບຄົມຈຸດສຳຜັດຂອງແຂ້ວດ້ານເທິງ ແລະ ດ້ານຂ້າງ (ຈຸດຕັດ) ໃຫ້ຄົມຂຶ້ນ. ອັນນີ້ ແມ່ນ ການຄ່ອຍໆລັບດ້ວຍຕະໄບແປ.






ຮູບ 3-10

ຮູບພາບ 3-5 ມຸມລາດ

ມຸມລາດ ແມ່ນ 55 ຫາ 60 ອົງສາ. ຫາກເວົ້າດ້ວຍການປຽບທຽບໃສ່ ຈັກເລື່ອຍໄມ້ ແມ່ນ ຈະມີລັກສະນະຄືກັບມຸມຂອງຄວາມຄົມຂອງແຂ້ວໃບມີດດ້ານເທິງ.




ຮູບ 3-6 ມຸມອຽງຄົມຕັດ


ມຸມອຽງຄົມຕັດ ຂອງ ແຂ້ວໃບມີດ ແມ່ນ 85 ຫາ 90 ອົງສາ, ແລະ ມຸມລາດ ແມ່ນ 5 ຫາ 10 ອົງສາ. ມຸມອຽງຄົມຕັດ ແມ່ນ ຈະຄ້າຍຄືກັນກັບມຸມຂ້າງຂອງໃບມີດຈັກເລື່ອຍໄມ້. ມຸມອຽງຄົມຕັດ ແມ່ນ ເຮັດດ້ວຍຕະໄບມົນ, ສ່ວນມຸມລາດ ແມ່ນ ເຮັດດ້ວຍ ຕະໄບແປ.



ຮູບພາບ 3-7 ໂຕະຂັດ




ຮູບພາບ 3-8 ເຮັດໃຫ້ເປັນວົງມົນ




ຮູບທີ 3-9 ລັບຄົມ ມຸມອຽງດ້ວຍຕະໄບ



ຮູບທີ 3-10 ຖ ມຸມປາຍຄົມມີດ




ຮູບ 3-11 ຕົວຢ່າງ "ການໄຂແຂ້ວໃບເລື່ອຍ" ທີ່ງໍປາຍແຂ້ວດ້ວຍຫຼັກການຄັນໂຍກ




ການໄຂແຂ້ວໃບມີດ ແມ່ນ ຈະແບ່ງທັງດ້ານໜ້າ ແລະ ດ້ານຫຼັງໃຫ້ເທົ່າກັນ ເຊິ່ງ ມີຂະໜາດປະມານເຄິ່ງໜຶ່ງ ຂອງໃບເລື່ອຍ

ຮູບທີ 3-12 ລະດັບການງໍປາຍແຂ້ວໃບມີດພຽງເລັກໜ້ອຍ




ຮູບທີ 3-13 ຄວາມສຳພັນ ລະຫວ່າງ ໃບເລື່ອຍ ແລະ ຕະໄບມົນ

ການໃຊ້ຕະໄບມົນ ເພື່ອລັບໃບມີດ ໂດຍໃຫ້ເສັ້ນຜ່າສູນກາງ 1/5 ຢູ່ທີ່ດ້ານນອກ ຂອງໃບມີດ.



ຮູບທີ 3-14 ການລັບໃບເລື່ອຍ

ການລັບ ແມ່ນ ໃຫ້ຖູໃບມີດເບົາໆ ໃຫ້ເປັນມຸມ ປະມານ 10 ຫາ 15 ອົງສາ ຈາກ ㉀ ຫາ ㉁ ໄປທາງດ້ານຫຼັງຂອງໃບມີດ. ອີກຢ່າງໜຶ່ງ, ໜ້າມຸມອຽງຄົມຕັດ ຍັງມີຄວາມປູໂລ້ນ ໜ້ອຍ ສະນັ້ນ ໃຫ້ລັບຕາມສະພາບ.



ຮູບ 3-15 ຕົວຢ່າງຂອງມຸມລັບຄົມຂອງໃບເລື່ອຍວົງເດືອນ

ມຸມລາດ ແມ່ນ 10 ຫາ 15 ອົງສາ. ອ້າງອີງຢູ່ປຶ້ມຄູມືການນຳໃຊ້ຂອງຜູ້ຜະລິດ.

ວິທີການລັບຄົມຢູ່ບ່ອນເຮັດວຽກ

ຢູ່ບ່ອນເຮັດວຽກ ບໍ່ໄດ້ພຽງແຕ່ລັບຄົມໃບມີດທີ່ມັນບໍ່ຄົມແລ້ວເທົ່ານັ້ນ, ແຕ່ຍັງລັບຄົມໃບມີດທີ່ໃກ້ຈະບໍ່ຄົມແລ້ວອີກດ້ວຍ. ເພື່ອເປັນການ ຮັບປະກັນຄວາມຄົມຕະຫຼອດເວລາ. ກວດເບິ່ງມັນຄົມໃບມີດໃນລະຫວ່າງ ພັກຜ່ອນ, ຫາກເຫັນວ່າປາຍແຂ້ວເລີ່ມປູ້ແລ້ວ ແມ່ນໃຫ້ລັບຄົມ ມຸມ ອຽງຄົມຕັດດ້ວຍຕະໄບມົນ.

ຫາກບໍ່ມີບັນຫາໃດເປັນພິເສດກັບໃບມີດ ແມ່ນ ໃຫ້ໃຊ້ຕະໄບແບນຖູດ້ານເທິງຂອງໃບມີດອີກຄັ້ງ. ເຄື່ອນ ຕະໄບແປ ໄປຫາງມຸມແຂ້ວເພື່ອເຮັດ ໃຫ້ມີມຸມລາດຢູ່ປາຍແຂ້ວ. ສິ່ງທີ່ຕ້ອງເຮັດ ແມ່ນ ຄ່ອຍໆປັບຂອບແຂ້ວໃບມີດ.

ນ້ຳມັນປະສົມ

ຄວາມໝາຍຂອງນ້ຳມັນປະສົມ - ວິທີການຜະລິດ

ເຄື່ອງຈັກທີ່ຕິດຕັ້ງຢູ່ໃນເຄື່ອງຕັດຫຍ້າທົ່ວໄປ ເປັນ ເຄື່ອງຈັກ 2 ຈັງຫວະ ເຊິ່ງມັນຈະໃຊ້ນ້ຳມັນປະສົມເປັນນ້ຳມັນເຊື້ອໄຟ.

ນ້ຳມັນປະສົມ ເປັນນ້ຳມັນທີ່ປະສົມ ດ້ວຍ ນ້ຳມັນແອັດຊັງ ແລະ ນ້ຳມັນເຄື່ອງ (ນ້ຳມັນເຄື່ອງຫຼໍ່ລື່ນ). ໃນການປະສົມນ້ຳມັນດັ່ງກ່າວນີ້ດ້ວຍຕົນເອງ ແມ່ນ ຈະຕ້ອງເອົາໃຈໃສ່ກ່ຽວກັບສິ່ງຕໍ່ໄປນີ້.

ນ້ຳມັນປະສົມ

ຜູ້ຜະລິດເຄື່ອງຕັດຫຍ້າ ລະບຸວ່າ ໃນການປະສົມນ້ຳມັນແອັດເຊັງ ແລະ ນ້ຳມັນເຄື່ອງ (ນ້ຳມັນເຄື່ອງຫຼໍ່ລື່ນ) ແມ່ນ ໃຫ້ປະສົມ ໃນອັດຕາສ່ວນ 25:1 ຫຼື 50:1. ອັດແທກ ແລະ ປະສົມຢ່າງຖືກຕ້ອງ.

ຕົວຢ່າງ: ມີບາງຄົນເອົານ້ຳມັນເຄື່ອງ 200 ຊີຊີ ໃສ່ກະປ໋ອງ 10 ລິດ ແລ້ວເອົານ້ຳມັນແອັດຊັງເທລົງໄປ ໂດຍບໍ່ໄດ້ຄົນມັນ. ເພາະເຂົ້າໃຈຜິດວ່າ ຖ້າເທມັນລົງແຮງໆມັນກໍຈະປະສົມກັນເອງ, ສະນັ້ນ ຈະຕ້ອງຄົນໃຫ້ມັນເຂົ້າກັນຄັກແມ່. ປິ່ນຂຶ້ນປິ່ນລົງ ແລ້ວສັ່ນມັນ 2 – 3 ຄັ້ງ ເພື່ອໃຫ້ມັນປະສົມເຂົ້າກັນ.

ນ້ຳມັນປະສົມເສື່ອມສະພາບ. ຫາກບໍ່ໄດ້ນຳໃຊ້ເຄື່ອງຈັກເປັນເວລາດົນ, ອາດຈະເຮັດໃຫ້ສະພາບຂອງເຄື່ອງຈັກມີບັນຫາ ສະນັ້ນ ຕ້ອງເຮັດໃຫ້ຖັງນ້ຳມັນເຊື້ອໄຟເປົ່າປະໄວ້.

ການຈັດການກັບນ້ຳມັນປະສົມ

ນ້ຳມັນປະສົມ ຖືກກຳນົດວ່າ ເປັນສານອັນຕະລາຍພາຍໃຕ້ກົດໝາຍວ່າດ້ວຍການດັດເພີ່ງ, ດັ່ງນັ້ນ ນ້ຳມັນປະສົມຈະຕ້ອງຖືກຈັດການຕາມຄວາມເໝາະສົມ.

ໂດຍສະເພາະຢ່າງຍິ່ງ ເມື່ອມີການພົກພາ ຄວນໃຊ້ກະປ໋ອງນ້ຳມັນ ແອັດຊັງສະເພາະ, ຫ້າມພົກພາໄວ້ໃນກະປ໋ອງເຄື່ອງດື່ມ ຫຼື ພາຊະນະພາດສະຕິກສຳລັບນ້ຳມັນກາຊວນ.

ກະປ໋ອງພົກພານ້ຳມັນ ແມ່ນ ມີຫຼາຍຊະນິດ ແລະ ກະປ໋ອງຂະໜາດນ້ອຍກໍມີຂາຍຕາມຫ້ອງຕະຫຼາດເຊັ່ນກັນ, ດັ່ງນັ້ນ ຢ່າລືມນຳໃຊ້ໃຫ້ຖືກຕ້ອງຕາມຈຸດປະສົງ.

ກະລຸນາພິຈາລະນາຂໍ້ຄວນລະວັງເຫຼົ່ານີ້ກ່ຽວກັບນ້ຳມັນປະສົມໃນລັກສະນະດຽວກັນກັບຈັກເລື່ອຍໄມ້ທີ່ມີເຄື່ອງຈັກ 2 ຈັງຫວະ.

ການລັບຄົມ ແລະ ການສັ່ນສະເທືອນ

ອາການທີ່ສາມາດເອີ້ນວ່າ ຄວາມຜິດປົກກະຕິຂອງການສັ່ນສະເທືອນທີ່ຊັດເຈນ ເຊິ່ງບໍ່ແມ່ນໂລກນິ້ວມືຂາວຈືດ ຍ້ອນການສັ່ນສະເທືອນ (Vibration White Finger: VWF) ນັ້ນ, ໜ້າເສຍດາຍທີ່ອາການດັ່ງກ່າວ ແມ່ນພົບເຫັນໄດ້ທົ່ວໄປໃນຂົງເຂດອຸດສາຫະກຳ. ນອກຈາກນີ້ ກໍ່ມີການລາຍງານ ວ່າ: ຜູ້ຄົນທີ່ໃຊ້ເຄື່ອງຕັດຫຍ້າເປັນເວລາຫຼາຍອາທິດ, ແລ້ວມື້ໃດມື້ໜຶ່ງ ພວກເຂົາກໍບໍ່ສາມາດຈັບໂທລະສັບຂຶ້ນໄດ້ ໂດຍບໍ່ມີອາການເຕືອນລ່ວງໜ້າໃດໆເລີຍ.

ການລັບໃບມີດຊ້ຳໄປຊ້ຳມາ ຈະເຮັດໃຫ້ໃບມີດສູນເສຍຄວາມສົມດຸນ ແລະ ກໍ່ໃຫ້ເກີດການສັ່ນສະເທືອນໄດ້. ແນ່ນອນ,ໃນຂະນະເຮັດວຽກຢູ່ ຫາກໃບມີດເກີດໄດ້ຮັບການກະທົບຢ່າງແຮງແລ້ວປ່ຽນຮູບ ກໍສົ່ງຜົນເຮັດໃຫ້ເກີດການສັ່ນສະເທືອນເຊັ່ນກັນ.

ຈະນຳໃຊ້ ເຄື່ອງມືຊ່າງສຳລັບການໜີບຈັບໃຫ້ແໜ້ນ(Jig) ທີ່ຈະນຳສະເໜີໃນຄັ້ງນີ້ ເປັນເຄື່ອງມືໃນການຮັກສາຄວາມສົມດຸນ(Balance). ດ້ວຍວິທີນັ້ນ, ຈະສາມາດນຳໃຊ້ໃບມີດໄດ້ຈົນກ່ວາມັນຈະມີຂະຂະຫນາດນ້ອຍລົງ ແລະ ປະສິດທິພາບໜ້ອຍລົງ.


ການປ້ອງກັນການດີດກັບ

ດັ່ງທີ່ໄດ້ແນະນຳ, ການດີດກັບ ເປັນ ປະກົດການຟື້ງກັບຄືນມາ ທີ່ເກີດຂຶ້ນໃນເວລາທີ່ໃບມີດກຳລັງໝຸນແລ້ວໄປຕຳເອົາວັດຖຸທີ່ຈະຕັດ.

ໃບມີດຂອງຈັກຕັດຫຍ້າມີຮູບຮ່າງເປັນແຜ່ນມົນ, ສະນັ້ນ ການດີດກັບ ແມ່ນ ສາມາດເກີດຂຶ້ນໄດ້ທົ່ວທຸກດ້ານຂອງໃບມີດ. ການດີດກັບບໍ່ພຽງແຕ່ຈະດີດກັບໄປທາງຂວາເທົ່ານັ້ນ ແຕ່ໃບມີດອາດຈະປິ່ນເຂົ້າມາຫາໂຕມັນເອງ (ດ້ານບັງຄັບ). ນຳໃຊ້ດ້ວຍຄວາມເອົາໃຈໃສ່ ໂດຍສະເພາະກັບພື້ນທີ່ທີ່ມີແນວໂນ້ມຈະເກີດການດີດກັບຂອງໃບມີດຕັດຫຍ້າ (ເບິ່ງແຜນວາດ).



ການດີດກັບໂດຍທີ່ເຄື່ອງຕັດຫຍ້າຟື້ງໄປທາງເບື້ອງຂວາ



ສ່ວນທີ່ຈະດີດກັບງ່າຍ

ການບຳລຸງຮັກສາ

No.04 ການບຳລຸງຮັກສາຈັກເລື່ອຍໄມ້ (ຈັກສະຕິນ)

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ກ່ຽວກັບຄວາມຮູ້ - ເຕັກນິກ ແລະ ຄວາມສາມາດທີ່ຈຳເປັນສຳລັບການບຳລຸງຮັກສາຈັກເລື່ອຍໄມ້ ແລະ ພັດທະນາຄວາມສາມາດໃນການບຳລຸງຮັກສາທີ່ຖືກຕ້ອງ ແລະ ແນ່ນອນ.

ຄຳສຳຄັນ

ການສັ່ນສະເທືອນ, ການດຶດກັບ, ການກວດກາຕາມໄລຍະເວລາ, ແຜ່ນບັງຄັບໂສ້ (ບາ ຈັກສະຕິນ), ການລັບຄົມ, ຕະໄບ, ໂສ້, ໃບມີດໂສ້, ໂຕວັດແທກຄວາມເລິກ, ປະເພດທີ່ເປັນຂໍ, ປະເພດທີ່ເປັນຂໍລາດຊັ້ນ, ເຄື່ອງຈັກ 2 ຈັງຫວະ, ນ້ຳມັນປະສົມ, ນ້ຳມັນເຄື່ອງໂສ້

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

- ການສັ່ນສະເທືອນທີ່ເກີດຈາກບັນຫາໃນການລັບຄົມຂອງໂສ້ ອາດຈະເຮັດໃຫ້ເກີດ ອາການບໍ່ສະບາຍ ຫຼືຄວາມບົກຜ່ອງທີ່ເກີດຈາກການສັ່ນສະເທືອນ (ພະຍາດອາຊີບ).
- ອັນຕະລາຍຂອງການດຶດກັບ ທີ່ເກີດຈາກສະພາບຂອງການລັບຄົມໂສ້
- ໃນ ການ ນຳ ໃຊ້ ໂສ້ ເຂົ້າ ໃນ ການ ເຮັດ ວຽກ , ໃຫ້ ໃສ່ ຊຸດ ປ້ອງ ກັນ ໂສ້, ຖົງ ມື ກັນ ການ ສັ່ນ ສະ ເທືອນ ເພື່ອ ເປັນ ການ ປ້ອງ ກັນ ຮ່າງ ກາຍ ຂອງ ຕົນ ເອງ ແລະ ໃຫ້ ໃສ່ ແມວ ອັດ ຫູ (ແມວ ຄອບ ຫູ) ເພື່ອ ປ້ອງ ກັນ ການ ສູນ ເສຍ ການ ໄດ້ ຍິນ ໄປ ພ້ອມ ໆ ກັບ ການ ກຳ ນົດ ລ່ວງ ໜ້າ ວ່າ ຈະ ສື່ ສານ ກັນ ແນວ ໃດ ເມື່ອ ບໍ່ ໄດ້ ຍິນ ສຽງ ເພາະ ວ່າ ຈະ ມີ ສຽງ ຫຼາຍ ປະ ເພດ ທີ່ ຈະ ບໍ່ ສາ ມາດ ໄດ້ ຍິນ ໄດ້, ແລະ ໃຫ້ ໃສ່ ແວ່ນ ຕາ ນິ ລະ ໄພ (ໜ້າ ກາກ).



ຮູບທີ4-1 ຮູບແບບການການລັບຄົມທີ່ດີ ແມ່ນ ການວາງຂາໜ້າ ແລະ ຂາຫຼັງຂອງຜູ້ລັບຄົມ ໃຫ້ຢູ່ໃນລັກສະນະທີ່ເກືອບຊື່ກັນ ໂດຍຈັບຕະໄບໄວ້ໃກ້ລຳໂຕ ແລະ ເອົາຂໍ້ສອກຕິດແນບສະໜິດກັບລຳໂຕ ເພື່ອໃຫ້ ຂໍ້ສອກ ມື ແລະ ຕະໄບ ຢູ່ໃນລັກສະນະເປັນແລວເສັ້ນຊື່ລວງນອນ.

ຄວາມສຳຄັນໃນການບຳລຸງຮັກສາຈັກເລື່ອຍໄມ້

ໂຄງປະກອບສ້າງ ແລະ ອັນຕະລາຍ ຂອງ ຈັກເລື່ອຍໄມ້

ຈັກເລື່ອຍໄມ້ ເປັນເຄື່ອງມືທີ່ມີການສັ່ນສະເທືອນ ເມື່ອເປີດເຄື່ອງຈັກ ການສັ່ນສະເທືອນກໍຈະເກີດຂຶ້ນໃນຂະນະທີ່ເຄື່ອງຈັກກຳລັງໝຸນ ແລ້ວກໍຈະນຳໃຊ້ເຄື່ອງດັ່ງກ່າວ ໂດຍການໃຊ້ມືປະຄອງ. ນອກຈາກນັ້ນແລ້ວ, ເມື່ອນຳໃຊ້ເຄື່ອງດັ່ງກ່າວຕັດໄມ້, ການສັ່ນສະເທືອນກໍຍິ່ງຈະແຮງຂຶ້ນ, ເຊິ່ງມັນມີຄວາມເປັນໄປໄດ້ທີ່ຈະພາໃຫ້ເກີດ ອາການບໍ່ສະບາຍ ຫຼື ພາວະບົກຜ່ອງເຊິ່ງເກີດຈາກການສັ່ນສະເທືອນ (ພະຍາດອາຊີບ).

ປະລິມານການສັ່ນສະເທືອນ ແຕກຕ່າງກັນຢ່າງຫຼວງຫຼາຍ ຂຶ້ນກັບສະພາບໃນການບຳລຸງຮັກສາຈັກເລື່ອຍໄມ້. ຕົວຢ່າງ, ຫາກນ້ອຍ ໂຕ 1 ຫຼືມ ຫຼື ເຮ່ຍ, ມັນສາມາດເຮັດໃຫ້ເກີດການສັ່ນສະເທືອນທີ່ຜິດປົກກະຕິ, ແລະຍິ່ງໄປກວ່ານັ້ນ ມັນສາມາດນຳພາໄປສູ່ອຸບັດຕິເຫດແຮງງານໄດ້. ສະນັ້ນ, ການກວດກາ ແລະ ບຳລຸງຮັກສາ ແມ່ນ ມີຄວາມສຳຄັນຫຼາຍ, ບັນດາລາຍການກວດກາ ຄວນກຳນົດ ແລະ ດຳເນີນ ເປັນ 3 ໄລຍະຄື: ປະຈຳວັນ, ປະຈຳອາທິດ ແລະ ປະຈຳເດືອນ.

ຫນຶ່ງໃນບັນດາລາຍການບຳລຸງຮັກສາທີ່ສຳຄັນທີ່ສຸດ ແມ່ນ ການຮັກສາໂສ້ເລື່ອຍໃຫ້ຢູ່ໃນສະພາບທີ່ດີທີ່ສຸດ.

ຈັກເລື່ອຍໄມ້ ເປັນ ຈັກທີ່ຂັບເຄື່ອນດ້ວຍພະລັງງານຂອງເຄື່ອງຈັກ, ດັ່ງນັ້ນ ເຖິງແຂ້ວຂອງໃບມີດຈະບໍ່ຄົມ ກໍສາມາດໃຊ້ຕັດໄມ້ໃຫ້ຂາດໄດ້. ດ້ວຍເຫດນີ້, ຈຶ່ງມີກໍລະນີທີ່ມີການລະເລີຍກ່ຽວກັບການບຳລຸງຮັກສາ ເຊັ່ນ ການລັບຄົມ ເປັນຕົ້ນ, ເຊິ່ງການລັບຄົມ ສາມາດເຮັດໃຫ້ມີຄວາມແຕກຕ່າງຢ່າງຫຼາຍໃນການເກີດການສັ່ນສະເທືອນ. ການລັບຄົມ ເປັນ ສິ່ງຈຳເປັນໃນການປ້ອງກັນບັນຫາການສັ່ນສະເທືອນ. ກ່ອນອື່ນໝົດ, ມາຄຳນຶງເຖິງຄວາມປອດໄພ ແລະ ມາຮຽນຮູ້ກ່ຽວກັບເຕັກນິກໃນການລັບຄົມທີ່ຖືກຕ້ອງ ແລ້ວເຮັດໃຫ້ການລັບຄົມເປັນຄວາມລຶ້ງເຄີຍທີ່ຕ້ອງໄດ້ປະຕິບັດຢ່າງເປັນປະຈຳ (ຮູບ 4-1). ນອກຈາກນີ້, ໃຫ້ຖືໂສ້ສຳຮອງໄປນຳເພື່ອປ່ຽນເມື່ອໂສ້ໄດ້ຮັບຄວາມເສຍຫາຍ.

ຕົວຢ່າງຂອງ ອຸບັດຕິເຫດ ທີ່ເກີດຈາກການບຳລຸງຮັກສາບໍ່ດີ

ການບຳລຸງຮັກສາໂສ້ທີ່ບໍ່ຖືກຕ້ອງ ອາດຈະເຮັດໃຫ້ເກີດອຸບັດຕິເຫດທີ່ຮ້າຍແຮງໄດ້. ມີຕົວຢ່າງການເກີດອຸບັດຕິເຫດເຖິງຂັ້ນເສຍຊີວິດ ຍ້ອນໂສ້ຂອງຈັກເລື່ອຍໄມ້ ບໍ່ຄົມ. ໃນຕົວຢ່າງອຸບັດຕິເຫດຕໍ່ໄປນີ້, ເບິ່ງຄືວ່າສາເຫດ 1 ຂອງອຸບັດຕິເຫດ ຈະສາມາດແກ້ໄຂໄດ້ ດ້ວຍການລັບຄົມໂສ້ໃຫ້ໄດ້ຢ່າງຖືກຕ້ອງ. ນອກຈາກນັ້ນແລ້ວ ໃນເວລາດຳເນີນການບຳລຸງຮັກສາເຄື່ອງມື ມັນຍັງສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການຮັກສາສະຕິກ່ຽວກັບຄວາມປອດໄພຢູ່ສະເໝີ.

<ສະພາບການເກີດອຸບັດຕິເຫດ>

ໃນຕອນທີ່ຜູ້ເຄາະຮ້າຍ ໄດ້ຕັດຕົ້ນສົນ (ເສັ້ນຜ່າສູນກາງ 20 ຊັງຕີແມັດ, ຄວາມສູງ 14 ແມັດ) ໃນຂະນະທີ່ລາວກຳລັງໃຊ້ເລື່ອຍບາກໜ້າຕົ້ນໄມ້ຢູ່ນັ້ນ, ແຜ່ນບັງຄັບໂສ້ ໄດ້ຄາຢູ່ຕົ້ນໄມ້, ດັ່ງນັ້ນ ຈຶ່ງບໍ່ສາມາດເຄື່ອນເໜັງຕໍ່ໄດ້. ດັ່ງນັ້ນ, ລາວຈຶ່ງເອົາບ່າຂອງລາວໄປດັນຕົ້ນໄມ້ເບື້ອງທີ່ມີຮອຍບາກໜ້າ ເພື່ອຕ້ອງການໃຫ້ຕົ້ນໄມ້ລົ້ມ, ໃນຂະນະທີ່ລາວໃຊ້ກຳລັງດັນຢ່າງເຕັມທີ່ ລາວໄດ້ລົ້ມໄປໃສ່ກ້ອນຫີນທີ່ຢູ່ດ້ານໜ້າຕົ້ນໄມ້ ແລະ ກໍເຮັດໃຫ້ລາວເສຍຊີວິດ.

<ກ່ຽວກັບສາເຫດ ແລະ ມາດຕະການປ້ອງກັນ>

ຕົ້ນໄມ້ທີ່ຈະປ້ຳ ເປັນ ຕົ້ນໄມ້ທີ່ມີລຳຕົ້ນທີ່ບ້ຽວ ແລະ ງ່ຳໄມ້ກໍບໍ່ສະໝ່ຳສະເໝີ ແລະ ໃນມື້ຕັດໄມ້ ກໍໄດ້ຮັບອິດທິພົນຈາກລົມນຳອີກ, ເຊິ່ງໃນຂະນະທີ່ກຳລັງປ້ຳຢູ່ນັ້ນ ສາຍໂສ້ກໍຢູ່ໃນສະພາບທີ່ຄາຕົ້ນໄມ້ງ່າຍ. ນອກຈາກນັ້ນ, ໂສ້ກໍບໍ່ຄົມ ດັ່ງນັ້ນ ຈຶ່ງເຮັດໃຫ້ໃບມີດຂອງໂສ້ຕັດບໍ່ເຂົ້າ.

ແຫຼ່ງຂ່າວ: ຕົວຢ່າງອຸບັດຕິເຫດແຮງງານ “ເວັບໄຊຄວາມປອດໄພໃນບ່ອນເຮັດວຽກ” ເວັບໄຊກະຊວງສາທາລະນະສຸກ ແຮງງານ ແລະ ສະຫວັດດີການ

ໂຄງປະກອບສ້າງຂອງຈັກເລື່ອຍໄມ້

ໂຄງປະກອບສ້າງພື້ນຖານຂອງຈັກເລື່ອຍໄມ້

ຈັກເລື່ອຍໄມ້ ປະກອບມີ ເຄື່ອງຈັກ ແລະ ໂສ້, ແຜ່ນບັງຄັບໂສ້ ແລະ ເຟືອງຂັບເຄື່ອນ. ໃນການຕັດຕົ້ນໄມ້ຕ່າງໆ ສິ່ງເຫຼົ່ານີ້ ເຮັດວຽກຮ່ວມກັນ ເປັນເຄື່ອງເຄື່ອງດຽວ. ໃນເວລາດຽວກັນ, ຈຳເປັນຕ້ອງໄດ້ມີການບຳລຸງຮັກສາຢ່າງຕໍ່ເນື່ອງເພື່ອຮັກສາຄວາມສາມາດໃນການເຮັດວຽກຂອງມັນ.

ແລະ ກໍຍັງມີການນຳໃຊ້ກົນໄກການປ້ອງກັນການສັ່ນສະເທືອ, ການດຳເນີນການມາດຕະການປ້ອງກັນການສັ່ນສະເທືອນ ຕ່າງໆເປັນຕົ້ນ, ນຳໃຊ້ໂກບໜ້າ ແລະ ແຜ່ນບັງຄັບໂສ້ ເປັນໂຕປ້ອງກັນການດີດກັນໄປພ້ອມໆກັບການປ້ອງກັນຜູ້ໃຊ້ງານ ໃນກໍລະນີທີ່ໂສ້ຂາດ ຫຼື ໂສ້ຫຼຸດ ແລະ ນຳໃຊ້ໂຕລັອກຄັນເລັ່ງ ເພື່ອປ້ອງກັນໃນກໍລະນີຄັນເລັ່ງເຮັດວຽກຜິດປົກກະຕິ.


ເບິ່ງຮູບ 4-2 ສຳລັບພາກສ່ວນຕົ້ນຕໍຂອງຈັກເລື່ອຍໄມ້ ນອກຈາກນີ້ ຍັງມີຄວາມສຳຄັນທີ່ຕ້ອງອ່ານຄູ່ມືຄຳແນະນຳຈັກເລື່ອຍໄມ້ທີ່ຕົນເອງຈະໃຊ້ ກ່ອນທີ່ຈະນຳໃຊ້ມັນ.


ການຄັດເລືອກຈັກເລື່ອຍໄມ້

ເລືອກສາຍໂສ້ທີ່ມີນ້ຳໜັກເບົາທີ່ສຸດເທົ່າທີ່ຈະເປັນໄດ້ ແລະ ໃຊ້ເລື່ອຍຂະໜາດໃຫຍ່ເມື່ອຫຼີກລ່ຽງບໍ່ໄດ້ເທົ່ານັ້ນ ເຊັ່ນ: ເມື່ອຕັດຕົ້ນໄມ້ທີ່ມີເສັ້ນຜ່າສູນກາງ 70 ຊັງຕີແມັດ ເຊິ່ງມີຄວາມ ສູງຊ່ຳໜ້າເອິກຂຶ້ນໄປ. ນອກຈາກນັ້ນ, ຄວາມຍາວຂອງແຜ່ນບັງຄັບໂສ້ ຕ້ອງບໍ່ເກີນຂອບເຂດຈຳກັດທີ່ຈຳເປັນສຳລັບການຕັດໄມ້.

ພະລັງງານຂອງຈັກເລື່ອຍໄມ້


ພະລັງງານຂອງຈັກເລື່ອຍໄມ້ທີ່ໃຊ້ຢູ່ສະໜາມວຽກຂອງອຸດສາຫະກຳປ່າໄມ້ ຫຼັກໆ ແມ່ນ ເປັນປະເພດເຄື່ອງຈັກ, ແຕ່ວ່າ ໃນຊຸມປີມໍ່ໆມານີ້ ກໍໄດ້ມີການເອົາຈັກເລື່ອຍໄມ້ແບບມີແບັດເຕີລີ້ເຂົ້າມາບຳໃຊ້ໃນການເຮັດວຽກເຊັ່ນກັນ.






ຮູບ 4-2 ຊີ່ໂຄງສ້າງ ແລະ ພາກສ່ວນຂອງໂສ້ (ແບບດ້ານຈັບດ້ານຫຼັງ)

ເອກະສານ: ຄູ່ມືການສອນ Zenoah GZ3950EZ



ຮູບ 4-3 ປະເພດໂສ້ ດ້ານຈັບດ້ານເທິງ

ເອກະສານ: ຂໍ້ມູນຜະລິດຕະພັນ Zenoah GZ2800T



ຮູບ 4-4 ຈັກເລື່ອຍໄມ້ແບບມີແບັດເຕີລີ້

ເອກະສານ: ຂໍ້ມູນຜະລິດຕະພັນເຫຼັກ MSA 200 C-B

ການກວດກາສາຍໂສ້ (ການອະນາໄມ)/ການບຳລຸງຮັກສາສາຍໂສ້ ຈັກເລື່ອຍໄມ້

ການກວດກາ ແລ ການດູແລ

ປະຕິບັດຕາມຂໍ້ຄວນລະມັດລະວັງທີ່ລະບຸໃນຄູ່ມືຄຳແນະນຳການໃຊ້ສຳລັບແຕ່ລະລຸ້ນ ແລະ ຕ້ອງດຳເນີນການກວດກາ ແລະ ການບຳລຸງຮັກສາທີ່ລະບຸໄວ້ດ້ານລຸ່ມນີ້ຢ່າງຖືກຕ້ອງ.

① ການກວດກາ ແລະ ບຳລຸງຮັກສາປະຈຳວັນ

ການກວດກາ ແລະ ບຳລຸງຮັກສາປະຈຳວັນ ກ່ຽວກັບພາກສ່ວນພາຍນອກ, ຫຼັກໆ ແມ່ນ ຈະດຳເນີນດັ່ງຕໍ່ໄປນີ້, ເຊິ່ງຫາກພົບຄວາມຜິດປົກກະຕິໃດໆ ແມ່ນ ໃຫ້ດຳເນີນການແກ້ໄຂຕາມຄວາມເຫມາະສົມ.

ການອະນາໄມ

· ຄວາມເປື້ອນພາຍນອກ

· ເຄື່ອງກອງອາກາດ

· ບໍລິເວນອ້ອມຮອບຫົວຈ່າຍ (ຄາບູເລເຕີ)

· ບໍລິເວນອ້ອມຮອບໂກບພັດລົມ

· ຮ່ອງແຜ່ນບັງຄັບໂສ້ ແລະ ຊ່ອງຕື່ມນ້ຳມັນ

· ລິເວນອ້ອມຮອບດ້ານເຟືອງ

· ໂສ້

ການຢືນຢັນ

· ບໍ່ມີນັອດຫຼົ່ມ ຫຼື ຕົກ

· ບໍ່ມີບ່ອນໄດ້ຮັບຄວາມເສຍຫາຍ

· ມີການສວມໃສ່ອຸປະກອນນິລະໄພຢ່າງຖືກຕ້ອງ ພ້ອມທັງປະຕິບັດວຽກງານຢ່າງຖືກຕ້ອງ.

· ນ້ຳມັນເຄື່ອງໂສ້ອອກມາຢ່າງເປັນປົກກະຕິ

② ການກວດກາ ແລະ ບຳລຸງຮັກສາ ປະຈຳອາທິດ

ສຳລັບການກວດກາ ແລະ ບຳລຸງຮັກສາ ປະຈຳອາທິດ, ໃຫ້ປະຕິບັດດັ່ງຕໍ່ໄປນີ້ ກ່ຽວກັບ ພາກສ່ວນພາຍໃນ ເຊິ່ງສາມາດກວດກາ ແລະ ຮັກສາໄດ້ຢ່າງງ່າຍດາຍຢູ່ບ່ອນເຮັດວຽກ, ຫາກວ່າພົບເຫັນຄວາມຜິດປົກກະຕິໃດໆ ແມ່ນ ໃຫ້ດຳເນີນມາດຕະການທີ່ເໝາະສົມ.

ການອະນາໄມ

·ຄົບລະບາຍຄວາມຮ້ອນຂອງກະບອກສູບ: ອະນາໄມຄາບນ້ຳມັນ ແລະ ເສດໄມ້ຕ່າງໆ

· ໂຕກອງນ້ຳມັນເຊື້ອໄຟ: ລ້າງດ້ວຍນ້ຳມັນແອັດຊັງ, ຫາກມີຄວາມຊຸ່ມ ໃຫ້ເຊັດໃຫ້ແຫ້ງ.

· ໂຕກອງນ້ຳມັນເຄື່ອງ: ລ້າງດ້ວຍນ້ຳມັນແອັດຊັງ ເພື່ອກຳຈັດເສດໄມ້, ຂີ້ເຫຍື້ອ ແລະອື່ນໆ.

ການຢືນຢັນ

· ແຜ່ນບັງຄັບບໍ່ໄດ້ປ່ຽນຮູບ ແລະ ບໍ່ຫ້ຽນ.

· ກ່ຽວກັບເບກຂອງໂສ້, ຕ້ອງປັບຊ່ອງຫວ່າງ ລະຫວ່າງສາຍເບກ ແລະ ດ້ານ ໃຫ້ຖືກຕ້ອງ.

· ມີຮອຍແຕກຢູ່ຢ່າງກັນການສັ່ນສະເທືອນ ຫຼື ການລອກຂອງພື້ນຜິວການຫຼືບໍ່.

③ ການກວດກາ ແລະ ບຳລຸງຮັກສາ ປະຈຳເດືອນ

ສຳລັບການກວດກາ ແລະ ບຳລຸງຮັກສາປະຈຳເດືອນ, ກ່ຽວກັບພາກສ່ວນທີ່ສຳຄັນຕ່າງໆທີ່ຢູ່ພາຍໃນ ແມ່ນ ໃຫ້ປະຕິບັດດັ່ງຕໍ່ໄປນີ້ ຢູ່ສະຖານທີ່ທີ່ກຳນົດໃຫ້.

ການອະນາໄມ

· ທໍ່ຄວັນ: ກຳຈັດການກບອນ

· ພາຍໃນຖັງນ້ຳມັນເຊື້ອໄຟ ແລະ ຖັງນ້ຳມັນເຄື່ອງ: ໃຊ້ນ້ຳມັນລ້າງ

· ໂຕສະຕາດ

· ກ່ອງພັດລົມລະບາຍຄວາມຮ້ອນ

· ພາຍໃນຂອງດ້າມເຟືອງ

· ລະບົບໄຟຟ້າ: ກຳຈັດການກບອນອອກຈາກຫົວທຽນ ແລະ ກຳຈັດສິ່ງເສດເຫຼືອຈາກສາຍໄຟ ແລະອື່ນໆ.

ການຢືນຢັນ

· ເຟືອງ ແລະ ລູກປືນ ຖືກ ທາດ້ວຍ ການແລັດ ຫຼື ນ້ຳມັນ, ສະປິງໂຕສະຕາດ ແລະ ສ່ວນລູກປືນ ຖືກທາດ້ວຍກະແລັດພຽງເລັກນ້ອຍ, ຈານຄາດ ບໍ່ຫ້ຽນ ແລະ ສະປິງຄາດບໍ່ເສຍຫາຍ

· ລະບົບສາຍໄຟບໍ່ຜິດປົກກະຕິ.

④ ການກວດກາ - ການບຳລຸງຮັກສາອື່ນໆ

ນອກເໜືອໄປຈາກການກວດກາ ແລະ ບຳລຸງຮັກສາເປັນປົກກະຕິແລ້ວ, ໃຫ້ດຳເນີນການກວດກາ ແລະ ບຳລຸງຮັກສາຕໍ່ໄປນີ້ຕາມຄວາມຈຳເປັນ.

ການອະນາໄມການກບອນ

ຫາກຖອດ ທໍ່ຄວັນ ອອກແລ້ວ ພົບເຫັນວ່າມີການກບອນຕິດຢູ່ຈຳນວນຫຼາຍໃກ້ກັບຮູຄວັນຂອງກະບອກສູບ ໃຫ້ຍົກລູກສູບຂຶ້ນຊ້ຳໆເຄືອຍດ້ານເທິງ ປົດຮູຄວັນ ແລະ ລະວັງຢ່າໃຫ້ການກບອນເຂົ້າໄປໃນກະບອກສູບ ແລ້ວຊູດມັນອອກດ້ວຍໄມ້ຄວັດທີ່ເຮັດດ້ວຍໄມ້ໄຜ ຕ່າງໆເປັນຕົ້ນ.

ລະບົບນ້ຳມັນເຊື້ອໄຟ

ໃນການອະນາໄມຫົວຈ່າຍ ຕ້ອງໄດ້ຮັບຄຳແນະນຳຈາກຜູ້ຄຸມງານ ຕ່າງໆເປັນຕົ້ນ.

ເບກເກີ້

ຊ່ອງຫວ່າງ ລະຫວ່າງ ຈຸດຕ່າງໆຖືກປັບຢ່າງຖືກຕ້ອງ ແລະ ພື້ນຜິວບໍ່ໄດ້ຖືກເຜົາໄໝ້.

ສາຍໂສ້ (ເລື່ອຍໂສ້)

ໂຄງສ້າງຂອງໂສ້

ໂສ້ ມີໂຄງສ້າງ ທີ່ໃບມີດຕັດ ແລະ ແຜ່ນຂັບເຄື່ອນ ເຊື່ອມຕໍ່ກັນ ດ້ວຍ ຕະປູໝຸດ(ລີເວັດ) ແລະ ສາຍຮັດ (ຮູບ 4-5).

ໃບມີດ

ໃບມີດຕັດ ໃຊ້ສຳລັບຕັດໄມ້, ເຊິ່ງຕິດຕັ້ງຢູ່ໃນຊ່ອງຫວ່າງສະເໝີກັນຕາມສັດສ່ວນ. ມີທັງໃບມີດທີ່ມີຕະປູໝຸດ ແລະ ໃບມີດທີ່ບໍ່ມີຕະປູໝຸດ ເຊິ່ງມັນຍັງເຮັດໜ້າທີ່ໃນການກຳຈັດເສດເລື່ອຍນຳອີກ (ຮູບ 4-6).

ແຜ່ນຂັບເຄື່ອນ

ສິ່ງຫຼ່ານີ້ເຮັດຫນ້າທີ່ເປັນຂາຂອງໂສ້ ໂດຍຕິດກັບເຟືອງ ແລະ ແລ່ນຜ່ານແຜ່ນບັງຄັບໂສ້ເພື່ອປ້ອງກັນບໍ່ໃຫ້ໂສ້ຄອນ. ນອກຈາກນີ້, ໃນຂະນະທີ່ກຳລັງແຮງໝຸນຂອງເຄື່ອງຈັກຖືກສົ່ງໄປຍັງໂສ້ ຂາຂອງໂສ້ຍັງມີບົດບາດໃນການກຳຈັດເສດຕ່າງໆທີ່ຕົກລົງໄປໃນຮ່ອງແຜ່ນບັງຄັບໂສ້ອີກ ດ້ວຍ. ໂສ້ບາງຊະນິດມີໂກບບັງ (ໂກບ) ເພື່ອເພີ່ມຄວາມປອດໄພ.

ສາຍຮັດ (ແຜ່ນດ້ານຂ້າງ)

ພາກສ່ວນທີ່ເຊື່ອມຕໍ່ກັບໃບມີດ ແລະ ແຜ່ນຂັບເຄື່ອນ ຈະມີທັງໂຕທີ່ມີຕະປູໝຸດ ແລະ ໂຕທີ່ບໍ່ມີຕະປູໝຸດ

ຕະປູໝຸດ

ພາລະບົດບາດຂອງຕະປູໝຸດ ແມ່ນ ໃຊ້ສຳລັບການເຊື່ອມຕໍ່ສ່ວນຕ່າງໆ ທີ່ກ່າວມາດ້ານເທິງ, ເຊິ່ງບໍ່ພຽງແຕ່ເຊື່ອມຕໍ່ກັນເທົ່ານັ້ນ ແຕ່ວ່າ ຍັງ ເຮັດໜ້າທີ່ເປັນລູກປືນທີ່ໂຄ້ງງໍເພື່ອໃຫ້ໂສ້ໝຸນໄປໄດ້ຢ່າງຣຽບຮ້ອຍ.

ປະເພດຂອງໂສ້


ໂສ້ ສາມາດແບ່ງອອກເປັນ 3 ປະເພດ ຂຶ້ນຢູ່ກັບຮູບຮ່າງດ້ານຂ້າງຂອງແຂ້ວໃບມີດຕັດ (ໃນຮູບ ສະແດງໃຫ້ເຫັນ 4 ປະເພດ). ມີການອະທິບາຍງ່າຍໆກ່ຽວກັບລັກສະນະ ແລະ ຄວາມແຕກຕ່າງຂອງມັນ.

ປະເພດໂຄ້ງມົນ (Chipper) (ຮູບ 4-7)


ໃບມີດຕັດນີ້ ໃຊ້ກັບສິ່ງຂອງຕ່າງໆໃນຍຸກທຳອິດຂອງຈັກເລື່ອຍໄມ້. ເມື່ອເບິ່ງຈາກດ້ານຫນ້າ ຈະມີລັກສະນະເປັນຫໍ່ມົນ ຫຼື ເວົ້າອີກຢ່າງໜຶ່ງ ດ້ານຂ້າງກໍເປັນຊົງວົງມົນເຊັ່ນກັນ, ດັ່ງນັ້ນ ເມື່ອເບິ່ງຈາກດ້ານຂ້າງ ໃບມີດ ຈຶ່ງໂຄ້ງມົນ. ດັ່ງນັ້ນ, ມັນມີລັກສະນະທີ່ງ່າຍຕໍ່ການລັບຄົມ ໂດຍການນຳໃຊ້ຕະໄບມົນ. ຢ່າງໃດກໍຕາມ, ບໍ່ວ່າຈະລັບຄົມດ້ວຍວິທີໃດກໍຕາມ ມັນກໍຈະຍັງມີບັນຫາ ກ່ຽວກັບ ຄວາມຄົມ ເລັກໜ້ອຍ. ເມື່ອງຈາກວ່າ ຄົມ ຂອງໃບມີດ ຈະມີຄວາມໂຄ້ງມົນ, ຍ້ອນລັກສະນະຮູບຊົງຂອງໃບມີດ ເຮັດໃຫ້ຄວາມຍາວໃນການຕັດຢູ່ມຸມຍາວຂຶ້ນ ແລະ ເກີດແຮງຕ້ານຫຼາຍ ຂຶ້ນ ເຊິ່ງຈະເຮັດໃບມີດເຈາะເຂົ້າໄດ້ຍາກຂຶ້ນ.


ປະເພດ ເຄິ່ງຊິ່ວ semi-chisel (ຄ້າຍຄືກັນກັບຊິ່ວໄມໂຄ micro-chisel) (ຮູບ 4-8, ຮູບ 4-9)

ປະເພດທີ່ເອີ້ນວ່າ ເຄິ່ງຊິ່ວ ເປັນ ໃບມີດທີ່ມີຮູບຮ່າງປະສົມ ລະຫວ່າງ ຊິ່ວມາດຕະຖານ ແລະ ຊິ່ວທີ່ໄດ້ຮັບການສ້າງຂຶ້ນຍ້ອນມີຄວາມງ່າຍຕໍ່ການລັບຄົມ (ມາດຕະຖານ), ເຖິງວ່າມັນຈະມີຄວາມຄົມບໍ່ເທົ່າກັບຊິ່ວກໍຕາມ ແຕ່ມັນກໍດີກ່ວາໃບມີດປະເພດໂຄ້ງມົນ (chipper). ເມື່ອເບິ່ງ ຈາກດ້ານໜ້າ, ໃບມີດດ້ານເທິງ ແລະ ດ້ານຂ້າງ ຈະມີຮູບຊົງສີ່ຫຼ່ຽມຈະຕຸລັດ ຄ້າຍໆ ຊິ່ວ, ແຕ່ບ່ອນມຸມຈະມີຮູບຮ່າງເປັນຫຼ່ຽມມຸມ. ອັນນີ້ ເປັນ ໂຕປ້ອງກັນບໍ່ໃຫ້ຄົມຂອງໃບມີດຍື່ນອອກມາ ເຊິ່ງເຮັດໃຫ້ລັບຄົມໄດ້ງ່າຍຂຶ້ນ. ອັນນີ້ ແມ່ນ ໃບມີດທີ່ໃຊ້ທົ່ວໄປໃນປັດຈຸບັນ.




ธูบที 4-5 โถงส้าง และ ชื่เอิ้น ของ โส้







ธูบที 4-6 ชื่ของแต่ละพากส่วมของใบมิด




ธูบที 4-7 ปะเพดโถ้งม์ม Chipper




ธูบ 4-8 ปะเพดเถิ่งชื่ว semi-chisel




ธูบ 4-9 ปะเพดชื่วไมโถ Microchisel



ธูบ 4-10 ปะเพดชื่ว Chisel



ຮູບ 4-11 ໄລຍະເບ້ົໂສ້



ຮູບທີ 4-12 ໂຕວັດ

ປະເພດຊິ່ວ (ຮູບ 4-10)

ເປັນປະເພດທີ່ຖືກສ້າງຂຶ້ນເພື່ອປັບປຸງຄວາມຄົມຂອງໃບມີດປະເພດໂຄ້ງມົນ (chipper). ເມື່ອເບິ່ງຈາກດ້ານຫນ້າ, ຈະມີໃບມີດດ້ານເທິງທີ່ແບນ ແລະ ໃບມີດດ້ານຂ້າງທີ່ເປັນສີ່ຫຼ່ຽມ. ປະເພດນີ້ ຫາກຕົດໃບມີດໄດ້ຢ່າງແໜ້ນ ກໍມັນຈະຄົມກວ່າແບບປົກກະຕິ. ເຖິງແມ່ນວ່າ ມັນຈະເປັນປະເພດທີ່ຄົມ ແຕ່ການລັບຄົມ ກໍເປັນສິ່ງທີ່ຍາກຢ່າງຍິ່ງ. ເມື່ອງຈາກວ່າ ເປັນໃບມີດທີ່ມີມຸມ, ຫາກໃຊ້ວິທີການລັບຄົມແບບປົກກະຕິ (ໃຊ້ຕະໄບລວງນອນ) ປາຍຂອງໃບມີດຈະມີລັກສະນະເປັນ ຂໍເກາະ ຈຶ່ງເຮັດໃຫ້ຕັດຍາກ.

ໄລຍະເບ້ົໂສ້

ໄລຍະຂອງເບ້ົໂສ້ ປົກກະຕິແລ້ວ ແມ່ນ ຫມາຍເຖິງ ຄວາມຍາວ (ຊ່ອງວ່າງ) ລະຫວ່າງແຂ້ວຂອງໃບມີດ. ໂສ້ ຂັບເຄື່ອນດ້ວຍກົງຈັກທີ່ເອີ້ນວ່າ ເຟືອງ, ສະນັ້ນ ຂະໜາດ ແມ່ນ ຈະສະແດງ ດ້ວຍ ໄລຍະຂອງເບ້ົໂສ້. ນີ້ ແມ່ນ ຄວາມຍາວຂອງ 1/2 ຂອງໄລຍະຫ່າງລະຫວ່າງ ຕະປູໝຸດ 3 ອັນ ທີ່ຢູ່ຕິດກັນດັ່ງທີ່ສະແດງຢູ່ໃນຮູບ 4-11.

ໂຕວັດ

ຄວາມໜາຂອງຂໍ້ຕໍ່ຂັບເຄື່ອນ ເອີ້ນວ່າ ໂຕວັດ. ຖ້າງມີຄວາມກວ້າງປະມານເທົ່າກັບຮ່ອງຂອງແຜ່ນບັງຄັບໂສ້.

ເປັນຫຍັງ ການລັບຄົມຈຶ່ງມີຄວາມຈຳເປັນ ການລັບຄົມທີ່ຖືກຕ້ອງ

ຈຸດເດັ່ນຂອງການລັບຄົມ

ຈັກເລື່ອຍໄມ້ ເປັນ ເລື່ອຍ ຫຼື ເຄື່ອງມືຕັດທີ່ຂັບເຄື່ອນດ້ວຍເຄື່ອງຈັກ ຫຼື ມໍເຕ້. ດັ່ງນັ້ນ, ບໍ່ວ່າມໍເຕ້ ຫຼື ເຄື່ອງຈັກ ຈະດີຊ່ຳໃດກໍຕາມ, ຫາກໃບມີດບໍ່ຄົມ, ກໍບໍ່ສາມາດບັນລຸຈຸດປະສົງຂອງການຕັດໄມ້ໄດ້ຢ່າງຖືກຕ້ອງ ແລະ ວ່ອງໄວ. ໃນທາງກົງກັນຂ້ານ, ເມື່ອງຈາກໃບມີດບໍ່ຄົມ, ການໃຊ້ແຮງຫຼາຍເກີນໄປ ສາມາດເຮັດໃຫ້ແຜ່ນບັງຄັບໂສ້ຫຼຸຍຫ້ຽນ, ຢຶດອອກ ແລະ ໂຕ່ຈາຍໄຟເຮັດວຽກຜິດປົກກະຕິໄດ້. ໂດຍສະເພາະຢ່າງຍິ່ງກັບຈັກເລື່ອຍໄມ້ທີ່ເປັນເຄື່ອງຈັກ ຈະສັງເກດເຫັນໄດ້ຢ່າງຊັດເຈນເມື່ອເຄື່ອງຈັກເຮັດວຽກດ້ວຍຄວາມໄວສູງ.

ນອກຈາກນີ້ກໍຂຶ້ນກັບວິທີການໃສ່ໃບມີດ, ໃບມີດອາດເຈາະເຂົ້າໄປໄດ້ແຮງ ແລະ ຄາງຕົດງ ສະນັ້ນ ຈຶ່ງສົ່ງຜົນໃຫ້ເກີດການດັດກັບງ່າຍຂຶ້ນ. ຫາກໃບມີດຕັດບໍ່ເຂົ້າ ບໍ່ພຽງແຕ່ຈະເຮັດໃຫ້ເຄື່ອງຈັກເສຍຫາຍ, ແຕ່ວ່າ ຍັງເພີ່ມຄວາມເມື່ອຍລ້າໃຫ້ແກ່ຜູ້ນຳໃຊ້ນຳອີກ ແລະ ຄວາມໄວໃນການຕັດກໍຊ້າລົງ ຈຶ່ງເຮັດໃຫ້ໄລຍະເວລາໃນການນຳໃຊ້ເລື່ອຍຍາວຂຶ້ນ. ໃນອີກດ້ານຫນຶ່ງ, ໃບມີດທີ່ມີລັກສະນະເປັນຮູບຂໍ ທີ່ເຈາະເຂົ້າຫຼາຍເກີນໄປ ຈະເຮັດໃຫ້ເກີດການດັດກັບຫຼາຍຂຶ້ນ, ເຊິ່ງຈະເຮັດໃຫ້ຄວບຄຸມຈັກເລື່ອຍໄມ້ໄດ້ຍາກ ເຖິງວ່າຈະໃຊ້ງານໄດ້ປົກກະຕິກໍຕາມ. ສິ່ງເຫຼົ່ານີ້ ເຮັດໃຫ້ເກີດຄວາມສ່ຽງທີ່ໃຫຍ່ຫຼວງຕໍ່ການປະຕິບັດວຽກງານ.

ດັ່ງນັ້ນ, ການລັບຄົມ ຈຶ່ງເປັນເງື່ອນໄຂເບື້ອງຕົ້ນ ສຳລັບ ການນຳໃຊ້ຈັກເລື່ອຍໄມ້ຢ່າງປອດໄພ.

4 ຈຸດຕໍ່ໄປນີ້ ແມ່ນ ມີຄວາມສຳຄັນໃນການກຳນົດວ່າທ່ານສາມາດບັນລຸຄວາມຄົມທີ່ປອດໄພ ແລະ ຄວາມຄົມທີ່ຕ້ອງການ ໃນລະຫວ່າງການລັບຄົມໄດ້ ຫຼືບໍ່.

· ການຄຶງຈັກເລື່ອຍໄມ້ໃຫ້ແໜ້ນ
· ກວດເບິ່ງໃບມີດທັງໝົດດ້ວຍສາຍຕາ
· ມຸມຄົມ
· ໂຕອັດແທກຄວາມເລິກ

ການຄຶງຈັກເລື່ອຍໄມ້ໃຫ້ແໜ້ນ

ເວລາໃຊ້ຕະໄບຢູ່ໃບມີດ, ທຸກໆຄັ້ງ ຫາກມັນມີການເຄື່ອນເໜັງ ສະແດງວ່າເປັນເລື່ອງຍາກທີ່ຈະລັບຄົມມັນໃຫ້ໄດ້ຢ່າງຖືກຕ້ອງ. ດັ່ງນັ້ນ, ຫາກມີທ່ອນໄມ້, ໃຫ້ປາດດ້ວຍຈັກເລື່ອຍໄມ້ ເພື່ອປ້ອງກັນບໍ່ໃຫ້ມັນເຄື່ອນຍ້າຍ ຫຼື ຫາກມີຄົມ ແມ່ນ ໃຫ້ໃຊ້ຄົມຈັບເພື່ອຄຶງມັນໄວ້.


ນອກຈາກນີ້, ສິ່ງສຳຄັນ ແມ່ນ ຕ້ອງເລືອກຕຳແໜ່ງແນວນອນ ແລະ ຄຶງຈັກເລື່ອຍໄມ້ໃຫ້ແໜ້ນ, ເພື່ອວ່າ ເມື່ອເຮົາຖືຕະໄບ ແລ້ວຄຶງຂໍ້ສອກເຂົ້າຫາລຳໂຕ, ຂໍ້ສອກ ແລະ ຫຼັງມືຈະຢູ່ໃນແນວເສັ້ນຊື່ ແລະ ຈັກເລື່ອຍໄມ້ກໍຢູ່ໃນທ່າທີ່ເກືອບເປັນລວງນອນ.

ກວດເບິ່ງໃບມີດດ້ວຍສາຍຕາ


ກວດເບິ່ງໃບມີດທັງໝົດດ້ວຍສາຍຕາ ແມ່ນ ເຮັດໄດ້ຕາມໂຕໜັງສືທັງໝົດທີ່ຢູ່ໃບມີດ. ດັ່ງທີ່ສະແດງຢູ່ໃນຮູບທີ 4-5, ໃນໃບມີດຕັດ ຈະມີໃບມີດດ້ານຂວາ ແລະ ໃບມີດດ້ານຊ້າຍ (ເບິ່ງຈາກເບື້ອງເຄື່ອງຈັກ). ກວດເບິ່ງໃບມີດທັງໝົດດ້ວຍສາຍຕາ ເຫດຜົນທີ່ກວດກາດ້ວຍສາຍຕາ ແມ່ນ ເພື່ອຊອກຫາ ໃບມີດທີ່ມີແຂ້ວສັ້ນທີ່ສຸດ. ມັນຈະດີທີ່ສຸດຖ້າມີໃບມີດທັງໝົດຢູ່ບ່ອນນີ້.

ມຸມຄົມ


ໃນການລັບຄົມ ສິ່ງທີ່ສຳຄັນທີ່ສຸດ ແມ່ນ ມຸມ. ມີການກຳນົດມຸມ 3 ມຸມ: ມຸມລັບຄົມໃບມີດດ້ານເທິງ, ມຸມລັບຄົມໃບມີດດ້ານຂ້າງ ແລະ ມຸມ




ຮູບ 4-13 ຕົວຢ່າງຂອງວິທີການຄຶງໂສ້ໃຫ້ແໜ້ນ (ຄີມລັອກໂຕເຊ້ແບບພົກພາຂະໜາດນ້ອຍ)




ຮູບທີ 4-14 ປະເພດໂຄ້ງມົນ Chipper



ຮູບ 4-15 ປະເພດເຄິ່ງຊິ່ວ semi-chisel




ຮູບ 4-16 ປະເພດຊິ່ວໄມໂຄ Microchisel




ຮູບ 4-17 ປະເພດຊິ່ວ Chisel


ຕັດໃບມີດດ້ານເທິງ (ຮູບ 4-14 ຫາ 4-17). ເຮັດໃຫ້ທັງ 3 ບ່ອນນີ້ ຄົມຂຶ້ນ, ໂດຍການດຳເນີນການລັບຄົມພ້ອມກັນ ດ້ວຍການໃຊ້ຕະໄບມົນຖູ.



ຮູບທີ 4-18 ມືທີ່ໃຊ້ຈັບຕະໄບ



ຮູບທີ 4-19 ວິທີການນຳໃຊ້ຕະໄບມົນ



ຫາກນຳໃຊ້ໃບມີດຈົນເຫຼືອຄວາມຍາວ ຂອງໃບມີດຫຼາຍກວ່າ ເຄິ່ງໜຶ່ງ ແລ້ວໃຊ້ຕະໄບດ້ວຍຂະໜາດທີ່ຖືກຕ້ອງ ແລະ ມຸມ ຂອງປາຍມີດກໍຈະໄດ້ເປັນ 55°.

ຫັກໃບມີດສັ້ນລົງ, ເມື່ອໃຊ້ຕະໄບ/ສະໄບ ທີ່ມີ ຂະໜາດໃຫຍ່ແມ່ນຈະເຮັດໃຫ້ມຸມຂອງປາຍມີດ ມີຂະໜາດໃຫຍ່.

ຖ້າຫາກໃຊ້ສະໄບບາງ, ມຸມຂອງ ການຕັດ ຈະຢູ່ພາຍໃນ 55 °.

ຮູບທີ 4-20 ໃບມີດທີ່ສັ້ນລົງ ແລະ ເສັ້ນຜ່າສູນກາງຂອງຕະໄບ

ວິທີການຈັບຕະໄບ, ການລັບຄົມ ແລະ ວິທີການລົງແຮງ

ສິ່ງທີ່ສຳຄັນສຳລັບການລັບຄົມທີ່ຖືກຕ້ອງ ແມ່ນ ວິທີການຈັບ ແລະ ຖືຕະໄບ. ຕ້ອງຈັບຕະໄບ ເພື່ອໃຫ້ຕະໄບ, ມື ແລະ ແຂນຢູ່ໃນແນວເສັ້ນ ຊື່, ດັ່ງທີ່ສະແດງໃນຮູບ 4-18. ຄືດັ່ງທີ່ໄດ້ກ່າວໄວ້ດ້ານເທິງວ່າ ການລັບຄົມ ມຸມ ທັງ 3 ມຸມຈະຕ້ອງດຳເນີນການພ້ອມກັນໃຫ້ໄດ້ຢ່າງຖືກຕ້ອງ.

ໃນເວລາໃຊ້ຕະໄບຖູ ແມ່ນ ບໍ່ໃຫ້ໃຊ້ແຮງເກີນຈຳເປັນ. ຄ່ອຍໆກົດ ເພື່ອໃຊ້ຄົມຂອງຕະໄບ.

ນອກຈາກນີ້, ບໍ່ໃຫ້ຖຶງຕະໄບກັບໄປກັບມາ. ໃນຕອນກົດຕະໄບ, ໃຫ້ລັບຄົມ ແລະ ຖຶງຕະໄບອອກຈາກໃບມີດ ເພື່ອຫຼີກຫ່ຽງການຕຳໃບມີດເມື່ອ ຖຶງ. ມັນຈະມີຜົນກະທົບທີ່ບໍ່ດີຕໍ່ໃບມີດທີ່ຖືກຖູ.

ຮັກສາຕະໄບໄວ້ຢູ່ມຸມຄົມດ້ານເທິງຂອງແຂ້ວຢ່າງຖືກຕ້ອງ, ຈັບຕະໄບໄວ້ກັບໃບມີດໃຫ້ແໜ້ນ ແລ້ວຄ່ອຍໆຍູ້. ໃນກໍລະນີນີ້, ວິທີການກະຈາຍ ແຮງທີ່ຖືກຕ້ອງ ແມ່ນ ຈາກ 1/5 ຂອງຕະໄບ ໄວ້ດ້ານເທິງຂອງໃບມີດ ແລ້ວຍູ້ມັນ 80% ໄປດ້ານຂ້າງ ແລະ 20% ລົງລຸ່ມ ດັ່ງທີ່ສະແດງຢູ່ໃນ ຮູບດ້ານຊ້າຍ 4-20.

ຕາຕະລາງ 4-1 ປະເພດເສັ້ນຜ່າສູນກາງຂອງຕະໄບ ແລະ ວິທີການເລືອກ

ເສັ້ນຜ່າສູນກາງຂອງຕະໄບ	ໂສ້ທີ່ມີການດັດແປງ (Oregon)
3,5 ມມ	(ນຳໃຊ້ເມື່ອໂສ້ທີ່ມີການດັດແປງເຫຼືອເຄິ່ງໜຶ່ງ ເຖິງ 4,0 ມມ)
4,0 ມມ	25AP,25F,91PX/VXL
4,5 ມມ	90PX
4,8 ມມ	20·21·22BPX/LPX, 95TXL
5,5 ມມ	72·73·75DX/DPX/LGX/LPX/EXL

ອ້າງອີງ: ເວັບໄຊຂອງບໍລິສັດ Oregon “ຕາຕະລາງການໃຊ້ງານຈັກເລື່ອຍໄມ້ 2020”

ຄວາມສຳພັນລະຫວ່າງໂສ້ ແລະ ຕະໄບ

ໃນການລັບຄົມ ໃຫ້ໃຊ້ຕະໄບມົນທີ່ມີຂະໜາດທີ່ເໝາະສົມສຳລັບຈັກເລື່ອຍໄມ້ ຂະໜາດທີ່ເໝາະສົມ ແມ່ນ ຂະໜາດທີ່ຕິດມາເປັນອຸປະກອນເສີມເມື່ອຊື້ຈັກເລື່ອຍໄມ້ (ຕາຕະລາງ 4-1).

ເມື່ອສືບຕໍ່ນຳໃຊ້ຈັກເລື່ອຍໄມ້ໄປເລື້ອຍໆ ແລະ ລັບຄົມຊ້ຳໄປຊ້ຳມາ, ໃບມີດກໍຈະສັ້ນລົງ. ເມື່ອແຂ້ວຂອງໃບມີດສັ້ນລົງ, ໃຫ້ປ່ຽນມາເປັນຕະໄບມົນທີ່ມີຂະໜາດນ້ອຍລົງກວ່າ 1 ຂະໜາດ (ຮູບ 4-20).

ຕະໄບ ເປັນ ໃບມີດປະເພດໜຶ່ງ ໃຊ້ມັນໃນຂະນະທີ່ກຳລັງກຳຈັດເສດໂລຫະທີ່ຕິດຢູ່ລະຫວ່າງຊ່ອງວ່າງ ແລະ ປ່ຽນໃໝ່ເມື່ອບໍ່ສາມາດເຫຼົ່ານັ້ນໄດ້ອີກຕໍ່ໄປ. ຜູ້ຊ່ຽວຊານບາງຄົນເວົ້າວ່າ ໄລຍະເວລາສຳລັບການປ່ຽນໃໝ່ ແມ່ນ “ໃນອັດຕາທີ່ນຳໃຊ້ ຕະໄບ 4 ຫາ 5 ແຜ່ນ ຕໍ່ການໃຊ້ໂສ້ 1 ສາຍ”

ວິທີການລັບຄົມໃບມີດດ້ານຂວາ ແລະ ດ້ານຊ້າຍ

ໃຊ້ໃບມີດແຕ່ລະອັນຈຳນວນເທົ່າກັນ ເພື່ອເຮັດໃຫ້ຄວາມຍາວຂອງໃບມີດທັງດ້ານຊ້າຍ ແລະ ດ້ານຂວາບໍ່ແຕກຕ່າງກັນ. ໃນການຖູດ້ວຍຕະໄບ ໃຫ້ເລີ່ມຖູໃບມີດຈາກເບື້ອງຊ້າຍສຳລັບໃບມີດເບື້ອງຂວາ ແລະ ໃຫ້ຖູຈາກເບື້ອງຂວາສຳລັບໃບມີດເບື້ອງຊ້າຍ (ຮູບ 4-21).

ຫາກຄົນຖະໜັດຂວາ ລັບຄົມ ໃບມີດດ້ານຂວາ ກໍຈະບໍ່ລົ້ງທິດທາງໃນການລັບຄົມກວ່າດ້ານຊ້າຍ, ເຊິ່ງເປັນເຫດເຮັດໃຫ້ໃບມີດດ້ານຊ້າຍ ແລະ ຂວາ ອາດຈະມີຄວາມຍາວແຕກຕ່າງກັນ ເນື່ອງຈາກການລັບຄົມບໍ່ໄດ້ດີ.


ການແປງໃບມີດທີ່ເປັນຂໍ ແລະ ຄວາມລາດຊັນ ຂອງ ຂໍ

ການແປງໃບມີດທີ່ເປັນຂໍ

ສະພາບຂອງແຂ້ວທີ່ສະແດງໃນຮູບ 4-22 ເອີ້ນວ່າ ຂໍ. ເມື່ອ ໃບມີດ ຢູ່ໃນຮູບຮ່າງນີ້, ການເຈາະຈະດີຫຼາຍ, ຊິກອັບຈະມີຂະໜາດໃຫຍ່ ແລະ ພາລະໃນເຄື່ອງຈັກກໍຈະໃຫຍ່ຫຼາຍເຊັ່ນກັນ. ມັນຍັງອາດຈະເຮັດໃຫ້ເກີດຄວາມເສຍຫາຍຕໍ່ເຄື່ອງຈັກ.


ສະພາບແຂ້ວແບບນີ້ ແມ່ນ ເກີດມາຈາກ ເວລາທີ່ລັບຄົມ ຜູ້ລັບຄົມໄດ້ຈັບຕະໄບໃນລັກສະນະທີ່ຢູ່ເທິງລະດັບລວງນອນຂອງໃບມີດ. ແລະກໍຍ້ອນ ມີການລົງແຮງໄປທາງດ້ານລຸ່ມຫຼາຍເກີນໄປ ທັງໃນຕອນທີ່ກຳລັງລັບຄົມມັນຈາກດ້ານເທິງ ຫາ ດ້ານລຸ່ມ ຫຼື ໃນຕອນທີ່ວາງຕະໄບໄວ້ໃນລັກສະນະລວງນອນ.

ຫາກ ຂໍ ບໍ່ສູງຈົນເກີນໄປ ແມ່ນ ໃຫ້ແກ້ໄຂໂດຍການໃຊ້ແມ່ແບບທີ່ຖືກຕ້ອງ ແລ້ວຫຼຸດມືລົງຕ່ຳກວ່າຕຳແໜ່ງລວງນອນ ແລ້ວລັບຂຶ້ນດ້ານເທິງ ຈຳນວນຫຼາຍຄັ້ງ, ຈາກນັ້ນໃຫ້ກວດກາສະພາບຂອງໃບມີດດ້ານຂ້າງກັບຄືນສູ່ຕຳແໜ່ງລວງນອນ ແລ້ວລັບຄົມມັນອີກຄັ້ງ.




ການລັບຄົມໃບມີດເບື້ອງຂວາ ການລັບຄົມໃບມີດເບື້ອງຊ້າຍ


ຮູບທີ 4-21 ການລັບຄົມໃບມີດດ້ານຂວາ ແລະ ໃບມີດດ້ານຊ້າຍ



ຮູບ 4-22 ປະເພດທີ່ເປັນຂໍ



ຮູບ 4-23 ປະເພດທີ່ເປັນຂໍລາດຊັນ



ຮູບທີ 4-24 ໂຕວັດແທກຄວາມເລິກ ແລະ ໄມ້ບັນທັດ

ການແກ້ໄຂຄວາມລາດຊັນຂອງຂໍ

ສະພາບຂອງໃບມີດດັ່ງທີ່ສະແດງຢູ່ໃນຮູບ 4-23 ເອີ້ນວ່າ ຄວາມລາດຊັນຂອງຂໍ. ອັນນີ້ ສາມາດເກີດຂຶ້ນໃນເວລາທີ່ເສັ້ນຜ່າສູນກາງຂອງໃບມີດ ແລະ ຕະໄບບໍ່ກົງກັນ (ໃບມີດມີຂະໜາດນ້ອຍກວ່າ ຍ້ອນວ່າມັນຖືກລັບຄົມ), ຫຼື ໃນເວລາທີ່ລັບຄົມ ແລ້ວມືຕ່ຳກວ່າແນວລວງນອນ, ສະນັ້ນ ຈຶ່ງສົ່ງຜົນໃຫ້ມີຄວາມລາດຊັນ.

ເພື່ອແກ້ໄຂຄວາມລາດຊັນ, ໃຫ້ລັບໂດຍການຍົກກົ້ມໃຫ້ຂຶ້ນສູງກວ່າແນວລວງນອນ ແລ້ວປັ່ນມັນລົງດ້ານລຸ່ມ. ກວດເບິ່ງສະພາບຂອງໃບມີດຢ່າງລະມັດລະວັງ (ໂດຍສະເພາະໃບມີດຕາມລວງນອນ), ແລະ ຖ້າມັນເບິ່ງຄືວ່າປະມານ 80 ຫາ 85 ອົງສາ, ໃຫ້ເອົາມັນກັບຄືນສູ່ຕຳແໜ່ງແນວນອນ ແລະ ລັບຄົມ.

ການປັບໂຕວັດແທກຄວາມເລິກ

ໂຕວັດແທກຄວາມເລິກ ແມ່ນ ສ່ວນທີ່ຍື່ນອອກມາຫາງດ້ານໜ້າຂອງໃບມີດ. ສ່ວນທີ່ຍື່ນອອກມານີ້ ແມ່ນ ກົງກັບຖານຂອງກົບທີ່ໃຊ້ສຳລັບກົບໄມ້. ໃນເວລາປັບຄວາມເລິກຂອງກົບ ຈະຕ້ອງເລື່ອນໃບມີດເຂົ້າອອກ ຕາມຂາຕັ້ງ. ຄວາມແຕກຕ່າງລະຫວ່າງໂຕວັດແທກຄວາມເລິກ ແລະ ກົບ ແມ່ນ ໃຊ້ໂຕວັດເພື່ອລັບຄົມຂອງສ່ວນທີ່ຍື່ນອອກມາດ້ວຍຕະໄບແບນ ຕາມລະດັບມາດຕະຖານຄວາມສູງຂອງປາຍໃບມີດ (ຮູບ 4-24).

ຄວາມເລິກນີ້ແຕກຕ່າງກັນໄປຕາມປະເພດ ແລະ ຂະໜາດຂອງໂສ້, ແຕ່ໂຕວັດທົ່ວໄປທີ່ຖືກນຳໃຊ້ ແມ່ນ 0,6 ຫາ 0,65 ມມ. ຫາກຄວາມເລິກຫຼາຍເກີນໄປ, ການເຈາະກໍຈະດີຂຶ້ນ ແຕ່ຈະສົ່ງຜົນໃຫ້ເກີດການສັ່ນສະເທືອນ ແລະ ການກະທົບຂະໜາດໃຫຍ່ ເຮັດໃຫ້ມີພາລະຫຼາຍເກີນໄປໃນສ່ວນຂອງກຳລັງແຮງ ແລະ ເຮັດໃຫ້ເກີດຄວາມເສຍຫາຍ. ໃນທາງກົງກັນຂ້າມ, ເມື່ອຄວາມເລິກຕື້ນຂຶ້ນ, ການໝຸນຂອງໂສ້ກໍຈະເພີ່ມຂຶ້ນ ແຕ່ມັນຈະໝົ້ນ ແລະ ເຮັດໃຫ້ບໍ່ສາມາດຕັດໄດ້ຢ່າງມີປະສິດຕິພາບ. ໃນກໍລະນີນີ້, ການໝຸນຈະໄວຂຶ້ນ, ເຊິ່ງຈະເຮັດໃຫ້ແຜ່ນບັງຄັບໂສ້ຫ້ຽນ ແລະ ຄາ ງ່າຍຂຶ້ນ. ນອກຈາກນັ້ນ, ຫາກນຳໃຊ້ຄັນເລັ່ງແບບເຕັມທີ່ ກໍຈະເຮັດໃຫ້ເຄື່ອງຈັກຢູ່ໃນສະພາບທີ່ຕຶດຢູ່ໂດຍບໍ່ໄດ້ເຮັດຫຍັງ ເຊິ່ງຄືກັນກັບການເດີນເຄື່ອງແຕ່ບໍ່ໄດ້ມີການໃຊ້ງານຫຍັງເລີຍ.

ປັບໂຕວັດແທກຄວາມເລິກ ຕາມຄວາມສູງທີ່ສາມາດຕັດໄດ້ຢ່າງມີປະສິດທິພາບ.

ນ້ຳມັນເຊື້ອເພີງ ແລະ ນ້ຳມັນເຄື່ອງໂສ້

ນ້ຳມັນປະສົມ

ໃນເຄື່ອງຈັກ 2 ຈັງຫວະ ເຊັ່ນ: ຈັກເລື່ອຍໄມ້ ເປັນຕົ້ນ, ນ້ຳມັນເຄື່ອງ ຈະຖືກປະສົມປະສົມກັບນ້ຳມັນແອັດຊັງ, ພາຍຫຼັງເກີດການເຜົາໄໝ້ດ້ວຍນ້ຳມັນເຊື້ອໄຟ ແລ້ວຈະຖືກປ່ອຍອອກມາເປັນສ່ວນຫນຶ່ງຂອງອາຍຄອັນ (ໃນເຄື່ອງຈັກ 4 ຈັງຫວະ ນ້ຳມັນເຄື່ອງຈະໄຫຼວຽນພາຍໃນເຄື່ອງຈັກ).

ໃນການປະສົມນ້ຳມັນແອັດຊັງ ແລະ ນ້ຳມັນເຄື່ອງ ແມ່ນ ມີອັດຕາສ່ວນການປະສົມ 25:1 ຫຼື 50:1. ໃນເວລາທີ່ປະສົມນ້ຳມັນ, ຈະຕ້ອງວັດແທກ ແລະ ປະສົມໃຫ້ຖືກຕ້ອງ. ການປະຕິບັດຕາມອັດຕາສ່ວນທີ່ກຳນົດຢູ່ໃນຄູ່ມືແນະນຳການນຳໃຊ້ຈັກເລື່ອຍໄມ້ຢ່າງຖືກຕ້ອງ ຖືວ່າເປັນ ກົດເຫຼັກ.

ຫາກໃຊ້ນ້ຳມັນແອັດຊັງ (ນ້ຳມັນດິບ) ໂດຍບໍ່ປະສົມນ້ຳມັນເຄື່ອງ ຈະເຮັດໃຫ້ເຄື່ອງຈັກເກີດການຢຶດໂຕໄດ້. ໃນເວລາຕື່ມນ້ຳມັນ ກະລຸນາກວດກາໃຫ້ແນ່ໃຈ ວ່າ ເປັນນ້ຳມັນທີ່ຖືກຕາມປະເພດແລ້ວຫຼືບໍ່.

ເມື່ອນ້ຳມັນເຊື້ອໄຟ ຖືກ ລັງສີອຸນຕາໄວໂອແລັດ ແລະ ອຸນຫະພູມທີ່ສູງເປັນເວລາດົນ, ນ້ຳມັນເຊື້ອໄຟກໍຈະເກີດການປ່ຽນແປງ ແລະ ເສື່ອມສະພາບ, ເຮັດໃຫ້ຄົດຈັກບໍ່ໄດ້ດີ ແລະ ໃຫ້ພະລັງງານບໍ່ໄດ້ດີ. ນ້ຳມັນປະສົມ ຄວນນຳໃຊ້ໃຫ້ໝົດພາຍໃນ 30 ວັນ. ນອກຈາກນີ້, ການນຳໃຊ້ນ້ຳມັນເຊື້ອໄຟທີ່ປະສົມກັບນ້ຳ ຈະເຮັດໃຫ້ມີການກັດເຊາະຢູ່ພາຍໃນຫ້ອຈ່າຍ ແລະ ເຄື່ອງຈັກ ເປັນຕົ້ນ. ຫຼີກລ່ຽງບໍ່ໃຫ້ ຈັກເລື່ອຍໄມ້ ແລະ ພາຊະນະບັນຈຸນ້ຳມັນເຊື້ອໄຟ ຕ່າງໆ ຖືກນ້ຳ.

ນ້ຳມັນເຄື່ອງໂສ້

ນ້ຳມັນເຄື່ອງໂສ້ ເປັນ ສານຫຼໍ່ລື່ນ ສຳລັບໂສ້ ເຊິ່ງໝຸນດ້ວຍຄວາມໄວສູງໄປຕາມຮ່ອງຂອງແຜ່ນບັງຄັບໂສ້. ມີການນຳໃຊ້ ນ້ຳມັນເຄື່ອງໂສ້ ທັງໃນລະດູຮ້ອນ, ລະດູໜາວ ແລະ ຕະຫຼອດປີ. ນ້ຳມັນເຄື່ອງໂສ້ ມີ 2 ປະເພດ ຄື: ນ້ຳມັນເຄື່ອງໂສ້ແຮ່ທາດ ແລະ ນ້ຳມັນເຄື່ອງໂສ້ພືດທີ່ຍ່ອຍສະຫຼາຍໄດ້ທາງຊີວະພາບ, ແຕ່ຄວນລະວັງບໍ່ໃຫ້ປະສົມເຂົ້າກັນ ເພາະອາດເຮັດໃຫ້ປ້ຳນ້ຳມັນເຄື່ອງເປ່ເພໄດ້. ໃນການປ່ຽນປະເພດຂອງນ້ຳມັນເຄື່ອງໂສ້, ຕ້ອງອະນາໄມພາຍໃນຖັງນ້ຳມັນເຄື່ອງກ່ອນ.

ຂໍ້ຄວນລະວັງໃນເວລາຕື່ມນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງໂສ້

ຖ້າເຄື່ອງຈັກຂອງຈັກເລື່ອຍໄມ້ ນ້ຳມັນໝົດ, ເຄື່ອງຈັກຈະຢຸດ. ແຕ່ວ່າ ຖ້າເປັນນ້ຳມັນເຄື່ອງໂສ້ເດ? ເຖິງແມ່ນວ່ານ້ຳມັນເຄື່ອງ ຈະໝົດກໍຕາມ ເຄື່ອງຈັກຈະບໍ່ຢຸດ. ຫາກນຳໃຊ້ຈັກເລື່ອຍໄມ້ໂດຍບໍ່ມີນ້ຳມັນເຄື່ອງໂສ້, ສາຍໂສ້ ແລະ ແຜນບັງຄັບໂສ້ ຈະຢຶດອອກໄດ້.

ເພື່ອຫຼີກລ່ຽງສິ່ງນີ້, ໃຫ້ປັບປະລິມານການປ່ອຍນ້ຳມັນເຄື່ອງ ໂດຍທີ່ປັບໄວ້ວ່າ ເຖິງນ້ຳມັນເຊື້ອໄຟຈະໝົດ ກໍໃຫ້ມັນຄົງເຫຼືອຢູ່ທີ່ 5 ຫາ 10%. ນອກຈາກນັ້ນ, ເວລາຕື່ມໃຫ້ເຕັມ, ຕ້ອງເອົາໃຈໃສ່ຕື່ມນ້ຳມັນເຄື່ອງຂອງໂສ້ໃຫ້ເຕັມສະເໝີ, ສ່ວນການຕື່ມລະດັບນ້ຳມັນເຊື້ອໄຟ ຕ້ອງຕື່ມໃຫ້ເຕັມຢູ່ທີ່ 80 ຫາ 90%. ເຫດຜົນທີ່ຕ້ອງໄດ້ເອົາໃຈໃສ່ແບບນີ້ ແມ່ນ ເຖິງວ່າຈະຕັ້ງໃຈປັບປະລິມານການຈ່າຍນ້ຳມັນເຄື່ອງໃຫ້ເຫຼືອ 5 ຫາ10% ໃນກໍລະນີທີ່ນ້ຳມັນເຊື້ອໄຟຈະໝົດກໍຕາມ, ຄວາມອ່ອນໂຕຂອງນ້ຳມັນເຄື່ອງ ແລະ ປະລິມານການຈ່າຍອອກ ກໍຈະປ່ຽນແປງໄປຕາມອຸນຫະພູມສູງຕ່ຳ.

ໃນເວລາຕື່ມນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງໂສ້, ຈະມີເກີດບັນຫາພື້ນຖານ ແລະ ບັນຫາງ່າຍດາຍທີ່ສຸດ. ໃນບາງຄັ້ງ ການຕື່ມນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງໂສ້ ຈະຖືກຕື່ມແຍກກັນຕ່າງຫາກ. ຖ້າເຮັດແບບນັ້ນ ຕໍ່ໄປ ແມ່ນ ຈະພົບກັບບັນຫາ. ສາເຫດທີ່ພາໃຫ້ເກີດບັນຫາແບບນັ້ນງ່າຍຂຶ້ນ ກໍຍ້ອນວ່າ ຜູ້ນຳໃຊ້ມີຄວາມຕ້ອງການເປີດ ຝາປິດຂອງນ້ຳມັນເຄື່ອງໂສ້ ແລະ ເປີດ ຝາປິດຂອງນ້ຳມັນເຊື້ອໄຟພ້ອມກັນ ແລ້ວຈຶ່ງຄ່ອຍຕື່ມ. ເພື່ອປ້ອງກັນບໍ່ໃຫ້ເກີດເຫດການນີ້, ຂໍແນະນຳໃຫ້ເປີດຝານ້ຳມັນເຄື່ອງໂສ້ແລ້ວຈຶ່ງຄ່ອຍຕື່ມນ້ຳມັນເຄື່ອງ, ແລ້ວຫຼັງຈາກນັ້ນ ຈຶ່ງຄ່ອຍເປີດຝານ້ຳມັນເຊື້ອໄຟແລ້ວຈຶ່ງຄ່ອຍຕື່ມນ້ຳມັນເຊື້ອໄຟ ຕາມລຳດັບ ໃຫ້ເປັນນິໄສຂອງຕົນເອງ. ນີ້ ແມ່ນ ຈຸດເລີ່ມຕົ້ນຂອງການຝຶກອົບຮົມຕົນເອງ ໃຫ້ນຳໃຊ້ຈັກເລື່ອຍໄມ້ໃຫ້ໄດ້ຢ່າງປອດໄພ.

ການບຳລຸງຮັກສາ

No.05 ການບຳລຸງຮັກສາເຄື່ອງມື ແລະ ອຸປະກອນ

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ກ່ຽວກັບຄວາມຮູ້, ເຕັກນິກ ແລະ ທັກສະທີ່ຈຳເປັນໃນການບຳລຸງຮັກສາເຄື່ອງມື ແລະ ອຸປະກອນ ແລະ ພັດທະນາຄວາມສາມາດໃນການດຳເນີນການບຳລຸງຮັກສາທີ່ຖືກຕ້ອງ.

ຄຳສຳຄັນ

ເຄື່ອງມື, ວັດສະດຸ, ເຄື່ອງຈັກ, ການບຳລຸງຮັກສາ, ສາຍເຊືອກ, ແຜ່ນເຊື່ອມ, ແຜ່ນຕິດ, ເຄື່ອງມື, ເລື່ອຍ, ພ້າ, ຄົມໃບ, ມຸມພາຍໃນ, ສາຍແຕກ, ການຂາດ, ການຂອດກັນ

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

- ໃນວຽກງານການເກັບກ່ຽວໄມ້ດ້ວຍເຄື່ອງຈັກ, ເຊືອກສະລິງ ປຽບສະເໝືອນ ສາຍແຫ່ງຊີວິດ, ການຂາດ, ການຫຼຸຍ້ຫ້ຽນ ແລະ ການຂອດກັນຂອງເຊືອກສະລິງ ຈະເຮັດໃຫ້ລະດັບຄວາມແຂງແຮງຂອງເຊືອກສະລິງ ຫຼຸດລົງ, ເຊິ່ງການນຳໃຊ້ເຊືອກສະລິງທີ່ມີລະດັບຄວາມແຂງແຮງຫຼຸດລົງ ຈະກາຍເປັນສາເຫດຂອງການເກີດໄພພິບັດ.
- ໃນການເຮັດວຽກທີ່ໃຊ້ເຊືອກສະລິງ, ການເຂົ້າໄປຢູ່ມຸມດ້ານໃນຂອງເຊືອກສະລິງ ແມ່ນ ມີຄວາມອັນຕະລາຍເປັນຢ່າງຍິ່ງ.
- ໃນການລັບຄົມໃບມີດ, ໃຫ້ເອົາໃຈໃສ່ລະມັດລະວັງບໍ່ໃຫ້ຖືກມີດ ຫຼືຂອງມີຄົມບາດ.

ການບຳລຸງຮັກສາ ສາຍສະລິງ, ອຸປະກອນ ແລະ ອື່ນໆ

ຈຳເປັນຕ້ອງໄດ້ມີການບຳລຸງຮັກສາເຄື່ອງມື

ການບຳລຸງຮັກສາເຄື່ອງມື ແມ່ນ ມີຜົນກະທົບອັນໃຫຍ່ຫຼວງໂດຍກົງຕໍ່ຊີວິດຂອງຕົນເອງ ແລະ ຊີວິດຂອງເພື່ອນຮ່ວມງານ.

ຕົວຢ່າງ: ມີຕົວຢ່າງໄພພິບັດທີ່ເກີດຂຶ້ນໃນຕອນທີ່ກຳລັງຂົນອຸປະກອນຂຶ້ນລົດດ້ວຍລົດເຄນ, ຍ້ອນວ່າ ໄດ້ນຳໃຊ້ເຊືອກສະລິງທີ່ຫຸ້ຍຫ້ຽນແລ້ວ ສະນັ້ນຈຶ່ງເຮັດໃຫ້ເຊືອກສະລິງຂາດ, ເຊິ່ງເຮັດໃຫ້ ອຸປະກອນ ຕົກລົງມາທັບຄົນທີ່ກຳລັງປະຕິບັດວຽກ ເຮັດໃຫ້ຜູ້ກ່ຽວຖືກໝົບຢູ່ກາງລະຫວ່າງ ໄມ້ ແລະ ລົດ.

ໄພພິບັດໃນລັກສະນະນີ້ ແມ່ນ ສາມາດປ້ອງກັນໄດ້ງ່າຍໆ ໂດຍການໝັ່ນກວດກາເຊືອກສະລິງເປັນປະຈຳທຸກໆມື້ໃຫ້ເປັນນິໄສ, ນອກນັ້ນ ຈະຕ້ອງຮຽນຮູ້ກ່ຽວກັບຄວາມຮູ້ພື້ນຖານ ເຊັ່ນ: ຄ່າຄວາມປອດໄພ, ປະເພດຂອງເຊືອກສະລິງ ແລະ ໂຄງສ້າງຂອງເຊືອກສະລິງ, ເຊິ່ງຜູ້ປະຕິບັດ ວຽກງານທຸກໆຄົນຈະຕ້ອງໄດ້ເອົາໃຈໃສ່ ແລະ ຄຳນຶງເຖິງສິ່ງນີ້.

ໂຄງສ້າງ ແລະ ປະເພດຂອງເຊືອກສະລິງ

ເຊືອກສະລິງ ເປັນເຫຼັກລວດທີ່ຖືກສ້າງຂຶ້ນ ດ້ວຍ ເຫຼັກກາກບອນທີ່ໄຮ້ຮອຍຕໍ່ ແລະ ມີໂຄງສ້າງຫຼາຍຊັ້ນທີ່ພັນກັນ ແລະ ພັນອ້ອມຮອບ (ຮູບ 5-1). ເຫຼັກລວດທີ່ໃຊ້ພັນກຽວເຂົ້າກັນ ເອີ້ນວ່າ ເສັ້ນລວດເຫຼັກກ້າ ແລະ ສິ່ງທີ່ມີກຽວພັນເຂົ້າກັນ ເອີ້ນວ່າ ກຽວ (ເຊືອກ) ຄຸນລັກສະນະຂອງສາຍ ເຊືອກທີ່ເຮັດດ້ວຍວິທີນີ້ປະກອບມີ: (1) ມີລະດັບຄວາມແຮງໃນການດຶງທີ່ສູງ, (2) ທົນຕໍ່ການຕຳໄດ້ດີ, (3) ສາມາດເຮັດເປັນເຊືອກທີ່ມີຄວາມ ຍາວໄດ້ , ແລະ (4) ມີຄວາມຫົດຢືດ.

ແກນທີ່ສອດເຂົ້າໄປໃນສູນກາງຂອງເຊືອກ ແມ່ນ ແກນກາງ (ແກນໄຟເບີ້, ແກນເຫຼັກ ແລະ ອື່ນໆ) ເຊິ່ງເຊືອກສະລິງມາດຕະຖານ ຈະມີກຽວ 6 ເສັ້ນ ພັນອ້ອມຮອບແກນກາງ.

ວິທີການພັນເຊືອກສະລິງ

ເມື່ອວິທີການພັນເຊືອກສະລິງ ແລະ ວິທີການພັນກຽວກົງກັນຂ້າມກັນ ຈະເອີ້ນວ່າ “ການພັນແບບທຳມະດາ” ແລະ ເມື່ອວິທີການພັນໄປໃນ ທິດທາງດຽວກັນ ຈະເອີ້ນວ່າ “ວິທີແລ້ງ: Lang”. ໃນວິທີການພັນເຊືອກສະລິງ ແມ່ນ ມີ ວິທີການພັນກຽວແບບໂຕ Z (ກຽວຂວາ) ແລະ ວິທີ ການພັນກຽວແບບໂຕ S (ກຽວຊ້າຍ). ວິທີການພັນກຽວແບບໂຕ Z ເປັນ ວິທີການທົ່ວໄປ (ຮູບ 5-2).


ເຊືອກ “ສາຍເຊືອກທີ່ພັນດ້ວຍວິທີການພັນແບບທຳມະດາ” ຈະມີຄວາມຍາວທີ່ສັ້ນກວ່າ 1 ກຽວ (ເຊືອກ 1 pitch) ແລະ ທິດທາງຂອງ ເສັ້ນເຫຼັກລວດ ກໍເກືອບຈະຂະໜານກັບແກນກາງຂອງເຊືອກ. ຫາກເບິ່ງຈາກ ຄວາມຕ້ານທານໃນການສຽດສີ ແລະ ຄວາມຕ້ານທານໃນຄວາມ ເມື່ອຍລ້າ ແລ້ວ, ວິທີແລ້ງ: Lang ຈະມີຄຸນສົມບັດດ້ອຍກວ່າ, ແຕ່ຈະມີລັກສະນະບິດແໜ້ນ, ບໍ່ຫັກງ່ໍ່ງ່າຍ (ເບິ່ງຮູບ 5-4) ທັງຍັງນຳໃຊ້ໄດ້ງ່າຍ, ດັ່ງນັ້ນ ຈຶ່ງເປັນທີ່ນິຍົມໃນການນຳໃຊ້ກັນທົ່ວໄປ.(ສ່ວນໃຫຍ່ໃຊ້ສຳລັບສາຍງານ ຮູບ 5-1)

ເຊືອກທີ່ພັນດ້ວຍວິທີການແລ້ງ ແມ່ນ ຈະມີຄວາມຍາວກວ່າ 1 ກຽວ, ເສັ້ນເຫຼັກລວດ ກໍມີຄຸນສົມບັດພິເສດໃນການທົນຕໍ່ແຮງສຽດສີ ທັງມີ ຄວາມຫົດຢືດ ແລະ ມີແຮງຕ້ານທານຕໍ່ຄວາມເມື່ອຍລ້າໃນການເຮັດວຽກນຳອີກ. ຢ່າງໃດກໍຕາມ, ມັນມັກຈະຂອດກັນ ສະນັ້ນ ຈຶ່ງຈະຕ້ອງໄດ້ລະ ມັດລະວັງໃນການໃຊ້ງານ. (ການໃຊ້ເຊືອກດັ່ງກ່າວເປັນເຊືອກຫຼັກ).

ປະເພດຂອງເຊືອກສະລິງ

ເຊືອກສະລິງ ໄດ້ຖືກນຳໃຊ້ໃນອຸດສາຫະກຳຕ່າງໆ ເຊັ່ນ: ເຄນ, ລິບ, ແລະ ສະລິງ ຕ່າງໆເປັນຕົ້ນ. ມາດຕະຖານ ແມ່ນ ຖືກກຳນົດໂດຍ JIS (ມາດຕະຖານອຸດສາຫະກຳຍີ່ປຸ່ນ). ດັ່ງທີ່ສະແດງຢູ່ໃນຕາຕະລາງ 5-1, ໃນບັນດາສິ່ງເຫຼົ່ານີ້ ມັກຈະຖືກນຳໃຊ້ໃນວຽກງານປ່າໄມ້ ຄື: “ພາບຕັດ ຂວາງ” “ລັກສະນະອົງປະກອບ” “ລັກສະນະສະເພາະ” ແລະ “ການນຳໄປໃຊ້”

ການນຳໃຊ້ຕົ້ນຕໍ ໃນ ວຽກງານປ່າໄມ້ ປະກອບມີ ສາຍເຊືອກທີ່ໃຊ້ໃນເຄື່ອງຕັດໄມ້ທີ່ມີການຕິດຕັ້ງແບບລອຍຟ້າ (ລາບຫໍຄອຍ, ລາບສະວິງ, ພາຫະນະເກັບກ່ຽວໄມ້), ອຸປະກອນຕັດໄມ້ທີ່ໃຊ້ກົນຈັກ, ສາຍເຊືອກຫຼັກຂອງສາຍເຄເບີ້ນກະເຊົ້າລອຍຟ້າ ແລະ ສາຍເຊືອກໃຊ້ໃນການເຮັດວຽກ.



ຮູບທີ 5-1 ໂຄງສ້າງຂອງເຊືອກສະລິງ

ມີໂຄງສ້າງທີ່ໃຊ້ “ກຽວ”ຂອງລວດ ພັນອ້ອມຮອບແກນເຊືອກທີ່ເປັນໄຟເບີ້. ສາຍເຊືອກປະກອບດ້ວຍກຽວ ເອີ້ນວ່າ “ເສັ້ນລວດເຫຼັກກ້າ”











ຮູບທີ 5-2 ວິທີກັນພັນເຊືອກສະລິງ



ຮູບ 5-1 ໃນການເກັບກ່ຽວໄມ້ດ້ວຍສາຍເຊືອກ, ທ່ອນໄມ້ຈະຖືກເຄື່ອນຍ້າຍໄປມາຢູ່ເທິງເຊືອກຫຼັກ (ວິທີການ Lang) ໄມ້ທ່ອນຖືກຍົກຂຶ້ນດ້ວຍເຊືອກທີ່ໃຊ້ໃນການເຮັດວຽກ (ວິທີປົກກະຕິ).

ຕາຕະລາງ 5-1 ປະເພດຂອງເຊືອກສະລິງ

ພາບຕັດຂວາງ	ສັນຍາລັກຂອງອົງປະກອບ	ຄຸນລັກສະນະ	ຈຸດປະສົງ
	**6×7** ໂຄງສ້າງ 6×(1+6)	ເນື່ອງຈາກວ່າເສັ້ນເຫຼັກລວດສຳຜັດກັນໃນລວງດຽວກັນ, ເສັ້ນເຫຼັກລວດຈຶ່ງໄດ້ຮັບແຮງສຽດສີສະໝ່ຳສະເໝີ ຈຶ່ງມີຄວາມຕ້ານທານຕໍ່ການຫຼຸ້ຍຫ້ຽນ ແລະ ມີຄວາມຕ້ານທານຕໍ່ຄວາມເມື່ອຍລ້າໃນການເຮັດວຽກ ຍ້ອນມັນມີຄວາມທົດຢືດດີ ແຕ່ວ່າ ມັນມີແນວໂນ້ມທີ່ຈະ ຫັກງ່ຶ ງ່າຍໄດ້ ດັ່ງນັ້ນ ຈຶ່ງຕ້ອງໄດ້ລະມັດລະວັງໃນເວລານຳໃຊ້ມັນ.	ເຊືອກຫຼັກ
	**ສາຍເຊືອກບໍ່ປົກກະຕິ (ມີບັນຫາ) 6×P·7** ໂຄງສ້າງ 6×P·(1+6)	ເນື່ອງຈາກພື້ນຜິວຂອງກຽວມີຄວາມລຽບ ແລະ ມີການສຽດສີກັບຂອດເຊືອກ ຈຶ່ງເຮັດໃຫ້ມີການຫຼຸ້ຍຫ້ຽນເລັກໜ້ອຍ, ມັນມີຄວາມທົນທານຕໍ່ຄວາມເມື່ອຍລ້າໃນການເຮັດວຽກໄດ້ດີເປັນຢ່າງຍິ່ງ, ສາມາດຮັບນ້ຳໜັກໄດ້ດີ ແລະ ແຂງແຮງ.	ເຊືອກຫຼັກ
	**6×19** ໂຄງສ້າງ 6×(1+6+12)	ພັນເສັ້ນລວດເຫຼັກກ້າທີ່ມີເສັ້ນຜ່າສູນກາງເທົ່າກັນໃນແຕ່ລະຊັ້ນຂອງເຊືອກ ເຊິ່ງເສັ້ນລວດນັ້ນ ມີລັກສະນະເກືອບຈະຂະໜານກັນກັບແກນຂອງເຊືອກ ສະນັ້ນ ມັນຈຶ່ງຫັກງ່ຶ ໄດ້ຍາກ, ມີກຽວທີ່ແໜ້ນ ແລະ ບໍ່ເສຍຮູບຊົງ ຈຶ່ງເຮັດໃຫ້ງ່າຍຕໍ່ການນຳໃຊ້.	ເຊືອກທີ່ໃຊ້ໃນການເຮັດວຽກ ແນວ ທາງໃນ ການ ນຳໃຊ້
	**6×24** ໂຄງສ້າງ 6×(a+9+15)	ມັກໃຊ້ເປັນສະລິງ ເນື່ອງຈາກມີກຽວຈຳນວນຫຼາຍ ແລະ ມີແກນເສັ້ນໃຍຢູ່ທາງກາງຂອງກຽວ, ດັ່ງນັ້ນ ຈຶ່ງເຮັດໃຫ້ມັນມີຄວາມທົດຢືດສູງ.	ສະລິງ
	**6 x Fi (25)** ໂຄງສ້າງ 7×7+6×Fi[1+6+(6)+12]	ເນື່ອງຈາກເສັ້ນລວດເຫຼັກກ້າມີການສຳຜັດກັນ ດັ່ງນັ້ນ ຈຶ່ງມີຄວາມທົນທານຕໍ່ຄວາມເມື່ອຍລ້າສູງ ແລະ ເໝາະສົມສຳລັບການໃຊ້ງານທີ່ຕ້ອງການມີຄວາມໂຄ້ງງໍຫຼາຍ.	ເຊືອກທີ່ໃຊ້ໃນການເຮັດວຽກ (ເຊືອກບໍ່ມີຈຸດສິ້ນສຸດ)
	**IWRC 6×Fi (25)** ໂຄງສ້າງ 7×7+6×Fi[1+6+(6)+12]	ແກນເຊືອກຂະໜາດ 7x7 ໃຊ້ສຳລັບແກນເຊືອກທີ່ສາມາດຮັບນ້ຳໜັກໄດ້ຫຼາຍ ແລະ ຍາກຕໍ່ການຖືກໜີບ ດັ່ງນັ້ນຈຶ່ງໃຊ້ສຳລັບເປັນເຊືອກປະເພດລາກຈູງ ສຳລັບການເກັບກ່ຽວທ່ອນໄມ້ຂອງລົດໄຖ, ລານຫໍຄອຍ ແລະ ລານລະລິງ.	ເຊືອກທີ່ໃຊ້ໃນການເຮັດວຽກ
	**6 x S (19)** ໂຄງສ້າງ 6×S (1+9+9)	ຈຳນວນເສັ້ນລວດດ້ານນອກ ແລະ ດ້ານໃນ ມີຈຳນວນເທົ່າກັນ ແລະ ເສັ້ນລວດຂອງຊັ້ນນອກຖືກຕິດຕັ້ງຢ່າງສົມບູນຢູ່ຮ່ອງຂອງເສັ້ນລວດດ້ານນອກ. ເນື່ອງຈາກວ່າ ເສັ້ນລວດຊັ້ນນອກມີຄວາມໜາ ສະນັ້ນຈຶ່ງມີຄວາມຕ້ານທານຕໍ່ແຮງສຽດສີເປັນຢ່າງດີ.	ເຊືອກທີ່ໃຊ້ໃນການເຮັດວຽກ
	**ຮູບຮ່າງຂອງເສັ້ນລວດເຫຼັກກ້າ Warrington ທີ່ມີການຜິດຮູບ** **IWRC 6×P·WS (26)** ໂຄງສ້າງ 7×7+6×P·WS [1+5+(5+5)+10]	ເປັນການປະສົມປະສານລະຫວ່າງຮູບແບບ Warrington ແລະ ຮູບແບບກັນຊຶມ ເຊິ່ງມີຄວາມຕ້ານທານຕໍ່ຄວາມເມື່ອຍລ້າ, ມີຄວາມທົດຢືດ ແລະ ຕ້ານທານຕໍ່ຄວາມຫຼຸ້ຍຫ້ຽນໄດ້ດີເປັນຢ່າງຍິ່ງ ດັ່ງນັ້ນ ຈຶ່ງມີການນຳໃຊ້ໃນຂົງເຂດຕ່າງໆທີ່ກວ້າງຂວາງ	ເຊືອກທີ່ໃຊ້ໃນການເຮັດວຽກ

* ເມື່ອເບິ່ງວິທີການພັນເຊືອກສະລິງ ຈະເຫັນວ່າມີການນຳໃຊ້ເຊືອກຫຼັກ “ວິທີການ Lang” ສອງປະເພດ ຄື 6×7 ແລະ 6×P·7, ສ່ວນປະເພດອື່ນ ແມ່ນ ໃຊ້ “ວິທີການທຳມະດາ”. ນອກຈາກນີ້, ທິດທາງໃນການພັນ ແມ່ນ ຈະເປັນ “ການພັນກຽວແບບໂຕ Z”

ເອກະສານ: ກົມປ່າໄມ້ “ຄູ່ມືວິຊາການຂັ້ນສູງ 2014”

ວິທີການນຳໃຊ້ເຊືອກສະລິງ

ກ່ຽວກັບການຄ່ຽນຖ່າຍສິນຄ້າ, ການຂົນສົ່ງ, ແລະ ການເກັບຮັກສາ

ເນື່ອງຈາກວ່າ ເຊືອກສະລິງ ເຮັດມາຈາກການເອົາເສັ້ນເຫຼັກລວດບາງໆມາພັນເຂົ້າກັນເປັນກຽວ, ດັ່ງນັ້ນ ຈຶ່ງມີຄວາມສຳຄັນຢ່າງຍິ່ງທີ່ຈະຕ້ອງ ນຳໃຊ້ເຊືອກສະລິງໂດຍບໍ່ໃຫ້ເກີດຄວາມເສຍຫາຍຕໍ່ເສັ້ນເຫຼັກລວດ. ເຊັ່ນ: ຫຼີກລ່ຽງການງັດເຊືອກທີ່ຄົດ ຫຼື ຍານ ແລະ ຫຼີກລ່ຽງການກົ້ງເຊືອກ ໄປໃນບ່ອນທີ່ເປັນຂຸມລຸບໂນນ.

ນອກຈາກນັ້ນ, ຈະຕ້ອງບໍ່ໃຫ້ ເປັນ “ໝ້ຽງ” ແລະ “ຫຼ້ຍຫ້ຽນ”. ສາຍເຊືອກສະລິງ ແມ່ນ ເຊືອກທີ່ເຮັດມາຈາກການລວມເສັ້ນເຫຼັກລວດ, ສະ ນັ້ນ ເມື່ອທຽບກັບເຫຼັກມົນທີ່ມີເສັ້ນຜ່ານສູນກາງເທົ່າກັນແລ້ວ ພື້ນຜິວຂອງເຊືອກ ແມ່ນ ຈະໃຫຍ່ກວ່າຫຼາຍ ແລະ ເປັນເຊືອກທີ່ມີໂຄງສ້າງທີ່ ງ່າຍຕໍ່ການເປັນໝ້ຽງ, ເນື່ອງຈາກວ່າ ເປັນເຊືອກທີ່ໄດ້ມາຈາກການພັນເຂົ້າກັນໃຫ້ເປັນກຽວ ແລະ ເສັ້ນລວດສຳພັດກັບພື້ນຜິວຂອງເສັ້ນເຊືອກ ໂດຍກົງ ດັ່ງນັ້ນ ຫາກເກີດມີ “ການຫຼ້ຍຫ້ຽນ” ຈະກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດໄດ້.

ເພື່ອປ້ອງກັນສິ່ງເຫຼົ່ານີ້ ແມ່ນ ຈຳເປັນຕ້ອງໄດ້ຕື່ມນ້ຳມັນເລື້ອຍໆ, ຫຼີກລ່ຽງບໍ່ໃຫ້ຂາດນ້ຳມັນ, ປ້ອງກັນບໍ່ໃຫ້ນ້ຳມັນອອກ, ແລະ ຫຼີກຫຼ່ຽງຄວາມ ຊຸ່ມ ແລະ ບ່ອນຈືນ ເທົ່າທີ່ເປັນໄປໄດ້. ນອກຈາກນັ້ນ, ຈຶ່ງລະມັດລະວັງໃນການຫຼີກລ່ຽງສານທີ່ເຮັດໃຫ້ເປັນໝ້ຽງ ເຊັ່ນ: ເກືອ ແລະ ກົດ ເປັນຕົ້ນ.

ໃຫ້ເກັບຮັກສາເຊືອກໄວ້ຢູ່ບ່ອນທີ່ບໍ່ໄດ້ຮັບຜົນກະທົບຈາກຄວາມຊຸມ ແລະ ອຸນຫະພູມສູງ ຕ່າງໆເປັນຕົ້ນ ແລະ ບ່ອນທີ່ມີຫຼັງຄາ ອາກາດຖ່າຍ ເທດີ ເພື່ອປ້ອງກັນບໍ່ໃຫ້ເປັນໝ້ຽງ. ບໍ່ໃຫ້ວາງເຊືອກໃສ່ພື້ນຄອນກີດ ຫຼື ພື້ນດິນ ໂດຍກົງ, ແຕ່ ໃຫ້ແນ່ໃຈວ່າ ໄດ້ເອົາແຜ່ນໄມ້ຕ່າງໆມາປູຢູ່ພື້ນ ເພື່ອໃຫ້ມີຊ່ອງວ່າງ ກັບ ພື້ນດິນ.

ຫາກບໍ່ມີທາງເລືອກອື່ນ ນອກຈາກຕ້ອງເກັບຮັກສາໄວ້ຢູ່ກາງແຈ້ງ ແມ່ນ ໃຫ້ວາງໄວ້ຢູ່ເທິງແຜ່ນໄມ້ ແລ້ວຄຸມໄວ້ບໍ່ໃຫ້ຖືກຝົນ. ນອກຈາກນັ້ນ, ໃຫ້ອະນາໄມພື້ນດິນໃຫ້ສະອາດ ເພື່ອປ້ອງກັນບໍ່ໃຫ້ຫຍ້າຂຶ້ນ.

ວິທີແກ້ເຊືອກສະລິງ

ໃນເວລາທີ່ຈະແກ້ເຊືອກສະລິງ ໃຫ້ມ້ວນຂອດເຊືອກແລ້ວຢຶດອອກ ຫຼື ວາງຂອດລວດໄວ້ເທິງໂຕະໝຸນ ແລ້ວໃຫ້ໝຸນເພື່ອຄຶງມັນອອກ (ຮູບ 5-3). ຫາກແກ້ເຊືອກບໍ່ຖືກວິທີ ກຽວຂອງເຊືອກອາດຈະຫົດເຂົ້າ ຫຼື ງ້ຳງອອກ ເຮັດໃຫ້ເຊືອກຫັກງໍ(ຂອດ)ໄດ້ (ຮູບ 5-4), ເຊິ່ງມັນຈະເຮັດໃຫ້ ບໍ່ສາມາດນຳໃຊ້ໄດ້, ດັ່ງນັ້ນ ຈຶ່ງຕ້ອງໄດ້ລະມັດລະວັງ.

ການຫັກງໍ ເປັນ ຄວາມເສຍຫາຍທີ່ຮ້າຍແຮງຢ່າງຍິ່ງສຳລັບເຊືອກສະລິງ (ຮູບ 5-4). ພື້ນທີ່ບ່ອນທີ່ມີຮອຍຫັກງໍ ຍັງຄົງເປັນຈຸດອ່ອນຂອງ ເຊືອກ, ເຖິງແມ່ນວ່າ ຈະເບິ່ງຄືວ່າມັນໄດ້ກັບຄືນສູ່ສະພາບປົກກະຕິແລ້ວກໍຕາມ. ເມື່ອສ່ວນທີ່ຄາຍຄວາມເຄັ່ງຕາມທຳມະຊາດ ກາຍເປັນ ① ໃນ ຮູບທີ 5-4, ມັນກໍຈະເຮັດໃຫ້ເກີດກຳລັງແຮງຢູ່ເຊືອກ ແລ້ວຈະເຮັດໃຫ້ເຊືອກໝຸນ. ຫາກມັນຖືກປະໄວ້ ແລະ ເກີດມີຄວາມເຄັ່ງຢູ່ເຊືອກ ມັນກໍຈະ ເກີດການຫັກງໍ ດັ່ງທີ່ສະແດງຢູ່ໃນຮູບ ②③④.

ສາມາດປ້ອງກັນບໍ່ໃຫ້ມັນເກີດການຫັກງໍໂດຍການໃຊ້ແຮງດຶງ ຫຼັງຈາກທີ່ແກ້ຂອດເຊືອກທີ່ຢູ່ໃນສະພາບ ①. ເຖິງແມ່ນວ່າເຊືອກຈະມີຂະ ຫນາດໃຫຍ່ກວ່າປົກກະຕິ ແຕ່ກໍອາດຈະເກີດການຫັກງໍໄດ້ງ່າຍ ຫາກແກ້ເຊືອກບໍ່ຖືກວິທີ.


ວິທີການກໍ້ໃສ່ດ້າມສະລິງ

ໃນເວລາກໍ້ເຊືອກສະລິງໃສ່ດ້າມເຄື່ອງຈັກເກັບກ່ຽວໄມ້ (ໂດຍປົກກະຕິເປັນດ້າມແບບບໍ່ມີຮ່ອງ) ເຮົາຈະໃຊ້ປະໂຫຍດຈາກຄຸນສົມບັດຂອງເຊືອກ ໃນການໝຸນໄປໃນທິດທາງທີ່ບໍ່ບິດງໍ ເມື່ອມີແຮງດຶງເກີດຂຶ້ນ. ໂດຍສະເພາະ, ເຊືອກທີ່ມີກຽວເປັນຮູບໂຕ Z ແມ່ນ ຈະກໍ້ຈາກເບື້ອງຊ້າຍຂອງດ້ານ ໄປຫາເບື້ອງຂວາ, ສ່ວນເຊືອກທີ່ມີກຽວແບບໂຕ S ແມ່ນ ຈະກໍ້ຈາກເບື້ອງຂວາ ໄປຫາເບື້ອງຊ້າຍ (ຮູບ 5-5).


ຢູ່ຊັ້ນທຳອິດຂອງດ້ານ ແມ່ນ ໃຫ້ໃຊ້ແຮງດຶງຢູ່ເຊືອກໃຫ້ພຽງພໍ ໄປພ້ອມໆກັບການກໍ້ໂດຍບໍ່ໃຫ້ມີຊ່ອງວ່າງ. ເຊິ່ງສິ່ງນີ້ຈະເປັນຖານ ເຮັດໃຫ້ ສາມາດກໍ້ໄດ້ຢ່າງຖືກຕ້ອງໃນຊັ້ນຕໍ່ໆໄປ. ຫາກການກໍ້ຊັ້ນທຳອິດບໍ່ດີ ກໍຈະເຮັດໃຫ້ການກໍ້ໃນຊັ້ນທີ 2 ແລະ ຊັ້ນຕໍ່ໆໄປບິດບ້ຽວບໍ່ສະເໝີກັນ ຫຼື ກົ້ນ ກັນ, ແລ້ວກໍ່ໃຫ້ເກີດຄວາມເສຍຫາຍຕໍ່ເຊືອກໄດ້, ສະນັ້ນ ຈຶ່ງຈຳເປັນຕ້ອງໄດ້ລະມັດລະວັງ.

ວິທີເຮັດປອກເຊືອກ

ການເຮັດປອກ ໝາຍເຖິງ ການພັນລວດສະລິງອ້ອມຮອບປາຍຂອງເຊືອກທີ່ຕັດ ເພື່ອປ້ອງກັນບໍ່ໃຫ້ກຽວຢູ່ປາຍເຊືອກຫຼຸດອອກ (ຮູບ 5-6).



ຮູບທີ 5-3 ວິທີການແກ້ເຊືອກສະລິງ



ຮູບທີ 5-4 ຂະບວນການເກີດການຫັກງໃນເຊືອກສະລິງ

ໃນເວລາຈະຕັດເຊືອກອອກ, ໃຫ້ເຮັດປອກ ຢູ່ທັງສອງດ້ານຂອງຈຸດທີ່ຕັດ ເຊິ່ງໃຫ້ມີຄວາມຍາວສາມເທົ່າຂອງເສັ້ນຜ່າສູນກາງຂອງເຊືອກ (ມາດຕະຖານ) ກ່ອນການຕັດເຊືອກ. ຕ້ອງພັນປອກໃຫ້ແໜ້ນໂດຍໃຊ້ເຄື່ອງມື (ໄມ້ຄີງ ເປັນຕົ້ນ)

ຄວາມປອດໄພຂອງເຊືອກສະລິງ


ເຊືອກສະລິງທີ່ຈະໃຊ້ ຈະຕ້ອງເລືອກເອົາເຊືອກສະລິງທີ່ມີຄວາມແຂງແຮງສູງກວ່າແຮງດຶງສູງຫຼາຍເທົ່າທີ່ຈະໃຊ້ລະຫວ່າງການນຳໃຊ້ . ອັດຕາຄູນ ນີ້ ເອີ້ນວ່າ ຄ່າຄວາມປອດໄພ ຫຼື ອັດຕາຄວາມປອດໄພ

ປັດໃຈດ້ານຄວາມປອດໄພສຳລັບເຊືອກທີ່ໃຊ້ໃນວຽກງານປ່າໄມ້ ແມ່ນ ຖືກກຳນົດໂດຍກົດລະບຽບຄວາມປອດໄພ ແລະ ສຸຂະພາບ (ມາດຕາ 151-130). ນອກຈາກນັ້ນ, ປັດໄຈຄວາມປອດໄພຂອງເຊືອກສະລິງທີ່ໃຊ້ ຕ້ອງເປັນເຊືອກສຳລັບອຸປະກອນເກັບກ່ຽວແບບແລ່ນສາຍໄຟລອຍຟ້າແບບງ່າຍດາຍ (ການເກັບກ່ຽວໄມ້ຢູ່ພື້ນດິນໂດຍບໍ່ໄດ້ໃຊ້ເຊືອກສາຍຫຼັກ) ເຊິ່ງໄດ້ຮັບການກຳນົດໄວ້ຢູ່ 4.0 ຫຼື ສູ່ງກວ່າກົດລະບຽບດ້ານຄວາມປອດໄພ ແລະ ສຸຂະພາບ.

ການປ້ອງກັນສາຍເຊືອກບໍ່ໃຫ້ສາຍເຊືອກຄົດ ແລະ ການກໍ້ສາຍເຊືອກທີ່ບໍ່ສະໝ່ຳສະເໝີກັນ


ໃນການນຳໃຊ້ເຊືອກ ຈະຕ້ອງເອົາໃຈໃສ່ບໍ່ໃຫ້ມັນຄົດ ແລະ ບໍ່ໃຫ້ກໍ້ເຂົ້າກັນແບບບໍ່ສະໝ່ຳສະເໝີ. ການຄົດຂອງເຊືອກ ເປັນ ສາເຫດຕົ້ນຕໍຂອງຄວາມເສຍຫາຍຂອງສາຍເຊືອກ, ດັ່ງນັ້ນ ເພື່ອຫຼີກລ່ຽງສິ່ງນີ້ ແລະ ຮັບປະກັນການນຳໃຊ້ໃນໄລຍະຍາວ, ມັນຈຳເປັນຕ້ອງກໍ້ສາຍເຊືອກ ໃຫ້ມີເສັ້ນຜ່າສູນກາງກວ້າງເທົ່າທີ່ເປັນໄປໄດ້. ຫາກເສັ້ນຜ່າສູນກາງຂອງດ້ານເຄື່ອງເກັບກ່ຽວ ແລະ ເສັ້ນຜ່າສູນກາງຂອງລູກລໍ້ທີ່ໃຊ້ສຳລັບກໍ້ເຊືອກກວ້າງຊ່ຳໃດ ກໍຈະຍິ່ງເປັນການຢືດອາຍຸການນຳໃຊ້ຂອງສາຍເຊືອກໄດ້ຫຼາຍຂຶ້ນເທົ່ານັ້ນ.

ໃນເວລາກໍ້ເຊືອກສະລິງໃສ່ດ້ານຂອງເຄື່ອງເກັບກ່ຽວໄມ້ ຫາກກໍ້ເຊືອກໃສ່ບໍ່ສະໝ່ຳສະເໝີກັນ ກໍຈະເຮັດໃຫ້ເຊືອກໄດ້ຮັບຄວາມເສຍຫາຍ ແລະ ເສຍຮູບຮ່າງໄດ້. ຫາກກໍ້ເຊືອກເຂົ້າກັນແບບຫຼົມໆ ພາຍໃຕ້ແຮງດຶງທີ່ຂ້ອນຂ້າງຫຼາຍຢູ່ເທິງເຊືອກ, ເຊືອກ ອາດຈະຖືກໜີບ ຫຼື ເຊືອກອາດຈະພັນເຂົ້າກັນຈົນຫຍຸ້ງ ແລະ ເຮັດໃຫ້ບໍ່ມາດດຶງເຊືອກອອກມາໄດ້. ນອກຈາກນັ້ນແລ້ວ, ຫາກດ້ານງ່ຽງໄປດ້ານໃດດ້ານໜຶ່ງ ບໍ່ວ່າຈະເປັນດ້ານຊ້າຍ ຫຼື




ຮູບທີ 5-5 ວິທີການກໍ້ເຊືອກໃສ່ດ້ານຕ່າງໆຂອງເຄື່ອງຈັກເກັບກ່ຽວ.

ສຳລັບດ້ານຕ່າງໆຂອງເຄື່ອງເກັບກ່ຽວ, ເຊືອກທີ່ພັນກຽວແບບໂຕ Z ແມ່ນ ຈະພັນຈາກຊ້າຍໄປຂວາຂອງດ້ານ ສ່ວນເຊືອກທີ່ພັນກຽວແບບໂຕ S ແມ່ນ ຈະພັນຈາກຂວາໄປຊ້າຍ.



ຮູບ 5-6 ວິທີການເຮັດປອກໂດຍການໃຊ້ລວດພັນບ່ອນທີ່ຕັດເຊືອກ



ຮູບທີ 5-7 ມາດຕະຖານການກຳຈັດເຊືອກສະລິງ

ດ້ານຂວາ ກໍຕາມ, ອາດຈະເຮັດໃຫ້ເຊືອກຫຼົ່ມ ແລະ ຫຼຸດອອກຈາກຂອບດ້ານໄດ້, ດັ່ງນັ້ນ ຄວນລະມັດລະວັງ ແລະ ກໍ້ເຊືອກເຂົ້າກັນໃຫ້ສະໝ່ຳສະເໝີ.

ການກໍ້ເຊືອກເຂົ້າກັນແບບບໍ່ສະໝ່ຳສະເໝີ ບໍ່ໄດ້ເກີດສະເພາະກັບເຄື່ອງເກັບກ່ຽວໄມ້ຢ່າງດຽວເທົ່ານັ້ນ ແຕ່ຍັງເກີດຢູ່ໃນເຄື່ອງມ້ວນ ແລະ ລາກສະລິງ ຕ່າງໆ, ລວມທັງເກີດອຸບັດຕິເຫດແຮງງານທີ່ມີສາເຫດມາຈາກ ລາກບໍ່ສົມດຸນກັນອີກດ້ວຍ, ດັ່ງນັ້ນ ຈຶ່ງຕ້ອງລະມັດລະວັງເປັນພິເສດໃນການເຮັດວຽກກ່ຽວກັບການກໍ້ເຊືອກ.

ວິທີການກວດກາເຊືອກສະລິງ, ໄລຍະເວລາໃນການກຳຈັດ ແລະ ການປ່ຽນໃໝ່

ການຫຼຸຍຫ້ຽນ, ແຕກຫັກ, ພື້ນຜິວຖືກຂູດຂີດ, ການຫັກງໍ ແລະ ເສຍຮູບ ຈະເຮັດໃຫ້ນ້ຳໜັກຂອງເຊືອກທີ່ກຳລັງນຳໃຊ້ຫຼຸດລົງ ເມື່ອທຽບໃສ່ຕອນທີ່ນຳໃຊ້ໃໝ່ໆ, ດັ່ງນັ້ນ ກ່ອນທີ່ຈະນຳໃຊ້ເຊືອກ ຈະຕ້ອງໄດ້ມີການກວດກາ ແລະ ຖ້າຫາກມັນກົງກັບຫົວຂໍ້ຕໍ່ໄປນີ້ “ມາດຕະການກຳຈັດເຊືອກສະລິງ” (ມາດຕາ 151-131 ຂອງກົດລະບຽບຄວາມປອດໄພ ແລະ ສຸຂະພາບ) (ຮູບ 5-7) ແມ່ນ ຫ້າມບໍ່ໃຫ້ນຳໃຊ້ເຊືອກດັ່ງກ່າວ.

ມາດຕະຖານການກຳຈັດສາຍເຊືອກ ມີ ດັ່ງນີ້:

① ເປັນເຊືອກສະລິງທີ່ສາຍລວດເຫຼັກກ້າ ຂາດ 1 ສ່ວນ 10 ຫຼື ຫຼາຍກວ່ານັ້ນ ຢູ່ລະຫວ່າງບ່ອນໃດບ່ອນໜຶ່ງຂອງເຊືອກ 1 pitch (1 ກຽວ) ເຊິ່ງ ຫາກ ເຊືອກກຽວ 1 ເສັ້ນ ຂາດອອກ, ກໍຈະຄິດວ່າມັນມີອັດຕາການຂາດຢູ່ທີ່ 5%. ຫຼື ເປັນເຊືອກທີ່ 20% ຂອງສາຍລວດເຫຼັກກ້າ ຂາດ ຢູ່ລະຫວ່າງບ່ອນໃດບ່ອນໜຶ່ງຂອງເຊືອກ 5 pitch (5 ກຽວ)

② ເຊືອກທີ່ມີການຫຼຸດລົງຂອງເສັ້ນຜ່າສູນກາງ ເກີນ 7% ຂອງຂະໜາດເສັ້ນຜ່າສູນກາງທີ່ຖືກກຳນົດໄວ້.

③ ຍ້ອນມີການຫຼ້ຽຫ້ຽນ, ດັ່ງຕໍ່ໄປນີ້:

· ເກີດມີຮອຍຂຸຂະຢູ່ພື້ນຜິວຂອງເສັ້ນລວດເຫຼັກກ້າ ເຊິ່ງເຮັດໃຫ້ມີຄືກັບຮອຍແປ້ວຢູ່ສາຍເຊືອກA.

· ເສັ້ນລວດເຫຼັກກ້າ ຫຼົມຂຶ້ນ ຍ້ອນມີການກັດກິນຢູ່ດ້ານໃນຂອງເຊືອກ.

④ ເຊືອກທີ່ເສຍຮູບຮ່າງ ດັ່ງຕໍ່ໄປນີ້:

· ເຊືອກທີ່ງໍຫຼາຍB

· ເຊືອກທີ່ຫັກງໍ

· ຫາກມີໄລຍະຂອງການຂອດ 3 ສ່ວນ 4 ຫຼື ຫຼາຍກ່ອນນັ້ນ ຢູ່ໃນພື້ນທີ່ພາຍໃນ 25 ເທົ່າ ຂອງ d (ເສັ້ນຜ່າສູນກາງ) ທີ່ຖືກກຳນົດໄວ້C.

· ເຊືອກທີ່ມີລັກສະນະຄ້າຍຄືຕາໜ່າງຂອງກະຕ່າD.

· ເຊືອກທີ່ແປ ເນື່ອງຈາກການຖືກໜີບສະເພາະຈຸດ ແລະ ມີເສັ້ນຜ່າສູນກາງຕ່ຳກວ່າ 2 ສ່ວນ 3 ຂອງເສັ້ນຜ່າສູນກາງສູງສຸດຂອງເຊືອກE.

· ເຊືອກທີ່ກຽວຂອງເຊືອກຫຼຸດF.

· ເຊືອກທີ່ແກນເຫຼັກຍື່ນອອກມາG I.

· ເຊືອກທີ່ເສັ້ນກຽວຫຼຸດອອກມາ 1 ສາຍ ຂຶ້ນໄປH.

· ເຊືອກທີ່ເສັ້ນລວດຍື່ນອອກມາຢ່າງເຫັນໄດ້ຊັດເຈນJ.

ໃນເວລາທີ່ຜະລິດເຊືອກສະລິງ ແມ່ນ ໄດ້ມີການໃສ່ນ້ຳມັນລໍ່ລື່ນຢູ່ເຊືອກຢ່າງພຽງພໍ, ແຕ່ເມື່ອມີການນຳໃຊ້ ກະແລັດທີ່ຢູ່ພາຍໃນຈະຖືກບີບອອກ ແລະ ປະລິມານນ້ຳມັນລໍ່ລື່ນກໍຈະຫຼຸດລົງ ແລ້ວກະແລັດທີ່ຢູ່ພາຍນອກກໍຈະຫຼຸດລົງ ຫຼື ຫາຍໄປ ເນື່ອງຈາກການສຳພັດກັບລູກລໍ້ຂອງເຊືອກ ຫຼື ນ້ຳຝົນຕ່າງໆເປັນຕົ້ນ, ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ກວດກາສະພາບຂອງກະແລັດ ຫຼື ທາໃໝ່ ຕາມຄວາມຈຳເປັນ.

ນອກຈາກນັ້ນ, ຫາກເຊືອກເກີດມີການເຜົາໄໝ້ ແລະ ອ່ອນຕົວລົງ ຍ້ອນການສຳຜັດ ຫຼື ສຽດສີກັນຢ່າງຮຸນແຮງ, ດັ່ງນັ້ນ ຈຶ່ງເຮັດໃຫ້ຄວາມແຂງແຮງຂອງເຊືອກຫຼຸດລົງຫຼາຍ, ຂາດງ່າຍ ແລະ ປັດໃຈທາງດ້ານຄວາມປອດໄພຫຼຸດລົງ ສິ່ງເຫຼົ່ານີ້ເຮັດໃຫ້ເຊືອກແຕກຫັກ, ສະນັ້ນ ຈຳເປັນຕ້ອງໄດ້ລະມັດລະວັງ.

ວິທີການປັບແຕ່ງເຊືອກສະລິງ

ວິທີການຕັດຕໍ່ເຊືອກ

ວຽກງານການເດີນສາຍເຊືອກ ຫຼື ສາຍໄຟໃນວຽກງານປ່າໄມ້, ການປັບແຕ່ງເຊືອກສະລິງ ຖືວ່າເປັນ ທັກສະທີ່ຈຳເປັນ. ໃນການປັບແຕ່ງເຊືອກສະລິງ ແມ່ນ ມີ 2 ວິທີ ຄື: ການປັບແຕ່ງປາຍເຊືອກ ແລະ ການຕັດຕໍ່ເຊືອກ 2 ເສັ້ນ ເຂົ້າກັນ.

· **ວິທີການປັບແຕ່ງປາຍເຊືອກ** / ມີວິທີການຫຼັກໆ ຄື: ການປັບແຕ່ງແບບການສານ (Eye splice) ແລະ ການປັບແຕ່ງແບບເປັນຮ່ວງ.


· **ວິທີການຕັດຕໍ່ເຊືອກ 2 ເສັ້ນເຂົ້າກັນ**/ ມີ ວິທີການຕໍ່ແບບຍາວ, ການຕໍ່ເຄິ່ງກຽວ ແລະ ການຕໍ່ແບບສັ້ນ.

ລາຍລະອຽດ ແມ່ນ ມີດັ່ງຕໍ່ໄປນີ້:

ການປັບແຕ່ງແບບການສານ ວິທີການປັບແຕ່ງປາຍເຊືອກ

ວິທີການປັບແຕ່ງປາຍເຊືອກ ເຊິ່ງເປັນວິທີການຫຼັກ ແມ່ນ ປະກອບມີ ແບບການສານ, ປັບແຕ່ງແບບຢຸດແຮງບີບອັດ ແລະ ການປັບແຕ່ງແບບເປັນຮ່ວງ ຕ່າງໆເປັນຕົ້ນ, ເຊິ່ງໃນວິທີການສານແບບ Eye splice ແມ່ນ ຈະມີ ຢູ່ 2 ວິທີ ຄື: ການເປຍ ແລະ ການພັນກຽວ (ຮູບ 5-8). ການຕໍ່ເຊືອກ ເຮັດໃຫ້ຄວາມແຂງແຮງຂອງເຊືອກສະລິງຫຼຸດລົງ ແຕ່ກໍປອດໄພທີ່ຈະສະຫຼຸບໄດ້ວ່າ ຫາກສານເສັ້ນເຊືອກດີ ກໍຈະມີຄວາມແຂງແຮງຢູ່ທີ່ 90% ເຊິ່ງປົກກະຕິ ແມ່ນ 80%.

ໃນວິທີການພັນກຽວ ແມ່ນ ມີຄວາມສ່ຽງທີ່ຄວາມແຂງແຮງຈະຫຼຸດລົງຫາກເຊືອກຄາຍໂຕອອກ. ການເປຍ ແມ່ນ ມີຂໍ້ດີຢູ່ບ່ອນທີ່ມັນຈະບໍ່



ຮູບທີ 5-8 ວິທີການປັບແຕ່ງແບບ eye splice - ການສານແບບກະຕ່າ, ການພັນ

ກ່ຽວກັບວິທີການປັບແຕ່ງແບບ eye splice, ໃຫ້ຊອກຫາທາງ,ເວັບໄຊ ວ່າ: "ວິທີການປັບແຕ່ງແບບ eye splice ສູນສະໜັບສະໜູນເທັກໂນໂລຢີ ການຄຸ້ມຄອງດ້ານກະສິກຳ ປ້າໄມ້ ແລະ ການປະມົງ ແຂວງ ໂທຄຸຊິມະ". ນຳສະເໜີກ່ຽວກັບວິທີຈັດການ ແບບ eye splice ແລະ ,ປາຍເຊືອກເສັ້ນໃຍສັງເຄາະ

ຫຼຸດອອກງ່າຍ ເຖິງວ່າຈະມີການຮັບແຮງດຶງຢູ່ເທິງເຊືອກ, ດັ່ງນັ້ນ ເມື່ອໃຊ້ເຊືອກເສັ້ນດຽວ ເປັນ ຕົ້ນ ແມ່ນ ສະລິງ, ແບບເປຍ ຈະມີຄວາມປອດໄພກວ່າ. ມານຳໃຊ້ເຊືອກແບບເປຍ ຢູ່ໃນອຸປະກອນການເກັບກ່ຽວທີ່ເປັນເຄື່ອງຈັກກັນເທາະ. ຢ່າງໃດກໍຕາມ, ການເປຍ ແມ່ນ ຈະໃຊ້ເວລາຫຼາຍກ່ອນການພັນກຽວ.


ການປັບແຕ່ງເພື່ອຢຸດແຮງບິບອັດ ຫຼື ເອີ້ນອີກຢ່າງໜຶ່ງວ່າ ການປັບແຕ່ງລັອກ, ເປັນວິທີທີ່ມີການໃສ່ຂໍ້ຕໍ່ໂລຫະແບບສະເພາະ (ປອກ) ເຂົ້າໄປສ່ວນຄໍຂອງຮ່ວງ ແລ້ວ ບີບອັດດ້ວຍເຄື່ອງຈັກ ເຊິ່ງເປັນວິທີທີ່ມີຄວາມປອດໄພ ແລະ ເຮັດໃຫ້ລະດັບຄວາມແຂງແຮງຂອງເຊືອກຫຼຸດລົງພຽງເລັກນ້ອຍ.

- **ວິທີເຮັດເຊືອກສະລິງດ້ວຍວິທີການ Eye splice**

ສະລິງ ແມ່ນ ເຊືອກທີ່ມີຮ່ວງຢູ່ປາຍທັງສອງສົ້ນຂອງເຊືອກ ເຊິ່ງຈະໃຊ້ເປັນເຊືອກໃນການຍົກວັດສະດຸ. ຖືວ່າມັນເປັນເລື່ອງປົກກະຕິ ທີ່ຈະໃຊ້ເຊືອກສະລິງທີ່ມີຄວາມໜາ 14 ມມ (ຫຼື 12 ມມ) ແລະ ຄວາມຍາວ 4 ມ. ເມື່ອງຈາກວ່າ ເຊືອກຈະຖືກນຳໃຊ້ເພື່ອຍົກວັດສະດຸໂດຍກົງ, ດັ່ງນັ້ນ ຈຶ່ງຈະໃຊ້ເຊືອກທີ່ມີຄວາມແຂງແຮງ ແລະ ໜາ ກວ່າ.

ຂັ້ນຕອນການປັບແຕ່ງ ແມ່ນ ມີດັ່ງນີ້ (ຮູບ 5-9).

· ທຳອິດ, ແມ່ນ ຈະດຳເນີນການປັບແຕ່ງ ແບບ Flemish ການປັບແຕ່ງ ແບບ Flemish ເປັນ ວິທີການທີ່ແບ່ງກຽວ 6 ກຽວໃນເຊືອກ ອອກເປັນ 3 ເສັ້ນ ແລະ 3 ເສັ້ນ ຫຼື ແບ່ງອອກເປັນ 2 ເສັ້ນ ແລະ 4 ເສັ້ນ ແລ້ວພັນກຽວທີ່ຢູ່ສ່ວນຄໍຂອງຮ່ວງໃຫ້ເຂົ້າກັນ, ເຊິ່ງວິທີນີ້ຈະເປັນວິທີທີ່ແຂງແຮງ ແລະ ຫຼຸດອອກຈາກກັນໄດ້ຍາກ.



ຮູບ 5-9 ວິທີການປັບແຕ່ງແບບ Flemish (ຕົວຢ່າງ)

* ສຳລັບລາຍລະອຽດກ່ຽວກັບວິທີການປັບແຕ່ງ, ກະລຸນາຄົ້ນຫາເບິ່ງເພີ່ມຕື່ມ ຢູ່ເວັບໄຊ້ ວ່າ “ການປັບແຕ່ງແບບ Flemish”.

· ຫຼັງຈາກການປັບແຕ່ງດ້ວຍ Flemish ແລ້ວ, ກຽວຂອງເຊືອກຈະຖືກສານໃຫ້ເປັນວົງມົນ ຢ່າງໜ້ອຍ 3 ຄັ້ງ ດ້ວຍວິທີການເປຍ ຫຼື ວິທີການພັນກຽວ, ຫຼັງຈາກນັ້ນ ໃຫ້ສານເຄິ່ງໜຶ່ງ (ເສັ້ນຊັ້ນນອກ) ຂອງກຽວແຕ່ລະກຽວອີກຄັ້ງໜຶ່ງຢ່າງໜ້ອຍ ກຽວລະ 2 ຄັ້ງ (ສອດເຊືອກ) (ການສານໃຫ້ເປັນວົງມົນ ຫຼາຍກ່ອນ 4 ຄັ້ງ ແມ່ນ ໃຫ້ສອດເຊືອກເຂົ້າໄປ 1 ຄັ້ງຂຶ້ນໄປ).

ການສານແບບພັນກຽວ ເປັນວິທີການພັນຕາມທິດທາງຂອງກຽວ, ສ່ວນການສານແບບເປຍ ແມ່ນ ເປັນການສານໄປໃນທິດທາງກົງກັນຂ້າມກັບກຽວ, ສະນັ້ນ ເຖິງແມ່ນວ່າເຊືອກຈະໝຸນ ແລະ ບິດອອກມາກໍຕາມ, ສ່ວນທີ່ໄດ້ຮັບການປັບແຕ່ງ ຈະຫຼຸດອອກມາໄດ້ຍາກ ເມື່ອທຽບກັບວິທີການສານແບບພັນກຽວ.



ຮູບພາບ 5-2 ເຄື່ອງມືທີ່ຈຳເປັນສຳລັບການປັບແຕ່ງເຊືອກສະລິງ

ຈາກຊ້າຍໄປຂວາ: ຖົງມືເຮັດວຽກ (ຖົງມືໜັງ), ຄີມຕັດເຊືອກສະລິງ, ຄີມໜີບ, ເສັ້ນລວດນ້ອຍບາງ (ສຳລັບເຄື່ອງໝາຍ), ຄີມປາກແຫຼມ, ບີກເຟີດ(ບີກມາກເກ້), ຄ້ອນຕີ, ເຫຼັກແຫຼມ (ແບບມີຮ່ອງ), ເຫຼັກຈັດຕຳແໜ່ງສະລັກກຽວ ນອກຈາກນັ້ນ, ຈະຕຽມ ໂຕະເຮັດວຽກ, ເຄື່ອງສັ່ງນ້ຳໜັກ, ສະກັອດ ແລະ ອື່ນໆ

ວິທີການປັບແຕ່ງໂດຍການຕໍ່ເຊືອກ 2 ເສັ້ນ.

ຢູ່ໃນວິທີການປັບແຕ່ງໂດຍການຕໍ່ເຊືອກ 2 ເສັ້ນ ປະກອບມີ: ການຕໍ່ແບບຍາວ, ການຕໍ່ແບບເຄິ່ງຍາວ ແລະ ການຕໍ່ແບບສັ້ນ.

ການຕໍ່ເຊືອກແບບຍາວ ເປັນວິທີການທີ່ໃຊ້ກັບເຊືອກເສັ້ນຫຼັກ ແລະ ເຊືອກລາກ ເພາະວ່າມັນມີເສັ້ນຜ່າສູນກາງຂອງເຊືອກທີ່ຕໍ່ກັນຄືກັນກັບເຊືອກເສັ້ນເດີມ. ຄວາມແຂງແຮງຂອງເຊືອກດັ່ງກ່າວ ແມ່ນເກືອບ 90% ຂຶ້ນໄປ ຂອງເຊືອກສະລິງເສັ້ນເດີມ ແລະ ຖ້າຫາກມີການປັບແຕ່ງຢ່າງລະມັດລະວັງ ກໍຄາດຫວັງໄດ້ວ່າ ມັນຈະມີຄວາມແຂງແຮງ 95% ຂຶ້ນໄປ.

ເມື່ອປຽບທຽບ ກັບ ການຕໍ່ເຊືອກແບບເຄິ່ງຍາວ ແລະ ການຕໍ່ເຊືອກແບບສັ້ນແລ້ວ, ບ່ອນທີ່ຕໍ່ກັນຈະບໍ່ໜາ, ສະນັ້ນ ຈຶ່ງສາມາດກຳເຊືອກໃສ່ດ້າມໄດ້ຢ່າງງົດງາມ. ນອກຈາກນັ້ນ ຍັງມີກັບນຳໃຊ້ກັນຢ່າງແຜ່ຫຼາຍ ເນື່ອງຈາກວ່າສາມາດຜ່ານດ້າມ ແລະ ບັອກນຳທາງໄດ້ຢ່າງລຽບງ່າຍ.

ການຕໍ່ເຊືອກແບບສັ້ນ, ເສັ້ນຜ່າສູນກາງຂອງບ່ອນທີ່ຕໍ່ກັນຈະມີຄວາມໜາຂຶ້ນ, ດັ່ງນັ້ນ ເວລາກຳໃສ່ດ້າມ ກໍຈະເຮັດໃຫ້ເຊືອກຍຸບງ່າຍແລະ ບໍ່ເໝາະສົມໃນການໃຊ້ເປັນເຊືອກທີ່ມີການເຄື່ອນທີ່ (ເຊືອກທີ່ພັນຮອບດ້າມ ຫຼື ເຄື່ອງຜ່ານບັອກ ແບບເຊືອກທີ່ບໍ່ມີຈຸດສິ້ນສຸດ). ຢ່າງໃດກໍ່ຕາມ, ເມື່ອປຽບທຽບກັບການຕໍ່ເຊືອກແບບສັ້ນແລ້ວ ບ່ອນທີ່ຕໍ່ຈະມີຄວາມສັ້ນ ດັ່ງນັ້ນໄລຍະເວລາໃນການປັບແຕ່ງຈຶ່ງສັ້ນ, ດັ່ງນັ້ນ ຈຶ່ງຖືການນຳໃຊ້ສຳລັບເຊືອກຄົງທີ່ (ເຊືອກທີ່ຄົງໄວ້ ບໍ່ມີການເຄື່ອນທີ່ ໃນລັກສະນະແບບເຊືອກທີ່ມັດໄວ້).

ເຄື່ອງມືທີ່ຈຳເປັນສຳລັບການປັບແຕ່ງເຊືອກສະລິງ ແມ່ນ ສະແດງຢູ່ໃນຮູບ 5-2.

ການນຳໃຊ້ເຊືອກ

ປະເພດຂອງເຊືອກ

ເຊືອກ ສາມາດແບ່ງອອກແບບປະມານ ໄດ້ 3 ປະເພດ ໂດຍຂຶ້ນຢູ່ກັບວັດສະດຸຂອງເຊືອກ

① ເຊືອກປ່ານ (Manila rope)

② ເຊືອກຝ້າຍ

③ ເຊືອກໃຍສັງເຄາະ

ນອກຈາກນີ້, ເຖິງແມ່ນວ່າເຊືອກເຫຼົ່ານັ້ນ ຈະຖືກຜະລິດອອກມາດ້ວຍວັດສະດຸດຽວກັນກໍຕາມ, ຍັງສາມາດແບ່ງອອກຕື່ມໄດ້ອີກ 2 ປະເພດ ໂດຍຂຶ້ນກັບວິທີການຜະລິດ.

① ເຊືອກທີ່ປະກອບດ້ວຍກຽວ 3 ຫາ 4 ເສັ້ນ ຄ້າຍຄືກັນກັບເຊືອກຟາງ

② ເຊືອກທີ່ສານແບບເຊືອກປັນພູ

ກ່ອນຈະມີເຊືອກໃຍສັງເຄາະ, ເຊືອກປ່ານ ໄດ້ຖືກນຳມາໃຊ້ກັນຢ່າງແຜ່ຫຼາຍ ເຊິ່ງເປັນເຊືອກທີ່ມີຄວາມທົນທານຕໍ່ສະພາບອາກາດສູງ, ແຕ່ພາຍຫຼັງມີເຊືອກໃຍສັງເຄາະແລ້ວ ກໍບໍ່ຄ່ອຍມີການນຳໃຊ້ເຊືອກປ່ານປານໃດ.

ເຊືອກໃຍສັງເຄາະບາງຊະນິດ ເຊັ່ນ: ເຊືອກເຮືອ (ເຊືອກໄນລ້ອນ) ມີຄວາມທົນທານຕໍ່ຄວາມຫຼ້ຍຫ້ຽນ ແລະ ສຽດສີ ໄດ້ດີ. ເມື່ອທຽບໃສ່ ເຊືອກປ່ານ ແລະ ເຊືອກຝ້າຍແລ້ວ ມັນຈະມີຄວາມເບົາ ແລະ ຫົດຢືດກ່ອນ ທັງແຂງແຮງກ່ອນ 2 ເທົ່າ. ຢ່າງໃດກໍຕາມ ເຊືອກເຮືອ ທີ່ມີຄວາມໜາ 9 ມມ ສາມາດຮັບນ້ຳໜັກຈົນກວ່າເຊືອກຈະຂາດ ຢູ່ທີ່ 700~800 kgf ສ່ວນ ເຊືອກປ່ານ ແມ່ນ 280kgf.

ການມັດເຊືອກ

ມີເຄື່ອງມືຕ່າງໆຫຼາກຫຼາຍທີ່ໃຊ້ໃນການເຮັດວຽກຢູ່ເທິງພູ ແຕ່ເຊືອກອາດຈະເປັນເຄື່ອງມືທີ່ມີປະໂຫຍດໃນສະຖານະການຕ່າງໆ ເຊັ່ນ: ການເອົາຕົ້ນໄມ້ທີ່ລົ້ມລົງມາແລ້ວຄ້າງຢູ່ຕົ້ນໄມ້ອື່ນອອກ ແລະ ການດຶງສະໝໍເຮືອ ເປັນຕົ້ນ. ເມື່ອຮອດຄາວສຸກເສີນ ຫຼື ຕອນທີ່ຈຳເປັນຄ້ອງໄດ້ໃຊ້, ຫາກສາມາດມັດເຊືອກໄດ້ຢ່າງໄວຕາມທີ່ຕ້ອງການ ວຽກງານກໍຈະໄວຂຶ້ນ. ຈະນຳສະເໜີກ່ຽວກັບວິທີການມັດເຊືອກ 4 ວິທີ ເຊິ່ງເປັນວິທີການມັດເຊືອກທົ່ວໄປ.

ມັດປາຍເຊືອກໄວ້ກັບຕົ້ນໄມ້

ວິທີການມັດປາຍເຊືອກໄວ້ກັບຕົ້ນໄມ້. ເອີ້ນວ່າ “ການມັດແບບນ້ອດ” “ການມັດໄມ້” ຕ່າງໆເປັນຕົ້ນ (ຮູບ 5-3, ຮູບ 5-10). ຄຸນລັກສະນະຂອງວິທີການມັດແບບນີ້ ເປັນການໃຊ້ປາຍເຊືອກມັດ ເພື່ອບໍ່ໃຫ້ເໜັງ, ຫາກຈັບໃຫ້ແໜ້ນ ແລະ ອອກແຮງດຶງກໍຕາມ ເຊືອກກໍຈະບໍ່ແກ້ອອກ. ຍິ່ງໄປກວ່ານັ້ນ ທັງການມັດ ແລະ ການແກ້ມັດ ກໍຍັງງ່າຍອີກ. ຕົວຢ່າງ: ເມື່ອເກັບໄມ້ດ້ວຍເຄນທີ່ຢູ່ເທິງລົດ ອາດຈະມັດເຊືອກກັບຕົ້ນໄມ້ໄວ້ ເພື່ອບໍ່ໃຫ້ຕົ້ນໄມ້ລົ້ມ ເຊິ່ງການມັດດ້ວຍວິທີນີ້ ກໍມີປະໂຫຍດໃນກໍລະນີແບບນີ້.

ສິ່ງທີ່ຄວນຕ້ອງໄດ້ລະມັດລະວັງ ແມ່ນ ໃຫ້ເອົາເຊືອກພັນກັນຢ່າງໜ້ອຍ 5 ຄັ້ງ ແລະ ພັນຮອບລຳຕົ້ນຢ່າງໜ້ອຍເຄິ່ງຮອບເພື່ອໃຫ້ປາຍຂອດຂອງການມັດຢູ່ອີກເບື້ອງໜຶ່ງຂອງລຳຕົ້ນ.

ເຮັດຮ່ວງຢູ່ປາຍເຊືອກ

ຕໍ່ໄປນີ້ ແມ່ນ ວິທີການເຮັດຮ່ວງຢູ່ປາຍເຊືອກ “ການມັດຮ່ວງປາຍເຊືອກ” (ຮູບ 5-4, ຮູບ 5-11). ມັນມີລັກສະນະພິເສດທີ່ເຖິງຈະດຶງກໍຫຼຸດອອກຍາກ, ເຖິງຈະໃສ່ແຮງເຂົ້າໄປຕື່ມ ກໍຫຼຸດອອກງ່າຍ


ຫົວໃຈສຳຄັນຂອງການມັດຮ່ວງປາຍເຊືອກ ແມ່ນ ບໍ່ວ່າຈະດຶງມັນຫຼາຍຊ້ຳໃດ ຂະໜາດຂອງຮ່ວງກໍຈະບໍ່ປ່ຽນແປງ (ຮ່ວງບໍ່ຮັດເຂົ້າ). ດັ່ງນັ້ນ ການມັດປາຍເຊືອກຈຶ່ງມີປະໂຫຍດຕໍ່ຫຼາຍສະຖານະການ ເຊັ່ນ: ໃຊ້ສຳລັບເອົາເບ້ຍໄມ້ອອກຈາກກອງຫີມະ ແລະ ໃຊ້ສຳລັບດຶງຕົ້ນໄມ້ທີ່ລົ້ມມາ




ຮູບ 5-3



ຮູບ 5-4



ຮູບທີ 5-10 ການມັດແບບມ້ອດ (ການມັດໄມ້)



ຮູບທີ 5-11 ການມັດຮ່ວງປາຍເຊືອກ

ຄ້າງ ຕ່າງໆເປັນຕົ້ນ.

ຫາກດຶງ ຮ່ວງກໍຈະແໜ້ນເຂົ້າ.

ປະເພດທີ 3 ແມ່ນ ວິທີການມັດຮ່ວງທີ່ເຮັດໃຫ້ຮ່ວງແໜ້ນເຂົ້າເມື່ອໃຊ້ແຮງດຶງ “ມັດຮ່ວງກັບຄັກ” (ຮູບ 5-12).

ມັນມີລັກສະນະພິເສດ ເຊິ່ງເປັນເຊືອກທີ່ຄ້ອງໄວ້ຢູ່ໃນຮ່ວງທີ່ມັດດ້ວຍວິທີມັດຮ່ວງປາຍເຊືອກ. ຫາກໃຊ້ແຮງໃນຂະນະທີ່ດຶງເຊືອກທີ່ລອດຜ່ານດ້ານໃນຂອງຮ່ວງ, ເຊືອກຈະບໍ່ເຄື່ອນເໜ້ງອອກຈາກບ່ອນທີ່ມັດ. ນອກຈາກນັ້ນ, ຍິ່ງດຶງເຊືອກຫຼາຍເທົ່າໃດ, ມັນກໍຍິ່ງແໜ້ນຂຶ້ນເທົ່ານັ້ນ.


ນອກຈາກຈະໃຊ້ສຳລັບຕັດ ແລະ ແຂວນງ່າຕົ້ນໄມ້ແລ້ວ ມັນຍັງເປັນວິທີທີ່ສະດວກໃນການມັດ ເຊິ່ງສາມາດໃຊ້ໄດ້ໃນສະຖານະການອື່ນໆທີ່ຫຼາກຫຼາຍ ໂດຍໃຊ້ປະໂຫຍດຈາກຄຸນສົມບັດທີ່ມັນຈະແໜ້ນຂຶ້ນ ເມື່ອຖືກດຶງ.

ການຂົນເຄື່ອງຂຶ້ນລົດ

ສຸດທ້າຍ ແມ່ນ “ການມັດແບບລັອກກະແຈ” ເຊິ່ງມີຄຸນປະໂຫຍດໃນການບັນທຸກສິນຄ້າໃສ່ກະບະຂອງລົດບັນທຸກ. ການມັດແບບນີ້ ຈະແໜ້ນຂຶ້ນ ເມື່ອມີການໃຊ້ແຮງດຶງ 2 ເທ່າ (ຂອດທີ່ມັດ ເຮັດໜ້າທີ່ເປັນແບບລູກລໍ້ທີ່ສາມາດເຄື່ອນເໜ້ງໄດ້) ສະນັ້ນ ວິທີນີ້ ຈຶ່ງເປັນວິທີໃນການມັດວັດສະດຸທົ່ວໄປທີ່ສາມາດມັດໄດ້ແໜ້ນຂຶ້ນໄດ້ເມື່ອໃຊ້ແຮງຫຼາຍຂຶ້ນ.

ຂັ້ນຕອນການມັດ ແມ່ນ ສະແດງໄວ້ຢູ່ໃນແຜນວາດດ້ານລຸ່ມນີ້ ແລະ ຈຸດສຳຄັນ ແມ່ນ ຂັ້ນຕອນ ⑤ ໃນຮູບ 5-13. ພັບປາຍເຊືອກກັບມາເປັນຮູບຮ່ວງ ແລ້ວເອົາຕົນສອດເຂົ້າໄປ ແລະ ວາງນ້ຳໜັກລົງເຊືອກ ເຊືອກກໍຈະແໜ້ນຂຶ້ນ. ການໃຊ້ນ້ຳໜັກຂອງຮ່າງກາຍຈະເຮັດໃຫ້ເຊືອກແໜ້ນກວ່າ ແລະ ແຂງແຮງກວ່າການໃຊ້ແຂນດຶງ. ຢ່າງໃດກໍຕາມ ຈຳເປັນຕ້ອງໄດ້ເອົາໃຈໃສ່ ບໍ່ໃຫ້ເຊືອກແໜ້ນເກີນໄປ ເພາະມັນຈະເຮັດໃຫ້ຂໍເກາະວັດສະດຸງໍໄດ້.


ດັ່ງທີ່ສະແດງຢູ່ໃນຮູບທີ 5-13, ⑥, ມັດປາຍເຊືອກໃຫ້ເຄັ່ງເຂົ້າກັບຂໍ ແລ້ວຢຶດມັນໃຫ້ແໜ້ນ. ການຂອດເຊືອກໃນເວລານີ້ ບໍ່ໄດ້ຈຳກັດຢູ່ພຽງແຕ່ຕົວຢ່າງທີ່ສະແດງໃນແຜນວາດ ແຕ່ສາມາດດຳເນີນວິທີການມັດແບບໃດກໍໄດ້ ຕາບໃດທີ່ມັນບໍ່ຫຼົມ.



ຮູບທີ 5-12 ການມັດແບບເຮັດຮ່ວງຢູ່ປາຍ ເຊືອກແບບໃຊ້ເຊືອກສອດຜ່ານ



ຮູບ 5-5 ການມັດແບບກະແຈລ້ອກ ກ່ອນດຳເນີນຂັ້ນຕອນໃນຮູບ 5-13



ຮູບທີ 5-13 ການມັດແບບກະແຈລ້ອກ

ແຂວນປາຍເຊືອກດ້ານໜຶ່ງໄວ້ເທິງຂໍເກາະທີ່ໃຊ້ເປັນແທ່ນໃນການບັນທຸກ ແລ້ວສົ່ງເຊືອກໄປອີກດ້ານໜຶ່ງຂອງແທ່ນບັນທຸກ. ຫຼັງຈາກນັ້ນ, ແຂວນຮ່ວງເຊືອກທີ່ເຮັດຕາມລຳດັບທີ່ສະແດງຢູ່ໃນຮູບ ① ຫາ ④ ໃສ່ຂໍເກາະຂອງແທ່ນບັນທຸກ (ຮູບ ⑤), ພັບປາຍກັບຄືນໄປ, ເອົາຕີນສອດໃສ່, ຈັບສ່ວນທີ່ມີເຄື່ອງຫມາຍ ◯ ດ້ວຍມື ແລ້ວມັດເຊືອກໃຫ້ແໜ້ນໂດຍການໃຊ້ນ້ຳໜັກຮ່າງກາຍຕົນເອງ. ມັນສາມາດເຮັດໃຫ້ແໜ້ນໄດ້ຕື່ມໂດຍການອອກກຳລັງແຮງ 2 ເທົ່າ. ຮູບທີ 6 ເປັນຮູບໄລຍະໃກ້ຂອງພາກສ່ວນຂໍເກາະ ເຊິ່ງເປັນຕົວຢ່າງທີ່ມີການຖືງອຸປະກອນດ້ວຍປາຍເຊືອກ.

ການບຳລຸງຮັກສາ ເຄື່ອງມື, ອຸປະກອນ ແລະ ອື່ນໆ

ການນຳໃຊ້ເຄື່ອງມືຊ່າງ

ໃນການປະຕິບັດວຽກງານຢູ່ເທິງພູ ມັກຈະໃຊ້ເຄື່ອງມືຊ່າງ ເຊັ່ນ: ເລື່ອຍ, ກ່ຽວ, ສຽມ ແລະ ພ້າ. ນອກຈາກນັ້ນ, ເຄື່ອງທີ່ໃຊ້ເປັນປະຈຳທີ່ສຸດ ແມ່ນ ເຄື່ອງຕັດຫຍ້າ ແລະ ຈັກເລື່ອຍໄມ້. ເຊິ່ງຈະເວົ້າເຖິງ ເຄື່ອງຕັດຫຍ້າ ໃນສ່ວນການຕັດຫຍ້າ ແລະ ເວົ້າເຖິງຈັກເລື່ອຍໄມ້ ໃນສ່ວນຂອງການຕັດໄມ້, ສ່ວນໃນນີ້ ມາເວົ້າເຖິງ ເຄື່ອງມືຊ່າງກັບເທາະ.

ສຳລັບເຄື່ອງມືຊ່າງ ມັນເປັນສິ່ງສຳຄັນທີ່ຕ້ອງເລືອກເຄື່ອງມືຊ່າງທີ່ເໝາະສົມ ແລະ ໃຊ້ງານຢ່າງເໝາະສົມ. ນີ້ ເປັນສິ່ງຈຳເປັນບໍ່ພຽງແຕ່ເພື່ອຄວາມປອດໄພໃນການເຮັດວຽກເທົ່ານັ້ນ ແຕ່ຍັງເພື່ອປັບປຸງປະສິດທິພາບໃນການເຮັດວຽກນຳອີກດ້ວຍ.

ເຄື່ອງມືຊ່າງ ໄດ້ຖືກນຳໃຊ້ເປັນເຄື່ອງມືໃນການເຮັດວຽກ ນັບຕັ້ງແຕ່ຈຸດເລີ່ມຕົ້ນຂອງການອອກແຮງງານຂອງມະນຸດ ເພື່ອຊ່ວຍເຫຼືອແຂນຂາ ແລະ ເພີ່ມກຳລັງແຮງໃນການເຮັດວຽກ. ອາດກ່າວໄດ້ວ່າເຄື່ອງມືຊ່າງຈຳນວນຫຼາຍໄດ້ຮັບການປັບປຸງໃຫ້ເປັນຮູບແບບປັດຈຸບັນ ຜ່ານປະສົບການ ແລະ ການປັບແຕ່ງໃນໄລຍະຍາວນານຂອງຜູ້ໃຊ້ງານ.

ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ໃຊ້ເຄື່ອງມືຊ່າງທີ່ເໝາະສົມກັບວຽກ ແລະ ເໝາະສົມກັບສະລີລະ ແລະ ຄວາມແຂງແຮງຂອງຮ່າງກາຍຜູ້ປະຕິບັດວຽກງານ ແລະ ເລືອກເຄື່ອງມືທີ່ມີຄວາມຄົມ ລັບງ່າຍ ແລະ ທົນທານ. ຫາກຄົບ 3 ຢ່າງນີ້ ແລະ ຜູ້ປະຕິບັດວຽກງານສາມາດປະຕິບັດວຽກງານໄດ້ຢ່າງເໝາະສົມ, ວຽກກໍຈະເມື່ອຍໜ້ອຍລົງ ປອດໄພ ແລະ ມີປະສິດທິພາບຫຼາຍຂຶ້ນ.

ການບຳລຸງຮັກສາ ແລະ ການເກັບຮັກສາເຄື່ອງມືຊ່າງ

ມັນເປັນສິ່ງສຳຄັນທີ່ຈະຕ້ອງກວດກາເຄື່ອງມືຊ່າງຢ່າງລະມັດລະວັງກ່ອນທີ່ຈະເລີ່ມເຮັດວຽກ ແລະ ສ້ອມແປງບ່ອນທີ່ບົກຜ່ອງ ກ່ອນທີ່ຈະນຳໃຊ້ມັນ (ຕາຕະລາງ 5-2). ໂດຍສະເພາະຢ່າງຍິ່ງ ແມ່ນ ກວດກາເຄື່ອງມືດ້ວຍມືຢ່າງລະມັດລະວັງເພື່ອຊອກຫາບ່ອນຈັບທີ່ແຕກແຫວ, ຕະປູທີ່ຫຼຸດອອກ ແລະ ໂຄລັອກຫຼຸດ ຫຼື ຢູ່ໃນສະພາບທີ່ບໍ່ຊື່, ເຊິ່ງຕ້ອງກວດກາໃຫ້ແນ່ໃຈວ່າເຄື່ອງມືເຫຼົ່ານັ້ນປອດໄພ ກ່ອນການນຳໃຊ້ມັນ. ອີກທັງຍັງຈຳເປັນຕ້ອງໄດ້ກວດກາຢ່າງລະອຽດເມື່ອແລ້ວວຽກ ແລະ ສ້ອມແປງທັນທີຫາກພົບເຫັນຄວາມຜິດປົກກະຕິ.

ການເກັບຮັກສາເຄື່ອງມືຊ່າງຢູ່ສະຖານທີ່ທີ່ກຳນົດ. ການຈັດເກັບເຄື່ອງມືທີ່ໃຊ້ໃນວຽກງານການຕັດ ໂດຍໃຊ້ປອກ ຫຼື ຝາປິດ ແມ່ນ ຈະມີຄວາມປອດໄພ.

ວິທີການລັບຄົມມີດ

ໃນການລັບຄົມມີດ ແມ່ນ ຈຳເປັນຕ້ອງໃຊ້ຫີນລັບຄົມ. ໃນປັດຈຸບັນ ຄົນສ່ວນຫຼາຍນຳໃຊ້ຫີນລັບມີດທຽມ ເຊິ່ງມີຫຼາຍປະເພດ. ສິ່ງສຳຄັນ ແມ່ນ ຈະຕ້ອງໃຊ້ຫີນລັບທີ່ກົງກັບຄວາມແຂງຂອງໃບມີດ, ມີດທີ່ແຂງຄວນລັບດ້ວຍຫີນລັບແບບອ່ອນ ແລະ ມີດທີ່ອ່ອນ ຄວນລັບດ້ວຍຫີນລັບທີ່ແຂງ. ນອກຈາກນີ້, ຍັງມີການໃຊ້ຫີນລັບແບບຊາ ເພື່ອແກ້ໄຂຮູບຮ່າງຂອງໃບມີດ ເຊິ່ງເປັນມີດທີ່ບິ່ນ.

ວິທີການລັບມີດໂດຍໃຊ້ຫີນລັບ ແມ່ນ ປະກອບມີ 2 ວິທີ (ຮູບ 5-14, ຮູບ 5-15).

· ຖືຫີນໄວ້ ແລ້ວເອົາມີດລັບ

· ຖືມີດໄວ້ ແລ້ວໃຊ້ຫີນລັບ.

ຈະໃຊ້ວິທີການໃດນັ້ນ ແມ່ນ ຂຶ້ນກັບສະພາບຂອງສະໜາມວຽກ ແລະ ຮູບຊົງຂອງໃບມີດ, ແຕ່ຢ່າງໃດກໍຕາມ ການມີທ່າທາງທີ່ຖືກຕ້ອງ ແລະ ການໃຊ້ຫີນລັບທີ່ເຂົ້າກັບໃບມີດຖືວ່າເປັນສິ່ງສຳຄັນ ຕົວຢ່າງ: ບໍ່ຄວນລັບຄົມໃນຂະນະທີ່ຢືນ ແລະ ຖືກ່ຽວດ້ວຍມືເບື້ອງດຽວ ແລະ ມືອີກເບື້ອງໜຶ່ງຈັບຫີນລັບຢູ່, ເພາະວ່າມັນບໍ່ພຽງແຕ່ຈະສົ່ງຜົນໃຫ້ເກີດການລັບຄົມທີ່ບໍ່ຖືກຕ້ອງເທົ່ານັ້ນ ແຕ່ ຍັງເປັນອັນຕະລາຍຢ່າງຍິ່ງອີກດ້ວຍ.

ຕໍ່ໄປນີ້ ເປັນ ໝາຍເຫດທົ່ວໄປກ່ຽວກັບວິທີການລັບມີດດ້ວຍຫີນລັບ.

① ໃນເວລາຖືຫີນລັບ ໃຫ້ກຳນົດຄວາມສູງ ແລະ ຕຳແໜ່ງຕາມສະພາບແວດລ້ອມອ້ອມໂຕ ເພື່ອຈະໄດ້ລັບໃນທ່າທາງທີ່ຖືກຕ້ອງ.

② ໃນເວລາຖືມີດ ສິ່ງສຳຄັນ ແມ່ນ ຕ້ອງໃຊ້ແຮງຖືມີດ ເພື່ອຖືມີດໃຫ້ແໜ້ນໃນຂະນະລັບມີດ

ຕາຕະລາງ 5-2 ຈຸດກວດກາສຳລັບເຄື່ອງມືຊ່າງ

ຊື່ເຄື່ອງມື	ລາຍການກວດກາ	ຈຸດກວດກາ
ຜ້າ ກ່ຽວ	ສະພາບຂອງດ້ານຈັບ	ມີຮອຍແຕກ ຫຼື ຄວາມເສຍຫາຍຫຼາຍເກີນໄປບໍ
	ການກວດກາກ່ຽວກັບ ປອກ (ໂກບ).	ມີຮອຍແຕກ ຫຼື ຮອຍຈີກຂາດ ຢູ່ປອກຫຸ້ມຫຼືບໍ່? ອຸປະກອນທີ່ໃຊ້ຫ້ອຍ ເຊັ່ນ: ເຊືອກ ແລະ ຂໍເກາະ ຫຼົມ ຫຼື ເສຍຫາຍບໍ່?
	ສະພາບເຫຼັກໝຸດ	ເປັນໝ້ຽງ ຫຼື ມີຮອຍແຕກບໍ່. ຫຼຸດອອກບໍ່. ກວດກາເບິ່ງວ່າໃບມີດທີ່ຢູ່ສ່ວນເຫຼັກໝຸດ ຫຼົມ ຫຼື ບໍ່ ໂດຍການຈັບເບິ່ງບ່ອນຫຼັກໝຸດ
	ສະພາບໃບມີດ	ແຜ່ນໃບມີດ ແຕກ, ແຫ່ງ, ຫຼື ງໍ ບໍ່? ມີຮອຍແຕກແຫ່ງຢູ່ໃບມີດບໍ່ (ໃກ້ໂກບ)
ເລື່ອຍ	ສ່ວນທີ່ຕິດໃບມີດ	ກໍລະນີເປັນແບບປ່ຽນໄດ້, ຕະປູບໍ່ຫຼົມບໍ.
	ສະພາບໃບມີດ	ມີຄາບເຫຼືອງ ຫຼື ສິ່ງເປິເປື້ອນບໍ່. ມີຮອຍຊູດຂີດ, ຮອຍແຕກ ຫຼື ໂຄ້ງງໍ ບໍ່
	ການກວດກາປອກ	ມີຮອຍແຕກ ຫຼື ຮອຍຈີກຂາດ ຢູ່ປອກຫຸ້ມຫຼືບໍ່? ອຸປະກອນທີ່ໃຊ້ຫ້ອຍ ເຊັ່ນ: ເຊືອກ ແລະ ຂໍເກາະ ຫຼົມ ຫຼື ເສຍຫາຍບໍ່?
ໝາກຈົກ	ສະພາບໃບມີດ	ດ້ານຈັບຫຼົມບໍ່ (ບ່ອນຍຶດດ້ານຈັບ), ກໍລະນີຕອກລິ້ມໃສ່ ໃຫ້ກວດກາວ່າລິ້ມຫຼົມບໍ່ ແຜ່ນໃບມີດ ມີ ຮອຍບິ່ນ ຫຼື ແຕກບໍ່? ລ້າງຂີ້ຕົມອອກພາຍຫຼັງນຳໃຊ້
	ສະພາບຂອງດ້ານຈັບ	ມີຮອຍແຕກ ຫຼື ຄວາມເສຍຫາຍຫຼາຍເກີນໄປບໍ
ໝາກຈົກ (ແບບແຫຼມ ຄືເລັບນົກ)	ສະພາບໃບມີດ	ດ້ານຈັບຫຼົມບໍ່ (ບ່ອນຍຶດດ້ານຈັບ), ກໍລະນີຕອກລິ້ມໃສ່ ໃຫ້ກວດກາວ່າລິ້ມຫຼົມບໍ່ ມີຮອຍບິ່ນ ຫຼື ຮອຍແຕກຢູ່ປາຍບໍ່ ປາຍໂຄ້ງບໍ່
	ສະພາບຂອງດ້ານຈັບ	ມີຮອຍແຕກ ຫຼື ຄວາມເສຍຫາຍຫຼາຍເກີນໄປບໍ
(ອື່ນໆ) ຊວ້ານ		ຫຼັງຈາກການນຳໃຊ້ແລ້ວ ໃຫ້ລ້າງຂີ້ຕົມອອກ, ເຊັດໃຫ້ແຫ້ງ ແລະ ເກັບຮັກສາໄວ້ຢູ່ບ່ອນທີ່ບໍ່ຖືກແສງແດດ.

ສ້າງໂດຍພະແນກບັນນາທິການ

③ ໃນກໍລະນີລັບດ້ວຍຫີນ ຫາກຫີນຫ້ຽນລົງ ແລະ ມີຂະໜາດນ້ອຍລົງ ຫີນລັບອາດຈະຫຼຸດອອກຈາກມີດ ແລ້ວນິ້ວມືຂອງຜູ້ລັບອາດຈະສຳຜັດກັບມີດ ເຮັດໃຫ້ເກີດການບາດເຈັບໄດ້. ມາຫຼີກລ່ຽງການນຳໃຊ້ຫີນທີ່ມີລັກສະນະແບບນີ້ກັນເທາະ.


④ ຈຳເປັນຕ້ອງໄດ້ວາງຫີນລັບໄວ້ເທິງໃບມີດຢ່າງແໜ້ນ. ກວດກາໃຫ້ແນ່ໃຈວ່າ ໄດ້ຖືມັນໄວ້ຢ່າງປອດໄພ ແລ້ວລອງໃຊ້ຫີນລັບມີດທີ່ມີດ້ານຈັບ.

⑤ ໃນຂະນະທີ່ລັບໃບມີດ ບໍ່ໃຫ້ເບິ່ງໄປທາງອື່ນ ຫຼື ເວົ້າລົມກັນ ເພາະຈະເຮັດໃຫ້ລະເລີຍມືຂອງຕົນເອງ.



ຮູບ 5-14 ເມື່ອລັບ ກ່ຽວ ດ້ວຍ ຫີນລັບແບບພົກພາ

ກໍລະນີ ປິ່ນມີດໄປທິດທາງກົງກັນຂ້າມກັບຜູ້ລັບຄົມ ແມ່ນ ໃຫ້ວ່າງນິ້ວຊີ້ຂອງຕົນເອງໃຫ້ແໜ້ນຕາມແນວດ້ານເທິງຂອງ ຫີນລັບໃບມີດ ແລ້ວໃຫ້ລັບຄົມໄປພ້ອມໆກັບການລະມັດລະວັງບໍ່ໃຫ້ເອົານິ້ວມືທີ່ເຫຼືອໄປວາງຢູ່ກ້ອງພື້ນຜິວທີ່ຈະລັບ ຄົມ. ກໍລະນີປິ່ນມີດເຂົ້າຫາຕົນເອງ, ໃຫ້ໃຊ້ນິ້ວນາງ ແລະ ນິ້ວກ້ອຍເປັນໂຕກັ້ນ ເມື່ອເຮົາດຶງຫີນລັບມີດໃຫ້ຢຸດຢູ່ດ້ານ ຫຼັງຂອງໃບມີດ.



ຮູບທີ 5-15 ເມື່ອລັບຟ້າດ້ວຍຫີນລັບມີດແບບພົກພາ

ສິ່ງສຳຄັນ ແມ່ນ ຕ້ອງວາງປາຍມີດໄວ້ເທິງຂາຕັ້ງ, ໃຊ້ຂາ ຫຼື ຫົວເຂົ່າຄ້ຳດ້ານຈັບໃຫ້ແໜ້ນ ແລ້ວໃຊ້ມືເບື້ອງຊ້າຍກົດດ້ານ ຫຼັງຂອງໃບມີດ. ກໍລະນີບໍ່ມີໂຕະລັບຄົມ ແມ່ນໃຫ້ໃຊ້ງ່າໄມ້ ຕ່າງໆເພື່ອຄ້ຳໃຫ້ແໜ້ນ ດັ່ງທີ່ສະແດງໃນຮູບ.

* ວິທີການຂັ້ນພື້ນຖານຂອງການລັບຄົມ ແມ່ນ ວິທີການຄ້ຳຫີນລັບໄວ້ ແລ້ວລັບຄົມ. ໃນອີກດ້ານຫນຶ່ງ, ໃນເວລາທີ່ດຳ ເນີນການລັບຄົມຢູ່ເທິງພູ, ຈະເປັນ ວິທີການຄ້ຳມີດໄວ້ ແລ້ວເຄື່ອນເໜັງຫີນເພື່ອລັບຄົມ.

III
ການຄຸ້ມຄອງ ແລະ ຮັກສາປ່າໄມ້

ການປູກປ່າ

No.06 ປະເພດແລະຈຸດປະສົງຂອງວຽກງານການປູກປ່າ

No.07 ວຽກງານການປູກປ່າທີ່ປອດໄພ

ການຮັກສາປ່າໄມ້

No.08 ປະເພດແລະຈຸດປະສົງຂອງການຮັກສາປ່າໄມ້

No.09 ວຽກງານການຮັກສາປ່າໄມ້ທີ່ປອດໄພ

ການປູກປ່າ

No.06 ປະເພດແລະຈຸດປະສົງຂອງວຽກງານການປູກປ່າ

ດປະສົງ ຂອງການບັນລະຍາຍ

ຮຽນຮູ້ຄວາມຮູ້, ເຕັກນິກ ແລະ ທັກສະທີ່ຈຳເປັນໃນວຽກງານການປູກປ່າ ແລະ ຮຽນຮູ້ພື້ນຖານຂອງການປະຕິບັດວຽກງານການປູກປ່າຢ່າງຖືກຕ້ອງ.


ຄຳສຳຄັນ

ການກະກຽມໜ້າດິນ, ການປູກເບ້ຍໄມ້, ທົ່ງເບ້ຍໄມ້, ເບ້ຍເປົ່າ, ເບ້ຍຖາດ, ເບ້ຍປັກຊຳ, ເບ້ຍໄມ້ຈາກແກ່ນ, ການປູກໄມ້, ການປູກປ່າ, ປ່າທີ່ປູກຂຶ້ນ, ປ່າໄມ້ທຳມະຊາດ, ສັດປ່າ, ພະຍາດ, ສັດຕູພືດປ່າໄມ້, ຄວາມເສຍຫາຍຂອງປ່າໄມ້

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

<ຕ້ອງໄດ້ຮຽນຮູ້ກ່ຽວກັບບົດບາດ ແລະ ຄວາມສຳຄັນ ຂອງ ການປູກປ່າທີ່ນອນຢູ່ໃນວຽກງານການປ່າໄມ້, ພື້ນຖານການກະກຽມໜ້າດິນ, ພື້ນຖານການປູກ ແລະ ການປົກປັກຮັກສາປ່າໄມ້ໃນພື້ນທີ່ປູກປ່າ>

- ສະພາບການເຮັດວຽກ ມີຄວາມຫຼາກຫຼາຍ ແລະ ມີການປ່ຽນແປງຢ່າງຕໍ່ເນື່ອງ.
- ຈະຕ້ອງໄດ້ປະຕິບັດວຽກງານໃນຂະນະທີ່ຢ່າງຢູ່ພື້ນທີ່ທີ່ມີຄວາມລາດຊັນ.
- ໃນພື້ນທີ່ເຮັດວຽກ ມີອຸປະສັກຫຼວງຫຼາຍ
- ມີໂອກາດຫຼາຍຄັ້ງໃນການສຳຜັດກັບສັດ ຫຼື ພືດທີ່ເປັນອັນຕະລາຍ
- ຕ້ອງໄດ້ປະຕິບັດວຽກງານຢູ່ກາງແຈ້ງ
- ສະຖານທີ່ເຮັດວຽກ ແມ່ນ ຢູ່ໃນພູຜາປ່າໄມ້ ເຊິ່ງຫ່າງຈາກຕົວເມືອງ
- ເປັນວຽກທີ່ຕ້ອງໄດ້ໃຊ້ໃບມີດເປັນປະຈຳ



ຮູບທີ 6-1 ປ່າທີ່ປູກຂຶ້ນ ແລະ ປ່າທຳມະຊາດ

ເມື່ອເບິ່ງພູເຂົາຈາກໄລຍະໄກ, ຈະເຫັນວ່າປ່າຕົ້ນແປກທີ່ປູກຂຶ້ນ ມີຍອດໄມ້ທີ່ແຫຼມຄົມ. ຕົ້ນໄມ້ໃບກວ້າງ(ຕົ້ນໄມ້ເນື້ອແຂງ) ມີລັກສະນະເປັນພຸ່ມ. ປ່າທີ່ປູກຂຶ້ນ ເລີ່ມແຜ່ຂະຫຍາຍຈາກພື້ນທີ່ທີ່ໃກ້ກັບໝູ່ບ້ານ ແລະ ພື້ນທີ່ທີ່ມີຄວາມລາດຊັນເລັກໜ້ອຍ.

ບົດບາດ ແລະ ຄວາມສຳຄັນຂອງການປູກປ່າໃນດ້ານປ່າໄມ້

ພາລະບົດບາດຂອງການປູກປ່າໃນການສ້າງປ່າໄມ້

ການປູກປ່າ ແມ່ນ ຂະບວນການສ້າງ ແລະ ປູກປ່າ ໂດຍການປູກເບ້ຍໄມ້ຊະນິດທີ່ມີປະໂຫຍດ ໃສ່ບ່ອນຕັດໄມ້ ຫຼື ພື້ນທີ່ວ່າງເປົ່າທີ່ບໍ່ມີຕົ້ນໄມ້ ແລະ ບາງຄັ້ງກໍໝາຍເຖິງການສ້າງ ແລະ ບຳລຸງຮັກສາປ່າໄມ້ ໂດຍການນຳໃຊ້ໜໍ່ຈາກຕໍໄມ້ ຫຼື ເມັດພືດທີ່ຫຼົ່ນຕາມທຳມະຊາດ. ພື້ນຖານດັ່ງກ່າວນີ້ ແມ່ນ ແນວຄວາມຄິດຂອງການສ້າງປ່າ. ລອງຄິດເບິ່ງວ່າ ຢາກມີປ່າປະເພດໃດແດ່ຕາມເປົ້າໝາຍ ແລະ ຕ້ອງການຮູບແບບປ່າໄມ້ປະເພດໃດ (ເບິ່ງຮູບ 6-1 ສຳລັບຕົວຢ່າງຂອງການຈັດວາງປ່າທີ່ປູກຂຶ້ນ ແລະ ປ່າທຳມະຊາດ), ແລ້ວໃຫ້ສ້າງແຜນໃນການປະຕິບັດ ຫຼື ການຄຸ້ມຄອງທີ່ຈຳເປັນ ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ ແລະ ນຳໄປປະຕິບັດໄປພ້ອມໆກັບການຄົ້ນຄິວທີການ ໃນ ການປະຍຸກດັດແປງແຜນການດັ່ງກ່າວ.

ການປູກປ່າ ຕ້ອງໃຊ້ເວລາດົນ, ດັ່ງນັ້ນ ຫາກເຮັດຜິດພາດຄັ້ງໃຫຍ່ ກໍຈະແກ້ໄຂຍາກ. ການປູກປ່າ ຈຳເປັນຕ້ອງໃຊ້ຄວາມຮູ້ທີ່ອຸດົມສົມບູນ ແລະ ການຕັດສິນທີ່ຮອບຄອບ. ຈະຕ້ອງໄດ້ຮຽນຮູ້ກ່ຽວກັບເລື່ອງລາວຕ່າງໆໃນອະດີດຢ່າງຖີ່ຖ້ວນ ແລະ ວາງແຜນປະຕິບັດມັນໃຫ້ດີຂຶ້ນເພື່ອອະນາຄົດ.

ການປູກປ່າ ແມ່ນ ວຽກງານແບບໃດ

ວຽກງານປ່າໄມ້ ແມ່ນ ເລີ່ມຈາກການກະກຽມໜ້າດິນ ລວມທັງມີວຽກງານຕ່າງໆ ເຊັ່ນ: ການກ້າເບ້ຍ, ການຕັດຫຍ້າ, ການຕັດແຕ່ງງ່າໄມ້ ແລະ ການຕັດຕອນ(ການຕັດເພື່ອຂະຫຍາຍໄລຍະ). ໃນນີ້, ຈະອະທິບາຍກ່ຽວກັບການກະກຽມໜ້າດິນ ແລະ ການກ້າເບ້ຍ ເຊິ່ງເປັນສ່ວນໜຶ່ງຂອງວຽກງານການປູກຕົ້ນໄມ້.

ການສ້າງປ່າ ປະກອບມີ 2 ວິທີ ຄື: ປ່າທີ່ປູກຂຶ້ນ ແລະ ປ່າທຳມະຊາດ.

ການສ້າງປ່າ ① ການດຳເນີນການປູກປ່າ

(1) ເປັນຫຍັງຕ້ອງໄດ້ດຳເນີນການປູກປ່າ

ພາຍໃຕ້ສະພາບແວດລ້ອມທຳມະຊາດ ການຈະເລີນເຕີບໂຕຂອງພັນໄມ້ສ່ວນຫຼາຍຈະໄດ້ຮັບຜົນກະທົບຈາກສະພາບແວດລ້ອມ ແລະ ການແຂ່ງຂັນກັນເອງລະຫວ່າງຕົ້ນໄມ້. ສະນັ້ນ, ເພື່ອເປັນການສ້າງປ່າໄມ້ໃຫ້ແທດເໝາະກັບຈຸດປະສົງການນຳໃຊ້, ຈຶ່ງໄດ້ມີ “ການດຳເນີນການປູກປ່າ” ທີ່ກ່ຽວຂ້ອງກັບການປູກ ແລະ ຄຸ້ມຄອງພັນໄມ້ທີ່ແທດເໝາະກັບຈຸດປະສົງໃນພື້ນທີ່ທີ່ເໝາະສົມທີ່ສຸດ. ນອກຈາກນັ້ນ, ການປູກປ່າ ຍັງມີຂໍ້ໄດ້ປຽບໃນການເລືອກພັນ ແລະ ສາຍພັນທີ່ດີກວ່າ, ເຊິ່ງສາມາດປົ່ງອອກມາໄດ້ຢ່າງວ່ອງໄວ ແລະ ມີປະສິດທິພາບ.

(2) ຈະເກີດຫຍັງຂຶ້ນ ຫາກມີການລະເລີຍວຽກງານທີ່ສຳຄັນ ໃນລະຫວ່າງວຽກງານການປູກປ່າ

ປ່າທີ່ປູກຂຶ້ນ ສ່ວນຫຼາຍ ແມ່ນ ປູກຕົ້ນໄມ້ຊະນິດດຽວກັນໃນເວລາດຽວກັນ. ຫາກປ່າທີ່ປູກຂຶ້ນເລີ່ມໜາແໜ້ນ ແລະ ບໍ່ໄດ້ຖືກເຮັດໃຫ້ບາງລົງ(ຕັດຕອນ) ມັນກໍຈະມີລັກສະນະເປັນຕົ້ນໄມ້ທີ່ຈ່ອຍ ແລະ ຍາວ ພ້ອມທັງມີຄວາມສ່ຽງທີ່ຈະລົ້ມລົງຍ້ອນລົມ ແລະ ຫິມະ ຕ່າງໆເປັນຕົ້ນ. ນອກຈາກນັ້ນ, ຫາກຍອດພຸ່ມໄມ້ທີ່ມີຄວາມສູງຊ່ຳກັນຍັງຄົງມີຄວາມໜາແໜ້ນ ແລະ ບໍ່ມີການຕັດຕອນໃຫ້ບາງ ຫຼື ຕັດແຕ່ງງ່າໄມ້ ປ່າກໍຈະມືດລົງ ແລະ ພືດຕ່າງໆທີ່ຢູ່ພື້ນດິນຂອງປ່າກໍຈະໜ້ອຍລົງ. ເມື່ອພືດຕ່າງໆທີ່ຢູ່ພື້ນດິນໜ້ອຍລົງ ກໍຈະເຮັດໃຫ້ພື້ນດິນໄດ້ຮັບຜົນກະທົບໂດຍກົງຈາກນ້ຳຝົນ ເຊິ່ງເຮັດໃຫ້ພື້ນດິນຊັ້ນເທິງຖືກສະລ້າງອອກໄປໄດ້ງ່າຍ.

ຫາກລະເລີຍທີ່ຈະດຳເນີນການຕາມຂັ້ນຕອນການບຳລຸງຮັກສາຕ່າງໆສຳລັບປ່າທີ່ປູກຂຶ້ນ ກໍຈະບໍ່ສາມາດປູກປ່າໃຫ້ເປັນພື້ນທີ່ທີ່ແຂງແຮງສົມບູນໄດ້ ແລະ ຈະບໍ່ສາມາດບັນລຸເປົ້າໝາຍຂອງການຜະລິດປ່າໄມ້ໃຫ້ໄດ້ຕາມເປົ້າໝາຍ.

ການສ້າງປ່າ ② ການດຳເນີນວຽກງານປ່າໄມ້ທຳມະຊາດ

(1) ເປັນຫຍັງຈຶ່ງດຳເນີນວຽກງານປ່າໄມ້ທຳມະຊາດ

ປ່າທຳມະຊາດເປັນສິ່ງທີ່ຂາດບໍ່ໄດ້ໃນການເປັນແຫຼ່ງເພາະພັນ ນິເ ແລະ ສັດປ່າ ຕ່າງໆ ທັງຍັງເປັນທີ່ອາໄສຂອງໃບໄມ້ປ່ຽນສີໃນລະດູໃບໄມ້ຫຼົ່ນນຳອີກດ້ວຍ. ແນວໃດກໍຕາມ, ໃນຖານະທີ່ມັນເປັນຊັບພະຍາກອນປ່າໄມ້, ມັນກໍມີຕົ້ນໄມ້ຫຼາຍປະເພດທີ່ເຕີບໃຫຍ່ຕາມທຳມະຊາດ ແລະ ບາງຊະນິດກໍບໍ່ມີປະໂຫຍດ ຫຼື ມີຮູບຮ່າງບໍ່ດີ. “ການຄຸ້ມຄອງປ່າໄມ້ທຳມະຊາດ” ບໍ່ແມ່ນພຽງແຕ່ປ່ອຍໃຫ້ໄປເປັນຕາມພະລັງຂອງທຳມະຊາດ ແຕ່ຍັງເປັນການປັບປຸງຄຸນນະພາບຂອງປ່າ ດ້ວຍການປັບປຸງຄຸນນະພາບຂອງປ່າໃຫ້ສູງຂຶ້ນ. ບໍ່ພຽງແຕ່ຊ່ວຍໃຫ້ສາມາດສ້າງປ່າທີ່ປະກອບດ້ວຍຕົ້ນໄມ້ທີ່ຫຼາກຫຼາຍສາຍພັນເທົ່ານັ້ນ ແຕ່ຍັງມີຂໍ້ດີທີ່ຊ່ວຍໃຫ້ບໍ່ໃຫ້ຫຍຸ້ງຍາກໃນວຽກງານການປູກເບ້ຍໄມ້ ແລະ ຕັດຫຍ້ານຳອີກດ້ວຍ.

(2) ຈະເກີດຫຍັງຂຶ້ນ ຫາກວຽກທີ່ຈຳເປັນ ຖືກລະເລີຍໃນລະຫວ່າງການດຳເນີນການກ່ຽວກັບວຽກງານປ່າໄມ້ທຳມະຊາດ

ຫາກບໍ່ດຳເນີນການຕໍ່ອາຍຸ ອາດຈະເຮັດໃຫ້ຕົ້ນເບ້ຍເກີດບໍ່ພຽງພໍ. ກໍລະນີທີ່ບໍ່ສາມາດຫາສາຍພັນຕົ້ນໄມ້ທີ່ຈຳເປັນໄດ້ຢ່າງພຽງພໍສຳລັບການສ້າງປ່າທີ່ເປັນປະໂຫຍດໃນອະນາຄົດ ມັນອາດຈະເປັນການດີໃນການປູກເບ້ຍໄມ້ຂອງສາຍພັນຕົ້ນໄມ້ທີ່ເປັນປະໂຫຍດ. ນອກຈາກນີ້ ຫາກມີການລະເລີຍວຽກງານການດູແລ, ຕົ້ນໄມ້ທີ່ເລີ່ມເຕີບໃຫຍ່ອາດຈະແຫ່ວຍ້ອນແຮງດັນ, ສູນເສຍຮູບຮ່າງ ຫຼື ໄດ້ຮັບຄວາມເສຍຫາຍຍ້ອນຖືກເຄືອໄມ້ພັນກ້ຽວ.

ເພື່ອທີ່ຈະປູກຕົ້ນໄມ້ໃຫ້ໄດ້ຕາມທີ່ຄາດຫວັງວ່າຈະໄດ້ຜົນຜະລິດຈຳນວນຫຼາຍ ຈຳເປັນຕ້ອງດຳເນີນການຖອນຮາກ ຫຼື ລົກຕົ້ນໄມ້ທີ່ຢູ່ອ້ອມຮອບ. ຫາກລະເລີຍການການດູແລເບິ່ງແຍງປ່າໄມ້, ງ່າໃຫຍ່ຂອງຕົ້ນໄມ້ປະເພດໃບກວ້າງກໍຈະແຫ່ວ ຍ້ອນການຕໍ່ສູ້ກັບຕົ້ນໄມ້ທີ່ຢູ່ໃກ້ຄຽງ, (ລຳຕົ້ນຂອງຕົ້ນໄມ້ທີ່ມີວົງປີຕາມການເຕີບໃຫຍ່ຂອງຕົ້ນໄມ້) ແກນລຳຕົ້ນ ກໍຈະເຕັມໄປດ້ວຍ ຮູ ແລະ ຖູດ ຕ່າງໆ ເຊິ່ງເຮັດໃຫ້ເກີດຄວາມເສຍຫາຍຕໍ່ຄຸນນະພາບຂອງໄມ້.



ຮູບທີ 6-2 ການກະກຽມໜ້າດິນ

ວຽກງານນີ້ ແມ່ນ ກ່ຽວຂ້ອງກັບການເຄ່ຍງ່າໄມ້ຂອງຕົ້ນໄມ້ທີ່ກະຈັດກະຈາຍຢູ່ເທິງທາງລາດຊັນໃຫ້ເປັນແຖວ ແລ້ວຈັດລຽງໄວ້ເພື່ອໃຫ້ປູກງ່າຍ.

ພື້ນຖານການກະກຽມດິນ

ຈຸດປະສົງຂອງການກະກຽມໜ້າດິນ ແລະ ໄລຍະເວລາໃນການປະຕິບັດວຽກ

ຈະອະທິບາຍກ່ຽວກັບພື້ນຖານຂອງການປູກປ່າ ທີ່ ນອນໃນວຽກງານການປູກປ່າ. ຂັ້ນຕອນທຳອິດໃນການປູກປ່າ ແມ່ນ ການກະກຽມໜ້າດິນ.

ກະກຽມໜ້າດິນ ເຊິ່ງເປັນສ່ວນໜຶ່ງຂອງວຽກງານການກະກຽມການປູກ(ຮູບ 6-2). ການກະກຽມໜ້າດິນ ເປັນ ຂັ້ນຕອນການເກັບກອດປາຍໄມ້ ແລະ ງ່າໄມ້ຕ່າງໆທີ່ຫຼົ່ງເຫຼືອພາຍຫຼັງຕັດຕົ້ນໄມ້, ເກັບກອດພຸ່ມໄມ້ ຫຼື ຫຍ້າທີ່ຫຼົ່ງເຫຼືອຈາກວຽກງານຕັດຫຍ້າ ຕ່າງໆເປັນຕົ້ນ, ເພື່ອເປັນການຈັດລະບຽບ ແລະ ຈັດແຖວໃຫ້ສາມາດປູກເບ້ຍໄມ້ໄດ້ງ່າຍ. ກ່ຽວກັບໄລຍະເວລາໃນລົງມືປະຕິບັດ ແມ່ນ ໃຫ້ລົງມືປະຕິບັດກ່ອນທີ່ຈະລົງມືປູກ.

ຈຸດປະສົງຂອງການກະກຽມໜ້າດິນ ແມ່ນ ເພື່ອສ້າງຄວາມສະດວກໃນຂະບວນການປູກ ແລະ ໃນເວລາດຽວກັນກໍເພື່ອຮັບປະກັນຄວາມປອດໄພ. ຈຸດປະສົງທີ່ສຳຄັນອີກອັນໜຶ່ງ ແມ່ນ ເພື່ອຊ່ວຍໃຫ້ຕົ້ນໄມ້ທີ່ປູກໄດ້ຢັ່ງຮາກ ແລະ ເຕີບໃຫຍ່ຕໍ່ມາ. ການກະກຽມໜ້າດິນຢ່າງລະມັດລະວັງ ບໍ່ພຽງແຕ່ຈະເຮັດໃຫ້ການຕັດຫຍ້າ ຫຼື ເຄືອໄມ້ ເຊິ່ງເປັນວຽກງານຂອງການດູແລໃນພາຍຫຼັງດຳເນີນໄປໄດ້ຢ່າງລຸລ່ວງແລ້ວ ມັນຍັງມີປະສິດທິຜົນຕໍ່ຄວາມປອດໄພນຳອີກດ້ວຍ.

ງ່າໄມ້ຕ່າງໆເຊິ່ງເປັນທາດອິນຊີວັດຖຸ ຈະກາຍເປັນແຫຼ່ງກຳເນີດຂອງທາດອາຫານ. ທັງຍັງມີພາລະບົດບາດໃນການປ້ອງກັນການໄຫຼຂອງດິນ, ເຮັດໃຫ້ດິນແຫ້ງ ທັງຍັງປ້ອງກັນສະເກັດນ້ຳກ້ອນ.

ເຄື່ອງມືທີ່ໃຊ້ໃນການກະກຽມໜ້າດິນ

ໃນການກະກຽມໜ້າດິນ ຈະໃຊ້ ກ່ຽວ, ພ້າ, ແລະ ເລື່ອຍ ເປັນຕົ້ນ ໃຊ້ກ່ຽວຕັດພຸ່ມໄມ້ ແລ້ວກອດພຸ່ມໄມ້ ແລະ ຫຍ້າຂຶ້ນມາຈາກພື້ນດິນ. ຮູບຮ່າງຂອງເຄື່ອງມືທີ່ໃຊ້ໃນວຽກງານການປູກປ່າ ຈະແຕກຕ່າງກັນໄປຕາມພາກພື້ນ (ຮູບທີ 6-3). ບາງກໍລະນີ ກໍມີການນຳໃຊ້ຈັກເລື່ອຍໄມ້ເພື່ອຕັດພຸ່ມໄມ້.



ຮູບທີ 6-3 ເຄື່ອງນຸ່ງຫົ່ມ ແລະ ເຄື່ອງມືໃນການປູກປ່າ

ເຄື່ອງມືທີ່ໃຊ້ໃນວຽກງານປູກຕົ້ນໄມ້ (ການກະກຽມໜ້າດິນ, ການປູກເບ້ຍໄມ້). ເຄື່ອງມື ຈາກດ້ານເທິງ ປະກອບມີ ຂວານ, ໝາກຈົກ, ກ່ຽວ, ພ້າ, ເລື່ອຍ ແລະ ອຸປະກອນພິເສດທີ່ໃຊ້ສຳລັບປູກເບ້ຍຖາດ (ຈາກດ້ານເທິງເບື້ອງຂວາ ປະກອບມີ ຊ້ວນ, ເຄື່ອງເຈາະຮູ, ແລະ ທໍ່ປູກ). ເຖິງແມ່ນວ່າຢູ່ໃນຮູບ ຈະສະແດງກ່ຽວກັບເຄື່ອງມືທີ່ໃຊ້ທົ່ວໄປກໍຕາມ, ແຕ່ຢູ່ບາງພື້ນທີ່ກໍຈຳເປັນຕ້ອງໄດ້ໃຊ້ມີດຕັດ, ເຊິ່ງເຄື່ອງມືຊ່າງກໍມີລັກສະນະສະເພາະຂອງຕົນເອງຂຶ້ນກັບທ້ອງຖິ່ນທີ່ນຳໃຊ້. ສຳລັບວຽກງານປູກປ່າໄມ້, ຄວນໃສ່ເສື້ອແຂນຍາວ ທີ່ງ່າຍຕໍ່ການເຄື່ອນໄຫວຮ່າງກາຍ, ເສື້ອແຂນຍາວຕ້ອງມີແຂບຕີນເສື້ອຢ່າງດີ ແລະ ໂສ້ງຂາຍາວຕ້ອງມີແຂບຕີນໂສ້ງທີ່ດີ ເພື່ອຫຼີກຫຼ່ຽງບໍ່ໃຫ້ມັນໄປເກາະຢູ່ງ່າຂອງພຸ່ມໄມ້ຕ່າງໆ. ໃສ່ເກີບທີ່ແຂງແຮງ ແລະ ບໍ່ມື່ນ.

ປະເພດຂອງການກະກຽມໜ້າດິນ (ການຕັດຢ່າງເຕັມຮູບແບບ, ການຫຼົກຫຍ້າ, ການປັບໃຫ້ແປນ)

ໃນການກະກຽມໜ້າດິນ ມີ ຫຼາຍວິທີ ເຊັ່ນ: “ການກະກຽມໜ້າດິນທີ່ເປັນການຕັດຢ່າງເຕັມຮູບແບບ” ເຊິ່ງຈະຕັດຕົ້ນໄມ້ທັງໝົດອອກ ແລະ “ການກະກຽມໜ້າດິນແບບຫຼົກຫຍ້າ” ເຊິ່ງເປັນການຕັດສະເພາະບາງສ່ວນ ແລະ “ການກະກຽມໜ້າດິນແບບປັບໃຫ້ແປນ” ຕ່າງໆເປັນຕົ້ນ.

ໃນບັນດາວິທີການເຫຼົ່ານີ້, ວິທີການກະກຽມໜ້າດິນແບບຕັດຢ່າງເຕັມຮູບແບບ ເຊິ່ງເປັນວິທີທີ່ທົ່ວໄປທີ່ສຸດ ແມ່ນ ມີວິທີການໃນການປະຕິບັດ ດັ່ງນີ້:

① ການກະກຽມພື້ນທີ່ສຳລັບການແຜ່ຂະຫຍາຍຂອງງ່າໄມ້

ກໍລະນີທີ່ມີຫຍ້າ ຫຼື ງ່າໄມ້ທີ່ຕ້ອງໄດ້ຕັດບໍ່ຫຼາຍ, ໃຫ້ຕັດງ່າຂອງຕົ້ນອອກເປັນຄວາມຍາວແຕ່ 1 ຫາ 2 ແມັດ ແລ້ວໃຫ້ກະຈາຍງ່າເຫຼົ່ານັ້ນໄປທົ່ວບໍລິເວນປ່າທັງໝົດ.

② ການກະກຽມໜ້າດິນດ້ວຍການວາງເປັນແຖວ

ຫາກມີງ່າໄມ້ຫຼາຍ, ໃຫ້ຈັດເປັນແຖວຢູ່ໄລຍະຫ່າງແຕ່ 4 ຫາ 8 ແມັດ.

③ ການກະກຽມໜ້າດິນຢູ່ເທິງພູທີ່ມີຄວາມລາດຊັນ

ບ່ອນໜ້າດິນທີ່ມີຄວາມລາດຊັນ ແມ່ນ ຈະວາງງ່າໄມ້ຂອງຕົ້ນໄມ້ຕາມແນວເສັ້ນສູງສຸດເພື່ອປ້ອງກັນບໍ່ໃຫ້ໜ້າດິນຖືກນ້ຳພັດ ແລະ ໄຫຼໄປ. ໃນກໍລະນີນີ້, ງ່າໄມ້ຂະໜາດນ້ອຍ ແລະ ໄມ້ພຸ່ມທີ່ຕັດແລ້ວ ຄວນໄດ້ຮັບການແຈກຢາຍທົ່ວໜ້າດິນ.



ຮູບ 6-1 "ການກະກຽມໜ້າດິນດ້ວຍການວາງເປັນແຖວ" ໃນ "ການກະກຽມພື້ນດິນເຕັມຮູບແບບ," ເກັບກວດງ່າໄມ້ທີ່ເຫຼືອ ແລ້ວຮວບຮວມເປັນແຖວໂດຍມີລັກສະນະຊັນຂຶ້ນ ປູກເບ້ຍໄມ້ຂອງຕົ້ນຮີໂນກີຢູ່ລະຫວ່າງແຖວກັບແຖວ.

ປັດໃຈສ່ຽງທີ່ລີ້ຊ້ອນຢູ່ໃນວຽກງານການກະກຽມໜ້າດິນ

ວຽກງານການກະກຽມໜ້າດິນ ແມ່ນ ມັກຈະເຮັດເປັນກຸ່ມ, ດັ່ງນັ້ນ ໃຫ້ຄຳນຶງເຖິງຄວາມສຳພັນລະຫວ່າງບຸກຄົນ ໄປພ້ອມໆກັບການດຳເນີນວຽກງານ. ເນື່ອງຈາກວ່າ ເປັນວຽກງານທີ່ຕ້ອງໄດ້ປະຕິບັດຢູ່ເທິງພູທີ່ມີຄວາມລາດຊັນ, ສະນັ້ນ ກ້ອນຫີນ, ຮາກໄມ້ ຫຼື ງ່າໄມ້ຕ່າງໆອາດຈະຕົກລົງມາໃສ່ ແລະ ເຮັດໃຫ້ບາດເຈັບໄດ້. ມັນເປັນສິ່ງສຳຄັນທີ່ຈະຕ້ອງເອົາໃຈໃສ່ເຮັດວຽກບໍ່ໃຫ້ມີການຂຶ້ນລົງ ຫຼື ຢູ່ເຂົ້າໃກ້ກັນເກີນໄປ.

ນອກຈາກນີ້, ເນື່ອງຈາກວ່າມັນເປັນວຽກງານທີ່ກ່ຽວຂ້ອງກັບການນຳໃຊ້ ກ່ຽວ ແລະ ເຄື່ອງຕັດຫຍ້າ, ດັ່ງນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຈະຕ້ອງຄຳນຶງເຖິງສະພາບແວດລ້ອມອ້ອມໂຕ ແລະ ນຳໃຊ້ມັນຢ່າງຖືກຕ້ອງ. ຫາກສຳຜັດກັບເຄືອໄມ້ ຫຼື ງ່າໄມ້ ໃນຂະນະທີ່ເໜັ່ງກ່ຽວຂຶ້ນລົງຢູ່ນັ້ນ ໃບມີດຈະຫັກງໍ ຫຼື ຟັ້ງໄປໃນທິດທາງທີ່ຄາດບໍ່ເຖິງ.

ຕົວຢ່າງເຫດອຸບັດຕິເຫດ

ໃນຂະນະທີ່ເກັບກອດງ່າໄມ້ມາກອງໄວ້, ແຕ່ຜູ້ປະຕິບັດວຽກງານບໍ່ໄດ້ນຳໃຊ້ໄມ້ສຳລັບເກັບກອດງ່າ ແຕ່ ໄດ້ໃຊ້ດ້ານຂອງກ່ຽວໃນການເກັບກອດແທນ, ໃນຂະນະທີ່ລາວປະຕິບັດເຊັ່ນນັ້ນ ຊ້ຳໄປຊ້ຳມາ ມືເບື້ອງຊ້າຍຂອງລາວໄດ້ໄປກຳເອົາຖານຂອງໃບມີດໂດຍບໍ່ຮູ້ໂຕ. ໃນສະຖານະການແບບນີ້, ເມື່ອໃບມີດຊີ້ລົງດ້ານລຸ່ມ ແລ້ວລາວກໍໄດ້ມີການອອກແຮງ, ດັ່ງນັ້ນ ຈຶ່ງເຮັດໃຫ້ມີຮອຍບາດຢູ່ກົກຂາເບື້ອງຂວາຂອງລາວ.

ພື້ນຖານຂອງການປູກເບ້ຍໄມ້

ຫຼັງຈາກກະກຽມໜ້າດິນແລ້ວ ຂັ້ນຕອນຕໍ່ໄປຂອງວຽກງານປູກປ່າ ແມ່ນ ການປູກເບ້ຍໄມ້. ການປູກເບ້ຍໄມ້ ແມ່ນ ການປູກເບ້ຍໄມ້ໃນພື້ນດິນຂອງປ່າ ເພື່ອຈຸດປະສົງໃນການສ້າງປ່າ ເຊິ່ງເປັນປ່າທີ່ປູກຂຶ້ນ. ການບຳລຸງຮັກສາປ່າໄມ້ ແມ່ນ ເລີ່ມຈາກ “ການປູກເບ້ຍໄມ້”. ສຶກສາຄວາມຮູ້ພື້ນຖານກ່ຽວກັບແນວພັນເບ້ຍໄມ້, ຮູບຮ່າງ, ວິທີການປູກ ແລະ ອື່ນໆ, ແລ້ວນຳໄປປະຕິບັດ.

ວິທີການຜະລິດເບ້ຍໄມ້

ເບ້ຍໄມ້ (ເບ້ຍເປົ່າ) ທີ່ຖືກນຳໃຊ້ທົ່ວໄປໃນການປູກປ່າ ແມ່ນ ປູກ ແລະ ຜະລິດຢູ່ໃນທົ່ງຮາບພຽງ ເຊິ່ງເອີ້ນວ່າ ທົ່ງເບ້ຍໄມ້. ມັນໃຊ້ເວລາ 2 ຫາ 3 ປີ ເພື່ອເຕີບໃຫຍ່ເປັນເບ້ຍໄມ້ທີ່ສາມາດປູກໄດ້, ຫຼັງຈາກການຕັດຮາກ ແລະ ຍ້າຍເບ້ຍ ແລະອື່ນໆ (ຮູບ 6-4).

ເບ້ຍຖາດ ເຊິ່ງມີການຜະລິດເພີ່ມຂຶ້ນໃນຊ່ວງຊຸມປີມໍ່ໆມານີ້ ສາມາດຜະລິດໄດ້ພາຍໃນ 1 ຫາ 2 ປີ. ປັດຈຸບັນ ສາມາດປູກເບ້ຍໄມ້ໄດ້ 1 ປີ ໂດຍການຫວ່ານ ຫຼື ຕັດເບ້ຍຖາດໃນລະດູໃບໄມ້ປົ່ງ ແລະ ສົ່ງໄປໃນລະດູໃບໄມ້ຫຼົ່ນຂອງປີດຽວກັນ. ເມື່ອປຽບທຽບກັບເບ້ຍເປົ່າແລ້ວ, ເຊິ່ງໃຊ້ເວລາປະມານ 2 ຫາ 3 ປີເພື່ອສົ່ງ, ເບ້ຍຖາດສາມາດຕອບສະໜອງຕໍ່ການປ່ຽນແປງຂອງຄວາມຕ້ອງການເບ້ຍໄດ້ຢ່າງຫົດຢືດ.

ຄຸນລັກສະນະຂອງເບ້ຍໄມ້ຈາກແກ່ນ ແລະ ເບ້ຍປັກຊຳ

ເບ້ຍໄມ້ມີ 2 ຊະນິດ ຄື: “ເບ້ຍໄມ້” ທີ່ກ້າຈາກແກ່ນຂອງຕົ້ນແມ່ທີ່ມີຄຸນລັກສະນະດີເລີດ ແລະ “ເບ້ຍທີ່ຕັດຊຳ” ເຊິ່ງຕັດຊຳໂດຍການຕັດຕົ້ນແມ່ທີ່ມີຄຸນສົມບັດດີເລີດ (ຮູບ 6-5).

ແກ່ນເມັດພັນສຳລັບເບ້ຍໄມ້ ຖືກຜະລິດໂດຍການປະສົມເກສອນໃນສວນເມັດພັນ ເຊິ່ງປະກອບດ້ວຍເມັດພັນເດີມຫຼາກຫຼາຍສາຍພັນທີ່ມີລັກສະນະດີເລີດ. ເບ້ຍໄມ້ທີ່ກ້າຈາກເມັດພັນເຫຼົ່ານີ້ ຈະມີລັກສະນະທາງພັນທຸກຳທີ່ແຕກຕ່າງກັນເລັກໜ້ອຍ, ສະນັ້ນ ຈຶ່ງມີຄວາມຫຼາກຫຼາຍ ເຊິ່ງມັນຖືກຄາດຫວັງວ່າຈະສາມາດຫຼີກລ່ຽງບໍ່ໃຫ້ໄດ້ຮັບຜົນກະທົບຈາກສະພາບອາກາດ ແລະ ສັດຕູພືດ. ໃນທາງກົງກັນຂ້າມ, ເບ້ຍທີ່ກ້າຈາກແກ່ນ ຈະເປັນເບ້ຍທີ່ມີຄຸນລັກສະນະສະເພາະ ແລະ ດີເລີດ, ແຕ່ພວກມັນຈະບໍ່ຄືກັບຕົ້ນໄມ້ແມ່ສະເໝີໄປ.

ເບ້ຍທີ່ໄດ້ຈາກການຕັດຊຳ ນັ້ນ ຈະເປັນເບ້ຍທີ່ຜະລິດມາຈາກງ່ຳພັນດັ້ງເດີມໃນສວນພັນໄມ້, ດັ່ງນັ້ນ ພວກມັນຈຶ່ງສືບທອດລັກສະນະທາງພັນທຸກຳຂອງຕົ້ນແມ່ຢ່າງຄົບຖ້ວນ. ດ້ວຍເຫດນີ້ ຕົ້ນເບ້ຍໄມ້ທັງໝົດຈຶ່ງມີລັກສະນະທາງພັນທຸກຳຄືກັນທຸກປະການ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ລະມັດລະວັງບໍ່ໃຫ້ປູກສະເພາະພັນໃດພັນໜຶ່ງຢູ່ພູໜ່ວຍດຽວກັນ ເພື່ອຫຼີກລ່ຽງຄວາມເສຍຫາຍທັງໝົດຈາກສະພາບດິນຟ້າອາກາດ ແລະ ສັດຕູພືດໃນເວລາດຽວ.


ປະເພດຂອງເບ້ຍໄມ້

ເບ້ຍໄມ້ສຳລັບໃຊ້ໃນປ່າມີຮູບຮ່າງແຕກຕ່າງກັນໄປຂຶ້ນກັບວິທີການຜະລິດ. ເມື່ອເລືອກຕົ້ນໄມ້, ຄວນພິຈາລະນາກ່ຽວກັບປັດໃຈຕ່າງໆ ເຊັ່ນ: ຄວາມງ່າຍໃນການຈັດການ, ຄວາມງ່າຍຂອງການປູກ ແລະ ລາຄາ.

ປະລິມານການຜະລິດເບ້ຍໄມ້ຢູ່ພູ (ເບ້ຍໄມ້ທີ່ຂົນສົ່ງໄປສະຖານທີ່ປູກຕົ້ນໄມ້ ແລະ ພ້ອມສຳລັບການປູກ) ໃນ ປະເທດຍີ່ປຸ່ນໄດ້ຫຼຸດລົງ ມາເປັນ 56 ລ້ານຕົ້ນ ໃນປີ 2013 (ປີ Heisei ທີ 25) ແລະ ໄດ້ກັບມາເພີ່ມຂຶ້ນ ນັບຕັ້ງແຕ່ປີ 2014 (ປີ Heisei ທີ 26) ມາເປັນ ປະມານ 60 ລ້ານຕົ້ນ. ໃນບັນດາເບ້ຍໄມ້, ການຜະລິດເບ້ຍໄມ້ຖາດ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນຊຸມປີທີ່ຜ່ານມາ, ບັນລຸປະມານ 7,15 ລ້ານເບ້ຍ ໃນປີ 2014 (ປີ Heisei ທີ 26), ເພີ່ມຂຶ້ນ 52% ຈາກປີກ່ອນໜ້ານັ້ນ.

(1) ເບ້ຍເປົ່າ (ທີ່ບໍ່ມີດິນ)

ມັນເປັນເບ້ຍໄມ້ທີ່ໃຊ້ທົ່ວໄປທີ່ສຸດ ແລະ ບາງຄັ້ງເອີ້ນວ່າ “ເບ້ຍໄມ້ທຳມະດາ”. ເປັນ ເບ້ຍໄມ້ທີ່ກ້າດ້ວຍແກ່ນທີ່ມີອາຍຸ 2 ຫາ 3 ປີ ຫຼື ເບ້ຍໄມ້ທີ່ໄດ້ຈາກການຕັດຊຳ (ກິ່ງ) ຂອງແນວພັນຊັ້ນດີ ເຊິ່ງໄດ້ຖືກຂຸດຂຶ້ນມາຈາກທົ່ງ (ສວນກ້າ), ດິນທີ່ຕິດຢູ່ກັບຮາກກໍບໍ່ຫຼາຍ ແລະ ສາມາດສັ່ນອອກໄດ້. ໃຫ້ເປີດຮາກອອກ ເພື່ອກວດກາເບິ່ງວ່າ ຮາກມີຈຳນວນພຽງພໍບໍ່, ຮາກຝອຍມີຄວາມແຂງແຮງບໍ່ ແລະ ຮາກບໍ່ບິດບ້ຽວບໍ່ (ຮູບຊົງຕົ້ນນົກຕ່າງໆເປັນຕົ້ນ) ແລ້ວຈຶ່ງຄ່ອຍລົງມືປູກ. ມັນຍັງມີຂໍ້ດີ ຄື ມີນ້ຳໜັກເບົາ ແລະ ສາມາດຂົນສົ່ງໄດ້ໃນປະລິມານຫຼາຍ ເພາະວ່າມັນບໍ່ໄດ້ມາພ້ອມກັບ



ຮູບທີ 6-4 ຂະບວນການຜະລິດເບ້ຍໄມ້

ແຫຼ່ງທີ່ມາ: ເວັບໄຊອົງການປ່າໄມ້ "ຂະບວນການຜະລິດເບ້ຍໄມ້"

ດິນ. ຍັງມີຂໍ້ໄດ້ປຽບ ຄື ມັນມີລາຄາຖືກ (ປະມານເຄິ່ງຫນຶ່ງຂອງລາຄາຂອງເບ້ຍໄມ້ຖາດ). ຢ່າງໃດກໍຕາມ, ເນື່ອງຈາກວ່າມັນເປັນຮາກເປົ່າ, ສະນັ້ນ ຈຶ່ງຈຳເປັນຕ້ອງໄດ້ລະມັດລະວັງທີ່ສຸດ ເພື່ອປ້ອງກັນບໍ່ໃຫ້ຮາກຂອງມັນເກີດຄວາມອົບເອົ້າ ຍ້ອນຄວາມແຫ້ງແລ້ງ ແລະ ອຸນຫະພູມທີ່ເພີ່ມຂຶ້ນ. ຫາກບໍ່ສາມາດປູກໄດ້ທັນທີ, ການປູກຊົ່ວຄາວ ແມ່ນ ວິທີການພື້ນຖານ (ຮູບ 6-6).

(2) ເບ້ຍຖາດ


ເບ້ຍຖາດ ເປັນເບ້ຍໄມ້ທີ່ປູກຢູ່ໃນຖາດທີ່ມີຫຼາຍຮູ ເຊິ່ງເອີ້ນວ່າຖາດຫຼາຍຮ່ອງ. ດັ່ງນັ້ນ, ຈຶ່ງສາມາດປູກເບ້ຍພ້ອມກັນຫຼາຍຕົ້ນໃນຖາດດຽວ. ຖາດ ຖືກອອກແບບມາເພື່ອປ້ອງກັນບໍ່ໃຫ້ຮາກເສຍຮູບ ແລະ ມີສ່ວນທີ່ຍື່ນອອກມາເປັນແນວຕັ້ງ (ຂາ) ທີ່ມີຂະໜາດຕ່ຳຕິດຢູ່ທາງຂ້າງຂອງຖາດ ເຊິ່ງຊ່ວຍໃຫ້ຮາກງອກອອກມາໃນລັກສະນະຢຽດຊື່, ເນື່ອງຈາກຖາດບໍ່ມີກົ້ນ ຮາກຈຶ່ງບໍ່ສາມາດເຂົ້າເຖິງດ້ານລຸ່ມໄດ້, ວິທີນີ້ ຈະປ້ອງກັນບໍ່ໃຫ້ຮາກເຕີບໃຫຍ່ເມື່ອສຳຜັດກັບອາກາດ ແລະ ຈະບໍ່ເຮັດໃຫ້ຮາກງໍ (ຮາກພັນກັນເປັນວົງມົນ) ເຖິງແມ່ນວ່າພວກມັນຈະມີລາຄາແພງກວ່າເບ້ຍເປົ່າ, ແຕ່ພວກມັນມີຜົນປະໂຫຍດທີ່ສາມາດຜະລິດພືດໃນທົ່ງເບ້ຍໄມ້ໄດ້ຫຼາຍຂຶ້ນ ແລະ ມີໄລຍະເວລາການລ້ຽງເບ້ຍໄມ້ສັ້ນກວ່າ (ຮູບ 6-6).



① ຕັດງ່າອອກດ້ວຍມີດຕັດງ່າໄມ້



② ເດັດໃບດ້ານລຸ່ມອອກ 1/2 ~ 2/3



③ ຕັດປາຍໃຫ້ມີລັກສະນະສະຫຼຽງເພື່ອ
ໃຊ້ສຳລັບປັກຊຳ

ຮູບ 6-5 ການສ້າງເບ້ຍໄມ້ຂອງເບ້ຍຕັດຊຳ

ຕັດຊຳໂດຍກັນຕັດແປງລ່ວງໜ້າເພື່ອເຮັດເປັນເບ້ຍໄມ້.





ຮູບທີ 6-6 ເບ້ຍເປົ່າ (ຊ້າຍ) ແລະ ເບ້ຍຖາດ (ຂວາ)

ເບຍເປົ່າ ຈະມີຮາກໂຜ່ອອກມາ ສະນັ້ນ ສາມາດກວດກາສະພາບຂອງຮາກໄດ້ ແຕ່ຈຳເປັນຢ່າງຍິ່ງທີ່ຈະຕ້ອງລະມັດລະວັງບໍ່ໃຫ້ຮາກແຫ້ງໃນເວລາປູກ. ຮາກຂອງເບ້ຍຖາດ ຈະຢູ່ໃນເບົ້າຂອງຮາກທີ່ມີດິນ. ເນື່ອງຈາກວ່າມີເບົ້າດິນຕິດຢູ່ ສະນັ້ນຈຶ່ງສາມາດປູກໄດ້ຍາມໃດກໍໄດ້ຕາບໃດທີ່ດິນບໍ່ແຂງໂຕ, ແຕ່ມັນກໍມີຂໍ້ເສຍ ຄື ມີຄວາມຫຍຸ້ງຍາກໃນການຂົນຍ້າຍຈຳນວນຫຼາຍໃນຄັ້ງດຽວ ເພາະຈະຕ້ອງໄດ້ລະມັດລະວັງບໍ່ໃຫ້ເບົ້າແຕກ.

ຖາດ ມີຫຼາຍຮູບຊົງ ເຊັ່ນ: ຖາດທີ່ມີປະລິມານບັນຈຸການບານຂອງຮາກ ຂະໜາດ 150 cc ແລະ 300 cc, ແລະ “M Star Container”, ເຊິ່ງຈະຫໍ່ເບ້ົາ ແລະ ເບ້ຍໄມ້ດ້ວຍແຜ່ນ polyethylene polysheet (ສາມາດໃຊ້ຊ້ຳໄດ້) ແລ້ວວາງໄວ້ເທິງຖາດພິເສດ ຖາດເພາະກ້ຳເບ້ຍໄມ້ ພັດທະນາໂດຍ ສູນເຄັກໂນໂລຊີປ່າໄມ້ ແຂວງ Miyazaki). M Star Container ມີຄຸນສົມບັດທີ່ຂະໜາດການ ບານຂອງຮາກສາມາດປັບໄດ້ໂດຍມ້ວນແຜ່ນ ແລະ ສາມາດເອົາເບ້ຍໄມ້ອອກໄດ້ຢ່າງງ່າຍດາຍພຽງແຕ່ການແຜ່ນອອກ.

(3) ເບ້ຍໂຖ

ເບ້ຍເຫຼົ່ານ້ີ ເປັນເບ້ຍທີ່ວ່າງຢູ່ໃນໂຖໂພໂລເອທີລີນສີດຳ (ໂຖຢາງ) ແລະ ມັກໃຊ້ສຳລັບເບ້ຍໄມ້ທີ່ເປັນຕົ້ນໄມ້ໃບກວ້າງ. ເມື່ອງຈາກໃນໂຖມີດິນ ມັນຈຶ່ງໜັກ ແລະ ບໍ່ສະດວກໃນການພົກພາ, ແຕ່ຖ້າຫາກຢາກໄດ້ຜົນດີ ແມ່ນ ຕ້ອງປະສົມຕົ້ນໄມ້ຫຼາກຫຼາຍສາຍພັນເມື່ອປູກຢູ່ໃນພື້ນທີ່ຂະ ໜາດນ້ອຍ. ຫາກເປັນຕົ້ນໄມ້ທີ່ໃບບາງ ແລະ ໃຫຍ່ ຄືກັນກັບຕົ້ນໄມ້ປະເພດໃບກວ້າງ, ການລະເຫີຍຂອງນ້ຳອອກຈາກໃບຈະກາຍເປັນບັນຫາ, ດັ່ງນັ້ນ “ເບ້ຍໄມ້ທີ່ມີດິນ” ຈຶ່ງປອດໄພ. ລາຄາ ແມ່ນ ແຕກຕ່າງກັນໄປຕາມປະເພດຂອງຕົ້ນໄມ້, ລາຄາມີຕັ້ງແຕ່ສູງກວ່າລາຄາ ເບ້ຍໄມ້ເປ ົ່ າ ເລັກ ໜ້ອຍໄປຈົນເຖິງສູງກວ່າຫຼາຍເທ ົ່ າ.

ໃນທາງກົງກັນຂ້ າ ມ, ສ ຳ ລັບເບ ້ ຍໄມ ້ ທ ີ ່ ຢ ູ ່ ໃນໂຖ ຮ າ ກ ອ າ ດ ຈ ະ ຈ ະ ເ ລ ີ ນ ເ ຕ ີ ບ ໂ ຕ ຫ ຼ າ ຍ ເ ກ ີ ນ ໄ ປ ແ ລ ້ ວ ເ ຮ ັ ດ ໃ ຫ ້ ຢ ູ ່ ໃ ນ ສ ະ ພ າ ບ ຮ າ ກ ພ ັ ນ ກ ັ ນ (ກ ້ ຽ ວ ໄ ປ ກ ້ ຽ ວ ມ າ). ເ ບ ້ ຍ ໄ ມ ້ ໃ ນ ສ ະ ພ າ ບ ນ ี ้ ຈ ะ ม ี ก า ร ข ะ ห ย า ย ต ั ว ท ี ่ บ ่ ด ี ห ล ั ง จ า ก ป ู ก , ด ั ่ ง น ั ้ น ร า ก ท ี ่ ม ี ส ะ พ า บ พ ั น ก ั น จ ึ ่ ง ถ ื อ ว ่ า เ ป ็ น ข ้ เสียຂອງເບ້ຍໂຖ.

(4) ເບ້ຍຫໍ່

ເບ້ຍເຫຼົ່ານ້ີ ເປັນ ເບ້ຍທີ່ຜະລິດໂດຍໃຊ້ຫໍ່ຢາງ ຫຼື ຫໍ່ເຊລາມິກທີ່ຈ່ອຍບາງ. ເສັ້ນຜ່າສູນກາງຂອງຫໍ່ ແມ່ນ ມີຫຼາຍຊັ້ງຕີແມັດ ແລະ ເທດົນປະ ລິມານເລັກໜ້ອຍລົງໄປເພື່ອສ້ າ ງເບ ້ ຍໄມ ້ . ມ ັ ນ ເ ໝ າ ะ ส ม ก ั บ ต ้ ม แ ป ก , เ พ ร ะ ม ี พ ื ้ น ท ี ่ ส ำ ร ั บ ว า ง ร า ก บ ่ ห ล า ย . เ ว ้ า ไ ด ้ ว ่ า เ ป ็ น เ บ ้ ย ท ี ่ ล ้ ร ง ว ่ า ย ส ำ ร ั บ ผ ู ้ ล ้ ร ง เ พ ร ะ ม ี น ้ ำ ห น ั ก เ บ า แ ล ะ ต ้ อ ง ก า ร ไ ล ย ะ เ อ ว ล า ก า ร ล ้ ร ง ส ั ้ น . ส ำ ร ั บ เ บ ้ ย ห ่ ๋ ย า ง , ใ ห ้ เ อ า ห ่ ๋ อ อ ก ก ่ อ น ก า ร ป ู ก , ส ่ อ ม เ บ ้ ย ห ่ ๋ เ ซ ล า ม ิ ก แ ม ่ น ใ ห ้ ข ุ ด ข ุ ม อ ย ู ่ ใ ม ป ่ า แ ล ้ ว เ อ า เ บ ้ ย ล ง ข ุ ม โ ด ย บ ่ จ ำ เ ป ็ น ต ้ อ ง ถ อ ด ห ่ ๋ เ ซ ล า ม ิ ก อ อ ก . ม ั น ส ะ แ ด ง ใ ห ้ เ ห ็ น อ ั ด ต ร า ก า ร ล อ ด ต า ย ส ู ง เมื่อທຽບກັບເບ້ຍເປ ົ່ າ.

ເບ້ຍໄມ້ທີ່ດີ ແລະ ເບ້ຍໄມ້ທີ່ບໍ່ດີ

ການເລືອກເບ້ຍໄມ້ທີ່ດີເມື່ອປູກເບ້ຍຢູ່ພູ ຈະນ ຳ ໄປສູ່ການສ ้ າ ງພູທ ี ่ ด ี . พ อ ก เ ร ็ า จ ะ เ บ ่ ง ว ิ ธ ี ก า ร ก ำ น ด เ บ ้ ย โ ด ย ใ ช ้ 3 เ ง ื ่ อ น ไ ข : ร า ก , ลำຕົ້ນ ແລະ ສີຂອງໃບ (ຮູບ 6-7 ແລະ 6-8).


(1) ຮາກ

ຮ ากม ีบ ทบ าทส ำ ค ัญ ห ล าย ใ น พ ืด โ ด ย ก าร ด ูด ซ ึม น ้ ำ แ ล ะ ส าร อ าห าร แ ล ะ ส ะ ห น ับ ส ะ ห น ุน ล ำ ต ้ น ข อ ง พ ืด . โ ด ย ท ั ่ ว ไ ป , เ บ ้ ย ใ น ท ั ้ ง เบ้ຍໄມ້ ຈະພັດທະນາລະບົບຮາກພາຍໃຕ້ເງື່ອນໄຂທີ່ດີກວ່າເບ້ຍທີ່ປູກໃນສະພາບແວດລ້ອມທ ຳ ມະຊາດທີ່ຮ້ ายแรง. ຢ ่ า ง ใ ด ก ็ ต า ม , เ บ ้ ย เ ป ็ า ใ ນ ส ว น ก ้ ำ ຈ ะ ถ ู ก ต ั ด ล ะ บ บ ร า ก อ อ ก เ พ ื ่ อ เ ร ็ ด ใ ห ้ พ ว ก ม ั น ป ่ ง อ อ ก ไ ด ้ ง ่ า ย ข ึ ้ น ใ ม ข ะ ท ี ่ ข ุ ด ส ั ่ ง แ ล ะ ง ่ า ย ต ่ ่ อ ก า ร เ อ า ล ง ป ู ก . น อ ก จ า ก น ี ้ , ร า ก ย ั ง ถ ู ก ท ำ ล า ย ล ะ ห ว ่ า ง ก า ร ข ุ ด แ ล ะ ก า ร ป ู ก , ด ั ่ ง น ั ้ น เ บ ้ ย ไ ม ้ ท ี ่ ด ี ท ี ่ ส ุ ด ถ ว น ม ี ล ะ บ บ ร า ก ท ี ่ ห น ้ ำ แ ห ้ น อ ย ู ่ ใ ก ้ ก ั บ ฐ า น ร า ก ข อ ง ล ำ ต ้ น . เ ม ื ่ อ ง จ า ก ว ่ า ห ล ั ง จ า ก ป ู ก ม ั น ม ี พ ื ้ น ท ี ่ ใ ห ้ ร า ก ใ ห ม ่ ไ ด ้ เ ก ิ ด ข ึ ้ น ห ล า ย ข ึ ้ น . ห ล ั ก ล ้ ร ง ก า ร ท ้ ำ เ บ ้ ย “ร ูบ ช ง ป ก ม ก” เ ช ่ ง ม ี ล ะ บ บ ร า ก ท ี ่ ม ี ถ ว า ม ห น ้ ำ แ ห ้ น ต ่ ำ .

ເບ ้ ย ท ี ่ ม ี ด ิ น (ໂ ຖ , ຖ า ด , ห ่ ๋) จ ะ พ ั ด ท ะ น า ล ะ บ บ ร า ก พ า ย ใ น พ า ะ ะ ด ั ่ ง ก ่ า ว . ห า ก ม ี เ อ ล า ห ้ อ ย เ ก ิ น ไ ป ส ำ ร ั บ ล ะ บ บ ร า ก ใ น ก า ร พัดทะนา ຈະເຮັດໃຫ້ລະບົບຮາກບໍ່ດີ, ແຕ່ຫາກເວລາຫຼາຍເກີນໄປ ກ ็ จ ะ ส ่ ง ผ ล ใ ห ้ ล ะ บ บ ร า ก แ อ อ ั ด . อ ิ ธ ิ ท ี ่ ด ี ท ี ่ ส ุ ด แ ม ่ น ก า ร ใ ช ้ พ า ะ ะ ะ ท ี ่ เ ต ็ ม ไ ป ด ้ ว ย ล ะ บ ม ร า ก ใ น ป ะ ล ิ ม า น ท ี ่ เ ห ม ะ ส ม . น อ ก จ า ก น ี ้ เ บ ้ ย โ ถ ย ั ง ม ี ร า ก ท ี ่ ม ี ส ะ พ า บ พ ั น ก ั น เ ป ็ น อ ว ง ม น ส ะ น ั ้ น จ ึ ่ ง บ ่ ด ี .


(2) ลำຕົ້ນ

ບ ่ อ ้ า จ ะ เ ป ็ น ต ้ ม แ ป ก ห ร ื อ ต ้ ม ไ ม ้ ป ะ เ พ ด ใ บ ก ว ้ า ง ก ็ ต า ม , เ บ ้ ย ไ ม ้ ท ี ่ ด ี ต ้ อ ง เ ป ็ น เ บ ้ ย ไ ม ้ ท ี ่ ม ี ล ำ ต ้ น ด ร ว อ แ ล ะ ย ร ด ช ื ่ . ห า ก ล ำ ต ้ น แ บ ่ ง อ อ ก



ຮູບທີ 6-7 ຄຸນລັກສະນະຂອງເບ້ຍທີ່ດີ

ມີລຳຕົ້ນ 1 ລຳ, ຢືນຊື່ ແລະ ແຂງແຮງ. ຮາກ ດົກໜາຢູ່ໃກ້ກັບໂຄນຂອງລຳຕົ້ນ.



ຮູບທີ 6-8 ຄຸນລັກສະນະຂອງເບ້ຍທີ່ບໍ່ດີ

ຮູບທີ 6-7, ຮູບທີ 6-8: ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ "ຄວາມຮູ້ໃໝ່ກ່ຽວກັບປ່າໄມ້ (ສະບັບປະຈຳເດືອນ 11/2014)"

ເປັນ 2 ຫຼື 3 ສ່ວນ, ຫຼື ມີລຳຕົ້ນພຽງ 1 ຕົ້ນ ແຕ່ເຕີບໃຫຍ່ມາບໍ່ສົມບູນ ກໍຖືວ່າເປັນລຳຕົ້ນທີ່ບໍ່ດີ. ສິ່ງສຳຄັນ ແມ່ນ ຈຸດຈະເລີນເຕີບໂຕຂອງຕົ້ນໄມ້ທີ່ຢູ່ປາຍລຳຕົ້ນຈະຕ້ອງບໍ່ໄດ້ຮັບຄວາມເສຍຫາຍ.

(3) ສີຂອງໃບ

ສີຂອງໃບແຕກຕ່າງກັນໄປຕາມປະເພດຂອງຕົ້ນໄມ້ ແລະ ລະດູການ. ເບ້ຍໄມ້ທີ່ມີໃບຈືດໆ ຫຼື ສີເຫຼືອງ, ຫຼື ເບ້ຍທີ່ມີໃບສີແດງທີ່ບໍ່ແມ່ນສີປົກກະຕິໃນລະດູການ, ຈະບໍ່ສາມາດຖືວ່າເປັນເບ້ຍໄມ້ທີ່ດີໄດ້. ນອກຈາກນັ້ນ, ຫຼີກລ່ຽງການເລືອກພືດທີ່ມີໃບປ່ຽນສີຍ້ອນພະຍາດ.

ການປັບປຸງສາຍພັນແຫ່ງຊາດ

ໂຄງການປັບປຸງພັນໄມ້ປ່າຂອງປະເທດຍີ່ປຸ່ນ ກຳລັງພັດທະນາໄມ້ປ່າທີ່ມີລັກສະນະທາງພັນທຸກຳທີ່ດີເລີດ ເພື່ອເຮັດໃຫ້ປ່າໄມ້ສາມາດເຮັດວຽກໄດ້ຫຼາຍຢ່າງ ເຊັ່ນ: ການປ້ອງກັນດິນເຈື່ອນ, ການດູດ CO_2 ແລະ ການຜະລິດໄມ້.

ໃນໂຄງການຄັດເລືອກພັນຕົ້ນໄມ້ ໄດ້ສ້າງພັນໄມ້ໃໝ່ໆ ໂດຍການຄັດເລືອກຕົ້ນໄມ້ທີ່ມີການຈະເລີນເຕີບໂຕດີເລີດ ແລະ ມີລັກສະນະສະເພາະທີ່ກົງກັບຄວາມຕ້ອງການຂອງຍຸກສະໄໝ. ສິ່ງສຳຄັນຕົ້ນຕໍທີ່ໄດ້ພັດທະນາມາຮອດຕອນນີ້ ແມ່ນ ພັນໄມ້ທີ່ທົນຕໍ່ສະພາບອາກາດ ແລະ ສັດຕູພືດ ເຊັ່ນ: ໂຕດ້ວງ ຕ່າງໆ ແລະ ພັນໄມ້ທີ່ປ້ອງກັນໂລກແພ້ລະອອງເກສອນ ເປັນຕົ້ນແມ່ນ ຕົ້ນແປກທີ່ມີລະອອງເກສອນໜ້ອຍ.

ຈຸດປະສົງຂອງການປູກ, ໄລຍະເວລາທີ່ຈຳເປັນ ແລະ ໄລຍະເວລາທີ່ເໝາະສົມ

ເມື່ອປູກເບ້ຍໄມ້ລົງພື້ນທີ່ໃນປ່າ ຕ້ອງໄດ້ຄຳນຶງເຖິງການອອກແບບພູໄປນຳ, ເປັນຕົ້ນແມ່ນ ຕ້ອງການໃຫ້ເປັນພູແບບໃດ. ຈະພິຈາລະນາການປູກຕົ້ນໄມ້ພັນທີ່ເໝາະສົມທີ່ສຸດ ເພື່ອນຳໃຊ້ເປັນແຫຼ່ງທີ່ຢູ່ອາໄສທີ່ເໝາະສົມທີ່ສຸດ. ໃນປະເທດຍີ່ປຸ່ນ, ຕົ້ນຫຍ້າ ມີການຈະເລີນເຕີບໂຕຫຼາຍເກີນໄປ ເຊິ່ງມີການແຂ່ງຂັນກັນຢ່າງຮຸນແຮງເພື່ອຄວາມຢູ່ລອດລະຫວ່າງພືດພັນ. ການປູກເບ້ຍໄມ້ທີ່ຈະເລີນເຕີບໂຕເຖິງຂະໜາດທີ່ກຳນົດຢູ່ໃນທົ່ງເບ້ຍໄມ້ ຈະເຮັດໃຫ້ໄດ້ປຽບໃນການແຂ່ງຂັນກັນ ເມື່ອງຈາກຄວາມສູງຂອງເບ້ຍໄມ້ ແລະ ງ່າຍຕໍ່ການລະບຸປະເພດຕົ້ນໄມ້ເປົ້າຫມາຍໃນໄລຍະການເຮັດວຽກຕັດຫຍ້າໃນຕໍ່ໜ້າ ເຊິ່ງຊ່ວຍເພີ່ມປະສິດທິພາບການເຮັດວຽກ.

(1) ປູກເບ້ຍເປົ່າໃນລະດູໃບໄມ້ປົ່ງ ຫຼື ລະດູໃບໄມ້ລົ່ນ.

ເບ້ຍເປົ່າທີ່ບໍ່ມີດິນຕິດຢູ່ກັບຮາກ ແມ່ນ ຈະປູກໄດ້ດີທີ່ສຸດໃນເວລາທີ່ພວກມັນບໍ່ຕ້ອງການນ້ຳຫຼາຍ ຫຼື ເວົ້າອີກຢ່າງໜຶ່ງກໍຄືໃນຊ່ວງທີ່ຕົ້ນໄມ້ຈຳສີນ. ໂດຍສະເພາະໃນໄລຍະຕົ້ນລະດູໃບໄມ້ປົ່ງຈະດີທີ່ສຸດເປັນພິເສດ ເມື່ອງຈາກເປັນຊ່ວງກ່ອນໄລຍະເວລາຂອງການເຄື່ອນໄຫວໃນການສ້າງເນື້ອເຍື້ອໃໝ່. ຫາກປູກກ່ອນໄລຍະເວລາທີ່ມີການເຄື່ອນໄຫວໃນການເລີ່ມອອກດອກ ແລະ ໃບ, ກໍຈະບໍ່ເປັນການທຳລາຍຍອດໃໝ່ຂອງຕົ້ນໄມ້. ນອກຈາກນັ້ນ, ເບ້ຍໄມ້ຈະໃຫຍ່ຂຶ້ນ ແລະ ຕັ້ງຂຶ້ນຊື່. ຢ່າງໃດກໍ່ຕາມ, ໃນເຂດທີ່ມີຫິມະ, ລະດູໃບໄມ້ປົ່ງ ອາດຈະມາຮອດກ່ອນທີ່ຫິມະຢູ່ເທິງພູຈະຫາຍໄປ, ດັ່ງນັ້ນ ມັນຈຳເປັນຕ້ອງປູກເບ້ຍໄມ້ຊົ່ວຄາວຢູ່ໃກ້ກັບບ່ອນປູກໃນລະດູໃບໄມ້ປົ່ງ.

ຫາກຈະປູກໃນລະດູໃບໄມ້ລົ່ນ ແມ່ນ ໃຫ້ປູກໃຫ້ໄວທີ່ສຸດເທົ່າທີ່ຢຸດການເຄື່ອນໄຫວວຽກງານຕ່າງໆທີ່ຢູ່ພື້ນດິນ. ໃຫ້ລະມັດລະວັງໂດຍສະເພາະໃນພື້ນທີ່ທີ່ມີດິນສູງ. ຫາກເບ້ຍໄມ້ສຳຜັດກັບອຸນຫະພູມເຢືອກເຢັນກ່ອນທີ່ມັນຈະປັບໂຕເຂົ້າກັບຄວາມໜາວເຢັນດັ່ງກ່າວໄດ້ພຽງພໍ ພວກມັນອາດຈະຕາຍຈາກຄວາມເສຍຫາຍທີ່ເກີດຈາກຄວາມເຢືອກເຢັນ.

(2) ເບ້ຍໂຖ, ເບ້ຍຖາດ, ແລະ ເບ້ຍທ່ໍ ສາມາດປູກໄດ້ຕະຫຼອດປີ.

ເບ້ຍໂຖ, ເບ້ຍຖາດ, ແລະ ເບ້ຍທ່ໍ ແມ່ນ ຈະຖືກປູກໂດຍໃຫ້ຮາກຂອງມັນສຳຜັດກັບດິນຢູ່ຕະຫຼອດເວລາ, ສະນັ້ນ ຈຶ່ງສາມາດປູກໄດ້ຕະຫຼອດເວລາ ຍົກເວັ້ນໃນຊ່ວງລະດູຮ້ອນທີ່ຮ້ອນຫຼາຍ ຫຼື ເມື່ອຫິມະຕົກ ແລະ ດິນກາຍເປັນນ້ຳກ້ອນ. ຢ່າງໃດກໍຕາມ ງ່າໄມ້ຈະອ່ອນແອຂຶ້ນ ເມື່ອຕົ້ນກ້າເລີ່ມເຄື່ອນໄຫວ ດັ່ງນັ້ນ ຄວນລະມັດລະວັງໃນການຈັດການເມື່ອປູກໃນຊ່ວງໄລຍະດັ່ງກ່າວ.

ເຄື່ອງມືທີ່ໃຊ້ໃນການປູກ

ເຄື່ອງມືທີ່ຈຳເປັນໃນເວລາປູກເບ້ຍໄມ້ຢູ່ເທິງພູ ຈະແຕກຕ່າງກັນໄປຕາມປະເພດຂອງເບ້ຍໄມ້. ມາເອົາໃຈໃສ່ກ່ຽວກັບຄວາມປອດໄພ ແລະ ການເຮັດວຽກທີ່ຖືກຕ້ອງ.

(1) ເຄື່ອງມືສຳລັບການປູກເບ້ຍເປົ່າ

ໃນເວລາປູກເບ້ຍໄມ້ຢູ່ໃນປ່າ, ສ່ວນຫຼາຍ ແມ່ນ ຈະໃຊ້ໝາກຈົກ. ນອກຈາກນີ້ ຍັງໃຊ້ເລື່ອຍ ແລະ ພ້າ ເພື່ອຕັດຮາກຕ່າງໆທີ່ຍື່ນອອກມາຈາກຂຸມປູກ. ເພື່ອປ້ອງກັນບໍ່ໃຫ້ດ້າມຂອງໝາກຈົກຫຼຸດ ໃຫ້ແຊ່ດ້າມທີ່ຕິດກັບໝາກຈົກໃນນ້ຳຢ່າງຄັກແນ່ ກ່ອນທີ່ຈະນຳໃຊ້ມັນ. ຫາກດ້າມຫຼົ່ມ ໃຫ້ໃສ່ເຂົ້າໄປໃໝ່ (ຮູບ 6-9).

(2) ເຄື່ອງມືທີ່ໃຊ້ໃນການປູກເບ້ຍຖາດ

ເມື່ອປູກເບ້ຍຖາດ ສາມາດໃຊ້ອຸປະກອນພິເສດນອກຈາກໝາກຈົກໄດ້. ມາເລືອກເຄື່ອງມືໃຫ້ເຂົ້າກັບຄວາມລາດຊັນຂອງທ້ອງຖິ່ນ, ພູມສັນຖານ, ຄຸນນະພາບຂອງດິນ ຕ່າງໆ (ເບິ່ງຮູບ 6-3 ຂ້າງເທິງ).

①ຊ້ວນ

ມີຂອບ ແລະ ປາຍແຫຼມ. ເຖິງຈະຢູ່ໃນພື້ນທີ່ທີ່ມີລະບົບຮາກຫຼາຍ ກໍສາມາດຕັດໄດ້, ດັ່ງນັ້ນ ຈຶ່ງສາມາດນຳໃຊ້ໄດ້ໃນດິນທີ່ມີຄວາມໜາແໜ້ນສູງ. ເອົາຕີນວາງໃສ່ຄານ ສຽບມັນກັບດິນ ແລ້ວເລື່ອນໄປມາຊ້າຍຂວາເພື່ອເຮັດເປັນຂຸມ (ຮູບ 6-3, ຮູບ 6-10).

②ເຄື່ອງເຈາະຮູ

ສ່ວນປາຍຈະມີຮູບຮ່າງຂອງບ່ອນເກັບຮາກເບ້ຍໄມ້ ສາມາດປັບປ່ຽນໄດ້ຫຼາຍຂະໜາດ. ມີປະສິດທິພາບໃນການສ້າງຂຸມປູກໂດຍການຍູ້ມັນ

ເຂົ້າໄປໃນດິນ. ຢ່າງໃດກໍຕາມ, ອຸປະກອນດັ່ງກ່າວ ແມ່ນ ມີຄວາມຍາກທີ່ຈະເຈາະເຂົ້າໄປໃນດິນທີ່ມີຄວາມໜາແໜ້ນ, ດິນໜາກຄອມ ແລະ ມີ ຮາກຈຳນວນຫຼາຍ (ຮູບ 6-3).

③ທໍ່ປູກ

ສຽບໃສ່ດິນໃນສະພາບທີ່ປາຍມັນປິດຢູ່ ແລະ ເມື່ອຢຽບແປ້ນ ປາຍຂອງມັນກໍຈະເປີດອອກ. ຍ່ອນເບ້ຍໄມ້ລົງມາຈາກດ້ານເທິງ ແລ້ວຖິ້ມອຸປະ ກອນຂຶ້ນ ເບ້ຍໄມ້ກໍຈະເຂົ້າໄປໃນຮູ. ບໍ່ຈຳເປັນຕ້ອງກົ້ມ ຫຼື ໂຄ້ງແອວ, ດັ່ງນັ້ນ ອຸປະກອນນີ້ ຈຶ່ງບໍ່ສ້າງພາລະໃຫ້ແກ່ຮ່າງກາຍປານໃດ. (ຮູບ 6-3).

ການຈັດລຽງການປູກ ແລະ ລະດັບຄວາມໜາແໜ້ນ

ເມື່ອປູກຢູ່ເທິງພູ, ໄລຍະຫ່າງ ແລະ ການຈັດລຽງທີ່ດີທີ່ສຸດລະຫວ່າງເບ້ຍໄມ້ ແມ່ນ ທໍ່ໃດ. ເຖິງແມ່ນວ່າຈະເປັນຕົ້ນໄມ້ປະເພດດຽວກັນ, ຄວາມໜາແໜ້ນຂອງການປູກທີ່ເໝາະສົມ ກໍຈະແຕກຕ່າງກັນໄປຕາມຈຸດປະສົງຂອງການປູກຕົ້ນໄມ້. ນອກຈາກນັ້ນ ຍັງຈຳເປັນຕ້ອງໄດ້ ພິຈາລະນາກ່ຽວກັບວິທີການທີ່ຈະຄຸ້ມຄອງພືດ ຫຼັງຈາກປູກແລ້ວນຳອີກ.

ຈຳເປັນຕ້ອງໄດ້ສ້າງ “ປະເພດປ່າເປົ້າໝາຍ” ແລະ ສ້າງແຜນການຄຸ້ມຄອງ ແລະ ຈັດການປ່າໄມ້ ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ.

ປະເທດຍີ່ປຸ່ນມີປະຫວັດຄວາມເປັນມາຂອງປ່າໄມ້ໃນພາກພື້ນທີ່ສອດຄ່ອງກັບສະພາບອາກາດໃນທ້ອງຖິ່ນ ແລະ ມີລັກສະນະສະເພາະຫຼາຍ ປະການ ທັງຈຳນວນຕົ້ນໄມ້ທີ່ປູກ ແລະ ວິທີການຈັດການພູເຜົ່າປ່າດົງ.

(1) ຄວາມໜາແໜ້ນຂອງການປູກ

ໂດຍທົ່ວໄປແລ້ວ, ໃນການປູກປ່າໃນເມື່ອກ່ອນ, ຕົ້ນແປກ ໄດ້ຮັບການປູກໃນອັດຕາ 2.500 ຫາ 3.000 ຕົ້ນ ຕໍ່ ຕາແມັດ. ໄລຍະຫ່າງລະຫວ່າງ ເບ້ຍໄມ້ ແມ່ນ 2 ຫາ 1,8 ແມັດ. ໃຫ້ປູກຕົ້ນໄມ້ປະເພດທີ່ເຕີບໃຫຍ່ໄວຫ່າງກັນຂ້ອນຂ້າງຫຼາຍ (ເຊັ່ນ: ຕົ້ນຄາລາມັດຊຶ (ຕົ້ນແປກອີກຊະນິດໜຶ່ງ)) ແລະ ໃຫ້ປູກຕົ້ນໄມ້ປະເພດທີ່ເຕີບໃຫຍ່ຊ້າໃກ້ກັນ (ເຊັ່ນ: ຕົ້ນຮິໂນະກິ(ຕົ້ນແປກອີກຊະນິດໜຶ່ງ))

ສຳລັບຕົ້ນໄມ້ໃບກວ້າງ ຫາກປູກໃຫ້ຫ່າງກັນຫຼາຍເກີນໄປ ຮູບຮ່າງຂອງຕົ້ນໄມ້ກໍຈະບໍ່ງາມ ສະນັ້ນ ຈຶ່ງໃຫ້ປູກໃກ້ກັນ. ຢ່າງໃດກໍຕາມ, ຫາກຈຸດປະສົງຂອງການປູກ ແມ່ນ ເພື່ອຊິ່ນຊົມດອກໄມ້ ຫຼື ໝາກ ຫຼື ເພື່ອການເກັບກ່ຽວໝາກໄມ້ ຄວນປູກໃນໄລຍະທີ່ກວ້າງຂຶ້ນ ເພື່ອສ້າງຮູບຮ່າງ ຂອງຕົ້ນໄມ້ທີ່ມີງ່າໄມ້ຢຽດຍາວ (ຕາຕະລາງທີ 6-1)

(2) ການຈັດລຽງການປູກ

ວ່າກັນວ່າ ແນວຄວາມຄິດພື້ນຖານ ແມ່ນ ຕ້ອງຈັດລຽງເບ້ຍໄມ້ດ້ວຍໄລຍະຫ່າງເທົ່າກັນ ແລະ ເປັນຮູບສີ່ລ່ຽມຈະຕຸລັດ ຫຼື ຮູບສາມລ່ຽມ. ຢ່າງໃດກໍຕາມ, ຂໍແນະນຳໃຫ້ຕັດສິນໃຈເລືອກຈຸດປູກຕາມສະພາບດິນຂອງພື້ນທີ່ທີ່ຈະປູກ. ການເຮັດວຽກຈະງ່າຍຂຶ້ນ ແລະ ການຈະເລີນເຕີບ ໃຫຍ່ຂອງເບ້ຍໄມ້ກໍຈະດີກວ່າ ຫາກຫຼີກລ່ຽງສະຖານທີ່ທີ່ຂຸດຂຸມໄດ້ຍາກ ເຊັ່ນ: ດິນໜາກຄອມ, ຫີນ ແລະ ຮາກຕໍ່ໄມ້ ຕ່າງໆ. (ຮູບ 6-11, ຮູບ 6-12).

ປັດໃຈຂອງຄວາມສ່ຽງທີ່ລີ້ຊ້ອນໃນການເຮັດວຽກກ່ຽວກັບການປູກເບ້ຍໄມ້

ການເຮັດວຽກ ແມ່ນ ເລີ່ມຕົ້ນຢູ່ດ້ານລຸ່ມຂອງຄ້ອຍ ແລ້ວຄ່ອຍຍັບຂຶ້ນໄປດ້ານເທິງ ໂດຍການເນີ້ງຮ່າງກາຍໄປທາງໜ້າໃນຂະນະທີ່ປູກເບ້ຍໄມ້. ດັ່ງນັ້ນ, ຜູ້ອອກແຮງງານ ຈຶ່ງມີແນວໂນ້ມທີ່ເບິ່ງເຫັນສະພາບແວດລ້ອມໃນການເຮັດວຽກອ້ອມຂ້າງແຄບລົງ. ໃຫ້ເອົາໃຈໃສ່ກ່ຽວກັບສະພາບ ແວດລ້ອມຂອງຕົນເອງຢ່າງໃກ້ຊິດ.

ຕໍ່ໄປນີ້ ເປັນ ປັດໃຈສ່ຽງທີ່ອາດຈະເກີດຂຶ້ນໃນການເຮັດວຽກ:

· ໃຊ້ເລື່ອຍ ຫຼື ພ້າ ໃນການຕັດຮາກທີ່ໜາພາຍໃນຂຸມປູກ, ເຊິ່ງຕ້ອງໄດ້ລະມັດລະວັງໃນການດຶງຮາກອອກ ເພາະການໃຊ້ແຮງຫຼາຍເກີນໄປອາດ ເຮັດໃຫ້ຕົ້ນໄມ້ລົ້ມ, ລົ້ມລົງມາ ຫຼື ເກີດອັນຕະລາຍຈາກອຸບັດຕິເຫດທີ່ບໍ່ຄາດຄິດ.

· ເອົາກ້ອນຫີນທີ່ຂຸດອອກມາໄປວາງໄວ້ຢູ່ບ່ອນທີ່ໝັ້ນຄົງ ເພື່ອປ້ອງກັນບໍ່ໃຫ້ຫີນດັ່ງກ່າວຕົກລົງມາໃສ່.

· ໃນເວລາເຮັດວຽກຢູ່ພື້ນທີ່ທີ່ມີຄວາມລາດຊັນ ໃຫ້ເຮັດເຫຼົ່ານລາບ ແລະ ດຳເນີນວຽກງານດ້ວຍຄວາມລະມັດລະວັງ.



ຮູບທີ 6-9 ການປູກເບ້ຍເປົ່າ

ບໍ່ພຽງແຕ່ຮັບປະກັນວ່າ ເບ້ຍໄມ້ທີ່ປູກແລ້ວຈະຢັ່ງຮາກເທົ່ານັ້ນ, ແຕ່ຍັງຈະເຕີບໃຫຍ່ໄປໄດ້ຢ່າງດີ ໂດຍບໍ່ພ່າຍແພ້ໃນການຕໍ່ສູ້ກັບຕົ້ນຫຍ້າ ສິ່ງສຳຄັນ ແມ່ນ ຕ້ອງປູກຢ່າງລະມັດລະວັງທີ່ສຸດເທົ່າທີ່ຈະເປັນໄປໄດ້ ໂດຍຄຳນຶງເຖິງປະສິດຕິພາບນຳ.




ຮູບທີ 6-10 ການປູກເບ້ຍຖາດ

ເຮັດຂຸມເພື່ອປູກດ້ວຍເຄື່ອງມືທີ່ເອີ້ນວ່າ ເຄື່ອງເຈາະຮູ ແລ້ວລົງມືປູກ. ສາມາດຄາດຫວັງກ່ຽວກັບກັບການປັບປຸງປະສິດທິພາບຂອງວຽກງານການປູກ ດ້ວຍການນຳໃຊ້ອຸປະກອນພິເສດທີ່ກົງກັບສະພາບຂອງທ້ອງຖິ່ນ. ປະໂຫຍດອີກອັນຫນຶ່ງ ແມ່ນ ບໍ່ຈຳເປັນຕ້ອງມີທັກສະໃນການປູກ.


ຕາຕະລາງ 6-1 ຄາດຄະເນຄວາມໜາແໜ້ນຂອງການປູກ

	ປ່າທີ່ເປັນເປົ້າໝາຍ	ຈຳນວນພືດທີ່ປູກຕໍ່ເຮັກຕາ
ຕົ້ນແປກ	ປ່າໄມ້ທັງໝົດໃນບ່ອນດຽວ	
	ການຜະລິດວັດສະດຸທີ່ມີຄຸນນະພາບສູງໃນເຂດທີ່ມີຫິມະເລັກນ້ອຍ	4.000-5.000 ຕົ້ນ
	ມາດຕະຖານ	3.000 ຕົ້ນ
	ພື້ນທີ່ຫິມະ	ໜ້ອຍກວ່າ 3.000 ຕົ້ນ
ຕົ້ນແປກ	ປ່າໄມ້ທີ່ຕັດແບບຄັດເລືອກ	3 ຫາ 5 ຕົ້ນ ຕໍ່ ຕົ້ນໄມ້ຫຼັກ 1 ຕົ້ນ
ຕົ້ນໄມ້ໃບກວ້າງ (ຕົ້ນໄມ້ເນື້ອແຂງ)	ປ່າທີ່ຜະລິດໄມ້ (ຕົ້ນເຊໂຄວາ, ຕົ້ນໝາກກໍ່ ຕ່າງໆເປັນຕົ້ນ)	5.000-10.000 ຕົ້ນ
ຕົ້ນໄມ້ໃບກວ້າງ (ຕົ້ນໄມ້ເນື້ອແຂງ)	ປ່າໄມ້ເຫັດຫອມ (ຕົ້ນໝາກກໍ່ແຂ້ວເລື່ອຍ, ຕົ້ນໝາກກໍ່ໂຄນາລະ)	4.000 ຕົ້ນ

ເອກະສານ: ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ “ຄູ່ມືກ່ຽວກັບປ່າໄມ້ໃໝ່ “ການແນະນຳກ່ຽວກັບປ່າໄມ້” ”



ຮູບ 6-11 ໄລຍະຫ່າງລະຫວ່າງເບ້ຍໄມ້ (ການປູກສີ່ຫຼ່ຽມຈະຕຸລັດ, ການປູກສາມຫຼ່ຽມຈະຕຸລັດ)



ຮູບທີ 6-12 ບັນທຶກກ່ຽວກັບໄລຍະຫ່າງຂອງພື້ນທີ່ລາດຊັນ

ການປົກປັກຮັກສາປ່າໄມ້ ໃນພື້ນທີ່ປູກໄມ້

ສັດປ່າ ແລະ ຄວາມເສຍຫາຍທີ່ເກີດຈາກພວກມັນ

ໃນຊຸມປີມໍ່ໆມານີ້ ເຖິງແມ່ນວ່າພື້ນທີ່ຄວາມເສຍຫາຍຂອງປ່າທີ່ເກີດຈາກນົກ ແລະ ສັດປ່າຈະຫຼຸດລົງ ແຕ່ຄວາມເສຍຫາຍຕໍ່ປ່າທີ່ເກີດຈາກກວາງ ແລະ ສັດອື່ນໆ ຍັງຄົງຮ້າຍແຮງ ເນື່ອງຈາກການຂະຫຍາຍແຫ່ງທີ່ຢູ່ອາໄສ. ໃນປີ 2019 (ປີ Reiwa ທີ 1), ເນື້ອທີ່ປ່າໄມ້ທີ່ເກີດຄວາມເສຍຫາຍຈາກນົກ ແລະ ສັດປ່າ ມີປະມານ 4.900 ເຮັກຕາ ໃນທົ່ວປະເທດ, ໃນນັ້ນ ຄວາມເສຍຫາຍທີ່ເກີດຈາກກວາງ ກວມເອົາປະມານ 70% (ຮູບ 6-13).

ຄວາມເສຍຫາຍຕໍ່ປ່າໄມ້ທີ່ເກີດຈາກສັດປ່າ ສາມາດເພີ່ມຕົ້ນທຶນການຜະລິດປ່າໄມ້ ແລະ ຫຼຸດແຮງຈູງໃຈຂອງເຈົ້າຂອງປ່າໄມ້ ໃນການຈັດການຄຸ້ມຄອງປ່າໄມ້ຂອງຕົນ. ນອກຈາກນີ້, ຫາກກິ່ງກ້ານ, ໃບໄມ້ ແລະ ພືດພັນຊັ້ນລຸ່ມ ໄດ້ສູນຫາຍໄປຢ່າງຫຼວງຫຼາຍ ຍ້ອນຄວາມເສຍຫາຍຈາກສັດປ່າ, ມັນກໍມີຄວາມສ່ຽງທີ່ປະສິດຕິພາບໃນການເຮັດວຽກກ່ຽວກັບປະໂຫຍດສ່ວນລວມຂອງປ່າໄມ້ ອາດຈະໄດ້ຮັບຜົນກະທົບ ຍ້ອນໜ້າດິນເຈື່ອນ.

(1) ກວາງ

ກວາງ (ກວາງຍີ່ປຸ່ນ) ອາໄສຢູ່ໃນສະພາບແວດລ້ອມທີ່ຫຼາກຫຼາຍເຊັ່ນ: ປ່າໄມ້ ແລະ ທົ່ງຫຍ້າ, ເຊິ່ງມັນສາມາດສ້າງຄວາມເສຍຫາຍຕໍ່ທັງຕົ້ນໄມ້ນ້ອຍ ແລະ ຕົ້ນໄມ້ໃຫຍ່. ຄວາມເສຍຫາຍຕົ້ນຕໍ ແມ່ນ ການກິນໜໍ່, ງ່າ ແລະ ໃບໄມ້ຂອງຕົ້ນໄມ້ນ້ອຍ, ກິນເປືອກໄມ້, ການລອກເປືອກອອກດ້ວຍການເອົາເຂົາຂູດ ການຢຽດ ຫຼື ຫັກຕົ້ນໄມ້ໃນປ່າທີ່ປູກຂຶ້ນ. ມີຫຼາຍກໍລະນີທີ່ພວກມັນສົ່ງຜົນກະທົບຕໍ່ລະບົບນິເວດຂອງປ່າໄມ້ຢ່າງຮ້າຍແຮງ ເຊັ່ນ: ການກິນພືດຜັກທີ່ຢູ່ປ່າຈົນໝົດກ້ຽງ. ຄວາມເສຍຫາຍສາມາດເຫັນໄດ້ຢູ່ຕົ້ນໄມ້ໃບປ່າ ເຊັ່ນ : ຕົ້ນຮິໂນກິ (cypress: ໄຊເປດ), ຕົ້ນສຸງິ (cedar: ຊີດາດ), ຕົ້ນຄາລາມັດຊ໌ (larch: ລາດ), ແລະ ຕົ້ນໂດໂດະມາດຊຶດ (fir: ເຟີ)

(2) ໝູນາ

ໝູນາອາດເຮັດໃຫ້ຕົ້ນໄມ້ຕາຍໄດ້ ໂດຍການກິນເປືອກ ແລະ ຮາກໃຕ້ດິນ ເຊິ່ງໂດຍສະເພາະໝູນາເອໂຊ ໃນ ແຂວງຮັອກໄກໂດ ຈະເກີດອອກມາເປັນຈຳນວນຫຼາຍໃນທຸກໆສອງສາມປີ ເຊິ່ງມັນໄດ້ກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ.


(3) ໝີ

ໃນປະເທດຍີ່ປຸ່ນ, ມີ ໝີສີນ້ຳຕານ (Hokkaido) ແລະ ໝີສີດຳອາຊີ (ພາກໃຕ້ ຂອງ Honshu, ຍົກເວັ້ນ Kyushu). ຄວາມເສຍຫາຍຂອງປ່າໄມ້ ແມ່ນ ເກີດມາຈາກ “ໝີຮາກິ” ໃຊ້ເລັບ ແລະ ໃບໄມ້ ຂອງມັນໃນການລອກເປືອກໄມ້ອອກ. ເປືອກຈະຖືກຈີກອອກຈົນໝົດ ແລ້ວ ຕົ້ນໄມ້ກໍຈະຕາຍ. ຕົ້ນໄມ້ທີ່ໄດ້ຮັບຄວາມເສຍຫາຍເປັນຈຳນວນຫຼາຍ ແມ່ນ ຕົ້ນໄມ້ທີ່ມີເສັ້ນຜ່າສູນກາງຂະໜາດໃຫຍ່ເຊິ່ງເປັນໄມ້ທີ່ໃກ້ຈະຮອດລະດູເກັບກ່ຽວ ດັ່ງນັ້ນ ມັນຈຶ່ງມີແນວໂນ້ມໃນການສ້າງຄວາມເສຍຫາຍທາງເສດຖະກິດ. ນອກຈາກຕົ້ນໄມ້ທີ່ປູກໃນປ່າທີ່ປູກຂຶ້ນ ເຊັ່ນ: ຕົ້ນຊູງິ, ຕົ້ນຮິໂນກິ ຕົ້ນຄາລາມາດຊ໌ ແລ້ວ, ຍັງສາມາດພົບໄດ້ໃນຕົ້ນໄມ້ທຳມະ ຊາດ ເຊັ່ນ: ຕົ້ນແປກຊາວາລະ, ຕົ້ນແປກຮາບິ, ຕົ້ນແປກເຊມິ, ຕົ້ນແປກຊິລະແບະ, ຕົ້ນແປກຊິງະ ແລະ ຕົ້ນແປກໂຕຫິ.

ມາດຕະການຄວບຄຸມ ນົກ ແລະ ສັດປ່າ

ກຳລັງດຳເນີນການກ່ຽວກັບການຄຸ້ມຄອງປະຊາກອນ ເຊັ່ນ ການປ້ອງກັນຄວາມເສຍຫາຍ ແລະ ການຈັດການນົກ ແລະ ສັດປ່າທີ່ສ້າງຄວາມເສຍຫາຍໃຫ້ມີຈຳນວນທີ່ເໝາະສົມ ເພື່ອເປັນມາດຕະການຕໍ່ປ້ອງກັນເສຍຫາຍຕໍ່ປ່າໄມ້ທີ່ເກີດຈາກນົກ ແລະ ສັດປ່າ. ສຳລັບມາດຕະການປ້ອງກັນຄວາມເສຍຫາຍ, ນອກຈາກຈະການຕິດຕັ້ງຮົ້ວປ້ອງກັນເພື່ອປ້ອງກັນບໍ່ໃຫ້ກວາງ ແລະ ນົກປ່າ ເຂົ້າໄປໃນພື້ນທີ່ປູກຝັງ, ໃຊ້ຜ້າຄຸມກັນເປືອກໄມ້ ເພື່ອປ້ອງກັນຕົ້ນໄມ້ຈາກການລອກເປືອກ ແລະ ການຕິດຕັ້ງທໍ່ເພື່ອປ້ອງກັນຄວາມເສຍຫາຍຂອງເບ້ຍໄມ້ແລ້ວ, ຍັງມີການພັດທະນາເຕັກໂນໂລຊີໃໝ່ໆເພື່ອປ້ອງກັນນຳອີກດ້ວຍ. (ຮູບ 6-14).

ໃນດ້ານການຄຸ້ມຄອງປະຊາກອນ, ນອກຈາກ ປ່າໄມ້ແຫ່ງຊາດໃນແຕ່ລະທ້ອງຖິ່ນ, ອຳນາດການປົກຄອງທ້ອງຖິ່ນ, ອົງການຄວບຄຸມຄວາມເສຍຫາຍສັດປ່າຕ່າງໆໃນແຕ່ລະທ້ອງຖິ່ນ ຈະດຳເນີນການຈັບກວາງ ແລະ ດຳເນີນການຝຶກອົບຮົມນັກວິຊາການກ່ຽວກັບການຈັບກວາງ ຢ່າງເປັນລະບົບແລ້ວ, ຍັງມີການພັດທະນາກ່ຽວກັບເຕັກນິກໃນການຈັບໂດຍການນຳໃຊ້ກັບດັກ ແລະ ອາວຸດປືນ .



ໝາຍເຫດ 1: ຕົວເລກ ເປັນ ຍອດລວມຂອງປ່າສະຫງວນແຫ່ງຊາດ ແລະ ປ່າໄມ້ເອກະຊົນ ເຊິ່ງສັງລວມຕາມບົດລາຍງານຂອງກົມຄຸ້ມຄອງປ່າໄມ້ ແລະ ອົງການປົກຄອງແຂວງ.
2: ຄວາມເສຍຫາຍຕໍ່ປ່າໄມ້ ແລະ ສວນກ້າເບ້ຍໄມ້.
3: ຄວາມຄາດເຄື່ອນໃນຍອດລວມເນື່ອງມາຈາກການປັດເລກເສດ.

ຮູບທີ 6-13 ເນື້ອທີ່ປ່າເສຍຫາຍຈາກນົກ ແລະ ສັດປ່າ (2019 (ປີ Reiwa ທີ 1))

ທີ່ມາ: ອົງການປ່າໄມ້ "ປຶ້ມປົກຂາວປ່າໄມ້ ແລະ ປ່າໄມ້ປີ 2020"
(ກວດກາໂດຍ ພະແນກຄົ້ນຄ້ວາ ແລະ ຊີ້ນຳອົງການປ່າໄມ້ / ພະແນກປະຕິບັດງານ)

ຕົວຢ່າງວິທີການປ້ອງກັນຄວາມເສຍຫາຍຕໍ່ປ່າທີ່ເກີດຈາກນົກ ແລະສັດປ່າ.

ຄວາມເສຍຫາຍຂອງປ່າໄມ້ທີ່ເກີດຈາກນົກ ແລະ ສັດປ່າ ບໍ່ພຽງແຕ່ເຮັດໃຫ້ມີການສູນເສຍຊັບພະຍາກອນປ່າໄມ້ເທົ່ານັ້ນ, ແຕ່ຍັງເຮັດໃຫ້ການປະຕິບັດໜ້າທີ່ສາທາລະນະຂອງປ່າໄມ້ຫຼຸດລົງ ແລະ ການສູນເສຍແຮງຈູງໃຈຂອງເຈົ້າຂອງປ່າໄມ້ໃນການຄຸ້ມຄອງປ່າໄມ້ຂອງເຂົາເຈົ້ານຳອີກ. ມາດຕະການຖືກນຳມາປະຕິບັດຂຶ້ນຢູ່ໃນລະບົບນິເວດຂອງສັດ ເຊັ່ນ: ການສິດສານຂັບໄລ່(ຢາຕ້ານເຊື້ອ) ແລະ ການຕິດຕັ້ງຮົ້ວປ້ອງກັນຕ່າງໆເປັນຕົ້ນ.

ພະຍາດ ແລະ ຕົ້ນໄມ້

ພະຍາດຕົ້ນໄມ້ສ່ວນຫຼາຍ ແມ່ນ ເກີດມາຈາກເຊື້ອລາທີ່ເປັນເສັ້ນໃຍ (ຕະກູນຂອງເຊື້ອລາ ແລະ ເຫັດ) ແຫ່ງເພາະພັນນີ້ສາມາດສັງເກດໄດ້ແມ່ນແຕ່ໃນຕົ້ນໄມ້ທີ່ແຂງແຮງ ແຕ່ຫາກບໍ່ມີຫຍັງຜິດພາດ ຄວາມໜາແໜ້ນຂອງເຊື້ອພະຍາດກໍຈະເພີ່ມຂຶ້ນ ແລ້ວກໍຈະເກີດມີປະກົດການທີ່ເຮັດໃຫ້ຕົ້ນໄມ້ຕາຍເພີ່ມຂຶ້ນເລື້ອຍໆ ແລ້ວກໍຈະສົ່ງຜົນຕໍ່ການຈະເລີນເຕີບໂຕຂອງປ່າໄມ້ໂດຍລວມ.

ການເກີດພະຍາດ ສາມາດຄິດໄດ້ດ້ວຍເງື່ອນໄຂຕໍ່ໄປນີ້:

(1) ພາຍໃຕ້ສະພາບດິນຟ້າອາກາດ ເຊັ່ນ: ຝົນຝອຍ, ພູມຕ້ານທານຂອງຕົ້ນໄມ້ຈະອ່ອນແອລົງ.
(2) ສະພາບດິນບໍ່ເໝາະສົມກັບປະເພດຂອງຕົ້ນໄມ້ ຫຼື ປະເພດຕົ້ນໄມ້ທົ່ວໄປ.
(3) ມີແມວໂນ້ມທີ່ຈະເກີດຄວາມເຄັ່ງຄຽດຕ່າງໆ ເຊັ່ນ: ສະຖານທີ່ທີ່ມີຄວາມຈືັ້ນຫຼາຍເກີນໄປ ຫຼື ໄດ້ຮັບຜົນກະທົບຈາກລົມໄດ້ງ່າຍ.
(4) ຄວາມໜາແໜ້ນຂອງເຊື້ອໂລກສູງຜິດປົກກະຕິ ເນື່ອງຈາກການປ່ຽນແປງຂອງສະພາບອາກາດ,.
(5) ຄວາມເສຍຫາຍທາງກາຍະພາບເຊິ່ງເກີດຂຶ້ນຢູ່ລຳຕົ້ນຂອງຕົ້ນໄມ້ ອັນເນື່ອງມາຈາກພາຍຸ ຫຼື ຄວາມເສຍຫາຍຈາກສັດ ຕ່າງໆເປັນຕົ້ນ.

ຮູບທີ 6-14 ຕົວຢ່າງວິທີການປ້ອງກັນຄວາມເສຍຫາຍຂອງປ່າໄມ້ທີ່ເກີດຈາກນົກ ແລະ ສັດ

ແຫຼ່ງຂໍ້ມູນ: ເວັບໄຊ້ຫ້ອງການປ່າໄມ້ "ຕົວຢ່າງວິທີການປ້ອງກັນຄວາມເສຍຫາຍຂອງປ່າໄມ້ທີ່ເກີດຈາກນົກ ແລະ ສັດ"

(6) ເຊື້ອພະຍາດທີ່ບໍ່ມີຢູ່ໃນປະເທດຍີ່ປຸ່ນເຊັ່ງເຂົ້າມາຈາກຕ່າງປະເທດ.

ພະຍາດຕົ້ນຕໍທີ່ເກີດຈາກເຊື້ອພະຍາດບາງຊະນິດ ແມ່ນ ໄດ້ລະບຸໄວ້ດ້ານລຸ່ມນີ້ (ຮູບ 6-15, ຕາຕະລາງ 6-2). ເມື່ອງຈາກປ່າໄມ້ທີ່ປູກຂຶ້ນ ດ້ອງອາໄສໄລຍະເວລາໃນການຈະເລີນເຕີບໂຕທີ່ຍາວນານ, ດັ່ງນັ້ນຈຶ່ງຕ້ອງໄດ້ຂໍຄຳແນະນຳຈາກຜູ້ຊ່ຽວຊານໃນທ້ອງຖິ່ນ ໄປຈົນເຖິງການເບິ່ງ ແລະ ຮັບຟັງກ່ຽວກັບການລະບາດຂອງພະຍາດຢູ່ອ້ອມຂ້າງ ກ່ອນທີ່ຈະປູກຕົ້ນໄມ້. ເມື່ອງຈາກວ່າປັດໃຈທາງສະພາບອາກາດໃນພື້ນທີ່ປູກ ມັກ ຈະມີບົດບາດສຳຄັນ, ດັ່ງນັ້ນ ຈຶ່ງເປັນຄວາມຄິດທີ່ດີທີ່ຈະອ້າງອີງເຖິງແນວຄວາມຄິດເກົ່າໆທີ່ວ່າ “ຕົ້ນໄມ້ທີ່ເໝາະສົມ ໃນສະຖານທີ່ທີ່ເໝາະສົມ”

ສັດຕູພືດ

ແມງໄມ້ ມີບົດບາດສຳຄັນໃນລະບົບນິເວດປ່າໄມ້. ຢ່າງໃດກໍຕາມ, ນັບຕັ້ງແຕ່ລະບົບນິເວດຂອງປ່າໄມ້ເລີ່ມເສຍຫາຍຍ້ອນໄພພິບັດທາງດິນ ຟ້າອາກາດທີ່ບໍ່ຄາດຄິດ ຫຼື ການລົບກວນຂອງມະນຸດ, ແມງໄມ້ບາງປະເພດ ກໍສາມາດເກີດຂຶ້ນໄດ້ເປັນຈຳນວນຫຼວງຫຼາຍ ແລ້ວກໍເຮັດໃຫ້ເກີດ ມີຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ປ່າໄມ້ ແລະ ວຽກງານປ່າໄມ້. ນອກຈາກນັ້ນ, ການບຸກລຸກຂອງສັດຕູພືດຈາກຕ່າງປະເທດ ກໍສ້າງຄວາມເສຍ ຫາຍຕໍ່ຄວາມສົມດູນຂອງລະບົບຕ່ອງໂສ້ອາຫານນຳອີກດ້ວຍ. ນອກຈາກແມງໄມ້ແລ້ວ, ຍັງມີຕົວຢ່າງຂອງຄວາມເສຍຫາຍຂອງປ່າໄມ້ທີ່ເກີດ ຈາກພະຍາດປະລະສິດຕົ້ນແປກ (ພະຍາດປະລະສິດ ຍາວປະມານ 1 ມມ) ທີ່ເຮັດໃຫ້ເກີດຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຕົ້ນແປກ.

ຢູ່ໃນພື້ນທີ່ຂອງການປູກປ່າ ເຊັ່ນ: ຕົ້ນຊຸກິ ແລະ ຕົ້ນຮິໂນກິ, ຫາກເກີດມີສັດຕູພືດທີ່ເຮັດໃຫ້ອົງປະກອບຂອງຕົ້ນໄມ້ເສື່ອມໂຊມ ມັນກໍຈະສົ່ງ ຜົນອັນໃຫຍ່ຫຼວງຕໍ່ການບໍລິຫານ. ແມງໄມ້ທີ່ຄາບຢູ່ກ້ອງເປືອກໄມ້ເຊັ່ງສ້າງຄວາມເສຍຫາຍໃຫ້ແກ່ໄມ້ ແລະ ສັດຕູພືດທີ່ເປັນກາຝາກຢູ່ຕົ້ນໄມ້ ເຊັ່ງເຮັດໃຫ້ອົງປະກອບຂອງຕົ້ນໄມ້ເສື່ອມໂຊມ ແມ່ນ ມີຕົວຢ່າງດັ່ງຕໍ່ໄປນີ້: (ຕາຕະລາງ 6-3, ຕາຕະລາງ 6-4).

(1) ໂຕດ້ວງສີດາ

ອາຍຸທີ່ຕົ້ນໄມ້ໄດ້ຮັບຜົນກະທົບ ແມ່ນ ຊ່ວງຕົ້ນ ໂດຍອາຍຸສູງສຸດແມ່ນ 5 ປີ ແລະ 10 ຫາ 15 ປີ, ແລ້ວຈະຢຸດຫຼັງຈາກ 20 ປີ. ມັນຈະກິນຢູ່ ກ້ອງເປືອກ, ສົ່ງຜົນໃຫ້ຕົ້ນໄມ້ເນົ່າເປື່ອຍ ແລະ ໄມ້ປ່ຽນສີ. ຕົ້ນໄມ້ທີ່ໄດ້ຮັບຄວາມເສຍຫາຍຈະບໍ່ໄດ້ຖືກຊື້ຂາຍໃນລາຄາທົ່ວໄປ ເຖິງຈະຢູ່ຊ່ວງຕັດ ໄມ້ກໍຕາມ. ຄວາມເສຍຫາຍ ສາມາດປ້ອງກັນໄດ້ ໂດຍການກຳຈັດຕົ້ນໄມ້ທີ່ເສຍຫາຍອອກ ໃນລະຫວ່າງການຖາກຖາງ ແລະ ຕັດຕອນ ຫຼື ການ ລອກເປືອກໄມ້ອອກ ແລ້ວກຳຈັດສ່ວນທີ່ຖືກວາງໄຂ່. ນອກຈາກນີ້ “ວິທີການພັນ” ກໍເປັນອີກວິທີໜຶ່ງທີ່ມີປະສິດຕິພາບ, ໂດຍຈະສີດສານເຄ ມີໃສ່ລຳຕົ້ນຂອງຕົ້ນໄມ້ ຫຼື ໃສ່ສາຍພັນອ້ອມລຳຕົ້ນຂອງຕົ້ນໄມ້ເພື່ອດັກຈັບແມງໄມ້ໂຕທີ່ໃຫຍ່ເຕັມໄວ.

(2) ດ້ວງເຂົ້າກວາງ

ຕັ້ງແຕ່ໃດເປັນຕົ້ນມາ ມັນຖືກເອີ້ນວ່າ “ດ້ວງດຳ” ປ່າໄມ້ຈະໄດ້ຮັບຜົນກະທົບຕັ້ງແຕ່ ອາຍຸປະມານ 9 ປີ, ແລະ ເມື່ອໂຕອ່ອນຂອງດ້ວງເຂົ້າ ກວາງເຂົ້າໄປຢູ່ໃນລຳຂອງຕົ້ນໄມ້, ມັນຈະສົ່ງຜົນກະທົບຕໍ່ຮູ (pore) ຂອງຕົ້ນໄມ້ໂດຍກົງ ເຊັ່ງຈະເຮັດໃຫ້ເກີດມີການປ່ຽນສີ ແລະ ຮອຍໂດກກະ ຈັດກະຈາຍ ແລ້ວກໍຈະເຮັດໃຫ້ລາຄາຂອງໄມ້ຫຼຸດລົງຢ່າງຮ້າຍແຮງ. ການຕັດງ່າໄມ້ທີ່ຕິດກັບລຳຕົ້ນ ຫຼື ງ່າໄມ້ທີ່ຫັກລົງມາ ເພື່ອກວດເບິ່ງທາງ ຫຼົບໜີຂອງແມງໄມ້ທີ່ໃຫຍ່ເຕັມໄວ ສາມາດບອກໄດ້ວ່າ ຕົ້ນໄມ້ດັ່ງກ່າວ ມີຄວາມເສຍຫາຍຫຼືບໍ່. ສຳລັບຕົ້ນຮິໂນກິ ຈະສາມາດສັງເກດໄດ້ຈາກ ບໍລິເວນພືດກາຝາກຂອງງ່າທີ່ຕາຍແລ້ວ ຈະມີລັກສະນະໂພງຂຶ້ນເລັກໜ້ອຍ. ສາມາດປ້ອງກັນຄວາມເສຍຫາຍໄດ້ ໂດຍການຕັດແຕ່ງງ່າໄມ້ທີ່ ຕາຍແລ້ວ ຫຼື ງ່າໄມ້ທີ່ຍັງມີຊີວິດ.

(3) ແມງກະເບື້ອ(ດ້ວງ)ຮິໂນກິ

ດ້ວງດັ່ງກ່າວນີ້ ແມ່ນ ຖືກຕັ້ງຊື່ ຕາມຕົ້ນຮິໂນກິ, ເຊັ່ງເປັນຄວາມເສຍຫາຍທີ່ສາມາດເຫັນໄດ້ຢູ່ຕົ້ນຊຸງີທີ່ມີອາຍຸປະມານ 7 ປີ. ຕົວອ່ອນຂອງ ແມງກະເບື້ອຮິໂນກິ ຈະເຄື່ອນຍ້າຍເປັນຮູບສີ່ຫຼ່ຽມມົນໄປຕາມເປືອກຊັ້ນໃນ, ການປ່ຽນສີ ແລະ ການເນົ່າເປື່ອຍຢູ່ໃນເນື້ອໄມ້ຈະສະສົມຫຼາຍຂຶ້ນ, ເຊັ່ງຈະປາກົດຢູ່ພື້ນຜິວລາຍໄມ້ ແລະ ເຮັດໃຫ້ມູນຄ່າຂອງໄມ້ຫຼຸດລົງ. ຂີ້ແມງໄມ້ ແລະ ນ້ຳມັນດິນເກາະຕິດກັນເປັນຈຸ້ມຢູ່ໃນບໍລິເວນທີ່ເສຍຫາຍ ສະນັ້ນ ຈຶ່ງສາມາດກວດພົບຕົ້ນໄມ້ທີ່ເສຍຫາຍຈາກພາຍນອກໄດ້ ເຊັ່ງສາມາດຫຼຸດຄວາມເສຍຫາຍໂດຍການເອົາມັນອອກ ໃນຕອນຖາກຖາງ ແລະ ຕັດຕອນໄດ້.



ໂລກໃບໄໝ້ສີດຳ
ໃບເກົ່າເລີ່ມແຫ່ວແຫ້ງ. ເຫັດສີດຳນ້ອຍໆ
ກໍ່ໂຕຂຶ້ນເທິງໃບໄມ້ທີ່ຕາຍແລ້ວ.
ມັກເກີດຂຶ້ນໃນພື້ນທີ່ສູງທີ່ມີອາກາດໜາວ.



ພະຍາດນ້ຳມັນໄຫຼ
ນ້ຳມັນດິນໄຫຼອອກຈາກລຳຕົ້ນ ແລະ
ລຳຕົ້ນປ່ຽນຮູບ.



ໂລກໃບໄໝ້ຂອງຕົ້ນຊຸງ
ຫຼັກໆເກີດຂຶ້ນໃນເຮືອນເພາະຊຳ. ຫາກປູກເບ້ຍໄມ້ທີ່ປ່ວຍເປັນພະຍາດຢູ່ເທິງພູ
ກໍຈະກາຍເປັນສາເຫດທີ່ເຮັດໃຫ້ລຳຕົ້ນເນົ່າ ແລະ ປ່ຽນຮູບ.



ໂລກນາລາທາເກະ
ເກີດຂຶ້ນກັບຕົ້ນໄມ້ຊະນິດຕ່າງໆ ລວມທັງຕົ້ນແປກ ແລະ
ຕົ້ນໃບກວ້າງ. ຕົ້ນຮີໂນກີທີ່ຍັງອ່ອນຈະຕິດເຊື້ອງ່າຍ.
ນ້ຳມັນດິນໄຫຼອອກຈາກກົກຂອງລຳຕົ້ນ ແລະ ບາງຄັ້ງກໍ
ມີເຫັດເກີດຂຶ້ນເຊິ່ງເປັນເຫດທີ່ກໍໃຫ້ເກີດໂລກ.



ເມື່ອຕິດເຊື້ອໂລກນາລາຕາເກະ, ເຊື້ອລາກໍຈະກໍ່ໂຕຢູ່ກ້ອງເປືອກໄມ້
ແລະ ພັດທະນາໄປເປັນລັກສະນະຮູບຊົງວີ. ເຊື້ອລາມີລັກສະນະ
ເປັນສີນ້ຳຕານດຳ ແລະ ກໍ່ຕົວລວມກັນເປັນເສັ້ນໄຍ
ຄ້າຍເສັ້ນລວດ.



ໂລກຮາກ ຫຼື ຫົວເນົ່າ ຂອງຕົ້ນສົນ
ສາມາດຮູ້ໄດ້ວ່າຕິດພະຍາດ ຕ້ອງໄດ້ຕັດ ຫຼື ປ້ຳຕົ້ນໄມ້. ແມ່ນແຕ່ຕົ້ນຊຸງ
ແລະ ຕົ້ນຮີໂນກີ ກໍສາມາດປ່ວຍເປັນພະຍາດໄດ້ ໃນພື້ນທີ່ທີ່ມີຂຸມລຸບ.

ຮູບທີ 6-15 ປະເພດຂອງພະຍາດຫຼັກໆ

ແຫຼ່ງຂໍ້ມູນ: "ຄູ່ມືກ່ຽວກັບປ່າໄມ້ໃໝ່ "ການແນະນຳກ່ຽວກັບປ່າໄມ້" ດັດແກ້ໂດຍສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ຕາຕະລາງ 6-2 ພະຍາດພູມແພ້ທີ່ເກີດຈາກການຕິດເຊື້ອ ແລະ ມາດຕະການປ້ອງກັນ

ຊື່ພະຍາດ	ອາການ	ສາເຫດຂອງການເກີດ ຕ່າງໆ	ມາດຕະການປ້ອງກັນ	ໝາຍເຫດ
ໂລກໃບ ແຫ່ວແຫ້ງ	ໃບໄມ້ແຫ່ວແຫ້ງ, ແໜງ ແຫ່ວ	ການປູກເບ້ຍໄມ້ທີ່ມີພະຍາດໃນພື້ນທີ່ ການປູກປ່າ	ການສົ່ງເສີມການຕັດພຸ້ມໄມ້	ສ່ວນໃຫຍ ແມ່ນ ທົ່ງ ເບ້ຍໄມ້
ພະຍາດເນົ່າ ເປື່ອຍ	ການຜິດປົກກະຕິຂອງ ລຳຕົ້ນ	ການປູກເບ້ຍໄມ້ທີ່ເປັນພະຍາດ	ການຈັບ ແລະ ຈູດຕັ້ງແຕ່ຕອນທີ່ຍັງອ່ອນ	
ພະຍາດໃບໄມ້ດ	ໃບໄມ້ແຫ່ວແຫ້ງ	ຄວາມແອອັດຂອງຕົ້ນໄມ້, ການປູກ ເບ້ຍໄມ້ຢູ່ບ່ອນສູງ	ການຄັດເລືອກພື້ນທີ່ປູກ, ການສົ່ງເສີມການຕັດ ຕອນ ແລະ ຕັດແຕ່ງກິ່ງ	
ພະຍາດໃບໄໝ້ ກ້ານກິ່ງດຳ	ງ່າແຫ່ວແຫ້ງ	ຄວາມແອອັດຂອງຕົ້ນໄມ້	ການສົ່ງເສີມການຕັດຕອນ ແລະ ຕັດແຕ່ງກິ່ງ	
ພະຍາດໃບໄມ້ ແລະ ງ່າຄ້ຳ	ງ່າແຫ່ວແຫ້ງ, ລຳຕົ້ນປ່ຽນ ຮູບ, ໄມ້ປ່ຽນສີ, ຕົ້ນແຫ່ວ ແຫ້ງ	ການແຫ້ງຂອງດິນປ່າ	ການກຳຈັດງ່າໄມ້ທີ່ເປັນພະຍາດ ແລະ ບຳລຸງຮັກສາ ຕົ້ນໄມ້ແຄມປ່າ	ສ່ວນຫຼາຍ ແມ່ນ ພາກ ຕາເວັນຕົກ ຂອງຍີ່ປຸ່ນ

ແຫຼ່ງຂໍ້ມູນ: “ຄູ່ມືກ່ຽວກັບປ່າໄມ້ໃໝ່ “ການແນະນຳກ່ຽວກັບປ່າໄມ້” ດັດແກ້ໂດຍສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ຕາຕະລາງ 6-3 ສັດຕູພືດຕົ້ນຕໍ

ສັດຕູພືດທີ່ເປັນກາຝາກຢູ່ໄມ້ທ່ອນ ແລະ ຕົ້ນໄມ້ທີ່ຕາຍແລ້ວ	ສັດຕູພືດທີ່ເປັນກາຝາກຢູ່ຕົ້ນໄມ້ຢືນຕົ້ນ
ແມງຍາວ, ແມງເປືອກ, ແມງສາລີ, ແມງບານ, ແມງສີເຫຼືອງ, ແມງປໍ, ແມງເຈຍ, ແມງສາລີ, ແມງຫີນ	ໂຕດ້ວງສີດາ, ດ້ວງເຂົ້າກວາງ, ແມງງອດຍີ່ປຸ່ນ, ແມງເຕົ່າຍີ່ປຸ່ນ, ແມງເຈຍ, ແມງ ສີເຫຼືອງ, ແມງຍາວຮອນ

ແຫຼ່ງຂໍ້ມູນ: “ຄູ່ມືກ່ຽວກັບປ່າໄມ້ໃໝ່ “ການແນະນຳກ່ຽວກັບປ່າໄມ້” ດັດແກ້ໂດຍສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ຕາຕະລາງ 6-4 ຄຸນລັກສະນະ ຂອງສັດຕູພືດຂອງຕົ້ນຊຶງ ແລະ ຕົ້ນຮິໂນກິ 4 ປະເພດຕົ້ນຕໍ

	ແມງສີດາ	ດ້ວງເຂົ້າກວາງ	ແມງກະເບື້ອຢິບຊິຮິໂນກິ	ແມງບົ່ວ
ການແຜ່ກະຈາຍ	Honshu, Shikoku, ພາກເໜືອຂອງ Kyushu	Honshu, Shikoku, ພາກໃຕ້ ຂອງ Hokkaido	Honshu, Shikoku, Kyushu, ພາກໃຕ້ຂອງ Hokkaido	Kyushu
ພັນໄມ້ທີ່ສ້າງຄວາມ ເສຍຫາຍ	ຕົ້ນຊຶງ, ຕົ້ນຮິໂນກິ	ຕົ້ນຊຶງ, ຕົ້ນຮິໂນກິ	ຕົ້ນຊຶງ, ຕົ້ນຮິໂນກິ	ຕົ້ນຊຶງ
ອາຍຸຂອງຕົ້ນໄມ້ທີ່ ສ້າງຄວາມເສຍຫາຍ	5-10 ປີ	15 ປີໃນເຂດອົບອຸ່ນ, 20 ປີໃນເຂດ ໜາວເຢັນ		10-15 ປີ
ຄວາມເສຍຫາຍ ພາຍໃນ	ເນື້ອໄມ້ (ຊັ້ນ Cambium), ຮອຍ ຫ້ຽນຢູ່ພາກສ່ວນໄມ້, ການໂດກ ແລະ ການປ່ຽນສີຂອງໄມ້	ຮອຍຫ້ຽນຢູ່ພາກສ່ວນໄມ້, ການ ໂດກ ແລະ ການປ່ຽນສີຂອງໄມ້	ຮອຍຫ້ຽນຢູ່ພາກສ່ວນໄມ້, ເປືອກ ຊັ້ນໃນ, ເນື້ອໄມ້, ການໂດກ ແລະ ການປ່ຽນສີຂອງໄມ້	ຈຸດໄມ້ຢູ່ພື້ນຜິວໄມ້
ຄົ້ນພົບ ຄວາມເສຍຫາຍ	ການຮົ່ວໄຫຼຂອງຢາງ, ເສັ້ນອອກ ຕາມລວງນອນ, ຮັງເຜິ້ງ	ຮູທີ່ໃຊ້ໃນການໜີຂອງໄມ້ໄມ້ໂຕໃຫຍ່ ເຕັມໄວ, Tobikusare	ການຮົ່ວໄຫຼຂອງຢາງ, ຂີ້ແມງໄມ້, ຕຸ່ມຢູ່ຕາມລຳຕົ້ນ	ຮູບແບບຜິວໜັງຂອງເປືອກພາຍໃນ
ວົງຈອນຊີວິດ	1 ປີ 1 ລຸ້ນ(ແມງໄມ້ໃຫຍ່ເຕັມໄວໃນ ລະດູໜາວ)	ອາຍຸ 2 ຫາ 5 ປີ 1ລຸ້ນ (ແມງໄມ້ ໃຫຍ່ເຕັມໄວໃນລະດູໜາວ)	1 ປີ 1 ລຸ້ນ(ຕົວອ່ອນໃນລະດູໜາວ)	1 ປີ 1 ຫາ 2 ລຸ້ນ (ຕົວອ່ອນໃນລະ ດູໜາວ)
ບ່ອນວາງໄຂ່	ຊ່ອງຫວ່າງຢູ່ໃນເປືອກຂອງລຳຕົ້ນ	ງ່າທີ່ຕາຍແລ້ວ	ຢູ່ເທິງງ່າຂອງລຳຕົ້ນ	ມີຮອຍແຕກຢູ່ເປືອກໃກ້ກັບລຳຕົ້ນ ຂອງຕົ້ນໄມ້
ການດຳເນີນ ການຄວບຄຸມ ສັດຕູພືດ	ການຕັດຕອນ, ລອກອອກຂອງ ເປືອກ	ການຕັດແຕ່ງງ່າໄມ້	ການຕັດແຕ່ງງ່າໄມ້	ການຕັດຕອນ

ແຫຼ່ງຂໍ້ມູນ: “ຄູ່ມືກ່ຽວກັບປ່າໄມ້ໃໝ່ “ການແນະນຳກ່ຽວກັບປ່າໄມ້” ດັດແກ້ໂດຍສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ການປູກປ່າ

No.07 ວຽກງານການປູກປ່າທີ່ປອດໄພ

ດປະສົງ ຂອງການບັນລະຍາຍ

ຮຽນຮູ້ວິທີການປະຕິບັດວຽກງານພື້ນຖານຂອງການປູກປ່າຢ່າງປອດໄພ.

ຄຳສຳຄັນ

ການກະກຽມໜ້າດິນ, ກ່ຽວ, ພ້າ, ເລື່ອຍ, ກອງງ່າໄມ້, ເບ້ຍໄມ້, ການປູກ, ການປູກເບ້ຍໄມ້, ການປ້ອງກັນຄວາມເສຍຫາຍ ຈາກສັດ, ສິ່ງມີຊີວິດທີ່ອັນຕະລາຍ, ສັດ ແລະ ພືດທີ່ອັນຕະລາຍ, ມາດຕະການກຳຈັດກວາງ, ເຜິ້ງ

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

<ກວດກາຄວາມປອດໄພກ່ອນເຮັດວຽກ ແລະ ຮັບປະກັນຄວາມປອດໄພໃນການເຮັດວຽກ - ຫຼີກຫຼ່ຽງອັນຕະລາຍ>

<ກ່ອນຈະເລີ່ມຕົ້ນການຝຶກອົບຮົມ, ໃຫ້ປຶກສາຫາລືກັນຢ່າງລະອຽດ ກ່ຽວກັບຂັ້ນຕອນການເຮັດວຽກ, ການຈັດສັນບຸກ ຄະລາກອນ, ວິທີການສື່ສານ ເຊັ່ນ: ການໃຫ້ສັນຍານ ແລະ ບັນຫາອື່ນໆທີ່ຈຳເປັນສຳລັບການເຮັດວຽກ (ລະບຸດ້ານລຸ່ມ)>

- ຫ້າມເຮັດວຽກເທິງລຸ່ມ
- ຫ້າມເຮັດວຽກໃກ້ກັນ
- ການປັບປຸງສະພາບແວດລ້ອມບ່ອນເຮັດວຽກ
- ການຍ່າງຢ່າງປອດໄພໃນພື້ນທີ່ເຮັດວຽກ (ລະມັດລະວັງບາດກ້າວຍ່າງ, ລະມັດລະວັງໃນເວລາຖືເຄື່ອງມືຊ່າງທີ່ ເປັນໃບມີດ, ໄລຍະໃນການຍ່າງ)

<ໃນການດຳເນີນການຝຶກອົບຮົມພາກປະຕິບັດ, ຈະຕ້ອງໄດ້ລະມັດລະວັງສິ່ງຕໍ່ໄປນີ້>

- ຢ່າເຂົ້າໃກ້ພື້ນທີ່ອັນຕະລາຍ ເຊັ່ນ: ພື້ນທີ່ຫີນເຈື່ອນ ເປັນຕົ້ນ.
- ໃຫ້ລະວັງຟ້າຜ່າ, ໂລກລົມແດດ ຕ່າງໆທີ່ເກີດຂຶ້ນຈາກສະພາບອາກາດ ແລະ ດຳເນີນ (ມາດຕະການ) ການປ້ອງກັນ.
- ການມີຢູ່ຂອງສັດ ແລະ ພືດທີ່ເປັນອັນຕະລາຍ ເຊັ່ນ: ໝີ, ເຜິ້ງ, ງູ, ໂຕເຫັບ, ພືດປະເພດຢາງຮັກທີ່ສາມາດພົບ ຢູ່ໃນພື້ນທີ່ເຮັດວຽກ ແລະ ການປ້ອງກັນພວກມັນ (ວິທີການຮັບມື)

ສຳລັບວຽກງານມ້ທີ່ປອດໄພ

ວຽກງານການປູກປ່າ ເປັນວຽກງານທີ່ຕ້ອງໄດ້ປະຕິບັດຢູ່ສະຖານທີ່ທີ່ມີຄວາມລາດຊັນເປັນສ່ວນໃຫຍ່ ແລະ ເຮັດວຽກດ້ວຍການຍ່າງເປັນຫຼັກ. ດັ່ງນັ້ນ, ວຽກງານຈຶ່ງແຕກຕ່າງຈາກການເຮັດວຽກຢູ່ໂຮງງານ, ສິ່ງທີ່ຕ້ອງໃຊ້ໃນວຽກງານກໍມີການປ່ຽນແປງເປັນປະຈຳ ແລະ ອຸປະກອນເຄື່ອງຈັກຕ່າງໆກໍມີຄວາມແຕກຕ່າງໂດຍຂຶ້ນກັບສະຖານທີ່ ເຊິ່ງມີຄວາມຊັບຊ້ອນ ແລະ ແຕກຕ່າງເປັນຢ່າງຍິ່ງ. ໃນເວລາເຮັດວຽກທີ່ຢູ່ໃນສະພາບແບບນີ້ ສິ່ງສຳຄັນທີ່ສຸດ ແມ່ນ ຈະຕ້ອງພັດທະນາຄວາມສາມາດ ໄປພ້ອມກັບການຈະເຮັດແນວໃດເພື່ອຈະສາມາດປະຕິບັດວຽກງານໄດ້ຢ່າງປອດໄພ. ຢູ່ນີ້ຈະກ່າວເຖິງຫົວຂໍ້ທີ່ຕ້ອງໄດ້ເອົາໃຈໃສ່ ເຊິ່ງເປັນພື້ນຖານໃນການປະຕິບັດວຽກງານການປູກປ່າ.

ເຄື່ອງນຸ່ງຫົ່ມ

ບາດກ້າວທີໜຶ່ງໃນການປະຕິບັດວຽກງານທີ່ປອດໄພ ແມ່ນ ເລີ່ມຈາກການສວມໃສ່ຊຸດເຮັດວຽກ ແລະ ອຸປະກອນປ້ອງກັນຢ່າງຖືກຕ້ອງ. ສຳລັບຊຸດເຮັດວຽກ ສິ່ງສຳຄັນ ແມ່ນ ຈະຕ້ອງສວມໃສ່ຊຸດທີ່ເບົາ, ສະອາດ ແລະ ປອດໄພ. ນອກຈາກນີ້ ການສວມໃສ່ອຸປະກອນປ້ອງກັນ ແມ່ນ ເປັນການຮັກສາຮ່າງກາຍຈາກອຸບັດຕິເຫດ ທີ່ບໍ່ຄາດຄິດ. ຄວນຈະເລືອກອຸປະກອນທີ່ກົງກັບມາດຕະຖານ, ໂຄງສ້າງມີຄວາມແຂງແຮງ, ນຳໃຊ້ງ່າຍ ແລະ ນຳໃຊ້ໃຫ້ຖືກຕ້ອງ.

ສວມໃສ່ເສື້ອແຂນຍາວທີ່ມີແຂບແຂນເສື້ອທີ່ດີ ແລະ ໃສ່ໂສ້ງຂາຍາວທີ່ມີແຂບຕີນໂສ້ງທີ່ພໍດີ.

ສຳລັບຊຸດເຮັດວຽກ ມາສວມໃສ່ເສື້ອແຂນຍາວທີ່ມີແຂບແຂນເສື້ອທີ່ດີ ແລະ ໃສ່ໂສ້ງຂາຍາວທີ່ມີແຂບຕີນໂສ້ງທີ່ພໍດີ. ຫາກປາກແຂບແຂນເສື້ອ ແລະ ແຂບຕີນເສື້ອເປີດອອກ ບາງຄັ້ງອາດຈະໄປເກາະພຸ່ມໄມ້ ຫຼື ງ່າໄມ້ຕ່າງໆ ເຊິ່ງຈະເຮັດໃຫ້ບາດເຈັບໂດຍບໍ່ຄາດຄິດ. ນອກຈາກນີ້ ໃຫ້ຫຼີກລ່ຽງການສວມໃສ່ເສື້ອແຂນສັ້ນ ເພາະມັນຈະເຮັດໃຫ້ຜິວໜັງໄປສຳຜັດກັບພືດທີ່ອັນຕະລາຍ ເຊິ່ງເປັນສາເຫດເຮັດໃຫ້ເກີດຜົດ ແລະ ຜື່ນ.

ນອກຈາກນີ້ ໃນຍາມໜາວ, ໃນການນຳໃຊ້ຈັກເລື່ອຍໄມ້ ແລະ ຈັກຕັດຫຍ້າຕ່າງໆ, ການສວມໃສ່ເສື້ອຜ້າທີ່ມີຄວາມເບົາ ແລະ ອົບອຸ່ນ ກໍອາດຈະສາມາດປ້ອງກັນອາການຜິດປົກກະຕິທີ່ເກີດຈາກການສັ່ນສະເທືອນໄດ້.

ໃສ່ເກີບກັນໝື່ນ

ສຳລັບເກີບ ໃຫ້ໃສ່ເກີບທີ່ພໍດີກັບຕີນ, ແຂງແຮງ ແລະ ບໍ່ໝື່ນ. ໂດຍສະເພາະ ພາຍຫຼັງຝົນຕົກ ພື້ນດິນຢູ່ປ່າຈະມົ່ນງ່າຍ ສະນັ້ນ ໃຫ້ເອົາໃຈໃສ່ໃນການໃສ່ເກີບທີ່ປ້ອງກັນການມົ່ນ ຫຼື ເກີບຄຸມ(ເກີບສະຕາດ) ເປັນຕົ້ນ.

ອຸປະກອນປ້ອງກັນ

ຕ້ອງສວມໃສ່ອຸປະກອນປ້ອງກັນສະເໝີ

ສຳລັບໝວກກັນກະທົບ ໃຫ້ເລືອກໝວກທີ່ກົງກັບມາດຕະຖານ ໃສ່ສາຍຫັດຄາງຢ່າງດີ ແລະ ສວມໃສ່ຢ່າງຖືກຕ້ອງ.

ໃນເວລານຳໃຊ້ຈັກເລື່ອຍໄມ້ ໃຫ້ໃສ່ໝວກກັນກະທົບ, ໜ້າກາກນິລະໄພ (ໜ້າກາກ), ແນວອັດຫູ (ແນວປິດຫູ), ຖົງມືກັນການສັ່ນສະເທືອ, ຊຸດປ້ອງກັນຈັກເລື່ອຍໄມ້ (ໂສ້ງນິລະໄພ) ແລະ ເກີບນິລະໄພຢ່າງຖືກຕ້ອງ. (“ຄູ່ມືກ່ຽວກັບຄວາມປອດໄພໃນການດຳເນີນວຽກງານການຕັດໄມ້ດ້ວຍ ຈັກເລື່ອຍໄມ້” ລົງວັນທີ 31/01/2020 (ປີ Reiwa ທີ 2))

ຖືໜາກວິດຕິດໂຕຕະຫຼອດເວລາ

ຖືໜາກວິດຕິດໂຕຕະຫຼອດເວລາ

ໃນການເຮັດວຽກຢູ່ເທິງພູຈະມີການຕິດຕໍ່ສື່ສານກັນຢູ່ເທິງພູເປັນສ່ວນຫຼາຍ, ສະນັ້ນ ຈຶ່ງຈຳເປັນຕ້ອງໄດ້ກຳນົດຄຳສັ່ງລ່ວງໜ້າ ແລະ ກຳນົດສັນຍາລັກຕ່າງໆໄວ້. ໃຫ້ຖືຕິດໂຕຕະຫຼອດເວລາ ໂດຍສະເພາະໃນເວລານຳໃຊ້ຈັກເລື່ອຍໄມ້ ແລະ ຈັກຕັດຫຍ້າຕ່າງໆ.

ສຳລັບສະບັບຂາ ແມ່ນ ໃຫ້ສວມໃສ່ອັນທີ່ແຂງແຮງ ແລະ ເບົາເທົ່າທີ່ຈະເປັນໄປໄດ້. ໂດຍສະເພາະໃນວຽກງານຕັດຫຍ້າ ແລະ ກະກຽມໜ້າດິນ ແມ່ນ ໃຫ້ເອົາໃຈໃສ່ເພື່ອຄວາມປອດໄພບໍລິເວນຂາ.

ປັດໃຈສ່ຽງທີ່ລີ້ຊ້ອນຢູ່ໃນຂະນະການປະຕິບັດວຽກງານ

(1) ການຍ່າງ ແລະ ການເຄື່ອນຫຍ້າຍຢູ່ບ່ອນທີ່ມີຄວາມລາດຊັນ

ພື້ນທີ່ປ່າທີ່ເປັນບ່ອນປະຕິບັດວຽກງານຫຼັກຂອງວຽກງານປ່າໄມ້, ເຖິງວ່າຫົນທາງຢູ່ໃນປ່າ ແລະ ຫົນທາງໃນການເຮັດວຽກຈະໄດ້ຮັບການປັບປຸງຕາມຄວາມເໝາະສົມແລ້ວກໍຕາມ ແຕ່ການປັບປຸງເງື່ອນໄຂໃນການເຮັດວຽກ ແມ່ນ ມີຂີດຈຳກັດ. ມັກຈະເຫັນວ່າ ຈະເປັນການເຮັດວຽກຢູ່ພື້ນທີ່ທີ່ມີຄວາມລາດຊັນ, ມີນ້ຳງ່າຍ, ດິນເຈື່ອນ ແລະ ຫຍ້າຕຶບ ເປັນສ່ວນໃຫຍ່. ຍິ່ງໄປກວ່ານັ້ນ ກໍມີການເຄື່ອນຍ້າຍເປັນປະຈຳ ເຖິງຈະຢູ່ໃນປ່າດຽວກັນກໍຕາມ ແຕ່ການເຮັດວຽກຢູ່ໃນບ່ອນດຽວກັນ ແມ່ນ ມີໄລຍະເວລາທີ່ສັ້ນ ແລະ ມັກຈະເຫັນວ່າມີການຍ່າງໄປພ້ອມໆກັບການປະຕິບັດວຽກໄປນຳ. ຫຼືເວົ້າອີກຢ່າງໜຶ່ງກໍຄື: ຕ້ອງຮັບມືກັບສະພາບການເຮັດວຽກທີ່ບໍ່ດີ ແລະ ມີການປ່ຽນແປງຕະຫຼອດເວລາ.

ຈະເຫັນວ່າມີອຸບັດຕິເຫດຈຳນວນຫຼາຍທີ່ກ່ຽວຂ້ອງກັບການຍ່າງ ເນື່ອງຈາກວ່າມີການຍ່າງຜ່ານພື້ນທີ່ທີ່ບໍ່ເໝາະສົມແກ່ການຍ່າງ ເຊັ່ນ: ການຍ່າງເພື່ອທຽວໄປວຽກ ແລະ ການຍ່າງເພື່ອເຄື່ອນຍ້າຍໃນຂະນະທີ່ເຮັດວຽກຢູ່ພື້ນທີ່ລາດຊັນ. ມາເອົາໃຈໃສ່ກ່ຽວກັບສິ່ງຕໍ່ໄປນີ້ເປັນຢ່າງດີກັນເທາະ.

ການຍ່າງເພື່ອທຽວໄປວຽກ

① ໃນການທຽວໄປວຽກໃນແຕ່ລະມື້ ແມ່ນ ໃຫ້ຍ່າງໄປຕາມທາງຍ່າງທີ່ກຳນົດໃຫ້, ຫ້າມຍ່າງໄປໃນທາງທີ່ຢູ່ໃກ້ຄຽງນອກຈາກທາງຍ່າງ. ສຳລັບທາງຍ່າງໄປວຽກ ຈຳເປັນຕ້ອງມີການປັບປຸງໃຫ້ເໝາະສົມເທົ່າທີ່ຈະເປັນໄປໄດ້.

② ໃນຂະນະທີ່ຍ່າງ, ໃຫ້ລະມັດລະວັງຂຸມ, ເຄືອໄມ້, ຮາກໄມ້ ຕ່າງໆ ແລະ ບໍ່ໃຫ້ໄປຍ່າງຢູ່ເທິງຂອນໄມ້ ແລະ ຫີນທີ່ບໍ່ມີຄວາມໝັ້ນຄົງ. ນອກຈາກນີ້, ໃນເວລາຝົນຕົກ ຫຼື ຝົນເອື້ອນແລ້ວ ໃນເວລາທີ່ພື້ນດິນ ຫຼື ຂຸມດິນປຽກ ມັກຈະມີ ອຸບັດຕິເຫດ ກ່ຽວກັບການມົ່ນພະລາດລົ້ມ ສະນັ້ນ ໃຫ້ລະມັດລະວັງພື້ນດິນໃຫ້ເປັນຢ່າງດີ. ໂດຍສະເພາະໃຫ້ລະວັງເປັນພິເສດ ໃນຕອນທີ່ຖືເຄື່ອງຈັກ ຫຼື ອຸປະກອນ.

③ ໃນເວລາຖືເຄື່ອງຈັກ ຫຼື ອຸປະກອນ ຕ້ອງເອົາໂກນນິລະໄພ ຫຼື ເອົາຝາອັດບ່ອນທີ່ເປັນໃບມີດ ແລ້ວຈຶ່ງຄ່ອຍເຄື່ອນຍ້າຍ. ໂດຍສະເພາະ, ສຳລັບຈັກຕັດຫຍ້າ ໃຫ້ຖອດໃບມີດອອກ. ນອກຈາກນັ້ນ, ຢ່າໃຊ້ກ່ຽວ ເປັນ ໄມ້ເທົ້າ.

④ ໃນຂະນະທີ່ຍ່າງໄປບ່ອນເຮັດວຽກ, ໃຫ້ຮັກສາໄລຍະຫ່າງຈາກກັນຢ່າງພຽງພໍ ແລະ ຫຼີກລ່ຽງບໍ່ໃຫ້ເຄື່ອງຈັກ ແລະ ອຸປະກອນທີ່ຫ່ານກຳລັງຂົນຢູ່ສຳຜັດກັນ. ສຳລັບໄລຍະຫ່າງກັນ ຂໍແນະນຳໃຫ້ມີຄວາມຍາວຢ່າງໜ້ອຍ 2 ເທົ່າຂອງຄວາມຍາວຂອງຈັກ ແລະ ອຸປະກອນທີ່ກຳລັງຖືຢູ່.

ການຍ່າງເພື່ອເຄື່ອນຍ້າຍ

① ໃນຂະນະທີ່ກຳລັງເຮັດວຽກຢູ່, ການຍ່າງເພື່ອປ່ຽນບ່ອນເຮັດວຽກ ເອີ້ນວ່າ ການຍ່າງເພື່ອເຄື່ອນຍ້າຍ, ສຳລັບເຄື່ອງຈັກ ທີ່ເປັນ ຈັກຕັດຫຍ້າ ແລະ ຈັກເລື່ອຍໄມ້ ຕ່າງໆ ຕ້ອງມອດຈັກກ່ອນແລ້ວຈຶ່ງຄ່ອຍເຄື່ອນຍ້າຍ. ເຖິງແມ່ນວ່າໄລຍະທາງໃນການເຄື່ອນຍ້າຍຈະສັ້ນ ກໍຈຳເປັນຕ້ອງໄດ້ປະຕິບັດ. ໂດຍສະເພາະ, ໃນເວລາທີ່ເຮັດວຽກທີ່ໃຊ້ເຄື່ອງຕັດຫຍ້າ, ຫຼັງຈາກຕັດແລ້ວແຖວ 1 ແລ້ວ ເວລາຈະກັບຄືນມາຕັດແຖວຖັດໄປຈາກຈຸດເລີ່ມຕົ້ນ ແມ່ນ ຕ້ອງໄດ້ເອົາໃຈໃສ່ຕໍ່ຄວາມປອດໄພບໍ່ແມ່ນແຕ່ສະເພາະຕົນເອງ ແຕ່ຕ້ອງເອົາໃຈໃສ່ຕໍ່ຄວາມປອດໄພຂອງເພື່ອນຮ່ວມງານນຳ.

② ໃນເວລາເຄື່ອນຍ້າຍ ແມ່ນ ໃຫ້ລະມັດລະວັງຢ່າງພຽງພໍໃນການຖືເຄື່ອງຈັກ ແລະ ອຸປະກອນໄປນຳ. ໂດຍສະເພາະ, ໃນເວລາທີ່ເຮັດວຽກທີ່ນຳໃຊ້ຈັກຕັດຫຍ້າ, ໃນເວລາທີ່ເຄື່ອນຍ້າຍເຄື່ອງຕັດຫຍ້າໂດຍທີ່ເຄື່ອງດັ່ງກ່າວຍັງຫ້ອຍຢູ່ອັນແຂວນຢູ່ ແມ່ນ ໃຫ້ປະດ້ານຂອງເຄື່ອງຈັກຢູ່ໃນລັກສະນະລວງນອນ. ໃນເວລາທີ່ຂົນຍ້າຍເຄື່ອງຈັກໂດຍການແບກໃສ່ບ່າ, ໃຫ້ເອົາສ່ວນທີ່ເປັນໃບມີດໄປທາງດ້ານໜ້າ. ແລະ ໃຫ້ຮັກສາໄລຍະຫ່າງທີ່ພຽງພໍຈາກກັນ ແລະ ກັນ, ຢ່າງຫນ້ອຍ 5 ແມັດ. ຫ້າມໃຊ້ເຄື່ອງມືຊ່າງ ເປັນ ໄມ້ເທົ້າ.

③ ໃນຂະນະທີ່ເຄື່ອນຍ້າຍຢູ່ ໃຫ້ລະມັດລະວັງສະພາບແວດລ້ອມສິ່ງອ້ອມຂ້າງ ແລະ ພື້ນດິນ. ໂດຍສະເພາະ, ໃນເວລາຜ່ານໄປໃກ້ກັບຄົນທີ່ກຳລັງເຮັດວຽກຢູ່ ແມ່ນ ໃຫ້ສັນຍານ ຫຼື ຮັກສາໄລຍະຫ່າງທີ່ພຽງພໍ. ໃນການເຮັດວຽກກ່ຽວກັບເຄື່ອງຕັດຫຍ້າ, ຈະກຳນົດວ່າພື້ນທີ່ອ້ອມຮອບຂອງຜູ້ທີ່ກຳລັງເຮັດວຽກ ປະມານ 5 ແມັດ ເປັນພື້ນທີ່ທີ່ອັນຕະລາຍ, ດັ່ງນັ້ນ ໃຫ້ຫຼີກລ່ຽງການເຂົ້າໄປໃນພື້ນທີ່ດັ່ງກ່າວ.

(2) ເຮັດວຽກໃນລະຫວ່າງທີ່ສະພາບອາກາດທີ່ບໍ່ດີ

ວຽກງານຢູ່ເທິງພູສ່ວນຫຼາຍ ແມ່ນ ດຳເນີນຢູ່ໃນປ່າ ແລະ ການທີ່ຈະເຮັດວຽກໄດ້ຫຼືບໍ່ໄດ້ນັ້ນ ແມ່ນ ຂຶ້ນກັບສະພາບດິນຟ້າອາກາດ. ໃນຊ່ວງເວລາທີ່ມີລົມພະຍຸໄຕ້ຝຸ່ນ, ຝົນຕົກຫນັກ, ຫິມະຕົກໜັກແລະອື່ນໆ, ສິ່ງທີ່ສຳຄັນ ແມ່ນ ຕ້ອງເອົາໃຈໃສ່ກ່ຽວກັບພະຍາກອນອາກາດ ແລະ ການເຕືອນໄພ ເຊິ່ງເມື່ອຄາດວ່າຈະມີອັນຕະລາຍ ແມ່ນ ຈຳເປັນຕ້ອງໄດ້ຢຸດເຊົາການເຮັດວຽກ.

ຫຼັງຈາກພະຍຸໄຕ້ຝຸ່ນ ຫຼື ຝົນຕົກໜັກເຊົາແລ້ວ, ສິ່ງສຳຄັນ ກ່ອນທີ່ຈະເລີ່ມເຮັດວຽກ ແມ່ນ ຈະຕ້ອງກວດກາພື້ນທີ່ເຮັດວຽກໃຫ້ແນ່ໃຈວ່າບໍ່ມີອັນຕະລາຍ.

ນອກຈາກນີ້, ອຸບັດຕິເຫດທີ່ເກີດຈາກຟ້າຜ່າ ກໍສາມາດເກີດຂຶ້ນໄດ້. ຄວນລະມັດລະວັງເປັນພິເສດໃນເຂດທີ່ມັກມີຟ້າຜ່າ, ຫາກມີຟ້າຜ່າເກີດຂຶ້ນ, ໃຫ້ຍັບຮ່າງກາຍຫ່າງອອກຈາກເຄື່ອງຈັກ ແລະ ອຸປະກອນຕ່າງໆ ແລ້ວຮີບຟ້າວອົບພະຍົບໄປສະຖານທີ່ທີ່ເໝາະສົມ. ສະຖານທີ່ທີ່ດີທີ່ສຸດໃນການອົບພະຍົບ ແມ່ນ ຢູ່ໃນເຂດທີ່ເປັນພື້ນທີ່ຫຼຸບ ຫຼື ຫາກຢູ່ໃກ້ໆນັ້ນມີລົດ ແມ່ນ ໃຫ້ຢູ່ໃນລົດ. ການຢູ່ກ້ອງຕົ້ນໄມ້ສູງ ເປັນສິ່ງທີ່ອັນຕະລາຍ, ສະນັ້ນ ຈົ່ງລະມັດລະວັງ. ໃນເວລາທີ່ຄາດຄະເນວ່າຫິມະຈະຕົກ, ການຢຸດວຽກ ຖືວ່າເປັນມາດຕະການສຳຄັນທີ່ຕ້ອງໄດ້ປະຕິບັດເຊັ່ນກັນ.

(3) ການປ້ອງກັນອັກຄີໄພ(ໄຟໄໝ້)

ສະເຫດຂອງໄຟໄໝ້ປ່າ ສ່ວນຫຼາຍ ແມ່ນ ເກີດຈາກຄວາມບໍ່ລະມັດລະວັງໃນການຈັດການໄຟ. ຜູ້ທີ່ເຮັດວຽກໃນວຽກງານປ່າໄມ້ ໃຫ້ປະຕິບັດຕາມຄວາມລະມັດລະວັງຕໍ່ໄປນີ້ ເພື່ອຫຼີກລ່ຽງການເຮັດໃຫ້ເກີດໄຟໄໝ້ຍ້ອນຢາສູບ, ກອງໄຟ ແລະອື່ນໆ.

① ໃນເວລາກໍ່ກອງໄຟ, ໃຫ້ເລືອກພື້ນທີ່ທີ່ເປັນຂຸມທີ່ຖືກລົມພັດເລັກໜ້ອຍ ແລະ ໃຫ້ເກັບກວດວັດຖຸທີ່ຕິດໄຟອອກຈາກພື້ນທີ່ອ້ອມຂ້າງ ແລ້ວຈຶ່ງຄ່ອຍເລີ່ມດັງໄຟ. ຫາກປະມາດ ແລະ ເຮັດໃຫ້ເກີດໄຟໄໝ້ໃນລະດູແລ້ງ ອາດຈະເຮັດໃຫ້ເກີດໄຟໄໝ້ຂະໜາດໃຫຍ່ໄດ້, ສະນັ້ນບໍ່ຄວນກໍ່ກອງໄຟຈະດີກວ່າ.

② ໃນເວລາດັບກອງໄຟ, ໃຫ້ຖອກນ້ຳ ຫຼື ດິນໃສ່ກອງໄຟ ແລະກວດກາໃຫ້ແນ່ໃຈວ່າມັນດັບໝົດແລ້ວ. ຫາກວ່າບ່ອນພັກຜ່ອນໃນແຕ່ລະມື້ຖືກກຳນົດໄວ້ແລ້ວ, ເພື່ອປ້ອງກັນບໍ່ໃຫ້ເກີດໄຟໄໝ້ພູ ສິ່ງສຳຄັນ ແມ່ນ ໃຫ້ກະກຽມນ້ຳໄວ້ສຳລັບດັບເພີງ.

③ກົ້ນຢາສູບ ສາມາດເຮັດໃຫ້ເກີດໄຟໄຫມ້ປ່າໄດ້. ເອົາໃຈໃສ່ສູບຢາຢູ່ໃນພື້ນທີ່ທີ່ກຳນົດໄວ້ເທົ່ານັ້ນ ແລະ ເກັບຮັກສາກົ້ນຢາສູບຢູ່ໃນບ່ອນໃສ່ກົ້ນຢາສູບແບບພິກພາ.

④ ໃນເວລາໃຊ້ເຄື່ອງຈັກ, ຫ້າມໃຊ້ແປວໄຟໃກ້ນ້ຳມັນເຄັດຂາດ ຕົວຢ່າງ: ແປວໄຟຈາກ ກອງໄຟ, ຢາສູບ ແລະ ກັບໄຟ ຕ່າງໆເປັນຕົ້ນ. ນອກຈາກນັ້ນ, ຫ້າມໃຊ້ນ້ຳມັນໃນການກໍ່ກອງໄຟ.

(4) ສັດ ແລະ ພືດທີ່ອັນຕະລາຍ

ບາງສິ່ງບາງຢ່າງທີ່ພວກເຮົາພົບເຫັນໃນຂະນະທີ່ເຮັດວຽກຢູ່ເທິງພູ ແມ່ນ ມີທັງສັດ ແລະ ພືດທີ່ເປັນອັນຕະລາຍ ຕໍ່ ມະນຸດ. ການໄດ້ຮັບຄວາມຮູ້ທີ່ຖືກຕ້ອງ ກ່ອນທີ່ຈະເລີ່ມເຮັດວຽກ ຈະນຳໄປສູ່ຄວາມປອດໄພ.

① ງູພິດ

ເປັນງູພິດປະເພດໜຶ່ງທີ່ທົ່ວໄປ ຫົວ ມີລັກສະນະເປັນຮູບສາມລ່ຽມຍາວເລັກນ້ອຍ ແລະ ມີລາຍຈຸດເປັນຮູບລາຍເງິນ. ງູພິດ ຈະບໍ່ໂຈມຕີ ຫາກບໍ່ເຂົ້າໄປໃກ້ ແລະ ກະຕຸ້ນມັນ. ການໄດ້ຮັບໄພຈາກງູພິດ ຈະເກີດຂຶ້ນໃນລັກສະນະປະມານວ່າ ມີຄົນພະຍາຍາມຈັບມັນໂດຍບໍ່ລະມັດລະວັງ. ມາລະມັດລະວັງກັນເທາະ. ພວກມັນອາດຈະລີ້ຢູ່ໃນຫຍ້າ, ສະນັ້ນ ຈົ່ງລະວັງບໍ່ໃຫ້ຍ່າງໄປຢຽບມັນໂດຍບໍ່ໄດ້ຕັ້ງໃຈ. ມັນເປັນຄວາມຄິດທີ່ດີທີ່ຈະໃສ່ສະບັບຂາ, ເກີບຍາວ ແລະ ເຄື່ອງນຸ່ງທີ່ປ້ອງກັນຕົນ. ຫາກຖືກກັດ, ບໍ່ໃຫ້ແຕກຕື່ນ ແລ້ວຮີບຮ້ອນໄປໂຮງໝໍທັນທີ (ຮູບ 7-1).

② ຕົ້ນຢາງຮັກ

ຫາກສຳຜັດກັບຕົ້ນຢາງຮັກນ້ອຍ ຫຼື ຢາງຮັກປ່າ ຈະເຮັດໃຫ້ເກີດອາການອັກເສບ ຫຼື ໂພງຢ່າງຮຸນແຮງໄດ້. ຫຼີກລ່ຽງການສຳຜັດພືດດ້ວຍມືເປົ່າ, ໃຫ້ໃສ່ເສື້ອແຂນຍາວ ແລະ ໂສ້ງຂາຍາວ ແລະ ຫຼີກລ່ຽງການສຳຜັດຕົ້ນໄມ້ດ້ວຍຜິວໜັງ. ຫາກເປັນຜື່ນ, ໃຫ້ລ້າງດ້ວຍນ້ຳຈົນສະອາດ ແລະ ແລ້ວທາດ້ວຍຢາຂີ້ເຜີ້ງ. ໃນກໍລະນີຮ້າຍແຮງ, ໃຫ້ໄປໂຮງໝໍ (ຮູບ 7-1).

③ ພືດທີ່ມີໜາມ

ອາດຈະໄປຕິດໜາມ ຂອງ ພືດຕະກູນຕົ້ນໜາມຍີ່ປຸ່ນ ຕົ້ນກຸລາບໜາມ ແລະ ພຸ່ມໄມ້ໜາມ ແລະ ໄດ້ຮັບບາດເຈັບໄດ້. ຫຼີກລ່ຽງການເປີດຜິວໜັງ (ຮູບ 7-1).

④ ເຜີ້ງ

ຄວາມເສຍຫາຍທີ່ໄດ້ຮັບຈາກເຜີ້ງ ແມ່ນ ພົບເລື້ອຍທີ່ສຸດໃນຊ່ວງລະດູຮ້ອນ ເຖິງ ລະດູໃບໄມ້ປົ່ງ ໃນນັ້ນ ຈຳເປັນຕ້ອງລະມັດລະວັງທີ່ສຸດ ແມ່ນ ໂຕຕໍ່. ໃນພື້ນທີ່ທີ່ມີຮັງເຜີ້ງເປັນຈຳນວນຫຼາຍ ແມ່ນ ໃຫ້ປະຕິບັດວຽກໂດຍການສວມໃສ່ຕາໜ່າງກັນເຜີ້ງ. ຫາກຖືກຕອຍ ບາງຄົນອາດຈະເກີດອາການແພ້ (ອາການຊ໊ອກເນື່ອງຈາກອາການແພ້) ແລະ ໃນແຕ່ລະປີ ກໍມີຜູ້ເສຍຊີວິດຈຳນວນຫຼາຍ (ຮູບ 7-2).



ງູພິດ



ຕົ້ນຢາງຮັກປ່າ



ຕົ້ນໜາມຍີ່ປຸ່ນ

ຮູບທີ 7-1 ສັດອັນຕະລາຍທີ່ພົບເຫັນຢູ່ໃນພູ

ໂຕແຕນ
ຄວາມຍາວຂອງຮ່າງກາຍ
12 ~ 18 mm



ໂຕຕໍ່
ຄວາມຍາວຂອງຮ່າງກາຍ
27 ~ 38 mm



ຮູບ 7-2 ເຜິ້ງອັນຕະລາຍ

ຮູບທີ 7-1, ຮູບທີ 7-2 ເອກະສານ: ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ "ປຶ້ມປະຕິບັດວຽກງານປ່າໄມ້"
ເອກະສານອ້າງອີງ: (ສະຖາບັນຄົ້ນຄວ້າແຫ່ງຊາດ) ອົງການຄົ້ນຄວ້າ ແລະ ຄຸ້ມຄອງປ່າໄມ້, ສະຖາບັນຄົ້ນຄວ້າປ່າໄມ້ ແລະ ຜະລິດຕະພັນປ່າໄມ້ "ລາຍການຂໍ້ມູນຊີວະພາບປ່າໄມ້"

ທັງໂຕຕໍ່ ແລະ ໂຕແຕນ ສາມາດເຮັດໃຫ້ເກີດອາການຊ໊ອກເມື່ອງຈາກອາການແພ້ໄດ້. ແລະ ກໍມີຫຼາຍເຫດການທີ່ຄົນຖືກກັດໃນຂະນະທີ່ກຳລັງຕັດຫຍ້າ ເພາະບໍ່ຮູ້ວ່າມີຮັງຂອງມັນຢູ່ໃນພຸ່ມຫຍ້າ ແລະ ຕົ້ນຫຍ້າ. ເມື່ອເຂົ້າໄປໃກ້ຮັງ "ຝູງເຜິ້ງ" ຈະເລີ່ມບິນວົນໄປວົນມາ. ໃຫ້ອອກຈາກພື້ນທີ່ດັ່ງກ່າວຢ່າງຽບໆ ເພື່ອຫຼີກລ່ຽງການກະຕຸ້ນເຜິ້ງໂດຍບໍ່ໄດ້ຕັ້ງໃຈ. ນອກຈາກນີ້ ການໃຊ້ມາດຕະການອື່ນໆກໍໄດ້ປະສິດທິຜົນເຊັ່ນກັນ ເຊັ່ນ: ການສວມໃສ່ຕາໜ່າງເຜິ້ງ ແລະ ຫຼີກລ່ຽງການໃສ່ເຄື່ອງນຸ່ງຫົ່ມສີດຳ.

ຫາກຖືກກັດ, ໃຫ້ລ້າງບາດແຜດ້ວຍນ້ຳເຢັນ ບີບປາກບາດເພື່ອຮີດພິດອອກ. ການຖືຫຼອດດູດພິດໄປນຳ ກໍຈະເປັນການດີ. ນອກຈາກນັ້ນ, ຫາກໄດ້ທົດສອບພູມຕ້ານທານ ສຳລັບ ອາການແພ້ພິດຂອງເຜິ້ງຢູ່ສະຖາບັນການແພດ ແລະ ໄດ້ຮັບຜົນອອກມາເປັນບວກ, ໃນຂະນະທີ່ເຮັດວຽກ ແມ່ນ ໃຫ້ຖືຢາແກ້ແພ້ (EpiPen) (ອ້າງອີງໃນປຶ້ມຫົວນີ້ ຮູບທີ 8-11 "No. 08 ປະເພດ ແລະ ຈຸດປະສົງໃນການດູແລປ່າໄມ້") ເຊິ່ງເປັນຢາທີ່ສັກເພື່ອແກ້ແພ້ດ້ວຍຕົນເອງ ຕາມທີ່ໝໍສັ່ງ ໄປນຳ.

⑤ ໂຕເຫັບ

ໃຫ້ເອົາໃຈໃສ່ຢ່າງໃກ້ຊິດກັບຄວາມເສຍຫາຍທີ່ເກີດຈາກໂຕເຫັບກັດ, ທີ່ເປັນບັນຫາໃນຊຸມປີມໍ່ໆມານີ້. ມີການຕິດເຊື້ອພະຍາດຕິດແປດ

ຈາກເຫັບ. ໂຕເຫັບມີຢ່າງກະຈັດກະຈາຍໃນທົ່ວປະເທດ. ໃນເວລາເຮັດວຽກໃນປ່າ ຈົ່ງລະມັດລະວັງ (ເບິ່ງກ່ຽວກັບໂຕເຫັບ ໃນ “ວຽກງານປ່າໄມ້ທີ່ປອດໄພ No.09”).

ກົດລະບຽບພື້ນຖານຂອງການເຮັດວຽກ

ຄຸນລັກສະນະຂອງວຽກງານປ່າໄມ້

ເປັນວຽກທີ່ແຕກຕ່າງຈາກວຽກໂຮງງານ, ເຊິ່ງວຽກງານປ່າໄມ້ສ່ວນຫຼາຍ ແມ່ນ ວຽກທີ່ເຮັດຢູ່ກາງແຈ້ງ ແລະ ສ່ວນຫຼາຍຈະໄດ້ຮັບຜົນກະທົບຈາກສະພາບທຳມະຊາດ ເຊັ່ນ: ສະພາບອາກາດ, ພູມສັນຖານ ແລະ ວັດຖຸຕ່າງໆທີ່ກ່ຽວຂ້ອງກັບການເຮັດວຽກ. ດ້ວຍເຫດຜົນນີ້, ການປ່ຽນສະພາບເງື່ອນໄຂໃນການເຮັດວຽກໂດຍການສ້າງເງື່ອນໄຂຂຶ້ນມາໃໝ່ນັ້ນ ຈຶ່ງເປັນເລື່ອງຍາກ ແລະ ໃນຂະບວນການເຮັດວຽກ ເຊັ່ນ: ການຕັດໄມ້, ການກະກຽມໜ້າດິນ, ແລະ ການຕັດຫຍ້າ ບໍ່ໄດ້ມີການກຳນົດເມື້ອໃນຕາຍໂຕ ແລະ ຍັງ ຖືກບັງຄັບໃຫ້ປ່ຽນແປງຕ່າງໆຢ່າງຕໍ່ເນື່ອງອີກດ້ວຍ.

ເມື່ອອີງໃສ່ເລື່ອງດັ່ງກ່າວນີ້, ລັກສະນະຂອງແຮງງານ ແມ່ນ ມີລັກສະນະດັ່ງຕໍ່ໄປນີ້:

① ຜູ້ອອກແຮງງານ ຖື ເຄື່ອງມື ແລະ ເຄື່ອງຈັກ ແລ້ວ ຍ້າຍໄປຫາເປົ້າໝາຍຂອງວຽກ. ເວົ້າອີກຢ່າງໜຶ່ງ, ວຽກງານສ່ວນໃຫຍ່ ແມ່ນ ກ່ຽວຂ້ອງກັບການຍ່າງ.

② ຜູ້ອອກແຮງງານຕ້ອງປະຕິບັດວຽກງານຕ່າງໆທີ່ມີລາຍລະອຽດຕ່າງກັນພາຍໃນຂະບວນການຜະລິດດຽວກັນ, ດັ່ງນັ້ນ ມັນຈຶ່ງເປັນຄວາມຫຍຸ້ງຍາກທີ່ຈະຫຼຸດຄວາມຊັບຊ້ອນ, ການແບ່ງແຮງງານ ແລະ ຄວາມຊ່ຽວຊານ.

③ ວຽກງານປ່າໄມ້ ມີ ຫຼາຍປະເພດ, ຄວາມແຂງແຮງໃນວຽກງານແຕ່ລະປະເພດ ກໍແຕກຕ່າງກັນ.

④ ກ່ຽວກັບການຕັດສິນຜົນການເຮັດວຽກ, ເຊັ່ນ: ຄຸນນະພາບຂອງການປູກ ຈະພິຈາລະນາຈາກອັດຕາການປົ່ງຫຼັງຈາກຜ່ານໄປຫຼາຍເດືອນ ແລະ ຈະພິຈາລະນາການຈະເລີນເຕີບໂຕ ຫຼັງຈາກຜ່ານໄປຫຼາຍປີ, ເຊິ່ງດ້ວຍວິທີນີ້ ຄຸນນະພາບຂອງຜົນງານ ຈຶ່ງບໍ່ສາມາດຕັດສິນໄດ້ໃນທັນທີ.

⑤ ເມື່ອງຈາກວ່າເງື່ອນໄຂການເຮັດວຽກ ແມ່ນ ມີຄວາມຫຼາກຫຼາຍແລະ ປະເພດຂອງການເຮັດວຽກ ແມ່ນ ຊັບຊ້ອນ, ສະນັ້ນ ແຕ່ລະປະເພດຂອງການເຮັດວຽກ ຈຶ່ງຕ້ອງການເຄື່ອງຈັກທີ່ແຕກຕ່າງກັນ.

⑥ ເຊັ່ນດຽວກັບວຽກງານປູກຕົ້ນໄມ້ ແມ່ນ ມີໄລຍະເວລາໃນການເຮັດວຽກ ແລະ ກໍມີເວລາທີ່ເໝາະສົມໃນການວຽກງານ.

⑦ ວຽກງານປ່າໄມ້ ແມ່ນ ດຳເນີນຢູ່ເທິງພື້ນທີ່ຂອງພູ ດັ່ງນັ້ນ ວຽກງານສ່ວນຫຼາຍ ແມ່ນ ເຮັດຢູ່ເທິງພູ.

ວິທີການນຳໃຊ້ເຄື່ອງມື (ກ່ຽວ, ພ້າ, ເລື່ອຍ)

ສຳລັບ ກ່ຽວ, ມີດ ແລະ ເລື່ອຍ ແມ່ນ ນຳໃຊ້ ເປັນເຄື່ອງມືຊ່າງທົ່ວໄປ ສຳລັບ ວຽກງານປ່າໄມ້. ນອກຈາກນັ້ນ, ເຄື່ອງທີ່ໃຊ້ທົ່ວໄປທີ່ສຸດ ແມ່ນ ຈັກຕັດຫຍ້າ ແລະ ຈັກເລື່ອຍໄມ້. ໃນນີ້ ຈະເວົ້າກ່ຽວກັບເຄື່ອງມືຊ່າງ.

ສຳລັບເຄື່ອງມືຊ່າງ ມັນເປັນສິ່ງສຳຄັນທີ່ຕ້ອງເລືອກເຄື່ອງມືຊ່າງທີ່ເໝາະສົມ ແລະ ໃຊ້ງານຢ່າງເໝາະສົມ. ສິ່ງນີ້ ເປັນ ສິ່ງຈຳເປັນເພື່ອຮັບປະກັນຄວາມປອດໄພໃນການເຮັດວຽກ ແລະ ປັບປຸງປະສິດທິພາບໃນການເຮັດວຽກ. ເຄື່ອງມືຊ່າງ ໄດ້ຖືກນຳໃຊ້ເປັນເຄື່ອງມືໃນການເຮັດວຽກ ນັບຕັ້ງແຕ່ຈຸດເລີ່ມຕົ້ນຂອງການອອກແຮງງານຂອງມະນຸດ ເພື່ອຊ່ວຍເຫຼືອແຂນຂາ ແລະ ເພີ່ມກຳລັງແຮງໃນການເຮັດວຽກ. ເຄື່ອງມືຊ່າງສ່ວນຫຼາຍ ໄດ້ຮັບການປັບປຸງໃຫ້ເປັນຮູບແບບໃນປະຈຸບັນ ໂດຍການດັດແປງ ແລະ ຈາກປະສົບການອັນຍາວນານ.

ເຄື່ອງມືຊ່າງ ຕ້ອງ ① ເໝາະສົມກັບວຽກງານ, ② ເໝາະສົມກັບຮ່າງກາຍ ແລະ ກຳລັງແຮງຂອງພະນັກງານ, ແລະ ③ ຄັດເຂົ້າດີ, ລັບຄົມງ່າຍ ແລະ ທົນທານ. ຫາກຜູ້ອອກແຮງງານ ປະຕິບັດວຽກງານທີ່ເໝາະສົມ ໂດຍການນຳໃຊ້ເຄື່ອງມືຊ່າງທີ່ຕອບສະໜອງຕໍ່ຄວາມຕ້ອງການ 3 ຢ່າງນີ້, ກໍຈະຮູ້ສຶກເມື່ອຍໜ້ອຍ, ສາມາດຮັກສາຄວາມປອດໄພ ແລະ ສາມາດເພີ່ມປະສິດທິພາບ.

ກ່ຽວ

ໃຊ້ສຳລັບວຽກງານການກະກຽມໜ້າດິນ ແລະ ຕັດຫຍ້າ. ຖືກນຳໃຊ້ສຳລັບການຕັດພຸ່ມໄມ້ ແລະ ກວດພຸ່ມໄມ້ ແລະ ຫຍ້າຈາກພື້ນດິນ. ຈຳເປັນຕ້ອງໄດ້ລັບຄົມໃບມີດຫຼາຍຄັ້ງຕໍ່ມື້ ເພື່ອເຮັດໃຫ້ມັນສາມາດຕັດເຂົ້າໄດ້ດີໃນເວລາຕັດຫຍ້າ.

ການນຳໃຊ້ກ່ຽວ ແມ່ນ ຈະໃຫ້ຄວາມຮູ້ສຶກແບບວ່າ ກຳລັງຖູສັນຂອງກ່ຽວກັບພື້ນ. ສຳລັບໄມ້ພຸ່ມໜາ, ຈະເປັນການຕັດໂດຍການຕັ້ງໃບມີດກ່ຽວຂຶ້ນ.

ພ້າ

ໃຊ້ສຳລັບການຕັດໄມ້ພຸ່ມທີ່ມີເສັ້ນຜ່າກາງຂະໜາດນ້ອຍ ແລະ ຕັດງ່າໄມ້. ເນື່ອງຈາກໃຊ້ນ້ຳໜັກໃນການສັ່ນ, ດັ່ງນັ້ນ ຫາກມັນຍິ່ງໜັກ ມັນກໍຍິ່ງຕັດໄດ້ງ່າຍຂຶ້ນ. ກຳດ້າມຂອງພ້າ ດ້ອຍ ນິ້ວກາງ, ນິ້ວນາງ ແລະ ນິ້ວກ້ອຍ ແລ້ວວາງນິ້ວໂປ້ ແລະ ນິ້ວຊີ້ວາງຢອງກັນຄ່ອຍໆ ໄປພ້ອມກັບການກຳມືເຂົ້າໃນເວລາຕັດວັດຖຸເປ້າໝາຍ.

ເລື່ອຍ

ເລື່ອຍ ມີປະໂຫຍດໃນເວລາທີ່ຕ້ອງການຕັດງ່າໄມ້ທີ່ໃຫຍ່ເກີນໄປ ຫຼືສູງເກີນໄປ ແລະ ຢ້ີມືບໍ່ເຖິງ ຫຼື ເມື່ອຕ້ອງການຕັດງ່ຢ່າງງ່າຍດາຍໂດຍບໍ່ທຳລາຍລຳຕົ້ນ. ໃຊ້ເລື່ອຍຕັດປະມານ 2 ສ່ວນ 3 ຈາກປາຍຂອງໃບມີດ

ວຽກງານການກະກຽມພື້ນທີ່ຕົວຈິງ

ການກະກຽມໜ້າດິນ ແມ່ນ ຂະບວນການຕັດຫຍ້າທີ່ລົບກວນຂະບວນການປູກ ແລະ ການເຕີບໃຫຍ່ຂອງເບ້ຍໄມ້, ພ້ອມທັງຈັດການ ແລະ ຍ້າຍງ່າໄມ້ຂອງຕົ້ນໄມ້ສຸດທ້າຍໃນບໍລິເວນການຕັດ ຫຼື ປ້າຕົ້ນໄມ້ ກ່ອນທີ່ຈະລົງມືປູກເບ້ຍໄມ້.

ດັ່ງນັ້ນ, ຜູ້ອອກແຮງງານຈະໄດ້ໄປເຮັດວຽກຢູ່ໃນພື້ນທີ່ທີ່ມີງ່າໄມ້ກະແຈກກະຈາຍ, ພຸ່ມໄມ້, ຫຍ້າໄມ້ໃຜ່ ຕ່າງໆ, ສະນັ້ນຕ້ອງກວດເບິ່ງສະພາບອ້ອມຂ້າງ ແລະ ຕ້ອງເອົາໃຈໃສ່ນຳໃຊ້ເຄື່ອງມືຊ່າງ ເຊັ່ນ: ກ່ຽວ, ພ້າ, ເລື່ອຍ, ຈັກຕັດຫຍ້າ ແລະ ຈັກເລື່ອຍໄມ້ ເປັນຢ່າງດີ.

ວິທີການກະກຽມໜ້າດິນແຕກຕ່າງກັນໄປຕາມພື້ນທີ່ ແລະ ຍັງຂຶ້ນກັບສະພາບພູມສັນຖານ, ປະເພດຂອງຕົ້ນໄມ້ທີ່ຈະປູກ ແລະ ວິທີການນຳໃຊ້. ນອກຈາກນັ້ນ, ເຄື່ອງມື ແລະ ເຄື່ອງຈັກທີ່ໃຊ້ຍັງແຕກຕ່າງກັນໄປຕາມເປົ້າໝາຍທີ່ຈະຕັດ. ໃຫ້ກ່າວເຖິງຢ່າງລະອຽດ ກ່ຽວກັບ ວິທີການດຳເນີນການກະກຽມໜ້າດິນ ເປັນຕົ້ນ ແມ່ນ ວິທີການກະກຽມໜ້າດິນ, ການຈັດສັນພະນັກງານ ແລະ ການຄັດເລືອກເຄື່ອງມືຊ່າງ.

ລາຍການກວດກາຄວາມປອດໄພສຳລັບວຽກງານການກະກຽມໜ້າດິນ

ອ້າງອີງ ໃນ ຕາຕະລາງ 7-1.

ວິທີການຮັບປະກັນຄວາມປອດໄພໃນລະຫວ່າງການເຮັດວຽກກ່ຽວກັບການກະກຽມໜ້າດິນ

ວຽກງານກະກຽມໜ້າດິນ ມັກ ຈະເຮັດເປັນກຸ່ມ. ສະນັ້ນ, ຜູ້ອອກແຮງງານຕ້ອງປະສານງານກັນຢ່າງພຽງພໍ ແລະ ລະມັດລະວັງບໍ່ໃຫ້ເຮັດວຽກຢູ່ໃນຕຳແໜ່ງທີ່ຂຶ້ນລົງ ຫຼື ຢູ່ໃກ້ກັນ.

(1) ຢືນຢັນຂັ້ນຕອນການເຮັດວຽກ ແລະ ຮູບແບບການເຮັດວຽກ

ເນື່ອງຈາກວ່າ ເປັນວຽກທີ່ຕ້ອງເຮັດຢູ່ບ່ອນລາດຊັນ ແລະ ຢູ່ໃນສະພາບທີ່ທຸກຍາກ, ກ່ອນຈະເລີ່ມເຮັດວຽກ ຜູ້ອອກແຮງງານ ຄວນມີນິໄສໃນການກວດກາເຊິ່ງກັນ ແລະ ກັນ ກ່ຽວກັບ ຂັ້ນຕອນການເຮັດວຽກ, ຮູບແບບການເຮັດວຽກ ແລະ ວຽກງານອື່ນໆທີ່ຈຳເປັນ ເພື່ອຄວາມປອດໄພຂອງວຽກງານໃນມື້ນັ້ນ.

(2) ລະມັດລະວັງພື້ນດິນ

ເປັນບ່ອນທີ່ບໍ່ມີຄວາມສະດວກໃນການຍ່າງ, ສະນັ້ນ ໃຫ້ເອົາໃຈໃສ່ລະມັດລະວັງພື້ນດິນຢ່າງພຽງພໍ, ໃຫ້ປະຕິບັດວຽກງານໄປພ້ອມກັບການກວດກາສະພາບອ້ອມຮອບ ເພື່ອກຽມຄວາມພ້ອມໃຫ້ສາມາດອົບພະຍົບໄດ້ທັນທີ ເມື່ອມີການປ່ຽນປຽນສະຖານະການ. ຈົ່ງລະມັດລະວັງເປັນພິເສດບໍ່ໃຫ້ຄາຢູ່ຮາກໄມ້ ຫຼື ເຄືອໄມ້ຕ່າງໆ

(3) ຫ້າມເຮັດວຽກຂຶ້ນລົງ

ເນື່ອງຈາກວ່າ ເປັນການເຮັດວຽກຢູ່ພື້ນທີ່ລາດຊັນ, ສະນັ້ນ ກ້ອນຫີນ, ຮາກ, ງ່າໄມ້ ຕ່າງໆ ອາດຈະລົ້ມລົງມາ ແລະ ເຮັດໃຫ້ເກີດການບາດເຈັບໄດ້. ຜູ້ອອກແຮງງານ ຕ້ອງເອົາໃຈໃສ່ລະມັດລະວັງ ບໍ່ໃຫ້ເຮັດວຽກຂຶ້ນລົງຢູ່ພື້ນທີ່ລາດຊັນດຽວກັນ.


(4) ຮັກສາໄລຍະຫ່າງລະຫວ່າງຜູ້ອອກແຮງງານໃຫ້ພຽງພໍ.

ເນື່ອງຈາກວຽກງານນີ້ກ່ຽວຂ້ອງກັບການໃຊ້ກ່ຽວ ແລະ ຈັກຕັດຫຍ້າຕ່າງໆ, ສະນັ້ນ ສິ່ງສຳຄັນສຳລັບຜູ້ອອກແຮງງານ ແມ່ນ ຈະຕ້ອງຮູ້ກ່ຽວກັບສະພາບອ້ອມຮອບ ແລະ ນຳໃຊ້ພວກມັນຢ່າງຖືກຕ້ອງ. ຂອບເຂດການນຳໃຊ້ ກ່ຽວ ແລະ ຈັກຕັດຫຍ້າ ແມ່ນ ຈະມີຂອບເຂດກວ້າງອອກ ດັ່ງນັ້ນ ຜູ້ອອກແຮງງານຕ້ອງຮັກສາໄລຍະຫ່າງທີ່ພຽງພໍຈາກກັນ ແລະ ກັນ. ຫາກນຳໃຊ້ ກ່ຽວ, ຄວນຮັກສາໄລຍະຫ່າງຢ່າງຫນ້ອຍ 2 ເທົ່າຂອງຄວາມຍາວຂອງດ້າມຈັບ. ນອກຈາກນັ້ນ, ຕ້ອງກຳນົດເຂດດັ່ງກ່າວ ເປັນ ເຂດອັນຕະລາຍ ແລະ ບໍ່ໃຫ້ຜູ້ອອກແຮງງານຄົນອື່ນໆເຂົ້າໄປ. ການເຮັດວຽກໃກ້ກັນ ແມ່ນ ມີຄວາມອັນຕະລາຍ ແລະ ອາດຈະນຳພາໄປສູ່ໄພພິບັດທີ່ບໍ່ຄາດຄິດ.

ຕາຕະລາງ 7-1 ລາຍການກວດກາຄວາມປອດໄພ ສຳລັບວຽກງານ ການກະກຽມດິນ

ລາຍການກວດກາ	ຈຸດກວດ
ວຽກງານກະກຽມໜ້າດິນທີ່ປອດໄພ	① ຢືນຢັນຂັ້ນຕອນການເຮັດວຽກ ແລະ ຮູບແບບການເຮັດວຽກ
	②ລະມັດລະວັງພື້ນຕີນ
	③ຫ້າມເຮັດວຽກເທິງລຸ່ມ
	④ຮັກສາໄລຍະຫ່າງລະຫວ່າງຄົນເຮັດວຽກໃຫ້ພຽງພໍ
	⑤ເຮັດໃຫ້ຮອຍບາກຮາບພຽງເທົ່າທີ່ເປັນໄປໄດ້.
	⑥ໃຫ້ລະມັດລະວັງຂອງແຮງດີດກັບຂອງງ່າໄມ້ ແລະອື່ນໆ.
	⑦ລະມັດລະວັງທິດທາງດ້ານລຸ່ມ
	⑧ ໃຊ້ໄມ້ສຳລັບເຂ່ຍກອງໄມ້
	⑨ ລະວັງຫີນ ແລະ ເຫງົ້າໄມ້ລົ້ມລົງມາ.
	⑩ ລະວັງພື້ນທີ່ອັນຕະລາຍໃນເວລາຕັດຕົ້ນໄມ້ທີ່ຍັງເຫຼືອ

ເອກະສານອ້າງອີງ: ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ “ເພື່ອວຽກງານພູທີ່ປອດໄພ”



ຮູບທີ 7-3 ວິທີການຈັດການກັບງ່າໄມ້ ແລະ ພືດພຸ່ມທີ່ມີແຮງດີດກັບສະສົມຢູ່

(5) ຕັດຮອຍບາກໃຫ້ລຽບພຽງເທົ່າທີ່ຈະເປັນໄປໄດ້.

ຫາກຮອຍບາກຂອງພຸ່ມໄມ້ ແລະ ຫຍ້າໄມ້ໃຜ່ ແມ່ນ ມີລັກສະນະແຫຼມ ມັນຈະກາຍເປັນສາເຫດທີ່ກໍ່ໃຫ້ເກີດການຢຽບແລ້ວຖືກສຽບແທງໄດ້. ໃຫ້ຕັດຮອຍບາກໃຫ້ລຽບພຽງເທົ່າທີ່ຈະເປັນໄປໄດ້.

(6) ຈົ່ງລະວັງແຮງດີດກັບຂອງງ່າໄມ້ ຕ່າງໆ.

ງ່າໄມ້ ແລະ ຕົ້ນໄມ້ທີ່ມີເສັ້ນຜ່າສູນກາງຂະໜາດນ້ອຍທີ່ຕົດຢູ່ກ້ອງພຸ່ມໄມ້ທີ່ລົ້ມລົງ ແລະ ຢູ່ພາຍໃຕ້ແຮງກົດດັນ (ຄວາມເຄັ່ງ) ເມື່ອມັນຫຼຸດອອກຈາກແຮງດັ່ງກ່າວ ມັນອາດຈະເດ້ງອອກໄປຫາຜູ້ອອກແຮງງານດ້ວຍກຳລັງແຮງທີ່ຫຼາຍ. ງ່າໄມ້ ແລະ ລຳຕົ້ນຕ່າງໆທີ່ລົ້ມລົງ ແມ່ນ ຢູ່ພາຍໃຕ້ແຮງກົດດັນທີ່ແຕກຕ່າງກັນ. ໃຫ້ປະຕິບັດວຽກໄປດ້ວຍການລະມັດລະວັງຕໍ່ປະຕິກິລິຍາຂອງວັດສະດຸທີ່ມີແຮງຕ້ານເຫຼົ່ານີ້ ແລະ ຕຳແໜ່ງທີ່ເກີດແຮງກົດດັນ. (ຮູບ 7-3 ເປັນຕົວຢ່າງຂອງວິທີການຈັດການກັບງ່າໄມ້ ແລະ ພຸ່ມໄມ້ທີ່ມີແຮງກົດດັນສະສົມ).

(7) ເອົາໃຈໃສ່ກັບທິດທາງດ້ານລຸ່ມ.

ເວລາກອງງ່າໄມ້ ຕ້ອງກວດກາໃຫ້ແນ່ໃຈວ່າ ບໍ່ມີຄົນກຳລັງເຮັດວຽກຢູ່ດ້ານລຸ່ມ ແລ້ວຈຶ່ງຄ່ອຍລົງມືປະຕິບັດ.

(8) ການໃຊ້ດ້າມໄມ້ເພື່ອຊະຊາຍກອງງ່າໄມ້

ໃນການປະຕິບັດວຽກງານ ແມ່ນ ຈະໃຊ້ດ້າມໄມ້ເປັນເຄື່ອງມືໃນການຊະຊາຍກອງງ່າໄມ້ (ໃຫ້ຊອກຫາເອົາຢູ່ບ່ອນເຮັດວຽກ ຕ່າງໆເປັນຕົ້ນ). ຫ້າມໃຊ້ດ້າມຂອງກ່ຽວໃນການຊະຊາຍກອງງ່າໄມ້.

(9) ລະວັງກ້ອນຫີນ ແລະ ເຫງົ້າໄມ້ ຕົກລົງມາໃສ່.

ໃນກໍລະນີກະກຽມໜ້າດິນເປັນໜານ, ໃຫ້ຈັດລະບຽບໂດຍການຄໍ້ານຶງເຖິງໄລຍະຫ່າງລະຫວ່າງແຖວ. ຕອກເສົາເຂັ້ມເພື່ອປ້ອງກັນບໍ່ໃຫ້ເສັ້ນແຖວພັງ ພ້ອມທັງປ້ອງກັນບໍ່ໃຫ້ກ້ອນຫີນ, ເຫງົ້າໄມ້ ຕ່າງໆຕົກລົງມາ (ອ້າງອີງ ຮູບພາບ 6-1 ໃນປຶ້ມຫົວນີ້ “No.06 ປະເພດ ແລະ ຈຸດປະສົງຂອງການເຮັດວຽກປູກປ່າ”).

(10) ໃນເວລາຕັດຕົ້ນໄມ້ທີ່ຍັງເຫຼືອ ລະວັງພື້ນທີ່ອັນຕະລາຍ

ຕົ້ນໄມ້ທີ່ຍັງເຫຼືອ ອາດຈະຖືກຕັດລົງເພື່ອກະກຽມໜ້າດິນ. ເມື່ອຕັດຕົ້ນໄມ້, ໃຫ້ກຳນົດ ພື້ນທີ່ພາຍໃນວົງມົນທີ່ມີລັດສະໝີເທົ່າກັບ 2 ເທົ່າ ຂອງຄວາມສູງຂອງຕົ້ນໄມ້ຢືນຢູ່ ເປັນ ເຂດອັນຕະລາຍ, ໃຫ້ສົ່ງສັນຍານ ແລະ ກວດກາຊັດເຈນວ່າບໍ່ມີຄົນຢູ່ໃນພື້ນທີ່ອັນຕະລາຍນັ້ນ ແລ້ວຈຶ່ງ ຄ່ອຍຕັດຕົ້ນໄມ້.

ວຽກງານການປູກເບ້ຍໄມ້ຕົວຈິງ

ການປູກເບ້ຍໄມ້ ໝາຍເຖິງ ການປູກເບ້ຍໄມ້ໃນພື້ນດິນຂອງປ່າ ເພື່ອຈຸດປະສົງໃນການສ້າງປ່າ. ການປູກເບ້ຍໄມ້ ແມ່ນ ບາດກ້າວທຳອິດໃນການປູກປ່າ ເຊິ່ງຄວາມສຳເລັດ ຫຼື ຄວາມລົ້ມເຫຼວຂອງເບ້ຍໄມ້ ເປັນ ເງື່ອນໄຂທີ່ສຳຄັນທີ່ສຸດທີ່ຈະກຳນົດຄຸນນະພາບຂອງພື້ນທີ່ການປູກປ່າ. ມັນເປັນສິ່ງສຳຄັນທີ່ຈະດຳເນີນສິ່ງນີ້ຢ່າງລະມັດລະວັງ ເພື່ອໃຫ້ເບ້ຍໄມ້ຢັ່ງຮາກ.

ລາຍການກວດກາຄວາມປອດໄພສຳລັບວຽກງານການປູກເບ້ຍໄມ້

ອ້າງອີງ ຕາຕະລາງ 7-2.

ວິທີການຈັດການກັບແນວພັນເບ້ຍໄມ້ທີ່ແຕກຕ່າງກັນ

(1) ເບ້ຍເປົ່າ (ເບ້ຍປົກກະຕິ)

ເບ້ຍໄມ້ທີ່ຖືກຂຸດອອກ ຈະຖືກທຳຮ້າຍຢ່າງຮ້າຍແຮງ ຫາກຮາກຂອງມັນແຫ້ງ, ດັ່ງນັ້ນ ຈຶ່ງຈຳເປັນຕ້ອງມີອຸປະກອນຫຸ້ມຫໍ່ທີ່ເໝາະສົມ. ໃນເວລາຂົນສົ່ງເບ້ຍໄມ້ໄປພູ, ສິ່ງທີ່ສຳຄັນທີ່ສຸດທີ່ຕ້ອງລະມັດລະວັງ ແມ່ນ ຄວາມແຫ້ງຂອງຮາກເບ້ຍເປົ່າ. ອີງຕາມເງື່ອນໄຂຂອງການຂົນສົ່ງໄປພູ ແລະ ໄລຍະເວລາທີ່ຜ່ານມາ, ຮາກອາດຈະແຫ້ງ ຫຼື ເສຍຫາຍ ແລະ ອ່ອນເພຍ. ເບ້ຍເປົ່າ ຈະຖືກຂົນສົ່ງໃນລັກສະນະທີ່ມີການຫຸ້ມຫໍ່. ນຳເອົາສ່ວນທີ່ຈະໃຊ້ໃນການປູກຂອງແຕ່ລະມື້ຂຶ້ນໄປເທິງພູ. ຫາກຂົນໄປພ້ອມກັບຫຼາຍຕົ້ນໃນເວລາດຽວກັນ ແມ່ນ ຈະຕ້ອງໃຊ້ມາດຕະການຕ່າງໆ ເຊັ່ນ: ການວາງໄວ້ໃນຮົ່ມ, ແຊ່ໃນສາຍນ້ຳ,ຫຼື ປູກມັນຊົ່ວຄາວໃນຮົ່ມ.

ໃນເວລາປູກເບ້ຍໄມ້ຢູ່ພາກສະໜາມ, ໃຫ້ຂົນເບ້ຍໄມ້ມາຈຳນວນໜຶ່ງ ແລ້ວປູກໄປຕາມລຳດັບ. ເອົາເບ້ຍເປົ່າໃສ່ຖົງກ້າເບ້ຍໄມ້ ຫຼື ຖົງຢາງທີ່ແຂງແຮງ.

(2) ເບ້ຍຖາດ


ວິທີການຂົນສົ່ງທົ່ວໄປທີ່ສຸດ ແມ່ນ ດຶງເບ້ຍໄມ້ອອກຈາກຖາດ ແລ້ວໃຊ້ແກັດເຈ້ຍ ຫຼື ຕາໜ່າງຕ່າງໆ. ລະມັດລະວັງບໍ່ໃຫ້ລຳຕົ້ນ ໂດຍສະເພາະໃຫ້ເອົາໃຈໃສ່ລະມັດລະວັງບໍ່ໃຫ້ຍອດຂອງມັນໄດ້ຮັບຄວາມເສຍຫາຍ. ໃນກໍລະນີນີ້, ຮາກອາດຈະແຫ້ງ ແລະ ໄດ້ຮັບເສຍຫາຍ, ດັ່ງນັ້ນ ໃຫ້ປ້ອງກັນມັນດ້ວຍການຫໍ່ດ້ວຍແຜນພາດສະຕິກ ຫຼື ຖົງຢາງ. ນອກຈາກນັ້ນ, ໃນເວລາໃຊ້ແກັດເຈ້ຍ, ຈຳເປັນຕ້ອງໃຊ້ມາດຕະການຕ່າງໆ ເຊັ່ນ: ວາງແຜ່ນໄວນິວໄວ້ດ້ານໃນເພື່ອປ້ອງກັນບໍ່ໃຫ້ກ່ອງເສຍຄວາມແຂງແຮງ ຍ້ອນຄວາມຊຸ່ມຊື່ນຈາກເບ້ຳຮາກ.

ຫຼັງຈາກມາຮອດພູແລ້ວ, ເຖິງຈະປະໄວ້ໂດຍບໍ່ໄດ້ດູແລຫຼາຍທໍ່ເບ້ຍເປົ່າ ມັນກໍມີໂອກາດໜ້ອຍທີ່ປະສົບກັບຄວາມແຫ້ງ, ແຕ່ຈຳເປັນຕ້ອງເກັບໄວ້ໃນຮົ່ມ ຫຼື ຄຸມມັນດ້ວຍຫຍັງບາງຢ່າງ. ສຳລັບການເກັບຮັກສາໃນໄລຍະຍາວ ແມ່ນ ໃຫ້ເກັບຮັກສາມັນໄວ້ຢູ່ໃນຖາດແບບນັ້ນເລີຍ, ເຊິ່ງໃນກໍລະນີນີ້ ຄວນແຂວນມັນໄວ້ໃນອາກາດແທນທີ່ຈະວາງມັນໄວ້ຢູ່ເທິງພື້ນດິນ. ນອກຈາກນັ້ນ, ຫາກຕ້ອງການປະໄວ້ຫຼາຍກວ່າສອງສາມມື້ ແມ່ນ ໃຫ້ຫຼີກລ່ຽງການປະມັນໄວ້ໂດຍກົງກັບພື້ນດິນ, ແຕ່ໃຫ້ເອົາມັນປະໄວ້ຢູ່ເທິງແຜ່ນ.

ໃນເວລາປູກເບ້ຍໄມ້ຢູ່ສະໜາມວຽກ, ການນຳໃຊ້ກະຕ່າແອວສູງ ແມ່ນ ຈະມີຄວາມສະດວກສຳລັບເບ້ຍຖາດຂະໜາດກະທັດຫັດ.

ການຈັດການປູກ

ການວາງຕຳແໜ່ງຂອງເບ້ຍໄມ້ທີ່ຈະປູກ ຈຳເປັນຕ້ອງພິຈາລະນາເຖິງຈຸດຕ່າງໆ. ຕົວຢ່າງ, ເພື່ອຊ່ວຍໃຫ້ຕົ້ນໄມ້ທີ່ປູກແຕ່ລະຕົ້ນເຕີບໃຫຍ່ຢ່າງແຂງແຮງ, ຊ່ວຍໃຫ້ຕົ້ນໄມ້ສາມາດແຂ່ງຂັນກັບຫຍ້າ ຈະຕ້ອງຄຳນຶງເຖິງການປັບປຸງປະສິດທິພາບຂອງການເຮັດວຽກ ເຊັ່ນ: ການຕັດຫຍ້າ ແລະ ການຕັດຕອນ. ການຈັດວາງ ມີ ຫຼາຍຮູບແບບ, ແຕ່ ຈະຍົກຕົວຢ່າງ ປະເພດທົ່ວໄປທີ່ສຸດ ດັ່ງດ້ານລຸ່ມນີ້ (ຮູບ 7-4).



ຮູບທີ 7-4 ຮູບແບບການຈັດການປູກເບ້ຍໄມ້

ແຫຼ່ງຂໍ້ມູນ: Takao Fujimori “ຄວາມຮູ້ກ່ຽວກັບການສ້າງປ່າໄມ້: ຈາກໂຄງສ້າງປ່າໄມ້ໄປສູ່ການດຳເນີນ ງານ, ການຄຸ້ມຄອງ ແລະ ວິໄສທັດ” ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ຕາຕະລາງ 7-2 ລາຍການກວດກາຄວາມປອດໄພສຳລັບວຽກງານການປູກ

ລາຍການກວດກາ	ຈຸດກວດ
ການປູກພືດທີ່ປອດໄພ	① ຢືນຢັນຂັ້ນຕອນການເຮັດວຽກ ແລະ ຮູບແບບການເຮັດວຽກ
	② ລະມັດລະວັງພື້ນຕີນ
	③ ຫ້າມເຮັດວຽກເທິງລຸ່ມ
	④ ເມື່ອຂຸດຂຸມປູກ, ໃຫ້ກວດເບິ່ງຫີນ ແລະ ຮາກ
	⑤ ຕັດຮາກທີ່ໜາໃນຂຸມປູກດ້ວຍເລື່ອຍ ຫຼື ຜ້າ
	⑥ ລະວັງບໍ່ໃຫ້ລົ້ມເມື່ອດຶງຮາກ ແລະ ງ່າອອກຈາກຂຸມປູກ.
	⑦ ວາງຫີນທີ່ຂຸດໄວ້ໃນບ່ອນໝັ້ນຄົງ.
	⑧ ຮັກສາຄວາມປອດໄພຂອງຕີນໃນເວລາທີ່ເຮັດວຽກຢູ່ໃນພື້ນທີ່ທີ່ມີ່ນງ່າຍ (ຄວາມຊັນ/ມີຂີ້ຕົມ)

ເອກະສານອ້າງອີງ: ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ “ເພື່ອວຽກງານພູທີ່ປອດໄພ”

(1) ການປູກໃນລັກສະນະສີ່ຫຼ່ຽມມົນ

ເພື່ອເຮັດໃຫ້ໄດ້ລຳຕົ້ນຕັ້ງຊື່ ແລະ ມົນສູງ ຈຳເປັນຕ້ອງໃຫ້ພື້ນທີ່ໃນການຂະຫຍາຍພຸ່ມຂອງຕົ້ນໄມ້ ເພື່ອໃຫ້ມັນແຜ່ຂະຫຍາຍຢ່າງເທົ່າທຽມກັນໃນທຸກທິດທາງ. ໃນການປູກໃນລັກສະນະສີ່ຫຼ່ຽມມົນ, ສຳລັບພື້ນທີ່ລາດຊັນ ພຸ່ມປາຍໄມ້ຈະມີລັກສະນະຂະຫຍາຍໂຕດີຢູ່ເບື້ອງທີ່ເປັນຮ່ອມພູ, ສ່ວນເບື້ອງທີ່ຢູ່ທາງດ້ານພູ ພຸ່ມໄມ້ຈະຖືກກັດເຊາະຈາກພຸ່ມປາຍໄມ້ຂອງຕົ້ນໄມ້ທີ່ຢູ່ເບື້ອງຮ່ອມພູ. ດ້ວຍເຫດຜົນນີ້, ຈຶ່ງຄວນປູກເປັນຮູບສີ່ຫລ່ຽມຈັດຕຸລັດ ໂດຍມີໄລຍະຫ່າງລວງຕັ້ງ ຫຼາຍກວ່າລວງນອນ.

(2) ການປູກສາມຫຼ່ຽມຈັດຕຸລັດ (ການປູກສາມຫຼ່ຽມ)

ການເຮັດໃຫ້ຕົ້ນໄມ້ແຕ່ລະຕົ້ນມີພື້ນທີ່ພຸ່ມປາຍໄມ້ເທົ່າກັນຢູ່ທັງພື້ນທີ່ລາດຊັນ ແລະ ທົ່ງພຽງ ຖືວ່າເປັນສິ່ງທີ່ເໝາະສົມ. ການປູກຕົ້ນໄມ້ສາມຫຼ່ຽມ ຈະຊ່ວຍໃຫ້ສາມາດປູກຕົ້ນໄມ້ທີ່ພຸ່ມປາຍໄມ້ມີຄວາມສົມດູນ, ດັ່ງນັ້ນ ຈຶ່ງເວົ້າວ່າ ຈະເປັນການງ່າຍທີ່ຈະໄດ້ລຳຕົ້ນຕັ້ງຊື່ ແລະ ມົນກົມ. ມັນຍັງມີປະສິດທິພາບໃນການປ້ອງກັນຕົ້ນໄມ້ຈາກການລົ້ມລົງ ຍ້ອນຄວາມເສຍຫາຍຂອງຫີມະ. ໃນທາງກົງກັນຂ້າມ ແມ່ນ ມັນຈະເຮັດໃຫ້ປະສິດທິພາບຂອງການປະຕິບັດຂັ້ນຕອນການຕັດຕອນຫຼຸດລົງ.

(3) ການປູກແບບຊິກແຊັກ (ການປູກແບບເຊ)

ມັນມີປະສິດຕິຜົນທີ່ຄ້າຍຄືກັນກັບການປູກສາມຫລ່ຽມ ແລະ ມັກຈະຖືກນຳໃຊ້ໃນພື້ນທີ່ທີ່ມີຫີມະ. ການປູກເປັນແຖວ ປະກອບມີ 2 ແຖວ ແລະ 3 ແຖວ, ເຊິ່ງສະດວກສຳລັບການເຮັດວຽກທີ່ໃຊ້ເຄື່ອງຈັກ.

(4) ການປູກເປັນຕາໜ່າງ

ເປັນວິທີການປູກຕົ້ນໄມ້ເປັນກຸ່ມຕິດກັນເລັກໜ້ອຍ. ເວົ້າກັນວ່າເປັນວິທີທີ່ສາມາດປ້ອງກັນ ແລະ ຕ້ານການແຂ່ງຂັນກັບຕົ້ນຫຍ້າ ແລະ ສະພາບອາກາດທີ່ຮຸນແຮງໃນຊ່ວງທີ່ປົ່ງງ່ຳປົ່ງໃບໃໝ່. ທັງຍັງສາມາດຫຼຸດຈຳນວນຕົ້ນທັງໝົດອີກດ້ວຍ.

ວິທີການຮັບປະກັນຄວາມປອດໄພໃນລະຫວ່າງການເຮັດວຽກຂອງການປູກເບ້ຍໄມ້

ຂະບວນການປູກເບ້ຍໄມ້ ແມ່ນ ເລີ່ມຕົ້ນຈາກທາງລຸ່ມຂອງພື້ນທີ່ທີ່ລາດຊັນໄປຫາດ້ານເທິງ, ເມື້ງໂຕໄປທາງດ້ານໜ້າໃນຂະນະທີ່ປູກເບ້ຍໄມ້. ດັ່ງນັ້ນ, ຜູ້ອອກແຮງງານ ຈຶ່ງມີແນວໂນ້ມທີ່ເບິ່ງເຫັນສະພາບແວດລ້ອມໃນການເຮັດວຽກອ້ອມຂ້າງແຄບລົງ. ນອກຈາກນັ້ນ, ຜູ້ອອກແຮງງານຕ້ອງໄດ້ເອົາໃຈໃສ່ຢ່າງລະມັດລະວັງໃນການຮັບປະກັນວ່າເບ້ຍຈະຢັ່ງຮາກ. ຈາກມຸມມອງນີ້, ຈຳເປັນຕ້ອງລະມັດລະວັງເປັນຢ່າງຫຼາຍ ເນື່ອງຈາກວ່າບາງຄັ້ງ ອາດຈະຂາດການພິຈາລະນາຄວາມປອດໄພ.

ສຳລັບວິທີການປູກ ແມ່ນ ຈະແຕກຕ່າງກັນເລັກນ້ອຍ ໂດຍຂຶ້ນຢູ່ກັບພື້ນທີ່ ແລະ ເຄື່ອງມືຊ່າງທີ່ນຳໃຊ້ກໍແຕກຕ່າງກັນ. ສິ່ງສຳຄັນ ແມ່ນ ຕ້ອງປະຕິບັດວຽກງານຢ່າງເໝາະສົມ ໂດຍການນຳໃຊ້ເຄື່ອງມືຊ່າງທີ່ເໝາະສົມກັບເງື່ອນໄຂຂອງພູມສັນຖານ.

ກ່ຽວກັບວິທີການຮັບປະກັນຄວາມປອດໄພ, ນອກຈາກ ຫົວຂໍ້ ໃນ “ການຮັບປະກັນຄວາມປອດໄພໃນລະຫວ່າງການກະກຽມໜ້າດິນ” ຍັງມີຈຸດທີ່ຕ້ອງໄດ້ເອົາໃຈໃສ່ດັ່ງຕໍ່ໄປນີ້.

(1) ຂຸດຂຸມປູກ

ໃນເວລາຂຸດຂຸມປູກດ້ວຍໝາກຈົກ, ທຳອິດ ໃຫ້ທຸບດິນເບົາໆເພື່ອກວດເບິ່ງວ່າມັນມີກ້ອນຫີນ ຫຼື ຮາກຕ່າງໆ. ໃຊ້ເລື່ອຍ ຫຼື ພ້າຕັດເອົາຮາກທີ່ໜາພາຍໃນຂຸມປູກອອກ. ໃນເວລາຖືກຮາກທີ່ຕັດດ້ວຍໝາກຈົກອອກມາ ແມ່ນ ຄວນລະມັດລະວັງ ເພື່ອປ້ອງກັນບໍ່ໃຫ້ຕົ້ນໄມ້ລົ້ມ ຫຼື ຕົກລົງມາ ເຊິ່ງຈະພາໃຫ້ເກີດໄພພິບັດທີ່ບໍ່ຄາດຄິດ.

(2) ລະມັດລະວັງກ້ອນຫີນຕົກ

ໃຫ້ເອົາ ຮາກ ແລະ ຫີນທີ່ຂຸດອອກມາ ວາງໄວ້ຢູ່ບ່ອນທີ່ໝັ້ນຄົງ ເພື່ອປ້ອງກັນບໍ່ໃຫ້ພວກມັນຕົກລົງມາ.

(3) ເຮັດໃຫ້ເຫຼັກລານແຂງແຮງ

ໃນການເຮັດວຽກຢູ່ເທິງພື້ນທີ່ລາດຊັນ ແລະ ໝິ່ນງ່າຍ ໃຫ້ສ້າງເຫຼັກລານ ແລ້ວປະຕິບັດວຽກງານຢ່າງລະມັດລະວັງ

ຂັ້ນຕອນການປູກເບ້ຍໄມ້ (ຮູບ 7-5)

ມາປະຕິບັດຕາມຂັ້ນການປູກເບ້ຍເປົ່າ ແລະ ເບ້ຍຖາດ ຕາມຂັ້ນຕອນທີ (1) ຫາ (6) ດັ່ງຕໍ່ໄປນີ້: ສຳລັບເບ້ຍຖາດ, ຂັ້ນຕອນ 2), 5) 6) ແມ່ນ ບໍ່ຈຳເປັນ, ສາມາດຂ້າມໄດ້. ສະພາບອາກາດທີ່ເອື້ອອຳນວຍທີ່ສຸດສຳລັບການປູກເບ້ຍໄມ້ ແມ່ນ ມື້ທີ່ມີເມກ. ເຫດຜົນ ແມ່ນ ຍ້ອນມັນຈະບໍ່ເຮັດ ໃຫ້ຮາກແຫ້ງງ່າຍ, ແຕ່ໃຫ້ຫຼີກລ່ຽງມື້ຝົນຕົກ. ດິນທີ່ຖືກຊຶມນ້ຳ ຈະບໍ່ມີຮູຊ່ອງວ່າງໃນດິນ ຍ້ອນຖືກດິນຖົມ ແລະ ຖືກຢຽບໃຫ້ແໜ້ນ ດັ່ງນັ້ນ ດິນ ຈຶ່ງມີຄວາມແໜ້ນເກີນໄປ.

(1) ການກຳນົດຈຸດ

ເນ່ັງສາຍແມັດ ຫຼື ເຊືອກ ຕາມແລວເສັ້ນຂອບ ແລ້ວອ່ານຂະໜາດ ໄປພ້ອມໆກັບການກຳນົດຈຸດ. ຫຼື ສາມາດນຳໃຊ້ໄມ້ຍາວທີ່ມີຄວາມຍາວ ເທົ່າກັບໄລຍະຫ່າງໃນການປູກເບ້ຍໄມ້. ໃຫ້ຕັ້ງງ່າໄມ້ຕ່າງໆທີ່ຕົກລົງມາ ໄວ້ຢູ່ຈຸດທີ່ໝາຍໄວ້. ຫຼັງຈາກເນ່ັງສາຍບາງສ່ວນແລ້ວໆ ໃຫ້ຍັບສາຍ ແມັດ ຫຼື ເຊືອກຂຶ້ນລົງຕາມໄລຍະຫ່າງລະວ່າງຕົ້ນໄມ້. ອີກວິທີໜຶ່ງ ແມ່ນ ໃຊ້ໄມ້ຍາວເພື່ອກຳນົດຈຸດຕ່ໆໄປ ໃນຂະນະປູກເບ້ຍໄມ້, ໂດຍບໍ່ຈຳເປັນ ຕ້ອງໃຊ້ສາຍເຊືອກ, ແລ້ວເອົາເບ້ຍໄມ້ໄປປູກເທື່ອລະຕົ້ນ ແລ້ວຍ້າຍຈາກດ້ານໜຶ່ງໄປອີກດ້ານໜຶ່ງ.

(2) ກຳຈັດໃບໄມ້ ແລະ ງ່າທີ່ລົ່ນ

ໃຊ້ໝາກຈົກເພື່ອເອົາໃບໄມ້ ແລະ ງ່າໄມ້ທີ່ລົ່ນລົງອອກຈາກບໍລິເວນຈຸດທີ່ກຳນົດ. ທັງນີ້, ເພື່ອເຮັດໃຫ້ການຂຸດຂຸມງ່າຍຂຶ້ນ ແລະ ປ້ອງກັນບໍ່ໃຫ້ ໃບໄມ້ ແລະ ງ່າໄມ້ລົ່ນລົງມາປະສົມກັບດິນທີ່ຖືກຖົມຕື່ມ.

(3) ຂຸດຂຸມປູກ

ຂຸດຂຸມດ້ວຍໝາກຈົກ. ໃຫ້ຂຸດຂຸມຂະໜາດໃຫຍ່ເພື່ອຮອງຮັບຮາກ. ເອົາຫີນຊາຍ(ຫີນໝາກຄອມ)ອອກ ແລ້ວຕັດຮາກ ກໍລະນີຂຸດຍາກ ແມ່ນ ໃຫ້ຍັບໄປຫາຈຸດໃກ້ຄຽງທີ່ຂຸດງ່າຍ.

(4) ວາງເບ້ຍໄມ້ຢູ່ກັບບ່ອນ

ປູກເບ້ຍໄມ້ໃສ່ຂຸມທີ່ຂຸດ ສຳລັບເບ້ຍຖາດ, ໃຫ້ຖອດຖາດອອກໂດຍບໍ່ເຮັດໃຫ້ເບ້ົາຂອງຮາກເພ ແລ້ວປູກເບ້ຍໄມ້ໃສ່ຂຸ່ມ. ສຳລັບເບ້ຍເປົ່າ ແມ່ນ ໃຫ້ປູກໂດຍການແຜ່ຮາກອອກ.

(5) ຖົມດິນ

ເອົາດິນກັບຄືນເຂົ້າໄປໃນຂຸມ. ຫາກເປັນພື້ນທີ່ລາດຊັນ ແມ່ນ ໃຫ້ທຸບດິນທີ່ຢູ່ເທິງບ່ອນລາດຊັນແລ້ວເອົາດິນດັ່ງກ່າວໃສ່ໄປໃນຂຸມ. ຫາກດິນ ບໍ່ພໍ, ໃຫ້ເອົາດິນທີ່ຂຸດອອກມານັ້ນ ມາຖົມຄືນ, ແຕ່ຫ້າມເອົາໃບໄມ້ທີ່ລົ່ນລົງມາ, ງ່າໄມ້ ແລະ ກ້ອນຫີນປົນລົງໄປນຳ.


(6) ຢຽບໃຫ້ແໜ້ນ

ໃຫ້ເອົາສົ້ນຕີນຢຽບດິນເພື່ອໃຫ້ດິນແໜ້ນ ໄປພ້ອມໆກັບການຈັບສ່ວນທີ່ຢູ່ໃກ້ໆປາຍຂອງເບ້ຍໄມ້ (ບໍ່ແມ່ນຍອດໄມ້ ແຕ່ແມ່ນ ລຳຕົ້ນ) ຢຽບ ດ້ວຍຄວາມແຮງຈົນແບບຮູ້ສຶກວ່າ ຮາກ ແລະ ດິນຕິດກັນແໜບສະໜິດ.


ເຄື່ອງມື ແລະ ວິທີການປູກເບ້ຍຖາດ

ເບ້ຍຖາດ ແຕກຕ່າງຈາກ ເບ້ຍເປົ່າ ບ່ອນລະບົບຮາກຈະລວມເຂົ້າກັບເບ້ົາເປັນແກນດຽວກັນ. ໃນເວລາປູກເບ້ຍໄມ້, ຫາກເບ້ົາຮາກ ແລະ ດິນ ຕິດກັນສະໜິດກັນ ກໍຈະຖືວ່າເປັນສິ່ງທີ່ດີ ສະນັ້ນ ໂດຍພື້ນຖານແລ້ວ ແມ່ນ ສາມາດປູກໄດ້ດ້ວຍການຈົກພຽງໜຶ່ງຄັ້ງ. ບໍ່ຄືກັບເບ້ຍເປົ່າ ທີ່ບໍ່ຈຳ ເປັນຕ້ອງຂຸດດິນ ຫຼື ເພີ່ມດິນຫຼັງຈາກປູກ. ຍັງມີເຄື່ອງມືປູກຕົ້ນໄມ້ທີ່ເປັນເອກະລັກ (ເຄື່ອງມືຢູ່ເບື້ອງຂວາດ້ານລຸ່ມຂອງຮູບທີ 6-3 ໃນ “No.06


1. ເອົາໃບໄມ້ ແລະ ງ່າທີ່ລົ້ນລົງມາອອກ




2. ຂຸດຂຸມປູກ



3. ຖົມດິນລົງໄປຄືນດ້ວຍດິນທີ່ຢູ່ຫົວພູ ແລ້ວຢຽບໃຫ້ແໜ້ນ



4. ສຳເລັດ. ຫາກຄຸມດ້ວຍໃບ ແລະ ງ່າໄມ້ທີ່ລົ່ນລົງມາ ກໍຈະປ້ອງກັນບໍ່ໃຫ້ແຫ້ງ



ຮູບທີ 7-5 ຂັ້ນຕອນການປູກເບ້ຍໄມ້ຕາມພື້ນທີ່ລາດຊັນ

ແຫຼ່ງຂໍ້ມູນ: "ຄູ່ມືກ່ຽວກັບປ່າໄມ້ໃໝ່ "ການແນະນຳກ່ຽວກັບປ່າໄມ້" ດັດແກ້ໂດຍສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ

ປະເພດ ແລະ ຈຸດປະສົງຂອງວຽກງານປູກຕົ້ນໄມ້" ໃນປຶ້ມຫົວນີ້) ທີ່ສາມາດນຳໃຊ້ເພື່ອບັນລຸຜົນຂອງການປູກພືດໃຫ້ມີປະສິດທິພາບສູງ.

(1) ທໍ່ປູກ

ເປັນການເຮັດວຽກທີ່ສາມາດເຮັດວຽກໄປໄດ້ໃນລັກສະນະທີ່ຢືນຢູ່ເລີຍ, ບໍ່ຈຳເປັນກົ້ມແອວ ຫຼື ຫຼັງ, ດັ່ງນັ້ນ ຈຶ່ງສາມາດເຮັດວຽກໄດ້ຢ່າງມີປະສິດທິພາບ. ຢ່າງໃດກໍຕາມ, ມັນບໍ່ເໝາະສົມສຳລັບດິນທີ່ມີພືດພັນຊັ້ນລຸ່ມຫຼາຍ, ດິນໜາກຄອມ ແລະ ດິນໜຽວ

ຈະປູກຕາມຂັ້ນຕອນຕໍ່ໄປນີ້: ປັບຕຳແໜ່ງແປ້ນເຈາະລ່ວງໜ້າ ເພື່ອໃຫ້ກົງກັບຄວາມສູງຂອງເບ້ຍຮາກຂອງເບ້ຍຖາດ.

① ກວດກາວ່າປາຍຂອງທໍ່ປົດຢູ່. ປິ່ນແປ້ນໄປທາງຕົນເອງ ແລະ ກຳດ້າມຈັບ. ສຽບໃສ່ພື້ນດິນ ແລ້ວຢຽບແປ້ນເຈາະ ຈົນກວ່າມັນຈະເຈາະເຂົ້າໄປໃນດິນ.

②ຢຽບແປ້ນສຳລັບເປີດປາກທໍ່ ແລ້ວປາຍຂອງທໍ່ກໍຈະເປີດອອກ.

③ປ່ອຍເບ້ຍໄມ້ລົງໄປຈາກດ້ານເທິງຂອງທໍ່.

④ດຶງທໍ່ປູກອອກ.

⑤ກົດຄັນໂຍກທີ່ຢູ່ດ້ານເທິງຂອງທໍ່ປູກເພື່ອປິດປາຍທໍ່.

⑥ເຮັດໃຫ້ບໍລິເວນອ້ອມຮອບຂອງເບ້ຍໄມ້ມີຄວາມແໜ້ນ.

(2) ຊ້ວນ

ມີຫຼາຍຮູບຊົງ, ແຕ່ເວົ້າກັນວ່າ ຮູບຊົງທີ່ມີປາຍແຫຼມ ແລະ ມີຂອບ ເປັນຮູບຊົງທີ່ໃຊ້ງ່າຍ. ຈະປະຕິບັດຕາມຂັ້ນຕອນດ້ານລຸ່ມນີ້, ແຕ່ ໃນພື້ນທີ່ທີ່ມີພືດພັນຊັ້ນລຸ່ມ ຫຼື ລະບົບຮາກໃນດິນຫຼາຍ ແມ່ນ ຈະໃຊ້ຊ້ວນຕັດຂຸດສັບຫຼາຍໆຄັ້ງເພື່ອຕັດລະບົບຮາກລ່ວງໜ້າ. ນອກຈາກນັ້ນ, ໃນພື້ນທີ່ທີ່ມີພື້ນທີ່ທີ່ຫຍ້າປົກຄຸມຫຼາຍ ແມ່ນ ໃຫ້ໃຊ້ຊ້ວນເພື່ອເອົາມັນອອກ.

① ຈັບດ້າມຈັບ ແລ້ວເອົາຊ້ວນສຽບເຂົ້າໄປໃນດິນ.

② ງັດໄປມາເພື່ອຂະຫຍາຍຮູ. ໃນເວລາທີ່ບໍ່ສາມາດຂຸດຂຸມປູກໄດ້ ຍ້ອນວ່າດິນແຂງ ແມ່ນ ໃຫ້ຈັບຊ້ວນອອກກ່ອນບາດໜຶ່ງ ແລ້ວຈຶ່ງຄ່ອຍ ສຽບຊ້ວນເຂົ້າໄປໃໝ່ໃນລັກສະນະທິດທາງຕັ້ງສາກ ກໍຈະເຮັດໃຫ້ສາມາດຂຸດເຂົ້າໄດ້.

③ ກໍລະນີເປັນດິນທີ່ບໍ່ຟຸ່ຍ ແມ່ນ ໃຫ້ດຶງຊ້ວນອອກ, ແຕ່ຫາກເປັນດິນທີ່ຟຸ່ຍງ່າຍ ແມ່ນ ໃຫ້ຍ້າຍຊ້ວນໄປອີກດ້ານໜຶ່ງຂອງຂຸມ ເພື່ອປ້ອງກັນ ບໍ່ໃຫ້ດິນເຈື່ອນ ໄປພ້ອມໆກັບການເອົາເບ້ຍໄມ້ລົງໄປໃນຂຸມປູກ.

④ ເຮັດໃຫ້ບໍລິເວນອ້ອມຮອບຂອງເບ້ຍໄມ້ມີຄວາມແໜ້ນ.

(3) ເຄື່ອງເຈາະຮູ

ສາມາດນຳໃຊ້ໄດ້ກັບເບ້ຍຖາດຂະໜາດຕ່າງໆໂດຍການປ່ຽນສ່ວນປາຍຂອງມັນ. ມີວິທີການປະຕິບັດອີກວິທີໜຶ່ງທີ່ສາມາດເພີ່ມປະສິດຕິພາບໃນການຂຸດຂຸມໄດ້ພຽງແຕ່ການປະຕິບັດໃນຄັ້ງດຽວ, ແຕ່ ບໍ່ສາມາດນຳໄປໃຊ້ກັບດິນໜຽວ, ດິນໜາກຄອມ ແລະ ບ່ອນທີ່ມີລະບົບຮາກ ຢູ່ເທິງພື້ນດິນໄດ້.

① ຈັບດ້າມຈັບ ແລ້ວສຽບມັນລົງພື້ນດິນຈົນກ່າວໂຕຢຸດຈະກະແທກກັບພື້ນດິນ. ຫາກດິນແຂງ, ໃຫ້ເອົາຕີນໃສ່ແປ້ນຢຽບ ແລ້ວລົງນ້ຳໜັກໃສ່ແປ້ນນັ້ນ .

② ດຶງແມວເຈາະຮູອອກ ແລ້ວເອົາເບ້ຍໄມ້ເຂົ້າໄປໃນຂຸມ.

③ ເຮັດໃຫ້ບໍລິເວນອ້ອມຮອບຂອງເບ້ຍໄມ້ມີຄວາມແໜ້ນ.

(4) ໝາກຈົກ

ມັນເປັນເຄື່ອງມືການປູກທີ່ເໝາະສົມທີ່ສຸດສຳລັບທຸກພື້ນທີ່. ມັນສາມາດເຈາະໄດ້ ເຖິງແມ່ນວ່າຈະເປັນດິນໜຽວ ດິນໜາກຄອມ ຫຼື ດິນມີລະບົບຮາກ. ຍິ່ງເປັນພູມສັນຖານທີ່ສູງຂຶ້ນເທົ່າໃດ, ການເຮັດວຽກກໍຍິ່ງຈະງ່າຍຂຶ້ນຫຼາຍຂຶ້ນເທົ່ານັ້ນ, ທັງຍັງສາມາດໃຊ້ສຳລັບກຳຈັດຫຍ້າທີ່ປົກຄຸມພື້ນດິນ ແລະ ຄາດໄຖດິນທີ່ແຂງໄດ້ນຳອີກດ້ວຍ ຢ່າງໃດກໍຕາມ, ຈຳເປັນຕ້ອງໃຊ້ຄວາມພະຍາຍາມຫຼາຍກ່ວາເຄື່ອງມືອື່ນໆ ເພາະວ່າ ຕ້ອງໄດ້ເຮັດວຽກໃນລັກສະນະທີ່ກົ້ມເປັນໄລຍະເວລາດົນ.

ໃນເວລາປູກເບ້ຍຖາດດ້ວຍຈົກ ແມ່ນ ຈະປູກໂດຍການໃຊ້ຈົກ ຈົກດິນພຽງຄັ້ງດຽວ

① ຫາກດິນແຂງ ແມ່ນ ຈະໃຊ້ຈົກໄຖດິນ 2 ຫາ 3 ຄັ້ງ.

② ເອົາຈົກຂຸດລົງໄປພື້ນດິນໃນລັກສະນະລວງຕັ້ງ

③ ງັດຈົກຂຶ້ນເພື່ອຂະຫຍາຍຄວາມກວ້າງຂອງຂຸມ

④ ວາງເບ້ຍໄມ້ລົງໃນຂຸມປູກ.

⑤ ຫາກດິນແຂງ, ໃຫ້ຈັບດ້າມຈັບທີ່ຢູ່ໃກ້ກັບແຂ້ວໝາກຈົກ ແລ້ວເອົາຈົກຊັບດິນ.

⑥ ເຮັດໃຫ້ບໍລິເວນອ້ອມຮອບຂອງເບ້ຍໄມ້ມີຄວາມແໜ້ນ.

* ຫາກດິນອ່ອນ, ບໍ່ຈຳເປັນຕ້ອງຄາດໄຖດິນ ແລະ ບໍ່ຈຳເປັນຕ້ອງຂຸດດິນເພື່ອເຮັດຂຸມປູກ.

ມາດຕະການຕົວຈິງ ຕໍ່ກັບຄວາມເສຍຫາຍ ທີ່ເກີດຈາກສັດປ່າ ໃນພື້ນທີ່ປູກຕົ້ນໄມ້

ວຽກງານຄວບຄຸມສັດຕູພືດສັດ (ຕົວຢ່າງມາດຕະການປ້ອງກັນກວາງ)

(1) ການຈັດຕັ້ງປະຕິບັດມາດຕະການປ້ອງກັນຄວາມເສຍຫາຍ

ຄວາມເສຍຫາຍຂອງປ່າໄມ້ທີ່ເກີດຈາກນົກ ແລະ ສັດປ່າ ແມ່ນ ຢູ່ໃນສະຖານະການທີ່ຮ້າຍແຮງ. ມັນເປັນສິ່ງສຳຄັນທີ່ຈະຊຸກຍູ້ 3 ມາດຕະການຕໍ່ໄປນີ້ຢ່າງຮອບດ້ານ ເພື່ອປ້ອງກັນຄວາມເສຍຫາຍທີ່ເກີດຈາກນົກ ແລະ ສັດປ່າ. ສິ່ງສຳຄັນ ແມ່ນ ໜ່ວຍງານພາກລັດ, ເຈົ້າຂອງປ່າ, ສະມາຄົມປ່າໄມ້ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງ ຈະຕ້ອງເຮັດວຽກຮ່ວມກັນເພື່ອແບ່ງປັນຂໍ້ມູນ ໄປພ້ອມໆກັບການຊີ້ແຈງກ່ຽວກັບການແບ່ງພາລະບົດບາດ ແລະ ດຳເນີນການພະຍາຍາມໃນວົງກວ້າງເພື່ອນຳພາແຕ່ລະເຂດພາກພື້ນໃຫ້ມາຮອມຕົວກັນ.

① ການປັບຈຳນວນປະຊາກອນ

ລັດຖະບານທ້ອງຖິ່ນ ແລະ ສະພາຄວບຄຸມຄວາມເສຍຫາຍ ແມ່ນ ກຳລັງດຳເນີນການຈັບກວາງຢ່າງເປັນລະບົບ ແລະ ການຝຶກອົບຮົມນັກວິຊາການຈັບ. ຄວາມພະຍາຍາມທີ່ຈະນຳໃຊ້ຊີ້ນຂອງນົກ ແລະ ສັດປ່າທີ່ຈັບໄດ້ເປັນສ່ວນປະກອບຂອງອາຫານ ແມ່ນ ກຳລັງແຜ່ຂະຫຍາຍໃນທົ່ວປະເທດ. ຢ່າງໃດກໍຕາມ, ຈຳນວນນາຍພານທີ່ຮັບຜິດຊອບໃນການຄຸ້ມຄອງປະຊາກອນ ກຳລັງຫຼຸດລົງທຸກປີ, ແລະ ປະຊາກອນກໍມີອາຍຸສູງຂຶ້ນ, ດັ່ງນັ້ນ ການຝຶກອົບຮົມ ແລະ ຈັດສັນນັກລ່າສັດ ຈະກາຍເປັນບັນຫາທີ່ທ້າທາຍໃນອະນາຄົດ.

② ການປ້ອງກັນຄວາມເສຍຫາຍ

ບັນດາເຈົ້າຂອງປ່າ ກຳລັງຕິດຕັ້ງຮົ້ວປ້ອງກັນ ແລະ ອຸປະກອນປ້ອງກັນຄວາມເສຍຫາຍອື່ນໆ ເຊິ່ງເປັນສ່ວນໜຶ່ງຂອງການບຳລຸງຮັກສາປ່າໄມ້, ຈັດກອງປະຊຸມສຳມະນາເພື່ອຮຽນຮູ້ວິທີການຕິດຕັ້ງຮົ້ວປ້ອງກັນ ແລະ ພັດທະນາເຕັກນິກການຄວບຄຸມສັດຕູພືດແບບໃໝ່.

③ ການຄຸ້ມຄອງທີ່ຢູ່ອາໄສ

ດ້ວຍການດຳເນີນການຕັດຕອນປ່າໄມ້ທີ່ຢູ່ຕິດກັບພື້ນທີ່ກະສິກຳ ຈຶ່ງໄດ້ມີຄວາມພະຍາຍາມໃນການປັບປຸງການເບິ່ງເຫັນ ແລະ ສ້າງສະພາບແວດລ້ອມ (ເຂດກັນໄຟ) ທີ່ນົກ ແລະ ສັດປ່າຕ່າງໆມີໂອກາດໃນການປະກົດໂຕໜ້ອຍ ຕະຫຼອດໄປຈົນເຖິງການດຳເນີນການປູກປ່າປະສົມ ແລະ ປ່າໃບກວ້າງທີ່ເໝາະສົມກັບລັກສະນະຂອງພື້ນທີ່.

(2) ມາດຕະການ ຫຼຸດຜ່ອນຄວາມເສຍຫາຍຂອງປ່າໄມ້

ການເຂົ້າໃຈສະພາບຕົວຈິງຂອງຄວາມເສຍຫາຍຂອງປ່າໄມ້ ແມ່ນ ບາດກ້າວທຳອິດຂອງການແກ້ໄຂ. ຫຼັງຈາກດຳເນີນການສຳຫຼວດ, ຈະສາມາດກຳນົດປະເພດປ່າໄມ້ທີ່ຕ້ອງການ (ຮູບແບບທີ່ຕ້ອງການຂອງປ່າໄມ້) ແລະ ຖ້າຫາກເລືອກເປົ້າໝາຍໃນການຄຸ້ມຄອງແລ້ວກໍຈະຊ່ວຍໃຫ້ສາມາດຈຳກັດວິທີການ ແລະ ຂອບເຂດຂອງມາດຕະການປ້ອງກັນໄດ້. ຫາກປະຕິບັດແນວນັ້ນ ກໍຈະຊ່ວຍໃຫ້ສາມາດຕອບສະໜອງຢ່າງມີປະສິດທິພາບ ແລະ ເປັນຈິງຫຼາຍຂຶ້ນ.

ມາດຕະການຫຼຸດຜ່ອນຄວາມເສຍຫາຍທີ່ສອດຄ່ອງກັບລະດັບຄວາມເສຍຫາຍຂອງປ່າໄມ້ ແມ່ນ ອີງໃສ່ການປັບຕົວຂອງຈຳນວນປະຊາກອນ.

ຕາຕະລາງ 7-3 ແລະ 7-4 ສະແດງໃຫ້ເຫັນມາດຕະການ ແລະ ການແນະນຳຕົວຕົວຈິງຈາກພາກສະໜາມ. ໃນນີ້ ຈະບໍ່ໄດ້ລະບຸກ່ຽວກັບມາດຕະການປ້ອງກັນສຳລັບກໍລະນີທີ່ລະດັບຄວາມເສຍຫາຍ ເປັນ 0.

①ຮົ້ວກວ້າງ (ຍົກຕົວຢ່າງເປັນໜ່ວຍງານກຸ່ມຂະໜາດນ້ອຍ)

ແນະນຳໃຫ້ເຮັດຮົ້ວ ເພາະມັນວິທີການທີ່ໃຫ້ຜົນໄດ້ຮັບທີ່ໝັ້ນຄົງທີ່ສຸດໃນການປ້ອງກັນຄວາມເສຍຫາຍຈາກກວາງ ແລະ ກໍມີລາຄາຖືກ. ມີຂໍ້ດີ ຄື ສາມາດປ້ອງກັນພື້ນທີ່ຂະໜາດໃຫຍ່ໄດ້ໃນເວລາດຽວ ແຕ່ຫາກມີຕົ້ນໄມ້ລົ້ມ ເຊິ່ງເຮັດໃຫ້ມີຮູຢູ່ບາງບ່ອນ ກວາງ ແລະ ສັດອື່ນໆກໍສາມາດເຂົ້າໄປໃນຮູ ແລະ ໄປເລັມກິນໃນຮົ້ວໄດ້. ເພາະສະນັ້ນ ຈຶ່ງຕ້ອງມີຄ່າບຳລຸງຮັກສາ ແລະ ຄ່າຕິດຕັ້ງ. ວິທີການນີ້ເປັນສິ່ງຈຳເປັນສຳລັບລະດັບຄວາມເສຍຫາຍຂັ້ນ 3 ຂຶ້ນໄປ (ຮູບ 7-6).

ຕາຕະລາງ 7-3 ຕົວຢ່າງມາດຕະການຕ່າງໆທີ່ຂຶ້ນກັບລະດັບຄວາມເສຍຫາຍຂອງປ່າໄມ້

ການກວດກາ	ລະດັບຄວາມເສຍຫາຍ		ລະດັບຄວາມເສຍຫາຍຂັ້ນ 1	ລະດັບຄວາມເສຍຫາຍຂັ້ນ 2	ລະດັບຄວາມເສຍຫາຍຂັ້ນ 3	ລະດັບຄວາມເສຍຫາຍຂັ້ນ 4
	ເນື້ອໃນ		ມີຜົນກະທົບພຽງເລັກນ້ອຍ ເທົ່ານັ້ນ	ມີກຸ່ມເລັກໆນ້ອຍໆບາງສ່ວນທີ່ ກະຈັດກະຈາຍ, ໂດຍລວມມີຜົນ ກະທົບເລັກນ້ອຍ	ຜົນກະທົບຕໍ່ປ່າໄມ້ທັງໝົດ	ຜົນກະທົບຮ້າຍແຮງຕໍ່ປ່າໄມ້ ທັງໝົດ
ມາດຕະການ ປ້ອງກັນ	ຈັບ	ການປັບຈຳນວນປະຊາ ກອນ (ແຜນການສະເພາະ)	ການປະຕິບັດຕົວຈິງໃນພື້ນທີ່ ຈັບສັດທີ່ຈຳເປັນຕາມແຜນການ ສະເພາະ	ການຫຼຸດຜ່ອນຈຳນວນສັດທັງ ຫມົດ	ການຫຼຸດຜ່ອນຈຳນວນສັດໃນໄລຍະເວລາສັ້ນໆເພື່ອຊ່ວຍຟື້ນຟູພືດ	
		ຈັບກຸ່ມຂະໜາດນ້ອຍ		ຈັດລຳດັບຄວາມສຳຄັນໃນການ ຈັບໃນພື້ນທີ່ທີ່ມີຄວາໜາແໜ້ນ ສູງ ມີແນວໂນ້ມທີ່ຈະເກີດຂຶ້ນ ຕາມລະດູການ ແລະ ບໍລິເວນທີ່ ຜົນກະທົບເລີ່ມປາກົດໃຫ້ເຫັນ.	ການດຳເນີນການຈັບ ຮ່ວມກັບການດຳເນີນວຽກງານ (ການຕັດຕອນ ແລະ ການປູກໃຫມ່)	
	ສານຂັບ ໄລ່	ສະເພາະໄມ້ທີ່ມີ ຄຸນນະພາບເທົ່ານັ້ນ	ມີປະສິດທິພາບ	ມີປະສິດທິພາບ	ບໍ່ມີຜົນກະທົບ	ບໍ່ມີຜົນກະທົບ
	ການພັນ ດ້ວຍຜ້າ	ສະເພາະໄມ້ທີ່ມີ ຄຸນນະພາບເທົ່ານັ້ນ	-	ດຳເນີນໃນກຸ່ມນ້ອຍເປັນບູລິ ມະສິດ	ປະສິດທິຜົນບາງສ່ວນ	ບໍ່ມີຜົນກະທົບ
	ຮົ້ວ	ພື້ນທີ່ບູລິມະສິດສຳລັບ ການດຳເນີນວຽກງານການ ປູກປ່າໄມ້ (ຕາມເສັ້ນທາງ ປ່າໄມ້ - ການປູກໃຫມ່)	-	ຮັບມືຕໍ່ການພັນຜ້າທີ່ລະບຸ ດ້ານເທິງ	ການຕິດຕັ້ງຮົ້ວເປັນສິ່ງຈຳເປັນສຳລັບສະຖານທີ່ປູກໃຫມ່ ແລະອື່ນໆ.	
		ປ່າທຳມະຊາດ ແລະ ປ່າສະຫງວນຕ່າງໆ	-	-	ພືດພັນທີ່ຈຳເປັນເພື່ອຮັກສາຊີວະນາໆພັນ ຈະຖືກອ້ອມຮົ້ວ ແລະ ຟື້ນຟູເພື່ອປົກປັກຮັກສາ. ໃນກໍລະນີດັ່ງກ່າວ, ຮົ້ວຂະໜາດນ້ອຍ (patch defense) ແມ່ນ ມີຄວາມສ່ຽງໜ້ອຍ.	

ທີ່ມາ: ເວັບໄຊອົງການປ່າໄມ້ "ຄູ່ມືເພື່ອປ້ອງກັນຄວາມເສຍຫາຍຈາກສັດປ່າໃນປ່າໄມ້"


ຕາຕະລາງ 7-4 ຕົວຢ່າງມາດຕະການຕອບໂຕ້ຂອງແຕ່ລະລະດັບຄວາມໜາແໜ້ນຂອງກວາງ (ລະດັບປ່າໄມ້ສ່ວນບຸກຄົນ)

ຂັ້ນຕອນການກໍ່ສ້າງ	ລະດັບຄວາມເສຍຫາຍຂອງປ່າໄມ້ (ຄວາມໜາແໜ້ນຂອງກວາງ).			ໝາຍເຫດ
	ຕ່ຳ	ກາງ	ສູງ	
	ລະດັບຄວາມເສຍຫາຍຂັ້ນ 1	ຄວາມເສຍຫາຍ 2,3	ລະດັບຄວາມເສຍຫາຍຂັ້ນ 4	
	ການບຳລຸງຮັກສາພືດພື້ນເມືອງ	ປະສົມກັບພືດທີ່ບໍ່ມີລົດຊາດ	ມີພຽງແຕ່ພືດທີ່ບໍ່ມີລົດຊາດເທົ່ານັ້ນ ທີ່ຈະ ຖືກຫຼຸດລົງເຄິ່ງຫນຶ່ງ - ຫາຍໄປຈາກພື້ນທີ່ປູກ ຫຍ້າໄມ້ໄຜ່.	
ການຕໍ່ອາຍຸໄມ້ແຂງ	·ການດຳເນີນງານປົກກະຕິ ·ການສີດພົ່ນຢາສານຂັບໄລ່	·ການສີດພົ່ນຢາສານຂັບໄລ່ ·ເສັ້ນດ່ຽ/Tsuboue	·ການຕິດຕັ້ງຮົ້ວປ້ອງກັນ	ການປ່ຽນແປງປະເພດປ່າໄມ້
ການຕັດຊ້ຳ ແລະ ການປູກຄືນໃຫມ່	·ການດຳເນີນງານປົກກະຕິ ·ການສີດພົ່ນຢາສານຂັບໄລ່	·ການສີດພົ່ນຢາສານຂັບໄລ່ ·ເສັ້ນດ່ຽ/Tsuboue	·ການຕິດຕັ້ງຮົ້ວປ້ອງກັນ	ປ່າທີ່ປູກຂຶ້ນ
ການຕັດຫຍ້າ	·ການດຳເນີນງານປົກກະຕິ	·ທາງໃນປ່າ - ການປູກຢ່າງສະໝ່ຳສະເໝີ	·ການຕັດຫຍ້າ ຫຼັງຈາກການປູກ	
ການຕັດແຕ່ງງ່າໄມ້	·ການດຳເນີນງານປົກກະຕິ	·ການດຳເນີນງານປົກກະຕິ	·ບໍ່ຕັດງ່າໄມ້	
ການຕັດຕອນ	·ການດຳເນີນງານປົກກະຕິ	·ການພັນຜ້າອ້ອມຮອບຕົ້ນໄມ້ທີ່ຍັງເຫຼືອ ໃນອະນາຄົດ	·ການຕັດ ແລະ ຖິ້ມ ໄມ້ບໍລິເວນໂຄນຂອງ ຕົ້ນໄມ້ທີ່ຍັງເຫຼືອ ໃນອະນາຄົດ ·ການສະສົມງ່າ ແລະ ໃບໄມ້	ການຈັດຫາພື້ນທີ່ໃຫ້ອາຫານດ້ວຍ ການຈັດການພື້ນທີ່ໃນການຮັບແສງ

ທີ່ມາ: ເວັບໄຊອົງການປ່າໄມ້ "ຄູ່ມືແນະນຳມາດຕະການປ້ອງກັນຄວາມເສຍຫາຍຈາກສັດປ່າໃນປ່າໄມ້"

② ຮົ້ວຂະໜາດນ້ອຍ

ເປັນວິທີການອ້ອມຮົ້ວໃນຫຼາຍບ່ອນ ສຳລັບດິນຕອນນ້ອຍ 100 ຫາ 200 ຕາແມັດ. ຫາກພື້ນທີ່ທີ່ຈະປ້ອງກັນໃຫຍ່ອອກເທົ່າໃດ ຍິ່ງຈຳ ເປັນຕ້ອງໄດ້ຂະຫຍາຍຮົ້ວອອກໄປເທົ່ານັ້ນ. ນອກຈາກນັ້ນ, ຍັງຕ້ອງໄດ້ເຮັດຮົ້ວໃຫ້ເປັນຮູບແບບໂມເສກ (mosaic) ສະນັ້ນ ພື້ນທີ່ອື່ນໆທີ່ຢູ່ ນອກບ່ອນອ້ອມຮົ້ວ ຈຶ່ງບໍ່ສາມາດປ້ອງກັນກວາງມາກິນໄດ້ . ຢ່າງໃດກໍຕາມ, ຮົ້ວກວາງ ສຳລັບ ດິນຂະໜາດນ້ອຍ ແມ່ນ ມີປະສິດທິພາບ, ເຊິ່ງ ເຖິງແມ່ນວ່າຄວາມແຂງແຮງ ແລະ ຄວາມສູງຂອງວັດສະດຸຈະບໍ່ພຽງພໍ, ກວາງກໍມີແນວໂນ້ມທີ່ຈະລະມັດລະວັງໃນການເຂົ້າໄປໃນຮົ້ວແຄບ ດັ່ງ ນັ້ນຈຶ່ງຖືວ່າເປັນຮົ້ວທີ່ດີເລີດ. ວິທີການທີ່ສຳຄັນ ສຳລັບ ຄວາມເສຍຫາຍລະດັບ 3 ຂຶ້ນໄປ.



ຮູບທີ 7-6 ຮົ້ວກວ້າງ

ເຖິງແມ່ນວ່າມັນມີປະໂຫຍດທີ່ສາມາດປ້ອງກັນພື້ນທີ່ຂະຫນາດໃຫຍ່ທັງຫມົດໃນເວລາດຽວ, ແຕ່ ມັນຈໍາເປັນຕ້ອງໃຊ້ເວລາ ແລະ ຄວາມພະຍາຍາມ ເຊັ່ນ: ຄ່າໃຊ້ຈ່າຍໃນການບໍາລຸງຮັກສາ ແລະ ການລາດຕະເວນ.

③ພັນດ້ວຍຜ້າ

ການພັນດ້ອຍຜ້າ ມີປະສິດທິພາບສູງໃນການປ້ອງກັນຄວາມເສຍຫາຍຈາກການລອກເປືອກໄມ້ທີ່ເກີດຈາກກວາງ ເຊິ່ງຕົ້ນໄມ້ທີ່ຖືກພັນດ້ອຍຜ້າ ແມ່ນ ເກືອບຈະບໍ່ໄດ້ຮັບຄວາມເສຍຫາຍເລີຍ. ຢ່າງໃດກໍຕາມ, ມັນມີບັນຫາທີ່ເກີດຂຶ້ນກັບຜ້າເອງ ເຊັ່ນ: ການເສື່ອມສະພາບຂອງຜ້າເອງ, ຜ້າເປື່ອຍແລ້ວຫາຍໄປຍ້ອນການຂະຫຍາຍໂຕຫຼາຍເກີນໄປ ແລະ ຄ່າໃຊ້ຈ່າຍແຮງງານເພີ່ມຂຶ້ນ. ນອກຈາກນີ້ຖ້າມີປ່າໄມ້ໃນບໍລິເວນໃກ້ຄຽງ ທີ່ ບໍ່ພັນເທບ ຍັງມີຂໍ້ເສຍ ທີ່ ກວາງອາດຈະເຄື່ອນຍ້າຍເອົາຄວາມເສຍຫາຍແຜ່ລາມອອກໄປ ປະສິດທິພາບບາງສ່ວນ ໄດ້ຮັບການຍອມຮັບ ໃນ ດັບຄວາມເສຍຫາຍຂັ້ນ 3.

④ສານຂັບໄລ່

ສໍາລັບສານຂັບໄລ່ ເປັນສິ່ງທີ່ຄາດຫວັງວ່າຈະມີປະສິດຕິພາບ ສໍາລັບລະດັບຄວາມໜາແໜ້ນທີ່ຕ່ໍາຂອງປະຊາກອນກວາງ. ຄິດວ່າຄວນໃຊ້ໃນ ພື້ນທີ່ທີ່ເຫັນຮອຍກັດກິນຢູ່ຕາມທາງໃນປ່າພຽງເລັກໜ້ອຍ ແລະ ບໍ່ເຫັນມູນຂອງສັດປ່າ ແລະ ສະຖານທີ່ທີ່ພືດຢູ່ໃນສະພາບເດີມທັງລະດັບ ປົກຄຸມ ແລະ ຈໍານວນປະເພດຂອງພືດ. ມັນຈະມີປະສິດທິຜົນໃນໄລຍະທໍາອິດຂອງຄວາມເສຍຫາຍ, ແຕ່ ຫາກຄວາມໜາແໜ້ນຂອງກວາງ ເພີ່ມຂຶ້ນ, ຄວາມເສຍຫາຍກໍຈະຍັງຄົງສືບຕໍ່ໄປ. ສາມາດຕອບສະໜອງຕໍ່ຄວາມເສຍຫາຍເຖິງລະດັບ 2.

(3) ການບໍາລຸງຮັກສາ ແລະ ຄຸ້ມຄອງຮົ້ວປ້ອງກັນ

ການກວດກາຮົ້ວປ້ອງກັນ

ເພື່ອຮັບປະກັນວ່າ ຮົ້ວດັ່ງກ່າວຈະສືບຕໍ່ມີປະສິດຕິຜົນໃນການນໍາໃຊ້ເພື່ອປ້ອງກັນສັດຕູພືດ ແມ່ນ ຈໍາເປັນຕ້ອງໄດ້ເອົາໃຈໃສ່ກວດກາວ່າບໍ່ຜິດ ປົກກະຕິໃດໆ ຕາມຄວາມເໝາະສົມ ແລະ ບໍາລຸງຮັກສາ ແລະ ຄຸ້ມຄອງມັນ.

A. ໄລຍະເວລາກວດກາ

ສິ່ງສໍາຄັນ ແມ່ນ ບໍ່ໃຫ້ລະເລີຍຄວາມຜິດປົກກະຕິໃນຮົ້ວປ້ອງກັນເປັນເວລາດົນນານ. ນອກຈາກການກວດກາເປັນປົກກະຕິແລ້ວ, ມັນຍັງມີ ປະສິດທິພາບດີ ຫາກເຂົ້າໃຈເຖິງຊ່ວງເວລາທີ່ມີຄວາມສ່ຽງທີ່ຈະເກີດຄວາມເສຍຫາຍເປັນພິເສດ ເຊັ່ນ: ຫຼັງຈາກພະຍຸໄຕ້ຝຸ່ນ ຫຼື ຝົນຕົກໜັກ

ຕ່າງໆເປັນຕົ້ນ ແລ້ວດຳເນີນການກວດກາແບບເໝັ້ນໝັ.

· ຊ່ວງເວລາທີ່ມີຄວາມສ່ຽງທີ່ຈະເກີດຄວາມເສຍຫາຍ: ໃນລະດູໜາວ ເຊິ່ງມີຕົ້ນໄມ້ບໍ່ຫຼາຍປານໃດ ນອກຈາກຕົ້ນໄມ້ທີ່ປູກ, ທັນທີຫຼັງຈາກ ຫິມະລະລາຍ, ຫຼັງຈາກຕັດຫຍ້າ ຕ່າງໆເປັນຕົ້ນ.

B. ຈຸດທີ່ຄວນສັງເກດໃນລະຫວ່າງການກວດກາ

ຈະສຳຫຼວດພື້ນທີ່ອ້ອມຮອບຮົ້ວປ້ອງກັນ ແລະ ກວດເບິ່ງລາຍການຕໍ່ໄປນີ້ຢ່າງລະມັດລະວັງ.

① ຄວາມສູງຂອງຮົ້ວປ້ອງກັນພຽງພໍບໍ?

② ມີຄວາມເສຍຫາຍຕໍ່ຮົ້ວປ້ອງກັນບໍ?

③ ມີການເຂີນຂຶ້ນຢູ່ຮົ້ວປ້ອງກັນດ້ານລຸ່ມບໍ?

“ຕົວຢ່າງຂອງຄວາມຜິດປົກກະຕິໃນຮົ້ວປ້ອງກັນທີ່ຖືກກວດເຫັນໃນລະຫວ່າງການກວດກາ”

· ຕາໜ່າງປ້ອງກັນຫັ

· ເຊືອກເຄັ່ງ

· ດ້ານລຸ່ມສຸດຂອງຕາຫນ່າງປ້ອງກັນເຂີນຂຶ້ນ

· ການກຳຈັດຊາກກວາງ

· ຄວາມເສຍຫາຍຂອງຕາໜ່າງປ້ອງກັນເນື່ອງຈາກດິນພັງ

· ຄວາມເສຍຫາຍຂອງຕາໜ່າງປ້ອງກັນເນື່ອງຈາກຕົ້ນໄມ້ລົ້ມຍ້ອນລົມ

ໃນລະຫວ່າງການກວດກາ, ຕ້ອງແນ່ໃຈວ່າໄດ້ຖືອຸປະກອນຕ່າງໆຕິດໂຕໄປນຳ ເພື່ອທີ່ຈະສາມາດສ້ອມແປງເລັກໆນ້ອຍໆໄດ້ ເຊັ່ນ: ລວດຕາໜ່າງ, ລວດສຳລັບແປງ ແລະ ເສົາຄ້ຳ.

ໃນກໍລະນີຂອງການສ້ອມແປງຂະໜາດໃຫຍ່ທີ່ຕ້ອງການວັດສະດຸ ຫຼື ແຮງງານເພີ່ມເຕີມ ແມ່ນ ໃຫ້ກວດກາຈຳນວນຂອງວັດສະດຸທີ່ຈຳເປັນ ແລະ ດຳເນີນການສ້ອມແປງອີກເທື່ອຫນຶ່ງ.

ສະຖານທີ່ດຽວກັນອາດຈະໄດ້ຮັບຜົນກະທົບຫຼາຍຄັ້ງ. ໝາຍສະຖານທີ່ ແລະ ບັນທຶກມັນລົງໃນຮູບແຕ້ມ ເພື່ອໃຫ້ສາມາດເບິ່ງວ່າມີຄວາມເສຍຫາຍຢູ່ໃສ, ເພື່ອທີ່ຈະໄດ້ສຸມໃສ່ການກວດກາໃນຄັ້ງຕໍ່ໄປເປັນຕົ້ນໄປ.

ການສ້ອມແປງຮົ້ວປ້ອງກັນ

ຫາກຮົ້ວປ້ອງກັນເສຍຫາຍ ຍ້ອນອຸບັດຕິເຫດ ແລະ ຈຳເປັນຕ້ອງໄດ້ສ້ອມແປງ ແມ່ນ ໃຫ້ຊອກຫາສາເຫດ ແລະ ພິຈາລະນາກ່ຽວກັບມາດຕະການປ້ອງກັນໄພພິບັດຊ້ຳຊ້ອນ ແລະ ດຳເນີນການສ້ອມແປງໂດຍໄວ.

ນອກຈາກນັ້ນ, ໃນພື້ນທີ່ທີ່ມີຄວາມສູງຂອງຮົ້ວປ້ອງກັນບໍ່ພຽງພໍ ຫຼືບ່ອນທີ່ຄົນມັກລັກເຂົ້າມາ ແມ່ນ ຈະໄດ້ມີການດຳເນີນການປັບປຸງທີ່ຈຳເປັນສຳລັບຮົ້ວທີ່ມີຢູ່ແລ້ວ ເຊັ່ນ: ເພີ່ມຕາຫນ່າງເພື່ອຮັບປະກັນຄວາມສູງ ຫຼື ຕິດຕັ້ງຕາໜ່າງແບບດັດແປງເພື່ອປ້ອງກັນບໍ່ໃຫ້ຄົນລັກເຂົ້າມາ.

ແຫຼ່ງຂໍ້ມູນ: “ຄູ່ມືການປ້ອງກັນຄວາມເສຍຫາຍທີ່ເກີດຈາກກວາງ - ປົກປັກຮັກສາຕົ້ນໄມ້ທີ່ປູກໃນຮົ້ວປ້ອງກັນ – (03/2020)” ສູນຄຸ້ມຄອງປ່າໄມ້, ອົງການຄົ້ນຄວ້າ ແລະ ພັດທະນາ ບຳລຸງຮັກສາປ່າໄມ້ ແຫ່ງຊາດ

(4) ມາດຕະການປ້ອງກັນຄວາມເສຍຫາຍຈາກສັດປ່າ ໂດຍ ການຈັບນົກ ແລະ ສັດ

ນອກຈາກມາດຕະການ ເຊັ່ນ: ການຕິດຕັ້ງຮົ້ວປ້ອງກັນຄວາມເສຍຫາຍ ແລະ ການນຳໃຊ້ສານຂັບໄລ່ ເພື່ອປ້ອງກັນຄວາມເສຍຫາຍຈາກກວາງ ແລ້ວ ຍັງມີມາດຕະການອື່ນໆລວມທັງການໃສ່ກັບດັກເພື່ອຫຼຸດຜ່ອນຈຳນວນໂຕສັດທີ່ເຮັດໃຫ້ເກີດຄວາມເສຍຫາຍນຳອີກ.

ໃນປຶ້ມຫົວນີ້, ຈະແນະນຳກ່ຽວກັບຮ່ວງກັບດັກ, ເຊິ່ງນິຍົມໃຊ້ໃນການຈັບກວາງຍີ່ປຸ່ນເພື່ອປ້ອງກັນຜູ້ອອກແຮງງານທີ່ເຮັດວຽກປ່າໄມ້ຈາກຄວາມເສຍຫາຍ.

ຕາຕະລາງ 7-5 ປະເພດຂອງໃບອະນຸຍາດລ່າສັດ

ການອະນຸຍາດຈັບສັດດ້ວຍຕາໜ່າງ	ຕາໜ່າງ (ຕາໜ່າງຈັບນົກ, ຕາໜ່າງແບບກາງ, ຕາໜ່າງຈັບປາ, ຕາໜ່າງແບບດຶກ(ແຫ))
ການອະນຸຍາດຈັບສັດດ້ວຍກັບດັກ	ກັບດັກ (ຮ່ວງກັບດັກ, ກົ່ງກັບດັກ, ກັບດັກກ່ອງ, ກັບດັກແບບປິດ)
ອະນຸຍາດລ່າສັດດ້ວຍປືນ ຂັ້ນໜຶ່ງ	ປືນສາກ (ປືນສັ້ນ, ປືນລູກຊອງ), ປືນລົມ
ອະນຸຍາດລ່າສັດດ້ວຍປືນ ຂັ້ນສອງ	ປືນລົມ

* ກັບດັກແບບປິດ ສາມາດນຳໃຊ້ໂດຍຊາວກະສິກອນ ຫຼື ຜູ້ຮັກສາ ໂດຍບໍ່ຕ້ອງມີໃບອະນຸຍາດລ່າສັດ ພາຍໃຕ້ເງື່ອນໄຂສະເພາະໃດໜຶ່ງເພື່ອປ້ອງກັນຄວາມເສຍຫາຍຕໍ່ທຸລະກິດຂອງເຂົາເຈົ້າ. ສຳລັບ ລາຍລະອຽດ ແມ່ນ ກວດການຳອົງການປົກຄອງທ້ອງຖິ່ນ ເຊັ່ນ: ແຂວງ ແລະ ເມືອງ.

ອ້າງອີງ: ສະມາຄົມການລ່າສັດ Dainippon “ປຶ້ມລ່າສັດ”

ການຈັບດ້ວຍຮ່ວງກັບດັກ

ການຈັບນົກ ແລະ ສັດ ແມ່ນ ມີຫຼາຍວິທີ, ມີທັງວິທີການລ່າສັດດ້ວຍປືນ, ຕາໜ່າງ ແລະ ໃສ່ກັບດັກ ເຊິ່ງມີຂໍ້ບັງຄັບທາງກົດໝາຍຫຼາຍຢ່າງ ທີ່ຕ້ອງໄດ້ປະຕິບັດຕາມ. ໃນປຶ້ມຫົວນີ້, ຈະສຸມໃສ່ຫຼັກການທີ່ຄວນຮູ້ ແລະ ການໃສ່ກັບດັກ ທີ່ມີປະສິດທິພາບເພື່ອການປ້ອງກັນຄວາມເສຍຫາຍ ທີ່ເກີດ ຈາກ ສັດປ່າ ຄື: ກວາງ ໃນວຽກງານປ່າໄມ້.

ນອກຈາກນັ້ນ, ຍັງຈະໄດ້ລະບຸກ່ຽວກັບຂໍ້ຫ້າມ ແລະ ຂໍ້ຄວນລະວັງຂັ້ນຕ່ຳສຸດ ກ່ຽວກັບການນຳໃຊ້ຮ່ວງກັບດັກ. ໃນເວລາລ່າສັດຕົວຈິງ, ສິ່ງສຳ ຄັນ ແມ່ນບໍ່ພຽງແຕ່ໄດ້ຮັບໃບອະນຸຍາດເທົ່ານັ້ນ, ແຕ່ຍັງຕ້ອງໄດ້ຮັບຄຳແນະນຳຈາກສະມາຄົມການລ່າສັດ ຫຼື ຜູ້ທີ່ມີປະສົບການນຳ ແລະ ຕ້ອງ ສະສົມຄວາມຮູ້ ແລະປະສົບການ ນຳອີກດ້ວຍ.

① ຄວາມໝາຍ ຂອງ ການລ່າສັດ ແລະ ການຈັບສັດທີ່ໄດ້ຮັບອະນຸຍາດ

ວິທີການດຳເນີນການຈັບນົກ ແລະ ສັດປ່າ ຖືກແບ່ງອອກເປັນສາມປະເພດ ຄື: “ການລ່າສັດແບບລົງທະບຽນ” (ຕໍ່ໄປນີ້ເອີ້ນວ່າ “ການລ່າ ສັດ”), “ການຈັບໄດ້ຕາມການອະນຸຍາດ” (ຕໍ່ໄປນີ້ເອີ້ນວ່າ “ການລ່າສັດທີ່ອະນຸຍາດ”) ແລະ “ການຈັບສັດປ່າທີ່ຖືກກຳນົດ”

ໃນງານວຽກງານປ່າໄມ້, ກຳລັງເກີດມີຄວາມເສຍຫາຍທາງດ້ານເສດຖະກິດ ແລະ ສຸຂະອະນາໄມ ເປັນຕົ້ນແມ່ນຄວາມເສຍຫາຍທີ່ເກີດຕໍ່ຕົ້ນ ໄມ້ ຈາກການຖືກກັດກິນ, ການປອກຫຼືລອກເປືອກໄມ້ ແລະ ຄວາມເສຍຫາຍຈາກເຫັບທີ່ມາຈາກສັດ ຕ່າງໆເປັນຕົ້ນ, ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງ ໄດ້ຄຸ້ມຄອງປະຊາກອນນົກ ແລະ ສັດປ່າໃຫ້ເໝາະສົມ ແລະ ດຳເນີນການຈັບໄດ້ຕາມການອະນຸຍາດ.

ນອກຈາກນີ້, ການລ່າສັດຍັງໄດ້ຖືກຍອມຮັບຕາມຄວາມເໝາະສົມຈາກສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມ ແລະ ໄດ້ມີການດຳ ເນີນການເພື່ອໃຫ້ເກີດການຢູ່ຮ່ວມກັນ ລະຫວ່າງມະນຸດ ກັບ ນົກ ແລະ ສັດປ່າ. ເມື່ອດຳເນີນກິດຈະກຳການລ່າສັດ, ຈຳເປັນຕ້ອງເຂົ້າໃຈວ່າ ມັນ ບໍ່ພຽງແຕ່ການຈັບນົກ ແລະ ສັດປ່າເທົ່ານັ້ນ, ແຕ່ມັນລວມເຖິງການການປົກປັກຮັກສາທີ່ຢູ່ອາໄສ ແລະ ການຄຸ້ມຄອງ ແລະ ການຂະຫຍາຍພັນ ຂອງນົກ ແລະ ສັດປ່າ.

② ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

ໃນເວລາຈັບນົກ ແລະ ສັດປ່າ, ຕ້ອງແນ່ໃຈວ່າໄດ້ປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ຈັດການ ນົກ ແລະ ສັດປ່າ (ຕໍ່ໄປນີ້ເອີ້ນວ່າ ກົດໝາຍວ່າດ້ວຍສັດປ່າ) (ກະຊວງສິ່ງແວດລ້ອມ), ກົດໝາຍວ່າດ້ວຍການຄອບຄອງອາວຸດປືນ ແລະ ດາບ (ສຳໜັກງານຕຳຫຼວດແຫ່ງຊາດ) ແລະ ກົດໝາຍວ່າດ້ວຍການຄວບຄຸມລະເບີດ (ກະຊວງເສດຖະກິດ ອຸດສາຫະກຳ ແລະ ການຄ້າ)

③ນົກ ແລະ ສັດປ່າທີ່ເປັນເປົ້າໝາຍ

ນົກ ແລະ ສັດປ່າທີ່ຢູ່ພາຍໃຕ້ກັບກົດໝາຍວ່າດ້ວຍ ນົກ ແລະ ສັດ ແມ່ນ ມີ ນົກ ແລະ ສັດລ້ຽງລູກດ້ວຍນົມທັງໝົດ. ແຕ່ໃຫ້ຮັບຮູ້ວ່າ ບໍ່ໄດ້

ກວມເອົາສັດລ້ຽງລູກດ້ວຍນົມທາງທະເລ, ໝູບ້ານ ເຊັ່ນ: ໝູສີນ້ຳຕານ ແລະ ແມວນ້ຳແມ່ນ ຢູ່ໃນຂໍ້ຍົກເວັ້ນ.

ນົກ ແລະ ສັດປ່າທີ່ເປັນເປົ້າໝາຍໃນການລ່າ (ນົກ ແລະ ສັດປ່າທີ່ຈະລ່າ) ຖືກກຳນົດ ເປັນ ນົກ (28 ຊະນິດ) ແລະ ສັດປ່າ (20 ຊະນິດ), ຂຶ້ນກັບສະຖານະການຊັບພະຍາກອນ ແລະ ລະດັບຄວາມເສຍຫາຍຂອງກະສິກຳປ່າໄມ້ ແລະ ອຸດສາຫະກຳການປະມົງ.

ຈົ່ງຮັບຮູ້ວ່າ ບາງພື້ນທີ່ (ແຂວງນາຮາ, ແຂວງກຽວໂຕ ແລະ ອື່ນໆ) ແລະ ຊ່ວງເວລາການຈັບນົກ ແລະ ສັດບາງຊະນິດ ເຊັ່ນ: ຫມີດຳ ແລະ ກະແຕ ແມ່ນ ຖືກຫ້ອງຫ້າມໂດຍລັດຖະມົນຕີກະຊວງສິ່ງແວດລ້ອມ ແລະ ເຈົ້າແຂວງຕ່າງໆ.

ໃນການລ່ານົກ ແລະ ສັດປ່າ ເຊິ່ງເປັນສັດທີ່ສ້າງຄວາມເສຍຫາຍໃຫ້ແກ່ຕົ້ນໄມ້ໃນປ່າໄມ້ໃນອຸດສາຫະກຳປ່າໄມ້, ເປົ້າໝາຍການລ່າຕົ້ນຕໍ ຈະເປັນກວາງຍີ່ປຸ່ນ (ລວມທັງກວາງເອໂຊະ ແລະ ກວາງຢາກຸສີ) ແລະ ກະຕ່າຍປ່າ. ໃນກໍລະນີທີ່ເປັນໝີດຳອາຊີ, ໝີສີນ້ຳຕານ ແລະ ຫມູປ່າ, ນັບວ່າຈະເປັນສິ່ງທີ່ສະຫຼາດໃນການຂໍໃຫ້ສະມາຊິກຂອງສະມາຄົມລ່າສັດເຊິ່ງເປັນຜູ້ທີ່ມີປະສົບການໃນການຊ່ວຍຈັດການພວກມັນ ເພາະມັນເປັນອັນຕະລາຍ.

ນອກຈາກນີ້, ຍັງສາມາດອອກໃບອະນຸຍາດລ່າສັດດ້ວຍປືນໄດ້ ຫາກມີອາຍຸ 20 ປີຂຶ້ນໄປ, ແຕ່ໃນການອອກໃບອະນຸຍາດນີ້ຕ້ອງໄດ້ພິຈາລະນາຢ່າງຮອບຄອບ ກ່ຽວກັບ ອຸບັດຕິເຫດທີ່ເກີດຂຶ້ນຈາກການລ່າສັດດ້ວຍປືນຢູ່ສະຖານທີ່ຕ່າງໆ, ຄວາມສຳຄັນທາງທຸລະກິດທີ່ມີໜ້ອຍ ແລະ ທັກສະທີ່ຈຳເປັນໃນການລ່າສັດ.

④ ຈັບດ້ວຍຮ່ວງກັບດັກ

ໃນປຶ້ມຫົວນີ້, ຈະຍົກໃຫ້ຕົວຢ່າງ ຂອງ ຮ່ວງກັບດັກທີ່ຖືກນຳໃຊ້ຢ່າງກວ້າງຂວາງໃນປ່າໄມ້ (ຮູບ 7-7).

○ ການຮັບໃບອະນຸຍາດກັບດັກ

ໃນການເລີ່ມຕົ້ນຈັບກວາງໂດຍການນຳໃຊ້ຮ່ວງກັບດັກ ແມ່ນ ຈຳເປັນຕ້ອງໄດ້ຮັບໃບອະນຸຍາດໃສ່ກັບດັກ. ແຂວງ ແລະ ເທດສະບານ ກໍໄດ້ຈັດກອງປະຊຸມສຳມະນາ ເພື່ອຮຽນຮູ້ກ່ຽວກັບເຕັກນິກການວາງກັບດັກນຳອີກດ້ວຍ.

○ ກົດລະບຽບກ່ຽວກັບກັບດັກ

ມີຂໍ້ຈຳກັດຕ່າງໆທີ່ລັດຖະມົນຕີກະຊວງສິ່ງແວດລ້ອມ ແລະ ເຈົ້າແຂວງຕ່າງໆ ວາງອອກ ກ່ຽວກັບໃນການໃຊ້ກັບດັກເພື່ອຈັບກວາງ. (ມາດຕາ 12 ຂອງກົດໝາຍວ່າດ້ວຍການປົກປ້ອງ ແລະ ຄຸ້ມຄອງສັດປ່າ ແລະ ອື່ນໆ).

ຫົວຂໍ້ຕ້ອງຫ້າມ

· ສິ່ງທີ່ຍົກເຍື່ອຂຶ້ນ

· ເສັ້ນຜ່າສູນກາງຂອງສາຍເຊືອກ ແມ່ນ ຕ່ຳກວ່າ 4mm

· ອັນທີ່ບໍ່ມີ “ແກນໝຸນ” (ຮູບ 7-8)

· ອັນທີ່ບໍ່ມີ “ອຸປະກອນປ້ອງກັນການໜີບ” (ຮູບ 7-9)

· ການໃສ່ກັບດັກໂຕທີ່ມີເສັ້ນຜ່າສູນກາງເກີນ 12 ຊມ

· ໃຫ້ໃສ່ກັບດັກ 31 ອັນຂຶ້ນໄປໃນເວລາດຽວກັນ

· ການຕິດຕັ້ງກັບດັກທີ່ບໍ່ໄດ້ໃສ່ເຄື່ອງໝາຍ.

○ ຫົວຂໍ້ທີ່ຈຳເປັນສຳລັບການຕິດຕັ້ງກັບດັກ

· ການຍິນຍອມຂອງຜູ້ຄອບຄອງທີ່ດິນ


ຕ້ອງແນ່ໃຈວ່າໄດ້ຮັບການອະນຸຍາດຈາກເຈົ້າຂອງ ຫຼື ຜູ້ຄອບຄອງກ່ອນຈຶ່ງຄ່ອຍຈັບ.

· ການຕິດຕັ້ງເຄື່ອງໝາຍກັບດັກ


ໃນເວລາຕິດຕັ້ງກັບດັກ, ກະລຸນາຂຽນທີ່ຢູ່, ຊື່, ຂໍ້ມູນການຕິດຕໍ່, ຊື່ເຈົ້າເມືອງ, ປີລົງທະບຽນ ແລະ ເລກທະບຽນໃນກໍລະນີລ່າສັດ ແລະ ເລກອະນຸຍາດໃນກໍລະນີໄດ້ຮັບອະນຸຍາດ, ໂດຍແຕ່ລະຕົວອັກສອນ ມີຂະໜາດສີ່ລ່ຽມຈະຕຸລັດ ຢ່າງຫນ້ອຍ 1 ຊັງຕີແມັດ ແລ້ວ ວາງປ້າຍໂລຫະ ຫຼື ພາດສະຕິກໄວ້ໃນບ່ອນທີ່ເຫັນໄດ້ຊັດເຈນ.

· ກັບດັກຕ້ອງມີ “ການຮ່ວໝຸນ”


ປ້ອງກັນບໍ່ໃຫ້ເກີດຮອຍແຕກຢູ່ເຊືອກກັບດັກ ຕ່າງໆເປັນຕົ້ນ. ມັນເຮັດວຽກເພື່ອແກ້ ແລະ ປ້ອງກັນເຊືອກພັນກັນ.



ຮູບທີ 7-7 ຕົວຢ່າງຂອງຮ່ວງກັບດັກ (ອຸປະກອນປ້ອງກັນ ການໜີບ ແລະ ແກນໝຸນ)
(ຂໍ້ມູນຈາກກະຊວງສິ່ງແວດລ້ອມ)



ຮູບ 7-8 ແກນໝຸນ
ໂຄງສ້າງທີ່ເຮັດໃຫ້ປາຍຂອງເຫຼັກລ້ອກທັງສອງຂ້າງໝຸນໄດ້
(ຂໍ້ມູນຈາກກະຊວງສິ່ງແວດລ້ອມ)



ຮູບທີ 7-9 ອຸປະກອນປ້ອງກັນການໜີບ
ຂໍ້ຕໍ່ໂລຫະທີ່ຈຳກັດການບີບຂອງວົງແຫວນໃຫ້ມີຂະໜາດຕາມທີ່ກຳນົດ
(ຂໍ້ມູນຈາກກະຊວງສິ່ງແວດລ້ອມ)


· ຕ້ອງມີ “ອຸປະກອນປ້ອງກັນການໜີບ”ໃນກັບດັກ
ປ້ອງກັນ ຂາຂອງນົກ ແລະ ສັດຈາກການຖືກຕັດ ແລະ ແລ່ນໜີເມື່ອງຈາກເຊືອກເຄັ່ງເກີນໄປ.
· ໄປຢ້ຽມເບິ່ງລື້ອຍໆ (ຕາມຫຼັກການ ຫຼາຍກວ່າ 1 ຄັ້ງ ຕໍ່ມື້)
ບໍ່ອະນຸຍາດໃຫ້ປ່ອຍໃຫ້ສັດທີ່ຖືກລ່າຕິດຢູ່ໂດຍບໍ່ໄດ້ເອົາໃຈໃສ່.
· ຫາກຈັບຜິດ ໃຫ້ປ່ອຍ
ໃນການລ່າສັດ ຫາກຈັບໄດ້ສັດອື່ນນອກເໜືອຈາກນົກ ແລະ ສັດປ່າທີ່ລ່າ ຫຼື ນອກເໜືອຈາກການໄດ້ຮັບອະນຸຍາດໃຫ້ຈັບ ແມ່ນ ໃຫ້ປ່ອຍມັນໄປ.


⑤ ການປະຕິບັດຕົວຈິງຂອງກັບດັກ

ມີຫຼາຍຮູບແບບຕ່າງໆທີ່ຫຼາກຫຼາຍ ທີ່ຖືກນຳມາໃຊ້ໃນສະຖານທີ່ຕ່າງໆ, ແຕ່ຈະຂໍຍົກເປັນຕົວຢ່າງ 1 ຢ່າງມາແນະນຳ ຄື “ປະເພດມີໄມ້ສະປິງ ລວງນອນ” ເຊິ່ງນຳໃຊ້ກັນໃນແຂວງ Shizuoka.

○ ສະຖານທີ່ຕິດຕັ້ງກັບດັກ

ໃນການຊອກຫາສະຖານທີ່ທີ່ເໝາະສົມສຳລັບການລ່າສັດ ແມ່ນ ຈະດຳເນີນການສຳຫຼວດໃນຕອນກາງຄືນເພື່ອຊອກຫາພື້ນທີ່ທີ່ເຫັນກວາງຈຳນວນຫຼາຍ (ຕາຂອງກວາງເປັນເງົາ, ເຮັດໃຫ້ພວກມັນສັງເກດເຫັນໄດ້ງ່າຍ), ສ່ວນໃນເວລາກາງເວັນ ໃຫ້ທຳຄວາມເຂົ້າໃຈກ່ຽວກັບຈຳນວນ ຮອຍຕີນທີ່ມີຫຼາຍ ຫຼື Nutaba (*) ແລະ ສັດອື່ນໆທີ່ປະກົດໂຕເປັນປະຈຳ ແລະ ການຂໍຄວາມຊ່ວຍເຫຼືອຈາກຊາວກະສິກອນທ້ອງຖິ່ນ ແລະ ສະມາຄົມລ່າສັດທີ່ສາມາດສະໜອງຂໍ້ມູນຫຼ້າສຸດໃຫ້ໄດ້.





ຮູບພາບ 7-1 ປະເພດສະປິງລວງນອນ

(ຮູບດ້ານຊ້າຍ) ເມື່ອກວາງຢຽບກັບດັກ (ຮູບທາງກາງ), ເຊືອກກໍຈະມັດຂາ (ທໍ່ PVC ໃນຮູບເບື້ອງຂວາ).



ຮູບພາບ 7-2 ປ້າຍທີ່ຕິດຕັ້ງຢູ່ບ່ອນສູງ

ເມື່ອກຳນົດກ່ຽວກັບສະຖານທີ່ໄດ້ແລ້ວ, ໃຫ້ຄົ້ນຫາເສັ້ນທາງກວາງໃນປ່າທີ່ຢູ່ຕິດກັນ ແລ້ວວາງກັບດັກ.

· ວາງກັບດັກໂດຍສຸມໃສ່ບໍລິເວນອ້ອມຮອບເຂດທີ່ມີກວາງຫຼາຍ.

· ວາງກັບດັກໃຫ້ຫຼາຍເທົ່າທີ່ເປັນໄປໄດ້ (ສູງສຸດ 30ອັນ).

· ພະຍາຍາມເພື່ອຫຼີກລ່ຽງບໍ່ໃຫ້ກວາງເຫັນ.

(ນອກຈາກນີ້ຍັງມີປະສິດທິພາບໃນການດຶງດູດກວາງໃຫ້ມາຕິດກັບດັກດ້ວຍເຫຍື່ອ, ຫຍ້າແຫ້ງແຂງ ແລະອື່ນໆ).

ນອກຈາກນີ້, ເນື່ອງຈາກວ່າກັບດັກໃຊ້ສະປິງ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງປ້ອງກັນຕາ ແລະ ຮີມສົບຈາກການເດ້ງໃນເວລາຈັບພວກມັນ.

* ບວກ (ຂຸມຂີ້ຕົມ). ສະຖານທີ່ທີ່ສັດປ່າອາບນ້ຳເພື່ອກຳຈັດສິ່ງສົກກະປົກ ແລະ ກາຝາກເຊັ່ນ: ເຫັບ ໃຫ້ອອກຈາກຮ່າງກາຍ.

○ລະມັດລະວັງໃນເວລາລາດຕະເວນ

· ຢ່າຍ່າງຕາມເສັ້ນທາງກວາງ

ກວາງສັງເກດເຫັນຮອຍຕີນຂອງມະນຸດໄດ້ຢ່າງງ່າຍດາຍ ແລະ ເມື່ອພວກມັນສັງເກດເຫັນ ພວກມັນກໍຈະບໍ່ຍ່າງຜ່ານເສັ້ນທາງນັ້ນ.

·ໃຊ້ເວລາຢູ່ບ່ອນວາງກັບດັກໃຫ້ສັ້ນລົງ ແລະ ດຳເນີນການວາງກັບດັກຢ່າງສະຫງົບງຽບ.

ພະຍາຍາມຢ່າໃຫ້ກິ່ນຂອງມະນຸດຫຼົງເຫຼືອຢູ່.

· ຕິດຕັ້ງປ້າຍໃຫ້ສູງທີ່ສຸດເທົ່າທີ່ຈະເຮັດໄດ້ ແລະ ຕິດໄວ້ຢ່າງແໜ້ນໜາ 2 ຈຸດ ຫຼື ຫຼາຍກວ່ານັ້ນເພື່ອປ້ອງກັນການສັ່ນສະເທືອນຈາກລົມແຮງ ແລະ ສຽງດັງ.

ເພື່ອເປັນການປ້ອງກັນບໍ່ໃຫ້ຜູ້ຄົນຄິດວ່າພວກເຂົາມີສ່ວນກ່ຽວຂ້ອງ.

○ ຜົນຂອງການລາດຕະເວນ

ຖ້າກັບດັກຈັບບໍ່ໄດ້ເປັນເວລາດົນນານ ໃຫ້ປ່ຽນສະຖານທີ່ ຫຼືກວດເບິ່ງຕຳແໜ່ງ ແລະ ການເຮັດວຽກຂອງກັບດັກ.

ໃນກໍລະນີທີ່ກັບດັກລົ່ນ, ໃຫ້ກວດກາເບິ່ງວ່າ ການພັນກັນຂອງງ່າໄມ້ ຫຼື ນ້ຳຄ້າງແຂງຕ່າງໆເປັນສາເຫດຂອງກັບດັກລົ່ນຫຼືບໍ່ ແລ້ວໃຫ້ແກ້ໄຂ ແລະ ວາງກັບດັກຄືນໃໝ່.

ຫາກສັດປະເພດອື່ນນອກຈາກກວາງຕິດຢູ່ໃນກັບດັກ ແມ່ນ ໃຫ້ລະມັດລະວັງບໍ່ໃຫ້ມັນກັດ ຫຼື ຂູດ, ເຊິ່ງຫາກເປັນສັດຂະໜາດນ້ອຍ ຫຼື ຂະໜາດກາງ ໃຫ້ຄຸມມັນດ້ວຍພາຊະນະພາດສະຕິກ, ປິດກັບດັກ ແລ້ວປ່ອຍມັນ.

ໂດຍສະເພາະ ໝີ ແລະ ໝູ່ປ່າ ແມ່ນ ອັນຕະລາຍເປັນຢ່າງຍິ່ງ. ໃຫ້ອອກຈາກພື້ນທີ່ໃນທັນທີ ໂດຍບໍ່ຕ້ອງເຂົ້າໄປໃກ້ ຫຼື ໄປຢ້ຽມເບິ່ງຫຼາຍຄັ້ງ ແລ້ວໃຫ້ຕິດຕໍ່ຫາອົງການປົກຄອງທ້ອງຖິ່ນ ຫຼື ແຂວງ ສຳລັບຄຳແນະນຳ.

○ ຫອກ (ໃຊ້ສຳລັບຢຸດສັດ)

ຫອກ ແມ່ນ ໃຊ້ສຳລັບຢຸດສັດທີ່ຖືກຈັບ. ໂດຍທົ່ວໄປແລ້ວ, ນອກເໜືອຈາກການໃຊ້ປືນ ຫຼື ມີດ ເພື່ອຢຸດແລ້ວ ຍັງໃຊ້ຫອກເພື່ອເປັນອຸປະກອນຢຸດທີ່ນຳໃຊ້ໄຟຟ້ານຳອີກດ້ວຍ.

ບໍ່ວ່າຈະເປັນວິທີໃດກໍຕາມ ລ້ວນແລ້ວແຕ່ເປັນວິທີອັນຕະລາຍ ເນື່ອງຈາກອາດຈະເຫັນການຕໍ່ຕ້ານ ແລະ ການຕອບໂຕ້ທີ່ຮຸນແຮງຈາກສັດທີ່ຈັບໄດ້ ດັ່ງນັ້ນ ຈຶ່ງຄວນໃຫ້ສະມາຊິກທີ່ມີປະສົບການຂອງສະມາຄົມລ່າສັດ ຫຼື ຄູສອນທີ່ມີປະສົບການໃນການລ່າສັດເປັນຜູ້ດຳເນີນການວິທີນີ້.

○ ການກຳຈັດກວາງ

ເພື່ອໃຫ້ສາມາດຈັບສັດແບບມີຊີວິດ ດັ່ງນັ້ນ ຈຶ່ງໄດ້ໃຊ້ອຸປະກອນຕ່າງໆທີ່ຫຼາກຫຼາຍເທົ່າທີ່ຈະເປັນໄປໄດ້. ນອກເໜືອຈາກການບໍລິໂພກເອງແລ້ວ, ບາງເທດສະບານຍັງຮັບສິ່ງເຫຼົ່ານີ້ມາເປັນສ່ວນປະກອບ ສຳລັບ ອາຫານ Gibier (ອາຫານພື້ນເມືອງປະເພດໜຶ່ງ).

ຢ່າງໃດກໍຕາມ, ບາງສ່ວນທີ່ບໍ່ຖືກນຳໃຊ້ ກໍຈະກາຍເປັນສິ່ງເສດເຫຼືອ. ໂດຍພື້ນຖານແລ້ວ, ຈະເອົາສັດດັ່ງກ່າວນັ້ນເມືອເຮືອນນຳ ແຕ່ຫາກມັນມີຄວາມຫຍຸ້ງຍາກໃນການເອົາເມືອ ແມ່ນ ບໍ່ປ່ອຍປະມັນໄວ້ຢູ່ໃນປ່າ ແຕ່ໃຫ້ຂຸດຂຸມຖົມມັນ.

ອີກຢ່າງໜຶ່ງ, ຫາກອຸບທະພູມຮ່າງກາຍຂອງກວາງຫຼຸດລົງ ໂຕເຫັບທີ່ຢູ່ໃນກວາງກໍຈະອອກມາ. ເຫັບ ເປັນພາຫະທີ່ອັນຕະລາຍໃນການແຜ່ເຊື້ອໄດ້, ດັ່ງນັ້ນ ຄ້ອງລະມັດລະວັງ ແລະ ປ້ອງກັນຕົວເອງຈາກພວກມັນ.

ສຸດທ້າຍ - ຈຳເປັນຕ້ອງມີການຮ່ວມມືລະຫວ່າງພາກສ່ວນກ່ຽວຂ້ອງ

ຄວາມເສຍຫາຍທີ່ເກີດຈາກກວາງເປັນບັນຫາຮ້າຍແຮງໃນວຽກງານປ່າໄມ້. ໃນອີກດ້ານໜຶ່ງຂອງການປົກປັກຮັກສາປ່າໄມ້ດ້ວຍຮົ້ວກັ້ນກວາງ ແລະ ສານຂັບໄລ່ ແມ່ນ ມັນມີຄວາມສຳຄັນໃນການຄຸ້ມຄອງຈຳນວນກວາງ. ດ້ວຍເຫດຜົນທາງເສດຖະກິດ ສິ່ງແວດລ້ອມ ແລະ ອຸບັດຕິເຫດ ຈຶ່ງເປັນສິ່ງທີ່ຫຼີກຫຼ່ຽງບໍ່ໄດ້ສຳລັບພວກເຮົາທີ່ຈະອາໄສຢູ່ໃນໝູ່ບ້ານເທິງພູ ເປັນຕົ້ນ ແມ່ນ ຄວາມເສຍຫາຍທີ່ເພີ່ມຂຶ້ນຕໍ່ການກະສິກຳ ແລະ ປ່າໄມ້, ການເສື່ອມໂຊມຂອງສະພາບແວດລ້ອມໃນການດຳລົງຊີວິດທີ່ເກີດຈາກເຫັບ ແລະ ປີງ ແລະ ການເສື່ອມສະພາບຂອງດິນຍ້ອນການທຳລາຍພືດພັນຊັ້ນລຸ່ມ ຕ່າງໆເປັນຕົ້ນ.

ນອກຈາກການຮັບປະກັນຄວາມປອດໄພຢ່າງພຽງພໍແລ້ວ, ຍັງຕ້ອງເຮັດວຽກຮ່ວມກັບອົງການປົກຄອງທີ່ກ່ຽວຂ້ອງ, ເຈົ້າໜ້າທີ່ປ່າໄມ້, ເຈົ້າຂອງປ່າ, ສະມາຄົມລ່າສັດໃນທ້ອງຖິ່ນ ແລະ ອື່ນໆ ເພື່ອດຳເນີນມາດຕະການແກ້ໄຂ.

ການຮັກສາປ່າໄມ້

No.08 ປະເພດແລະຈຸດປະສົງຂອງການຮັກສາປ່າໄມ້

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ກ່ຽວກັບຄວາມຮູ້ ແລະ ທັກສະພື້ນຖານກ່ຽວກັບວຽກງານການດູແລປ່າໄມ້ໂດຍທົ່ວໄປ(ການດູແລເບິ່ງແຍງເບື້ອງຕົ້ນ) ແລະ ພັດທະນາຄວາມສາມາດໃນການປະຕິບັດວຽກງານການຮັກສາປ່າໄມ້ທີ່ປອດໄພ ແລະ ຖືກຕ້ອງ.

ຄຳສຳຄັນ

ການຕັດຫຍ້າ, ການຖາກຖາງ, ການຕັດເຄືອໄມ້, ການຕັດງ່າໄມ້, ຈັກຕັດຫຍ້າ, ການດິດກັບ, ການຖືກເຜິ້ງຕອດ, ເຫດການຕົວຢ່າງຂອງໄພພິບັດ, ຄວາມປອດໄພ, ອຸປະກອນປ້ອງກັນ

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

<ການຕັດຫຍ້າ - ການຖາກຖາງ>

- ໃນເວລາເຮັດວຽກກ່ຽວກັບ ຈັກຕັດຫຍ້າ, ໃຫ້ໃສ່ ຖົງມືກັນການສັ່ນສະເທືອນ, ແມວອັດຫູ (ແມວປິດຫູ) ເພື່ອປ້ອງກັນການສູນເສຍຈາກການໄດ້ຍິນ ແລະ ແວ່ນຕານິລະໄພ (ໜ້າກາກ).
- ສຳລັບການເຮັດວຽກດ້ວຍຈັກຕັດຫຍ້າ ແມ່ນ ເປັນການປະຕິບັດວຽກງານໂດຍການຍ່າງໃນທ່າຢືນ ແລະ ໃຊ້ມືທັງສອງຂ້າງໃນການຕັດຫຍ້າ, ເປັນວຽກທີ່ຕ້ອງໃຊ້ແຮງງານຢ່າງຫຼາຍທ່າມກາງອາກາດທີ່ຮ້ອນ ແລະ ເປັນວຽກທີ່ມີອັດຕາການເກີດອຸບັດຕິເຫດແຮງງານສູງ.
- ໂດຍສະເພາະໃນການນຳໃຊ້ຈັກຕັດຫຍ້າໃນວຽກງານການຕັດຫຍ້າ, ມັກຈະເກີດອຸປະຕິເຫດຕ່າງໆນາໆທີ່ຫຼາກຫຼາຍ ເປັນຕົ້ນແມ່ນການລົ້ມ, ການດິດກັບຂອງໃບມີດ ແລະ ການຕຳກັບສິ່ງຂອງຕ່າງໆທີ່ຖືກຟົ້ງມາຍ້ອນໃບມີດ.
- ນອກຈາກນີ້, ການຖືກໃບມີດຕັດ ຍັງນຳໄປສູ່ໄພພິບັດທີ່ກໍ່ໃຫ້ເກີດການເສຍຊີວິດໄດ້.

<ການຕັດງ່າໄມ້>

- ເຄື່ອງມືຊ່າງທີ່ຈະນຳໃຊ້, ຂັ້ນໄດ, ອຸປະກອນປີນຕົ້ນໄມ້, ສາຍ ຮັດນິລະໄພ (ປ້ອງກັນອຸບັດຕິເຫດ) ຕ່າງໆ ຕ້ອງໄດ້ຮັບການກວດກາຢ່າງຖືກຕ້ອງ ແລະ ນຳໃຊ້ອັນທີ່ປອດໄພ.
- ໃນເວລາເຮັດວຽກຢູ່ເທິງຕົ້ນໄມ້, ໃຫ້ເອົາໃຈໃສ່ລະມັດລະວັງບໍ່ໃຫ້ມຶ່ນ ຫຼ ຢ້ຽບພາດ ແລະ ເຮັດໃຫ້ຕີນຢູ່ໃນທ່າທີ່ໝັ້ນຄົງ.

ບົດບາດ ແລະ ຄວາມສຳຄັນຂອງການປູກປ່າໃນດ້ານປ່າໄມ້

ບົດບາດຂອງການດູແລປ່າໄມ້

ຕົ້ນໄມ້ທີ່ປູກ ຕ້ອງ ເປັນຕົ້ນໄມ້ທີ່ສາມາດຈະເລີນເຕີບໃຫຍ່ໄດ້ໃນສະພາບແວດລ້ອມທຳມະຊາດ ໂດຍ ບໍ່ພ່າຍແພ້ຕໍ່ການແຂ່ງຂັນກັບຕົ້ນຫຍ້າ ທີ່ຢູ່ອ້ອມຂ້າງ ຫຼື ກອງຫີມະ. ໃນພື້ນທີ່ພູ, ຕົ້ນໄມ້ທີ່ປູກ ຈະຖືກປົກຄຸມໄປດ້ວຍຫຍ້າທີ່ມີການຈະເລີນເຕີບໃຫຍ່ ແລະ ໃນພື້ນທີ່ທີ່ມີຫີມະປົກຄຸມ ກໍຈະໄດ້ຮັບຄວາມກົດດັນຈາກຫີມະຢ່າງໃຫຍ່ຫຼວງ, ດັ່ງນັ້ນ, ຫາກປ່ອຍປະໄວ້ໃນສະຖານະການແບບນີ້ ມັນບໍ່ພຽງແຕ່ຈະເຮັດໃຫ້ການຈະເລີນເຕີບໃຫຍ່ຂອງຕົ້ນໄມ້ບໍ່ດີເທົ່ານັ້ນ, ແຕ່ຕົ້ນໄມ້ກໍອາດຈະຫ່ຽວແຫ້ງ ແລະ ບໍ່ສາມາດຈະເລີນເຕີບໃຫຍ່ໄດ້ ແລະ ລຳຕົ້ນຂອງຕົ້ນໄມ້ກໍຈະຄົດງໍ ແລະກາຍເປັນຕົ້ນໄມ້ທີ່ບໍ່ມີຄ່າ.

ວຽກງານທີ່ຈຳເປັນຕ້ອງໄດ້ເຮັດເພື່ອປ້ອງກັນອຸປະສັກເຫຼົ່ານີ້ ເປັນ ວຽກງານການດູແລປ່າໄມ້ທີ່ຕ້ອງການແຮງງານຄົນໃນການຕັດຫຍ້າ, ການຈັດການຫີມະ, ການຕັດເຄືອໄມ້ ແລະ ການຖາກຖາງ. ວຽກງານການດູແລປ່າໄມ້ ຈະສືບຕໍ່ດຳເນີນໄປຈົນກວ່າການຈະເລີນເຕີບໃຫຍ່ຂອງຕົ້ນໄມ້ຈະມີຄວາມໂດດເດັ່ນກວ່າພືດຊະນິດອື່ນ ຫຼື ຈົນກວ່າຕົ້ນໄມ້ທີ່ປູກຈະບໍ່ລົ້ມຍ້ອນກອງຫີມະອີກຕໍ່ໄປ.

ການດູແລປ່າໄມ້ ເປັນ ວຽກແນວໃດ

ໃນປຶ້ມຫົວນີ້ “No.06 ປະເພດ ແລະ ຈຸດປະສົງຂອງວຽກງານປູກປ່າ” ແລະ “No.07 ວຽກງານການປູກຕົ້ນໄມ້ທີ່ປອດໄພ” ໄດ້ອະທິບາຍເຖິງ ການກະກຽມໜ້າດິນ ແລະ ການປູກເບ້ຍໄມ້, ແຕ່ໃນບົດນີ້ ພວກເຮົາຈະອະທິບາຍກ່ຽວກັບວຽກງານການດູແລປ່າໄມ້ທົ່ວໄປ ນັບຕັ້ງແຕ່ການຕັດຫຍ້າ ຈົນໄປຮອດການຖາກຖາງ.

ການຕັດຫຍ້າ

ຈຸດປະສົງ, ໄລຍະເວລາ ແລະ ຊ່ວງເວລາຂອງການຕັດຫຍ້າ

ເບ້ຍໄມ້ ຈະຖືກປູກຢູ່ໃນພື້ນທີ່ທີ່ມີແສງສະຫວ່າງທີ່ຈຳເປັນສຳລັບການຈະເລີນເຕີບໃຫຍ່ຂອງຕົ້ນໄມ້, ແຕ່ແສງສະຫວ່າງ ນີ້ ຍັງເປັນແສງທີ່ສາມາດສະໜອງສະພາບແວດລ້ອມໃນການຂະຫຍາຍຕົວທີ່ເໝາະສົມສຳລັບພືດປະເພດຫຍ້າ ແລະ ຕົ້ນໄມ້ຊະນິດອື່ນໆ. ຫາກປ່ອຍປະໄວ້ໂດຍບໍ່ມີການຕັດຫຍ້າ ມັນກໍຈະຂັດຂວາງການຂະຫຍາຍໂຕຂອງຕົ້ນໄມ້ທີ່ປູກ ເຊິ່ງໃນຫຼາຍໆກໍລະນີ ຕົ້ນໄມ້ແມ່ນຈະບໍ່ສາມາດຢູ່ລອດໄດ້.

ສຳລັບການຕັດຫຍ້າ ເປັນ ວຽກງານທີ່ຕ້ອງໄດ້ດຳເນີນເພື່ອໃຫ້ຕົ້ນໄມ້ເປົ້າໝາຍສາມາດເອົາຊະນະການແຂ່ງຂັນກັບພືດທີ່ເປັນຫຍ້າ ແລະ ຕົ້ນໄມ້ອື່ນໆທີ່ຢູ່ອ້ອມຂ້າງ ພາຍຫຼັງຖືກປູກແລ້ວ, ເຊິ່ງພືດເຫຼົ່ານັ້ນ ເປັນພືດທີ່ຂັດຂວາງການຈະເລີນເຕີບໂຕຂອງຕົ້ນໄມ້ເປົ້າໝາຍ . ການນຳໃຊ້ຢາຂ້າຫຍ້າ ກໍຍັງມີການນຳໃຊ້ເຂົ້າໃນວຽກງານການຕັດຫຍ້າຢ່າງກວ້າງຂວາງ.

ຊ່ວງເວລາ ໃນ ການຕັດຫຍ້າ, ກໍລະນີຕັດປີລະ 1 ຄັ້ງ ແມ່ນ ຈະຕັດຈາກທ້າຍເດືອນ 7 ຫາ ຕົ້ນເດືອນ 8, ແຕ່ຫາກຕັດປີລະ 2 ຄັ້ງ ແມ່ນ ຈະຕັດຈາກຕົ້ນເດືອນ 6 ຫາ ທ້າຍເດືອນ 7 ແລະ ກາງເດືອນ 8.

ສາເຫດທີ່ດຳເນີນໃນຊ່ວງລະດູຮ້ອນ ກໍຍ້ອນວ່າ ກາງລະດູຮ້ອນເປັນຊ່ວງທີ່ໃກ້ກັບຈຸດສູງສຸດຂອງຄວາມຄັນ ແລະ ນອກຈາກນັ້ນ ຕົ້ນຫຍ້າກໍຈະເລີນເຕີບໃຫຍ່ສະສົມມາແຕ່ປີທີ່ຜ່ານມາຈົນໝົດແລ້ວ (ສ່ວນໃຫຍ່ ແມ່ນ ສະສົມຢູ່ໃນຮາກ), ແລະ ໃນປີນີ້ ພວກມັນກໍຍັງບໍ່ທັນເລີ່ມສະສົມສຳລັບການຈະເລີນເຕີບໃຫຍ່ສຳລັບລະດູໃບໄມ້ປົ່ງໃນລະດູຕໍ່ໄປ.

ໄລຍະເວລາຂອງການຕັດຫຍ້າ ແມ່ນ ຈະແຕກຕ່າງກັນໄປຕາມສະພາບຂອງດິນ ແລະ ປັດໃຈອື່ນໆ. ໃນພື້ນທີ່ທີ່ມີສະພາບດິນດີ, ສຳລັບຕົ້ນຊຸງ ແລະ ຮີໂນກິ ແມ່ນ ຈະມີໄລຍະເວລາໃນການຕັດຫຍ້າ ປະມານ 5 ປີ ເຊິ່ງ ໃນປີທີ 2, 3 ຫຼື ປີ ທີ 2 ~ ປີທີ 4 ແມ່ນ ຈຳເປັນຕ້ອງຕັດປີລະ 2 ຄັ້ງ (ຮູບ 8-1).

ໃນອີກດ້ານໜຶ່ງ, ສຳລັບພື້ນທີ່ທີ່ສະພາບດິນບໍ່ດີ ອາດຈະໃຊ້ເວລາເກືອບ 10 ປີ, ແຕ່ການຕັດຫຍ້າ ອາດຈະເຮັດໄດ້ປີລະ 1 ຄັ້ງ ແລະ ໃນເຄິ່ງປີຫຼັງຈາກນັ້ນທຸກໆປີ.

ວິທີການຕັດຫຍ້າ

ໃນການຕັດຫຍ້າ ແມ່ນ ມີຫຼາຍວິທີ.


ເປັນ “ການຕັດຢ່າງເຕັມຮູບແບບ” ເຊິ່ງເປັນວິທີໃນການກຳຈັດຫຍ້າອອກຈາກພື້ນທີ່ປ່າທັງໝົດ; “ການປັບໃຫ້ແປນ” ເຊິ່ງເປັນການຕັດສະເພາະແຕ່ຫຍ້າທີ່ປົກຄຸມຕົ້ນໄມ້ທີ່ປູກ ຫຼື ຕັດສະເພາະບໍລິເວນອ້ອມຮອບພື້ນທີ່ທີ່ປູກເທົ່ານັ້ນ ແລະ “ການຫຼຸກຫຍ້າ (ການຕັດເປັນແຖວ)” ເຊິ່ງເປັນການຕັດຕາມແຖວທີ່ປູກ.

ສາມາດຂ້າມຂັ້ນຕອນ ການປັບໃຫ້ແປນ ແລະ ການຕັດເປັນແຖວໄດ້, ແຕ່ຫຼັງຈາກນັ້ນປະມານ 3 ປີ ຫຍ້າທີ່ຢູ່ອ້ອມຂ້າງທີ່ບໍ່ໄດ້ຖືກຕັດ ຈະເລີ່ມປົ່ງຂຶ້ນເໜືອບໍລິເວນຫຍ້າທີ່ຖືກຕັດ ຈຶ່ງເຮັດໃຫ້ການຕັດຫຍ້າທີ່ຢູ່ດ້ານລຸ່ມເປັນສິ່ງທີ່ຍາກ. ດ້ວຍເຫດນີ້ ຈຶ່ງສາມາດດຳເນີນວຽກງານໄປໄດ້ງ່າຍຂຶ້ນໂດຍການປັບໃຫ້ແປນ ແລະ ການຕັດເປັນແຖວ ສະເພາະໃນປີທຳອິດ ແລະ ຕັ້ງແຕ່ປີທີ 2 ເປັນຕົ້ນໄປ ແມ່ນໃຫ້ ຕັດຢ່າງເຕັມຮູບແບບ.

ການແຕ່ງໂຕ ແລະ ເຄື່ອງນຸ່ງຫົ່ມສຳລັບວຽກງານຕັດຫຍ້າ.

ໃນເວລາຕັດຫຍ້າ ໃຫ້ແຕ່ງໂຕດ້ວຍເຄື່ອງນຸ່ງຫົ່ມດັ່ງຕໍ່ໄປນີ້. (ຮູບ 8-2).

- ຈະຕ້ອງເຮັດວຽກພາຍໃຕ້ແສງແດດທີ່ຮ້ອນ ແລະ ມີຮົ່ມພຽງເລັກນ້ອຍ, ສະນັ້ນ ໃຫ້ນຸ່ງເຄື່ອງທີ່ເໝາະສົມກັບວຽກງານ.
- ໃສ່ຊຸດເຮັດວຽກແຂນຍາວທີ່ມີແຂນສັ້ນແຂນເສື້ອ ແລະ ໂສ້ງຂາຍາວທີ່ມີແຂບຕົນໂສ້ງດີ. ຫາກແຂບສັ້ນແຂນເສື້ອ ແລະ ແຂບຕົນໂສ້ງເປີດຢູ່ ຈະເຮັດໃຫ້ມັນໄປເກາະກັບງ່າໄມ້ ແລະ ພຸ້ມໄມ້ໄດ້ ແລະ ບາງຄັ້ງອາດເຮັດໃຫ້ໄດ້ຮັບບາດເຈັບໂດຍບໍ່ຄາດຄິດ. ນອກຈາກນັ້ນ, ໃຫ້ຫຼີກລ່ຽງການນຸ່ງເສື້ອແຂນສັ້ນ ເພາະຜິວໜັງອາດຈະໄປສຳຜັດກັບພືດທີ່ເປັນອັນຕະລາຍ ແລະ ເຮັດໃຫ້ເກີດຖຸ່ມ ແລະ ຜື່ນຕ່າງໆໄດ້.
- ໃສ່ເກີບທີ່ເໝາະກັບຕີນ, ທົນທານ ແລະ ບໍ່ມີ່ນ. ໂດຍສະເພາະ ຫຼັງຈາກຝົນຕົກ ພື້ນທີ່ປ່າໄມ້ຈະມີຄວາມມີ່ນງ່າຍ, ສະນັ້ນໃຫ້ເອົາໃຈໃສ່ວ່າໄດ້ໃສ່ເກີບກັນມີ່ນ ຫຼື ເກີບດຸມ.
- ເລືອກໝວກກັນກະທົບທີ່ກົງກັບມາດຕະຖານ ແລະ ໃສ່ມັນຢ່າງຖືກຕ້ອງໂດຍການຮັດສາຍຄາດຄາງໃຫ້ແໜ້ນ.



ຮູບທີ 8-1 ການຕັດຫຍ້າ ຫຼື ບໍ່ຕັດ ແລະ ການຈະເລີນເຕີບໃຫຍ່ຂອງຕົ້ນໄມ້ທີ່ປູກ



ຮູບ 8-2 ເຄື່ອງນຸ່ງ ແລະ ການກຽມພ້ອມໃນເວລາເຮັດວຽກຕັດຫຍ້າ

· ໃຫ້ຖືໝາກຫອີດຕິດໂຕໄປນຳສະເໝີ.
· ໃຫ້ໃສ່ສະນັບຂາ ອັນທີ່ແຂງແຮງ ແລະ ນ້ຳໜັກເບົາທຸກຄັ້ງເທົ່າທີ່ເປັນໄປໄດ້. ອຸປະກອນປ້ອງກັນຈັກຕັດຫຍ້າທີ່ປົກປ້ອງຕົນຈາກຄວາມເສຍຫາຍ ທີ່ເກີດຈາກໃບມີດ ກຳລັງເປັນທີ່ນິຍົມເຊັ່ນກັນ. ກະລຸນາກວດເບິ່ງເວັບໄຊຂອງຜູ້ຜະລິດແຕ່ລະຍີ່ຫໍ້ ແລ້ວເລືອກເອົາອັນທີ່ເໝາະສົມສຳລັບ ວຽກງານຂອງທ່ານ.
· ໃນເວລານຳໃຊ້ຈັກຕັດຫຍ້າ ໃຫ້ໃສ່ຖົງມື, ແມວອັດຫູ ແລະ ແມວປົດຫູທຸກຄັ້ງ. ສິ່ງນີ້ ເປັນ ໜຶ່ງໃນວິທີການປ້ອງກັນທີ່ສຳຄັນເພື່ອປ້ອງກັນ ຮ່າງກາຍຈາກການສັ່ນສະເທືອນ ແລະ ສຽງລົບກວນ.
· ໃສ່ແວ່ນຕານິລະໄພ (ປ້ອງກັນອຸບັດຕິເຫດ) ແລະ ແວ່ນຕາເພື່ອປົກປ້ອງໃບໜ້າ ແລະ ຕາຈາກສິ່ງຂອງທີ່ຟົ້ງມາໃສ່.
· ໃຊ້ຕາໜ່າງເຜົ້ງຕາມຄວາມຈຳເປັນ.

ເຄື່ອງມືທີ່ນຳໃຊ້ໃນວຽກງານຕັດຫຍ້າ (ກ່ຽວ, ຈັກຕັດຫຍ້າ)

ເຄື່ອງມືທີ່ໃຊ້ສຳລັບການຕັດຫຍ້າ ປະກອບມີ ກ່ຽວທີ່ເປັນເຄື່ອງມື ແລະ ຈັກຕັດຫຍ້າທີ່ເປັນເຄື່ອງຈັກໄຟຟ້າ.

ກ່ຽວ ມີ 2 ປະເພດ ຄື: ກ່ຽວທີ່ໃຊ້ດ້ວຍມືດຽວ ແລະ ກ່ຽວໃຫຍ່ທີ່ໃຊ້ດ້ວຍມືສອງຂ້າງ (ຮູບ 8-3). ນອກຈາກນີ້, ໃນປະເພດຂອງຈັກຕັດຫຍ້າ ① ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້ານຈັບຮູບ ໂຕ U) ເປັນປະເພດທີ່ນຳໃຊ້ທົ່ວໄປ, ນອກນັ້ນ ກໍມີ ②ຈັກຕັດຫຍ້າແບບເປ້ຢູ່ຫຼັງ (ຮູບ 8-4, ຮູບ 8-5).

ໂຄງສ້າງຂອງເຄື່ອງຈັກຕັດຫຍ້າ

ຈັກຕັດຫຍ້າ ເປັນເຄື່ອງຈັກທີ່ຕ້ອງຖືດ້ວຍມືເພື່ອຕັດຫຍ້າ ແລະ ກໍມີໃບມີດທີ່ໝຸນດ້ວຍຄວາມໄວສູງ.

ຈັກຕັດຫຍ້າ ປະກອບດ້ວຍ ພາກສ່ວນເຄື່ອງຈັກ, ພາກສ່ວນສົ່ງພະລັງງານທີ່ສົ່ງພະລັງງານຂອງເຄື່ອງຈັກໄປສູ່ໃບມີດ ແລະ ພາກສ່ວນໃບ ມີດ. ຈັກຕັດຫຍ້າ ຈະຖືກນຳໃຊ້ໂດຍການໃຊ້ຮ່າງກາຍ ແລະ ມືປະຄອງ ດັ່ງນັ້ນ ສ່ວນຫຼາຍຈຶ່ງມັກໃຊ້ເຄື່ອງຈັກ 2 ຈັງຫວະທີ່ລະບາຍຄວາມຮ້ອນ ດ້ວຍອາກາດເປັນຫຼັກ ເນື່ອງຈາກມັນມີຂະໜາດນ້ອຍ ນ້ຳໜັກເບົາ ໃຫ້ພະລັງງານສູງ ແລະ ບໍ່ສົ່ງຜົນກະທົບຕໍ່ການປ່ຽນທ່າທາງ.

ຮູບແບບຂອງຈັກຕັດຫຍ້າ ແມ່ນ ມີສອງປະເພດ ຄື: ເຄື່ອງຕັດຫຍ້າແບບພາຍຢູ່ບ່າ ເຊິ່ງຈະພາຍສາຍຄາດທີ່ຕິດຢູ່ກັບດ້ານຄວບຄຸມໃສ່ບ່າ (ດ້ານຈັບຮູບ ໂຕ U) (ຮູບ 8-4) ແລະ ຈັກຕັດຫຍ້າແບບເປ້ຢູ່ຫຼັງໂດຍການເປ້ສ່ວນທີ່ເປັນເຄື່ອງຈັກຢູ່ຫຼັງ ແລ້ວບັງຄັບໂດຍການໃຊ້ມືກຳດ້ານ ຫຼື ທ່ອງ ທີ່ຕິດຢູ່ກັບດ້ານຄວບຄຸມ (ຮູບທີ 8-5).

ໃບມີດຕັດຫຍ້າ ແມ່ນ ມີຫຼາຍປະເພດ ເຊິ່ງມາດຕະຖານອຸດສາຫະກຳຂອງຍີ່ປຸ່ນ “ໃບມີດຕັດແບບໝຸນສຳລັບຈັກຕັດຫຍ້າ” (JISB9212) ໄດ້ຮັບການຈັດຕັ້ງຂຶ້ນ (ຈັດຕັ້ງຂຶ້ນໃນ 1978). ວຽກງານການຕັດຫຍ້າໃນວຽກງານການຕັດຫຍ້າ ໄດ້ມີການນຳໃຊ້ ໃບເລື່ອຍ, ໃບເລື່ອຍວົງເດືອນ , ໃບເລື່ອຍໄມ້ໄຜ່ ແລະອື່ນໆ. ບັງຄັບການໝຸນຂອງໃບມີດ ໂດຍການຈັບດ້ານຈັບ ແລະ ຄັນໂຍກຂອງຄັນເລັ່ງພ້ອມກັນ.


ຝາຄອບປ້ອນກັນການຝັ້ງ (ໂກບປ້ອງກັນເສດແຕກຫັກ) ເປັນ ອຸປະກອນທີ່ໃຊ້ສຳລັບຫຼຸດຜ່ອນຄວາມສ່ຽງຕໍ່ການບາດເຈັບຈາກວັດຖຸທີ່ຟົ້ງ ມາໃສ່ໄດ້. ຕິດຕັ້ງມັນໃຫ້ຢູ່ໃນຕຳແໜ່ງທີ່ຖືກຕ້ອງຕາມຄູ່ມືຄຳແນະນຳສຳລັບຈັກຕັດຫຍ້າ. ກໍລະນີໂກບປ້ອງກັນການຟົ້ງບໍ່ໄດ້ຮັບການຕິດຕັ້ງ ແມ່ນ ຫ້າມເຮັດວຽກໃດໆທັງສິ້ນ. ນອກຈາກການໃສ່ “ສາຍພາດບ່າ ແລະ ສາຍຮັດແອວ” ເພື່ອປ້ອງກັນບໍ່ໃຫ້ໃບມີດໄປຖືກຕົນແລ້ວ, ຍັງສາມາດຫຼຸດ ຜ່ອນຄວາມສ່ຽງຕໍ່ການເກີດອຸປະຕິເຫດໄດ້ໂດຍການໃຊ້ “ສາຍຮັດກົກຂາ” ເພື່ອປ້ອງກັນບໍ່ໃຫ້ໃບມີດຫຼຸດອອກມາໄດ້.

ນອກຈາກນີ້, ສຳລັບອຸປະກອນຄວາມປອດໄພໃນກໍລະນີສຸກເສີນ ແມ່ນ ມີອຸປະກອນປົດລັອກສຸກເສີນ ທີ່ຈະຊ່ວຍໃຫ້ສາມາດຖອດ ເຄື່ອງຈັກ ອອກໄດ້ (ປົດອອກ) ແລະ ປຸ່ມຢຸດ ທີ່ຈະເຮັດໃຫ້ເຄື່ອງຈັກດັບໃນທັນທີ.


ເຊິ່ງໂຄງສ້າງຂອງຈັກຕັດຫຍ້າ ໄດ້ຖືກອະທິບາຍຢ່າງລະອຽດໃນ “No. 03 ການບຳລຸງຮັກສາຈັກຕັດຫຍ້າ” ໃນປຶ້ມຫົວນີ້, ດັ່ງນັ້ນ ກະລຸນາ ເບິ່ງຫົວຂໍ້ນັ້ນນຳ.

ປັດໄຈອັນຕະລາຍທີ່ລີ້ຊ້ອນຢູ່ໃນວຽກງານຕັດຫຍ້າ


ການຕັດຫຍ້າໃນວຽກງານປ່າໄມ້ປະກອບດ້ວຍ ການຍ່າງຢູ່ເທິງພູທີ່ມີພື້ນດິນບໍ່ດີ, ເຊິ່ງສາມາດນຳໄປສູ່ເຫດການໄພພິບັດຕ່າງໆນາໆທີ່ເກີດ ຈາກການນຳໃຊ້ຈັກເລື່ອຍໄມ້ ເຊັ່ນ: ການລົ້ມ, ການດີດກັບຂອງໃບມີດ (kickback) ແລະ ຖືກກະທົບຈາກວັດຖຸຕ່າງໆທີ່ຟົ້ງມາຍ້ອນຕຳກັບ ໃບມີດ. ນອກຈາກນັ້ນ, ອີງຕາມໂຄງສ້າງຂອງຈັກຕັດຫຍ້າ, ໃບມີດ ແມ່ນ ມີລັກສະນະເປີດອອກ ແລະ ການຕັດທີ່ເກີດຈາກໃບມີດສາມາດນຳ ໄປສູ່ການເສຍຊີວິດທີ່ໜ້າເສົ້າສະຫຼົດໃຈໄດ້.



ຮູບ 8-3 ກ່ຽວຂະໜາດໃຫຍ່ທີ່ນຳໃຊ້ໃນການຕັດຫຍ້າ



ຮູບ 8-4 ຈັກຕັດຫຍ້າແບບພາຍຢູ່ບ່າ (ດ້າມຈັບໂຕ U)



ຮູບ 8-5 ຈັກຕັດຫຍ້າແບບເປ້ຢູ່ຫຼັງ

ນອກຈາກນີ້, ໃນການເຮັດວຽກຕັດຫຍ້າພາຍໃຕ້ແສງຕາເວັນທີ່ຮ້ອນ, ສິ່ງສໍາຄັນທີ່ຂາດບໍ່ໄດ້ ແມ່ນ ມາດຕະການປ້ອງກັນໂລກລົມແດດ. ລະດູຮ້ອນຍັງເປັນເວລາທີ່ເຜິ້ງມີການເຄື່ອນໄຫວຫຼາຍທີ່ສຸດ ແລະ ກໍມີອຸປະຕິເຫດຕ່າງໆທີ່ມັກເກີດຈາກການກັດຂອງເຜິ້ງ. ອີງຕາມສະພາບຂອງຮ່າງກາຍ ພິດຂອງເຜິ້ງອາດຈະເຮັດໃຫ້ເກີດອາການຮ້າຍແຮງ ເຊັ່ນ: ອາການຊັອກຍ້ອນການແພ້ ຕ່າງໆເປັນຕົ້ນ.

ຈັກຕັດຫຍ້າທີ່ນໍາໃຊ້ສໍາລັບການເຮັດວຽກກ່ຽວກັບການຕັດຫຍ້າ ເປັນເຄື່ອງມືທີ່ມີການສັ່ນສະເທືອນ ແລະ ຕ້ອງຈັບດ້ວຍມື ດັ່ງນັ້ນ ຈໍາເປັນຕ້ອງມີຄວາມຮູ້ກ່ຽວກັບອາການ ຫຼື ຄວາມບົກຜ່ອງທີ່ເກີດຈາກການສັ່ນສະເທືອນ ແລະ ມາດຕະການປ້ອງກັນ.

ໃນວຽກງານຕັດຫຍ້າ, ໃຫ້ຮັບຮູ້ຕະຫຼອດເວລາວ່າ ມັນມີຄວາມອັນຕະລາຍເຫຼົ່ານີ້ທີ່ກໍາລັງລີ້ຊ້ອນຢູ່ ດັ່ງນັ້ນໃຫ້ນໍາໃຊ້ມາດຕະການຕ່າງໆທີ່ແນະນໍາໃນບົດນີ້ ແລະ ປະຕິບັດວຽກງານດ້ວຍຄວາມລະມັດລະວັງເປັນຢ່າງດີ.

ລັກສະນະຂອງໃບມີດ ແລະ ການປ້ອງກັນການດີດກັບ

ໃນເຄື່ອງຕັດຫຍ້າ ແມ່ນ ມີອັນຕະລາຍໃນໂຕ ເຊັ່ນ: ການດີດກັບຂອງໃບມີດ. ໃຫ້ເຂົ້າໃຈສິ່ງເຫຼົ່ານີ້ ແລະ ນໍາໃຊ້ຢ່າງຖືກຕ້ອງ. ດັ່ງທີ່ໄດ້ແນະນໍາ, ການດີດກັບ ເປັນ ປະກົດການຟັ້ງກັບຄືນມາ ທີ່ເກີດຂຶ້ນໃນເວລາທີ່ໃບມີດກໍາລັງໝຸນແລ້ວໄປຕໍາເອົາວັດຖຸທີ່ຈະຕັດ.

ໃບມີດຂອງຈັກຕັດຫຍ້າມີຮູບຮ່າງເປັນແຜ່ນມົນ, ສະນັ້ນ ການດີດກັບ ແມ່ນ ສາມາດເກີດຂຶ້ນໄດ້ທົ່ວທຸກດ້ານຂອງໃບມີດ. ການດີດກັບແບບຟັ້ງກັບຄືນມາ ແມ່ນ ບໍ່ໄດ້ດີດໄປແຕ່ທາງເບື້ອງຂວາເທົ່ານັ້ນ, ແຕ່ໃບມີດ (ດ້ານບັງຄັບ) ຍັງອາດປັ່ນໄປທາງຕົນເອງນໍາ. ດໍາເນີນວຽກງານໄປດ້ວຍການເອົາໃຈໃສ່ເປັນພິເສດຕໍ່ພື້ນທີ່ທີ່ອາດຈະດີດກັບຂອງໃບມີດ (ຮູບ 8-6 ແລະ ຮູບ 8-7).

ວາງໃບມີດໄວ້ເທິງວັດຖຸ ຢູ່ ໃນຈຸດທີ່ທ່ານສາມາດຕັດໄດ້ຢ່າງປອດໄພ (ຮູບ 8-8), ແລະ ເມື່ອຕັດພຸ່ມໄມ້ຕ່າງໆ ແມ່ນ ໃຫ້ກວດສອບໃຫ້ແນ່ໃຈວ່າໄດ້ຕັດໄປທາງຂ້າງໃນລັກສະນະມຸມ 30 ອົງສາຈາກດ້ານໜ້າ (. ຮູບ 8-9).

ການປ້ອງກັນໂລກລົມແດດ

ບໍ່ວ່າໃຜກໍສາມາດເປັນໂລກລົມແດດໄດ້ທຸກບ່ອນທຸກເວລາ ໂດຍຂຶ້ນກັບສະພາບເງື່ອນໄຂ, ແຕ່ໂລກລົມແດດສາມາດປ້ອງກັນໄດ້ໂດຍການຮູ້ວິທີປ້ອງກັນທີ່ຖືກຕ້ອງ ແລະ ລະມັດລະວັງເປັນປະຈໍາທຸກມື້.

ຕົວຢ່າງ, ມັນຈະເປັນອັນຕະລາຍຢ່າງຍິ່ງ ໂດຍສະເພາະທີ່ຮ່າງກາຍຍັງບໍ່ຄຸ້ນເຄີຍກັບຄວາມຮ້ອນ ແລ້ວອຸນຫະພູມມີການສູງຂຶ້ນຢ່າງກະທັນຫັນ, ເປັນຕົ້ນແມ່ນ ໃນຕອນຕົ້ນຂອງລະດູຮ້ອນ ຫຼື ທ້າຍລະດູຝົນ ເອົາໃຈໃສ່ຢ່າງໃກ້ຊິດກ່ຽວກັບສະພາບຂອງຮ່າງກາຍຂອງທ່ານໂດຍການປະຕິບັດຕາມຄວາມລະມັດລະວັງດັ່ງຕໍ່ໄປນີ້.

· ດື່ມນໍ້າເປັນປະຈໍາ (ຮັກສາຄວາມຊຸ່ມຊື່ນ)

· ກິນເກືອໃຫ້ພຽງພໍ

· ຮັກສາສະພາບແວດລ້ອມໃນການນອນທີ່ສະດວກສະບາຍ

ກ່ຽວກັບມາດຕະການ ແລະ ການປ້ອງໂລກລົມແດດ ແລະ ການປະຖົມພະຍາບານຕ່າງໆ ແມ່ນ ໄດ້ອະທິບາຍຢ່າງລະອຽດໃນ “No.02 ການດູແລສຸຂະພາບ” ໃນປຶ້ມຫົວນີ້. ກະລຸນາເຂົ້າໃຈເນື້ອໃນຢ່າງລະອຽດກ່ອນທີ່ຈະດໍາເນີນການຕັດຫຍ້າ.


ການໃຊ້ເຄື່ອງນຸ່ງປັບອາກາດ ກໍເປັນມາດຕະການໜຶ່ງໃນການປ້ອງກັນໂລກລົມແດດ. ເຄື່ອງນຸ່ງປັບອາກາດ ເປັນ ເຄື່ອງນຸ່ງເຮັດວຽກທີ່ມີພັດລົມຂະໜາດນ້ອຍ ເຊິ່ງຊ່ວຍໃຫ້ເຮັດວຽກໄດ້ຢ່າງສະບາຍ ແລະ ເຢັນສະບາຍ ໂດຍການດຶງອາກາດຈາກພາຍນອກ ແລ້ວເປົ່າລົມໃນປະລິມານຫຼາຍຜ່ານເສື້ອຜ້າ. ໃນຊຸມປີມໍ່ໆມານີ້, ໄດ້ມີເຫດການນໍາໃຊ້ສິ່ງດັ່ງກ່າວເຂົ້າມານໍາໃຊ້ໃນວຽກງານການປູກປ່າ ເຊັ່ນ: ການຕັດຫຍ້າຕ່າງໆເປັນຕົ້ນ.

ການປ້ອງກັນເຜິ້ງຕອດ

ການເຄື່ອນໄຫວຂອງເຜິ້ງ ຈະແຕກຕ່າງກັນໄປຕາມພາກພື້ນ, ແຕ່ພວກມັນເລີ່ມບິນປະມານເດືອນ 5 ແລະ ຈະສ້າງຮັງໃນລະດູຮ້ອນ. ເຜິ້ງຈະຕອດຄົນທີ່ເຂົ້າມາໃກ້ ເພື່ອປົກປ້ອງຮັງຂອງພວກມັນ, ດັ່ງນັ້ນ ເດືອນ 7 ຫາ ເດືອນ 10 ຈຶ່ງເປັນຊ່ວງທີ່ຕ້ອງລະມັດລະວັງເຜິ້ງຕອດ.

ຫາກພົບເຫັນຮັງຢູ່ບ່ອນທີ່ຕ້ອງໄດ້ຍ່າງຜ່ານທຸກມື້ ແລະ ຫຼີກລ່ຽງບໍ່ໄດ້ ແມ່ນ ໃຫ້ກໍາຈັດຮັງນັ້ນ, ເຊິ່ງມັນອາດຈະເກີດອັນຕະລາຍ ສະນັ້ນ ໃຫ້ແຈ້ງເພື່ອນຮ່ວມງານກ່ຽວກັບທີ່ຕັ້ງຂອງຮັງ ແລະ ຫຼີກລ່ຽງໃນການຜ່ານທາງນັ້ນ.


ຕໍ່ໄປນີ້ແມ່ນຕົວຢ່າງຂອງມາດຕະການປ້ອງກັນເຜິ້ງຕອດ.




ຮູບ 8-6 ພາກສ່ວນທີ່ມີຄວາມສ່ຽງຕໍ່ການດີດກັບຄືນ



ຮູບ 8-7 ການດີດກັບຄືນ



ຮູບ 8-8 ຕຳແໜ່ງການຕັດຫຍ້າ



ຮູບ 8-9 ຕຳແໜ່ງການຕັດຫຍ້າປະເພດໄມ້ພຸ່ມຕ່າງໆ.

·ການສວມໃສ່ຕາໜ່າງກັນເຜ້ືງ (ຮູບ 8-10)

·ເຄ່ືອງນຸ່ງທ່ີມ ີແຂບປາຍແຂນ ແລະ ແຂບຕ ີນໂສ ້ ງ

·ຢ ູ່ແຂນ ໃຫ ້ ໃສ ່ປອກແຂນ ແລະ ຢ ູ່ຂາໃຫ ້ ໃສ ່ປອກຂາ ຢ ູ່ຊ ັ ້ ນນອກຂອງເຄ ່ ືອງນ ຸ ່ ງ.

·ຢ ູ່ຖ ົ ງມ ື ປ ້ ອງກ ັ ນເຜ ້ ືງແບບໜ ່ ງທ ່ ີ ໃຊ ້ ປ ້ ອງກ ັ ນບ ່ ໃຫ ້ ໄລຂອງເຜ ້ ືງຜ ່ ານເຂ ້ ົ າໄປໄດ ້ ເຖ ິ ງແມ ່ ນວ ່ າຈະຖ ື ກເຜ ້ ືງຕອດກ ໍ ຕ າມ.

ນອກຈາກການເອ ົ າໃຈໃສ ່ ກ ່ ຽວກ ັ ບເຄ ່ ືອງນ ຸ ່ ງມ ິ ລະໄພແບບນ ີ ້ ແລ ້ ວ, ບ າ ງຄ ັ ້ ງກ ໍ ມ ິ ລະບ ົ ບການຖ ື ເຄ ່ ືອງໃຊ ້ 1 ຊ ຸ ດ ຕ ່ ໄປນ ີ ້ ຕ ິ ດໂຕໄປໃນຂະນະ ປະຕ ິ ບ ັ ດວ ຽ ກງ ານ ເພ ື ່ ອເປ ັ ນມ າດຕະການປ ້ ອງກ ັ ນເຜ ້ ືງຕອດ.

· ຢ າ ຫ າ ປ ້ ອງກ ັ ນ ຣ ິ ຕ າ ມ ິ ນ


· ຢ າ ກ ິ ນ

· ຢ າ ຂ ້ າ ເຜ ້ ືງ

· ຫ ຼ ອດ ດ ູ ດ ພ ິ ດ ອ ອ ກ ຈ າ ກ ປ າ ກ ບ າ ດ



ຮູບ 8-10 ຕາໜ່າງປ້ອງກັນເຜິ້ງ



ຮູບ 8-11 ການນຳໃຊ້ແນວສັກຢາດ້ວຍຕົນເອງ (EpiPen)

ການສັກຢາດ້ວຍຕົນເອງ (EpiPen) ເປັນ ເປັນວິທີການຮັກສາເສີມທີ່ສາມາດສັກດ້ວຍຕົນເອງໃນຂະນະເດີນທາງໄປຍັງໂຮງໝໍ ເພື່ອບັນເທົາອາການພູມແພ້ ໃນກໍລະນີຖືກເຜິ້ງຕອດ (ຫາຍໃຈຍາກ, ຄວາມດັນເລືອດຫຼຸດ, ຄວາມບົກຜ່ອງດ້ານສະຕິ ແລະອື່ນໆ). ຈຳເປັນຕ້ອງໄດ້ຮັບການທົດສອບພູມຕ້ານທານຢູ່ສະຖາບັນການແພດລ່ວງໜ້າ, ເຊິ່ງຫາກຜົນເປັນບວກ, ກໍຈະໄດ້ຮັບການກວດ ແລະ ໄດ້ໃບສັ່ງຢາ ໂດຍທ່ານໝໍທີ່ໄດ້ຮັບທະບຽນ EpiPen ເຊິ່ງຜູ້ໄດ້ຮັບ ແມ່ນ ມີໜ້າທີ່ໃນການຖືມັນຕິດໂຕໄປນຳໃນເວລາເຮັດວຽກ.

ນອກຈາກ ສິ່ງທີ່ສຸມໃສ່ມາດຕະການປ້ອງກັນ ເຊັ່ນ: ເຄື່ອງນຸ່ງນິລະໄພ ແລ້ວ, ຍັງມີການນຳໃຊ້ວິທີລໍ້ຂ້າເຜິ້ງທີ່ໄດ້ມີການນຳມາປະຕິບັດໃນພາກສະໜາມ. ໜຶ່ງໃນນັ້ນ ແມ່ນ ກັບດັກທີ່ສາມາດດູດໂຕແຕນດ້ວຍຕຸກພາດສະຕິກ ແລ້ວປະສົມເຫຼົ້າຍີ່ປຸ່ນ ແລະ ນ້ຳເຜິ້ງປົນກັນລົງໃນພາຊະນະ ເຊິ່ງເປັນ “ອຸປະກອນດຶງດູດ ແລະ ຂ້າ” ທີ່ສາມາດເຮັດຂຶ້ນມາໄດ້ງ່າຍ ແລະ ໄດ້ຮັບຜົນທີ່ແນ່ນອນ. ຊ່ວງເວລາທີ່ດີທີ່ສຸດທີ່ຈະຕິດຕັ້ງອຸປະກອນດຶງດູດ ແລະ ຂ້າ ແມ່ນ ຕັ້ງແຕ່ ເດືອນ 5 ຫາ ເດືອນ 7. ມັນຈະມີປະສິດທິພາບທີ່ສຸດ ຫາກຈັບໂຕເຜິ້ງແມ່ເປ້ງໃນລະດູການສ້າງຮັງໃນ ເດືອນ 5 ແລະ ເດືອນ 6.

ບາງຄັ້ງກໍມີຄົນເສຍຊີວິດຍ້ອນເຜິ້ງ. ສິ່ງນີ້ ແມ່ນ ອາການແພ້. ເມື່ອຄົນໃດຄົນໜຶ່ງຖືກເຜິ້ງຕອດເປັນຄັ້ງທຳອິດ, “ພູມຕ້ານທານ” ຈະຖືກຜະລິດຢູ່ໃນຮ່າງກາຍ ເພື່ອສ້າງ “ພູມຕ້ານທານ (Antibody)” ຕໍ່ພິດຂອງເຜິ້ງ. ໃນເວລາທີ່ຖືກຕອດໃນຄັ້ງທີສອງ, “ພູມຕ້ານທານ” ນີ້ ແລະ “Antigen : ສານທີ່ກໍ່ໃຫ້ເກີດປະຕິກິລິຍາໃນການຕອບຕະໜອງທາງພູມຕ້ານທານ” ຂອງພິດຂອງເຜິ້ງໃນຄັ້ງທີ 2 ຈະມີປະຕິກິລິຍາຕອບໂຕ້ຕໍ່ອາການແພ້ ເອີ້ນວ່າ “ປະຕິກິລິຍາຕອບໂຕ້ພູມຕ້ານທານ”. ຄັ້ງທຳອິດ, “ປະຕິກິລິຍາຕອບໂຕ້ພູມຕ້ານທານ” ຈະບໍ່ເກີດຂຶ້ນ, ດັ່ງນັ້ນ ອາການຊ໊ອກຮ້າຍແຮງຈຶ່ງບໍ່ເກີດຂຶ້ນ. ດ້ວຍເຫດນີ້ ຈຶ່ງເວົ້າໄດ້ເລື້ອຍໆວ່າ “ການຕອດຂອງເຜິ້ງຈະເປັນຕາຢ້ານ ນັບຈາກຄັ້ງທີ 2 ຂຶ້ນໄປ”.
ອີງຕາມສະພາບທາງຮ່າງກາຍຂອງແຕ່ລະຄົນ, ອາດຈະປະກົດມີອາການຮ້າຍແຮງທົ່ວຮ່າງກາຍທີ່ເອີ້ນວ່າ “ການຊ໊ອກຈາກການແພ້”. ຄວາມດັນເລືອດຈະຫຼຸດລົງ, ມີອາການອ່ອນເພຍ, ແຂນຂາຈັ່ງ, ໝົດສະຕິ, ຫາຍໃຈຍາກ ຕ່າງໆທີ່ຢູ່ໃນກໍລະນີຮ້າຍແຮງ ທາງເດີນລະບົບຫາຍໃຈຈະບວມ ແລະ ສາມາດເຮັດໃຫ້ເສຍຊີວິດຍ້ອນຂາດອາກາດຫາຍໃຈໄດ້.

ເພື່ອບັນເທົາອາການເຫຼົ່ານີ້, ຈຶ່ງໄດ້ມີການສ້າງແນວສັກອັດຕະໂນມັດ (ຊື່ທາງການຄ້າ: EpiPen) ເພື່ອໃຫ້ສາມາດສັກຢາໄດ້ທັນທີຢູ່ບ່ອນທີ່ຖືກເຜິ້ງຕອດ (ຮູບ 8-11). ຈຳເປັນຕ້ອງໄດ້ຮັບການທົດສອບພູມຕ້ານທານຢູ່ສະຖາບັນການແພດລ່ວງໜ້າ, ເຊິ່ງຫາກຜົນເປັນບວກ, ກໍຈະໄດ້ຮັບການກວດ ແລະ ໄດ້ໃບສັ່ງຢາ ໂດຍທ່ານໝໍທີ່ໄດ້ຮັບທະບຽນ EpiPen ເຊິ່ງຜູ້ໄດ້ຮັບຈະຕ້ອງຖືມັນຕິດໂຕໄປນຳໃນເວລາເຮັດວຽກ.

ການປ້ອງກັນຄວາມຜິດປົກກະຕິຂອງການສັ່ນສະເທືອນ

ອາການ ຫຼື ຄວາມຜິດປົກກະຕິຂອງການສັ່ນສະເທືອນ ແມ່ນ ເກີດມາຈາກການນຳໃຊ້ເຄື່ອງຈັກທີ່ມີການສັ່ນສະເທືອນ ເຊັ່ນ: ຈັກເລື່ອຍໄມ້ ແລະ ຈັກຕັດຫຍ້າ ເຊິ່ງການສັ່ນສະເທືອນນີ້ ຖືວ່າ ເປັນການສັ່ນສະເທືອນທີ່ຖືກສົ່ງຜ່ານແຂນ. ອາການຂອງຄວາມຜິດປົກກະຕິນີ້ ແມ່ນ ສະແດງດ້ວຍອາການຕ່າງໆທີ່ຫຼາກຫຼາຍ, ເຊິ່ງຈຳເປັນຕ້ອງກວດໃຫ້ເຫັນໃນໄລຍະເນີ້ນໆ ແລະ ຕ້ອງຮັບການປິ່ນປົວໃນທັນທີ.

ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ໄດ້ສ້າງ “ແນວທາງໃນການປ້ອງກັນອັນຕະລາຍຈາກການສັ່ນສະເທືອນທີ່ກ່ຽວຂ້ອງກັບວຽກງານໃນການນຳໃຊ້ເຄື່ອງມືທີ່ມີການສັ່ນສະເທືອນນອກຈາກຈັກເລື່ອຍໄມ້” ເພື່ອປ້ອງກັນອັນຕະລາຍຈາກການສັ່ນສະເທືອນຈາກເຄື່ອງຕັດຫຍ້າ ຕ່າງໆເປັນຕົ້ນ ກ່ຽວກັບມາດຕະການປ້ອງກັນບັນຫາການສັ່ນສະເທືອນໃນເວລານຳໃຊ້ຈັກຕັດຫຍ້າ ແມ່ນ ໃຫ້ເອົາໃຈໃສ່ລະມັດລະວັງສິ່ງຕໍ່ໄປນີ້.

· ເລືອກລຸ້ນທີ່ມີໂຄງສ້າງ ແລະ ລະດັບຄວາມແຮງທີ່ເໝາະສົມກັບວຽກງານປ່າໄມ້.
· ເລືອກລຸ້ນທີ່ມີການສັ່ນສະເທືອນ ແລະ ສຽງລົບກວນໜ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້.
· ເລືອກລຸ້ນທີ່ເໝາະສົມກັບເປົ້າໝາຍຂອງການຕັດຫຍ້າ ແລະ ມີນ້ຳໜັກເບົາ.
· ໃບມີດ ຕ້ອງຢູ່ໃນສະພາບດີ ແລະ ຄົມດີ.
· ໄລຍະເວລາຂອງການປະຕິບັດວຽກງານໃນມື້ທຳອິດ ແມ່ນ ໃຫ້ກຳນົດໄລຍະເວລາພາຍໃນ 2 ຊົ່ວໂມງ, ສ່ວນໄລຍະເວລາປະຕິບັດປະຕິບັດວຽກງານຕໍ່ເນື່ອງ ແມ່ນ ໃຫ້ກຳນົດ ເປັນ ປະມານ 30 ນາທີ ແລະ ຕ້ອງມີເວລາພັກຜ່ອນຢ່າງໜ້ອຍ 5 ນາທີ ພາຍຫຼັງປະຕິບັດວຽກງານ 1 ຊົ່ວໂມງ.
· ຕ້ອງກຳດ້າມຈັບຄ່ອຍໆສະເໝີ.
· ຕ້ອງໃສ່ຖົງມືແບບໜາເພື່ອຊ່ວຍປ້ອງກັນການສັ່ນສະເທືອນ.
· ຕ້ອງໃສ່ແມວອັດຫູໃນຂະນະທີ່ເຮັດວຽກເພື່ອປ້ອງກັນສຽງລົບກວນ.

ຈຳເປັນຕ້ອງໄດ້ເອົາໃຈໃສ່ກ່ຽວກັບຈຸດຕໍ່ໄປນີ້ ເພື່ອລະມັດລະວັງບໍ່ໃຫ້ອາການ ຫຼື ຄວາມຜິດປົກກະຕິຈາກການສັ່ນສະເທືອນ. ອາການ ຫຼື ຄວາມຜິດປົກກະຕິຈາກການສັ່ນສະເທືອນ ບໍ່ພຽງແຕ່ເຮັດໃຫ້ນິ້ວມືມີສີຈືດ ແລະ ໂລກເລໂມ (ອາການຜິດປົກກະຕິທີ່ເກີດກັບເສັ້ນເລືອດ) ແລ້ວ, ຍັງມີອາການຈ້ຳ, ຄວາມຮູ້ສຶກບໍ່ສະບາຍ ແລະ ຄວາມເຈັບປວດ ຢູ່ມື ແລະ ນິ້ວມື. ຫາກຮູ້ສຶກມີສິ່ງຜິດປົກກະຕິຢູ່ຮ່າງກາຍ, ໃຫ້ເຂົ້າຮັບການກວດກັບໝໍຊ່ຽວຊານໃນທັນທີ.

ຕົວຢ່າງຂອງໄພພິບັດທີ່ເກີດຂຶ້ນໃນເວລາເຮັດວຽກກ່ຽວກັບການຕັດຫຍ້າ

ເສຍຊີວິດຍ້ອນໂລກລົມແດດໃນຂະນະຕັດຫຍ້າ

<ສະພາບຂອງການເກີດ>

ໃນມື້ທີ່ເກີດອຸບັດຕິເຫດ, ຜູ້ອອກແຮງງານ 4 ຄົນ ລວມທັງຜູ້ໄດ້ຮັບເຄາະຮ້າຍ ແລະ ຫົວໜ້າທີມ ໄດ້ມາເຕົ້າໂຮມກັນຢູ່ບ່ອນເຮັດວຽກກ່ອນເວລາ 8 ໂມງເຊົ້າ. ເນື່ອງຈາກວ່າມັນເປັນຄັ້ງທຳອິດສຳລັບການເຮັດວຽກຕັດຫຍ້າຂອງຜູ້ໄດ້ຮັບເຄາະຮ້າຍ, ຜູ້ຖືກເຄາະຮ້າຍໄດ້ປະຕິບັດວຽກງານຕາມຂັ້ນຕອນ, ເຊິ່ງຢູ່ດ້ານຫຼັງທີ່ສະລຽງກັບຜູ້ກ່ຽວ ກໍໄດ້ມີຫົວໜ້າທີມກຳລັງຕັດຫຍ້າໄປພ້ອມໆກັບການກ້າວຂຶ້ນໄປດ້ານໜ້າ. ສ່ວນອີກ 2 ຄົນ ແມ່ນ ເຮັດວຽກເປັນຄູ່, ເຊິ່ງດຳເນີນວຽກໜ້າດຽວກັນ ຢູ່ບ່ອນທີ່ຫ່າງອອກໄປ. ຫຼັງຈາກເລີ່ມເຮັດວຽກ ກໍໄດ້ມີການພັກຜ່ອນ 10 ນາທີຢູ່ກ້ອງຮົ່ມໄມ້ໃນທຸກໆຊົ່ວໂມງ, ເຊິ່ງກໍໄດ້ສຳເລັດວຽກຄາບເຊົ້າ. ມາຮອດເວລາບ່າຍ 1 ໂມງ ກໍໄດ້ມີການເລີ່ມຕົ້ນເຮັດວຽກໃໝ່, ໃນເວລາປະມານບ່າຍ 2 ໂມງ, ຫົວໜ້າທີມໄດ້ສັງເກດເຫັນວ່າ ຜູ້ໄດ້ຮັບເຄາະຮ້າຍ ມີອາການບໍ່ດີ ຈຶ່ງໄດ້ນຳສົ່ງໂຮງໝໍດ້ວຍລົດສຸກເສີນ ແຕ່ວ່າຜູ້ກ່ຽວໄດ້ເສຍຊີວິດຈາກໂລກລົມແດດ.

<ສາເຫດ>

① ຢູ່ບ່ອນເກີດເຫດ ສະພາບແວດລ້ອມມີແດດແຮງ ແລະ ຢູ່ພາຍໃຕ້ແສງແດດທີ່ແຜດເຜົາ ດັ່ງນັ້ນ ຈຶ່ງເປັນການເຮັດວຽກຢູ່ໃນສະພາບແວດລ້ອມທີ່ຮ້ອນເອົ້າ.
② ການກິນນ້ຳໃນລະຫວ່າງການເຮັດວຽກ ແມ່ນ ບໍ່ພຽງພໍ.
③ ຮ່າງກາຍຍັງບໍ່ຄຸ້ນເຄີຍກັບການເຮັດວຽກ. ຜູ້ໄດ້ຮັບເຄາະຮ້າຍ ໄດ້ຮັບການຝຶກອົບຮົມກ່ຽວກັບວິທີໃຊ້ຈັກຕັດຫຍ້າ, ແຕ່ມື້ທີ່ເກີດຫາດ ເປັນມື້ທຳອິດທີ່ລາວເຮັດວຽກທີ່ນຳໃຊ້ຈັກຕັດຫຍ້າ.
④ ເຖິງແມ່ນວ່າລາວຈະເລີ່ມເຂົ້າເຮັດວຽກໃນສະຫະກອນປ່າໄມ້ໃນເດືອນ 5 ຂອງປີດຽວກັນກໍຕາມ, ແຕ່ລາວບໍ່ເຄີຍໄດ້ຮັບການກວດສຸຂະພາບ

ໃນເວລາຖືກຮັບເຂົ້າເຮັດວຽກ.

<ມາດຕະການ>

① ເນື່ອງຈາກວ່າ ການເຮັດວຽກກ່ຽວກັບການຕັດຫຍ້າ ເປັນເລື່ອງຍາກທີ່ຈະເຮັດໃຫ້ພື້ນທີ່ຂອງການເຮັດວຽກເປັນບ່ອນທີ່ຮົ່ມ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ມີການຈັດການຢ່າງລະອຽດ ເປັນຕົ້ນແມ່ນ ຊົ່ວໂມງເຮັດວຽກ.

② ສຳລັບການພັກຜ່ອນ ແມ່ນ ກຳນົດເປັນເວລາ 10 ນາທີ ສຳລັບທຸກໆ 1 ຊົ່ວໂມງຂອງການເຮັດວຽກ, ແຕ່ມາດຕະຖານທີ່ມີຄວາມຫົດຢືດຄວນໄດ້ຮັບການຈັດຕັ້ງຂຶ້ນກ່ຽວ ກັບ ຊົ່ວໂມງເຮັດວຽກ ແລະ ວິທີການພັກຜ່ອນ ໂດຍອີງໃສ່ອຸນຫະພູມ ແລະ ຄວາມຊຸ່ມຂອງສະຖານທີ່. ໂດຍສະເພາະ, ໃນຊ່ວງລະດູຮ້ອນ, ຈຳເປັນຕ້ອງໃຊ້ມາດຕະການທີ່ເໝາະສົມກັບສະຖານະການ ເຊັ່ນ: ການຫຼຸດຜ່ອນຊົ່ວໂມງເຮັດວຽກຕໍ່ມື້ ແລະ ການພັກຜ່ອນສັ້ນໆ ຫຼາຍຄັ້ງ. ໃນເວລາທີ່ມີການປ່ຽນແປງໄປເປັນມື້ທີ່ຮ້ອນແບບກະທັນຫັນ ອັດຕາການເກີດໂລກລົມແດດກໍມີສູງ, ສະນັ້ນ ຈຳເປັນຕ້ອງໄດ້ມີຄວາມເອົາໃຈໃສ່ເປັນພິເສດ. ນອກຈາກນີ້, ຄວນເອົາໃຈໃສ່ຕໍ່ຜູ້ທີ່ຍັງບໍ່ຄຸ້ນເຄີຍກັບວຽກງານ.

③ ກ່ຽວກັບການກິນນ້ຳ, ຄວນໃຫ້ຄວາມຮູ້ແກ່ຜູ້ອອກແຮງງານວ່າການດື່ມເຄື່ອງດື່ມເກືອແຮ່ ແມ່ນ ມີປະສິດຕິຜົນໃນການປ້ອງກັນໂລກລົມແດດ.

④ ໃຫ້ຄວາມຮູ້ດ້ານສຸຂະອະນາໄມໃນການເຮັດວຽກກ່ຽວກັບ ອາການຂອງໂລກລົມແດດ, ວິທີການປ້ອງກັນ, ມາດຕະການການປະຖົມພະຍາບານ ແລະ ຕົວຢ່າງກໍລະນີທີ່ເກີດໂລກລົມແດດ ໃຫ້ແກ່ຜູ້ຄຸ້ມຄອງວຽກ ແລະ ຜູ້ອອກແຮງງານ.

⑤ ດຳເນີນການກວດສຸຂະພາບທີ່ເປັນພື້ນຖານສຳລັບການຄຸ້ມຄອງສຸຂະພາບຂອງຜູ້ອອກແຮງງານ.

ເສຍຊີວິດຫຼັງຈາກສຳພັດກັບຈັກຕັດຫຍ້າທີ່ກຳລັງຄວບຄຸມໂດຍເພື່ອນຮ່ວມງານ

<ສະພາບຂອງການເກີດ>

ໃນການເຮັດວຽກ ເຈົ້າຂອງກິດຈະການ ຈະເປັນຜູ້ນຳໃນການເຮັດວຽກ ແລະ ທີມງານ 3 ຄົນ ຈະເປັນຜູ້ເຮັດວຽກ, ໂດຍຈະຍ້າຍຈາກຮ່ອມພູໄປຫາພູ, ເຊິ່ງແຕ່ລະຄົນຈະຖືກສັບຊ້ອນໃຫ້ຕັດຫຍ້າຢູ່ແຕ່ລະແຖວຂອງຕົ້ນໄມ້.

ຜູ້ໄດ້ຮັບເຄາະຮ້າຍ ຢູ່ດ້ານຫຼັງ ຂອງ ຜູ້ອອກແຮງງານ ແຖວ A ແລະ B, ເຊິ່ງໄດ້ເລີ່ມເຮັດວຽກແລ້ວເລັກໜ້ອຍ ແລະ ໄດ້ພະຍາຍາມເຄື່ອນຍ້າຍລະຫວ່າງຕົ້ນໄມ້ໃນແຖວ C ທີ່ເປັນພື້ນທີ່ເຮັດວຽກຂອງລາວ, ເຊິ່ງໃນລະຫວ່າງທີ່ລາວກຳລັງຈະຍ່າງຂ້າມໜ້າຂອງເພື່ອນຮ່ວມງານທີ່ກຳລັງເຮັດວຽກຢູ່ແຖວ B ແຕ່ລາວບັງເອີນໄປສຳພັດກັບເຄື່ອງຈັກທີ່ໝູ່ຂອງລາວກຳລັງຄວບຄຸມຢູ່.

<ສາເຫດ>

① ເມື່ອຜູ້ໄດ້ຮັບເຄາະຮ້າຍເຄື່ອນຍ້າຍໄປບ່ອນເຮັດວຽກ, ລາວໄດ້ຜ່ານເຂດອັນຕະລາຍ (ພາຍໃນ 5 ແມັດ) ຂອງຈັກຕັດຫຍ້າທີ່ຄວບຄຸມໂດຍເພື່ອນຮ່ວມງານ.

② ຕຳແໜ່ງຂອງເພື່ອນຮ່ວມງານທີ່ເຮັດວຽກຢູ່ຕົ້ນໄມ້ແຖວ B ບໍ່ສາມາດເຫັນໄດ້ເມື່ອງຈາກມີຫຍ້າ ຕ່າງໆເປັນຕົ້ນ. ນອກຈາກນີ້, ເມື່ອງຈາກວ່າຜູ້ໄດ້ຮັບເຄາະຮ້າຍໄດ້ປະກົດໂຕອອກມາຢ່າງກະທັນຫັນຈາກພຸ່ມຫຍ້າ ດັ່ງນັ້ນ ເພື່ອນຮ່ວມງານຂອງລາວຈຶ່ງບໍ່ສາມາດຫລີກລ່ຽງໄດ້.

③ ຍ້ອນບໍ່ມີການຝຶກອົບຮົມດ້ານຄວາມປອດໄພຢ່າງລະອຽດ ຫຼື ການປະຊຸມກ່ອນການເຮັດວຽກເພື່ອປ້ອງກັນອຸບັດຕິເຫດ ເຊັ່ນ: ການຫ້າມບໍ່ໃຫ້ເຂົ້າໄປໃກ້ຈັກຕັດຫຍ້າ.

<ມາດຕະການ>

① ໃນເວລາເຮັດວຽກທີ່ນຳໃຊ້ຈັກຕັດຫຍ້າ ແມ່ນ ຫ້າມບໍ່ໃຫ້ຜູ້ອື່ນເຂົ້າມາພາຍໃນພື້ນທີ່ 5 ແມັດ (ພື້ນທີ່ອັນຕະລາຍ) ຂອງຜູ້ທີ່ກຳລັງເຮັດວຽກ. ໂດຍສະເພາະ, ເມື່ອເຄື່ອນຍ້າຍໄປໃກ້ກັບວຽກງານການຕັດຫຍ້າ ເຊັ່ນດຽວກັບໃນກໍລະນີນີ້, ຈຶ່ງໃຊ້ມາດຕະການທີ່ຊ່ວຍໃຫ້ທ່ານ ແລະ ຜູ້ອື່ນສາມາດຢືນຢັນຄວາມປອດໄພໄດ້ຢ່າງງ່າຍ, ເຊັ່ນ: ຍ່າງຢູ່ໃນພື້ນທີ່ທີ່ສາມາດເບິ່ງເຫັນໄດ້ງ່າຍຫຼັງຈາກຕັດຫຍ້າ.

② ຕ້ອງປະຊຸມກ່ອນທີ່ຈະເລີ່ມຕົ້ນການເຮັດວຽກເພື່ອຮັບປະກັນວິທີການເຮັດວຽກທີ່ປອດໄພ.

③ ຢູ່ບ່ອນເຮັດວຽກໃຫ້ກະກຽມອຸປະກອນປະຖົມພະຍາບານທີ່ຈຳເປັນ, ຈັດການສຶກສາ (ຝຶກອົບຮົມ) ກ່ຽວກັບການປະຖົມພະຍາບານ (ນ ພື້ນຖານ) ໃນກໍລະນີເກີດໄພພິບັດ ແລະ ອື່ນໆ ພ້ອມທັງກຳນົດຈະແຈ້ງກ່ຽວກັບການດູແລພະຍາບານ ແລະ ການສື່ສານໃນກໍລະນີສຸກເສີນ ແລ້ວແຈ້ງໃຫ້ຜູ້ກ່ຽວຂ້ອງຮັບຊາບ.

ສິ່ງສຳຄັນ ແມ່ນ ຈະຕ້ອງໄດ້ຮຽນຮູ້ກ່ຽວກັບໂລກລົມແດດເພື່ອປ້ອງກັນມັນ ໄປພ້ອມໆກັບການດຳເນີນມາດຕະການຮັບມືໃນຂະນະທີ່ຍັງມີອາການເບົາບາງໃນເວລາເປັນໂລກລົມແດດ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງ “No.02 ການດູແລສຸຂະພາບ” ໃນປຶ້ມຫົວນີ້.



ຮູບ 8-12 ວຽກງານການຕັດເຄືອໄມ້

ການຕັດເຄືອໄມ້

ການຕັດເຄືອໄມ້ໃນຊ່ວງເວລາຂອງການຕັດຫຍ້າ

ໃນວຽກງານການຕັດຫຍ້າ ແມ່ນ ຈຳເປັນຕ້ອງຕັດພືດທີ່ເປັນເຄືອໄມ້ທີ່ພັນອ້ອມຢູ່ຕົ້ນໄມ້ທີ່ປູກໃນເວລາດຽວກັນກັບການຕັດຫຍ້າ.

ຫາກຕົ້ນໄມ້ທີ່ປູກໄດ້ໃຫຍ່ຂຶ້ນ ແລະ ບໍ່ໄດ້ຮັບຜົນກະທົບຈາກຫຍ້າທີ່ຢູ່ບໍລິເວນອ້ອມຮອບແລ້ວ ກໍຈະຖືວ່າສິ້ນສຸດວຽກງານການຕັດຫຍ້າ, ແຕ່ຈະສືບຕໍ່ຕັດເຄືອໄມ້ໄປຈົນກວ່າພຸ່ມປາຍໄມ້ຂອງຕົ້ນໄມ້ທີ່ປູກຈະຕິດກັນແບບແນບສະໜິດ ຈົນເຮັດໃຫ້ພື້ນທີ່ປ່າມືດຂຶ້ນ ເຊິ່ງຈະເຮັດໃຫ້ເຄືອໄມ້ບໍ່ສາມາດບຸກລຸກເຂົ້າມາ ແລະ ເຕີບໃຫຍ່ໄດ້. ຫຼັງຈາກສິ້ນສຸດການຕັດຫຍ້າແລ້ວ ແມ່ນ ຈຳເປັນຕ້ອງໄດ້ຕັດເຄືອໄມ້ປະມານ 2 ຄັ້ງ ໃນ 2 ປີ .

ເຄືອໄມ້ຕ່າງໆທີ່ສາມາດເບິ່ງເຫັນໄດ້ໃນໄລຍະທຳອິດຂອງການຕໍ່ອາຍຸ ເມື່ອພຸ່ມປາຍໄມ້ຂອງຕົ້ນໄມ້ທີ່ປູກຕິດກັນແບບສະໜິດ ແມ່ນ ຈະເປັນພືດປະເພດມ້ວນງໍ ເຊັ່ນ: ເຄືອໂລບາຕາ (Kudzu), ເຄືອວິດເຕຍໄລ (wisteria) ແລະ ເຄືອໄມ້ຍໍ່ປຸ່ນ, ເຊິ່ງຫາກກຳຈັດເຄືອ kudzu ອອກ ມັນກໍຈະສົ່ງຜົນເສຍຫາຍຕໍ່ປະເພດເຄືອໄມ້ທີ່ກິນລຳຕົ້ນ.

ຢູ່ບໍລິເວນທີ່ມີແສງເລັກໜ້ອຍພາຍຫຼັງພຸ່ມປາຍໄມ້ຂອງຕົ້ນໄມ້ໄດ້ປົກລົງ, ເຄືອໄຮເດນເຢຍແບບເລື້ອຍ, ເຄືອໄຮເດນເຢຍປົນພູ ແລະ ເຄືອມະລິຕ່າງໆທີ່ເປັນເຄືອໄມ້ທີ່ເກາະຕິດກັບລຳຕົ້ນ ແລະ ປົນຂຶ້ນໄປເທິງຕົ້ນໄມ້ ອາດຈະຄ່ອຍໆເພີ່ມປະລິມານຫຼາຍຂຶ້ນ, ດັ່ງນັ້ນ ຈຳເປັນຕ້ອງໄດ້ສັງເກດຢ່າງຕໍ່ເນື່ອງ. ແຕ່ວ່າ, ອັດຕາການເຕີບໃຫຍ່ຂອງພວກມັນຈະຊ້າ ແລະ ເມື່ອປຽບທຽບກັບປະເພດຂອງເຄືອໄມ້ທີ່ກັດກິນເຂົ້າໄປໃນລຳຕົ້ນແລ້ວ, ເຖິງຈະມີການດູແລຊັກຊ້າ 1 ຫາ 2 ປີ ກໍບໍ່ມີຜົນອັນຕະລາຍຕໍ່ຊີວິດຂອງຕົ້ນໄມ້.

ຈະຕັດເຄືອໄມ້ດ້ວຍພ້າ ຫຼື ກ່ຽວ, ແຕ່ໃນລະຫວ່າງການປະຕິບັດວຽກດັ່ງກ່າວ ແມ່ນ ຫ້າມເຮັດໃຫ້ລຳຕົ້ນຂອງຕົ້ນໄມ້ໄດ້ຮັບຄວາມເສຍຫາຍ. ຫາກສ້າງຄວາມເສຍຫາຍໃຫ້ແກ່ລຳຕົ້ນ, ກໍຈະເລີ່ມມີການປ່ຽນສີຈາກບ່ອນທີ່ຖືກທຳລາຍ ແລະ ຈະເຮັດໃຫ້ມູນຄ່າຂອງໄມ້ຫຼຸດລົງ.

ໃນເວລາຕັດ, ຕ້ອງແນ່ໃຈວ່າໄດ້ຕັດຈາກພື້ນດິນ ແລະ ຕ້ອງແນ່ໃຈວ່າໄດ້ເອົາເຄືອອອກຈາກລຳຕົ້ນ (ຮູບ 8-12).

ການຖາກຖາງ

ຈຸດປະສົງ, ໄລຍະເວລາທີ່ຈຳເປັນ ແລະ ໄລຍະເວລາທີ່ເໝາະສົມໃນການຖາກຖາງ

ການຖາກຖາງປ່າໄມ້ ເປັນ ຂະບວນການກຳຈັດຕົ້ນໄມ້ທີ່ມີລັກສະນະບໍ່ດີ ເຊັ່ງສ່ວນໃຫຍ່ ເປັນ ຕົ້ນໄມ້ປະເພດບຸກລຸກທີ່ບໍ່ແມ່ນຕົ້ນໄມ້ເປົ້າໝາຍ, ເຊັ່ງມີເປົ້າໝາຍເພື່ອຫຼຸດຜ່ອນການລົ້ນຂອງຕົ້ນໄມ້ ແລະ ປັບປຸງສະພາບການຈະເລີນເຕີບໃຫຍ່ຂອງຕົ້ນໄມ້ທີ່ມີລັກສະນະດີ ແລະ ມີທ່າແຮງໃນອະນາຄົດ.

ສຳລັບຄວາມແຕກຕ່າງລະຫວ່າງການຕັດຕອນ ແມ່ນ ມີດັ່ງນີ້: ການຕັດຕອນ ແມ່ນ ມີເປົ້າໝາຍໃນການຕັດຕົ້ນໄມ້ເປົ້າໝາຍເປັນຫຼັກ, ສ່ວນ ການຖາກຖາງ ເປັນ ການຕັດຕົ້ນໄມ້ອື່ນທີ່ບໍ່ແມ່ນຕົ້ນໄມ້ເປົ້າໝາຍເປັນຫຼັກ.

ສະນັ້ນ, ໃນການດຳເນີນການປູກປ່າ, ຫາກຕັດຫຍ້າໄດ້ຢ່າງສົມບູນດີ ໂດຍປົກກະຕິ ແມ່ນ ບໍ່ຈຳເປັນຕ້ອງດຳເນີນຖາກຖາງ.

ເຖິງແມ່ນວ່າຈະບໍ່ສາມາດກຳນົດໄດ້ຢ່າງແນ່ນອນວ່າຈະດຳເນີນການຖາກຖາງໄດ້ໃນເວລາໃດ, ແຕ່ກໍສາມາດດຳເນີນໄດ້ໂດຍການເບິ່ງສະພາບການຂະຫຍາຍຕົວຂອງຕົ້ນໄມ້ຊະນິດຕ່າງໆ ເມື່ອພຸ່ມປາຍໄມ້ຂອງຕົ້ນໄມ້ໄດ້ປົດລົງ (ປະມານ 3 ຫາ 5 ປີຫຼັງຈາກສິ້ນສຸດການຕັດຫຍ້າ). ຈະປະຕິບັດຊ້ຳອີກຄັ້ງ ໃນ 3 ຫາ 4 ປີ ຕາມຄວາມຈຳເປັນ.

ການຖາກຖາງ ແມ່ນ ເໝາະສົມສຳລັບດຳເນີນການໃນໄລຍະຕົ້ນຂອງລະດູຮ້ອນ (ປະມານ ເດືອນ 5 ຫາ ເດືອນ 6) ເມື່ອໃບໄມ້ໃໝ່ໄດ້ຈະເລີນເຕີບໃຫຍ່ຢ່າງເຕັມທີ່. ເຫດຜົນນີ້ແມ່ນຍ້ອນວ່າສານອາຫານທີ່ເກັບໄວ້ໃນປີທີ່ຜ່ານມາ ແມ່ນ ຖືກນຳໃຊ້ໃນຊ່ວງລະດູໃບໄມ້ປົ່ງ ແລະ ຈາກລະດູຮ້ອນເປັນຕົ້ນໄປ ກໍຈະເລີ່ມສະສົມສານອາຫານໄວ້ສຳລັບການຈະເລີນເຕີບໃຫຍ່ຂອງປີຕໍ່ໄປ. ຫາກດຳເນີນການຖາກຖາງໃນໄລຍະເວລານີ້, ຄວາມສາມາດໃນການປົ່ງ ແລະ ການຟື້ນຟູ ກໍຈະຫຼຸດລົງ ແລ້ວຄວາມສາມາດໃນການແຂ່ງຂັນກໍຈະອ່ອນແອລົງ.

ວິທີການຖາກຖາງຕົ້ນໄມ້, ເຄື່ອງມື ແລະ ເຄື່ອງຈັກທີ່ນຳໃຊ້, ຈຸດທີ່ຕ້ອງລະມັດລະວັງ

ໃນການຖາກຖາງ, ຈະຕັດ ແລະ ກຳຈັດຕົ້ນໄມ້ເປົ້າໝາຍທີ່ມີລັກສະນະບໍ່ດີ ແລະ ຕົ້ນໄມ້ທີ່ໄດ້ບຸກລຸກພື້ນທີ່ພາຍຫຼັງຕັດຫຍ້າແລ້ວ.

ເຄື່ອງມືທີ່ນຳໃຊ້ ແມ່ນ ຈັກເລື່ອຍໄມ້, ຈັກຕັດຫຍ້າ, ພ້າ ແລະ ເລື່ອຍ. ສຳລັບຕົ້ນໄມ້ທີ່ມີລັກສະນະບໍ່ດີ ເປັນຕົ້ນທີ່ບໍ່ມີຍອດ ຫຼື ແຕກງ່າອອກ, ສ່ວນຕົ້ນໄມ້ທີ່ບຸກລຸກ (ຕົ້ນໄມ້ໃບກ້ວ້າງ) ການເບິ່ງຕຳແໜ່ງຈຸດສູນຖ່ວງ ຈາກ ຄວາມລາດຊັນຂອງລຳຕົ້ນ ຫຼື ຮູບຮ່າງຂອງງ່າໄມ້ ຖືວ່າເປັນສິ່ງທີ່ຍາກຫຼາຍ, ສະນັ້ນໃຫ້ເອົາໃຈໃສ່ລະມັດລະວັງບໍ່ໃຫ້ໃບມີດຖາ. ນອກຈາກນີ້, ໃນບັນດາຕົ້ນໄມ້ໃບກ້ວ້າງບາງຊະນິດ ແມ່ນ ມັກຈະຖືກຫຼີກລ່ຽງ , ດັ່ງນັ້ນ ບໍ່ໃຫ້ຄິດວ່າ ຍ້ອນມັນເປັນຕົ້ນໄມ້ນ້ອຍຈ່ອຍ ສະນັ້ນ ຈຶ່ງບໍ່ຕັດ, ແບບນັ້ນ ຖືວ່າ ເປັນສິ່ງທີ່ຫ້າມປະຕິບັດ.

ໃນເວລາຕັດພຸ່ມໄມ້ດ້ວຍຈັກຕັດຫຍ້າ, ໃຫ້ຕັດໃນຕຳແໜ່ງທີ່ບໍ່ເຮັດໃຫ້ໃບມີດດິດກັບ. ສຳລັບວຽກງານການຖາກຖາງທີ່ຕ້ອງໄດ້ຕັດຕົ້ນໄມ້ໃຫຍ່ໂດຍການນຳໃຊ້ຈັກເລື່ອຍໄມ້ ແມ່ນ ໃຫ້ກຳນົດທິດທາງ ແລ້ວເຮັດຮອຍບາກ ແລະ ຮອຍບາກຫຼັກ ເພື່ອປ້ຳຕົ້ນໄມ້ໃຫ້ລົ້ມ. ໃນເວລາຕັດຕົ້ນໄມ້, ຫ້າມໃຫ້ຜູ້ອອກແຮງງານຄົນອື່ນເຂົ້າໄປໃນພື້ນທີ່ເຊັ່ງເທົ່າກັບຄວາມສູງສອງເທົ່າຂອງຄວາມສູງຂອງຕົ້ນໄມ້.

ການຕັດງ່າໄມ້

ຈຸດປະສົງຂອງການຕັດງ່າໄມ້

ການຕັດງ່າໄມ້ ເປັນ ຂະບວນການກຳຈັດງ່າໄມ້ທີ່ຕາຍແລ້ວ ແລະ ງ່າໄມ້ທີ່ມີຊີວິດໃນລະດັບຄວາມສູງທີ່ແນ່ນອນຈາກບໍລິເວນກົກຂອງງ່າໄມ້, ໂດຍມີຈຸດປະສົງຫຼັກເພື່ອຜະລິດໄມ້ທີ່ມີຄຸນນະພາບສູງແບບໄຮ້ຂໍ້ຕໍ່ (ຮູບ 8-13).

ຈຸດປະສົງຕົ້ນຕໍຂອງການຕັດງ່າໄມ້ ແມ່ນ ເພື່ອຜະລິດໄມ້ທີ່ບໍ່ມີຮອຍຕໍ່, ແຕ່ໃນເວລາດຽວກັນ ມັນຍັງມີປະສິດທິພາບໃນການຜະລິດໄມ້ທີ່ມີໂຄງສ້າງວົງປະຈຳປີທີ່ດີເລີດ ເຊັ່ນ: ຄວາມກວ້າງຂອງວົງແຫວນປະຈຳປີ ແລະ ມຸມລະດັບຂອງວົງປະຈຳປີ.

ການຕັດງ່າໄມ້ ສາມາດຄວບຄຸມການຂະຫຍາຍຕົວຂອງລຳຕົ້ນໂດຍການປັບປະລິມານຂອງພຸ່ມປາຍໄມ້, ເຊິ່ງການຄຸ້ມຄອງຄວາມໜາແໜ້ນ (ການຕັດຕອນ) ຍັງສາມາດຄວບຄຸມການຈະເລີນເຕີບໃຫຍ່ຂອງລຳຕົ້ນໂດຍການປັບພື້ນທີ່ການຂະຫຍາຍຕົວຂອງມັນນຳອີກ.

ດັ່ງນັ້ນ, ການຕັດງ່າໄມ້ ສາມາດມີປະສິດທິພາບຫຼາຍຂຶ້ນ ເມື່ອປະຕິບັດຄຽງຄູ່ການຄຸ້ມຄອງຄວາມໜາແໜ້ນ (ການຕັດຕອນ).

ຄຽງຄູ່ກັບການຕັດຕອນ, ການຕັດງ່າ ແມ່ນ ການປັບປຸງສະພາບແວດລ້ອມແສງສະຫວ່າງພາຍໃນປ່າໄມ້ ແລະ ປ້ອງກັນການຂາດແຄນ ພືດພັນຊັ້ນລຸ່ມ, ເຊິ່ງເປັນປະໂຫຍດຕໍ່ສຸຂະພາບຂອງຕົ້ນໄມ້ຢືນຕົ້ນ. ນອກຈາກນີ້, ການຕັດງ່າໄມ້ ສາມາດປັບປຸງການຍ່ຳ ແລະ ການເບິ່ງເຫັນ ໃນປ່າ ແລະ ປັບປຸງປະສິດທິພາບຂອງວຽກງານພາຍໃນປ່າໄມ້ໄດ້ນຳອີກດ້ວຍ.

ນອກຈາກນີ້, ການຕັດງ່າໄມ້ ຍັງມີປະສິດທິພາບໃນການປ້ອງກັນໄຟໄໝ້ພື້ນທີ່ປ່າຈາກການແຜ່ລາມໄປສູ່ໄຟໄໝ້ພຸ່ມປາຍໄມ້ ແລະ ປ້ອງກັນ ຄວາມເສຍຫາຍຂອງລຳຕົ້ນທີ່ເກີດຈາກດ້ວງດຳ ແລະ ແມງວັນດອກໄມ້ ອີກດ້ວຍ.

ວຽກງານຕ່າງໆ ເຊັ່ນ: ການຕັດຫຍ້າ, ການຖາກຖາງ, ການຕັດເຄືອໄມ້ ເປັນ ວຽກງານທີ່ຕ້ອງໄດ້ດຳເນີນການຢ່າງຫຼີກລ່ຽງບໍ່ໄດ້ ເພາະຫາກ ວຽກດັ່ງກ່າວບໍ່ໄດ້ຮັບການປະຕິບັດ ຕົ້ນໄມ້ທີ່ປູກກໍຈະບໍ່ສາມາດຢູ່ລອດໄດ້ ແລະ ຄຸນນະພາບຂອງໄມ້ກໍຈະຊຸດໂຊມລົງຢ່າງຫຼວງຫຼາຍ.

ຄຽງຄູ່ກັນນັ້ນ, ການຕັດງ່າໄມ້ ເປັນ ວຽກທີ່ແນໃສ່ການປັບປຸງຄຸນນະພາບຂອງໄມ້ທີ່ຜະລິດ ແລະ ນຳພາປ່າໄມ້ໃຫ້ມີໂຄງສ້າງຕົ້ນໄມ້ຕາມ ຄວາມຕ້ອງການຈາກຫຼາຍດ້ານ.

ເຕັກນິກໃນການສົ່ງເສີມການສ້າງໄມ້ໃຫ້ມີລັກສະນະສະເພາະຂອງທ້ອງຖິ່ນທີ່ດີເລີດ ແລະ ມີມູນຄ່າທາງການຄ້າສູງ ແມ່ນ ການຄຸ້ມຄອງ ຄວາມໜາແໜ້ນ, ເຕັກນິກໃນການຕັດຕອນຕົ້ນໄມ້ ແລະ ເຕັກນິກໃນການຕັດງ່າໄມ້. ໂດຍສະເພາະ, ເຕັກນິກການຕັດງ່າໄມ້ ແມ່ນ ສຳຄັນຕໍ່ກັບ ເລື່ອງຕໍ່ໄປນີ້.

ຊ່ວງເວລາທີ່ຈຳເປັນ ແລະ ວິທີການປະຕິບັດວຽກງານຕັດງ່າໄມ້

(ການຕັດງ່າໄມ້ສູງ)

ວິທີການຕັດງ່າໄມ້ທີ່ໃຊ້ໃນການຜະລິດໄມ້ແບບບໍ່ໃຫ້ມີຂໍ້ຕໍ່ ແມ່ນ ມີ 2 ວິທີ ຄື: ວິທີທີໜຶ່ງ ແມ່ນ ແນໃສ່ການຜະລິດໄມ້ເສົາທີ່ມີພື້ນຜິວແບບ ບໍ່ມີຂໍ້ຕໍ່ ແລະ ອີກວິທີໜຶ່ງ ແມ່ນ ແນໃສ່ຜະລິດໄມ້ທີ່ມີເສັ້ນຜ່າສູນກາງໃຫຍ່ທີ່ມີອັດຕາການບໍ່ມີຂໍ້ຕໍ່ສູງທີ່ສຸດເທົ່າທີ່ຈະເປັນໄປໄດ້, ເຊິ່ງແຕ່ລະວິ ທີຕ່າງກໍມີວິທີການຄຸ້ມຄອງທີ່ແຕກຕ່າງກັນ.

ສິ່ງທຳອິດທີ່ຄວນພິຈາລະນາໃນເວລາຕັດງ່າໄມ້ ແມ່ນ ① ຕອນໃດ (ຕ້ອງໃຫ້ລຳຕົ້ນມີຄວາມໃຫຍ່ຊ່ຳໃດ) ແລະ ② ປະລິມານຫຼາຍປານໃດ (ຕ້ອງໃຫ້ລຳຕົ້ນມີຄວາມສູງເທົ່າໃດ) ທີ່ຈະຕັດງ່າໄມ້.

ຫຼັງຈາກການຕັດງ່າໄມ້ແລ້ວ, ຍ້ອນການຈະເລີນເຕີບໃຫຍ່ຂອງຕົ້ນໄມ້ຈະເຮັດຮອຍຕັດງ່າໄມ້ມ້ວນເຂົ້າໄປທາງໃນ ດັ່ງນັ້ນ ເພື່ອປ້ອງກັນບໍ່ໃຫ້ ມັນເປັນຮອຍອອກມາຍັງພື້ນຜິວດ້ານນອກຂອງໄມ້ໃນເວລາທີ່ແປຮູບໄມ້ໄປເປັນໄມ້ເສົາ ຈຶ່ງຈຳເປັນຕ້ອງໄດ້ສຳເລັດການຕັດງ່າໄມ້ໃນຂັ້ນຕອນໃດ ໜຶ່ງ. ຫາກເວົ້າເຖິງເສັ້ນຜ່າສູນກາງຂອງງ່າໄມ້ທີ່ຢູ່ລຸ່ມສຸດ ແມ່ນ ຈະຖືກກຳນົດໃຫ້ບໍ່ກາຍ 6 ຊັງຕີແມັດ (ກໍລະນີທີ່ເປົ້າໝາຍຂອງການຜະລິດ ຮູບກ້ອນສາກ ແມ່ນ 10,5 ຊັງຕີແມັດ) (ຮູບ 8-14, ຮູບ 8-15).

ສຳລັບປະລິມານການຕັດງ່າໄມ້ ໃນ 1 ຄັ້ງ ແມ່ນ ຢູ່ໃນລະດັບຂອງ 1,5 ຫາ 2 ແມັດຂອງຄວາມຍາວຂອງລຳຕົ້ນ. ຕັດງ່າໄມ້ຊ້ຳໃນປະລິມານນີ້ ຈຳນວນຫຼາຍຄັ້ງ ຈົນກ່ວາຈະໄດ້ຄວາມສູງຕາມທີ່ຕ້ອງການ.

ຫາກວ່າແຜນທີ່ຈະຜະລິດໄມ້ທີ່ມີເສັ້ນຜ່າສູນກາງຂະໜາດໃຫຍ່ໂດຍບໍ່ມີຂໍ້ ແມ່ນ ບໍ່ຈຳເປັນຕ້ອງກຳນົດຄວາມໜາຂອງການຕັດງ່າໄມ້ຢ່າງ




ຮູບ 8-13 ວຽກງານການຕັດງ່າໄມ້


(ອ້າງອີງ) ກ່ຽວກັບອຸປະກອນປ້ອງກັນການຕົກ (ສາຍແອວນິລະໄພ)

ກົດລະບຽບດ້ານຄວາມປອດໄພ ແລະ ສຸຂະພາບ ກ່ຽວກັບ ອຸປະ ກອນປ້ອງກັນການຕົກ ((ສາຍແອວນິລະໄພ (ປ້ອງກັນອຸບັດຕິເຫດ)) ໄດ້ຮັບການປັບປຸງ ໃໝ່, ເຊິ່ງປັດຈຸບັນນີ້ ຕ້ອງໃຊ້ອຸປະກອນ ປ້ອງກັນການຕົກ (ປະເພດສາຍແຂວນແບບດ່ຽວ ຕ່າງໆເປັນຕົ້ນ) ສຳລັບວຽກງານທີ່ເຄີຍປະຕິບັດຜ່ານມາທີ່ໃຊ້ສາຍຮັດ ນິລະໄພ (ປ້ອງກັນອຸບັດຕິເຫດ).

ຢ່າງໃດກໍຕາມ, ຖ້າຫາກວ່າກຳລັງເຮັດວຽກຢູ່ເທິງຕົ້ນໄມ້ ແລະ ມີຄວາມຫຍຸ້ງຍາກທີ່ສຸດທີ່ຈະນຳໃຊ້ອຸປະກອນປ້ອງກັນການຕົກ (ເຊັ່ນ: ເມື່ອຂໍເກາະບໍ່ສາມາດ ເກາະໄດ້) ແມ່ນ ໃຫ້ໃຊ້ສາຍແຂວນທີ່ເປັນຮູບໂຕ U ແລະ ໝວກກັນກະທົບ ແທນການນຳໃຊ້ອຸປະກອນປ້ອງກັນການຕົກ ເພື່ອເປັນມາດຕະການໃນການປ້ອງກັນ ອຸປະຕິເຫດແຮງງານທີ່ເກີດຈາກການຕົກ.



ຮູບ 8-14 ເສັ້ນຜ່າສູນກາງຂອງງ່າໄມ້ທີ່ຢູ່ລຸ່ມສຸດທີ່ຈະຕັດ ແລະ ຈຳນວນທີ່ຈະຕັດໃນ 1 ຄັ້ງ.




ຮູບ 8-15 ກົນໄກໃນການຕັດງ່າໄມ້ໃຫ້ໄດ້ໄມ້ໄຮ້ຂໍ້ຕໍ່

ເຂັ້ມງວດ. ຫາກມີງ່າໄມ້ທີ່ຕາຍຫຼາຍເກີນໄປໃນພຸ່ມເງົາໄມ້ ແມ່ນ ໃຫ້ກຳຈັດງ່າໄມ້ສ່ວນທີ່ຢູ່ກ້ອງພຸ່ມເງົາໄມ້ອອກ ຊ້ຳໄປຊ້ຳມາ (ສ່ວນຂອງງ່າໄມ້ທີ່ມີງ່າຕາຍປະສົມຢູ່)

ເສັ້ນຜ່າສູນກາງຂອງງ່າໄມ້ທີ່ຢູ່ລຸ່ມສຸດທີ່ຄວນຕັດອອກ ແມ່ນ ປະມານ 12 ຊັງຕີແມັດ ແລະ ຄວາມສູງຂອງການຕັດໃນ 1 ຄັ້ງ ແມ່ນ ປະມານ 2 ຫາ 3 ແມັດ.

ເວລາທີ່ເໝາະສົມສຳລັບການຕັດງ່າໄມ້

ນັບຕັ້ງແຕ່ຊ່ວງສີຂຽວສົດຈົນເຖິງທ້າຍລະດູຝົນ, ນ້ຳຢາງຈະເລີ່ມໄຫຼ ດັ່ງນັ້ນ ຄວາມເສຍຫາຍທີ່ເກີດຂຶ້ນກັບລຳຕົ້ນຈຶ່ງສາມາດແຜ່ກະຈາຍໄດ້



a: ຕຳແໜ່ງຕັດທີ່ຖືກຕ້ອງ
b: ການຕັດບ່ອນທີ່ມູນອອກມາຢູ່ກົກຂອງງ່າໄມ້
ເອີ້ນວ່າ ກົກງ່າໄມ້ ແລະ ການເຮັດໃຫ້ລຳຕົ້ນ(ເນື້ອໄມ້) ປ່ຽນສີ.

ຮູບ 8-16 ຕຳແໜ່ງບ່ອນຕັດງ່າໄມ້ທີ່ຖືກຕ້ອງ

ງ່າຍ. ດັ່ງນັ້ນ, ໃນເວລານີ້, ຈຶ່ງຫ້າມດຳເນີນການຕັດງ່າໄມ້.

ຊ່ວງເວລາການຈະເລີນເຕີບໃຫຍ່ໃນລະດູໜາວ ເປັນ ຊ່ວງເວລາທີ່ຕົ້ນໄມ້ມີຄວາມອ່ອນແອຕໍ່ຄວາມເສຍຫາຍຍາກທີ່ສຸດ. ຢ່າງໃດກໍຕາມ, ໃນຊ່ວງກາງລະດູໜາວ, ຄຸນລັກສະນະຂອງງ່າໄມ້ ແມ່ນ ຈະແຂງ ແລະ ເຮັດໃຫ້ໃບມີດ ໄດ້ຮັບຄວາມເສຍຫາຍງ່າຍ ເນື່ອງຈາກອຸນຫະພູມຕ່ຳ ແລະ ຄວາມເຢັນມີແນວໂນ້ມທີ່ຈະເຮັດໃຫ້ການເຄື່ອນໄຫວຂອງມືຊ້າລົງ ເຮັດໃຫ້ປະສິດຕິພາບໃນການເຮັດວຽກຫຼຸດລົງ ແລະ ເຮັດໃຫ້ລຳຕົ້ນເສຍຫາຍ ດັ່ງນັ້ນ ຈຶ່ງຄວນຫຼີກລ່ຽງການຕັດງ່າໄມ້ໃນຊ່ວງເວລານີ້ຂອງປີ.

ດັ່ງນັ້ນ, ເວລາທີ່ດີທີ່ສຸດໃນການຕັດງ່າໄມ້ ແມ່ນ ຊ່ວງເວລາທີ່ດອກຈຸມໃໝ່ຈະເລີ່ມປົ່ງອອກໃນລະດູໃບໄມ້ປົ່ງ ແລະ ຈາກເວລາທີ່ໃບໄມ້ເລີ່ມປ່ຽນເປັນລະດູໃບໄມ້ລົ່ນຈົນໄປເຖິງເວລາທີ່ຫິມະຕົກ. ຢ່າງໃດກໍຕາມ, ຕັ້ງແຕ່ທ້າຍເດືອນ 7 ເປັນຕົ້ນໄປ, ເນື້ອເຍື່ອຈະໜາແໜ້ນ ແລະ ມີຄວາມອ່ອນໄຫວໜ້ອຍຕໍ່ຄວາມເສຍຫາຍ, ດັ່ງນັ້ນການຕັດງ່າໃນຊ່ວງເວລານີ້ ສາມາດເປັນໄປໄດ້.

ຕຳແໜ່ງການຕັດງ່າໄມ້ທີ່ຖືກຕ້ອງ ແມ່ນ ສະແດງຢູ່ໃນຮູບ 8-16.

ອຸປະກອນການຕັດງ່າໄມ້

ເຄື່ອງມືສຳລັບການຕັດງ່າໄມ້ ປະກອບ ມີ ເລື່ອຍທີ່ຖືກດັດແປງສຳລັບການຕັດງ່າໄມ້, ພ້າ, ກ່ຽວ, ຂວານ ແລະ ມີດຕັດ.

- ເລື່ອຍ — ຕຳແໜ່ງຂອງການຕັດ ຕ້ອງຖືກຕ້ອງ ແລະ ບໍ່ທຳລາຍລຳຕົ້ນ. ເມື່ອທຽບໃສ່ພ້າ ແລະ ຂວານ ໃນການຕັດງ່າໄມ້ 1 ງ່າ ແມ່ນ ຈະໃຊ້ເວລາຫຼາຍໜ້ອຍໜຶ່ງ, ແຕ່ຈະເມື່ອຍໜ້ອຍກວ່າ ແລະ ປະສິດທິພາບໃນການເຮັດວຽກໂດຍລວມກໍຈະສູງ ເມື່ອເຮັດວຽກເປັນເວລາດົນ.
- ພ້າ ຂວານ — ຟັນເພື່ອຕັດ ສະນັ້ນ ມັນຈຶ່ງສາມາດຕັດໄດ້ໄວກ່ອນເລື່ອຍ, ແຕ່ສຳລັບມືສະໝັກຫຼິ້ນແລ້ວ ຈະເຮັດໃຫ້ເມື່ອຍງ່າຍ, ຫາກບໍ່ມີປະສົບການພຽງພໍກໍຈະເຮັດໃຫ້ບໍ່ສາມາດຕັດໃນຕຳແໜ່ງທີ່ແໜ້ນຍຳໄດ້.
- ກ່ຽວ — ມີປະສິດທິພາບສຳລັບການຕັດງ່າໄມ້ບາງໆຂອງຕົ້ນຊຸງ, ຈຶ່ງມັກນຳໃຊ້ສຳລັບການຕັດງ່າໄມ້ໃນການຜະລິດທ່ອນໄມ້ແບບຂັດເງົາ.

ປັດໄຈສ່ຽງທີ່ລີ້ຊ້ອນໃນວຽກງານການຕັດງ່າໄມ້

ການຕັດງ່າໄມ້ ເປັນ ວຽກທີ່ມັກຈະຕ້ອງເຮັດຢູ່ບ່ອນສູງໂດຍການໃຊ້ມີດ, ດັ່ງນັ້ນ ໄພພິບັດທີ່ເກີດຂຶ້ນຈາກສິ່ງນີ້ ຈຶ່ງມີບໍ່ໜ້ອຍ. ຈຳເປັນຕ້ອງຮູ້ກ່ຽວກັບວິທີການຈັດການໃບມີດຢ່າງຖືກຕ້ອງ ແລະ ຮຽນຮູ້ວິທີການເຮັດວຽກຢ່າງປອດໄພຢູ່ເທິງຕົ້ນໄມ້.

ໄພພິບັດທີ່ເກີດຈາກການຕັດງ່າໄມ້ ສາມາດແບ່ງອອກໄດ້ຢ່າງກວ້າງຂວາງ ເຊັ່ນ: ອຸບັດຕິເຫດຈາກມີດ ແລະ ຕົ້ນໄມ້ ຫຼື ການຕົກຈາກຂັ້ນໄດ

ຕ່າງໆເປັນຕົ້ນ. ຈະແນະນຳປັດໄຈສ່ຽງທີ່ລີ້ຊ້ອນຢູ່ໃນວຽກງານການຕັດງ່າໄມ້ ໂດຍການຍົກໃຫ້ເຫັນຕົວຢ່າງເຫດ ອຸບັດຕິເຫດ.

ຕົວຢ່າງເຫດ ອຸບັດຕິເຫດ ①

<ສະພາບຂອງການເກີດ>

ພາຍຫຼັງກວດກາເບິ່ງສະພາບຂອງໃບມີດຂອງພ້າແລ້ວ, ໃນເວລາທີ່ຈະເອົາມີດເຂົ້າຝັກ ແຕ່ມັນໄດ້ຫຼຸດອອກຈາກມືຂອງລາວ ແລະ ພ້າໄດ້ໄປຕຳເອົາຫຼັງຕີນຂວາຂອງລາວ ແລະ ເຮັດໃຫ້ລາວໄດ້ຮັບບາດເຈັບ.

<ມາດຕະການ>

ສຳລັບໃບມີດທີ່ໃຊ້ສຳລັບການຕັດງ່າໄມ້ ຈະໜັກ ແລະ ຕັດເຂົ້າດີ. ຫາກບໍ່ລະມັດລະວັງພຽງແຕ່ເລັກໜ້ອຍ ກໍສາມາດເຮັດໃຫ້ເກີດການບາດເຈັບໄດ້.

ຕົວຢ່າງເຫດ ອຸບັດຕິເຫດ ②

<ສະພາບຂອງການເກີດ>

ໄດ້ດຳເນີນການຕັດງ່າໄມ້ຢູ່ເທິງພື້ນດິນ. ຍ້ອນວ່າມີງ່າໄມ້ໂຕທີ່ຢູ່ຕ່ຳກວ່າງ່າທີ່ຈະຕັດມາເປັນອຸປະສັກ, ເຊິ່ງໃນຂະນະທີ່ໃຊ້ພ້າຟັນພ້ອມທັງຈັບງ່າໄມ້ໂຕທີ່ຢູ່ດ້ານລຸ່ມດ້ວຍມືຊ້າຍແລ້ວຍູ້ມັນອອກໄປພ້ອມໆກັບເອົາພ້າຟັນລົງໄປໃສ່ງ່າ, ລາວຊ້ຳພັດຄວບຄຸມມືຂອງລາວບໍ່ໄດ້ ຈຶ່ງເຮັດໃຫ້ລາວໄດ້ຮັບບາດເຈັບຢູ່ມືເບື້ອງຊ້າຍ ແລະ ກົກນິ້ວໂປ້.

<ມາດຕະການ>

ເຫດ ອຸບັດຕິເຫດ ຄັ້ງນີ້ ສະແດງໃຫ້ເຫັນເຖິງທ່າທາງພື້ນ ຖານທີ່ຄວນຈະເຮັດໃນເວລາຕັດງ່າໄມ້. ຫຼືເວົ້າອີກຢ່າງໜຶ່ງ ແມ່ນ ຢ່າວາງມືເບື້ອງຊ້າຍ (ສຳລັບຄົນລຶ້ງມືຂວາ) ໄວ້ດ້ານລຸ່ມຂອງໃບມີດທີ່ກຳລັງຟັນ.

ການອານາໄມຫິມະ ອອກຈາກຕົ້ນໄມ້ທີ່ປູກ

ຈຸດປະສົງ, ໄລຍະເວລາທີ່ຈຳເປັນ ແລະ ໄລຍະເວລາທີ່ເໝາະສົມໃນການເອົາຕົ້ນໄມ້ຂຶ້ນຈາກຫິມະ

ການເອົາຕົ້ນໄມ້ຂຶ້ນຈາກຫິມະ ເປັນການເຮັດວຽກເພື່ອລ້ຽງຕົ້ນໄມ້ທີ່ຍັງອ່ອນເຊິ່ງລົ້ມລົງຍ້ອນຄວາມກົດດັນຂອງຫິມະ ເຊິ່ງຈະຖືງມັນດ້ວຍເຊືອກຕ່າງໆເພື່ອໃຫ້ຕົ້ນມັນຕັ້ງຊື່.

ຢ່າງໃດກໍຕາມ, ຫາກຖືງມັນໄວ້ແບບນັ້ນຈົນໄປຮອດລະດູຫິມະຕໍ່ໄປ, ມັນຈະຫັກ ຫຼື ຜິດຮູບຍ້ອນຫິມະທີ່ທັບທົມ, ດັ່ງນັ້ນ ຈະຕ້ອງໄດ້ເອົາເຊືອກອອກໃນລະດູໃບໄມ້ລົ່ນ. ຫ້າມໃຊ້ເຫຼັກລວດ ເພາະມັນຈະກັດເຂົ້າໄປໃນລຳຕົ້ນ.

ວິທີການເຮັດວຽກ

ການລົ້ມຂອງຕົ້ນໄມ້ອ່ອນຍ້ອນຄວາມກົດດັນຂອງຫິມະ, ຮາກຂອງພວກມັນທີ່ຢູ່ເທິງພູມັກຈະຍົກຂຶ້ນໃນເວລາດຽວກັນກັບຕົ້ນໄມ້ລົ້ມລົງ, ດັ່ງນັ້ນ ເມື່ອເອົາຕົ້ນໄມ້ຂຶ້ນຈາກຫິມະ ແມ່ນ ໃຫ້ເອົາຮາກຂອງມັນກັບຄືນສູ່ດິນ, ຖອກດິນໃສ່ ແລ້ວໃຊ້ຕີນທັງສອງເບື້ອງຢຽບໃຫ້ແໜ້ນ. ສຳລັບການເຮັດວຽກ ແມ່ນ ໃຫ້ເຄື່ອນຍ້າຍໄປມາໃນລັກສະນະລວງນອນ ຈຶ່ງຈະມີປະສິດທິພາບ (ສຳລັບຄຳແນະນຳກ່ຽວກັບວິທີການລ້ຽງຕົ້ນໄມ້ອ່ອນ, ກະລຸນາເບິ່ງ “No.09 ວຽກງານການດູແລປ່າໄມ້ທີ່ປອດໄພ” ໃນປຶ້ມຫົວນີ້).

ຕົ້ນແປກຮິໂນກິ ມີຄວາມອ່ອນໄຫວຕໍ່ກັບຫິມະທີ່ທັບທົມ ແລະ ບໍ່ສາມາດຈະເລີນເຕີບໃຫຍ່ໄດ້ໃນເຂດທີ່ມີຫິມະຕົກແຮງ. ຕົ້ນແປກຊຸງິ ສາມາດຈະເລີນເຕີບໃຫຍ່ໄດ້ດີແມ່ນແຕ່ຢູ່ໃນເຂດທີ່ມີຫິມະຕົກແຮງ, ແຕ່ເມື່ອຫິມະທັບທົມເລິກສຸດກວ່າ 1 ແມັດຂຶ້ນໄປ ແມ່ນ ຈຳເປັນຕ້ອງເອົາມັນຂຶ້ນຈາກຫິມະ.

ການເອົາຕົ້ນໄມ້ຂຶ້ນຈາກຫິມະເປັນວຽກງານທີ່ລຳບາກ ແລະ ໃນເຂດທີ່ມີຄວາມເລິກຂອງຫິມະສູງສຸດ ແມ່ນ 1,5 ແມັດ ຫຼື ຫຼາຍກວ່ານັ້ນ ເຊິ່ງຈຳເປັນຕ້ອງພິຈາລະນາຢ່າງລະມັດລະວັງວ່າວຽກງານການເອົາຂຶ້ນຈາກຫິມະສາມາດປະຕິບັດໄດ້ໃນເວລາປູກປ່າຫຼືບໍ່.

ປັດໃຈຄວາມສ່ຽງທີ່ລີ້ຊ້ອນຢູ່ໃນວຽກງານເອົາຕົ້ນໄມ້ຂຶ້ນຈາກຫິມະ

ຈະແນະນຳກ່ຽວກັບປັດໃຈຄວາມສ່ຽງທີ່ລີ້ຊ້ອນໄວ້ໃນວຽກງານ ການເອົາຕົ້ນໄມ້ຂຶ້ນຈາກຫິມະ ໂດຍການຍົກມາເປັນຕົວຢ່າງເຫດອຸບັດຕິເຫດ.

ຕົວຢ່າງເຫດໄພພິບັດ ①

<ສະພາບຂອງການເກີດ>

ໃນຂະນະທີ່ກຳລັງຍ່າງຢູ່ອ້ອມຮອບບ່ອນທີ່ກຳລັງຈະເອົາຕົ້ນໄມ້ຂຶ້ນຈາກຫິມະ, ໄດ້ປີນຂຶ້ນໄປເທິງພຸ່ມຫຍ້າໄມ້ໄຜ່ທີ່ລົ້ມຢູ່ ແລ້ວໄດ້ພະລາດລົ້ມ. ໃນເວລານັ້ນ, ຕໍຫຍ້າໄດ້ປາດເອົາຝາມືເບື້ອງຊ້າຍ.

<ມາດຕະການ>

ພື້ນທີ່ປ່າ ຫຼັງຈາກຫິມະເປື່ອຍ, ພືດຕ່າງໆທີ່ຫຼາກຫຼາຍຈະລົ້ມລົງ. ໃນເວລາຍ່າງ, ຕ້ອງລະມັດລະວັງບໍ່ໃຫ້ຕີນໄປເຕະ. ໂດຍສະເພາະ, ພຸ່ມຫຍ້າໄມ້ໄຜ່ ຈະມົ່ນງ່າຍ, ສະນັ້ນ ໃຫ້ລະມັດລະວັງບໍ່ໃຫ້ຍ່າງຢູ່ເທິງມັນໂດຍບໍ່ລະມັດລະວັງ.

ຕົວຢ່າງເຫດໄພພິບັດ ②

<ສະພາບຂອງການເກີດ>

ເອົາເຊືອກມັດລຳຕົ້ນຂອງຕົ້ນໄມ້ທີ່ລົ້ມ ແລ້ວຄົນສອງຄົນກໍໄດ້ດຶງເຊືອກເພື່ອຍົກຕົ້ນໄມ້ຂຶ້ນ. ໄດ້ພະຍາຍາມເອົາສົ້ນຂອງເຊືອກອີກເບື້ອງໜຶ່ງພັນອ້ອມຮອບກົກຂອງໄມ້ພຸ່ມ, ແຕ່ມືໄດ້ຫຼຸດອອກ ແລະ ໄດ້ປ່ອຍສາຍເຊືອກໄປ. ດັ່ງນັ້ນ, ຕົ້ນໄມ້ຈຶ່ງເດ້ງກັບ ແລະ ທັບໃສ່ໃບໜ້າຂອງເພື່ອນຮ່ວມງານທີ່ຢືນຢູ່ດ້ານຂ້າງ.

<ມາດຕະການ>

ລຳຕົ້ນ ແລະ ງ່າຂອງຕົ້ນໄມ້ຍັງຄົງຮັກສາຄວາມຫົດຢືດໄດ້ຫຼາຍ ເຖິງແມ່ນວ່າມັນຈະຖືກປົກຄຸມໄປດ້ວຍຫິມະກໍຕາມ ໃຫ້ເອົາໃຈໃສ່ລະມັດລະວັງຕໍ່ການເດ້ງກັບຄືນຂອງມັນ.

ການຮັກສາປ່າໄມ້

No.09 ວຽກງານການຮັກສາປ່າໄມ້ທີ່ປອດໄພ

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ວິທີການປະຕິບັດວຽກງານການຮັກສາປ່າໄມ້ຂັ້ນພື້ນຖານຢ່າງປອດໄພ.

ຄຳສຳຄັນ

ຈັກຕັດຫຍ້າ, ການກວດກາ, ສາຍພາດບ່າປະຄອງ 3 ຈຸດ, ວຽກເທິງລຸ່ມ - ຫ້າມຕັດຫຍ້າແບບກັບໄປກັບມາ, ເຄື່ອງມືຊ່າງ, ວຽກງານຄວາມປອດໄພ, ການຕັດກົກຂອງເຄືອໄມ້

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

- ຢືນຢັນຄວາມປອດໄພກ່ອນເຮັດວຽກ, ຮັບປະກັນຄວາມປອດໄພໃນການເຮັດວຽກ ແລະ ຫຼີກລ່ຽງພຶດຕິກຳທີ່ອັນຕະລາຍ.
- ຫ້າມເຮັດວຽກເທິງລຸ່ມ
- ຫ້າມເຮັດວຽກໃກ້ກັນ
- ການປັບປຸງສະພາບແວດລ້ອມບ່ອນເຮັດວຽກ
- ການຍ່າງຢ່າງປອດໄພໃນພື້ນທີ່ເຮັດວຽກ (ການລະມັດລະວັງພື້ນຕົນ, ການລະມັດລະວັງໃນຂະນະທີ່ຖືເຄື່ອງມືທີ່ມີໃບມີດ, ໄລຍະຫ່າງຂອງການຍ່າງ)
- ຢ່າເຂົ້າໃກ້ພື້ນທີ່ອັນຕະລາຍ ເຊັ່ນ: ພື້ນທີ່ຫີນເຈື່ອນ ເປັນຕົ້ນ.
- ໃຫ້ລະວັງຟ້າຜ່າ, ໂລກລົມແດດ ຕ່າງໆທີ່ເກີດຂຶ້ນຈາກສະພາບອາກາດ ແລະ ດຳເນີນ (ມາດຕະການ) ການປ້ອງກັນ.
- ການມີຢູ່ຂອງສັດ ແລະ ພືດທີ່ເປັນອັນຕະລາຍ ເຊັ່ນ: ໝີ, ເຜິ້ງ, ງູ, ເຫັບ (ແມ້ງແດງ), ພືດປະເພດຢາງຮັກທີ່ສາມາດພົບຢູ່ໃນພື້ນທີ່ເຮັດວຽກ ແລະ ການປ້ອງກັນພວກມັນ (ວິທີການຮັບມື)

ການຢືນຢັນຄວາມປອດໄພກ່ອນການເຮັດວຽກ (ການຝຶກອົບຮົມ ພາກປະຕິບັດຕົວຈິງ)

ການກວດກາຊຸດເຮັດວຽກ ແລະ ອຸປະກອນປ້ອງກັນ

ກ່ອນທີ່ຈະເລີ່ມເຮັດວຽກ, ໃຫ້ກວດເບິ່ງວ່າ ຊຸດເຮັດວຽກ ແລະ ອຸປະກອນປ້ອງກັນຕໍ່ໄປນີ້ ແມ່ນ ຢູ່ໃນສະພາບຮຽບຮ້ອຍບໍ່.

·ຊຸດເຮັດວຽກ

ເສື້ອແຂນຍາວ ແລະ ໂສ້ງຂາຍາວທີ່ມີແຂບປາຍແຂນເສື້ອໂສ້ງດີ (ໃນຍາມໜາວ ໃຫ້ນຸ່ງເຄື່ອງນຸ່ງທີ່ອົບອຸ່ນ ແລະ ເບົາ)

· ເກີບ

ເກີບທີ່ເໝາະສົມກັບຕີນ, ມັ່ນຍາກ ແລະ ແຂງແຮງ.

· ໝວກກັນກະທົບ

ອັນທີ່ກົງກັບມາດຕະຖານ ແລະ ສາມາດໃສ່ສາຍຫັດຄາງໄດ້ຢ່າງຖືກຕ້ອງ.

·ສະບັບຂາ

· ຖົງມືທີ່ສາມາດປ້ອງກັນການສັ່ນສະເທືອນ

· ແມວອັດໜູ ແລະ ແມວປິດໜູ

· ແວ່ນຕາ (ຕາໜ່າງປ້ອງກັນ) ແລະ ແວ່ນຕານິລະໄພ

· ຕາໜ່າງປ້ອງກັນເຜິ້ງ

*ສຳລັບລາຍຊື່ອຸປະກອນຄວາມປອດໄພ, ເບິ່ງຕາຕະລາງທີ່ຢູ່ດ້ານທ້າຍຂອງປຶ້ມຫົວນີ້.

ການກວດການຄວາມປອດໄພຂັ້ນພື້ນຖານ

ຫຼັງຈາກກວດເບິ່ງຊຸດເຮັດວຽກ ແລະ ອຸປະກອນປ້ອງກັນທີ່ອະທິບາຍໄວ້ໃນພາກກ່ອນແລ້ວ, ໃຫ້ກວດກາເບິ່ງລາຍການຄວາມປອດໄພຕໍ່ໄປນີ້ ກ່ອນທີ່ຈະເລີ່ມເຮັດວຽກ (ໃນບົດນີ້ ພວກເຮົາຈະກຳນົດເອົາການເຮັດວຽກທີ່ໃຊ້ຈັກຕັດຫຍ້າ).

· ໃສ່ສາຍພາດບ່າຢ່າງຖືກຕ້ອງ ແລະ ໃນເວລາເຮັດວຽກ ໃຫ້ຕໍ່ມັນເຂົ້າກັບຕຳແໜ່ງຂອງເຄື່ອງຈັກຕາມທີ່ກຳນົດໄວ້.

· ກ່ອນທີ່ຈະເລີ່ມຕົ້ນການເຮັດວຽກ, ໃຫ້ກວດກາເບິ່ງສະພາບການຂອງບ່ອນເຮັດວຽກຢ່າງລະອຽດ (ພູມສັນຖານ, ລັກສະນະຂອງຫຍ້າທີ່ຈະຕັດ, ຕຳແໜ່ງຂອງວັດຖຸທີ່ເປັນອຸປະສັກ, ລະດັບອັນຕະລາຍໃນບໍລິເວນອ້ອມຂ້າງ ແລະອື່ນໆ) ແລະ ກຳຈັດວັດຖຸ ຫຼື ສິ່ງກີດຂວາງ ເຫຼົ່ານັ້ນ ຕາມທີ່ສາມາດເຄື່ອນຍ້າຍໄດ້.

· ໃຫ້ກຳນົດເອົາພື້ນທີ່ພາຍໃນໄລຍະ 15 ແມັດ ຈາກ ຜູ້ອອກແຮງງານ ເປັນ ເຂດອັນຕະລາຍ ແລະ ຫ້າມບໍ່ໃຫ້ຜູ້ໃດເຂົ້າໄປໃນເຂດດັ່ງກ່າວ. ນອກຈາກນັ້ນ, ໃນເວລາເຮັດວຽກຮ່ວມກັນກັບຫຼາຍຄົນ ແມ່ນ ສິ່ງສັນຍານເຊິ່ງກັນ ແລະ ກັນຢ່າງໃກ້ຊິດ ແລະ ຮັກສາໄລຍະຫ່າງທີ່ປອດໄພສະເໝີ.

· ກ່ອນທີ່ຈະເລີ່ມເຮັດວຽກ, ໃຫ້ກວດເບິ່ງແຕ່ລະພາກສ່ວນຂອງເຄື່ອງຈັກເພື່ອໃຫ້ແນ່ໃຈວ່າບໍ່ມີຄວາມຜິດປົກກະຕິ ເຊັ່ນ: ນ້ອດຫຼົມ, ນ້ຳມັນເຊື້ອໄຟຮົ່ວ, ຄວາມເສຍຫາຍ ຫຼື ການເສຍຮູບຮ່າງ.

· ໂດຍສະເພາະ ໃຫ້ກວດກາໃບມີດ ແລະ ພາກສ່ວນທີ່ຕິດກັບໃບມີດ.

· ຕິດຕັ້ງໂກບປົກປ້ອງກັນການຟົ້ງຕາມຕຳແໜ່ງທີ່ກຳນົດໄວ້ຢ່າງຖືກຕ້ອງ.

· ນຳໃຊ້ໃບມີດທີ່ຄົມດີ

· ກວດກາເບິ່ງວ່າ ໃບມີດບໍ່ບິ່ນ, ແຕກແຫວ ຫຼື ງໍ.

· ຫຼັງຈາກໃສ່ໃບມີດຕັດແໜ້ນແລ້ວ, ໃຫ້ຫັນດ້ວຍມື ເພື່ອກວດກາໃຫ້ແນ່ໃຈວ່າ ບໍ່ມີການສັ່ນສະເທືອນ ຫຼື ສຽງຜິດປົກກະຕິ. ຫາກມີການສັ່ນສະເທືອນ, ມັນຈະກາຍເປັນສາເຫດທີ່ເຮັດໃຫ້ເກີດການສັ່ນສະເທືອນທີ່ຜິດປົກກະຕິ ຫຼື ໃບມີດຫຼົມ, ເຊິ່ງຈະເປັນອັນຕະລາຍທີ່ສຸດ.

ການທວນຄືນກ່ຽວກັບການເຄື່ອນໄຫວພື້ນຖານ


ຈຸດປະສົງຂອງການຊີ້ໄປພ້ອມເວົ້າໄປພ້ອມ ແມ່ນ ການປະຕິບັດການເພື່ອຢືນຢັນທີ່ຈຳເປັນ ສຳລັບ ການເຮັດວຽກທີ່ປອດໄພ ໂດຍອີງໃສ່ມາດຕະຖານການເຮັດວຽກ.

ຕໍ່ໄປນີ້ ແມ່ນ ຕົວຢ່າງຂອງການຊີ້ໄປນຳເວົ້າໄປນຳໃນລະຫວ່າງການເຮັດວຽກງານຕັດຫຍ້າ.

·ກ່ອນທີ່ຈະເລີ່ມເຮັດວຽກ, ໃຫ້ປັ່ນໜ້າເຂົ້າຫາເພື່ອນຮ່ວມງານ ແລ້ວກວດກາເບິ່ງວ່າໄດ້ໃສ່ສາຍພາດບ່າຢ່າງຖືກຕ້ອງ ແລ້ວ ເວົ້າວ່າ “ສາຍຮັດ ພ້ອມ”

·ໃນເວລາເຄື່ອນຍ້າຍຈັກຕັດຫຍ້າ ໃຫ້ຊີ້ໄປຫາໃບມີດ ແລ້ວເວົ້າວ່າ “ໂກນ ພ້ອມ”

·ເມື່ອມາຮອດບ່ອນເຮັດວຽກ, ກ່ອນທີ່ຈະເລີ່ມຕົ້ນການເຮັດວຽກ, ໃຫ້ກວດກາເບິ່ງວ່າບໍ່ມີຄົນຢູ່ໃນ 15 ແມັດຂອງພື້ນທີ່ອ້ອມຂ້າງ “ໄລຍະຫ່າງຄວາມປອດໄພ ພ້ອມ”



ຮູບທີ 9-1 ໂຄງສ້ຳງຂອງຈັກຕັດຫຍ້ຳ (ດ້ຳມຈັບຮູບໂຕ U)

ວຽກງານການຕັດຫຍ້ຳ

ການຈັດການຈັກຕັດຫຍ້ຳ

ການຂົນຈັກຕັດຫຍ້ຳ

ສຳລັບໃບມີດ ແມ່ນ ໃຫ້ເອົ້ຳໂກບປົກໃບມີດ ຫຼື ບໍ່ກໍ່ໃຫ້ຖອດໃບມີດອອກແລ້ວຂົນໄປ. ໃນກຳນນຳສົ່ງດ້ວຍລົດ, ໃຫ້ຄຶງໄວ້ກັບຖ້ຳນຮອງດ້ວຍເຊືອກຢ່ຳງແໜ້ນໜຳ.

ໃນເວລຳທີ່ຕ້ອງກຳນຢຸດວຽກ ເພື່ອເຄື່ອນຍ້ຳຍ ແມ່ນ ໃຫ້ມອດເຄື່ອງຈັກ ແລ້ວປິ່ນໃບມີດໄປທຳງດ້ຳນໜ້ຳ ແລ້ວຈຶ່ງຄ່ອຍຂົນຍ້ຳຍ.

ການປ້ອງກັນບໍ່ໃຫ້ໄປຄ້ຳຢູ່ໃບມີດ

ໃນກໍລະນີ ທີ່ຕ້ອງກຳນເອົ້ຳຫຍ້ຳທີ່ຄ້ຳຢູ່ໃບມີດອອກ, ກໍລະນີທີ່ຕ້ອງກຳນກວດກຳເຄື່ອງຈັກ ແລະ ໃບມີດ ແລະ ກໍລະນີທີ່ຕ້ອງຕື່ມນ້ຳມັນເຊື້ອໄຟ ແມ່ນ ຕ້ອງມອດເຄື່ອງຈັກ ແລ້ວລໍຖ້ຳໃຫ້ໃບມີດຢຸດໝຸນ ແລ້ວຈຶ່ງຄ່ອຍດຳເນີນກຳນ. ຫຳກກວດກຳເບິ່ງເຄື່ອງຈັກໃນຂະນະທີ່ມັນຍັງຕິດຈັກຢູ່ ແມ່ນ ມີຄວຳມສ່ຽງທີ່ໃບມີດຈະເລີ່ມໝຸນ ຍ້ອນເຄື່ອງຈັກຕົກ ຕ່ຳງໆເປັນຕົ້ນ.

ການກວດກຳຈັກຕັດຫຍ້ຳ (ຮູບ 9-1)

ກ່ຽວກັບກຳນກວດກຳຈັກຕັດຫຍ້ຳ ແມ່ນ ໄດ້ລະບຸໃນ “No. 03 ກຳນບຳລຸງຮັກສຳຈັກຕັດຫຍ້ຳ” ຂອງປຶ້ມຫົວນີ້, ແຕ່ວ່ຳ ກ່ຽວກັບກຳນກວດກຳກ່ອນກຳນເຮັດວຽກ ແມ່ນຈະລະບຸໃໝ່ອີກຄັ້ງ.

ຊິ້ເອີ້ນຂອງພຳກສ່ວນຕ່ຳງໆຂອງເຄື່ອງຈັກ ແມ່ນ ຈະແຕກຕ່ຳງກັນໄປຕຳມລຸ້ນຂອງເຄື່ອງ, ດັ່ງນັ້ນ ກະລຸນຳກວດເບິ່ງຢູ່ຄູ່ມືຄຳແນະນຳຂອງແຕ່ລະລຸ້ນ.

【ລຳຍກຳນກວດກຳ】

ໃບເລື່ອຍຕັດຫຍ້ຳ

· ກຳນຫຼົ້ມຂອງນ໊ອດທີ່ໃສ່ / ຮອຍແຕກ, ບິ້ນ, ຊິ້ບເຄ້ັງອອກ, ງໍ / ປຳຍມີດຫ້ຽນ

ຝຳຄອບປ້ອນກັນກຳນຝົ້ງ (ໂກບປ້ອງກັນເສດແຕກຫັກ)

· ການຫຼົມຂອງບ່ອນທີ່ໃສ່ / ຄວາມເສຍຫາຍ

ດ້ານຈັບ

· ການຫຼົມຂອງບ່ອນທີ່ໃສ່ / ງໍ ຫຼື ຄວາມເສຍຫາຍ (ກົບລ໊ອກ)

ກົບ

· ການຕິດຂອງນ້ຳມັນ

ດ້ານຄັນໂຍກ

· ການເຄື່ອນໄຫວບໍ່ດີ

ສາຍຄັນເລັ່ງ

· ຫຼີ້ນຫຼາຍເກີນໄປ / ຫຼີ້ນໜ້ອຍເກີນໄປ / ການເຄື່ອນໄຫວທີ່ບໍ່ດີ

ສາຍຄາດບ່າ

· ຂໍເກາະ ຜິດຮູບ ຫຼື ຄວາມເສຍຫາຍ / ສາຍຫັດຫຼຸ້ຍຮ້ຽນ

ບ່ອນທີ່ຕິດຕັ້ງເຄື່ອງຈັກ

· ຫຼົມ

ຖັງນ້ຳມັນ

· ການຫຼົມຂອງບ່ອນຕິດຕັ້ງ / ຄວາມເສຍຫາຍຂອງທໍ່ນ້ຳມັນ / ຄວາມເສຍຫາຍຂອງຊິ້ນ

ກະປຸກເກຍ

· ຄວາມຫຼ້ຍຫ້ຽນກອງເພົາທີ່ຕິດຕັ້ງໃບມີດ

ທໍ່ຄວັນ

· ການຫຼົມຂອງບ່ອນຕິດຕັ້ງ / ທໍ່ຄວັນອຸດຕັນ

ໂກບ

· ການປ່ຽນຮູບ ແລະ ການປ່ຽນສີຂອງໂກບ

ຢາງກັນການສັ່ນສະເທືອນ

· ຮອຍຫ້ຽນ, ຮອຍແຕກ, ການປ່ຽນຮູບ, ການສັ່ນດັງ

ເຄື່ອງຈັກ

· ການອະນາໄມສ່ວນປະກອບຂອງເຄື່ອງຟອກອາກາດ (ຮູບ 9-2) / ກວດກາ ແລະ ອະນາໄມໄສ້ກອງນ້ຳມັນເຊື້ອໄຟ / ກວດກາ ແລະ ອະນາໄມ ຫົວທຽນ / ກວດກາ ແລະ ອະນາໄມປາກທໍ່ລໍ່ເຢັນ ແລະ ຄີບກະບອກກະສູບ / ຫັນນັອດ(ກຽວ)ຍຶດກະບອກສູບໃຫ້ແໜ້ນ / ຫັນພາກສ່ວນຕ່າງໆຂອງເຄື່ອງຈັກໃຫ້ແໜ້ນ / ການກຳຈັດກາກນອນຂອງທໍ່ຄວັນ / ການກຳຈັດສິ່ງສົກກະປົກອອກຈາກດ້ານຄາດ

ເຄື່ອງຈັກ

· ກຳຈັດກະແລັດກະປຸກເກຍ/ເພົາຂັບເຄື່ອນ


ການໃສ່ທີ່ຖືກຕ້ອງຂອງຈັກຕັດຫຍ້າ (ຮູບ 9-3)

ເຄື່ອງຕັດຫຍ້າແບບພາຍຢູ່ບ່າ (ດ້ານຈັບຮູບໂຕ U)

ຄວາມຍາວຂອງສາຍພາດບ່າເພື່ອໃຫ້ຖືຈັກຕັດຫຍ້າໃນທ່າທາງທຳມະຊາດ, ສາຍພາດບ່າຈະບໍ່ຍານ ແລະ ໃບມີດຈະຢູ່ໃນລັກສະນະລວງນອນ ແລະ ຕ້ອງກວດກາໃຫ້ແນ່ໃຈວ່າສາຍຮັດບໍ່ໄດ້ເສຍຮູບ. ພາຍຫຼັງໃສ່ສາຍຮັດແລ້ວ ໃຫ້ກົດເຄື່ອງຈັກລົງ ເພື່ອກວດກາເບິ່ງໃຫ້ແນ່ໃຈວ່າຂໍເກາະຈະບໍ່ຫຼຸດອອກງ່າຍ ແລະ ສາຍຮັດບໍ່ຫຼົມ.

ເຄື່ອງຕັດຫຍ້າແບບເປ້ຢູ່ຫຼັງ

ຈັບດ້ານຫຼັກດ້ວຍມືຊ້າຍ ແລ້ວ ວາງສາຍເປ້ເບື້ອງຂວາໃສ່ບ່າເບື້ອງຂວາ. ຕໍ່ໄປ, ປ່ຽນມາໃຊ້ມືເບື້ອງຂວາຈັບດ້ານຫຼັກ ແລ້ວ ວາງສາຍເປ້ໃສ່ບ່າເບື້ອງຊ້າຍ. ຕໍ່ໄປ, ໃຫ້ໃສ່ຫົວສາຍແອວ



ຮູບ 9-2 ເຄື່ອງຟອກອາກາດ/ປັບອາກາດ



ຮູບ 9-3: ບ່ອນທີ່ຕິດຕັ້ງຈັກຕັດຫຍ້າຢ່າງຖືກຕ້ອງ

ຫາກພາຍເຄື່ອງຕັດຫຍ້າໂດຍການໃສ່ສາຍພາດບ່າ, ສາຍຫັດແອວ ແລະ ສາຍຫັດຂາ ເຖິງຈະລົ້ມລົງໃນເວລາເຮັດ ວຽກ ໃບມີດກໍຈະມາສຳພັດກັບຮ່າງກາຍໄດ້ຍາກ (ເຂົ້າມາໃກ້ຍາກ) ສະນັ້ນ ຈຶ່ງປອດໄພກ່ອນ.

ປັບສາຍພາດບ່າເພື່ອໃຫ້ນ້ຳໜັກກະຈາຍຢ່າງເທົ່າທຽມກັນຢູ່ບ່າທັງສອງເບື້ອງ.

ການຕິດຈັກ ແລະ ມອດຈັກຕັດຫຍ້າ

ສິ່ງທີ່ຕ້ອງປະຕິບັດກ່ອນການຕິດຈັກ

ກ່ອນຈະຕິດຈັກ, ໃຫ້ກວດເບິ່ງຄວາມປອດໄພຂອງພື້ນທີ່ອ້ອມຂ້າງຢ່າງລະອຽດ (ພາຍໃນ 15 ແມັດ).

· ໃຫ້ຈັບເຄື່ອງຈັກໃຫ້ແໜ້ນໃນເວລາຕິດຈັກ ແລະ ຖີງເຄື່ອງຈັກໃຫ້ແໜ້ນເພື່ອປ້ອງກັນບໍ່ໃຫ້ໃບມີດ ແລະ ຄັນໂຍກຂອງຄັນເລັ່ງໄປສຳພັດກັບພື້ນ ດິນ ແລະ ວັດຖຸທີ່ສ້າງຄວາມເສຍຫາຍທີ່ຢູ່ໃນບໍລິເວນອ້ອມຂ້າງ.

ການຕິດຈັກ

ຊື່ເອີ້ນຂອງພາກສ່ວນຕ່າງໆຂອງເຄື່ອງຈັກ ແມ່ນ ຈະແຕກຕ່າງກັນໄປຕາມລຸ້ນຂອງເຄື່ອງ, ດັ່ງນັ້ນ ກະລຸນາກວດເບິ່ງຢູ່ຄູ່ມືຄຳແນະນຳຂອງ

ແຕ່ລະລຸ້ນ.

· ປັບຕຳແໜ່ງຂອງດ້າມຄວາມຄຸມໄປຢູ່ໃນຕຳແໜ່ງ “ຕິດຈັກ”.

· ຕື່ມນ້ຳມັນໃສ່ຫົວຈ່າຍນ້ຳມັນໂດຍການນຳໃຊ້ປ້ຳຫຼັກທີ່ຢູ່ດ້ານລຸ່ມຂອງຫົວຈ່າຍນ້ຳມັນ.

· ຍົກຄັນໂຍກຂຶ້ນ ແລ້ວຕັ້ງໄປທີ່ຕຳແໜ່ງຕິດຈັກ(ປິດ).

· ວາງເຄື່ອງຈັກໄວ້ເທິງພື້ນທີ່ໝັ້ນຄົງ, ກວດເບິ່ງພື້ນທີ່ຮອບໆທີ່ຈະຕັດຫຍ້າວ່າປອດໄພແລ້ວ ຈຶ່ງຄ່ອຍໃຊ້ມືເບື້ອງຊ້າຍດັນຄາດໄວ້ ໄປພ້ອມໆກັບການເອົາມືເບື້ອງຂວາຖືງເດືອດສະຕາດ(ເຊືອກສຳລັບຕິດຈັກ).

· ຫຼັງຈາກເຄື່ອງຈັກເຜົາໄໝ້ຄັ້ງທຳອິດ, ໃຫ້ປ່ອຍຈັກຢູ່ໃນລັກສະນະແບບນັ້ນໄປກ່ອນ ແລ້ວໃຫ້ກວດກາເບິ່ງສະພາບຂອງເຄື່ອງຈັກ. ກໍລະນີຈັກດັບ, ໃຫ້ປ່ຽນຕຳແໜ່ງຂອງຄັນໂຍກກັບຄືນໄປຫາຕຳແໜ່ງທີ່ ຂັບເຄື່ອນ (ເປີດ) ແລ້ວດຶງເຊືອກສະຕາດອີກເທື່ອໜຶ່ງ.
ຫາກເຄື່ອງຈັກຍັງສືບຕໍ່ແລ່ນຢູ່, ຫຼັງຈາກນັ້ນ ປະມານ 10 ນາທີ, ໃຫ້ປັບຄັນໂຍກກັບຄືນໄປຫາຕຳແໜ່ງ ຂັບເຄື່ອນ (ປິດ) ແລ້ວໃຫ້ອຸ່ນຈັກຕໍ່ໄປແບບນັ້ນເລີຍ.

· ຫຼັງຈາກຕິດຈັກ, ໃຫ້ອຸ່ນຈັກໃນຄວາມໄວຕ່ຳ 2 ຫາ 3 ນາທີ.

· ຫາກຕິດຈັກໂດຍທີ່ດ້າມຄວບຄຸມບໍ່ໄດ້ຢູ່ໃນຕຳແໜ່ງ ເດີນເບົາ, ໃບມີດກໍຈະເລີ່ມໝຸນໃນເວລາດຽວກັນກັບຕອນຕິດຈັກ, ເຊິ່ງສະພາບນີ້ຖືວ່າເປັນສິ່ງທີ່ອັນຕະລາຍທີ່ສຸດ.

· ໃນເວລາຕິດຈັກໃຫ້ປັບດ້າມຄວບຄຸມໄປຢູ່ໃນຕຳແໜ່ງເດີນເບົາ ທຸກຄັ້ງ (ສະພາບທີ່ປັບກັບມາຈົນສຸດ).

· ຫຼັງຈາກຕິດຈັກ, ໃຫ້ປັບຕຳແໜ່ງຂອງຄັນໂຍກໃຫ້ກັບມາຢູ່ໃນຕຳແໜ່ງເດີນເບົາ ແລະ ກວດກາຄັກແນ່ວ່າໃບມີດບໍ່ໝຸນ. ຫາກໃບມີດຍັງສືບຕໍ່ໝຸນ, ໃຫ້ມອດຈັກ ແລ້ວກວດກາ ແລະ ບຳລຸງຮັກສາສາຍຄັນເລັ່ງ ແລະ ພາກສ່ວນອື່ນໆ.

· ຫາກຕິດເຄື່ອງຈັກແລ້ວ, ໃຫ້ກວດເບິ່ງວ່າມີການສັ່ນສະເທືອນທີ່ຜິດປົກກະຕິ ຫຼື ສຽງຜິດປົກກະຕິບໍ່. ຫາກມີການສັ່ນສະເທືອນທີ່ຜິດປົກກະຕິ ຫຼື ສຽງຜິດປົກກະຕິ, ໃຫ້ມອດຈັກທັນທີ ແລ້ວໃຫ້ຮ້ານຕົວແທນຈຳໜ່າຍສ້ອມແປງ.

ການມອດຈັກ

· ປັບຕຳແໜ່ງຂອງຄັກໂຍກກັບຄືນໄປ ຕຳແໜ່ງ “ຕິດຈັກ” ແລະ ປ່ອຍຄັນເລັ່ງ.

· ໃຊ້ນິ້ວມືຍູ້ສະວິດເຄື່ອງຈັກໄປດ້ານ “STOP” ເພື່ອມອດຈັກ.

ການປະຕິບັດພື້ນຖານໃນວຽກງານທີ່ນຳໃຊ້ຈັກຕັດຫຍ້າ


ຈັກຕັດຫຍ້າທີ່ມີຈຳໜ່າຍໃນປັດຈຸບັນ, ເມື່ອຈັບດ້າມຄວບຄຸມ ແລ້ວເບິ່ງໃບມີດຈາກດ້ານເທິງ ມັນເປັນເຄື່ອງຈັກທີ່ໄດ້ຮັບການອອກແບບມາໃຫ້ມີການໝຸນໄປທາງເບື້ອງຊ້າຍ

ດ້າມຈັບຂອງຈັກຕັດຫຍ້າ ໄດ້ຮັບການອອກແບບມາສຳລັບຄົນລ້ຽງເບື້ອງຂວາ (ແບບສະເພາະຄົນລ້ຽງເບື້ອງຂວາ) ໂດຍມີຄົນເບື້ອງຂວາເປັນຄົນຫຼັກທີ່ໃຊ້ງານ ແລະ ດ້າມຄວບຄຸມຢູ່ໃກ້ກັບສະໂພກເບື້ອງຂວາ.

ຈະອະທິບາຍກ່ຽວກັບການປະຕິບັດພື້ນຖານຢ່າງລະອຽດຕື່ມກ່ຽວກັບຈັກຕັດຫຍ້າແບບພາຍຢູ່ບ່າ (ດ້າມຈັບ ໂຕ U).

ລຸ້ນປະເພດທີ່ໃຊ້ງານດ້ວຍສອງມືນີ້ ເປັນລຸ້ນທີ່ມີໂຄງສ້າງສຳລັບການຖືດ້ວຍມືສອງເບື້ອງທີ່ມີແກນກາງວາງຢູ່ເທິງສະໂພກເບື້ອງຂວາ ແລະ ມີມືຈັບຮູບໂຕ U ຢູ່ດ້ານໜ້າຂອງແກນກາງ, ດັ່ງນັ້ນເຖິງແມ່ນວ່າຜູ້ໃຊ້ຈະລ້ຽງມືຂວາກໍຕາມ ແຕ່ກ່ຍາກທີ່ຈະເຮັດວຽກໂດຍການໃຫ້ຄົນຊ້າຍຢູ່ດ້ານໜ້າ ແລະ ຄົນຂວາຢູ່ດ້ານຫຼັງໃນລັກສະນະສະຫຼຽງໄປທາງດ້ານຂວາ. ບໍ່ວ່າຈະແນວໃດ ສະພາບຮ່າງກາຍຢູ່ໃນລັກສະນະສະຫຼຽງໄປທາງດ້ານຊ້າຍ ຫຼື ເວົ້າອີກແບບສຸດໄປເລີຍ ແມ່ນ ລັກສະນະທີ່ຄົນຂວາຢູ່ດ້ານໜ້າ ແລະ ຄົນຊ້າຍຢູ່ດ້ານຫຼັງ ແລະ ສະໂພກຂວາທີ່ເປັນແກນກາງຍື່ນອອກມາທາງດ້ານໜ້າ ຖືວ່າເປັນລັກສະນະທີ່ບໍ່ສາມາດຫຼີກລ່ຽງໄດ້.

ດັ່ງນັ້ນ, ເມື່ອກ້າວໄປດ້ານໜ້າໃນຂະນະທີ່ເຮັດວຽກ, ຈະບໍ່ສາມາດຍ້າຍຄົນໃນແບບທີ່ຍ່າງຕາມປົກກະຕິ ເວົ້າອີກຢ່າງໜຶ່ງກໍຄື ຈະບໍ່ສາມາດຍ່າງໄປໃນລັກສະນະທີ່ຄົນອີກເບື່ອງໜຶ່ງກ້າວຜ່ານຕຳແໜ່ງຂອງຄົນອີກເບື້ອງໜຶ່ງ. ຄັນຊັ້ນ, ຈະຕ້ອງຍ່າງແນວໃດເພື່ອໃຫ້ຍ່າງງ່າຍ, ເນື່ອງຈາກຄົນຂວາ ຢູ່ທາງໜ້າ ແລະ ຄົນຊ້າຍຢູ່ທາງຫລັງ ເພື່ອທີ່ຈະຮັກສາສະໂພກຂວາ ໄປທາງໜ້າໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ໃນສະພາບແບບນີ້ ໃຫ້ຍັບຄົນຊ້າຍໄປທາງຫຼັງ ຫຼື ກ້ຽວໄປທາງຂ້າງຂອງຄົນ ຂວາ ຈາກນັ້ນໃຫ້ຍັບຄົນຂວາໄປທາງໜ້າ (ຮູບ 9-4); ເຊິ່ງການ ເຄື່ອນໄຫວ ແມ່ນຄ້າຍຄືກັບການກ້າວຄົນຂວາໄປທາງໜ້າ ແລ້ວດຶງຄົນຊ້າຍຕໍ່ໄປ. ຈຸດນີ້ ຈະເຮັດໃຫ້ໃບມີດຕັດຄົນໄດ້ຍາກ ແລະ ກໍມີຄວາມປອດໄພ.



ຮູບ 9-4 ວິທີການກ້າວຂາໃນວຽກງານການຕັດຫຍ້າ

ວິທີການດຳເນີນການຕັດຫຍ້າ

ໄລຍະຫ່າງລະຫວ່າງຜູ້ອອກແຮງງານ, ຫ້າມເຮັດວຽກເທິງລຸ່ມ, ທິດທາງການເຄື່ອນໄຫວ

ໃນການຕັດຫຍ້າ, ຈະມີຫລາຍຄົນຍ່າງໄປຕາມຄ້ອຍ ພ້ອມແກວ່ງຈັກຕັດຫຍ້າໄປມາເພື່ອຕັດຫຍ້າ. ດ້ວຍເຫດນີ້, ພື້ນທີ່ການເຮັດວຽກຈະມີຄວາມກວ້າງ, ສະນັ້ນ ຜູ້ອອກແຮງງານຄວນເອົາໃຈໃສ່ກັບສິ່ງອ້ອມຂ້າງ (ຮູບ 9-5).

ການສັບຊ້ອນຜູ້ອອກແຮງງານ ແລະ ວິທີການເຮັດວຽກ ແມ່ນແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ, ແຕ່ວິທີການເຮັດວຽກໂດຍທົ່ວໄປຈະເປັນລັກສະນະການເຄື່ອນຍ້າຍຕາມເສັ້ນລວງສູງຈາກຂວາໄປຫາຊ້າຍ ໂດຍມີລັກສະນະລາດຊັນ (ມີເບື້ອງຊ້າຍຂອງທິດທາງການເຄື່ອນຍ້າຍ ແມ່ນ ຈະຢູ່ດ້ານລຸ່ມຂອງບ່ອນລາດຊັນ) (ຮູບ 9-6).

ເມື່ອເຄື່ອນຍ້າຍຕາມແນວຂວາງ, ໃຫ້ຄຳນຶງເຖິງຄວາມສາມາດໃນການຈັດການຂອງຜູ້ອອກແຮງງານ, ເປົ້າໝາຍທີ່ຈະຕັດ, ວັດຖຸທີ່ຈະຕັດ, ສະພາບທາງພູມສາດ ຕ່າງໆ ແລ້ວເອົາໃຈໃສ່ສັບຊ້ອນຕຳແໜ່ງຂອງຜູ້ອອກແຮງງານ ເພື່ອຫຼີກລ່ຽງບໍ່ໃຫ້ຢູ່ໃກ້ກັນ.

ຕຳແໜ່ງຕັດຂອງໃບມີດ, ການປ້ອງກັນການດີດກັບ

ກ່ຽວກັບຫົວຂໍ້ນີ້ ແມ່ນ ໄດ້ລະບຸໃນ “No.08 ປະເພດ ແລະຈຸດປະສົງຂອງວຽກງານການດູແລປ່າໄມ້” ໃນປຶ້ມຫົວນີ້, ແຕ່ຈະໄດ້ມີການລະບຸຕື່ມເທື່ອໜຶ່ງເນື່ອງຈາກມັນມີຫົວຂໍ້ສຳຄັນໃນການຮັບປະກັນຄວາມປອດໄພໃນເວລາບຳໃຊ້ຈັກຕັດຫຍ້າ.


ຄວາມໝາຍຂອງຄຳວ່າ ການດີດກັບ ແມ່ນ ຕາມຄວາມໝາຍຂອງຄຳສັບ ມັນເປັນປະກົດການທີ່ໃບມີດໝຸນໄປກະທົບກັບວັດຖຸທີ່ຈະຕັດ ແລ້ວໃບມີດດີດກັບຄືນ.

ໃບມີດຂອງຈັກຕັດຫຍ້າມີຮູບຮ່າງເປັນແຜ່ນມົນ, ສະນັ້ນ ການດີດ ກັບ (ຄັດຂ້ອງ) ແມ່ນສາມາດເກີດຂຶ້ນໄດ້ທົ່ວທຸກດ້ານຂອງໃບມີດ. ການດີດ ກັບ (ຄັດຂ້ອງ) ແມ່ນຈະບໍ່ພຽງແຕ່ດີດກັບຄືນໄປທາງເບື້ອງຂວາເທົ່ານັ້ນ, ແຕ່ໃບມີດ (ດ້ານຄອບຄຸມ) ອາດຈະເດ້ງກັບມາຫາຕົນເອງ. ມີບາງພື້ນທີ່ ມີແນວໂນ້ມໃນການເກີດການດີດກັບຂອງໃບມີດເປັນພິເສດ (ຮູບ 9-7 ແລະ 9-8). ໃຫ້ກວດກາເບິ່ງຮາກໄມ້ທີ່ແຝງຢູ່ດ້ານຫຼັງຂອງຫຍ້າ ແລະ ພຸ່ມໄມ້ ຕ່າງໆກ່ອນການລົງມືປະຕິບັດວຽກງານ.


ວາງໃບມີດໄວ້ເທິງວັດຖຸ ຢູ່ ຈຸດທີ່ມັນສາມາດຕັດໄດ້ຢ່າງປອດໄພ (ຮູບ 9-9), ເມື່ອຕັດພຸ່ມໄມ້ຕ່າງໆ ແມ່ນ ໃຫ້ກວດສອບໃຫ້ແນ່ໃຈວ່າໄດ້ຕັດໄປດ້ານຂ້າງໂດຍກົງດ້ວຍມຸມ 30 ອົງສາຈາກດ້ານໜ້າ (ຮູບ. 9-10).

ຫ້າມຕັດຫຍ້າໄປໃນທິດທາງລົງລຸ່ມ

ຫ້າມຕັດຫຍ້າຈາກທິດທາງດ້ານເທິງລົງລຸ່ມ. ຫຍ້າທີ່ຖືກຕັດຕ່າງໆ ຈະມີລັກສະນະປິ່ນໄປທາງດ້ານລຸ່ມ. ໃນການຕັດຫຍ້າໄປທາງດ້ານລຸ່ມ, ຫຍ້າທີ່ຕັດຈະປົກຫຸ້ມອັດສະດຸທີ່ກຳລັງຈະຕັດ ຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເບິ່ງເຫັນໃນເວລາການຕັດ ເຊິ່ງໃບມີດຈະເຂົ້າມາໃກ້ຕີນຫຼາຍຂຶ້ນແລະ ຖ້າຫາກລົ້ມ ມີຄວາມເປັນໄປໄດ້ສູງທີ່ໃບມີດຈະມາຕຳຕີນ ສະນັ້ນ ຈຶ່ງເປັນສິ່ງທີ່ອັນຕະລາຍຫຼາຍ.



ຮູບ 9-5 ຫ້າມເຮັດວຽກໃກ້ກັນ



ຮູບ 9-6 ຫ້າມເຮັດວຽກເທິງລຸ່ມ ແລະ ທິດທາງໃນການເຄື່ອນໄຫວ

ຫ້າມຕັດຫຍ້າແບບແກວ່ງຈັກອອກກວ້າງ ແລະ ຕັດກັບໄປກັບມາ


ວິທີການທີ່ຜູ້ອອກແຮງງານກຳນົດຕຳແໜ່ງຂອງຕົນເອງເປັນຈຸດໃຈກາງຂອງຄວາມກວ້າງໃນການຕັດ ແລະ ເລື່ອນປາຍມີດກັບໄປກັບມາ ຊ້າຍຂວາ ແມ່ນ ມີຂໍ້ເສຍດັ່ງຕໍ່ໄປນີ້ ແລະ ບໍ່ສາມາດເວົ້າໄດ້ວ່າເປັນວິທີທີ່ດີ.

· ເມື່ອປາຍໃບມີດກັບຄືນມາຈາກຊ້າຍໄປຂວາ ວັດຖຸທີ່ຖືກຕັດ ຈະຖືກຕັດໃນທິດທາງກົງກັນຂ້າມກັບທິດທາງຂອງການໝຸນຂອງໃບມີດ ດັ່ງນັ້ນ ເພົາ ແລະ ໂຕເຄື່ອງຈຶ່ງຈະຖືກຄຸມດ້ວຍວັດຖຸທີ່ຖືກຕັດ ເຊິ່ງມັກຈະມີການກະທຳທີ່ບໍ່ປອດໄພໃນເວລາການກຳຈັດວັດຖຸເຫຼົ່ານັ້ນອອກ.

· ເມື່ອງຈາກການຕັດທີ່ແກວ່ງໄປມາໃນລັກສະນະກວ້າງ ຈະເຮັດໃຫ້ມີພື້ນທີ່ໃນການຕັດທີ່ກວ້າງ, ເຊິ່ງເຮັດໃຫ້ແຂ້ວຂອງໃບມີດລອຍຢູ່ໃນອາກາດທັງສອງສົ້ນ ແລະ ເຮັດໃຫ້ໃບມີດເດີນເບົາຫຼາຍຂຶ້ນ. ນອກຈາກນີ້ ແມ່ນ ຈຳເປັນຕ້ອງດຳເນີນການຕັດຫຍ້າທີ່ຢູ່ທັງສອງຂ້າງ ເປັນຈຳນວນ 2 ຄັ້ງ.

· ເມື່ອງຈາກການແກວ່ງໃນລັກສະນະກວ້າງ, ຈະເຮັດໃຫ້ໃບມີດຂອງຈັກຕັດຫຍ້າໄປຕຳເອົາວັດຖຸທີ່ຈະຕັດຢ່າງຮຸນແຮງ ດັ່ງນັ້ນ, ເຄື່ອງຈັກ ແລະ ມືຈຶ່ງໄດ້ຮັບແຮງກະທົບທີ່ຮຸນແຮງ. ສິ່ງນີ້ ກໍຖືວ່າເປັນສິ່ງທີ່ບໍ່ດີ ເມື່ອເບິ່ງຈາກມຸມມອງຂອງອາການຫຼືຄວາມຜິດປົກກະຕິຈາກການສັ່ນສະເທືອນ.


· ໃນເວລາຕັດຫຍ້າໄປມາ ຈຳນວນການແກວ່ງ (ຈັງວະ)ຈະໄວຂຶ້ນ, ເຊິ່ງຈະເຮັດໃຫ້ເກີດຄວາມເມື່ອຍລ້າໄວຂຶ້ນ ແລະ ມີປະສິດຕິພາບທີ່ບໍ່ດີ.




ຮູບ 9-7 ບໍລິເວນທີ່ມັກເກີດການດີດກັບ



ຮູບທີ 9-8 ການດີດກັບ



ຮູບທີ 9-9 ຕຳແໜ່ງຕັດຫຍ້າ



ຮູບທີ 9-10 ຕຳແໜ່ງການຕັດຫຍ້າ ປະເພດພຸ່ມໄມ້ ຕ່າງໆ.

ໃນອີກດ້ານຫນຶ່ງ ແມ່ນ ແນະນຳໃຫ້ໃຊ້ວິທີການຕັດຫຍ້າຕໍ່ໄປນີ້ເປັນວິທີໃນການປະຕິບັດ. ຜູ້ອອກແຮງງານຢູ່ໃນຕຳແໜ່ງດ້ານລຸ່ມຂອງຄວາມກວ້າງຂອງການຕັດ. ຫຼັງຈາກນັ້ນ, ໃຫ້ກ້າວໜ້າໄປພ້ອມໆກັບການຕັດຫຍ້າຕາມລຳດັບ ①②③ ເຊິ່ງເລີ່ມຈາກທາງໜ້າ (ຮູບ 9-11).

· ຄວາມກວ້າງຂອງການແກວ່ງ ແມ່ນ ຂ້ອນຂ້າງແຄບ, ແລະ ວັດຖຸທີ່ຈະຕັດທີ່ຢູ່ດ້ານລຸ່ມຖືກກຳຈັດອອກເປັນຢ່າງດີ. ໃນການປະຕິບັດກໍບໍ່ຍາກ ແລະ ບໍ່ເສຍຄ່າ.

· ເມື່ອງຈາກວ່າເປັນຈັງວະທີ່ຊ້າ ດັ່ງນັ້ນແຂ້ວຂອງໃບມີດຈຶ່ງບໍ່ໄດ້ກະທົບຢ່າງແຮງ ສະນັ້ນ ເຄື່ອງຈັກ ແລະ ມືທັງສອງດ້ານ ຈຶ່ງໄດ້ຮັບແຮງກະທົບທີ່ໜ້ອຍ.

· ເມື່ອຈັງວະຊ້າລົງ ໄລຍະເວລາຂອງການເຮັດວຽກຈຶ່ງຍາວຂຶ້ນ ແລະ ປະສິດທິພາບກໍດີຂຶ້ນ.

ລະມັດລະວັງການຝັ້ງຂອງກ້ອນຫີນຍ້ອນການໝຸນຂອງໃບມີດ

ເມື່ອໃບມີດແບບໝຸນຂອງຈັກຕັດຫຍ້າສຳພັດກັບສິ່ງແປກປອມ ເຊັ່ນ: ກ້ອນຫີນ ຕ່າງໆເປັນຕົ້ນ, ວັດຖຸແປກປອມເຫຼົ່ານັ້ນ ຫຼື ໃບມີດທີ່ແຕກຫັກ ອາດຈະຟ້ຶງອອກມາ ເຮັດໃຫ້ຜູ້ອອກແຮງງານ ຫຼື ຄົນອ້ອມຂ້າງ ໄດ້ຮັບບາດເຈັບ ຫຼື ສ້າງຄວາມເສຍຫາຍໃຫ້ກັບສິ່ງຂອງຕ່າງໆ..

ໃນເວລາທີ່ເຮັດວຽກກ່ຽວກັບຈັກຕັດຫຍ້າ ແມ່ນ ເປັນສິ່ງສຳຄັນທີ່ຈະຕ້ອງກວດກາເບິ່ງພື້ນທີ່ເຮັດວຽກລ່ວງໜ້າ, ຕິດຕັ້ງໂກບປ້ອງກັນວັດຖຸທີ່ຈະຟ້ຶງໃສ່ໃນຕຳແໜ່ງທີ່ເໝາະສົມ ແລະ ໃສ່ອຸປະກອນປ້ອງກັນ ເຊັ່ນ: ແວ່ນຕານິລະໄພ ແລະ ໜ້າກາກຕ່າງໆເປັນຕົ້ນ.

ລະມັດລະວັງໃນເວລາເອົາຫຍ້າທີ່ຕິດຢູ່ອອກ

ໃນລະຫວ່າງການເຮັດວຽກຕັດຫຍ້າ, ຫຍ້າ ຫຼື ເຄືອໄມ້ອາດຈະກ່ຽວພັນຢູ່ ແລະ ຄາຢູ່ໃບມີດ ແລ້ວເຮັດໃຫ້ໃບມີດຢຸດ. ໃນເວລານີ້, ໃບມີດໄດ້ຢຸດຍ້ອນແຮງຕ້ານຂອງຫຍ້າທີ່ພັນ, ສະນັ້ນ ເມື່ອເອົາຫຍ້າທີ່ພັນອອກໂດຍບໍ່ມອດຈັກ ຈະເຮັດໃຫ້ໃບມີດກັບມາໝຸນອີກຄັ້ງ ແລະ ເຮັດໃຫ້ເກີດອັນຕະລາຍທີ່ຮ້າຍແຮງ. ໃນເວລາເອົາສິ່ງຂອງທີ່ພັນ ຫຼື ກ້ຽວຢູ່ອອກ ຕ້ອງມອດຈັກ ແລະ ກວດກາຄັກແນ່ວ່າໃບມີດຢຸດໝຸນແລ້ວ ຈຶ່ງຄ່ອຍດຶງອອກ.

ວຽກງານການຕັດຫຍ້າດ້ວຍກ່ຽວ

ເປັນວິທີການດຳເນີນວຽກງານທີ່ຄ້າຍຄືກັບການຕັດຫຍ້າດ້ວຍຈັກຕັດຫຍ້າ, ເຊິ່ງວິທີການດຳເນີນການທົ່ວໄປ ແມ່ນ ການເຄື່ອນຍ້າຍໄປລວງຂວາງຈາກຂວາຫາຊ້າຍໃນລັກສະນະສະຫຼຽງ (ມີເບື້ອງຊ້າຍທີ່ຢູ່ທິດທາງຂອງການເຄື່ອນຍ້າຍ ແມ່ນ ຈະມີລັກສະນະຢູ່ດ້ານລຸ່ມຂອງບ່ອນລາດຊັນ). ນອກຈາກນີ້, ຈະມີການຈັດສັນຕຳແໜ່ງຂອງຜູ້ອອກແຮງງານເພື່ອບໍ່ໃຫ້ຕຳເນີນວຽກເທິງລຸ່ມ ແລະ ຢູ່ໃກ້ກັນ.

ຫາກຕັດຫຍ້າຢູ່ບໍລິເວນທີ່ໃກ້ຕົ້ນ ຫຼື ຕັດຫຍ້າໃນທ່າທາງທີ່ຝືນເກີນໄປໂດຍປິ່ນໜ້າໄປທາງດ້ານລຸ່ມຂອງບ່ອນລາດຊັນ ທ່າທາງແບບນັ້ນຈະບໍ່ໝັ້ນຄົງ ແລະ ອາດຈະເຮັດໃຫ້ໄດ້ຮັບບາດເຈັບຢູ່ຕີນໄດ້. ໃນກໍລະນີນີ້, ໃຫ້ຖອຍຫ່າງອອກຈາກວັດຖຸທີ່ກຳລັງຈະຕັດ ຫຼື ຈະຢູ່ຕຳແໜ່ງດ້ານລຸ່ມຂອງວັດຖຸທີ່ຈະຕັດ ແລ້ວຈຶ່ງຄ່ອຍລົງມືຕັດ.

ຢ່າຝືນຕົນເອງໃຫ້ຕັດຫຍ້າ ຫຼື ພຸ່ມໄມ້ທີ່ໜາເກີນໄປກວ່າປະສິດຕິພາບຂອງກ່ຽວ. ໃນກໍລະນີດັ່ງກ່າວ, ຫາກນຳໃຊ້ພ້າ ຫຼື ເລື່ອຍຕ່າງໆ ໃນການຕັດ ຈະຖືວ່າເປັນສິ່ງທີ່ປອດໄພ.


ພືດ ແລະ ສັດ ທີ່ເປັນ ອັນຕະລາຍ

ເຜິ້ງ

ດັ່ງທີ່ໄດ້ກ່າວໄວ້ໃນ “No.08 ປະເພດ ແລະ ຈຸດປະສົງຂອງວຽກງານການດູແລປ່າໄມ້” (ບົດທີ່ຜ່ານມາ) ໃນປຶ້ມຫົວນີ້, ໄລຍະເວລາຂອງການຕັດພືດພັນຊັ້ນລຸ່ມ ມັກຈະເກີດຂຶ້ນພ້ອມກັບຊ່ວງເວລາທີ່ເຜິ້ງກຳລັງເຄື່ອນໄຫວ ດັ່ງນັ້ນ ຈຶ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງໃຊ້ຄວາມລະມັດລະວັງ ແລະ ມາດຕະການປ້ອງກັນການຖືກເຜິ້ງຕອດ.

ໂຕເຫັບ (ແມ້ງແດງ) (ຮູບ 9-12)

ໃຫ້ເອົາໃຈໃສ່ລະມັດລະວັງກ່ຽວກັບຄວາມເສຍຫາຍທີ່ ເກີດຈາກ ເຫັບ (ແມ້ງແດງ), ເຊິ່ງໄດ້ກາຍເປັນປະເດັນໃນຊຸມປີມໍ່ໆມານີ້. ພະຍາດຕິດຕໍ່ເຊິ່ງມີພາຫະເປັນເຫັບ (ແມ້ງແດງ), ແມ່ນປະກອບມີ ພະຍາດໄຂ້ ເມັດເລືອດນ້ອຍຕ່ຳ (SFTS), ພະຍາດໄຂ້ສະໝອງ ອັກເສບຈາກເຫັບ (ແມ້ງແດງ), ໄຂ້ຕຸ່ມຍີ່ປຸ່ນ (Japanese spotted fever), ພະຍາດຊິຊຶມິກາມິ ແລະ ພະຍາດ Lyme. ເຫັບ (ແມ້ງແດງ), ມີການກະຈັດກະຈາຍ



ຮູບທີ 9-11 ວິທີການເຄື່ອນຍ້າຍຈັກຕັດຫຍ້າ



ຮູບທີ 9-12 ວິທີປ້ອງກັນຕົນເອງຈາກເຫັບ

ແຫຼ່ງຂໍ້ມູນ: "ມາດຕະການປ້ອງກັນເຫັບ, ສິ່ງທີ່ທ່ານສາມາດເຮັດໄດ້ໃນປັດຈຸບັນ" ສະຖາບັນຄົ້ນຄວ້າພະຍາດຕິດຕໍ່ແຫ່ງຊາດ

ຢູ່ທົ່ວທຸກມຸມຂອງປະເທດ, ສະນັ້ນ ໃຫ້ເອົາໃຈໃສ່ລະມັດລະວັງຫົວຂໍ້ຕໍ່ໄປນີ້ໃນເວລາເຮັດວຽກຢູ່ໃນປ່າ.

- ເຄື່ອງນຸ່ງ

· ຫຼີກລ້ຽງການເປີດເຜີຍຜິວໜັງ
· ສຳລັບເຄື່ອງນຸ່ງ ແມ່ນ ໃຫ້ນຸ່ງເສື້ອແຂນຍາວ, ໂສ້ງຂາຍາວ ແລະ ຖົງຕີນຍາວ ຕ່າງໆເປັນຕົ້ນ ແລະ ໃຫ້ນຸ່ງເສື້ອທີ່ມີແຂບແຂນເສື້ອ ແລະ ຕີນເສື້ອ ທີ່ດີເພື່ອປ້ອງກັນບໍ່ໃຫ້ເຫັບ (ແມ້ງແດງ), ເຂົ້າໄປຫາງ ຄໍເສື້ອ ແຂນເສື້ອ ແລະ ຕີນເສື້ອ.
· ໃສ່ເຄື່ອງນຸ່ງທີ່ມີສີສັນສົດໃສເພື່ອເຮັດໃຫ້ມັນງ່າຍຕໍ່ການເຫັນເຫັບ (ແມງແດງ), ຫມັດ, ມົດ ແລະ ອື່ນໆ.
· ຖືສານຂັບໄລ່ເຫັບໄປນຳ ຕາມຄວາມຈຳເປັນ, ໂດຍສະເພາະໃນຊ່ວງລະດູໃບໄມ້ປົ່ງ (ລະດູໃບໄມ້ລົ່ນ ຫາ ລະດູໃບໄມ້ປົ່ງ). ຢ່າເພິ່ງພາສະເພາະ ສານຂັບໄລ່ພຽງຢ່າງດຽວ ແຕ່ໃຫ້ໃຊ້ຮ່ວມກັບມາດຕະການປ້ອງກັນອື່ນໆ.

- ມາດຕະການໃນລະຫວ່າງ ແລະ ຫຼັງຈາກເຮັດວຽກ

· ໃນການພັກຜ່ອນ ແລະ ໃນເວລາພັກຜ່ອນໃຫ້ປົດເຄື່ອງນຸ່ງເພື່ອໃຫ້ເຫັບ (ແມ້ງແດງ) ຫຼຸດອອກ.
· ເອົາໃຈໃສ່ບໍ່ໃຫ້ນັ່ງຢູ່ກັບພື້ນໂດຍກົງ ແຕ່ໃຫ້ໃຊ້ແນວປູພື້ນ ຕ່າງເປັນຕົ້ນ.
· ໃນເວລາເລີກວຽກ, ໃຫ້ກວດກາເບິ່ງວ່າເຄື່ອງນຸ່ງຂອງແຕ່ລະຄົນມີເຫັບ (ແມ້ງແດງ) ຕິດຢູ່ຫຼືບໍ່ (ລວມທັງ ຫົວ, ໃນຫູ ແລະ ຫລັງຫູ ແລະ ອ້ອມຄໍ).
· ພາຍຫຼັງກັບເຮືອນ, ໃຫ້ກວດກາຄືນວ່າມີຮອຍກັດຂອງເຫັບຫຼືບໍ່ ເປັນຕົ້ນແມ່ນ ຢູ່ ກາງຫົວບ່ອນທີ່ມີໂອກາດທີ່ຈະຖືກກັດສູງ (ທາງໃນບ່ອນ ເສັ້ນຜົມ), ໃນຫູ ແລະ ຫຼັງຫູ, ອ້ອມຄໍ, ກ້ອງຂີ້ແຫ້, ບ່ອນຂາໜີບ, ຂາໂຄ້ດ້ານໃນ, ດ້ານຫຼັງຂອງຫົວເຂົ່າ.
· ຫ້າມສຳພັດສັດປ່າໂດຍກົງ.

- ມາດຕະການຮັບມືໃນກໍລະນີຖືກເຫັບ (ແມ້ງແດງ) ກັດ

· ໃນເວລາຖືກເຫັບ (ແມ້ງແດງ) ກັດ, ຢ່າພະຍາຍາມດຶງມັນອອກຢ່າງແຮງ, ແຕ່ໃຫ້ໄປສະຖານັບການແພດ (ເຊັ່ນ: ພະແນກຜິວໜັງ) ເພື່ອຮັບ ການການປິ່ນປົວ (ເຊັ່ນ: ເອົາເຫັບ (ແມ້ງແດງ) ອອກ ແລະ ອະນາໄມ ເປັນຕົ້ນ).
· ຫາກມີອາການທີ່ເບິ່ງຄືວ່າເປັນອາການເບື້ອງຕົ້ນຂອງພະຍາດຕິດຕໍ່ (ເຈັບຫົວ, ໄຂ້ ແລະອື່ນໆ) ໃຫ້ໄປຮັບການປິ່ນປົວຢູ່ສະຖານັບການແພດ.
· ໃຫ້ເອົາໃຈໃສ່ກ່ຽວກັບການປ່ຽນແປງຂອງສະພາບຮ່າງກາຍ ເປັນເວລາຫຼາຍອາທິດຫຼັງຈາກຖືກເຫັບ (ແມ້ງແດງ) ກັດ ແລະ ໃຫ້ໄປຫາໝໍ ຫາກມີອາການຕ່າງໆ ເຊັ່ນ: ໄຂ້ ເປັນຕົ້ນ.

ເອກະສານ: ເວັບໄຊຂອງອົງການປ່າໄມ້ "ມາດຕະການປ້ອງກັນເຫັບ (ແມ້ງແດງ) ກັດໃນເວລາເຮັດວຽກຢູ່ໃນປ່າ"

ພືດ ແລະ ສັດອື່ນໆ

ມີພືດ ແລະ ສັດອື່ນໆຢູ່ໃນປ່າອາດຈະສ້າງໄພຂົ່ມຂູ່ໃຫ້ແກ່ມະນຸດ. ອາດຈະບັງເອີນພົບກັບສັດໃຫຍ່ ເຊັ່ນ: ໝີ, ໝູປ່າ ແລະ ກວາງ ຫຼາຍຄັ້ງ, ແຕ່ຫ້າມໄປຄຸກຄາມພວກມັນ. ໃຫ້ລະມັດລະວັງເປັນຢ່າງດີ ເພາະພວກມັນອາດຈະໂດດອອກໄປທາງໜ້າລົດຂອງທ່ານໃນລະຫວ່າງທີ່ເດີນທາງ ໄປບ່ອນເຮັດວຽກ.

ນອກຈາກນັ້ນ, ຫາກຖືກງູພິດກັດ ເຊັ່ນ: ງູມານຸຊີ ຫຼື ງູ Rhabdophis tigrinus, ໃຫ້ໄປປິ່ນປົວຢູ່ສະຖານັບການແພດໃນທັນທີ.

ນອກຈາກນັ້ນ, ຍັງມີແມງໄມ້ ເຊັ່ນ: ໂຕຫາກ, ແມງໄມ້ຂົນ ເຊັ່ນ: ແມງກະເບື້ອຂົນ ແລະ ພືດປະເພດຕົ້ນຢາງຮັກທີ່ເຮັດໃຫ້ເກີດຕຸ່ມຜື່ນ, ສະນັ້ນ ໃນເວລາເຮັດວຽກ ແມ່ນ ໃຫ້ເອົາໃຈໃສ່ລະມັດລະວັງ .

ວຽກຕັດເຄືອໄມ້

ການຕັດເຄືອໄມ້

ຈຸດປະສົງຂອງການຕັດເຄືອໄມ້ ແມ່ນ ເພື່ອປ້ອງກັນບໍ່ໃຫ້ລຳຕົ້ນຂອງຕົ້ນໄມ້ທີ່ປູກ ແຕກ ຫຼື ງໍ. ເຄືອໄມ້ທີ່ພັນ ຫຼື ປົກຄຸມຕົ້ນໄມ້ ເປັນສາເຫດຫຼັກທີ່ເຮັດໃຫ້ລຳຕົ້ນແຕກ ຫຼື ງໍ ເຊິ່ງອາດເປັນອັນຕະລາຍຕໍ່ຊີວິດຂອງຕົ້ນໄມ້ໄດ້. ນອກຈາກນັ້ນ, ເຄືອໄມ້ຍັງເຄື່ອນຍ້າຍໄປຕາມພຸ່ມປ່າຍໄມ້ຂອງຕົ້ນໄມ້ທີ່ປູກ ແລະ ລາມໄປຫາຕົ້ນໄມ້ທີ່ປູກຕົ້ນອື່ນ, ສະນັ້ນ ຫາກປ່ອຍປະໄວ້, ພວກມັນຈະເຮັດໃຫ້ເກີດຄວາມເສຍຫາຍໂດຍລວມຕໍ່ຕົ້ນໄມ້ກຸ່ມນັ້ນ.


ສິ່ງສຳຄັນໃນຂັ້ນຕອນໄລຍະທຳອິດຂອງການກະກຽມໜ້າດິນ ແລະ ຕັດຫຍ້າ ແມ່ນ ການຕັດເຄືອໄມ້, ແຕ່ຕ້ອງລະມັດລະວັງໃນເວລາຕັດເຄືອໄມ້ດ້ວຍຈັກຕັດຫຍ້າ ເພາະວ່າອາດຈະມີຄວາມສ່ຽງທີ່ຈະຕັດຖືກຕົ້ນໄມ້ທີ່ປູກຢ່າງບໍ່ຖືກຕ້ອງ ແລະ ເຄືອໄມ້ທີ່ຢູ່ໃກ້ກົກຂອງຕົ້ນໄມ້ກໍອາດຈະຍັງເຫຼືອຢູ່. ເວລາທີ່ດີທີ່ສຸດທີ່ຈະຕັດເຄືອໄມ້ ແມ່ນ ຕັ້ງແຕ່ ເດືອນ 6 ຫາເດືອນ 7, ເຊິ່ງເປັນໄລຍະທີ່ສານອາຫານສະສົມຢູ່ໃນເງົ້າຂອງເຄືອ ມີ ປະລິມານຕ່ຳ.

ຫຼັງຈາກການຕັດຫຍ້າ ໃຫ້ສັງເກດເບິ່ງສະພາບຂອງເຄືອໄມ້ເປັນເວລາຫຼາຍປີຕໍ່ໄປ ແລະ ເຖິງວ່າຈະມີເຄືອໄມ້ເລັກໜ້ອຍ ແຕ່ຖ້າຫາກປ່ອຍປະໄວ້ ມັນຈະກາຍເປັນຄວາມເສຍຫາຍທີ່ໃຫຍ່ ດັ່ງນັ້ນ ຈະຕ້ອງຮັບປະກັນວ່າໄດ້ຕັດເຄືອໄມ້ໝົດແລ້ວແທ້.


ການຕັດເຄືອໄມ້ ແມ່ນ ດຳເນີນດ້ວຍ ກ່ຽວ ຫຼື ພ້າ. ໃນກໍລະນີທີ່ຈັບເຄືອໄມ້ ແລ້ວໃຊ້ມີດໃນການຕັດ ແມ່ນ ໃຫ້ເອົາມືຈັບຢູ່ບ່ອນທີ່ຢູ່ດ້ານລຸ່ມຂອງຕຳແໜ່ງທີ່ຈະຕັດ. ນອກຈາກນີ້, ເມື່ອພະຍາຍາມຟັນທີ່ຈະຕັດເຄືອໄມ້ເຊິ່ງຢູ່ໃກຈາກຕົນເອງດ້ວຍພ້າ ຫຼື ດ້ານ, ໃບມີດອາດຈະໄປຖຽ່ງ ຫຼື ເຄືອໄມ້ອື່ນໆ ເຊິ່ງເຮັດໃຫ້ສູນເສຍການຊົງໂຕ ແລະ ອາດຈະລົ້ມລົງໄດ້. ເມື່ອໃຊ້ກ່ຽວ ຫຼື ພ້າ ທີ່ມີຄົມເບື້ອງດຽວ ຕ້ອງຕັດເຄືອໄມ້ຈາກທິດທາງທີ່ຖືກຕ້ອງ (ຕັດເຂົ້າວັດຖຸທີ່ເປັນເປົ້າໝາຍໃນການຕັດ).

ຫາກໃຊ້ພ້າຕັດເຄືອໄມ້ທີ່ຢູ່ດ້ານເທິງຂອງລຳຕົ້ນຂອງຕົ້ນໄມ້ທີ່ປູກ, ລຳຕົ້ນຈະໄດ້ຮັບຄວາມເສຍຫາຍ ເຊິ່ງອາດຈະເຮັດໃຫ້ໄມ້ເນົ່າ ຫຼື ປ່ຽນສີໄດ້. ເອົາເຄືອໄມ້ອອກຈາກລຳຕົ້ນແລ້ວຈຶ່ງຄ່ອຍຕັດ ຫຼື ບໍ່ກໍໃຊ້ເລື່ອຍຕັດເພື່ອບໍ່ໃຫ້ລຳຕົ້ນໄດ້ຮັບຄວາມເສຍຫາຍ.

ຫາກເອົາເຄືອໄມ້ທີ່ຕິດຢູ່ກັບຕົ້ນອ່ອນອອກຢ່າງແຮງ, ປາຍຂອງຕົ້ນໄມ້ອາດຈະຂາດໄດ້, ດັ່ງນັ້ນ ຄວນລະມັດລະວັງໃນເວລາເຮັດວຽກ. ນອກຈາກນີ້ ຫາກໄປສຳພັດກັບຕົ້ນຢາງຮັກນ້ອຍ ພຸ່ມໄມ້ພິດກໍຈະກໍ່ໃຫ້ເກີດອາການອັກເສບ ແລະ ຄຸ່ມຜື່ນຮ້າຍແຮງໄດ້. ຫຼີກລ່ຽງການສຳພັດມັນດ້ວຍມືເປົ່າ.



ຮູບທີ 9-13 ຮອຍບາກຫຼັກ / ຮອຍບາກ



ຮູບທີ 9-14 ຂັ້ນຕອນການຕັດຕົ້ນໄມ້ທີ່ມີແຮງກົດຈົນໂຄ້ງ

ວຽກງານຖາກຖາງ

ການຖາກຖາງ

ໃນການຖາກຖາງ ຕົ້ນໄມ້ເປົ້າໝາຍທີ່ມີລັກສະນະບໍ່ດີ ແລະ ຕົ້ນໄມ້ທີ່ບຸກລຸກພື້ນທີ່ຫຼັງຈາກການຕັດຫຍ້າແລ້ວ ຈະຖືກກຳຈັດອອກດ້ວຍເຄື່ອງຕັດຫຍ້າ, ພ້າ ແລະ ເລື່ອຍ ຕ່າງໆເປັນຕົ້ນ. ຕົ້ນໄມ້ທີ່ມີລັກສະນະບໍ່ດີ ແລະ ຕົ້ນໄມ້ທີ່ບຸກລຸກ (ຕົ້ນໄມ້ໃບກວ້າງ) ຈະມີລັກສະນະແຕກຕ່າງກັນ, ດັ່ງນັ້ນ ເມື່ອຕັດກິ່ງຂອງພວກມັນ ໃຫ້ຄຳນຶງເຖິງຈຸດສູນຖ່ວງ ແລະ ຄວາມງ່າຍໃນການຫຼີກລ່ຽງໄມ້.

ຕົ້ນໄມ້ທີ່ຈະຖາກຖາງອອກດ້ວຍຈັກຕັດຫຍ້າ ຄວນຈະມີເສັ້ນຜ່າສູນກາງໜ້ອຍກວ່າ 8 ຊັງຕີແມັດ ແລະ ຖືກຕັດຢູ່ໃນຕຳແໜ່ງທີ່ໃບມີດບໍ່ເກີດການດິດກັບ. ໃນເວລາບຳໃຊ້ຈັກເລື່ອຍໄມ້ ໃຫ້ ໃສ່ໂສ້ງນິລະໄພ ແລະ ເຖິງຈະເປັນຕົ້ນໄມ້ທີ່ຈ່ອຍກໍຕາມ ໃຫ້ກຳນົດທິດທາງທີ່ຈະຕັດ ຮອຍບາກ ແລະ ຮອຍບາກຫຼັກ ແລ້ວຈຶ່ງຄ່ອຍຕັດ (ຮູບ 9-13). ໃນລະຫວ່າງການຕັດຕົ້ນໄມ້, ຜູ້ອອກແຮງງານຄົນອື່ນ ຫ້າມເຂົ້າໄປໃນພື້ນທີ່ຕັດຕົ້ນໄມ້ໃນລະຍະ 2 ເທົ່າຂອງຄວາມສູງຂອງຕົ້ນໄມ້.

ນອກຈາກນີ້, ຕ້ອງໃຊ້ຄວາມລະມັດລະວັງໃນເວລາຕັດຕົ້ນໄມ້ທີ່ໂຄ້ງງໍຢ່າງຮຸນແຮງຍ້ອນຫີມະຕົກ ເມື່ອງຈາກມັນມີແຮງດັນຢູ່ພາຍໃນຂອງລຳຕົ້ນ. ຮູບ 9-14 ເປັນ ໜຶ່ງໃນຕົວຢ່າງ. ຕັດຕົ້ນໄມ້ລົງດ້ວຍການປາດຈາກດ້ານໃນຂອງບ່ອນທີ່ໂຄ້ງເພື່ອຫຼຸດແຮງດັນຂອງມັນລົງ.

ວຽກງານຕັດງ່າໄມ້

ວິທີການເຮັດວຽກຕັດງ່າໄມ້

ຕຳແໜ່ງ ແລະ ວິທີການຕັດງ່າໄມ້

ໃນການຕັດງ່າໄມ້, ໂດຍພື້ນຖານແລ້ວ ໃຫ້ລະມັດລະວັງໃນການເຮັດໃຫ້ລຳຕົ້ນໄດ້ຮັບຄວາມເສຍຫາຍ. ຫາກລຳຕົ້ນໄດ້ຮັບຄວາມເສຍຫາຍ, ມັນກໍຈະມີການປ່ຽນສີຢູ່ພາຍໃນ ແລະ ເຮັດໃຫ້ມູນຄ່າຂອງໄມ້ຫຼຸດລົງ. ເພາະສະນັ້ນ ໃຫ້ເອົາໃຈໃສ່ລະມັດລະວັງຕຳແໜ່ງທີ່ຈະຕັດ.

ສຳລັບຕຳແໜ່ງຂອງການຕັດ ແມ່ນ ຈະຕັດບ່ອນ a ຕາມຮູບ 9-15. ຫາກຕັດຢູ່ຈຸດ b ຈະເຮັດໃຫ້ລຳຕົ້ນໄດ້ຮັບຄວາມເສຍຫາຍ ແລະ ເຮັດໃຫ້ເກີດການປ່ຽນສີ. ໃນເວລາຕັດ ຫາກຕັດສ່ວນທີ່ນູນອອກມາຢູ່ບ່ອນກົກຂອງງ່າໄມ້ (ຕຳແໜ່ງ b ໃນຮູບ 9-15) ເຊິ່ງເອີ້ນວ່າ ກົກງ່າໄມ້ ກໍຈະເກີດການປ່ຽນສີ ສະນັ້ນ ຈຳເປັນຕ້ອງໄດ້ເອົາໃຈໃສ່ລະມັດລະວັງ.


ນອກຈາກນີ້ ວິທີການຕັດ ແມ່ນ ສະແດງຢູ່ໃນຮູບ 9-16.

ຈຸດທີ່ຄວນສັງເກດໃນວຽກງານການຕັດງ່າໄມ້


ອຸປະກອນທີ່ຈຳເປັນສຳລັບການຕັດງ່າໄມ້ ປະກອບມີ ໃບມີດ ແລະ ເຄື່ອງປັ້ນຕົ້ນໄມ້. ໃບມີດປະກອບມີ ພ້າທີ່ໃຊ້ສຳລັບການຕັດງ່າໄມ້, ເລື່ອຍທີ່ໃຊ້ສຳລັບຕັດງ່າໄມ້ ແລະ ກ່ຽວຂະໜາດນ້ອຍທີ່ໃຊ້ສຳລັບການຕັດງ່າໄມ້. ເຄື່ອງມືສຳລັບການປັ້ນຕົ້ນໄມ້ ປະກອບມີ ຂັ້ນໄດທົ່ວໄປ, ຂັ້ນໄດດ່ຽວ ແລະ ອຸປະກອນປັ້ນຕົ້ນໄມ້.

ໃນການເລືອກອຸປະກອນ ແມ່ນ ໃຫ້ພິຈາລະນາເຖິງປະສິດທິພາບໃນການເຮັດວຽກ, ຄວາມປອດໄພ, ຄວາມງ່າຍໃນການນຳໃຊ້ ແລະ ລະດັບຄວາມເມື່ອຍລ້າ ແລ້ວ ເລືອກອຸປະກອນທີ່ເໝາະສົມກັບພື້ນທີ່ປ່າໄມ້ ແລະ ຮ່າງກາຍຂອງຜູ້ນຳໃຊ້. ອຸປະກອນເຫຼົ່ານີ້ ຈະໄດ້ຮັບການກວດກາ ແລະ ນຳໃຊ້ສະເພາະອຸປະກອນທີ່ບໍ່ມີຄວາມເສຍຫາຍເທົ່ານັ້ນ. ນອກຈາກນີ້, ໃນເວລາປັ້ນຕົ້ນໄມ້ ແມ່ນ ໃຫ້ໃສ່ກ່ຽວກັບອຸປະກອນປ້ອງກັນການຕົກ (ສາຍແອວນິລະໄພ).

· ເມື່ອນຳໃຊ້ຂັ້ນໄດທີ່ມີຄວາມຍາວກົງກັບຂະໜາດຂອງຕົ້ນໄມ້ ຈະເຮັດໃຫ້ການເຮັດວຽກງ່າຍຂຶ້ນ ແລະ ຮັບປະກັນຄວາມປອດໄພ.
· ວາງຂັ້ນໄດໃສ່ຕົ້ນໄມ້ໃຫ້ມີລັກສະນະສະຫຼຽງຈາກເທິງລົງມາລຸ່ມ ແລະ ຕັ້ງມັນໄວ້ໃຫ້ແໜ້ນ. ສຳລັບພື້ນທີ່ຫີນ ແລະ ຜາ ແມ່ນ ເປັນເລື່ອງຍາກທີ່ຈະວາງສົ້ນພື້ນຂອງຂັ້ນໄດໄດ້ ສະນັ້ນ ໃຫ້ລະມັດລະວັງ ແລະ ຕັ້ງມັນໃຫ້ແໜ້ນ.
· ຫຼັງຈາກຂຶ້ນໄປຂັ້ນທີ 1 ຫາ 2 ໃຫ້ກວດກາເບິ່ງວ່າ ຂັ້ນໄດບໍ່ແກວ່ງ ຫຼື ໝຸນ.
· ໃນເວລາຕັ້ງຂັ້ນໄດ, ໃຫ້ເອົາໃຈໃສ່ລະມັດລະວັງເປັນຢ່າງດີ ເພາະອາດຈະມີອັນຕະລາຍຈາກງ່າໄມ້ທີ່ເຄີຍຟັນແລ້ວອາດຈະໄປເກາະຢູ່ຕົ້ນໄມ້ຫາງຂ້າງ ເຊິ່ງມັນອາດຈະລົ້ມລົງມາທັບໜ້າໄດ້.
· ຕັດງ່າໄມ້ທີ່ຢູ່ຕໍ່ໜ້າລົງ ເພື່ອປ້ອງກັນຕາ.
· ມັນຈະປອດໄພກວ່າຫາກປັ້ນຂັ້ນໄດຂຶ້ນໄປຈົນສຸດ ແລ້ວຟັນເທື່ອລະຂັ້ນລົງມາ.
· ວາງມືເບື້ອງທີ່ບໍ່ໄດ້ຖືມີດຢູ່ໃນທ່າທີ່ປອດໄພ.




ຮູບ 9-15 ຕຳແໜ່ງການຕັດທີ່ຖືກຕ້ອງຂອງງ່າໄມ້



- ສຳລັບງ່າໄມ້ທີ່ມີຄວາມບາງໜ້ອຍກວ່າ 1,5 cm ແມ່ນ ໃຫ້ ຕັດຈາກດ້ານເທິງຕາມຮູບ A.
- ສຳລັບງ່າໄມ້ທີ່ມີຄວາມໜາ 2 ~ 4 cm ແມ່ນ ໃຫ້ເຮັດຮອຍບາກຫຼັກຈາກດ້ານລຸ່ມດັ່ງທີ່ສະແດງຢູ່ໃນ B.
- ຫາກເປັນງ່າໄມ້ທີ່ມີຄວາມໃຫຍ່ກວ່າ 4 cm ຂຶ້ນໄປ ດັ່ງທີ່ສະແດງຢູ່ໃນ C ຢູ່ບ່ອນທີ່ຫ່າງຈາກກົກ ຂອງງ່າໄມ້ໜ້ອຍໜຶ່ງ, ເຮັດຮອຍບາກ ຫຼັກແລ້ວຕັດຈາກດ້ານເທິງ ຈາກນັ້ນ ຈຶ່ງຕັດງ່າທີ່ໃຫຍ່ທີ່ເຫຼືອຈາກການຕັດງ່າ. ຫຼື ເຊັ່ນດຽວກັນກັບໃນ D, ສຸດທ້າຍອາດຈະເຮັດໃຫ້ຕົກຈາກດ້ານເທິງ.

ຮູບ 9-16 ວິທີການຕັດງ່າໄມ້: ຂັ້ນຕອນການຕັດ



ຮູບທີ 9-17 ວິທີການເອົາຕົ້ນໄມ້ຂຶ້ນຈາກຫີມະ

ວຽກງານການເອົາຕົ້ນໄມ້ຂຶ້ນຈາກຫີມະ (ການເອົາຕົ້ນໄມ້ທີ່ລົ້ມຍ້ອນຫີມະຕັ້ງຂຶ້ນ)

ການເອົາຕົ້ນໄມ້ຂຶ້ນຈາກຫີມະ

ວຽກງານການເອົາຕົ້ນໄມ້ຂຶ້ນຈາກຫີມະ ເປັນ ວຽກງານທີ່ໃຊ້ເຊືອກຕ່າງໆໃນການດຶງ ແລະ ຄຶງຕົ້ນໄມ້ທີ່ຫັກ ຫຼື ງໍຍ້ອນຄວາມກົດດັນຂອງຫີມະ ທີ່ທັບທົ່ມ ຫຼື ນ້ຳໜັກຂອງຫີມະທີ່ເກາະຢູ່ງ່ຳ ແລະ ໃບໄມ້ (ຮູບ 9-17). ເນື່ອງຈາກສະພາບຫີມະມີຄວາມແຕກຕ່າງກັນໃນແຕ່ລະພື້ນທີ່ ດັ່ງນັ້ນ ຈຶ່ງມີຄວາມແຕກຕ່າງກັນ ໃນ ຊ່ວງໄລຍະເວລາຂອງການປະຕິບັດວຽກງານ, ວິທີການປະຕິບັດ, ອຸປະກອນ ແລະ ວັດສະດຸທີ່ນຳໃຊ້ໃນວຽກງານ. ໄລຍະເວລາ ແລະ ວິທີການທົ່ວໄປ ແມ່ນ ມີດັ່ງນີ້.

· ວິທີທີ່ມີປະສິດທິພາບໃນການເອົາຕົ້ນໄມ້ຂຶ້ນຈາກຫີມະ ແມ່ນ ໃຫ້ຈັດການມັນໂດຍໄວທີ່ສຸດພາຍໃນ 1 ເດືອນຫຼັງຈາກທີ່ຫີມະຢຸດຕົກ.

· ເບິ່ງສະພາບຂອງການແຫ່ວແຫ້ງ ຫຼື ງໍ , ແລ້ວກຳນົດລະດັບທີ່ຈະເອົາຂຶ້ນ.

· ຕົ້ນໄມ້ທີ່ລົ້ມລົງ ຈະເຮັດໃຫ້ຮາກຂອງມັນເສຍຫາຍຢ່າງຫຼີກລ່ຽງບໍ່ໄດ້ ແລະ ເງົ້າຮາກຂອງມັນຈະຫຼົ່ມ ແລະ ເຄື່ອນເໜັງໄດ້ງ່າຍ ສະນັ້ນ ຈຶ່ງຈຳເປັນຕ້ອງຢຽບໃຫ້ແໜ້ນ .

· ສຳລັບຕົ້ນໄມ້ສູງທີ່ມີຄວາມສູງບໍ່ກາຍ 3 ແມັດ, ເວົ້າກັນວ່າ ວິທີທີ່ງ່າຍທີ່ສຸດ ແມ່ນ ການມັດປາຍເຊືອກດ້ານໜຶ່ງເຂົ້າກັບພຸ່ມໄມ້ ຫຼື ຮາກຂອງຕົ້ນໄມ້ ຫຼື ຕົ້ນໄມ້ທີ່ປູກຕົ້ນອື່ນໆ ແລ້ວເອົາປາຍເຊືອກອີກດ້ານໜຶ່ງມັດໃສ່ຕົ້ນໄມ້ທີ່ປູກເພື່ອດຶງມັນໄວ້. (ຮູບ 9-18)).


· ວິທີການມັດແບບຂອດເຊືອກ ເປັນວິທີການມັດເຊືອກ ບໍ່ເຮັດໃຫ້ເຊືອກຫຼຸດ ແລະ ບໍ່ຮັດຕົ້ນໄມ້ (ຮູບທີ 9-19).

ຈຸດທີ່ຄວນສັງເກດໃນວຽກງານການເອົາຕົ້ນໄມ້ຂຶ້ນຈາກຫີມະ

· ພື້ນທີ່ປ່າໄມ້ພາຍຫຼັງຫີມະຢຸດຕົກ ພືດພັນຈຳນວນຫຼາຍຈະແຫ່ວແຫ້ງ ແລະ ຫັກລົ້ງມາ ດັ່ງນັ້ນ ໃຫ້ລະມັດລະວັງບໍ່ໃຫ້ໄປຂ້ອງເອົາມັນ.

· ຫຍ້າໄມ້ໃຜ່ຈະມື່ນງາຍ ສະນັ້ນ ຢ່າຂຶ້ນໄປຢຽບມັນໂດຍບໍ່ລະມັດລະວັງ.

· ໃນເວລາດຳເນີນມາດຕະການເອົາຕົ້ນໄມ້ຂຶ້ນຈາກຫີມະ ແມ່ນ ໃຫ້ລະມັດລະວັງງ່ຳໄມ້ຕ່າງໆທີ່ຈະດິດກັບ.



ຮູບທີ 9-18 ວິທີການມັດເຊືອກ (ການເອົາຕົ້ນໄມ້ຂຶ້ນຈາກຫີມະ)



ຮູບ 9-19 ການມັດຮ່ວງປາຍເຊືອກ

· ເຖິງແມ່ນວ່າຕົ້ນໄມ້ທີ່ລົ້ມຈະຖືກຫີມະທັບໄວ້ ແຕ່ມັນກໍຍັງມີຄວາມຫົດຢືດຢູ່ຈຳນວນຫຼາຍ, ສະນັ້ນ ໃຫ້ລະມັດລະວັງການດີດກັບ.
· ໃນການເອົາຕົ້ນໄມ້ທີ່ລົ້ມລົງລຸກຂຶ້ນ ຈຳເປັນຕ້ອງໃຊ້ກຳລັງແຮງ. ສຳລັບຕົ້ນໄມ້ສູງກວ່າ 3 ແມັດ ແມ່ນ ໃຫ້ເຮັດວຽກເປັນທີມ 2 ຄົນ.

IV
ການຜະລິດວັດສະດຸຈາກໄມ້

ການຕັດໄມ້ດ້ວຍເຄື່ອງເລື່ອຍໄມ້ - ການແປຮູບໄມ້ - ການເກັບຮັກສາໄມ້

No. 10 ການດຳເນີນການຜະລິດວັດສະດຸຈາກໄມ້ ໂດຍການນຳໃຊ້ຈັກເລື່ອຍໄມ້

No. 11 ວຽກງານການແປຮູບໄມ້ທີ່ປອດໄພ

ການຕັດໄມ້ດ້ວຍເຄື່ອງເລື່ອຍໄມ້ - ການແປຮູບໄມ້ - ການເກັບຮັກສາໄມ້

No.10 ການດຳເນີນການຜະລິດວັດສະດຸຈາກໄມ້ ໂດຍການນຳໃຊ້ຈັກເລື່ອຍໄມ້

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ກ່ຽວກັບວິທີການດຳເນີນວຽກງານຕັດໄມ້ດ້ວຍຈັກເລື່ອຍໄມ້ຢ່າງປອດໄພ ເຊິ່ງນຳໃຊ້ໃນສະຖານະການຕ່າງໆໃນ ການຜະລິດວັດສະດຸໄມ້.

ຄຳສຳຄັນ

ວຽກງານຕັດໄມ້ດ້ວຍຈັກເລື່ອຍໄມ້, ການແປຮູບໄມ້ທີ່ຕັດມາ, ແຜນການເຮັດວຽກ, ການຈັດການງ່ຳໄມ້, ການຕັດໄມ້ ທ່ອນມົນ(ການຕັດມົນ), ງ່ຳໄມ້ທີ່ໂຄ້ງງໍ(ງ່ຳໄມ້ທີ່ງໍ ເຊິ່ງສາມາດດີດກັບໄດ້), ການດີດກັບ, ການຊີ້ໄປພ້ອມເວົ້າໄປພ້ອມ.

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

<ກ່ຽວກັບດ້ານລຸ່ມນີ້, ຈະຕ້ອງຮຽນຮູ້ຢ່າງຖືກຕ້ອງກ່ຽວກັບລາຍລະອຽດ “ການຮັບປະກັນຄວາມປອດໄພ ແລະ ອັນຕະ ລາຍຢູ່ບ່ອນເຮັດວຽກກ່ຽວກັບການຕັດໄມ້”>


- ໃນວຽກງານປ່າໄມ້, ວຽກງານການແປຮູບໄມ້ທີ່ຕັດທີ່ມີການນຳໃຊ້ຈັກເລື່ອຍໄມ້ ຖືວ່າເປັນວຽກງານທີ່ມີຄວາມ ຄວາມສ່ຽງ ແລະ ອັນຕະລາຍທີ່ສຸດ.
- ຮຽນຮູ້ຢ່າງຖີ່ຖ້ວນກ່ຽວກັບຄວາມສ່ຽງ ແລະ ອັນຕະລາຍໂດຍການນຳໃຊ້ຕົວຢ່າງເຫດ ອຸບັດຕິເຫດ ທີ່ເກີດຂຶ້ນຈິງ.

<ກ່ຽວກັບດ້ານລຸ່ມນີ້, ຈະຕ້ອງຮຽນຮູ້ຢ່າງຖືກຕ້ອງກ່ຽວກັບລາຍລະອຽດ “ການຈັດການງ່ຳໄມ້”>

- ໃນການຕັດງ່ຳໄມ້ທີ່ງໍ (ງໍຍ້ອນກອງທັບຖົມກັນ) ຈະມີຄວາມສ່ຽງທີ່ງ່ຳໄມ້ຈະດີດກັບ.
- ກ່ຽວກັບຄວາມສ່ຽງ ແລະ ອັນຕະລາຍ ຂອງການດີດກັບໃນການຈັດການງ່ຳໄມ້ທີ່ນຳໃຊ້ຈັກເລື່ອຍໄມ້
- ຫ້າມໃຫ້ຄົນ 2 ຄົນຂຶ້ນໄປ ຈັດການງ່ຳໄມ້ດຽວກັນໃນເວລາດຽວກັນ.

<ຕ້ອງຮຽນຮູ້ກ່ຽວກັບລາຍລະອຽດຂອງ “ການຕັດໄມ້ທ່ອນມົນ” ຕໍ່ໄປນີ້>

- ໃນເວລາເຮັດກ່ຽວກັບການແປຮູບເປັນໄມ້ທ່ອນ ຕ້ອງຢືນຢູ່ດ້ານເທິງຂອງບ່ອນລາດຊັນ ແລະ ບໍ່ໃຫ້ເອົາຕີນໄປ ໄວ້ກ້ອງໄມ້.
- ຫ້າມບໍ່ໃຫ້ຄົນ 2 ຄົນຂຶ້ນໄປ ແປຮູບໄມ້ທ່ອນດຽວກັນໃນເວລາດຽວກັນ.



ຮູບ 10-1 ຫຼັກການເບື້ອງຕົ້ນຂອງວຽກງານການຕັດຕົ້ນໄມ້ທີ່ປອດໄພ

ຄວາມສ່ຽງ ແລະ ອັນຕະລາຍໃນວຽກງານການຕັດໄມ້ ແລະ ການຮັບປະກັນຄວາມປອດໄພ

ການກຽມພ້ອມທາງຈິດໃຈໃນເວລາເຮັດວຽກທີ່ນຳໃຊ້ຈັກເລື່ອຍໄມ້

ເຖິງຈະເປັນຕົ້ນໄມ້ຢືນຕົ້ນທີ່ເສັ້ນຜ່າສູນກາງຂອງບ່ອນທີ່ສູງຊ່ຳໜ້າເອິກຂອງຄົນເຮົາ ເທົ່າກັບ 15 ຊັງຕີແມັດ ແລະ ຄວາມສູງ 10 ແມັດ ກໍຕາມ, ຈະຖືວ່າເປັນຕົ້ນໄມ້ທີ່ມີນ້ຳໜັກພຽງພໍທີ່ຈະເຮັດໃຫ້ຄົນໄດ້ຮັບບາດເຈັບ ຫຼື ເສຍຊີວິດໄດ້ ດັ່ງນັ້ນ ວຽກງານການຕັດໄມ້ ຈຶ່ງເປັນວຽກງານ ທີ່ມີຄວາມຄວາມສ່ຽງ ແລະ ອັນຕະລາຍ.

ເພື່ອທີ່ຈະສາມາດດຳເນີນການຕັດຕົ້ນໄມ້ໄດ້ຢ່າງປອດໄພ ສິ່ງສຳຄັນທີ່ສຸດ ແມ່ນ “ຕົ້ນໄມ້ເປົ້າໝາຍຕ້ອງຢູ່ພາຍໃຕ້ການຄອບຄຸມຂອງຜູ້ອອກ ແຮງງານຢ່າງພຽງພໍນັບແຕ່ເລີ່ມຕົ້ນວຽກ ໄປຈົນຮອດ ແລ້ວວຽກ” ຫາກສາມາດຄວບຄຸມໄດ້ ກໍຈະສາມາດເວົ້າໄດ້ວ່າມັນເປັນ “ການຕັດຕົ້ນ ໄມ້ທີ່ປອດໄພ”. ຢ່າງໃດກໍຕາມ, ສິ່ງນີ້ກໍເປັນເງື່ອນໄຂສຳຄັນທີ່ກຳນົດວ່າ ຜູ້ອອກແຮງງານມີຄວາມສາມາດຄວບຄຸມ=ຄວາມສາມາດທາງດ້ານ ເຕັກນິກ, ທັກສະ ແລະ ການຕັດສິນໃຈ (ຮູບ 10-1).

ສຳລັບຕົ້ນໄມ້ຢືນຕົ້ນ ຈະມີເງື່ອນໄຂທາງດ້ານທີ່ຕັ້ງ, ອາຍຸຂອງປ່າ, ປະເພດຕົ້ນໄມ້ ຕ່າງໆທີ່ຫຼາກຫຼາຍ ແລະ ແຕກຕ່າງກັນ. ນອກຈາກນີ້ ຍັງ ມີເງື່ອນໄຂທາງສະພາບອາກາດທີ່ເພີ່ມເຂົ້າມາອີກ. ດັ່ງນັ້ນ, ຕົ້ນໄມ້ເປົ້າໝາຍ ຈະສາມາດຄວບຄຸມໄດ້ຫຼືບໍ່ ແມ່ນ ຂຶ້ນກັບລະດັບທັກສະຂອງຜູ້ ອອກແຮງງານ.

ການຫຼຸດຜ່ອນຄວາມສ່ຽງ ບໍ່ພຽງແຕ່ເປັນວິທີການເຮັດວຽກເທົ່ານັ້ນ, ແຕ່ມັນຍັງມີຄວາມກ່ຽວຂ້ອງລະຫວ່າງຕົ້ນໄມ້ຢືນຕົ້ນ ແລະ ທັກສະຂອງ ຕົນເອງ ສະນັ້ນ ການຕັດສິນໃຈວ່າ ຈະລົງມືປະຕິບັດວຽກ ຫຼື ບໍ່ ກໍເປັນປັດໃຈທີ່ສຳຄັນຢ່າງຍິ່ງ.

ປັດໃຈໃນການດຳເນີນວຽກງານຕັດຕົ້ນໄມ້ “ຢ່າງປອດໄພ” ບໍ່ໄດ້ມີພຽງເທົ່ານັ້ນ. ເຊິ່ງມັນຍັງລວມເຖິງການບໍ່ໄດ້ສ້າງຄວາມເສຍຫາຍໃຫ້ຄົນ ອື່ນ ຫຼື ສິ່ງຂອງຕ່າງໆຈາກການຕັດໄມ້. ເຖິງແມ່ນວ່າຈະສາມາດຕັດຕົ້ນໄມ້ຢືນຕົ້ນໄດ້ຕາມເປົ້າປາຍກໍຕາມ, ແຕ່ຫາກມັນສ້າງຄວາມເສຍຫາຍໃຫ້ ແກ່ຄົນອື່ນ ກໍຈະບໍ່ສາມາດເວົ້າໄດ້ວ່າ ມັນເປັນການຕັດຕົ້ນໄມ້ “ທີ່ປອດໄພ”. ນອກຈາກນີ້, ຍັງມີສິ່ງທີ່ບໍ່ຄາດຄິດເຊິ່ງສາມາດເກີດຂຶ້ນໄດ້ຍ້ອນ ຄວາມຜິດພາດນຳອີກ. ຫາກເປັນດັ່ງນັ້ນແທ້ ກໍຍິ່ງຕ້ອງໄດ້ລະມັດລະວັງຫຼາຍຂຶ້ນ.

ເພາະມະນຸດຖືກຜູກມັດກັບຄວາມຜິດພາດ. ຄວາມຜິດພາດນີ້ ມີຕົ້ນເຫດມາຈາກ ການເບິ່ງບໍ່ລະອຽດຖີ່ຖ້ວນ, ການລືມ, ຄວາມເຂົ້າໃຈທີ່ຜິດ

ພາດ ແລະ ພາບລວງຕາ(ຄິດໄປເອງ) ຕ່າງໆເປັນຕົ້ນ. ເພື່ອຈະຫຼຸດຜ່ອນຄວາມຜິດພາດເຫຼົ່ານີ້, ວິທີການທີ່ຖືກນຳໃຊ້ເພື່ອສຸມໃສ່ການກວດກາ ແລະ ການກວດຄືນ ກ່ຽວກັບ ຈຸດສຳຄັນທີ່ຈະເກີດຄວາມສ່ຽງ. ສິ່ງນັ້ນ ແມ່ນ ເຕັກນິກໃນການຄຸ້ມຄອງຕົນເອງໂດຍການຊີ້ໄປພ້ອມເວົ້າໄປພ້ອມ ຢ່າງແນ່ນອນ. ຜູ້ອອກແຮງງານທີ່ມີທັກສະໃນການຄຸ້ມຄອງຕົນເອງ ແລະ ສາມາດຕັດສິນຄວາມສ່ຽງ ຈະສາມາດປະຕິບັດ “ວຽກງານການຕັດຕົ້ນໄມ້ທີ່ປອດໄພ”.

ໃນວຽກງານການຕັດໄມ້ ແມ່ນ ໃຫ້ປະສົມປະສານເຕັກນິກຕ່າງໆທີ່ຫຼາກຫຼາຍໄປພ້ອມໆກັບການຮັບປະກັນຄວາມປອດໄພ. ດັ່ງນັ້ນ, ຫາກເປັນຄົນທີ່ຢາກເຮັດວຽກຢູ່ເທິງພູ ແຕ່ບໍ່ມີການຮຽນຮູ້ເຕັກນິກຕ່າງໆ ແລະ ບໍ່ມີການພັດທະນາທັກສະເພື່ອໃຫ້ສາມາດນຳມາປະຕິບັດໄດ້, “ວຽກງານທີ່ປອດ” ກໍອາດຈະຍັງບໍ່ທັນສາມາດເຊື່ອຖືໄດ້. ດ້ວຍເຫດຜົນດັ່ງນີ້, ຈຶ່ງສືບຕໍ່ຮຽນຮູ້ນັບຕັ້ງແຕ່ການແປຮູບໄມ້ທີ່ຕັດ.

(1) ຂໍ້ຄວນລະວັງຂັ້ນພື້ນຖານ

ເພື່ອເປັນການປ້ອງກັນ ອຸບັດຕິເຫດ ຕ່າງ ເຊັ່ນ: ໄມ້ລົ້ມລົງ ໃນລະຫວ່າງວຽກງານການກຳຈັດງ່າໄມ້ ແມ່ນ ເປັນສິ່ງສຳຄັນທີ່ຕ້ອງກວດກາ ຄວາມໝັ້ນຄົງ ແລະ ຄວາມປອດໄພຂອງບ່ອນຢືນກ່ອນທີ່ ຈະລົງມືເຮັດວຽກ.

① ໃຫ້ແກ້ຈຸດສົງໄສຕ່າງໆກ່ອນທີ່ຈະເລີ່ມຕົ້ນການເຮັດວຽກ

ຫາກເປັນພະນັກງານໃໝ່ເຊິ່ງບໍ່ມີປະສົບການ, ການເຮັດວຽກ ບໍ່ທັນເປັນ ແລະ ໃຊ້ເວລາຫຼາຍ ຖືວ່າ ເປັນເລື່ອງປົກກະຕິ. ການຕັດສິນໃຈຂອງຕົນເອງ ແລະ ການໃຊ້ຈັກເລື່ອຍໄມ້ ອາດຈະສາ ມາດນຳໄປສູ່ ອຸບັດຕິເຫດ ໄດ້. ຫາກມີຈຸດສົງໄສໃດໆ, ໃຫ້ອ່ານຄູ່ມືຄຳແນະນຳກ່ຽວກັບ ການນຳໃຊ້ຈັກເລື່ອຍໄມ້ ຫຼື ຂໍໃຫ້ຄົນເຮັດວຽກທີ່ເປັນລຸ້ນອ້າຍແກ້ໄຂໃຫ້.

② ເຮັດໃຫ້ການໃຫ້ສັນຍານ ກາຍເປັນນິໄສຂອງຕົນເອງ

ໃນວຽກງານການແປຮູບຈະໄດ້ມີການແບ່ງພູຕາມຄວາມຮັບຜິດຊອບ (ອ້າງອີງໃນ ຮູບ 10-4 ດ້ານລຸ່ມນີ້), ເພື່ອຫຼີກລ່ຽງການເຮັດວຽກເທິງລຸ່ມ ແລະ ການຮັກສາໄລຍະຫ່າງລະຫວ່າງຜູ້ອອກແຮງງານ. ໃນເວລານີ້, ຈຳເປັນຕ້ອງຮັກສາໄລຍະຫ່າງຂອງການເຮັດວຽກທີ່ຈຳເປັນ ໄປພ້ອມໆກັບການຮັກສາໄລຍະຫ່າງໃຫ້ຢູ່ໃນໄລຍະທີ່ສາມາດພົວພັນກັນໄດ້. ນອກຈາກນີ້, ເຖິງຈະຕັ້ງໃຈຮັກສາໄລຍະຫ່າງໄວ້ແລ້ວ, ແຕ່ ໃນຂະນະທີ່ກຳລັງຕັ້ງໃຈເຮັດວຽກຢູ່ນັ້ນ, ເມື່ອຮູ້ໂຕອີກເທື່ອໜຶ່ງ ອາດຈະພົບວ່າມີຜູ້ອອກແຮງງານຄົນອື່ນມາຢູ່ດ້ານຂ້າງແລ້ວ.

ໃນເວລາແບບນີ້ ສິ່ງທີ່ສຳຄັນ ແມ່ນ “ການໃຫ້ສັນຍານ”. ໂດຍສະເພາະໃນເວລາເຮັດວຽກຕັດຕົ້ນໄມ້, ຈະຕ້ອງ “ໃຫ້ສັນຍານເບື້ອງຕົ້ນ” “ສັນຍານຫຼັກ” ແລະ “ສັນຍານສິ້ນສຸດ” ຢ່າງຖືກຕ້ອງ. ຫາກດຳເນີນຄວບຄູ່ໄປກັບ “ການຊີ້ໄປພ້ອມເວົ້າໄປພ້ອມນຳ” ກໍຍິ່ງຈະສາມາດ ຮັບປະກັນຄວາມປອດໄພໄດ້ຕື່ມອີກ.

ການຮ້ອງດ້ວຍສຽງດັງ ຫຼື ການໃຫ້ສັນຍານດ້ວຍໝາກວີດ ແລະ ການຊີ້ໄປນຳ ແລະ ເວົ້າໄປນຳ ຈະສາມາດສ້າງຄວາມລະມັດລະວັງໃຫ້ແກ່ ຜູ້ອອກແຮງງານຄົນອື່ນ ແລະ ເປັນການກະຕຸ້ນຄວາມລະມັດລະວັງໃຫ້ແກ່ຕົນເອງ ສະນັ້ນ ຈຶ່ງມີປະສິດຕິພາບເປັນຢ່າງຍິ່ງ.

③ ແນວໂນ້ມ ຂອງການເກີດອຸປະຕິເຫດແຮງງານທີ່ເກີດຈາກ ພະນັກງານໃໝ່

ອຸບັດເຫດແຮງງານໃນວຽກງານປ່າໄມ້ ມີຫຼາຍເຫດທີ່ເກີດຂຶ້ນກັບພະນັກງານໃໝ່. ເນື່ອງຈາກບໍ່ສາມາດເຮັດໃຫ້ຮອຍບາກຫຼັກທີ່ພຽງ ແລະ ຮອຍຕັດສະຫຼຽງມາຄົບກັນໄດ້ ສະນັ້ນ ທິດທາງໃນການລົ້ມຂອງຕົ້ນໄມ້ຈຶ່ງປ່ຽນໄປ ແລະ ກໍ່ໃຫ້ເກີດເຫດທີ່ຕົ້ນໄມ້ລົ້ມມາທັບຕົນເອງ ຕ່າງໆເປັນຕົ້ນ ເຊິ່ງເຫດແບບນີ້ ແມ່ນ ສາມາດພົບເຫັນໄດ້ຢ່າງຫຼວງຫຼາຍ. ອຸບັດຕິເຫດແຮງງານແບບນີ້ ສາມາດປ້ອງກັນລ່ວງໜ້າໄດ້ໂດຍ ການປະຕິບັດຕາມລະບຽບກົດໝາຍ ແລະ ປະຕິບັດຕາມຂັ້ນຕອນການເຮັດວຽກທີ່ຖືກຕ້ອງ ແລະ ປອດໄພ.

④ ກຽມພ້ອມສະພາບຂອງຮ່າງກາຍ

ໃນການເຮັດວຽກກ່ຽວກັບຈັກເລື່ອຍໄມ້ ແມ່ນ ຖືກກຳນົດໃຫ້ມີການຕັດສິນທີ່ຖືກຕ້ອງຕາມສະຖານະການສະເໝີ. ຫາກຮ່າງກາຍບໍ່ຢູ່ໃນ ສະພາບທີ່ດີທີ່ສຸດ ເຊັ່ນ: ການນອນບໍ່ພຽງພໍ ຫຼືອາການເມົາຄ້າງ ຄວາມສາມາດໃນການຕັດສິນກໍຈະມີຄວາມບົກຜ່ອງ. ຫາກຢູ່ໃນສະພາບ ແບບນັ້ນ ແມ່ນ ບໍ່ຄວນຕັດຕົ້ນໄມ້. ການດູແລສະພາບທາງດ້ານຮ່າງກາຍຢ່າງພຽງພໍ ຈະນຳໄປສູ່ການເຮັດວຽກທີ່ປອດໄພ. TBM (Toolbox Meeting) ໃນຕອນເຊົ້າ, ມາໃຫ້ຜູ້ອອກແຮງງານກວດກາສະພາບສຸຂະພາບ ຂອງກັນແລະກັນ ໃຫ້ເປັນລະບຽບ.

ນອກຈາກນີ້, ກ່ອນທີ່ຈະເລີ່ມຕົ້ນເຮັດວຽກ, ໃຫ້ອອກກຳລັງກາຍ ເພື່ອອົບອຸ່ນຮ່າງກາຍ ແລະ ເພື່ອປ້ອງກັນບໍ່ໃຫ້ໄດ້ຮັບບາດເຈັບ. ຢ່າລືມ ຮັກສາຮ່າງກາຍໃຫ້ຊຸ່ມຊື່ນ (ດື່ມນ້ຳ)

⑤ ປະຕິບັດຕາມລະບຽບກົດໝາຍ

ໃນວຽກງານການແປຮູບໄມ້, ຕ້ອງປະຕິບັດວຽກງານໄປພ້ອມໆກັບການປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂອງກັບການຕັດໄມ້, ລວມ ທັງການໃຫ້ສັນຍານ ແລະ ການອົບພະຍົກ ແລະ ການຈັດການໄມ້ທີ່ລົ້ມລົງແລ້ວຄ້າງຢູ່ຕົ້ນອື່ນຕ່າງໆເປັນຕົ້ນ.

ເວົ້າກັນວ່າ “ອຸບັດຕິເຫດແຮງງານ ເປັນສິ່ງທີ່ບໍ່ໄດ້ເກີດຂຶ້ນໂດຍບັງເອີນ,ແຕ່ມັນເປັນສິ່ງທີ່ເກີດຂຶ້ນຍ້ອນວ່າມັນຈະເກີດຂຶ້ນ” ການປະຕິບັດ ວຽກງານການຕັດໄມ້ຕ່າງໆທີ່ເໝາະສົມຕາມລະບຽບກົດໝາຍ ພາຍໃຕ້ການຈັດການຄຸ້ມຄອງຄວາມປອດໄພ ແລະ ສຸຂະອະນາໄມທີ່ພຽງພໍ ຈະຊ່ວຍປ້ອງກັນອຸປະຕິເຫດແຮງງານໄດ້ .

ຕົວຢ່າງເຫດ ອຸບັດຕິເຫດ ໃນວຽກງານການຕັດໄມ້

ເຫດ ອຸບັດຕິເຫດ 1

ຕົ້ນໄມ້ (ເສັ້ນຜ່າສູນກາງຂອງຮາກ 40 ຊັງຕີແມັດ, ຄວາມຍາວ: 20 ແມັດ) ຖືກຕັດແລ້ວລົ້ມໄປຕາມທິດທາງທີ່ກຳນົດ ແຕ່ມັນໄດ້ລົ້ມໄປພາດ ໃສ່ຕົ້ນກະເດົາຝຣັ່ງ 2 ຕົ້ນທີ່ມີເສັ້ນຜ່າສູນກາງ 13 ຊັງຕີແມັດເຊິ່ງແທກຈາກບ່ອນທີ່ມີຄວາມສູງຊ່ຳໜ້າເອິກຂອງຄົນເຮົາ ເຊິ່ງທັງສອງຕົ້ນນັ້ນ ແມ່ນ ຢູ່ດ້ານໜ້າຂອງຕົ້ນໄມ້ທີ່ລົ້ມປະມານ 10 ແມັດ, ແຕ່ຕົ້ນກະເດົາຝຣັ່ງບໍ່ໄດ້ລົ້ມ ເຊິ່ງມັນໄດ້ມີແຮງຕ້ານ ແລະ ເຮັດໃຫ້ສົ້ນໄມ້ເບື້ອງຮອຍຕັດ ເດ້ງຂຶ້ນໄປຟາດໃສ່ຜູ້ຖືກເຄາະຮ້າຍໂດຍກົງ (ຮູບ 10-2).

<ສາເຫດ>

① ບໍ່ໄດ້ມີການຈັດໄລຍະຫ່າງໃນການອົບພະຍົກທີ່ພຽງພໍ.

② ພື້ນທີ່ບ່ອນເຮັດວຽກ ເປັນພື້ນທີ່ທີ່ມີຄວາມລາດຊັນ ສະນັ້ນ ຈຶ່ງເຮັດໃຫ້ການອົບພະຍົກລ່າຊ້າ.

③ ມີຕົ້ນໄມ້ທີ່ມີເສັ້ນຜ່າສູນກາງຂະໜາດນ້ອຍ (ຕົ້ນກະເດົາຝຣັ່ງ) ຢູ່ທິດທາງທີ່ວາງແຜນປ້ຳຕົ້ນໄມ້ໃຫ້ລົ້ມລົງ.

<ມາດຕະການ>

① ກຽມເສັ້ນທາງການອົບພະຍົກຢ່າງແນ່ນອນ.

② ໄລຍະຫ່າງຂອງການຍົກຍ້າຍຕ້ອງ 3 ແມັດຂຶ້ນໄປ.

③ ໃນເວລາຕັດຕົ້ນໄມ້, ຫາກມີຕົ້ນໄມ້ທີ່ຄາດວ່າຈະສ້າງຄວາມສ່ຽງ ແລະ ອັນຕະລາຍ ເມື່ອມັນຖືກສຳພັດ ແມ່ນ ໃຫ້ດຳເນີນການຈັດການ ລ່ວງໜ້າຕາມສະຖານະການນັ້ນໆ.


ເຫດ ອຸບັດຕິເຫດ 2

ເພື່ອຫຼີກລ່ຽງການທຳລາຍຕົ້ນຣົໂນກິ, ຈຶ່ງກຳນົດທິດທາງຂອງມັນໄປທາງດ້ານລຸ່ມຂອງຄ້ອຍ ແລ້ວປ້ຳມັນໃຫ້ລົ້ມລົງ. ເຊືອກສະລິງຖືກມັດຢູ່ ລຳຕົ້ນຂອງຕົ້ນໄມ້ເປົ້າໝາຍຢູ່ຕຳແໜ່ງທີ່ສູງຈາກພື້ນດິນ 5 ແມັດ, ແລ້ວເອົາເຊືອກສະລິງແລ່ນຜ່ານໝາກລ້ອກອັນທີ່ຕິດໃສ່ຕົ້ນໄມ້ທີ່ປ້ຳລົງມາ ເຊິ່ງມັນຢູ່ໃນທິດທາງທີ່ຈະປ້ຳໃຫ້ລົ້ມລົງຂອງຕົ້ນໄມ້ເປົ້າໝາຍ ແລ້ວກຳນຳໄປຕິດເຂົ້າກັບອຸປະກອນລາກຈູງ (ໝາກລ້ອກສຳລັບລາກຈູງ) ເຊິ່ງ ຕິດຕັ້ງຢູ່ເທິງຕໍ່ໄມ້ຂອງຕົ້ນແປກທີ່ຢູ່ດ້ານຂ້າງຂອງໝາກລ້ອກ.


ຫຼັງຈາກນັ້ນ, ຜູ້ອອກແຮງງານ A ໄດ້ເລີ່ມຕັດຕົ້ນໄມ້, ຜູ້ໄດ້ຮັບເຄາະຮ້າຍ B ກໍດຶງຕົ້ນໄມ້ທີ່ຈະຕັດດ້ວຍອຸປະກອນລາກຈູງທີ່ຕິດຢູ່ກັບຕໍ່ໄມ້. ເມື່ອ ຕົ້ນໄມ້ທີ່ປ້ຳເລີ່ມລົ້ມລົງມາ, ຜູ້ອອກແຮງງານ A ເຊິ່ງກຳລັງເຮັດ ວຽກຢູ່ ໄດ້ສົ່ງສັນຍານດ້ວຍສຽງດັງ ໃຫ້ ຜູ້ຖືກເຄາະຮ້າຍ B ເພື່ອເຄື່ອນຍ້າຍ, ແຕ່ຜູ້ຖືກເຄາະຮ້າຍ B ຊ້ຳພັດຖືກດຶງດູດຄວາມສົນໃຈຈາກຕົ້ນແປກທີ່ຢູ່ໃກ້ໆ ຈຶ່ງບໍ່ໄດ້ສັງເກດເຫັນສັນຍານ, ຜູ້ອອກແຮງງານ A ໄດ້ຕັດຕົ້ນໄມ້ ໃຫ້ລົ້ມລົງ ໂດຍບໍ່ໄດ້ຢືນຢັນການອົບພະຍົກ.

ເນື່ອງຈາກຕົ້ນໄມ້ທີ່ຖືກຕັດໃຫ້ລົ້ມລົງທັບກັບຕົ້ນໄມ້ຫຼາຍຕົ້ນທີ່ລົ້ມລົງແລ້ວ, ເຊິ່ງການກະທົບນັ້ນເຮັດໃຫ້ຕົ້ນໄມ້ທີ່ຕັດແລ້ວດີດກັບຂຶ້ນໄປ ແລະ ໜຶ່ງໃນຕົ້ນໄມ້ (ຕົ້ນໄມ້ທີ່ມີເສັ້ນຜ່ານສູນກາງຂອງລຳຕົ້ນ 40 ຊັງຕີແມັດ ເຊິ່ງແທກຈາກຄວາມສູງທີ່ສູງຊ່ຳໜ້າເອິກຂອງຄົນເຮົາ) ໄດ້ໄປຕຳໃສ່ຜູ້ ໄດ້ຮັບເຄາະຮ້າຍ B ແລະ ເຮັດໃຫ້ລາວເສຍຊີວິດ (ຮູບ 10-3).


<ສາເຫດ>



ຮູບ 10-2 ຫົວຂອງຕົ້ນໄມ້ປ້ຳລົງມາ ໄດ້ດີດຂຶ້ນ ແລ້ວກະທົບຜູ້ໄດ້ຮັບເຄາະຮ້າຍໂດຍກົງ



ຮູບ 10-3 ຕົ້ນໄມ້ທີ່ປ້ຳລົງມາ ໄດ້ໄປຕຳກັບຕົ້ນໄມ້ທີ່ລົ້ມມາກ່ອນນັ້ນແລ້ວ ເຊິ່ງມີຕົ້ນໄມ້ 1 ຕົ້ນ ໄດ້ດີດຂຶ້ນແລ້ວກະທົບໃສ່ຜູ້ໄດ້ຮັບເຄາະຮ້າຍ



ຮູບ 10-4 ຫຼັກການທົ່ວໄປ ແມ່ນ ການແບ່ງພູໃນໃນລັກສະນະລ່ວງຕັ້ງ ຈາກຮ່ອມພູ ໄປຫາ ສັນພູທີ່ມີທັດສະນະວິໄສທີ່ບໍ່ດີ. ສິ່ງນີ້ ແມ່ນ ເພື່ອປ້ອງການເຮັດວຽກເທິງລຸ່ມ. ຫຼີກລ້ຽງ ການແບ່ງພູຕາມຮ່ອມພູແຄບໆ ຫຼື ເນີນພູທີ່ມີທັດທະສະວິໄສບໍ່ດີ.

① ເປັນວຽກງານທີ່ດຳເນີນໄປໂດຍການຕິດຕັ້ງອຸປະກອນລາກລູງຢູ່ໃກ້ກັບພື້ນທີ່ບ່ອນທີ່ຕົ້ນໄມ້ຖືກຕັດລົງມາໃຫ້ລົ້ມກະຈັດກະຈາຍ.
② ສະຖານທີ່ອົບພະຍົກທີ່ປອດໄພບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າໃນລະຫວ່າງການປ້ຳຕົ້ນໄມ້.
③ ຄົນທີ່ປ້ຳຕົ້ນໄມ້ ໄດ້ລົງມືປ້ຳຕົ້ນໄມ້ ໂດຍບໍ່ໄດ້ຢືນຢັນການອົບພະຍົກຂອງຜູ້ອອກແຮງງານຄົນອື່ນ.

<ມາດຕະການ>

① ກ່ອນທີ່ຈະເລີ່ມປະຕິບັດວຽກ ແມ່ນ ໃຫ້ປະຊຸມກັນຢ່າງຄັກແນ່ກ່ຽວກັບວິທີການປ້ຳຕົ້ນໄມ້, ສະຖານທີ່ອົບພະຍົກ ແລະ ການໃຫ້ສັນຍານ ຕ່າງໆເປັນຕົ້ນ.
② ໃນເວລານຳໃຊ້ອຸປະກອນລາກລູງ, ຫ້າມຕິດຕັ້ງຢູ່ໃນທິດທາງ ການລົ້ມຂອງຕົ້ນໄມ້ ຫຼື ໃນ ບໍລິເວນໃກ້ຄຽງ ແລະ ໃນສະຖານທີ່ ທີ່ມີອັດຖຸ ຟື້ງມາໃສ່ຍ້ອນການຕຳກັບຕົ້ນໄມ້ທີ່ລົ້ມ ແລະ ພື້ນທີ່ທີ່ຄາດວ່າຈະມີຄວາມສ່ຽງ ແລະ ອັນຕະລາຍ ຈາກການຕົກລົງມາໃສ່ ແລະ ການມີ້ນ ລົ້ມ ຕ່າງໆເປັນຕົ້ນ.
③ ຕ້ອງກວດກາໃຫ້ແນ່ໃຈວ່າຜູ້ຄົນທີ່ຢູ່ໃນບໍລິເວນໃກ້ຄຽງໄດ້ອົບພະຍົບໄປສະຖານທີ່ປອດໄພແລ້ວ ຈຶ່ງລົງມືປ້ຳຕົ້ນໄມ້.

ການສຳຫຼວດພື້ນທີ່ຕັດໄມ້ເບື້ອງຕົ້ນ

ໃນວຽກງານປ່າໄມ້ ບໍ່ວ່າຈະເປັນໜ້າວຽກໃດກໍຕາມ ການກະກຽມກ່ອນທີ່ຈະເລີ່ມຕົ້ນເຮັດວຽກ ຖືວ່າເປັນສິ່ງທີ່ສຳຄັນ. ໂດຍສະເພາະ ໃນເວລາ ແປຮູບໄມ້ ສິ່ງສຳຄັນ ແມ່ນ ການລາດຕະເວນລ່ວງໜ້າ (ສຳລວດ) ເພື່ອທຳຄວາມເຂົ້າໃຈກ່ຽວກັບສະພາບໂດຍລວມ ເຊັ່ນ: ສະພາບພື້ນທີ່ປ່າ (ອາ ຍຸ, ປະເພດຕົ້ນໄມ້ ຕ່າງໆ) ແລະ ພູມສັນຖານຂອງປະເທດ ຕ່າງໆເປັນຕົ້ນ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງປອດໄພຖືວ່າເປັນສິ່ງສຳຄັນຢ່າງຍິ່ງ.

ໃນເວລານີ້, ຈຳເປັນກວດກາບໍ່ພຽງແຕ່ລາຍລະອຽດຂອງວຽກງານເຊັ່ນ: ການຕັດໃຫ້ກ້ຽງ ແລະ ການຕັດຕອນ (ການຕັດຕອນເພື່ອນຳໃຊ້ ບາງສ່ວນ ແລະ ການຕັດຕອນເພື່ອບົວລະບັດ), ບໍ່ພຽງແຕ່ວິທີການປ້ຳຕົ້ນໄມ້ໂດຍອີງຕາມໜ້າວຽກ, ແຕ່ຍັງເປັນການກວດກາລ່ວງໜ້າກ່ຽວ ກັບວິທີການເກັບກ່ຽວໄມ້ນຳອີກ (ຮູບ 10-4).

ຫຼັງຈາກນັ້ນ ສິ່ງສຳຄັນ ແມ່ນ ໃຫ້ກະກຽມວຽກງານ ແລະ ປະຊຸມກັນລະຫວ່າງຜູ້ອອກແຮງງານ ຕາມຜົນການສຳຫຼວດເຫຼົ່ານັ້ນ ເພື່ອສ້າງ ແຜນການເຮັດວຽກ.

①ເງື່ອນໄຂທາງພູມສັນຖານ (ລວມທັງເປັນພື້ນທີ່ລາດຊັນບໍ່, ເປັນທົ່ງພຽງບໍ່ ຕ່າງໆເປັນຕົ້ນ (ຄວາມຊັນຂອງທາງລາດຊັນ, ທິດທາງຂອງພື້ນທີ່ລາດຊັນ (ທິດທາງພາກເໜືອ, ທິດທາງພາກໃຕ້ ຕ່າງໆເປັນຕົ້ນ))).

② ເງື່ອນໄຂທາງທໍລະນີສາດ ສະພາບການລະບາຍນ້ ຳ (ລວມທັງເປັນພື້ນທີ່ທີ່ມີຫີນບໍ່, ດິນເຈື່ອນບໍ່, ປະລິມານຫີນເຈື່ອນ ຫຼື ຫີນໄຫຼ ແລະ ການລະບາຍນ້ ຳ)

③ ສະພາບການຢູ່ໃກ້ກັບວັດຖຸທີ່ຝັງ - ລະບົບສາຍລອຍຟ້າຕ່າງໆ

④ ສະພາບຂອງຕົ້ນໄມ້ຢືນຕົ້ນເຊິ່ງເປັນເປົ້າໝາຍຂອງການປ້ ຳ (ລວມທັງ ປະເພດ, ອາຍຸ, ຂະໜາດເສັ້ນຜ່ ຳສູນກາງຄວາມສູງລະດັບໜ້ ຳເອິກ, ສະພາບຄວາມສູງ, ການປ່ຽນແປງຂອງຂະໜາດຕົ້ນໄມ້ ແລະ ສະພາບຄວາມໜາແໜ້ນຂອງຕົ້ນໄມ້ ທີ່ເປັນເປົ້າໝາຍທີ່ຈະປ້ ຳ)

⑤ ສະພາບຂອງເຄືອໄມ້ ແລະ ງ່ ຳໄມ້

⑥ ສະພາບຂອງຕົ້ນໄມ້ທີ່ຕາຍ ແລະ ຕົ້ນໄມ້ທີ່ລົ້ມຍ້ອນລົມ

⑦ ສະພາບຂອງພືດພັນຊັ້ນລຸ່ມ (ລວມທັງຄວາມໜາແໜ້ນຂອງພຸ່ມໄມ້ ແລະ ຫຍ້ ຳ)

⑧ ເສັ້ນທາງການແລ່ນຂອງລົດສຸກເສີນ

⑨ ຂອບເຂດທີ່ສາມາດສື່ສານຜ່ານໂທລະສັບມືຖືຕ່າງໆ ຫຼື ການສື່ສານໄຮ້ສາຍ

ເອກະສານ: “ບົດແນະນຳຄວາມປອດໄພກ່ຽວກັບການຕັດໄມ້ດ້ວຍຈັກຕັດຫຍ້ ຳ” ວັນທີ 31/1/2020 ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຕົວຢ່ າງ ການສ້ າງໜັງສືແຜນການເຮັດວຽກ ແລະ ການຕື່ ມຂໍ້ ມູນ

ຫຼັງຈາກສຳເລັດການສຳຫຼວດເບື້ ອງຕົ້ ນພື້ ນທີ່ເຮັດວຽກແລ້ ວ, ຂັ້ ນຕອນຕໍ່ ໄປ ແມ່ ນ ການສ້ າງແຜນການເຮັດວຽກ. ການສ້ າງແຜນການເຮັດວຽກ ເປັ ນສິ່ ງທີ່ ສ້ າງເພື່ ອໃຫ້ ຜູ້ ປະກອບການ, ຜູ້ ຈັ ດການພື ້ ນທີ່ ປ່ າໄມ້, ທຸ ກຄົ ນທີ່ ກ່ ຽວຂ້ ອງກັ ບສະຖານທີ່ ເຮັ ດວຽກ ເຊັ ່ ນ: ຜູ້ ອອກແຮງງານ ເປັ ນຕົ ້ ນ ໃຫ້ ທຸ ກຄົ ນເຂົ ້ າໃຈການເຄື ່ ອນໄຫວຂອງກັ ນແລະກັ ນ ແລະ ເພື ່ ອໃຫ້ ມີ ຄວາມຮັ ບຮູ ້ ຮ່ ວມກ່ ຽວກັ ບການເຮັ ດວຽກທີ ່ ປອດໄພ.

ສະຖານທີ ່ ເຮັ ດວຽກຂອງປ່ າໄມ້ ປະກອບດ້ ວຍຂະບວນການເຮັ ດວຽກທີ ່ ຫຼ ວກຫຼ ວຍ, ນັ ບຕັ ້ ງແຕ່ ການຕັ ດໄມ້ ຈົ ນໄປເຖິ ງ ການເກັ ບກ່ ຽວໄມ້, ການແປຮູ ບໄມ້ ແລະ ການຂົ ນສົ ່ ງ. ດ້ ວຍເຫດນີ ້ , ຈຶ ່ ງຕ້ ອງສ້ າງແຜນວຽກທີ ່ ກວມເອົ ້ າບໍ ່ ພຽງແຕ່ ຂະບວນການຕັ ດໄມ້ ເທົ ່ ານັ ້ ນ, ແຕ່ ຍັ ງກວມເອົ ້ າຂະບວນການທັ ງໝົ ດ ເພື ່ ອໃຫ້ ຜູ້ ອອກແຮງງານທຸ ກຄົ ນເຂົ ້ າໃຈກ່ ຽວກັ ບວຽກງານຂອງແຕ່ ລະຄົ ນ.

ຈະແນະນຳກ່ ຽວກັ ບຕົ ວຢ່ າງຂອງເອກະສານແຜນການເຮັ ດວຽກ (ຮູ ບ 10-5, ຮູ ບ 10-6).

ແຜນກ່ຽວກັບວຽກງານການຕັດໄມ້ - ການແປຮູບໄມ້ດ້ວຍຈັກເລື່ອຍໄມ້

(ສາມາດໃຊ້ສຳລັບການສຳຫຼວດ - ບັນທຶກ)

ການສຳຫຼວດ - ບັນທຶກ: ປີ Reiwa ທີ ເດືອນ ວັນທີ

ສ້າງຂຶ້ນ ໃນ: ປີ Reiwa ທີ ເດືອນ ວັນທີ

ສະບັບປັບປຸງຄັ້ງທີ : ປີ Reiwa ທີ ເດືອນ ວັນທີ

ຊື່ທຸລະກິດ	(ເຄື່ອງໝາຍ)
ຊື່ນາມສະກຸນ ຕຳແໜ່ງຂອງຜູ້ສຳຫຼວດ - ບັນທຶກ	
ຊື່ນາມສະກຸນ ຕຳແໜ່ງຂອງຜູ້ສ້າງແຜນການ	

ຊື່ສະຖານທີ່ທຸລະກິດ (ບ່ອນເຮັດວຽກ - ເຂດນິຄົມ) ສະຖານທີ່ເຮັດວຽກ (ທີມງານດູແລຮັກສາປ່າໄມ້ຕ່າງໆ) ຊື່ທີມງານເຮັດວຽກ		
ຊື່ ແລະ ຂໍ້ມູນຕິດຕໍ່ຂອງຜູ້ຄຸ້ມຄອງວຽກງານ		
ໄລຍະເວລາເຮັດວຽກ		ຈາກ ປີ Reiwa ທີ ເດືອນ ວັນທີ ~ ເຖິງ ປີ Reiwa ທີ ເດືອນ ວັນທີ
ບໍ່ວ່າຈະເປັນພື້ນທີ່ໃດ	① ສະພາບທາງພູມສາດ	(ຄວາມລາດຊັນ) ພື້ນທີ່ຮາບພຽງ ພື້ນທີ່ລາດຊັນ ພື້ນທີ່ຕ່າງລະດັບ (ກໍລະນີເປັນພື້ນທີ່ລາດຊັນ) ລາດຊັນມຸມສູງ ປານກາງ ເລັກໜ້ອຍ (ຄວາມລາດຊັນສະເລ່ຍ °)
		(ທິດທາງຂອງພື້ນທີ່ລາດຊັນ) ແສງແດດດີ (ປິ່ນໄປທາງທິດໃຕ້ຕ່າງໆ) ນອກຈາກນັ້ນ (ປິ່ນໄປທາງທິດເໜືອຕ່າງໆ) (*ຈຸດທີ່ຕ້ອງເອົາໃຈໃສ່)
	② ເງື່ອນໄຂທາງທໍລະນີສາດ - ການລະບາຍນ້ຳ	(ພື້ນທີ່ຫີນ - ພື້ນທີ່ດິນເຈື່ອນ) ໃຫຍ່ ກາງ ນ້ອຍ (*ຈຸດທີ່ຕ້ອງເອົາໃຈໃສ່)
		(ຫີນເຈື່ອນ - ຫີນໄຫຼ) ຫຼາຍ ປານກາງ (*ຈຸດທີ່ຕ້ອງເອົາໃຈໃສ່)
		(ການລະບາຍນ້ຳ) ດີ ປານກາງ ບໍ່ດີ (*ຈຸດທີ່ຕ້ອງເອົາໃຈໃສ່)
	③ ສະພາບການຢູ່ໃກ້ກັບອຸປະກອນໃຕ້ດິນ - ລະບົບສາຍໄຟເໜືອຫົວ	(ອຸປະກອນໃຕ້ດິນ) ບໍ່ມີ ມີ ( ) (*ຈຸດທີ່ຕ້ອງເອົາໃຈໃສ່)
		(ລະບົບສາຍໄຟເໜືອຫົວ) ບໍ່ມີ ມີ ( ) (*ຈຸດທີ່ຕ້ອງເອົາໃຈໃສ່)
	④ ສະພາບຂອງຕົ້ນໄມ້ທີ່ຈະປ້ຳ	(ປະເພດຕົ້ນໄມ້) ຊຶງ ຮີໂນກິ ອື່ນໆ ( ) (ອາຍຸຂອງຕົ້ນໄມ້) ( ) ສ່ວນຫຼາຍ ແມ່ນ ອາຍຸ ປີ (ຄວາມໃຫຍ່) ເສັ້ນຜ່າສູນກາງຄວາມສູງຈໍ່າໜ້າເອິກ (ປະມານ cm) ຄວາມສູງຂອງຕົ້ນໄມ້ (ປະມານ m) (ການປ່ຽນແປງຂອງຄວາມໃຫຍ່) ໃຫຍ່ ປານກາງ ໜ້ອຍ (*ຈຸດທີ່ຕ້ອງເອົາໃຈໃສ່) (ຄວາມໜາແໜ້ນຂອງທົ່ງໄມ້ຢືນຕົ້ນ) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑤ ສະພາບເຄືອໄມ້ ແລະ ງ່າໄມ້	(ເຄືອໄມ້) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່) (ງ່າໄມ້) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑥ ສະພາບຂອງຕົ້ນໄມ້ທີ່ແຫ່ວແຫ້ງ	(ຕົ້ນໄມ້ທີ່ແຫ່ວແຫ້ງ) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່) (ຕົ້ນໄມ້ທີ່ລົ້ມຍ້ອນລົມ) ບໍ່ມີ ມີ (*ຈຸດທີ່ຕ້ອງເອົາໃຈໃສ່)
	⑦ ສະພາບພືດພັນຊັ້ນລຸ່ມ	(ໄມ້ພຸ່ມ) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່) (ຫຍ້າ) ໜາແໜ້ນ ປານກາງ ບາງ (*ຈຸດທີ່ຕ້ອງເອົາໃຈໃສ່)
ບໍ່ວ່າຈະເປັນພື້ນທີ່ໃດ	⑧ ວິທີການເຮັດວຽກ	ການນຳໃຊ້ຈັກເລື່ອຍໄມ້ ເຄື່ອງຈັກຕັດໄມ້ແບບໃຊ້ຍານພາຫະນະ ອື່ນໆ ( )
	⑨ ວິທີການປ້ຳຕົ້ນໄມ້	ການຕັດຕອນ (ຮູບແບບຄຸນນະພາບ ເປັນແຖວຍາວ) ການຕັດໃຫ້ກ້ຽງ ການເລືອກຕັດ ການຕັດຖິ້ມ ອື່ນໆ ( )
	⑩ ຂັ້ນຕອນການປ້ຳຕົ້ນໄມ້	ຈາກສັນພູໄປຫາຮ່ອມພູ ຈາກຮ່ອມພູໄປຫາສັນພູ ອື່ນໆ ( )
	⑪ ວິທີຈັດການຕົ້ນໄມ້ທີ່ລົ້ມລົງມາຄ້າງຢູ່ຕົ້ນອື່ນ	ເຄື່ອງຈັກຕັດໄມ້ແບບໃຊ້ຍານພາຫະນະ ຄັນໂຍກ (Felling lever) ເຊືອກ ອື່ນໆ ( )
	⑫ ປ້າຍສະຖານທີ່ອົບພະຍົກ /ເຄື່ອນຍ້າຍ	ເຄື່ອງໝາຍປະເພດເຊືອກ ອື່ນໆ ( )
	⑬ ປ້າຍຫ້າມເຂົ້າ	ປ້າຍບອກທາງ ການກຳນົດຂອບເຂດ ຈວຍສີ ອື່ນໆ ( )
	⑭ ວິທີການໃຫ້ສັນຍານ	ໝາກວີດ ວິທະຍຸສື່ສານ ທຸງ ອື່ນໆ ( )
	⑮ ມາດຕະການປ້ອງກັນຕົ້ນໄມ້ຕ່າງໆ ທີ່ປ້ຳລົງມາບໍ່ໃຫ້ກີ້ງລົງ - ສະໄລ້ລົງ	ເສົາເຂັມ ໄມ້ຄ້ຳ ຫ້າມເຂົ້າໄປດ້ານລຸ່ມ ອື່ນໆ ( )
	⑯ ມາດຕະການຄວາມປອດໄພ ອື່ນໆ	

ຮູບ 10-5 ຕົວຢ່າງຂອງແຜນວຽກ ①

(ເອກະສານຄັດຕິດ 1)

ແຜນວາດໂດຍລວມຂອງສະຖານທີ່ເຮັດວຽກ ແລະ ວິທີການເຮັດວຽກ

* ຕ້ອງສາມາດຕື່ມຂໍ້ມູນກ່ຽວກັບ ເສັ້ນທາງແລ່ນລົດສຸກເສີນ, ຂອບເຂດທີ່ສາມາດຕິດຕໍ່ສື່ສານດ້ວຍໂທລະສັບມືຖື ຕ່າງໆ ແລະ ວິທະຍຸສື່ສານ ຕ່າງໆເປັນຕົ້ນ. ໃນກໍລະນີ ທີ່ໄດ້ມີການສ້າງແຜນວາດທີ່ສະແດງໃຫ້ເຫັນເຖິງສະ ຖານທີ່ເຮັດວຽກ (ແຜນວາດກ່ຽວກັບວຽກງານ, ແຜນວາດກ່ຽວກັບປ່າໄມ້, ວາງແຜນ ຕາມເນື້ອທີ່ຕົວຈິງ), ແມ່ນ ສາມາດຂ້າມຂັ້ນຕອນໃນການຕື່ມຂໍ້ມູນທີ່ຄັດຕິດມາກັບແບບຟອມນີ້ໄດ້.

ຊື່ຜູ້ອອກແຮງງານ	ມີ/ບໍ່ ການນຳໃຊ້ຈັກເລື່ອຍໄມ້ໄຟຟ້າ	ຍີ່ຫໍ້ຈັກເລື່ອຍໄມ້	ຈຳນວນເຄື່ອງຈັກ
	ມີ ບໍ່ມີ		
	ມີ ບໍ່ມີ		
	ມີ ບໍ່ມີ		
	ມີ ບໍ່ມີ		

ບຸກຄົນທີ່ຕິດຕໍ່ສຸກເສີນ

⑰ ເສັ້ນທາງແລ່ນລົດສຸກເສີນ, ເບີໂທຕິດຕໍ່ສຸກເສີນ	ທີມງານດູແລຮັກສາປ່າໄມ້ ທີມນ້ອຍ	GPS ເສັ້ນຂະໜານ : ເສັ້ນແວ່ງ:
	ພະແນກດັບເພີງ (ໂທລະສັບ), ໂຮງໝໍ (ໂທລະສັບ)	
	ສະຖານທີ່ລໍຖ້າລົດສຸກເສີນ (ຊື່ - ຕຳແໜ່ງຂອງເສັ້ນທາງໃນປ່າໄມ້ຕ່າງໆ)	
	ບໍລິສັດ (ຫ້ອງການ○○) (ໂທລະສັບ)	
⑱ ຂອບເຂດທີ່ສາມາດຕິດຕໍ່ສື່ສານດ້ວຍ ໂທລະສັບມືຖື ຕ່າງໆ ແລະ ວິທະຍຸສື່ສານ	ຊື່ - ຕຳແໜ່ງຂອງເສັ້ນທາງໃນປ່າໄມ້ຕ່າງໆ	
⑲ ໝາຍເຫດ		

(*1) ສຳລັບ ແຕ່ລະຖັນ, ສາມາດເລືອກຄຳຕອບທີ່ສອດຄ່ອງ ໄດ້ຫຼາຍຂໍ້ ໂດຍການໝາຍດ້ວຍເຄື່ອງໝາຍ ○, ໂດຍອີງຕາມສະພາບຕົວຈິງຂອງວຽກງານ.
(*2) ເມື່ອຕື່ມຂໍ້ມູນ, ຕ້ອງຕື່ມເນື້ອໃນທີ່ສອດຄ່ອງກັບສະພາບຕົວຈິງຂອງແຜນການ. ສາມາດປ່ຽນແປງຕ່າງໆ ກ່ຽວກັບ ຊື່ຂອງຫົວຂໍ້, ເລື່ອງທີ່ຈະຂຽນຕາມຄວາມຈຳເປັນ. ນອກຈາກນັ້ນ, ຕ້ອງກວດເບິ່ງເພີ່ມຕື່ມ ກ່ຽວກັບ “ຕົວຢ່າງການຕື່ມຂໍ້ມູນ” ແລະ “ເລື່ອງຕ່າງໆທີ່ຕ້ອງໄດ້ເອົາໃຈໃສ່ໃນການຕື່ມຂໍ້ມູນ” ທີ່ຢູ່ດ້ານຫຼັງ.

ຮູບ 10-5 ຕົວຢ່າງຂອງແຜນວຽກ ②

ແຫຼ່ງຂໍ້ມູນ: “ບົດແນະນຳຄວາມປອດໄພຂອງການຕັດໄມ້ດ້ວຍສາຍໂສ້” ວັນທີ 31/1/2020 ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ

ຮູບແບບ 4-1 ເອກະສານແຜນວຽກກົນຈັກ (ການຕັດໄມ້ ຕ່າງໆເປັນຕົ້ນ) (ຕົວຢ່າງການຂຽນອະທິບາຍ)

[ການຕັດໄມ້, ການຕັດປ້ຳຕົ້ນໄມ້, ການຮວບຮວມໄມ້, ການແປຮູບໄມ້, ວຽກງານການກອງໄມ້ທ່ອນ/ທ້ອນໂຮມໄມ້ທ່ອນ, ການຂົນສົ່ງ ໄມ້]

ວັນທີເດືອນປີສ້າງ ປີ Heisei ທີ 25 ເດືອນ 5 ວັນທີ 5

ວັນທີເດືອນປີ ປັບປຸງຄັ້ງທີ ປີ Heisei ທີ ເດືອນ ວັນທີ

ຊື່ທຸລະກິດ	ສະມາຄົມສະຫວັດດີການ ແລະ ປ່າໄມ້ (ເຊັນ/ປະທັບ)
ຜູ້ສ້າງແຜນການ	ທ່ານທາໂຣ ໂມລິນ ຫົວໜ້າຂະແໜງຄຸ້ມຄອງປ່າໄມ້

ຊື່ເອີ້ນສະໜາມວຽກ (ສະໜາມວຽກ - ນິຄົມ).	ປ່າ Satoyama Danchi ເປັນເຈົ້າຂອງໂດຍທ່ານ Sugiyama Matsunosuke
ສະຖານທີ່ເຮັດວຽກ (ທີມຮັກສາປ່າໄມ້ ຕ່າງໆເປັນຕົ້ນ)	○○○gun,○○shi, ○○machi 77 Hayashi Banro ທີມຮອງ
ຊື່ຜູ້ຈັດການສະໜາມວຽກ	ໂມຣິຣິງທາໂລ້ ຫົວໜ້າຂະແໜງຮັກສາປ່າໄມ້ ເບີໂທ: 030-666-000 ໂທລະສັບມືຖື: 0801-222-111
ໄລຍະເວລາເຮັດວຽກ	ແຕ່ວັນທີ 3 ເດືອນ 7 ປີ 2012 ຫາ ວັນທີ 10 ເດືອນ 10 ປີ 2012


ການຈັດປະເພດ		ຊື່ເຄື່ອງຈັກ	ຄວາມສາມາດ	ຈຳນວນເຄື່ອງຈັກ	ເຈົ້າຂອງ	ຄົນຂັບ
ອຸປະກອນທີ່ໃຊ້	ການຕັດໄມ້ - ການແປຮູບໄມ້	ເຄື່ອງເກັບກ່ຽວ (Komatsu) Keto 500	PC160 ϕ50	1	ບໍລິສັດເປັນເຈົ້າຂອງ	Ichiro Matsuyama
	ການປ້ຳຕົ້ນໄມ້ - ການຮວບຮວມໄມ້	ຫົວຄີບ (Sumitomo) Iwafuji	SH135 GS90LG	1	ບໍລິສັດເປັນເຈົ້າຂອງ	Jiro Sakurayama
	ໄມ້ແປຮູບ	ແປຮູບ (Iwafuji) CT500	GP532	1	ບໍລິສັດເປັນເຈົ້າຂອງ	Saburo Sasayama
	ການຮວມຮວມໄມ້ - ການຂົນອອກ	ເກັບໄມ້ (Morooka) ST600	ຜະລິດຕະພັນ 6 t	1	ບໍລິສັດເປັນເຈົ້າຂອງ	Shiro Iwayama
	ເຮັດວຽກງານການກອງໄມ້ທ່ອນ	ຫົວຄີບ (ການສ້າງປະໂຫຍດ - ຮ່ວມກັບການການຮວບຮວມ)	SH135 GS90LG	1	ບໍລິສັດເປັນເຈົ້າຂອງ	Jiro Sakurayama

ການຈັດປະຕິບັດ	ການເລືອກຕັ້ງ - ການສະເໜີຊື່	ຊື່ຜູ້ຮັບຜິດຊອບວຽກ	Jiro Sakurayama		
		ຊື່ຜູ້ນຳທາງ	Saburo Yamakawa		
	ວິທີການໃຫ້ສັນຍານ	ມື -ໝາກວີດ- ທຸງ - ວິທະຍຸ, ແລະອື່ນໆ ( )			
	ມາດຕະການຫ້າມເຂົ້າເຂດ ຄວາມສ່ຽງ ແລະ ອັນຕະລາຍ	ຍາມ -ສິ່ງກີດຂວາງ- ເຊືອກ -ຈວຍສີ- ອຸປະກອນເຕືອນໄພ			
	ພູມສັນຖານ	ທົ່ງພຽງ- ທາງລາດຊັນ (10°) - ພື້ນຕ່າງລະດັບ - ຂອບເຂດໜ້າວຽກ (ກວ້າງ -ແຄບ)			
	ທໍລະນີສາດ	ຫີນແຂງ, ຫີນອ່ອນ, ຫີນ,ກ້ອນຫີນ, ດິນ, ດິນໜຽວ, ດິນດາກ			
ການປະເມີນຄວາມສ່ຽງ	ການຢູ່ໃກ້ກັບອຸປະກອນໃຕ້ດິນ - ສາຍໄຟລອຍຟ້າ ແລະ ວິທີການປ້ອງກັນ	ວັດຖຸໃຕ້ດິນ (ມີ m • ບໍ່ມີ) / ສາຍໄຟລອຍຟ້າ (ມີ ໄລຍະຫ່າງ m •ບໍ່ມີ) ວິທີການປ້ອງກັນ ( )			
	ພື້ນທີ່ມີຄວາມສ່ຽງ ແລະ ອັນຕະລາຍ ຈາກການປິ້ນຂອງເຄື່ອງຈັກ ແລະ ມາດຕະການປ້ອງກັນການປິ້ນ	ມີ • ບໍ່ມີ ມາດຕະການປ້ອງກັນ (ການຕິດຕັ້ງເຊືອກຢູ່ໃນຈຸດຄວາມສ່ຽງ ແລະ ອັນຕະລາຍ ຢູ່ເບື້ອງຮ່ອມພູທີ່ເປັນຫົນທາງໃນການເຮັດວຽກ ແລະ ຕັ້ງກຳແພງດິນ (0,5 m) ຢູ່ເບື້ອງຮ່ອມພູຂອງຫົນທາງໃນການເຮັດວຽກ)			
	ລະບົບການເຮັດວຽກ (ຕື່ມຂໍ້ມູນສັ້ນໆ)	ໄມ້ທີ່ເກັບກ່ຽວ → ຫົວຄີບ (ໝາກລໍ້) ຮວບຮວມໄມ້ທັງໝົດ → ຂະບວນການແປຮູບໄມ້ → ການເກັບໄມ້ → ຄີບໄມ້ມາກອງ			
	ມາດຕະການຄວາມປອດໄພ (ລາຍລະອຽດຂອງມາດຕະການສຳລັບການຄາດຄະເນຄວາມສ່ຽງ ແລະ ອັນຕະລາຍ)	1. ປະຊຸມເມື່ອເລີ່ມຕົ້ນເຮັດວຽກຢູ່ສະໜາມ ① ທຸກເຊົ້າ, ປະຊຸມກັນພາຍໃນທີມເຮັດວຽກດ້ວຍເວລາສັ້ນໆ (ຢືນຢັນພາລະໜ້າທີ່ - ສະຖານທີ່ເຮັດວຽກ, ຊົ່ວໂມງເຮັດວຽກ ແລະ ລະບົບການສື່ສານ) ② ໃນເວລາປະຊຸມ ໃຫ້ຄາດຄະເນ ຄວາມສ່ຽງ ແລະ ອັນຕະລາຍ ແລະ ຢືນຢັນຄວາມລະມັດລະວັງໃນມື້ດັ່ງກ່າວ. 2. ປະຊຸມຫຼັງເລີກວຽກ ① ປະຊຸມຮ່ວມຜູ້ອອກແຮງງານທຸກຄົນໃນມື້ດັ່ງກ່າວ (ຢືນຢັນສະພາບການເຮັດວຽກ, ແຜນການເຮັດວຽກຂອງມື້ອື່ນ, ແບ່ງປັນຂໍ້ມູນກ່ຽວກັບວຽກທີ່ມີຄວາມສ່ຽງ ແລະ ອັນຕະລາຍ ແລະ ພື້ນທີ່ມີຄວາມສ່ຽງ ແລະ ອັນຕະລາຍ)			

ຮູບ 10-6 ຕົວຢ່າງຂອງແຜນການເຮັດວຽກທີ່ນຳໃຊ້ເຄື່ອງຈັກ ①

ສະຖານທີ່ເຮັດວຽກ ແລະ ຂອບເຂດວຽກງານ ແລະ ແຜນວາດເສັ້ນທາງການດຳເນີນງານ

ຕື່ມຂໍ້ມູນ ກ່ຽວກັບ ທີ່ຕັ້ງຂອງເຄື່ອງຈັກ, ອຸປະກອນເຄື່ອງຈັກທີ່ເຄື່ອນເໜັງບໍ່ໄດ້, ເສັ້ນທາງການຂົນສົ່ງ ແລະ ສະຖານທີ່ເຄື່ອນຍ້າຍ, ເຂດຫ້າມເຂົ້າ, ຄວາມໄວຈຳກັດ, ຕຳແໜ່ງຜູ້ນຳທາງ ຕ່າງໆເປັນຕົ້ນ.



ປະຕິບັດວຽກງານຕາມບັນທຶກຂອງແຈ້ງການ
- ແຜນການເຮັດວຽກມື້. <ວັນທີ 29 ເດືອນ 7>
(ລົງນາມ) Jiro Sakurayama, Shiro Iwayama

ການຈັດປະເພດວຽກ	ຊື່ເຄື່ອງຈັກ	ຄົນຂັບ	ທັກສະຕ່າງໆ
ການຕັດໄມ້ - ການແປຮູບໄມ້	ເຄື່ອງເກັບກ່ຽວ	Ichiro Matsuyama	②-2, ⑧-2
ການຕັດບັ້ງຕົ້ນໄມ້ - ການຫ້ອນໂຮມໄມ້	ຫົວຄີບ	Jiro Sakurayama	②-2, ④, ⑨-2
ໄມ້ແປຮູບ	ແປຮູບ	Saburo Sasayama	②-2, ⑧-2
ການຮວມຮວມໄມ້ - ການຂົນອອກ	ເກັບໄມ້	Shiro Iwayama	⑦-1, ⑩, ⑫
ເຮັດວຽກງານການກອງໄມ້ທ່ອນ	ຫົວຄີບ	Jiro Sakurayama	②-2, ④

ປະກອບດ້ວຍ: ທັກສະ ແລະ ໃບຢັ້ງຢືນ

①-1 ໃບອະນຸຍາດຫົວໜ້າວຽກແລ່ນສາຍໄຟລອຍຟ້າ
①-2 ຜູ້ຈົບການຝຶກອົບຮົມພິເສດທີ່ກ່ຽວຂ້ອງກັບການຂັບເຄື່ອນອຸປະກອນຮວບຮວມໄມ້
②-1 ໃບອະນຸຍາດຂັບເຄື່ອນເຄມເຄື່ອນທີ່ (5t ຂຶ້ນໄປ)
②-2 ໃບອະນຸຍາດຂັບເຄື່ອນເຄມເຄື່ອນທີ່ - ຫຼັກສູດທັກສະໃນການຂັບເຄື່ອນເຄມເຄື່ອນທີ່ຂະໜາດນ້ອຍຄົບສູດ(1 t ຂຶ້ນໄປ)
②-3 ຜູ້ຈົບການຝຶກອົບຮົມພິເສດທີ່ກ່ຽວຂ້ອງກັບການວຽກງານເຄມເຄື່ອນທີ່(ຕ່ຳກວ່າ 1t)
③ ຜູ້ຈົບຫຼັກສູດການຝຶກອົບຮົມຫົວໜ້າວຽກການຂຸດດິນ ແລະ ການຄ້ຳຢືນ
④ ຜູ້ຈົບຫຼັກສູດການຝຶກອົບຮົມວຽກງານການກອງໄມ້
⑤-1 ຜູ້ຈົບຫຼັກສູດການຝຶກອົບຮົມທັກສະການຂັບລົດຍົກ(1t ຂຶ້ນໄປ)
⑤-2 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມພິເສດທີ່ກ່ຽວກັບການຂັບເຄື່ອນລົດຍົກ(ຕ່ຳກວ່າ 1t)
⑥-1 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມທັກສະການຂັບເຄື່ອນລົດຕັກດິນຕ່າງໆເປັນຕົ້ນ(1t ຂຶ້ນໄປ)
⑥-2 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມພິເສດທີ່ກ່ຽວກັບການຂັບເຄື່ອນລົດຕັກດິນ (ຕ່ຳກວ່າ 1t)
⑦-1 ທີ່ຈົບຫຼັກສູດທັກສະການຂັບເຄື່ອນຍານພາຫະນະເທິງພື້ນທີ່ຂຸມຂຸຣະ(1t ຂຶ້ນໄປ)
⑦-2 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມພິເສດທີ່ກ່ຽວກັບຂັບເຄື່ອນຍານພາຫະນະຂົນສົ່ງພື້ນທີ່ຂຸມຂຸຣະ(ຕ່ຳກວ່າ 1t)
⑧-1 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມທັກສະໃນການຂັບເຄື່ອນເຄື່ອງຈັກກໍ່ສ້າງປະເພດຍານພາຫະນະ (ການກະກຽມດິນ - ການຂົນສົ່ງ - ການບັນທຸກ - ການຂຸດຄົ້ນ) (3t ຂຶ້ນໄປ)
⑧-2 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມພິເສດທີ່ກ່ຽວກັບຂັບເຄື່ອນເຄື່ອງຈັກກໍ່ສ້າງປະເພດຍານພາຫະນະ (ການກະກຽມດິນ - ການຂົນສົ່ງ - ການບັນທຸກ - ການຂຸດຄົ້ນ) (ຕ່ຳກວ່າ 3t)
⑨-1 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມທັກສະເຊືອກສະລິງ (1t ຂຶ້ນໄປ)
⑨-2 ຜູ້ທີ່ຈົບຫຼັກສູດການຝຶກອົບຮົມພິເສດທີ່ກ່ຽວກັບເຊືອກສະລິງ (ຕ່ຳກວ່າ 1t)
⑩ ຜູ້ທີ່ຈົບຫຼັກສູດການຝຶກອົບຮົມດ້ານຄວາມປອດໄພແກ່ຜູ້ບັງຄັບບັນຊາວຽກງານການຮວບຮວມໄມ້ດ້ວຍລົດໄຖຕ່າງໆເປັນຕົ້ນ
⑪ ຜູ້ທີ່ຜ່ານການຝຶກອົບຮົມດ້ານຄວາມປອດໄພຕໍ່ຜູ້ອອກແຮງງານທີ່ເຮັດວຽກກ່ຽວກັບເຄື່ອງຈັກຄ່ຽນຖ່າຍສີນຄ້າ ແລະ ການຂົນສົ່ງຕ່າງໆ ເປັນຕົ້ນ
⑫ ບຸກຄົນທີ່ຜ່ານການຝຶກອົບຮົມດ້ານຄວາມປອດໄພໃຫ້ແກ່ຜູ້ອອກແຮງງານໃນການຮວບຮວມໄມ້ດ້ວຍການນຳໃຊ້ຍານພາຫະນະພາຍໃນປ່າໄມ້

[ອ້າງອີງ: ສະຫຼຸບບົດບັນຍັດຂອງກົດໝາຍວ່າດ້ວຍຄວາມປອດໄພ - ສຸຂະພາບ ແລະ ກົດລະບຽບຄວາມປອດໄພ - ສຸຂະພາບ]

ຮູບ 10-6 ຕົວຢ່າງຂອງແຜນການເຮັດວຽກທີ່ນຳໃຊ້ເຄື່ອງຈັກ ②

ແຫຼ່ງຂໍ້ມູນ: "ໂຄງການສົ່ງເສີມມາດຕະການປ້ອງກັນອຸບັດເຫດແຮງງານສຳລັບຜູ້ອອກແຮງງານທີ່ຫາກໍເຂົ້າເຮັດວຽກໃໝ່ໃນວຽກງານປ່າໄມ້, ສະໜັບສະໜູນການສ້າງແຜນວຽກທີ່ຈຳເປັນເພື່ອວຽກງານປອດໄພ" ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ

ການປະຊຸມກ່ອນເລີ່ມເຮັດວຽກ

ຄວາມຈຳເປັນ ແລະ ຈຸດປະສົງຂອງການປະຊຸມ

ການຈັດທີມ ແລະ ການເຮັດວຽກຮ່ວມກັບຄົນອື່ນ ເປັນ ພາກສ່ວນສຳຄັນທີ່ກ່ຽວຂ້ອງກັບຊີວິດ. ເປັນເຫດຜົນຕົ້ນຕໍທີ່ບໍ່ແມ່ນການເຮັດວຽກພຽງຄົນດຽວ ເພາະວ່າສາມາດຂໍການຊ່ວຍເຫຼືອຈາກໃຜຜູ້ໜຶ່ງໄດ້ທັນທີໃນເວລາສຸກເສີນ, ແຕ່ວ່າ ມັນບໍ່ໄດ້ເປັນພຽງແຕ່ເຫດຜົນດຽວເທົ່ານັ້ນ. ຫາກມີຜູ້ອອກແຮງງານຄົນອື່ນ ຈະເຮັດໃຫ້ສາມາດດຳເນີນໄປໄດ້ຢ່າງມີປະສິດທິຜົນ ເຊັ່ນ: ວຽກງານການດຶງເຊືອກ, ການເຄື່ອນຍ້າຍໄມ້ທ່ອນ, ການໄປເອົາອຸປະກອນທີ່ຈະນຳໃຊ້ ແລະ ການເບິ່ງເຫັນ ຄວາມສ່ຽງ ແລະ ອັນຕະລາຍ ຕ່າງໆເປັນຕົ້ນ.

ການເຮັດວຽກຮ່ວມກັບຄົນອື່ນ ໝາຍເຖິງ ການຮ່ວມມືກັນເພື່ອບັນລຸເປົ້າໝາຍຮ່ວມ. ໃນເວລາທີ່ຈະເລີ່ມເຮັດວຽກ, ທຸກຄົນທີ່ກ່ຽວຂ້ອງຢູ່ບ່ອນເຮັດວຽກນັ້ນ ຕ້ອງໄດ້ປະຊຸມກັນ. ບໍ່ແມ່ນພຽງແຕ່ຕອນປ່ຽນບ່ອນເຮັດວຽກເທົ່ານັ້ນ, ແຕ່ຕ້ອງຢືນຢັນເປັນຢ່າງດີກ່ຽວກັບຂັ້ນຕອນການເຮັດວຽກ, ການຈັດຕຳແໜ່ງຂອງຜູ້ອອກແຮງງານ, ຫົວຂໍ້ທີ່ຄວນລະມັດລະວັງໃນເວລາເຮັດວຽກ ແລະ ການໃຫ້ສັນຍານໃນການເຮັດວຽກ ຕ່າງໆ ໃຫ້ແກ່ຜູ້ຮັບຜິດຊອບຄຸ້ມຄອງວຽກງານເປັນຫຼັກກ່ອນການເລີ່ມວຽກໃນແຕ່ລະມື້.

ນອກຈາກນັ້ນ, ຫາກຈຳເປັນຕ້ອງການປະຊຸມລະຫວ່າງການເຮັດວຽກ ແລະ ເຂົ້າຫາບຸກຄົນທີ່ກຳລັງເຮັດວຽກຢູ່ ແມ່ນ ໃຫ້ສົ່ງສັນຍານຕາມທີ່ກຳນົດໄວ້ລ່ວງໜ້າ ດ້ວຍໝາກວິດຕ່າງໆເປັນຕົ້ນ ແລ້ວຕ້ອງຢືນຢັນການຕອບຮັບຂອງບຸກຄົນດັ່ງກ່າວກ່ອນແລ້ວຈຶ່ງຄ່ອຍເຂົ້າໄປໃກ້ບຸກຄົນນັ້ນ.

ຕົວຢ່າງຂອງຫົວຂໍ້ການປະຊຸມ ແມ່ນ ມີດັ່ງນີ້.

(1) ຢືນຢັນຂັ້ນຕອນການເຮັດວຽກ, ການຈັດສັນຕຳແໜ່ງບຸກຄະລາກອນ ແລະ ພື້ນທີ່ທີ່ຈຳເປັນຕ້ອງໄດ້ລະມັດລະວັງ.

ການທີ່ພະນັກງານທຸກໆຄົນເຂົ້າໃຈກ່ຽວກັບຂັ້ນຕອນການເຮັດວຽກ ແລະ ຮັບຮູ້ເຖິງການເຄື່ອນໄຫວຂອງຜູ້ອອກແຮງງານຄົນອື່ນຖືວ່າເປັນວຽກງານທີ່ປອດໄພ ແລະ ຂາດບໍ່ໄດ້. ໃນວຽກງານປ່າໄມ້, ຈະໄດ້ມີການແບ່ງຄົນອອກເປັນກຸ່ມທີ່ມີຫຼາຍຄົນ ແລະ ມອບໝາຍໃຫ້ປະຕິບັດວຽກງານ. ຂໍ້ມູນຈະໄດ້ຮັບການແຈ້ງຜ່ານຜູ້ອອກແຮງງານພາຍໃນກຸ່ມ ແລ້ວຈະດຳເນີນວຽກງານໄປພາຍໃຕ້ການເຂົ້າໃຈຮ່ວມກັນ. ໂດຍສະເພາະສະຖານທີ່ມີຄວາມສ່ຽງ ແລະ ອັນຕະລາຍ ທີ່ຈຳເປັນຕ້ອງໄດ້ລະມັດລະວັງ ແມ່ນ ຕ້ອງໃຫ້ທຸກຄົນກວດກາຢ່າງລະອຽດ.

(2) ຫ້າມເຮັດວຽກເທິງລຸ່ມຢູ່ພື້ນທີ່ລາດຊັນບ່ອນດຽວກັນ

ການເຮັດວຽກຢູ່ດ້ານເທິງ ແລະ ດ້ານລຸ່ມຂອງພື້ນທີ່ລາດຊັນດຽວກັນ ຖືວ່າເປັນສິ່ງທີ່ມີຄວາມສ່ຽງ ແລະ ອັນຕະລາຍ ຢ່າງຍິ່ງ ເຖິງແມ່ນວ່າຈະບໍ່ໄດ້ເຮັດວຽກໃນເວລາດຽວກັນກໍຕາມ, ການເຂົ້າໄປຢູ່ດ້ານລຸ່ມຂອງສະຖານທີ່ທີ່ມີການເຮັດວຽກຢູ່ ຖືວ່າເປັນການກະທຳທີ່ເຮັດໃຫ້ເກີດອຸບັດຕິເຫດຕໍ່ຕົນເອງ. ການເອົາໃຈໃສ່ລະມັດລະວັງວ່າຜູ້ອອກແຮງງານຄົນອື່ນໄດ້ຮັບມອບໝາຍວຽກງານໃຫ້ເຮັດວຽກແບບໃດ ແລະ ຢູ່ໃສ ໄປພ້ອມໆກັບການປະຕິບັດວຽກງານຂອງຕົນເອງ ຖືວ່າເປັນສິ່ງສຳຄັນ.

(3) ການຫ້າມເຮັດວຽກໃກ້ກັນ

ໃຫ້ເອົາໄລຍະຫ່າງລະຫວ່າງຜູ້ອອກແຮງງານ ຫຼື ທີມເຮັດວຽກດຽວກັນ ເປັນໄລຍະຫ່າງທີ່ປອດໄພສະເໝີ (2,5 ເທົ່າຂອງຄວາມສູງຂອງຕົ້ນໄມ້). ນອກຈາກນີ້, ໃນເວລາເຮັດວຽກໃນທີມດຽວກັນ ແມ່ນ ບໍ່ສາມາດຕັດຕົ້ນໄມ້ 2 ຂຶ້ນໄປ ໃນເວລາດຽວກັນ. ຜູ້ອອກແຮງງານກວດກາເບິ່ງການພົວພັນຂອງຕຳແໜ່ງເຊິ່ງກັນແລະກັນ ເພື່ອຮັບປະກັນຄວາມປອດໄພໄປພ້ອມໆກັບການປະຕິບັດວຽກງານ.

(4) ການເຮັດວຽກຢູ່ແມ່ນ້ຳແຄບ (ຮ່ອມພູ) ເປັນສິ່ງທີ່ມີຄວາມສ່ຽງ ແລະ ອັນຕະລາຍ

ໃນພື້ນທີ່ລາດຊັນ, ເຖິງແມ່ນວ່າຈະເປັນກໍລະນີທີ່ທິດທາງການປ້ຳໄມ້ຈະບໍ່ໄດ້ປົ່ນໄປທາງຮ່ອມພູກໍຕາມ, ຕົ້ນໄມ້ທີ່ປ້ຳອາດຈະລົ້ມລົງໄປທາງຮ່ອມພູຍ້ອນການຕັດເຄືອໄມ້ຕ່າງໆເປັນຕົ້ນ. ໃນເວລານີ້, ມັນເປັນເລື່ອງຍາກສຳລັບຜູ້ທີ່ເຮັດວຽກຢູ່ຝັ່ງກົງກັນຂ້າມຂອງຮ່ອມພູທີ່ຈະກວດກາ ແລະ ມັນກໍເປັນສິ່ງທີ່ມີຄວາມສ່ຽງ ແລະ ອັນຕະລາຍເປັນຢ່າງຍິ່ງ.

(5) ຫ້າມເຂົ້າໃກ້ຜູ້ອອກແຮງງານຢ່າງບໍ່ລະມັດລະວັງໃນເວລາເຮັດວຽກ

ໃນກໍລະນີທີ່ຈຳເປັນຕ້ອງຍັບເຂົ້າໃກ້ກັນ ໃນຂະນະທີ່ກຳລັງນຳໃຊ້ຈັກເລື່ອຍໄມ້, ຈະຕ້ອງສົ່ງສັນຍານຕາມທີ່ໄດ້ກຳນົດໄວ້ລ່ວງໜ້າ ແລະ ຜູ້ກ່ຽວຕ້ອງຮັບຮູ້ກ່ຽວກັບສັນຍານກ່ອນ ຈຶ່ງຄ່ອຍຍັບເຂົ້າໃກ້. ເມື່ອງຈາກວ່າມີຄວາມສ່ຽງທີ່ຜູ້ອອກແຮງງານຈະປິ່ນກັບມາຢ່າງກະທັນຫັນແລ້ວໄປຕຳເອົາໃບເລື່ອຍ ແລະ ຄວາມສ່ຽງທີ່ຜູ້ອອກແຮງງານເຮັດຜິດພາດແລ້ວກໍ່ໃຫ້ເກີດການບາດເຈັບຍ້ອນວ່າການຕຳຢ່າງໜ້າຕົກໃຈ ສະນັ້ນ ໃຫ້ເອົາໃຈໃສ່ລະມັດລະວັງເປັນຢ່າງດີ.

(6) ຂໍ້ຄວນລະວັງໃນການຕົກ, ລົ້ມ ແລະ ມຶ່ນພະລາດລົ້ມ

ຢູ່ເທິງພູ, ການພະລາດລົ້ມຢູ່ສະຖານທີ່ທີ່ບໍ່ຄາດຄິດອາດຈະເຮັດໃຫ້ເກີດອຸບັດຕິເຫດທີ່ຮ້າຍແຮງໄດ້. ໂດຍສະເພາະໃນເວລາທີ່ເຮັດວຽກພື້ນທີ່ລາດຊັນສູງ, ຈຳເປັນຕ້ອງມັດລະວັງທີ່ສຸດເພື່ອຫຼີກລ່ຽງການຕົກ ລົ້ມ ແລະ ມຶ່ນພະລາດລົ້ມ.

ການກຳຈັດງ່າໄມ້

ການກຳຈັດງ່າໄມ້

ຈຸດສຳຄັນສຳລັບການເຮັດວຽກກຳຈັດງ່າໄມ້

ໃນການກຳຈັດງ່າໄມ້ຂອງຕົ້ນໄມ້ທີ່ຖືກປ້ຳແລ້ວ ແມ່ນ ຈຳເປັນຕ້ອງຕັດງ່າໄມ້ທັງໝົດທີ່ສາມາດຕັດເທົ່າທີ່ເປັນໄປໄດ້. ອັດຕາສ່ວນຂອງເວລາທີ່ໃຊ້ໃນການການກຳຈັດງ່າໄມ້ ແມ່ນ ມີອັດຕາສ່ວນທີ່ຂ້ອນຂ້າງຫຼາຍ ແລະ ຍັງມີອຸບັດຕິເຫດແຮງງານທີ່ເກີດຂຶ້ນໃນຈຳນວນຫຼາຍ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງເອົາໃຈໃສ່ລະມັດລະວັງຢ່າງພຽງພໍໃນການເຮັດວຽກ.

ສິ່ງທີ່ຕ້ອງໄດ້ເອົາໃຈໃສ່ລະມັດລະວັງກ່ຽວກັບການເຮັດວຽກກຳຈັດງ່າໄມ້ດ້ວຍຈັກເລື່ອຍໄມ້ ແມ່ນ ເວລາທີ່ຕັດສ່ວນທີ່ມີຄວາມບາງ ເຊັ່ນ: ແຜ່ນບັງຄັບໂສ້ ອາດຈະເຕັ້ນ ຫຼື ດີດໄດ້ ໃນເວລາທີ່ຕັດງ່າໄມ້ດ້ວຍໂສ້ຂອງເລື່ອຍ. ໃຫ້ດຳເນີນການກຳຈັດງ່າໄມ້ດ້ວຍຈັກເລື່ອຍໄມ້ຢ່າງລະມັດລະວັງຢ່າງພຽງພໍ.

ຈຸດສຳຄັນໃນການເຮັດວຽກກຳຈັດງ່າໄມ້ ແມ່ນ ມີດັ່ງຕໍ່ໄປນີ້.

(1) ຕ້ອງກວດກາພື້ນທີ່ອ້ອມຮອບໄມ້ທີ່ຈະກຳຈັດງ່າໃຫ້ດີ, ກວດຄວາມໝັ້ນຄົງຂອງໄມ້ ຫາບ່ອນຢືນທີ່ໝັ້ນຄົງ ແລ້ວຈຶ່ງຄ່ອຍລົງມືເຮັດວຽກ.

ໃນກໍລະນີທີ່ກຳຈັດງ່າໄມ້ຂອງຕົ້ນໄມ້ທີ່ປ້ຳລົງແລ້ວ, ເນື່ອງຈາກວ່າ ບ່ອນຢືນ ຈະມີສິ່ງທີ່ເປັນອຸປະສັກ ເຊັ່ນ: ງ່າໄມ້, ຫຍ້າໄມ້ໄຜ່ ແລະ ພຸ່ມໄມ້ຕ່າງໆ ແລະ ຈະຕ້ອງໄດ້ຍ່າງຢູ່ສະຖານທີ່ທີ່ເປັນທາງລາດຊັນ ສະນັ້ນ ໃຫ້ກວດກາສະຖານທີ່ອ້ອມຮອບຂອງໄມ້ທີ່ຈະປ້ຳໃຫ້ລົ້ມ ແລະ ຈະກຳຈັດງ່າໃຫ້ດີ. ເພື່ອເປັນການປ້ອງກັນໄພພິບັດຕ່າງ ເຊັ່ນ: ໄມ້ລົ້ມລົງໃນລະຫວ່າງວຽກງານການກຳຈັດງ່າໄມ້ ແມ່ນ ເປັນສິ່ງສຳຄັນທີ່ຕ້ອງກວດກາຄວາມໝັ້ນຄົງ ແລະ ຄວາມປອດໄພຂອງບ່ອນຢືນກ່ອນທີ່ຈະລົງມືເຮັດວຽກ.

(2) ຫ້າມດຳເນີນວຽກງານການກຳຈັດງ່າໄມ້ຢູ່ເທິງໄມ້ທີ່ມີຄວາມອັນຕະລາຍອອກ.

ການກຳຈັດງ່າໄມ້ໃນຂະນະທີ່ຢືນຢູ່ເທິງໄມ້ ແມ່ນ ມີຄວາມສ່ຽງສູງທີ່ຈະໄດ້ຮັບ ອຸບັດຕິເຫດ ຈາກການລົ້ມ ຫຼື ຕົກ, ນອກຈາກນີ້ ການເຮັດວຽກຢູ່ເທິງໄມ້ທີ່ມີຂະໜາດຜ່າສູນກາງນ້ອຍ ແມ່ນ ເປັນເລື່ອງຍາກທີ່ຈະຊົງຕົວຢູ່ ແລະ ການຢູ່ເທິງບ່ອນຢືນທີ່ມີຄວາມແຄບກໍມີຄວາມສ່ຽງ ແລະ ອັນຕະລາຍ ສະນັ້ນ ຈຶ່ງຫ້າມດຳເນີນວຽກດັ່ງນັ້ນເດັດຂາດ.

(3) ສຳລັບການກຳຈັດງ່າໄມ້ ຕາມຫຼັກການແລ້ວ ແມ່ນ ໃຫ້ຢູ່ຕຳແໜ່ງເບື້ອງພູ, ແລ້ວເລີ່ມຈາກກົກຂອງໄມ້ໄປຈົນຮອດປາຍຂອງໄມ້ ໂດຍການຕັດອອກຢ່າງລຽບໄປຕາມພື້ນຜິວຂອງໄມ້.

ສຳລັບຜູ້ອອກແຮງງານ ຕາມກົດລະບຽບແລ້ວ ແມ່ນ ໃຫ້ຢູ່ໃນຕຳແໜ່ງເບື້ອງພູ, ແລ້ວໃຫ້ດຳເນີນໄປທາງໜ້າຈາກເບື້ອງພູ ຫຼື ກົກຂອງໄມ້ທີ່ປ້ຳລົງມາໄປຕາມລຳດັບ ແລ້ວຄ້ອງຕັດງ່າໄມ້ອອກໄປຕາມພື້ນຜິວຂອງໄມ້ຢ່າງລຽບ ແລະ ຄ້ອງເອົາໃຈໃສ່ລະມັດລະວັງບໍ່ໃຫ້ຈັກຕັດໄມ້ກິນເຂົ້າໄປໃນພື້ນຜິຂອງໄມ້.

(4) ສຳລັບງ່າໄມ້ທີ່ມີຄວາມຍາວ ແມ່ນ ບໍ່ໃຫ້ຕັດອອກທັງໝົດໃນຄັ້ງດຽວ, ທຳອິດ ແມ່ນ ໃຫ້ຕັດງ່າຈາກບ່ອນທີ່ຍາວອອກຈາກລຳຕົ້ນ 30 ຊັງຕີແມັດຂຶ້ນໄປ ເພື່ອຫຼຸດນ້ຳໜັກອອກແລ້ວຈຶ່ງຄ່ອຍຕັດກົກງ່າອອກ ເພື່ອປ້ອງກັນບໍ່ໃຫ້ງ່າແຕກ ຫຼື ດີດຄືນ.

ໂດຍທົ່ວໄປແລ້ວ ງ່າໄມ້ທີ່ຍາວຈະມີກົກງ່າທີ່ໃຫຍ່ ແລະ ໜັກ ເຊິ່ງຈະເຮັດໃຫ້ແຜ່ນບັງຄັບໂສ້ຂອງຈັກເລື່ອຍໄມ້ຄາໄດ້. ເມື່ອຕັດປາຍເພື່ອຫຼຸດນ້ຳໜັກອອກແລ້ວ ໃຫ້ເລີ່ມຕົ້ນຕັດອີກເທື່ອໜຶ່ງຢູ່ກົກງ່າໄມ້.

(5) ຫຼີກລ່ຽງການຕັດງ່າໄມ້ດ້ວຍປາຍຂອງແຜ່ນບັງຄັບໂສ້ ເພາະມັນມີຄວາມສ່ຽງ ແລະ ອັນຕະລາຍຈາກການດີດກັບ.

ນອກຈາກນີ້, ໃນວຽກງານການກຳຈັດງ່າໄມ້, ມັກມີແນວໂນ້ມທີ່ຈະໃຊ້ປາຍຂອງແຜ່ນບັງຄັບໂສ້ຂອງຈັກເລື່ອຍໄມ້, ສະນັ້ນ ຈຳເປັນຕ້ອງໄດ້ເອົາໃຈໃສ່ລະມັດລະວັງເພື່ອຫຼີກລ່ຽງບໍ່ໃຫ້ມີການດີດກັບ (ຮູບ 10-7).



ຮູບ 10-7 ໃຊ້ຖານຂອງແຜ່ນບັງຄັບໂສ້ ແລະ ເອົາໃຈໃສ່ລະມັດລະວັງການດີດກັບ

(6) ໃນຂະນະທີ່ຕັດງ່າໄມ້, ຕ້ອງບໍ່ໃຫ້ປາຍຂອງແຜ່ນບັງຄັບໂສ້ສຳພັດກັບຕົ້ນໄມ້ ຫຼື ງ່າໄມ້ອື່ນ.

(7) ສຳລັບງ່າໄມ້ທີ່ໃຊ້ຄ້ຳໄວ້ນັ້ນ ແມ່ນ ໃຫ້ຕັດອອກພ້ອມກັບການກວດກາຄວາມໝັ້ນຄົງຂອງຕົ້ນໄມ້ທີ່ປ້ຳ.

ຫຼັງຈາກຕັດງ່າໄມ້ອື່ນທີ່ຄ້ຳຕົ້ນໄມ້ຢູ່ ເຊິ່ງເປັນງ່າໄມ້ທີ່ຕິດກັບໜ້າດິນອອກແລ້ວ, ຫາກສາມາດໝຸນໄມ້ນັ້ນໄດ້ ແມ່ນ ໃຫ້ໝຸນໄມ້ຈາກດ້ານເທິງ ຂອງພື້ນທີ່ລາດຊັນ, ຫຼັງຈາກນັ້ນ ໃຫ້ກວດກາເບິ່ງວ່າ ໄມ້ຢູ່ໃນລັກສະນະໝັ້ນຄົງແລ້ວຈຶ່ງຄ່ອຍຕັດງ່າໄມ້ອອກ (ຮູບ 10-8). ຫາກບໍ່ສາມາດປັ້ນ ໄມ້ໄດ້, ໃຫ້ຕັດງ່າອອກຫຼັງຈາກເກັບກ່ຽວໄມ້ແລ້ວ. ນອກຈາກນີ້ ສິ່ງສຳຄັນ ແມ່ນ ຕ້ອງຈັດການກັບງ່າໄມ້ທີ່ຄ້ຳຍາກໃນລັກສະນະດຽວກັນ ເຖິງ ວ່າງ່ານັ້ນ ຈະບໍ່ໄດ້ເປັນງ່າທີ່ໃຊ້ສຳລັບການຄ້ຳກໍຕາມ.

(8) ສຳລັບງ່າໄມ້ທີ່ມີຮູບຊົງໂຄ້ງງໍຍ້ອນຖືກໄມ້ລຳອື່ນດັນໄວ້ ແມ່ນ ໃຫ້ເຮັດເປັນຮອຍປາດໃສ່ກ່ອນເພື່ອຫຼຸດແຮງດັນລົງກ່ອນແລ້ວຈຶ່ງຕັດກົກງ່າໄມ້.

ສຳລັບພຸ່ມໄມ້ ຫຼື ງ່າໄມ້ທີ່ມີຮູບຮ່າງໂຄ້ງງໍຍ້ອນຖືກຕົ້ນໄມ້ທີ່ຖືກປ້ຳລົ້ມລົງມາຄັນມັນໄວ້ ຫາກຕັດມັນ ແມ່ນ ມີຄວາມສ່ຽງທີ່ມັນຈະດີດກັບ ສະນັ້ນ ໃຫ້ຫຼຸດແຮງດັນລົງກ່ອນແລ້ວຈຶ່ງຄ່ອຍຕັດມັນອອກ (ຮູບ 10-9).

(9) ອີງຕາມກົດລະບຽບແລ້ວ, ຫ້າມ ຄົນ 2 ຄົນຂຶ້ນໄປ ຕັດງ່າໄມ້ດຽວກັນໃນເວລາດຽວກັນ.


ມັນຈະເປັນສິ່ງທີ່ອັນຕະລາຍຫາກຜູ້ອອກແຮງງານຫຼາຍຄົນເຮັດວຽກຕັດໄມ້ຕົ້ນດຽວກັນ ເນື່ອງຈາກວ່າ ເມື່ອເລີ່ມດຳເນີນວຽກງານການກຳຈັດ ງ່າໄມ້ໄປແລ້ວ ງ່າໄມ້ກໍເລີ່ມຈະບໍ່ມີຄວາມໝັ້ນຄົງ ແລະ ຍັງມີຄວາມສ່ຽງທີ່ຈະເກີດການເຮັດວຽກໃກ້ກັນຕ່າງໆ ແລ້ວພາໃຫ້ເກີດມີຄວາມສ່ຽງ ແລະ ອັນຕະລາຍ.

ຕົວຢ່າງຂອງເຫດໄພພິບັດໃນວຽກງານການຈັດການງ່າໄມ້

ຈະແນະນຳກ່ຽວກັບຕົວຢ່າງຂອງເຫດໄພພິບັດໃນວຽກງານການຈັດການງ່າໄມ້.

ຜູ້ອອກແຮງງານທີ່ກຳລັງປະຕິບັດວຽກງານການກຳຈັດງ່າໄມ້ຂອງຕົ້ນໄມ້ທີ່ປ້ຳລົງມາ ແລ້ວຜູ້ກ່ຽວໄດ້ຕັດຂາໂຕ້ຂອງຕົນເອງດ້ວຍຈັກເລື່ອຍໄມ້.

<ສະພາບຂອງການເກີດ>



ຮູບ 10-8: ກວດກາເບິ່ງວ່າໄມ້ມີຄວາມໝັ້ນຄົງກ່ອນຈຶ່ງຕັດໄມ້ທີ່ຄ້ຳ



ຮູບ 10-9 ຫາກກົກງ່າໄມ້ຖືກຕັດແລ້ວດີດກັບມາ ຈະເປັນຄວາມສ່ຽງ ແລະ ອັນຕະລາຍ ເປັນຢ່າງຍິ່ງ

ໃນຂະນະທີ່ກຳລັງເກັບກ່ຽວ ແລະ ຂົນສົ່ງ ຕົ້ນໄມ້ຊຸງ ແລະ ຕົ້ນໄມ້ຮິໂນໂກະ ພາຍຫຼັງທີ່ປ້ຳລົງມາ, ຜູ້ອອກແຮງງານທີ່ກຳລັງກຳຈັດງ່ຳໄມ້ຂອງຕົ້ນໄມ້ທີ່ປ້ຳລົງມາ ໄດ້ຕັດຕົ້ນຂ້ຳຍຂອງຕົນເອງດ້ວຍຈັກເລື່ອຍໄມ້. ບໍລິເວນໃກ້ຄຽງກັບສະໜາມວຽກ ມີພື້ນທີ່ລາດຊັນຂ້ອນຂ້ຳງຫຼາຍ ນອກຈາກນັ້ນ ຕົ້ນໄມ້ຫຼາຍຕົ້ນກໍຖືກປ້ຳລົງມາທັບຖົມກັນ. ເປັນໄປໄດ້ວ່ຳ ໃນຂະນະທີ່ຜູ້ກ່ຽວກຳລັງປະຕິບັດວຽກງານ ແລະ ກຳລັງຈະມີການເຄື່ອນຍ້ຳຍ ຕົນຂອງຜູ້ກ່ຽວອຳດຈະມົ່ນ ຫຼື ຕົນຂອງຜູ້ກ່ຽວອຳດຈະໄປຄຳຢູ່ພຸ່ມໄມ້.

<ມຳດຕະການ>

① ໃສ່ອຸປະກອນປ້ອງກັນ (ໂສ້ງມິລະໄພ) ຢ່ຳງລະອຽດເພື່ອປ້ອງກັນການຕັດຂຳ.

② ໃນວຽກງານການກຳຈັດງ່ຳໄມ້ຢູ່ພື້ນທີ່ທີ່ຕົ້ນໄມ້ຖືກປ້ຳລົງມາທັບຖົມກັນ ແມ່ນ ໃຫ້ກວດກາຄວາມໝັ້ນຄົງຂອງໄມ້ ແລະ ຮັບປະກັນບ່ອນຢືນທີ່ມີຄວາມໝັ້ນຄົງ.

③ ຕາມກົດລະບຽບແລ້ວ, ການກຳຈັດງ່ຳໄມ້ຢູ່ພື້ນທີ່ທີ່ມີຄວາມລາດຊັ້ນ ແມ່ນ ໃຫ້ຢືນປະຕິບັດວຽກງານຢູ່ເບື້ອງພູ.

④ ຫ້ຳມດຳເນີນການກຳຈັດງ່ຳໄມ້ ຢູ່ເທິງຕົ້ນໄມ້ທີ່ມີຄວາມສ່ຽງຈະປົ້ນ ຫຼື ລົ້ມລົງ.

⑤ ສຳລັບ “ການກຳຈັດງ່ຳໄມ້ທີ່ທັບຖົມກັນ” ເຊິ່ງມີຄວາມສ່ຽງທີ່ໄມ້ຈະດີດກັບ ແມ່ນ ໃຫ້ເຮັດເປັນຮອຍເລື່ອຍໄວ້ກ່ອນ ແລ້ວຈຶ່ງດຳເນີນການກຳຈັດງ່ຳໄມ້.

⑥ ກວດເບິ່ງວ່ຳບໍ່ມີວັດຖຸທີ່ເປັນອຸປະສັກ ເຊັ່ນ: ບໍລິເວນອ້ອມຂ້ຳງມີພຸ່ມໄມ້ທີ່ສຳມຳດເຮັດໃຫ້ຕົນຄຳໄດ້.

⑦ ໃນເວລຳເຄື່ອນຍ້ຳຍໄປພ້ອມກັບການຖືຈັກເລື່ອຍໄມ້ ແມ່ນ ໃຫ້ໃສ່ເບກໂສ້ໄວ້.

ການຕັດໄມ້ທ່ອນ (ບັ່ນທ່ອນ)

ການກວດສອບມູນຄ່າຂອງໄມ້

ໄມ້ (ໄມ້ທ່ອນ) ເຊິ່ງເປັນໄມ້ທີ່ຕັດຈາກຕົ້ນໄມ້ທີ່ປ້ຳລົງມາຕາມຄວາມຍາວທີ່ຕ້ອງການນີ້ເອີ້ນວ່າ “tama: ທ່ອນ” ແລະ ຈາກເງື່ອຮາກຂຶ້ນໄປເອີ້ນ ວ່າ ທ່ອນທີ1, ທ່ອນທີ 2 ... ຂະບວນການຕັດໄມ້ແບບນີ້ເອີ້ນວ່າ “ການຕັດໄມ້ທ່ອນມົນ”

ໃນການເຮັດວຽກຕັດໄມ້ທ່ອນມົນນີ້ ເປັນ ຂະບວນການສ້າງ “ຜະລິດຕະພັນ” ແລະ ເປັນວຽກງານທີ່ສຳຄັນຫຼາຍ ເພາະວ່າມູນຄ່າສາມາດຂຶ້ນ ຫຼື ລົງໄດ້ ຂຶ້ນ ກັບວິທີການຕັດໄມ້ທ່ອນມົນນີ້. ໃນຄວາມໝາຍແບບນັ້ນ, ຕ້ອງໄດ້ເວົ້າວ່າ ເຕັກນິກໃນ “ການເກັບກ່ຽວໄມ້” ເຊິ່ງຖືກກຳນົດວິທີການ ຕັດໄມ້ທ່ອນມົນ ຖືວ່າເປັນທັກສະທີ່ມີຄວາມສຳຄັນໃນການເພີ່ມຄວາມດຶງດູດຂອງຜະລິດຕະພັນ ແລະເພີ່ມຜົນກຳໄລ.

ຈະແນະນຳກ່ຽວກັບຕາຕະລາງຂະໜາດຂອງໄມ້ຂອງສຳນັກງານປ່າໄມ້ Shizuoka ເຊິ່ງເປັນຕົວຢ່າງຂອງນະໂຍບາຍເກັບກ່ຽວໄມ້ (ຕາຕະລາງ 10-1). ແຕ່ລະພື້ນທີ່ ມີ ລັກສະນະສະເພາະໂຕໃນການເກັບກ່ຽວໄມ້ ແລະ ການນຳໃຊ້ປະໂຫຍດຈາກໄມ້.

ການກວດກາຄວາມໝັ້ນຄົງຂອງໄມ້

ໃນວຽກງານການຕັດໄມ້ທ່ອນມົນ ແມ່ນ ມີຄວາມສ່ຽງ ແລະ ອັນຕະລາຍສູງ ແລະ ມີອັດຕາການເກີດອຸບັດຕິເຫດສູງ ຈຶ່ງຕ້ອງໄດ້ເອົາໃຈໃສ່ ລະມັດລະວັງກ່ຽວກັບຄວາມປອດໄພເປັນຢ່າງດີ.

ໃນເວລາຕັດໄມ້ທ່ອນມົນ ແມ່ນ ໃຫ້ຫຼີກລ່ຽງທ່າທາງການເຮັດວຽກທີ່ຝືນເກີນໄປຢ່າງເດັດຂາດ. ຍົກຕົວຢ່າງ ເຊັ່ນ: ມີຕົ້ນໄມ້ທີ່ລົ້ມລົງມາພາດຢູ່ຂຸມ ເຊິ່ງຜູ້ອອກແຮງງານໄດ້ໄປຢືນຢູ່ຂຸມນັ້ນ ແລ້ວດຳເນີນການຕັດຕົ້ນໄມ້ດັ່ງກ່າວ ໂດຍການຖືເລື່ອຍໄຟຟ້າຢູ່ໃນລັກສະນະສູງກວ່າບ່າຂຶ້ນໄປ, ການກະທຳແບບນີ້ ຖືວ່າເປັນສິ່ງທີ່ມີຄວາມສ່ຽງ ແລະ ອັນຕະລາຍຫຼາຍ. ໃນກໍລະນີດັ່ງກ່າວ ແມ່ນ ຈະນຳໃຊ້ມາດຕະການຕາມສະພາບຂອງສະໜາມວຽກ ໂດຍການບໍ່ຄວນຟືນຕັດໄມ້ທ່ອນມົນ, ແຕ່ໃຫ້ຕັດສະເພາະສ່ວນທີ່ສາມາດຕັດໄດ້ໃນທ່າປົກກະຕິ ແລ້ວປ່ອຍໃຫ້ສ່ວນທີ່ພາດຢູ່ຂຸມ ເປັນໄມ້ສຳລັບເອົາໄວ້ຕໍ່ ຫຼື ໃຫ້ຕັດຕາມປົກກະຕິໄປຈົນຮອດບ່ອນທີ່ສາມາດຕັດໄມ້ທ່ອນມົນໄດ້.

ຈຸດຕົ້ນຕໍທີ່ຕ້ອງໄດ້ເອົາໃຈໃສ່ລະມັດລະວັງ ແມ່ນ ມີດັ່ງນີ້.

· ວຽກງານ ຈະໄດ້ຮັບການດຳເນີນໄປບົນພື້ນຖານການນຳໃຊ້ ລີ້ມ, ໄມ້ຮອງ, ໄມ້ຄ້ຳ, ເສົາຄ້ຳຕ່າງ ເພື່ອເຮັດໃຫ້ໄມ້ມີຄວາມໝັ້ນຄົງ.

· ໃນການຕັດໄມ້ອອກຈາກກັນຢູ່ພື້ນທີ່ທີ່ມີຄວາມລາດຊັນ ແມ່ນ ໃຫ້ປະຕິບັດຢູ່ດ້ານເທິງເບື້ອງທີ່ເປັນຫົວຄ້ອຍ ແລະ ບໍ່ໃຫ້ເອົາຕີນເຂົ້າໄປໃນກອງໄມ້ ຫຼື ໃບມີດ.

· ສຳລັບໄມ້ທ່ອນມົນຢູ່ເທິງພື້ນທີ່ລາດຊັນ ແມ່ນ ໃຫ້ກິ້ງໄມ້ໄປບ່ອນທີ່ມີຄວາມໝັ້ນຄົງ ແລ້ວຄ້ຳດ້ວຍເຊືອກ ແລະ ໄມ້ຮອງ ຕ່າງໆ

· ຕາມຫຼັກການແລ້ວ, ຫ້າມໃຫ້ 2 ຄົນຂຶ້ນໄປ ຕັດໄມ້ລຳດຽວກັນໃນເວລາດຽວກັນ.

ວິທີການຕັດໄມ້ອອກຈາກກັນ - ພື້ນຖານການຕັດໄມ້ທ່ອນມົນ

ຄວາມສຳຄັນຂອງ “ການຕັດໄມ້ທ່ອນມົນ” ເຊິ່ງເປັນຂະບວນການຕັດໄມ້ທີ່ປ້ຳລົງມາ ໃຫ້ມີຄວາມຍາວຕາມທີ່ຕ້ອງການ ແມ່ນດັ່ງທີ່ໄດ້ອະທິບາຍໄວ້ເບື້ອງຕົ້ນ (“ການກວດສອບມູນຄ່າຂອງໄມ້”). ໃນການຕັດໄມ້ທ່ອນມົນ, ຈຳເປັນຕ້ອງຕັດໄມ້ທ່ອນໄມ້ເປັນມຸມສາກ ເຊິ່ງເຖິງວ່າຈະໃຊ້ເລື່ອຍໄຟຟ້າໃນການຕັດຕາມສັນຊາດຕະຍານກໍຖືວ່າເປັນເລື່ອງຍາກທີ່ຈະສາມາດຕັດທ່ອນໄມ້ອອກມາເປັນມຸມສາກໄດ້.

ເຄັດລັບໃນການຕັດໄມ້ທ່ອນໃຫ້ເປັນມຸມສາກ ແມ່ນ ການນຳໃຊ້ໂຄງສ້າງຂອງຈັກເລື່ອຍໄມ້. ໃນເວລາວາງຈັກເລື່ອຍໄມ້ໄວ້ເທິງທ່ອນໄມ້, ທ່ອນໄມ້ ແລະ ແຜ່ນບັງຄັບໂສ້ຈະຢູ່ໃນລັກສະນະທີ່ເກືອບຈະເປັນມຸມສາກ. ນຳໃຊ້ລັກສະນະພິເສດຂອງໂຄງສ້າງນີ້ໃນການຕັດໄມ້ທ່ອນມົນ.

① ທຳອິດ, ເອົາສ່ວນລຸ່ມຂອງຈັກເລື່ອຍໄມ້ວາງໃສ່ທ່ອນໄມ້.

② ຕໍ່ໄປ, ຈັດລຽງຂອງແຜ່ນບັງຄັບໂສ້ໃຫ້ຕັ້ງສາກກັບທ່ອນໄມ້ (ຫາກຈັກເລື່ອຍໄມ້ມີເຄື່ອງໝາຍທິດທາງຕັ້ງສາກ (ເຄື່ອງໝາຍສາຍດິ່ງ) ກັບ ແຜ່ນບັງຄັບໂສ້ ແມ່ນ ໃຫ້ເບິ່ງຈາກດ້ານເທິງ ແລ້ວປັບຕຳແໜ່ງຂອງເຄື່ອງໝາຍ ແລະ ທ່ອນໄມ້ໃຫ້ຢູ່ໃນລັກສະນະຂະໜານກັນ.

③ ໃຫ້ຖືເລື່ອຍເຂົ້າມາຫາຕົນເອງ ໂດຍບໍ່ໃຫ້ຈັກເລື່ອຍໄມ້ຫ່າງອອກຈາກຕົ້ນທ່ອນໄມ້ ຈົນກວ່າໂສ້ຈະສຳພັດກັບຕົ້ນໄມ້ ແລ້ວເຮັດໃຫ້ໂສ້ໝຸນ ເພື່ອຕັດເຂົ້າໄປໃນໄມ້.

□ກ່ຽວກັບການຕັດໄມ້ອອກຈາກກັນດ້ວຍແຮງອັດ ແລະ ວິທີການຕັດໄມ້ແຍກອອກຈາກກັນໃນສະພາບທີ່ໄມ້ມີແຮງດຶງ ແມ່ນ ຈະອະທິບາຍໃນ

ຕາຕະລາງ 10-1 ຕາຕະລາງຂະໜາດຂອງໄມ້ແປຮູບ (ຕົວຢ່າງ)

ປະເພດໄມ້	ຊະນິດຂອງຕົ້ນໄມ້	ຂະໜາດຂອງໄມ້ທີ່ເກັບກ່ຽວ		ສະຫຼຸບ
		ຄວາມຍາວ ມ m	ເສັ້ນຜ່າສູນກາງ cm	
ໄມ້ທົ່ວໄປ	ຕົ້ນຊຶງ	6,0	14 ~ 22	ວັດສະດຸທີ່ເໝາະສົມສຳລັບການຜ່ານເສົາ
		◎ 4,0	14 ໂຕເທິງ	ໄມ້ຊຶ່
		4,0	18 ~ 50 (ສ່ວນກົກຂອງຕົ້ນໄມ້)	ສຳລັບໄມ້ອັດ
		◎ 3,0	14 ~ 22	ໄມ້ທີ່ເໝາະສົມສຳລັບເຮັດເສົາ
		2,0	20 ໂຕເທິງ	ໄມ້ຊຶ່
			18 ~ 50 (ສ່ວນກົກຂອງຕົ້ນໄມ້)	ສຳລັບໄມ້ອັດ
	ຕົ້ນຮິໂນກິ	6,0	14 ~ 22	ວັດສະດຸທີ່ເໝາະສົມສຳລັບການຜ່ານເສົາ
		◎ 4,0	14 ໂຕເທິງ	ໄມ້ຊຶ່
		4,0	16 ~ 50 (ສ່ວນກົກຂອງຕົ້ນໄມ້)	ສຳລັບໄມ້ອັດ
		◎ 3,0	14 ~ 22	ໄມ້ທີ່ເໝາະສົມສຳລັບເຮັດເສົາ
		2,0	20 ໂຕເທິງ	ໄມ້ຊຶ່
			16 ~ 50 (ສ່ວນກົກຂອງຕົ້ນໄມ້)	ສຳລັບໄມ້ອັດ
	ຕົ້ນເຊມິ	4,0	60 ໂຕເທິງ	ພາກສ່ວນຂະຫນາດນ້ອຍ / ໄມ້ຊຶ່
ໄມ້ຄຸນນະພາບຕ່ຳ	N	4,0	3 ໂຕເທິງ	
		2,0	3 ໂຕເທິງ	

ນະໂຍບາຍການເກັບກ່ຽວໄມ້

1. ສຳລັບພື້ນຜິວທີ່ຈະຕັດ ແມ່ນ ໃຫ້ຕັດລົງໄປໂດຍກົງຕາມຫຼັກການແລ້ວ, ສຳລັບໄມ້ອັດ ແມ່ນ ໃຫ້ຕັດສ່ວນທີ່ຕິດຮາກອອກ.
2. ສຳລັບຂໍ້ຂອງງ່າໄມ້ ນອກເໜືອຈາກໄມ້ຄຸນນະພາບຕ່ຳ ແມ່ນ ໃຫ້ຕັດອອກບໍ່ໃຫ້ເຫຼືອ ແລ້ວເຮັດໃຫ້ເສັ້ນຜ່າສູນກາງຂອງຂໍ້ໄມ້ ຢູ່ທີ່ 50 mm ຂຶ້ນໄປ.
3. ຮອຍແຕກຫັກທີ່ເກີດຈາກການປ້ຳຕົ້ນໄມ້ລົງມາ ແລະ ຮອຍແຕກເກີດຈາກການຕັດໄມ້ທ່ອນມົນ ເຊິ່ງມີເສັ້ນຜ່າສູນກາງ 1/3 ຂອງ ຕົ້ນໄມ້ ແມ່ນ ເປັນທີ່ຍອມຮັບຍາກຢູ່ຕະຫຼາດ ດັ່ງນັ້ນ ໃຫ້ກຳຈັດມັນອອກໄປ ຫຼື ບໍ່ກໍຈັດໃຫ້ມັນເປັນໄມ້ຄຸນນະພາບຕ່ຳ.
4. ສຳລັບໄມ້ຊຶງທີ່ມີແກນສີດຳເຊິ່ງເຫັນໄດ້ຊັດເຈນ ແມ່ນ ໃຫ້ເອົາໄວ້ສຳລັບໄມ້ອັດ ຫຼື ໄມ້ຄຸນນະພາບຕ່ຳ.
5. ສຳລັບໄມ້ເນົ່າເປື່ອຍ ແລະ ມີຮອຍເປື້ອນ ເປັນເລື່ອງຍາກທີ່ຈະຖືກຍອມຮັບໃນຕະຫຼາດ ສະນັ້ນ ໃຫ້ເອົາເປັນໄມ້ຄຸນນະພາບຕ່ຳ.
6. ເພີ່ມຄວາມຍາວພິເສດ 10 cm ຈາກຄວາມຍາວທັງຫມົດ.
7. ສຳລັບທ່ອນທີ 1, ໃຫ້ເກັບກ່ຽວໄມ້ທີ່ມີເຄື່ອງໝາຍ ◎ ຢູ່ສ່ວນກົກຂອງຕົ້ນໄມ້. ຢ່າງໃດກໍຕາມ, ຫາກມີຂໍ້ບົກພ່ອງ ເຊັ່ນ ການງໍ ຫຼື ການ ເນົ່າເປື່ອຍພາຍໃນ 1 ແມັດຈາກພື້ນດິນ ແລະ ໃນກໍລະນີບໍ່ສາມາດເກັບກ່ຽວໄມ້ມາດຕະຖານໄດ້ ແມ່ນ ໃຫ້ກຳຈັດຂໍ້ບົກພ່ອງດັ່ງກ່າວ ແລ້ວ ເກັບກ່ຽວໄມ້ມາດຕະຖານ.
8. ສຳລັບໄມ້ເສົາກໍມີວິທີການເກັບກ່ຽວເຊັ່ນດຽວກັນ, ເຊິ່ງຫາກມັນເປັນໄມ້ທີ່ຊຶ່ ຫຼື ເປັນໄມ້ທີ່ມີເສັ້ນຜ່າສູນກາງສຳລັບເຮັດເສົາ ກໍ ບໍ່ໄດ້ຈຳກັດວ່າຕ້ອງເປັນໄມ້ທ່ອນທີ 1 ສະເໝີໄປ.
9. ໃນການເກັບກ່ຽວໄມ້ເນື້ອແຂງທີ່ເປັນປະໂຫຍດ ເຊັ່ນ : ຕົ້ນເກຢາກິ ຕ່າງໆ ແລະ ໄມ້ທີ່ມີຄຸນນະພາບສູງ, ກະລຸນາປະຕິບັດຕາມຄຳແນະ ນຳຂອງຜູ້ຊີ້ນຳ.
10. ການເກັບກ່ຽວໄມ້ອາດຈະມີການປ່ຽນແປງຂຶ້ນຢູ່ກັບຄວາມຕ້ອງການ ແລະ ທ່າອ່ຽງຂອງຕະຫຼາດ.
11. ເພື່ອປ້ອງກັນການເສື່ອມຄຸນນະພາບ ແລະ ນຳໄປສູ່ການຂາຍທີ່ມີກຳໄລ, ຕ້ອງເຮັດໃຫ້ສາມາດຈັດສົ່ງໄມ້ໄດ້ພາຍໃນ 3 ເດືອນ ຫຼັງຈາກ ການຕັດຕົ້ນໄມ້.
12. ຫາກວ່າເປັນເລື່ອງຍາກ, ກະລຸນາປຶກສາກັບຜູ້ຄຸ້ມຄອງໃນແຕ່ລະຄັ້ງ.

ແຫຼ່ງຂໍ້ມູນ: ເວັບໄຊຫ້ອງການຄຸ້ມຄອງປ່າໄມ້ Kanto “ສຳນັກງານຄຸ້ມຄອງປ່າໄມ້ Shizuoka”

“No. 11 ການແປຮູບໄມ້ທີ່ປອດໄພ” ໃນປຶ້ມຫົວນີ້.

ຕົວຢ່າງຂອງເຫດ ອຸບັດຕິເຫດ ໃນເວລາເຮັດວຽກການ ຕັດໄມ້ທ່ອນມົນ

ໄມ້ທີ່ຖືກຕັດອອກເປັນໄມ້ທ່ອນມົນ ໄດ້ມີ່ນ ແລ້ວໄປທັບເອົາຈົນເຮັດໃຫ້ເສຍຊີວິດ.

<ສະພາບຂອງການເກີດ>

ຫຼັງຈາກການປ້າຕົ້ນໄມ້ຢູ່ຕາມພື້ນທີ່ລາດຊັນທີ່ມີຄວາມອຽງປະມານ 25 ອົງສາ ແລ້ວໄດ້ດຳເນີນວຽກງານການກຳຈັດງ່າໄມ້ ແລ້ວຫຼັງຈາກນັ້ນ ກໍໄດ້ດຳເນີນການຕັດໄມ້ທ່ອນມົນ. ຕົ້ນໄມ້ທີ່ຖືກປ້າລົງມາ ຖືກນຳມາຊ້ອນກັນຢູ່ຕາມພື້ນທີ່ລາດຊັນນັ້ນ.

ຜູ້ໄດ້ຮັບເຄາະຮ້າຍ ໄດ້ພະຍາຍາມຕັດທ່ອນໄມ້ທ່ອນທີ 1 (ເສັ້ນຜ່າກາງຕາມຄວາມສູງຊ່ຳໜ້າເອິກ 45 ຊັງຕີແມັດ, ຍາວປະມານ 16 ແມັດ) ເຊິ່ງຢູ່ເທິງຂອງຕົ້ນໄມ້ທີ່ປ້າລົງມາທັບຊ້ອນກັນ, ແຕ່ບໍ່ສາມາດຕັດໃຫ້ຂາດໄດ້ ສະນັ້ນ ມັນຈຶ່ງຢູ່ໃນສະພາບທີ່ໄມ້ບໍ່ໄດ້ຂາດອອກຈາກກັນ, ຜູ້ກ່ຽວຈຶ່ງໄດ້ໄປຕັດທ່ອນທີ 2 ເຊິ່ງຫ່າງຈາກຈຸດນີ້ໄປປະມານ 4,2 ແມັດ.

ເມື່ອງຈາກມີແຮງກະແທກຈາກທ່ອນທີ 2 ຕົ້ນລົງມາຍ້ອນນ້ຳໜັກຂອງມັນ, ທ່ອນທີ 1 ຈຶ່ງຫຼຸດອອກ ແລ້ວ ສະໄລ້ລົງມາ.

ທ່ອນທຳອິດໄດ້ຕຳໃສ່ຜູ້ໄດ້ຮັບເຄາະຮ້າຍ, ແລ້ວຜູ້ກ່ຽວກໍຖືກໜີບດ້ວຍໄມ້ທ່ອນທີ 1 ແລະ ໄມ້ອີກທ່ອນໜຶ່ງທີ່ຖືກຕັດໄວ້ຢູ່ຕີນຄ້ອຍ ແລະ ເສຍຊີວິດ.

<ສາເຫດ>

① ຕົ້ນໄມ້ທີ່ຖືກປ້າລົງມາໄດ້ທັບຊ້ອນເຊິ່ງກັນ ແລະ ກັນ ແລະ ຢູ່ໃນສະພາບທີ່ບໍ່ໝັ້ນຄົງ.

② ບໍ່ວ່າຈະເປັນການເຮັດວຽກຢູ່ພື້ນທີ່ທີ່ມີຄວາມລາດຊັນຫຼືບໍ່ກໍຕາມ, ໃນເວລາຕັດໄມ້ທ່ອນມົນ ກໍໄດ້ດຳເນີນວຽກງານໄປຕາມທາງລາດຊັນໃນສະພາບທີ່ມີຕົ້ນໄມ້ປ້າລົງມາຕາມທາງລາດຊັນ, ນອກນັ້ນ ຍັງບໍ່ມີມາດຕະການປ້ອງກັນທ່ອນໄມ້ທີ່ມີ້ນສະໄລ້ຕົກລົງໄປ ເຊັ່ນ: ເຊືອກສະລິງ ຕ່າງໆ

③ ເປັນການເຮັດວຽກທີ່ຕັດໄມ້ທ່ອນທີ 1 ບໍ່ຂາດ ແລ້ວໄປຕັດທ່ອນທີ 2.

<ມາດຕະການ>

① ຫ້າມດຳເນີນການແປຮູບໄມ້ໃນລັກສະນະທີ່ຕົ້ນໄມ້ປ້າລົງມາທັບຊ້ອນກັນ.

② ເມື່ອດຳເນີນການແປຮູບໄມ້ ແມ່ນ ໃຫ້ຕັດຕົ້ນໄມ້ໃນທິດທາງຕັ້ງສາກກັບພື້ນທີ່ລາດຊັນ ແລະ ໃຊ້ມາດຕະການຕ່າງໆ ເຊັ່ນ: ໄມ້ສຽບ ຕ່າງໆ ເປັນຕົ້ນ. ຫາກເປັນເລື່ອງຍາກທີ່ຈະປະຕິບັດຕາມມາດຕະການດ້ານເທິງເມື່ອງຈາກສະພາບການເຮັດວຽກ, ຄວນໃຊ້ມາດຕະການປ້ອງກັນການລົ້ມເຊັ່ນ: ມັດດ້ວຍເຊືອກສະລິງ ກ່ອນຈຶ່ງລົງມືເຮັດວຽກ.

③ ຕ້ອງຕັດໄມ້ທ່ອນໃຫ້ຂາດໃນຕອນນັ້ນທຸກຄັ້ງ

ການຕັດໄມ້ດ້ວຍເຄື່ອງເລື່ອຍໄມ້ - ການແປຮູບໄມ້ - ການເກັບຮັກສາໄມ້

No.11 ວຽກງານການແປຮູບໄມ້ທີ່ປອດໄພ

ຈຸດປະສົງຂອງການບັນລະຍາຍ

ຮຽນຮູ້ວິທີການກວດກາຄວາມປອດໄພກ່ອນການເຮັດວຽກ, ການຄາດຄະເນການເຄື່ອນໄຫວຂອງໄມ້ ແລະ ການເຮັດວຽກທີ່ປອດໄພ ເຊິ່ງເຮັດໃຫ້ຄຸນນະພາບໃນການແປຮູບດີຂຶ້ນ ແລະ ຍັງເພີ່ມປະສິດທິພາບໃນການເຮັດວຽກອີກດ້ວຍ.

ຄຳສຳຄັນ

ຈັກເລື່ອຍໄມ້, ການຕັດໄມ້, ການແປຮູບ, ການເກັບກ່ຽວໄມ້, ການຜະລິດວັດສະດຸໄມ້, ຊຸດເຮັດວຽກ, ອຸປະກອນປ້ອງກັນ, ການກຳຈັດງ່າໄມ້, ການຕັດມົນ(ຕັດເປັນໄມ້ທ່ອນ), ປັດໄຈສ່ຽງ, ແຜ່ນບັງຄັບໂຊ້, ລະບົບ 6 ຈຸດ.

ຫົວຂໍ້ທີ່ຕ້ອງເອົາໃຈໃສ່ກ່ຽວກັບຄວາມປອດໄພ

<ເອົາໃຈໃສ່ກວດກາຄວາມປອດໄພກ່ອນການເຮັດວຽກ, ຮັບປະ ກັນ ຄວາມປອດໄພໃນການເຮັດວຽກ ແລະ ຫຼີກລ່ຽງ ຄວາມສ່ຽງ ແລະ ອັນຕະລາຍ ຢ່າງຮອບຄອບ>

<ໃນເວລາເລີ່ມການຝຶກອົບຮົມ, ໃຫ້ປຶກສາຫາລືຢ່າງລະອຽດກ່ຽວກັບຂັ້ນຕອນການເຮັດວຽກ, ການຊັບຊ້ອນນັກຝຶກອົບຮົມ, ວິທີການສື່ສານ ເຊັ່ນ: ການໃຫ້ສັນຍານ ແລະ ຫົວຂໍ້ອື່ນໆທີ່ຈຳເປັນສຳລັບການເຮັດວຽກ (ດ້ານລຸ່ມ)>

- ຫ້າມເຮັດວຽກແນວຕັ້ງ
- ຫ້າມເຮັດວຽກໃກ້ກັນ
- ການປັບປຸງສະພາບແວດລ້ອມບ່ອນເຮັດວຽກ
- ການຍ່າງທີ່ປອດໄພໃນພື້ນທີ່ເຮັດວຽກ (ລະມັດລະວັງພື້ນຕົນ, ຂໍ້ຄວນລະວັງໃນການຖືຈັກເລື່ອຍໄມ້)

<ໃນການຝຶກອົບຮົມພາກປະຕິບັດ ແມ່ນ ໃຫ້ເອົາໃຈໃສ່ສິ່ງຕໍ່ໄປນີ້>

- ຢ່າເຂົ້າໃກ້ພື້ນທີ່ຄວາມສ່ຽງ ແລະ ອັນຕະລາຍ ເຊັ່ນ: ພື້ນທີ່ຫີນ ເຈື່ອນ ເປັນຕົ້ນ.
- ຄວນລະວັງດ້ານສະພາບອາກາດ (ຟ້າຜ່າ ແລະ ອາກາດຮ້ອນ) ໂລກລົມແດດຕ່າງໆ ທີ່ເກີດຂຶ້ນຈາກສະພາບອາກາດ ແລະ ຄວນມີ ມາດຕະການ ໃນການປ້ອງກັນ.
- ການມີຢູ່ຂອງສັດ ແລະ ພືດທີ່ມີຄວາມສ່ຽງ ແລະ ອັນຕະ ລາຍ ເຊັ່ນ: ໝີ, ເຜິ້ງ, ງູ, ເຫັບ, ພືດປະເພດຢາງຮັກທີ່ ສາມາດພົບຢູ່ໃນພື້ນທີ່ເຮັດວຽກ ແລະ ການປ້ອງກັນພວກມັນ (ວິທີການຮັບມື)
- ໃນການຝຶກປະຕິບັດກ່ຽວກັບການກຳຈັດງ່າໄມ້, ຖືວ່າເປັນສິ່ງທີ່ອັນຕະລາຍຫຼາຍ ຫາກຄົນຫຼາຍຄົນຈະເຮັດວຽກຢູ່ຕົ້ນໄມ້ດຽວກັນ, ດັ່ງນັ້ນ ການເຮັດວຽກຄວນດຳເນີນໄປຄັ້ງລະ 1 ຄົນ.

ການກວດກາຄວາມປອດໄພກ່ອນການເຮັດວຽກ (ກວດກາກ່ອນການຝຶກປະຕິບັດ)

- ກວດກາເບິ່ງຊຸດເຮັດວຽກ ແລະ ອຸປະກອນປ້ອງກັນ (ປ້ອງ ກັນອາການບາດເຈັບຈາກການສັ່ນສະເທືອນ) (ໝວກກັນກະທົບ, ໝາກຫວີດ, ໜ້າກາກນິລະໄພ, ແມວອັດຫູ (ແມວປິດຫູ), ຖົງມືກັນສັ່ນສະເທືອນ, ຊຸດປ້ອງກັນໂສ້ຈັກເລື່ອຍໄມ້ (ໂສ້ງນິລະໄພ), ເກີບນິລະໄພ ແລະ ອື່ນໆ)
- ການກະກຽມ ແລະ ການກວດກາເຄື່ອງມື
- ລາຍການກວດກາຄວາມປອດໄພ
- ການປະຕິບັດການເຄື່ອນໄຫວພື້ນຖານ ແລະ ອື່ນໆ.

* ຕ້ອງກວດກາຄວາມປອດໄພກ່ອນທີ່ຈະເລີ່ມເຮັດວຽກເປັນຢ່າງດີ ເຊິ່ງຫາກມີຂໍ້ບົກຜ່ອງໃດໆ ຫ້າມດຳເນີນການຈັດຕັ້ງປະຕິບັດ.
* ກວດກາເນື້ອໃນຂອງແຜນວຽກທີ່ຫົວໜ້າທີມຕ່າງໆກະກຽມ ແລ້ວອະທິບາຍຂັ້ນຕອນການແບ່ງປັນຂໍ້ມູນໃຫ້ສະມາຊິກຂອງທີມງານທຸກຄົນ.
* ອ້າງອີງຕາຕະລາງກ່ຽວກັບລາຍຊື່ຂອງອຸປະກອນຄວາມປອດໄພຢູ່ດ້ານທ້າຍຂອງປຶ້ມຫົວນີ້.

ການຝຶກອົບຮົມ ການປະຕິບັດງານການກຳຈັດກິ່ງງ່າລຳຕົ້ນ

ຂໍ້ຄວນລະວັງໃນເວລາກຳຈັດງ່າໄມ້

ຂໍ້ຄວນລະວັງທີ່ຕ້ອງປະຕິບັດໃນເວລາກຳຈັດງ່າໄມ້ ເຊິ່ງໄດ້ມີການແນະນຳໃນ “No. 10 ວິທີການດຳເນີນການຜະລິດອັດສະດຸໄມ້ດ້ວຍຈັກເລື່ອຍໄມ້” (ຕາຕະລາງ 11-1 ສະຫຼຸບກ່ຽວກັບຂໍ້ຄວນລະວັງ).

ໃນບົດນີ້ ຈະເປັນການທົບທວນຄືນກ່ຽວກັບພາບລວມ.

ຢືນຢັນຄວາມຫມັ້ນຄົງຂອງວັດສະດຸ ຂອງໄມ້

ໃນລະຫວ່າງການເຮັດວຽກກຳຈັດງ່າໄມ້ ແມ່ນ ຈຳເປັນທີ່ສຸດທີ່ຈະຕ້ອງກວດກາຄວາມໝັ້ນຄົງຂອງໄມ້ທີ່ຈະກຳຈັດງ່າ. ຕົວຢ່າງ, ໄມ້ໄດ້ຕົກອອກມາຈາກດ້ານຂ້າງຂອງກອງໄມ້ ຢູ່ບ່ອນທີ່ເປັນພື້ນທີ່ລາດຊັນ. ສິ່ງນີ້ ເປັນສະພາບຄວາມບໍ່ໝັ້ນຄົງ ເຊິ່ງໄມ້ຈະປິ່ນໄປຮອດໃສກໍບໍ່ຮູ້. ການທີ່ມັນໄປຄ້າງຢູ່ເທິງພື້ນທີ່ລາດຊັນ ກໍຍ້ອນວ່າຢູ່ດ້ານລຸ່ມຂອງມັນມີໄມ້ໜາຮອງຢູ່ ເຊິ່ງເຮັດໃຫ້ມັນຢູ່ຫັ້ນແບບຫວຸດຫວິດເທົ່ານັ້ນ.

ຫາກປ້ຳມັນລົງໃນທິດທາງດັ່ງກ່າວນີ້ ແລະ ຫຼັງຈາກປ້ຳລົງມາແລ້ວ ມັນຍັງຕົດຢູ່ກັບຕໍໄມ້ຢູ່ ແມ່ນ ບໍ່ຈຳເປັນຕ້ອງຕັດອອກທັນທີຫຼັງຈາກປ້ຳ ເພາະວ່າຈຳເປັນຕ້ອງໃຫ້ຖືກວາງຢູ່ຢ່າງໝັ້ນຄົງ. ຫາກຕັດມັນອອກຈາກຕໍໄມ້ທັນທີຫຼັງຈາກປ້ຳມັນລົງມາ ກໍຈະປຽບສະເໝືອນວ່າທ່ານກຳລັງຖິ້ມສິ່ງທີ່ໃຊ້ສຳລັບຮັບປະກັນຄວາມໝັ້ນຄົງໄປແລ້ວຢ່າງບໍ່ໜ້ອຍ (ຄືງມັນໃຫ້ໝັ້ນຄົງ). ແນວໃດກໍຕາມ, ພາຍຫຼັງປ້ຳແລ້ວ, ຫາກສ່ວນທີ່ຕົດຢູ່ຫາກມີພຽງເລັກໜ້ອຍ ກໍມີຄວາມສ່ຽງທີ່ມັນຈະຫຼຸດອອກແລ້ວກິ້ງອອກໄປໃນລະຫວ່າງການເຮັດວຽກກຳຈັດງ່າໄມ້, ດັ່ງນັ້ນ ຄວນຕັດງ່າອອກກ່ອນ ແລ້ວປະຕິບັດເຊັ່ນກັນກັບສິ່ງທີ່ຈະດຳເນີນໃນສະພາບຕໍ່ໄປນີ້.

ໃນເວລາປ້ຳຕົ້ນໄມ້, ຫາກເຄືອໄມ້ຂາດ, ສິ່ງນີ້ ຈະຖືວ່າເປັນສິ່ງທີ່ຫຼີກລ່ຽງບໍ່ໄດ້ ຫາກຄາດວ່າມັນຈະລົ້ມແລ້ວກິ້ງອອກໄປ ແມ່ນ ປະໃຫ້ມັນໃຫ້ຫ່ຽງກ່ອນແລ້ວຈຶ່ງຄ່ອຍດຳເນີນການເຄື່ອນຍ້າຍ ແລະ ຕ້ອງຮັບປະກັນສະພາບທີ່ໄມ້ຢູ່ໃນລັກສະນະທີ່ໝັ້ນຄົງແລ້ວ. ນອກຈາກນີ້ ຫາກສິ່ງນັ້ນເປັນສິ່ງທີ່ຫຍຸ້ງຍາກ, ການມັດເຊືອກສະລິງ ຫຼື ລວດຕ່າງໆໃສ່ດ້ານເທິງຂອງຕໍໄມ້ກໍຖືວ່າເປັນອີກວິທີໜຶ່ງໃນການເພີ່ມຄວາມປອດໄພ.

ໃນການກຳຈັດງ່າໄມ້ທີ່ຢູ່ໃນສະພາບນີ້, ຄວນຫຼີກລ່ຽງການຕັດງ່າໄມ້ທຸກງ່າທີ່ເຫັນຈາກປາຍເບື້ອງດຽວຂອງຕົ້ນໄມ້ ແລະ ໃຫ້ຕັດງ່າໄມ້ທີ່ມີບົດບາດສຳຄັນໃນການຮັກສາຄວາມໝັ້ນຄົງຂອງໄມ້ ອອກເປັນລຳດັບສຸດທ້າຍ (ປົກກະຕິ ແມ່ນ ງ່າທີ່ຢູ່ລຸ່ມ).

ເຕັກນິກພື້ນຖານໃນການກຳຈັດງ່າໄມ້

ຈະແນະນຳໃຫ້ຮູ້ກ່ຽວກັບວິທີການນຳໃຊ້ຮ່າງກາຍ ແລະ ການນຳໃຊ້ຈັກເລື່ອຍໄມ້ໃນການກຳຈັດງ່າໄມ້ຢ່າງວ່ອງໄວ, ປອດໄພ ແລະ ບໍ່ຕ້ອງໃຊ້ແຮງເກີນຈຳເປັນ.

ທ່າທາງໃນການເຮັດວຽກ

ໃນການກຳຈັດງ່າໄມ້, ບໍ່ຈຳເປັນຕ້ອງງໍຮ່າງກາຍເພື່ອເຮັດວຽກ ແລະຄວາມສູງທີ່ຊ່ວຍໃຫ້ສາມາດປະຕິບັດວຽກງານກຳຈັດງ່າໄມ້ໄດ້ງ່າຍ ແມ່ນ ຄວາມສູງໃນລະດັບລຸ່ມແອວລົງມາຫາຫົວເຂົ່າ (ຮູບພາບ 11-1).

ທ່າທາງການເຮັດວຽກ ເປັນທ່າທີ່ຢືນດ້ວຍການປັ່ນຕົ້ນເປີດອອກ ເພື່ອໃຫ້ຢູ່ໃນທ່າທາງທີ່ໝັ້ນຄົງດີ ແລ້ວໃຊ້ຈັກເລື່ອຍໄມ້ໂດຍໃຫ້ຈັກຢູ່ໃກ້ຮັບລຳໂຕຂອງຮ່າງກາຍ. ໃນຂະນະທີ່ເຮັດວຽກກ່ຽວກັບການກຳຈັດງ່າໄມ້, ການເຄື່ອນເໜັງຕຳແໜ່ງຂອງຕົນ ຈະພາໃຫ້ເກີດອຸບັດຕິເຫດທີ່ຕົນໄປສຳພັດກັບຈັກເລື່ອຍໄມ້ ດັ່ງນັ້ນ ການທີ່ຕົນຢູ່ໃນທ່າທີ່ໝັ້ນຄົງຈຶ່ງເປັນສິ່ງທີ່ສຳຄັນຫຼາຍ.

ເພື່ອຫຼີກຫ່ຽງຄວາມສ່ຽງ, ຄວນປ່ຽນຕຳແໜ່ງຂອງຕົນ (ການເຄື່ອນໄປທາງໜ້າ) ສະເພາະຕອນທີ່ມີງ່າໄມ້ທີ່ຈະກຳຈັດຢູ່ລະຫວ່າງແຜ່ນບັງຄັບໂຊ້ຂອງຈັກເລື່ອຍໄມ້ ແລະ ຜູ້ອອກແຮງງານເທົ່ານັ້ນ (ແຜ່ນບັງຄັບໂຊ້ດ້ານກົງກັນຂ້າມກັບໄມ້)

ວິທີການຖືຈັກເລື່ອຍໄມ້ - ການປ້ອງກັນຄວາມເມື່ອຍ

ເອົາຈັກເລື່ອຍໄມ້ຍັບເຂົ້າມາໃກ້ເພື່ອເຮັດວຽກ. ຫາກຖືຈັກເລື່ອຍໄມ້ເຂົ້າມາໃກ້ກັບຮ່າງກາຍ ກໍຈະເຮັດໃຫ້ສາມາດຫຼຸດແຮງເຄັ່ງຢູ່ຫຼັງໄດ້.

ໃນວຽກງານທີ່ກ່ຽວຂ້ອງກັບການຕັດຕົ້ນໄມ້, ການກຳຈັດງ່າໄມ້ ເປັນວຽກທີ່ຕ້ອງໃຊ້ເວລາຫຼາຍ ແລະ ແຮງຫຼາຍທີ່ສຸດ ເຊິ່ງຖືວ່າຫຼາຍກວ່າ

ຕາຕະລາງ 11-1 ຂໍ້ຄວນລະວັງໃນເວລາກຳຈັດງ່າໄມ້

(1) ຕ້ອງກວດກາພື້ນທີ່ອ້ອມຮອບໄມ້ທີ່ຈະກຳຈັດງ່າໃຫ້ດີ, ກວດຄວາມໝັ້ນຄົງຂອງໄມ້ ຫາບ່ອນຢືນທີ່ໝັ້ນຄົງ ແລ້ວຈຶ່ງຄ່ອຍລົງມືເຮັດວຽກ.
(2) ຫ້າມດຳເນີນວຽກງານການກຳຈັດງ່າໄມ້ຢູ່ເທິງໄມ້ທີ່ມີຄວາມສ່ຽງ ແລະ ອັນຕະລາຍ ອອກ.
(3) ສຳລັບການກຳຈັດງ່າໄມ້ ຕາມຫຼັກການແລ້ວ ແມ່ນ ໃຫ້ຢູ່ຕຳແໜ່ງເບື້ອງພູ, ແລ້ວເລີ່ມຈາກກົກຂອງໄມ້ໄປຈົນຮອດປາຍຂອງໄມ້ ໂດຍການຕັດອອກຢ່າງລຽບໄປຕາມພື້ນຜິວຂອງໄມ້.
(4) ສຳລັບງ່າໄມ້ທີ່ມີຄວາມຍາວ ແມ່ນບໍ່ໃຫ້ຕັດອອກທັງໝົດໃນຄັ້ງດຽວ, ທຳອິດ ແມ່ນ ໃຫ້ຕັດງ່າຈາກບ່ອນທີ່ຍາວອອກຈາກລຳຕົ້ນ 30 ຊັງຕີແມັດຂຶ້ນໄປເພື່ອຫຼຸດນ້ຳໜັກອອກ ແລ້ວຈຶ່ງຄ່ອຍຕັດກົກງ່າອອກ ເພື່ອປ້ອງກັນບໍ່ໃຫ້ງ່າແຕກ ຫຼື ດີດຄືນ.
(5) ຫຼີກລ່ຽງການຕັດງ່າໄມ້ດ້ວຍປາຍຂອງແຜ່ນບັງຄັບໂສ້ ເພາະມັນມີຄວາມສ່ຽງ ແລະ ອັນຕະລາຍຈາກການດີດກັບ.
(6) ໃນຂະນະທີ່ຕັດງ່າໄມ້, ຕ້ອງບໍ່ໃຫ້ປາຍຂອງແຜ່ນບັງຄັບໂສ້ສຳພັດກັບຕົ້ນໄມ້ ຫຼື ງ່າໄມ້ອື່ນ.
(7) ສຳລັບງ່າໄມ້ທີ່ໃຊ້ຄ້ຳໄວ້ນັ້ນ ແມ່ນ ໃຫ້ຕັດອອກພ້ອມກັບການກວດກາຄວາມໝັ້ນຄົງຂອງຕົ້ນໄມ້ທີ່ຄ້ຳ.
(8) ສຳລັບງ່າໄມ້ທີ່ມີຮູບຊົງໂຄ້ງງໍຍ້ອນຖືກໄມ້ລຳອື່ນດັນໄວ້ ແມ່ນ ໃຫ້ເຮັດເປັນຮອຍປາດໃສ່ກ່ອນເພື່ອຫຼຸດແຮງດັນລົງກ່ອນແລ້ວຈຶ່ງຕັດກົກຂອງງ່າໄມ້.
(9) ຕາມຫຼັກການແລ້ວ, ຫ້າມໃຫ້ຄົນ 2 ຄົນຂຶ້ນໄປ ຈັດການງ່າໄມ້ດຽວກັນໃນເວລາດຽວກັນ.



ຮູບ 11-1 ຫາກຕົ້ນໄມ້ທີ່ລົ້ມລົງມາ ມີງ່າໄມ້ທີ່ໂຄ້ງງໍ ແລະ ເມື່ອງ່າເຫຼົ່ານັ້ນ ແຕກຫັກ ກໍຈະເປັນຄວາມສ່ຽງ ແລະ ອັນຕະລາຍໄດ້ເມື່ອພວກມັນເດ້ງອອກມາ.

ວຽກງານການປ້ຳຕົ້ນໄມ້. ດັ່ງນັ້ນ, ແທນທີ່ຈະຮອງຮັບນ້ຳໜັກຂອງຈັກເລື່ອຍໄມ້ດ້ວຍແຮງຂອງແຂນພຽງຢ່າງດຽວ ໃຫ້ລອງວາງນ້ຳໜັກຂອງຈັກເລື່ອຍໄມ້ໄວ້ຮ່ຽງກາຍເທົ່າທີ່ເປັນໄປໄດ້ (ຮູບ 11-2), ຫຼືບໍ່ກໍນຳໃຊ້ຈັກເລື່ອຍໄມ້ໂດຍການປະຄອງມັນດ້ວຍຂາຊ້າຍ ແລະ ຮ່ຽງກາຍ (ຮູບ 11-3).

ອີງຕາມສະພາບຂອງງ່າໄມ້, ໃຊ້ໃບມີດລຸ່ມ (ດ້ານລຸ່ມ) ຂອງແຜ່ນບັງຄັບໂຊ້ ຕັດລົງ (ຮູບ 11-4) ຫຼື ໃຊ້ໃບມີດເທິງ (ດ້ານເທິງ) ຂອງແຜ່ນບັງຄັບໂຊ້ ຕັດຂຶ້ນ (ຮູບທີ 11-5) ໂດຍການເອົາຈຸດທີ່ຕ່ຳສຸດຂອງຈັກເລື່ອຍໄມ້ເປັນຈຸດສູນຖ່ວງ ເຊິ່ງຈະເປັນການດຳເນີນດ້ວຍຫຼັກການຂອງການງັດ. ການແຍກວິທີການໃຊ້ ໂດຍການໃຊ້ໃບມີດລຸ່ມເພື່ອຕັດລົງ ແລະ ການໃຊ້ໃບມີດເທິງເພື່ອຕັດຂຶ້ນ ຈະສາມາດເຮັດໃຫ້ຫຼຸດຜ່ອນຄວາມເມື່ອຍໃນວຽກງານການກຳຈັດງ່າໄມ້ໄດ້.



ຮູບ 11-1 ຄວາມສູງທີ່ເຮັດໃຫ້ວຽກງານການກຳຈັດງ່າໄມ້ດຳເນີນໄປໄດ້ງ່າຍ

ຄວາມສູງທີ່ສາມາດກຳຈັດງ່າໄມ້ລະຫວ່າງດ້ານລຸ່ມຂອງແອວລົງໄປຫາຫົວເຂົ່າ ຖືວ່າ ເປັນຄວາມສູງທີ່ມີພາລະຕໍ່ຮ່າງກາຍໜ້ອຍ.



ຮູບ 11-2 ວິທີການຖືຈັກເລື່ອຍໄມ້ - ການວາງນ້ຳໜັກຢູ່ລຳຕົ້ນ



ຮູບ 11-3 ວິທີການຖືຈັກເລື່ອຍໄມ້ - ໃຊ້ຂາຊ້າຍ ແລະ ລຳຕົ້ນຮອງ



ຮູບ 11-4 ການປະຍຸກໃຊ້ຄັນໂຍກ - ການຕັດລົງດ້ວຍມີດລຸ່ມ (ດ້ານລຸ່ມ) ຂອງແຜນບັງຄັບໂຊ້



ຮູບ 11-5 ການປະຍຸກໃຊ້ຄັກໂຍກ - ການຕັດລົງດ້ວຍມີດເທິງ (ດ້ານເທິງ) ຂອງແຜນບັງຄັບໂຊ້



ຮູບ 11-6: ການກຳຈັດງ່າໄມ້ ແມ່ນ ຈັດຢູ່ເບື້ອງພູ ຈາກ ກົກຂອງຕົ້ນໄມ້ ຫາ ປາຍຂອງຕົ້ນໄມ້



ຮູບ 11-7 ຕັດລຽບຕາມພື້ນຜິວຂອງໄມ້



ຮູບ 11-8 ສຳລັບງ່າໄມ້ທີ່ຍາວ ແມ່ນ ຕັດ 2 ຄັ້ງ

ອັນຕະລາຍທີ່ເກີດຂຶ້ນຈາກການດີດກັບ

ຫຼີກລ່ຽງການນຳໃຊ້ປາຍຂອງແຜ່ນບັງຄັບໂຊ້.

ການກຳຈັດງ່າໄມ້ ເປັນການດຳເນີນການຈາກກົກຂອງຕົ້ນໄມ້ ໄປຫາ ປາຍຂອງຕົ້ນໄມ້

ອີງຕາມຫຼັກການ, ການກຳຈັດງ່າໄມ້ ແມ່ນ ຈະກຳນົດຕຳແໜ່ງຢູ່ເບື້ອງພູ ໂດຍເລີ່ມຈາກການກຳຈັດຈາກກົກຂອງທ່ອນໄມ້ໄປຫາປາຍໄມ້ (ຮູບ 11-6), ແລ້ວຕັດງ່າໄມ້ໃຫ້ກ້ຽງລຽບຕາມພື້ນຜິວໄມ້ (ຮູບ 11-7). ທັນທີທີ່ຕັດງ່າໄມ້ທີ່ຄ້ຳໄວ້ອອກ, ໄມ້ກໍຈະກົ້ງ ເຊິ່ງຫາກເຮັດວຽກຢູ່ລຸ່ມໄມ້ ກໍ ມີຄວາມສ່ຽງສູງທີ່ຈະຄາຢູ່ກ້ອງໄມ້.

ສຳລັບຄວາມຍາວຂອງງ່າໄມ້ ແມ່ນ ການຕັດ 2 ຄັ້ງ

ຢ່າຕັດງ່າໄມ້ທີ່ຍາວອອກທັງໝົດໃນຄັ້ງດຽວ, ທຳອິດໃຫ້ຕັດງ່າໄມ້ໜຶ່ງຄັ້ງຢ່າງໜ້ອຍ 30 ຊັງຕີແມັດ, ຫຼັງຈາກນ້ຳໜັກຫຼຸດລົງແລ້ວ ໃຫ້ຕັດຢູ່ ເງົ້າຂອງຕົ້ນໄມ້ເພື່ອບໍ່ໃຫ້ງ່າໄມ້ແຕກ ຫຼື ດີດກັບ (ຮູບທີ 11-8). ນອກຈາກນີ້, ເມື່ອງຈາກວ່າງ່າໄມ້ສັ້ນລົງ ແລະ ເບົາລົງ ສະນັ້ນ ມັນຈຶ່ງຊ່ວຍປ້ອງ ກັນບໍ່ໃຫ້ແຜ່ນບັງຄັບໂຊ້ ແລະ ໂສ້ຫຼຸດອອກ. ອຸປະຕິເຫດທີ່ໂສ້ຫຼຸດອອກ ເປັນອຸບັດຕິເຫດທີ່ເກີດຂຶ້ນໃນຕອນທີ່ແຜ່ນບັງຄັບໂຊ້ໃກ້ຈະຄາ, ເຊິ່ງ

ຈະສາມາດປ້ອງກັນມັນໄດ້ໂດຍການດຶງໂສ້ອອກຢ່າງແຮງໃນຂະນະທີ່ມັນກຳລັງຍັງໝຸນຢູ່.

ຂັ້ນຕອນການເຮັດວຽກກຳຈັດງ່າໄມ້

ວຽກງານການກຳຈັດງ່າໄມ້ ເປັນວຽກງານທີ່ໃຊ້ເວລາ ແລະ ກຳລັງແຮງ. ການຮຽນຮູ້ກ່ຽວກັບວິທີການນຳໃຊ້ຈັກເລື່ອຍໄມ້ທີ່ມີປະສິດທິພາບ ຈະສາມາດຫຼຸດຜ່ອນກຳລັງແຮງໄດ້ຢ່າງຫຼວງຫຼາຍ.

ມີວິທີການ ທີ່ ເອີ້ນວ່າ “ລະບົບ 6 ຈຸດ” ໃນ ວຽກງານການກຳຈັດງ່າໄມ້ (ຮູບ 11-2 ແລະ 11-3). ເປັນວິທີທີ່ໄດ້ມີການເລີ່ມຕົ້ນຢູ່ພາກເໜືອ ຂອງເອີຣົບ ເຊິ່ງເປັນວິທີທີ່ເຮັດວຽກໂດຍການຄິດກ່ຽວກັບການເຄື່ອນໄຫວຂອງຈັກເລື່ອຍໄມ້ ດ້ວຍ ຂັ້ນຕອນ 1 ຫາ 6 ດັ່ງທີ່ສະແດງຢູ່ດ້ານລຸ່ມ ນີ້. ແຕ່ລະຂັ້ນຕອນ, ຈະບໍ່ໄດ້ໃຊ້ແຂນເພື່ອຮັບນ້ຳໜັກຂອງຈັກເລື່ອຍໄມ້, ແຕ່ຈະວາງຢູ່ເທິງຕົ້ນໄມ້ທີ່ລົ້ມ ຫຼື ຂາ ໃນຂະນະທີ່ເຈົ້າກ້າວໄປດ້ານໜ້າ. ທຳອິດ, ໃຫ້ຝຶກຈິນຕະນາການເຫັນພາບຫຼາຍໆຄັ້ງ ໂດຍບໍ່ຕ້ອງຕິດຈັກ, ຫຼັງຈາກນັ້ນ ແລ້ວຈຶ່ງຄ່ອຍຝຶກປະຕິບັດຕົວຈິງ.

ຂັ້ນຕອນທີ 1 ຫາ 6 ໃນຮູບທີ 11-2 ສະແດງໃຫ້ເຫັນການເຄື່ອນ ໄຫວ ຂອງແຕ່ລະຂັ້ນຕອນໃນຂະນະທີ່ຢືນຢູ່ດ້ານຂ້າງຂອງໄມ້ທີ່ຢູ່ຫ່ວຍ ແລ້ວດຳເນີນການກຳຈັດງ່າໄມ້ ຈາກ ລຳຕົ້ນ ໄປເຖິງ ປາຍຂອງຕົ້ນໄມ້ (ທາງໜ້າ). ຈະອະທິບາຍກ່ຽວກັບການເຄື່ອນໄຫວຂອງຮ່າງກາຍ ແລະ ຈັກເລື່ອຍໄມ້ ແຕ່ລະຂັ້ນຕອນ.

ຂັ້ນຕອນທີ 1

· ໃຫ້ຕົ້ນໄມ້ຮັບນ້ຳໜັກຂອງຈັກເລື່ອຍໄມ້.
· ຕັດງ່າໄມ້ດ້ວຍໃບມີດເທິງຂອງຈັກເລື່ອຍໄມ້ (ໂສ້ສົ່ງ).
· ຍ້າຍຈຸດສູນກາງຂອງແຮງໂນ້ມຖ່ວງຂອງຮ່າງກາຍໄປໃສ່ຂາເບື້ອງຂວາ.
· ວາງຕີນຂວາໃສ່ໄມ້ ແລ້ວຮັກສາທ່າທາງໃຫ້ຢູ່ໃນທ່າທີ່ສົມດູນ.

ຂັ້ນຕອນທີ 2

· ວາງແຜ່ນບັງຄັບໂຊ້ໃສ່ເທິງໄມ້
· ຕັດງ່າໄມ້ທີ່ຢູ່ດ້ານເທິງດ້ວຍໃບມີດເທິງ(ໂສ້ສົ່ງ).
· ວາງຈຸດສູນກາງຂອງແຮງໂນ້ມຖ່ວງຂອງຮ່າງກາຍໃສ່ຂາຊ້າຍ.
· ໃຊ້ຂາຂວາປະຄອງຈັກເລື່ອຍໄມ້ໄວ້.

ຂັ້ນຕອນທີ 3


·ຮັບນ້ຳຫນັກຂອງຈັກເລື່ອຍໄມ້ດ້ວຍໄມ້ ແລະ ຂາຂວາ.
·ຕັດງ່າໄມ້ອອກດ້ວຍໃບມີດລຸ່ມ (ໂສ້ດຶງ).
·ວາງຈຸດສູນກາງຂອງແຮງໂນ້ມຖ່ວງຂອງຮ່າງກາຍໃສ່ຂາຊ້າຍ.

ຂັ້ນຕອນທີ 4

· ຮັບນ້ຳຫນັກຂອງຈັກເລື່ອຍໄມ້ດ້ວຍໄມ້ ແລະ ຂາຂວາ.
· ຕັດງ່າໄມ້ດ້ວຍໃບມີດເທິງ (ໂສ້ສົ່ງ). ໃນກໍລະນີທີ່ເປັນງ່າໃຫຍ່ ແມ່ນ ສາມາດຕັດດ້ວຍໃບມີດລຸ່ມ (ໂສ້ດຶງ).

ຂັ້ນຕອນທີ 5

· ຮັບນ້ຳໜັກຂອງຈັກເລື່ອຍໄມ້ດ້ວຍໄມ້.
· ຕັດດ້ວຍໃບມີດເທິງ (ໂສ້ສົ່ງ).
· ໃນເວລານີ້, ໃຫ້ບັງຄັບຄັນເລັ່ງດ້ວຍນິ້ວໂປ້.
· ວາງຈຸດສູນກາງຂອງແຮງໂນ້ມຖ່ວງຂອງຮ່າງກາຍໃສ່ຂາທັງສອງຂ້າງ.



ຮູບ 11-2 ລະບົບ 6 ຈຸດເຊິ່ງເບິ່ງຈາກດ້ານໜ້າ

ຂັ້ນຕອນທີ 6

· ຮັບນ້ຳໜັກຂອງຈັກເລື່ອຍໄມ້ດ້ວຍໄມ້.

· ຕັດອອກດ້ວຍໃບມີດລຸ່ມ (ໂສ້ດ້ຽງ).

· ຍ້າຍຈຸດສູນກາງຂອງແຮງໂນ້ມຖ່ວງຂອງຮ່າງກາຍໄປໃສ່ຂາເບື້ອງຂວາ.

· ຕໍ່ໄປ, ປະຕິບັດຊ້ຳອີກຄັ້ງຈາກຂັ້ນຕອນທີ 1.

ໃນກໍລະນີທີ່ມີໄລຍະຫ່າງລະຫວ່າງງ່ຳໄມ້ຫຼາຍພໍສົມຄວນ ແມ່ນ ໃຫ້ປະຕິບັດຮອດຂັ້ນຕອນທີ 3, ຫຼັງຈາກນັ້ນໃຫ້ເອົາຈັກເລື່ອຍໄຟຟ້າກັບມາຢູ່ໃນຕຳແໜ່ງຂອງຂັ້ນຕອນທີ 1 ແລ້ວຍ້າຍໄປງ່ຳໄມ້ຕໍ່ໄປ.

ສຳລັບງ່ຳໄມ້ທີ່ຢູ່ລຸ່ມ,ໃຫ້ປະຕິບັດຕາມຂັ້ນຕອນ ທີ 1 ຫາ 6 ຊ້ຳໄປຊ້ຳມາ 2 ຄັ້ງ ແລ້ວຈຶ່ງຕັດທັງໝົດບາດດຽວ ຈະເປັນສິ່ງທີ່ເໝາະສົມທີ່ສຸດ. ສຳລັບທ່ອນໄມ້ທີ່ຖືກວາງໄວ້ຢູ່ເທິງພື້ນດິນ ແມ່ນ ໃຫ້ປັ່ນໄມ້ ແລ້ວຈຶ່ງຄ່ອຍຕັດງ່ຳໄມ້ທີ່ຢູ່ດ້ານລຸ່ມ.

ຕົວຢ່າງເຫດໄພພິບັດທີ່ເກີດຂຶ້ນໃນເວລາເຮັດວຽກກຳຈັດງ່ຳໄມ້ (ໃນຂະນະທີ່ກຳລັງກຳຈັດງ່ຳຢູ່ພື້ນທີ່ລາດຊັນ, ຄົນໄດ້ລົ້ມພ້ອມກັບຕົ້ນໄມ້ ແລ້ວກິ້ງລົງໄປພ້ອມກັນ ແລ້ວງ່ຳໄມ້ກໍໄດ້ສຽບແທງ)

<ສະພາບຂອງການເກີດ>

ໃນຂະນະທີ່ກຳລັງກຳຈັດງ່ຳໄມ້ຂອງຕົ້ນບີດຍີ່ປຸ່ນທີ່ຕົກລົງໄປພື້ນທີ່ທີ່ມີຄວາມລາດຊັນດ້ວຍຈັກເລື່ອຍໄມ້ ແລ້ວຕົ້ນໄມ້ດັ່ງກ່າວກໍໄດ້ມີ້ນ ແລະ ໄຫຼລົງໄປ. ຄຽງຄູ່ກັນນັ້ນ, ຜູ້ອອກແຮງງານກໍໄດ້ລົ້ມລົງດ້ວຍໄປນຳກັນ ເຊິ່ງໃນລະຫວ່າງນັ້ນ ງ່ຳໄມ້ທີ່ເຫຼືອຄ້າງຢູ່ກັບທ່ອນໄມ້ໄດ້ສຽບແທງໃສ່ຜູ້ອອກແຮງງານ. ນອກຈາກນີ້, ຍັງຄາດວ່າເປັນເຫດທີ່ຕົ້ນບີດຍີ່ປຸ່ນທີ່ຖືກປ້ຳໃຫ້ລົ້ມນັ້ນ ໄດ້ສະໄລ້ລົງໄປໄປທາງດ້ານຂ້າງ ດັ່ງນັ້ນ ຈຶ່ງເຮັດໃຫ້ມີບາດແຜເປີດ ແລະ ເຮັດໃຫ້ເສຍຊີວິດ.

<ສາເຫດ>

① ສະຖານທີ່ເຮັດວຽກເປັນພື້ນທີ່ລາດຊັນ 44 ອົງສາ.

② ມີຫິມະຕົກກອງທັບຖົມ ເຊິ່ງເປັນສະພາບພື້ນທີ່ທີ່ມີຄວາມມີ່ນ.

③ ຫຼັງຈາກປ້ຳໃຫ້ລົ້ມແລ້ວ ບໍ່ໄດ້ມີການປັບເສົາຄ້ຳ ແລະ ໄດ້ມີການດຳເນີນການກຳຈັດງ່ຳໄມ້ຢູ່ດ້ານລຸ່ມຂອງພື້ນທີ່ລາດຊັນ.

<ມາດຕະການ>


① ສຳລັບຕົ້ນໄມ້ທີ່ປ້ຳລົງມາແລ້ວ ທີ່ມີຄວາມສ່ຽງໃນການກິ້ງລົງ ຫຼື ສະໄລ້ລົງ ແມ່ນ ໃຫ້ດຳເນີນການປັກເສົາຄ້ຳໄວ້ກ່ອນແລ້ວຈຶ່ງຄ່ອຍດຳເນີນການຈຳກັດງ່ຳໄມ້. ພ້ອມທັງຮັບປະກັນໃຫ້ບັນດາຜູ້ອອກແຮງງານທີ່ກ່ຽວຂ້ອງຮັບຮູ້ຢ່າງລະອຽດກ່ຽວກັບມາດຕະການນີ້.

② ຢູ່ສະຖານທີ່ເຮັດວຽກ ໃຫ້ສ້າງອຸປະກອນປະຖົມພະຍາບານ ເຊັ່ນ:ອຸປະກອນສຳລັບຖຸດເລືອດ ໄປພ້ອມໆກັບການສ້າງລະບົບສື່ສານສຸກເສີນ ເຊັ່ນ: ໂທລະສັບມືຖື ແລະ ວິທະຍຸສື່ສານ.



ທຳອິດ, ວາງນ້ຳໜັກ ຂອງຈັກເລື່ອຍໄມ້ໄວ້ທີ່ມຸມຂວາ ຂອງດ້ານລຸ່ມ (ລັກສະນະ ແຕ່ບໍ່ແມ່ນເສັ້ນ) ແລະ ຫາກມີງ່ຳໄມ້ທີ່ ຕ້ອງໄດ້ຈຳກັດອອກ ແມ່ນໃຫ້ເອົາງ່ຳນັ້ນ ເປັນຈຸດສູນກາງຂອງການເຄື່ອນຄັນໂຍກ.





ການວິເຄາະການເຄື່ອນໄຫວຂອງລະບົບ 6 ຈຸດ ຈາກດ້ານຂ້າງ
ພາບທີ່ເບິ່ງໄມ້ໜາຈາກດ້ານເທິງ. ຍ້າຍແຜ່ນບັງຄັບໂສ້ຕາມລຳດັບ ❶ ~ ❻ ເພື່ອກຳຈັດງ່ຳໄມ້.

ໃຫ້ສັງເກດເບິ່ງການປ່ຽນແປງຕຳແໜ່ງຂອງມືຊ້າຍທີ່ຈັບດ້ານຈັບໃນຂັ້ນຕອນ ❶ ແລະ ❷. ເໜັງດ້ານຈັບໃນມືຢ່າງລາບລື່ນ, ແຕ່ນິ້ວໂປ້ມືບໍ່ເປີດອອກ ແລະ ຍັງຮັກສາຮູບຮ່າງ “ການກຳມື” .



ເອົາຂອບດ້ານໜ້າຂອງດ້ານລຸ່ມສຸດຂອງຈັກເລື່ອຍໄມ້ທີ່ວາງຢູ່ເທິງຕົ້ນໄມ້ປ້ຳລົງມາເປັນຈຸດສູນກາງ ແລ້ວ ໃຫ້ດຳເນີນການກຳຈັດງ່ຳໄມ້ດ້ວຍວິທີການເຄື່ອນເໜັງແບບຄັນໂຍກ. ຈາກບ່ອນນີ້ ໃຫ້ເອົາແຜ່ນບັງຄັບໂສ້ຍອງໃສ່ຕົ້ນໄມ້ທີ່ປ້ຳ ໄປພ້ອມໆກັບເຄື່ອນໄປຂັ້ນຕອນທີ ❷.

ຮູບ 11-3 ລະບົບ 6 ຈຸດ ເຊິ່ງເບິ່ງຈາກດ້ານຂ້າງ ①



ຕໍ່ໄປ, ໃນຂະນະທີ່ໃຊ້ດ້ານເທິງຂອງຫົວເຂົ່າຊ້າຍຮອງສ່ວນລຸ່ມສຸດຂອງຈັກເລື່ອຍໄມ້ ໃຫ້ເລື່ອນຈັກເລື່ອຍໄມ້ທາງໜ້າ ພ້ອມກັບເຄື່ອນຈຸດສູນກາງຂອງມວນແຮງໂນ້ມຖ່ວງຂອງຮ່າງກາຍໄປເທິງດ້ານໜ້າ ໃນຂັ້ນຕອນ ❷ ~ ❺ ເປັນ ຂໍ້ແຕກຕ່າງພຽງຢ່າງດຽວ ກໍຄືການເຄື່ອນທີ່ຂອງຈຸດສູນກາງຂອງມວນແຮງໂນ້ມຖ່ວງຂອງຮ່າງກາຍບວກ α.
ຫ້າມຍ່າງເດັດຂາດ).



ຕໍ່ໄປ, ໃຫ້ໃຊ້ຂໍ້ມືຂວາ ແລະ ຂໍ້ສອກ ວາງໄວ້ດ້ານເທິງຂອງຕົ້ນໄມ້ທີ່ຕັດປ້ຳລົງ ແລ້ວດຳເນີນໃນຂັ້ນຕອນທີ່ກົງກັນຂ້າມກັບຂັ້ນຕອນທີ 2, ຫັນມັນຄ້ອຍຂຶ້ນເມື່ອປຽບທຽບກັບ ຂັ້ນຕອນທີ ❷. ອີກເທື່ອ ໜຶ່ງ, ແລ້ວໃຫ້ສັງເກດເບິ່ງການປ່ຽນແປງຕຳແໜ່ງ ຂອງມືຊ້າຍທີ່ຈັບດ້ານຈັບ ອີກຄັ້ງ.
ເນື່ອງຈາກວ່າຕຳແໜ່ງ ຂອງດ້ານ ມີການເຄື່ອນຍ້າຍງ່າຍແບບນີ້ ສະນັ້ນ ຈຶ່ງຕ້ອງໃສ່ຖົງມືເພື່ອໃຫ້ມີຄວາມງ່າຍໃນການນຳໃຊ້ລະບົບ 6 ຈຸດ.



ໄປທີ່ຂັ້ນຕອນ ❶

ໃຫ້ກຳຈັດງ່າໄມ້ອອກຕາມຂັ້ນຕອນທີ ❶, ເມື່ອແຜ່ນບັງຄັບໂສ້ຢູ່ເບື້ອງກົງກັນຂ້າມກັບຕົ້ນໄມ້ທີ່ຈະປ້ຳຈົນສຸດ ແມ່ນ ໃຫ້ເຄື່ອນທີ່ໄປທາງດ້ານໜ້າ
ໂດຍເລື່ອນຈາກສ່ວນລຸ່ມຂອງຈັກເລື່ອຍໄມ້ໄປທາງເໜືອຂອງຕົ້ນໄມ້ທີ່ຈະປ້ຳ.

ຮູບທີ 11-3 ລະບົບ 6 ຈຸດ ເຊິ່ງເບິ່ງຈາກດ້ານຂ້າງ ②

ພື້ນຖານຂອງການຕັດໄມ້ທ່ອນ (ບັ່ນທ່ອນ), ການປະຕິບັດຕົວຈິງກ່ຽວກັບການຕັດໄມ້ທ່ອນ

ກວດກາເບິ່ງວິທີທີ່ໃຊ້ກຳລັງແຮງ

ຫຼັງຈາກກຳຈັດງ່າໄມ້ຂອງຕົ້ນໄມ້ທີ່ປ້ຳລົງແລ້ວ ຈະດຳເນີນການຕັດໄມ້ທ່ອນມົ້ນ. ການຕັດໄມ້ທ່ອນມົ້ນ ເປັນ ຂະບວນການຕັດຕົ້ນໄມ້ໃຫ້ມີ ຄວາມຍາວກົງກັບລັກສະນະຂອງຕົ້ນໄມ້ ແລະ ກົງກັບຈຸດປະສົງຂອງການນຳໃຊ້.

ໃນການຕັດໄມ້ທ່ອນມົ້ນ ຕ້ອງໄດ້ເອົາໃຈໃສ່ກ່ຽວກັບພູມສັນຖານອ້ອມຮອບຂອງຕົ້ນໄມ້ທີ່ຈະປ້ຳລົງ. ຫາກຜິດເຕັກນິກຂອງການເຮັດວຽກ ກໍ ຈະເຮັດໃຫ້ເກີດຄວາມສ່ຽງ ແລະ ອັນຕະລາຍ. ຕົວຢ່າງ, ຫາກຕັດກາຍເຂົ້າໄປໃນດ້ານທີ່ຖືກບີບ ແຜ່ນບັງຄັບໂຊ້ກໍຈະຄາ ແລະ ມີຄວາມຫຍຸ່ງຍາກ ໃນການເອົາອອກ. ນອກຈາກນີ້, ຫາກຕັດດ້ານທີ່ມີແຮງເຄັ່ງຫຼາຍເກີນໄປ, ຈະເຮັດໃຫ້ຕ້ອງໄດ້ດຶງອອກ ຫຼື ແຕກຫັກໄດ້.

ກ່ອນທີ່ຈະເລີ່ມເຮັດວຽກ, ຈຳເປັນຕ້ອງໄດ້ວາງແຜນຂະບວນການເຮັດວຽກ ເຊັ່ນ: ແຮງດຶງ ແລະ ແຮງກົງກັນຂ້າມ ກໍຄືແຮງບີບອັດ ເຊິ່ງເກີດ ຢູ່ດ້ານເທິງ ແລະ ດ້ານລຸ່ມຂອງຕົ້ນໄມ້ທີ່ຖືກປ້ຳລົງມາ ແລະ ໄມ້ທີ່ແຍກອອກຈາກກັນ ແລ້ວເຄື່ອນທີ່ແນວໃດຫຼັງຈາກຖືກຕັດ.

ນອກຈາກນີ້, ຫາກເຮັດວຽກຢູ່ດ້ານລຸ່ມຂອງພື້ນທີ່ລາດຊັນ, ມັນກໍອາດຈະເປັນໄປໄດ້ວ່າ ໄມ້ທີ່ຕັດອອກອາດຈະຕົກລົງໃສ່ຂາ ຫຼື ໄມ້ອາດຈະກິ້ງ ໄປ ແລ້ວຄືນໄປຄາຢູ່ດ້ານລຸ່ມຂອງໄມ້. ໃຫ້ດຳເນີນວຽກງານໂດຍການຢືນຢູ່ເທິງຄ້ອຍ, ໃນກໍລະນີຄາດວ່າຈະມີຄວາມສ່ຽງ ແລະ ອັນຕະລາຍ ແມ່ນ ໃຫ້ດຳເນີນມາດຕະການເພື່ອໃຫ້ໄມ້ທ່ອນຢູ່ໃນທ່າທີ່ໝັ້ນຄົງ ເຊັ່ນ: ການໃຊ້ເຊືອກ, ເຊືອກສະລິງ, ທ່ອນໄມ້.

ຂັ້ນຕອນການຕັດ ແລະ ສະພາບຄວາມເຄັ່ງຂອງໄມ້ (ການຖືດ້ານດຽວ, ການຖືສອງດ້ານ)

ການຕັດໄມ້ທ່ອນມົ້ນ ແລະ ການປ້ຳຕົ້ນໄມ້ ແມ່ນ ຄ້າຍຄືກັນຢູ່ບ່ອນຮອຍບາກ, ເຊິ່ງວິທີການຈະແຕກຕ່າງກັນເລັກໜ້ອຍ ຂຶ້ນຢູ່ກັບຄວາມຍາວ ຂອງແຜ່ນບັງຄັບໂສ້ ແລະ ຄວາມໜາຂອງໄມ້ ແລະ ຍັງຂຶ້ນກັບສະພາບການວາງໄມ້ນຳອີກດ້ວຍ.

ຂັ້ນຕອນການຕັດໄມ້ທ່ອນມົ້ນ

① ຫາກແຜ່ນບັງຄັບໂສ້ຍາວກວ່າເສັ້ນຜ່າສູນກາງຂອງໄມ້

ຈະແນະນຳ 2 ວິທີ ໃນກໍລະນີທີ່ແຜ່ນບັງຄັບໂສ້ຍາວກວ່າເສັ້ນຜ່າສູນກາງຂອງສ່ວນທີ່ເປັນເລື່ອຍ.

ວິທີການທີ 1, ດັ່ງທີ່ສະແດງຢູ່ໃນຮູບ ア ຂອງຮູບ 11-4 ເປັນການດຶງຈັກເລື່ອຍໄມ້ໂດຍການນຳໃຊ້ເຄື່ອຍແຫຼມທີ່ຢູ່ຈຸດ A ເຊິ່ງເປັນຕຳແໜ່ງ ທີ່ຕ່ຳ ເຊິ່ງເປັນເບື້ອງທີ່ຢູ່ໃກ້ກັບໄມ້ ແລ້ວຕັດໃຫ້ເປັນລັກສະນະຂອງຮູບວີໃນຄັ້ງດຽວ.

ວິທີ ທີ 2, ດັ່ງທີ່ສະແດງຢູ່ໃນຮູບイ ຂອງຮູບ 11-4 ວາງຈັກເລື່ອຍໄມ້ໃສ່ ຈຸດ A ເຊິ່ງຢູ່ດ້ານເທິງຂອງໄມ້ ແລ້ວຕັດດ້ວຍຄວາມກວ້າງປະມານ ເຄິ່ງໜຶ່ງຂອງແຜ່ນບັງເຄົາໂສ້ (ສ່ວນ①), ໃນຂະນະທີ່ດຶງຈັກເລື່ອຍໄມ້ເຂົ້າມາໃກ້ຕົນເອງ ລະມັດລະວັງບໍ່ໃຫ້ຍົກປາຍຂອງແຖບໄກບາຂຶ້ນ ແລ້ວໃຫ້ ຕັດ ②, ③ ແລະ ດ້ານທີ່ຢູ່ດ້ານໜ້າໃຫ້ຕ່ຳທີ່ສຸດເທົ່າທີ່ເປັນໄປໄດ້ ຫຼັງຈາກຄົ້ງທີ່ເຄື່ອຍຢູ່ຈຸດB ແລ້ວ ④, ⑤, ⑥ໃຫ້ຕັດເປັນຮູບລັກສະນະຂອງວີ.


② ໃນເວລາທີ່ແຜ່ນບັງຄັບໂສ້ສັ້ນກວ່າເສັ້ນຜ່າສູນກາງຂອງໄມ້

ໃນເວລາຕັດໄມ້ທີ່ມີເສັ້ນຜ່າສູນກາງຂະໜາດໃຫຍ່, ຄວາມຍາວຂອງແຜ່ນບັງຄັບໂສ້ອາດຈະສັ້ນກວ່າເສັ້ນຜ່າສູນກາງທີ່ຈະຕັດ. ໃນບົດນີ້, ຈະ ແນະນຳກ່ຽວກັບຂັ້ນຕອນການຕັດໃນເວລາທີ່ໄມ້ຢູ່ຕິດກັບພື້ນດິນ ແລະ ໃນເວລາທີ່ສາມາດປ່ອນແຖບໄກບາເຂົ້າໄປກ້ອງຕົ້ນໄມ້.


ຫາກໄມ້ຕິດຢູ່ເທິງໜ້າດິນ, ດັ່ງທີ່ສະແດງ ໃນຮູບウຂອງຮູບ 11-5, ທຳອິດໃຫ້ຄົ້ງທີ່ເຄື່ອຍຂອງຈັກເລື່ອຍໄມ້ ຈຸດ A ທີ່ຢູ່ດ້ານເທິງຂອງໄມ້, ຈາກນັ້ນຍົກແຜ່ນບັງຄັບໂສ້ຂຶ້ນຈົນເປັນລວງຕັ້ງ ແລ້ວ ຕັດຈຸດ① ແລະ ②. ຕໍ່ໄປ, ໃນຂະນະທີ່ຕັດ ③ ໃຫ້ຍ້າຍເຄື່ອຍໄປຫາຈຸດ B ແລ້ວຕັດ ④, ຫຼັງຈາກນັ້ນ ໃນຂະນະທີ່ຕັດ ⑤ ໃຫ້ຍ້າຍເຄື່ອຍໄປຫາຈຸດ C ແລ້ວ ຕັດ ⑥. ສຸດທ້າຍ, ໃນຂະນະທີ່ດຶງຈັກເລື່ອຍໄມ້ ໃຫ້ໃຊ້ຄວາມຍາວທັງໝົດ ຂອງແຜ່ນບັງຄັບໂສ້ ແລ້ວ ຕັດ ⑦.

ຫາກສາມາດປ່ອນແຜ່ນບັງຄັບໂສ້ເຂົ້າໃສ່ກ້ອງຕົ້ນໄມ້, ດັ່ງທີ່ສະແດງຢູ່ໃນຮູບ エ ຂອງຮູບທີ 11-5 ໃຫ້ຕັດ ① ແລະ ② ແລ້ວຫຼັງຈາກນັ້ນ ໃຫ້ຕັດ ③ຈາກດ້ານລຸ່ມ. ສ່ວນທີ່ເຫຼືອ ແມ່ນ ຄືກັນກັບຂັ້ນຕອນ ウ.

ດ້ວຍຕົ້ນໄມ້ທີ່ມີເສັ້ນຜ່າກາງຂະໜາດໃຫຍ່ເຊັ່ນນີ້, ຈະຕ້ອງຍ້າຍຕຳແໜ່ງຂອງເຄື່ອຍຫຼາຍຄັ້ງຫຼັງຈາກຕັດໄມ້ອີກດ້ານໜຶ່ງ. ສຳລັບເຫດຜົນນີ້, ມັນງ່າຍທີ່ຈະຖືກດຶງແລ້ວງໍ, ດັ່ງນັ້ນຈຳເປັນຕ້ອງໄດ້ລະມັດລະວັງ. ເພື່ອປ້ອງກັນການຖືກດຶງແລ້ວງໍນີ້, ການນຳໃຊ້ມາດຕະການທີ່ເໝາະສົມ ຖື



ຮູບ 11-4 ການຕັດໄມ້ທ່ອນມົນໃນກໍລະນີທີ່ຄວາມຍາວຂອງແຜ່ນບັງເຄົ້າໂສ້ຍາວກວ່າເສັ້ນຜ່າສູນກາງຂອງໄມ້



ຮູບ 11-5 ການຕັດໄມ້ທ່ອນມົນໃນກໍລະນີທີ່ຄວາມຍາວຂອງແຜ່ນບັງຄັບໂສ້ສັ້ນກວ່າເສັ້ນຜ່າສູນກາງຂອງໄມ້


ວ່າເປັນຄວາມຄິດທີ່ດີ ເຊັ່ນ: ການແຕ້ມເສັ້ນລ່ວງໜ້າໃນລັກສະນະທີ່ສາມາດໃຊ້ຕາເຫັນໄດ້ຢູ່ບ່ອນທີ່ຈະຕັດໄມ້ທ່ອນມົນ.

(ຈຸດທີ່ຕ້ອງເອົາໃຈໃສ່)


ໃນການຕັດໄມ້ທີ່ມີເສັ້ນຜ່າກາງຂະໜາດໃຫຍ່, ແຜ່ນບັງຄັບໂສ້ມັກຈະຄາຢູ່ໃນໄມ້ ແລະ ມັນກໍ່ເປັນເລື່ອງທີ່ຍາກຫຼາຍສຳລັບແຜ່ນບັງຄັບທີ່ຈະບໍ່ຄາໃນເວລາທີ່ຕັດໄມ້ທ່ອນມົນຢູ່ເທິງພື້ນທີ່ທີ່ມີຄວາມລາດຊັນ. ຫາກແຜ່ນບັງຄັບໂສ້ຄາ ມັນຈະດຶງອອກໄດ້ຍາກ ເຊິ່ງເຖິງວ່າຈະຕອກລີ້ມເຂົ້າໄປກໍຕາມມັນກໍຈະບໍ່ຫຼຸດອອກມາໄດ້ງ່າຍ. ຈຳເປັນຕ້ອງໄດ້ເອົາໃຈໃສ່ລະມັດລະວັງ ໂດຍການຕອກລີ້ມໃສ່ກ່ອນທີ່ມັນຈະຄາ.

ເຫັນເຫດການທີ່ແຜ່ນບັງຄັບໂສ້ຄາ ແລ້ວຈຶ່ງຕອກລີ້ມ ແລ້ວເລັ່ງເຄື່ອງຈັກຢ່າງແຮງ ແຕ່ ແຜ່ນບັງຄັບໂສ້ ແລະ ໂສ້ກໍບໍ່ຫຼຸດອອກ, ສິ່ງນີ້ເປັນສິ່ງທີ່ອັນຕະລາຍຫຼາຍ. ຫາກມັນຄາແລ້ວ ເຖິງຈັກຈະຍັງແລ່ນຢູ່ກໍຕາມ ໂສ້ກໍຈະບໍ່ປິ່ນ ສະນັ້ນ ຈຶ່ງເຮັດໃຫ້ຄາດມື່ນ ແລະ ເຮັດໃຫ້ແຜ່ນຄາດ ແລະ ດ້ານຄາດຫຼຸ້ຍຫ້ຽນ ແລະ ໃນບາງກໍລະນີ ອາດເຮັດໃຫ້ສະປິງຄາດຢຶດອອກ ຫຼື ແຕກຫັກໄດ້.

ນອກຈາກນັ້ນ, ໃນກໍລະນີທີ່ມັນຄາ, ມັກຈະເຫັນວ່າມີຄົນມັກງັດແຜ່ນບັງຄັບໂສ້ເພື່ອຢາກໃຫ້ມັນຫຼຸດອອກ ສິ່ງນີ້ກໍຖືວ່າເປັນສິ່ງທີ່ ຄວາມສ່ຽງ



ຮູບ 11-6 ການຕັດໄມ້ທ່ອນມົນໂດຍການຮອງເບື້ອງດຽວ



ຮູບ 11-7 ການຕັດໄມ້ທ່ອນມົນໂດຍການຮອງສອງເບື້ອງ

ແລະ ອັນຕະລາຍ. ມັນບໍ່ພຽງແຕ່ເຮັດໃຫ້ແຜ່ນບັງຄັບໂສ້ປ່ຽນຮູບ ແຕ່ຍັງເຮັດໃຫ້ສ່ວນທີ່ຕິດຢູ່ກັບແຜ່ນບັງຄັບໂສ້ ແລະ ດ້ານຈັບໄດ້ຮັບຄວາມເສຍຫາຍນຳອີກ, ກໍລະນີຮ້າຍແຮງ ແມ່ນ ຈະເຮັດໃຫ້ຈັກເລື່ອຍໄມ້ ໃຊ້ງານບໍ່ໄດ້ ສະນັ້ນ ຈະຕ້ອງໄດ້ເອົາໃຈໃສ່ລະມັດລະວັງ.

ການຕັດໄມ້ທ້ອນມົນດ້ວຍ ວິທີຖືເບື້ອງດຽວ ແລະ ວິທີຖືສອງເບື້ອງ


ໃນການຕັດໄມ້ທ່ອນມົນ,ຈຳເປັນຕ້ອງຄາດຄະເນວ່າໄມ້ມີແຮງປະເພດໃດແນ່ (ແຮງບີບອັດ, ແຮງດຶງ) ທີ່ກຳລັງເຄື່ອນໄຫວຢູ່ດ້ານເທິງ ແລະ ດ້ານລຸ່ມຂອງຕົ້ນໄມ້ ແລະ ໄມ້ທີ່ແຍກອອກມາຈະເຄື່ອນທີ່ໄປແບບໃດ. ດ້ານລຸ່ມນີ້ ຈະແນະນຳກ່ຽວກັບວິທີການພື້ນຖານສຳລັບການຕັດໄມ້ຖ່ອນມົນ ແບບຮອງດ້ານດຽວ ແລະ ຮອງສອງດ້ານ ເຊິ່ງຢູ່ໃຕ້ແຮງດຶງ ແລະ ແຮງບີບ.

① ການຕັດໄມ້ທ່ອນມົນໂດຍການຮອງດ້ານດຽວ


ໃນສະພາບແບບນີ້, ແຮງດຶງຈະເຄື່ອນໄຫວຢູ່ດ້ານເທິງຂອງໄມ້ ສ່ວນແຮງບີບ ຈະເຄື່ອນໄຫວຢູ່ດ້ານລຸ່ມ. ດັ່ງທີ່ສະແດງຢູ່ເບື້ອງຂວາຂອງຮູບ 11-6, ທຳອິດໃຫ້ຕັດຂຶ້ນຈາກດ້ານລຸ່ມໂດຍການໃຊ້ສັນຂອງແຜ່ນບັງຄັບໂສ້ປະມານ 1/3 ຂອງເສັ້ນຜ່າສູນກາງ, ຫຼັງຈາກນັ້ນໃຫ້ເອົາແຜ່ນບັງຄັບໂສ້ອອກແລ້ວ ເລື່ອນໄປດ້ານເທິງ ແລ້ວຕັດລົງລວງນອນ. ສິ່ງທີ່ທ່ານຕ້ອງໄດ້ເອົາໃຈໃສ່ລະມັດລະວັງ ແມ່ນ ການຕ້ອງພິຈາລະນາວິທີດຽວກັນກັບການປ້ອງກັນບໍ່ໃຫ້ມັນໂຄ້ງງໍໃນເວລາຕັດໄມ້ທີ່ມີເສັ້ນຜ່າສູນກາງຂະໜາດໃຫຍ່ຕາມທີ່ກ່າວໄວ້ໃນເບື້ອງຕົ້ນ ໂດຍບໍ່ກໍ່ໃຫ້ເກີດການໂຄ້ງງໍ. ນອກຈາກນີ້, ໃຫ້ເອົາໃຈໃສ່ລະມັດລະວັງ ໃນເວລາຕັດໄມ້ອອກຈາກກັນ ແມ່ນ ບໍ່ໃຫ້ກ້າວຕີນເຂົ້າໄປຢູ່ກ້ອງໄມ້ ເພາະມັນຈະລົ້ມລົງມາໃສ່.

② ການຕັດໄມ້ທ່ອນມົນໂດຍການຮອງສອງດ້ານ

ໄມ້ທີ່ມີລັກສະນະພາດຢູ່ແບບຂື່ ຈະມີແຮງບີບອັດຢູ່ດ້ານເທິງຂອງຕົ້ນໄມ້ ແລະ ຈະມີແຮງດຶງຢູ່ດ້ານລຸ່ມຂອງຕົ້ນໄມ້. ໃຫ້ຕັດໄມ້ທ່ອນມົນຈາກດ້ານທີ່ຢູ່ກົງກັນຂ້າມກັບໄມ້ທີ່ຮອງເບື້ອງດຽວດັ່ງທີ່ສະແດງຢູ່ເບື້ອງຂວາຂອງຮູບ 11-7. ໃນເວລາຕັດໄມ້ທ່ອນມົນ, ເມື່ອງຈາກວ່າມັນມັກຈະຈີກຂາດ ແລະ ແຜ່ນບັງຄັບໂສ້ກໍມັກຈະຄາງ່ຽ ສະນັ້ນຕ້ອງໄດ້ເອົາໃຈໃສ່ລະມັດລະວັງ.



ຮູບ 11-8 ສາມາດຕັດໄມ້ໜາໄດ້ຢ່າງງ່າຍດາຍ ໂດຍການກົດເດືອເຂົ້າໄປໃນທ່ອນໄມ້ ແລະ ຈັບມືດ້ານຈັບດ້ານໜ້າດ້ວຍມືຊ້າຍ ໃນຂະນະທີ່ຍົກດ້ານຈັບດ້ວຍມືຂວາ



ຮູບ 11-9 ການນຳໃຊ້ລີ້ມ

ຕ້ອງເອົາໃຈໃສ່ລະມັດລະວັງໃນເວລາທີ່ຕັດຈາກດ້ານເທິງ ແລະ ດ້ານລຸ່ມໃຫ້ກົງກັນ, ເມື່ອງຈາກວ່າ ຫາກເສັ້ນຜ່າສູນກາງໄມ້ຍິ່ງໃຫຍ່ຊ່ຳໃດກໍຍິ່ງມີອາດກາດທີ່ຈະໂຄ້ງງໍ, ຫຼຸດອອກຈາກບ່ອນຕັດ ຫຼື ຮອຍແຕກແຫງຫຼາຍຂຶ້ນ. ວິທີໜຶ່ງໃນການຫຼີກລ່ຽງການເຮັດໃຫ້ໂຄ້ງງໍ ແມ່ນ ການເບິ່ງຜ່ານສ່ວນທີ່ຈະເລື່ອຍ ແລ້ວແຕ້ມເສັ້ນໄວ້ລ່ວງໜ້າ.

ຄວາມສ່ຽງ ແລະ ອັນຕະລາຍ ທີ່ລີ້ຊ້ອນຢູ່ໃນການເຮັດວຽກ


① ມັນບໍ່ແມ່ນພຽງແຕ່ມີຄວາມສ່ຽງ ແລະ ອັນຕະລາຍ ໃນການເຮັດວຽກຢູ່ພື້ນທີ່ທີ່ມີຄວາມລາດຊັນເທົ່ານັ້ນ ແຕ່ເວລາຕັດໄມ້ທ່ອນມົນໃນຕອນທີ່ໄມ້ກອງຊ້ອນກັນ (ກອງກັນແບບບໍ່ເປັນລະບຽບ) ກໍມີຄວາມສ່ຽງ ແລະ ອັນຕະລາຍເຊັ່ນກັນ.

ໃນກໍລະນີນີ້ ແມ່ນ ຈະຕັດໄມ້ທ່ອນມົນຕາມລະດັບຈາກໄມ້ທີ່ທີ່ຢູ່ເທິງສຸດ, ແຕ່ວ່າ ເຖິງແມ່ນວ່າໄມ້ທີ່ກອງຊ້ອນກັນຢູ່ຈະມີຄວາມໝັ້ນຄົງໃນລະດັບໃດໜຶ່ງກໍຕາມ, ເມື່ອໄມ້ທ່ອນໜຶ່ງຖືກຕັດ ກໍຈະເຮັດໃຫ້ຈຸດສູນກາງຂອງການຖ່ວງນ້ຳໜັກປ່ຽນໄປ ແລ້ວຈະເຮັດໃຫ້ສູນເສຍຄວາມໝັ້ນຄົງ ແລະ ເກີດການກົ້ງ ສະໄລ້ລົງໄປຕ່າງໆເປັນຕົ້ນ, ສະນັ້ນ ຈຳເປັນຕ້ອງຕັດໄມ້ທ່ອນມົນໃຫ້ໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ເພື່ອປ້ອງກັນບໍ່ໃຫ້ທັບຊ້ອນກັນ.

② ເພື່ອຮັບປະກັນຄວາມປອດໄພໃນເວລາເຮັດວຽກຢູ່ເທິງພື້ນທີ່ທີ່ມີຄວາມຊັນ, ຕາມຫຼັກການແລ້ວ ແມ່ນ ໃຫ້ເອົາດ້ານເທິງຂອງທາງລາດຊັນເປັນຕຳແໜ່ງເຮັດວຽກ ໂດຍສຳພັນກັບໄມ້.

ສິ່ງທີ່ສຳຄັນທີ່ສຸດທີ່ຕ້ອງໄດ້ເອົາໃຈໃສ່ລະມັດລະວັງໃນເວລາຕັດໄມ້ທ່ອນມົນ ແມ່ນ ການກົ້ງຂອງໄມ້. ຕົ້ນໄມ້ທີ່ປ້ຳລົງມາ ແມ່ນ ມີຄວາມໝັ້ນຄົງເພາະວ່າລຳຕົ້ນ ແລະ ງ່າຂອງມັນສຳພັດພື້ນ, ແຕ່ຄວາມໝັ້ນຄົງຂອງມັນຈະຫາຍໄປເມື່ອດຳເນີນການກຳຈັດງ່າໄມ້ ແລະ ການຕັດໄມ້ທ່ອນມົນ ແລະ ອາດຈະມີການກົ້ງ ຕ່າງໆເປັນຕົ້ນ. ເຖິງວ່າໃນລະຫວ່າງການເຮັດວຽກ ໄມ້ຈະເຄື່ອນອອກມາກໍຕາມ ແຕ່ຍ້ອນວ່າເຮັດວຽກຢູ່ດ້ານເທິງຄ້ອຍ ສະນັ້ນ ຈຶ່ງສາມາດຫຼີກລ່ຽງຄວາມສ່ຽງ ແລະ ອັນຕະລາຍໄດ້, ແຕ່ຫາກເຮັດວຽກຢູ່ຕີນຄ້ອຍກໍຈະບໍ່ສາມາດຫຼີກລ່ຽງອັນຕະລາຍໄດ້.

ສະນັ້ນ, ຫາກມີຄວາມຈຳເປັນແທ້ໆທີ່ຈະຕ້ອງໄດ້ເຮັດວຽກຢູ່ຕີນຄ້ອຍ ແມ່ນ ຕ້ອງດຳເນີນມາດຕະການທີ່ພຽງພໍເພື່ອປ້ອງກັນບໍ່ໃຫ້ໄມ້ກົ້ງ ເຊັ່ນ: ຕັດຮາກໄມ້ເພື່ອໃຫ້ໄມ້ຢູ່ໃນຄວາມສະຫງົບ ຫຼື ຕອກໄມ້ຄ້ຳ ຫຼື ຄຶງດ້ວຍເຊືອກຕ່າງໆເປັນຕົ້ນ. ນອກນີ້, ກ່ອນທີ່ຈະເລີ່ມເຮັດວຽກໃຫ້ເອົາໃຈໃສ່ລະມັດລະວັງພຸ່ມໄມ້, ງ່າໄມ້ຕ່າງໆອອກ ເພື່ອຕາມກະກຽມບ່ອນຢືນ.



ຮູບ 11-10 ຕຳແໜ່ງຂອງ ລິ້ມສຳລັບຕົ້ນໄມ້ເສັ້ນຜ່າສູນກາງຂະໜາດນ້ອຍ ເຖິງ ຂະໜາດກາງ



ຮູບ 11-11 ການເຮັດວຽກຢູ່ຕີນຄ້ອຍ ຈະມີຄວາມສ່ຽງ ແລະ ອັນຕະລາຍໄດ້ຫາກໄມ້ກິ້ງ.

③ ໃນກໍລະນີເຮັດວຽກຮ່ວມກັນ 2 ຄົນ ຄວນປະສານງານກັນໃຫ້ດີ, ໃຫ້ເຂົ້າໃຈສະພາບການເຄື່ອນໄຫວຂອງອີກຄົນ ແລະ ຄວາມຄືບໜ້າຂອງວຽກສະເໝີ, ເຊິ່ງເມື່ອຈະເລີ່ມວຽກງານການຕັດ ແມ່ນໃຫ້ຢຸດວຽກ ແລ້ວ ສົ່ງສັນຍານ, ຫຼັງຈາກກວດກາການຕອບຮັບຈາກອີກ ຄົນໜຶ່ງແລ້ວ ຈຶ່ງລົງມືຕັດໄມ້ໃຫ້ຂາດອອກຈາກກັນ.

ຕົວຢ່າງຂອງເຫດອຸບັດຕິເຫດໃນເວລາເຮັດວຽກການ ຕັດໄມ້ທ່ອນມົນ

ໃນວຽກງານການຕັດໄມ້ທ່ອນມົນ ມີເຫດທີ່ໄມ້ກິ້ງໄປຕຳແລ້ວເສຍຊີວິດ

<ສະພາບຂອງການເກີດ>

ຫຼັງຈາກໄດ້ຕັດຕົ້ນຊູງີປະມານ 10 ຕົ້ນທີ່ຢູ່ເທິງສັນພູເຊິ່ງເປັນຫົນທາງແລ້ວ ກໍໄດ້ເລີ່ມວຽກແປຮູບໄມ້. ເມື່ອງຈາກວ່າຕົ້ນໄມ້ທີ່ປ້ຳລົງມາກອງທັບຊ້ອນກັນ, ດັ່ງນັ້ນ ແຮງສັ່ນສະເທືອນຂອງຈັກເລື່ອຍໄມ້ທີ່ເຮັດໃຫ້ດ້ານເທິງຂອງໄມ້ເລື່ອນ ແລະ ຕົກລົງມາກະທົບໂດຍກົງກັບຜູ້ໄດ້ຮັບເຄາະຮ້າຍທີ່ກຳລັງເຮັດວຽກກຳຈັດງ່າໄມ້ຂອງຕົ້ນໄມ້ທີ່ປ້ຳລົງມາ ເຊິ່ງຢູ່ຕີນຄ້ອຍ.

<ສາເຫດ>

① ບໍ່ແມ່ນແຕ່ສະພາບທີ່ຕົ້ນໄມ້ປ້ຳລົງມາທັບຊ້ອນກັນ ແລະ ມີສະພາບມົ່ນງ່າຍເທົ່ານັ້ນ ແຕ່ ຍັງບໍ່ມີການສ້າງມາດຕະການໃນປ້ອງກັນການຕົກນຳອີກ.

② ໃນການປະຕິບັດວຽກງານ ເຊັ່ນ: ການຕັດໄມ້ ຫຼື ການແປຮູບໄມ້, ຜູ້ອອກແຮງງານໄດ້ເຂົ້າໄປໃນພື້ນທີ່ດັ່ງກ່າວ ແລ້ວປະຕິບັດວຽກງານເຖິງແມ່ນວ່າຈະຫ້າມບໍ່ໃຫ້ຜູ້ອອກແຮງງານຕ່າງໆເຂົ້າໄປກ້ອງສະຖານທີ່ນັ້ນແລ້ວກໍຕາມ.

③ ໃນການປະຊຸມຕອນເຊົ້າ ຫົວໜ້າວຽກໄດ້ໃຫ້ຄຳແນະນຳສະເພາະກ່ຽວກັບການມອບໝາຍໜ້າວຽກ ແຕ່ບໍ່ໄດ້ວາງແຜນກ່ຽວກັບມາດຕະການດ້ານຄວາມປອດໄພທີ່ຊັດເຈນ.

<ມາດຕະການ>

① ໃຊ້ມາດຕະການຕ່າງໆ ເຊັ່ນ: ໃຊ້ໄມ້ສຽບຄ້ຳໄວ້ ເພື່ອປ້ອງກັນບໍ່ໃຫ້ໄມ້ທ່ອນມົນທີ່ຕັດຕົກລົງມາ.

② ຫ້າມເຮັດວຽກເທິງລຸ່ມ, ໃນກໍລະນີທີ່ຈຳເປັນຕ້ອງເຂົ້າໄປທາງດ້ານລຸ່ມ ຢ່າງຫຼີກລ່ຽງບໍ່ໄດ້ ແມ່ນ ໃຫ້ຕິດຕໍ່ກັບຜູ້ອອກແຮງງານທີ່ຢູ່ດ້ານເຖິງເພື່ອໃຫ້ຜູ້ກ່ຽວຢຸດວຽກ, ຫຼັງຈາກກວດກາຄວາມປອດໄພແລ້ວ ຈຶ່ງເຂົ້າໄປ.

③ ສ້າງແຜນວຽກຢ່າງລະອຽດ ແລະ ມາດຕະການດ້ານຄວາມປອດໄພທີ່ຊັດເຈນ ແລະ ແຈ້ງໃຫ້ຜູ້ອອກແຮງງານຮັບຮູ້ເປັນຢ່າງດີ.

ເອກະສານຊ້ອມທ້າຍ

ໂຮມຄຳສັບ

ລາຍການອຸປະກອນຄວາມປອດໄພ

ດັດຊະນີ

ໂຮມຄຳສັບ ພາສາລາວ → ພາສາຍີ່ປຸ່ນ

ພາສາລາວ	ພາສາຍີ່ປຸ່ນ
ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ	厚生労働省
ການກວດກາ	点検
ການກວດກາແຕ່ລະໄລຍະ	定期点検
ການເກັບກ່ຽ	除伐
ການເກັບກ່ຽວໄມ້	集材
ການຄັດສັນຕົ້ນກ້າ	保育間伐
ການຄັດຕົ້ນກ້າ	挿し木苗
ການຄຸ້ມຄອງສະຖານທີ່	現場管理
ການຄຸ້ມຄອງສຸຂະພາບ	健康管理
ການຄວບຄຸມສັດຕູພືດ	獣害防除
ການສຳຫຼວດເບື້ອງຕົ້ນ	事前踏査
ການຈັດສັນໝູ	山割り
ການຈັດປ່າ	間伐作業
ການໃຊ້ປະໂຫຍດຈາກການຕອນ	利用間伐
ການອອກກ່ຳລັ້ງກາຍເພື່ອ ປ້ອງກັນບໍ່ໃຫ້ເຈັບແອວ	腰痛予防体操
ການຕັດ	伐倒
ການຕັດງ່າໄມ້	枝払い
ການຕັດຕົ້ນຕໍ ການຕັດຕໍ	主伐
ການຕັດແຕ່ງກິ່ງໄມ້	枝打ち
ການຕັດຮາກເຄືອໄມ້	つるの根元切断
ການບໍລິຫານສຸຂະພາບ	健康経営
ການປະເມີນຄວາມສ່ຽງ	リスクアセスメント
ການປຸກ	植え付け
ການປຸກ	植栽
ການປຸກປ່າ	造林
ການປ້ອງກັນການລົ້ມ	転倒防止
ການລັບໃບມີດ	刃研ぎ
ການຜະລິດວັດສະດຸ	素材生産
ການຝຶກອົບຮົມກ່ຽວກັບການ ຄາດຄະເນອັນຕະລາຍ	危険予知トレーニング
ການເອົາໃຈໃສ່ຄວາມປອດໄພ	安全に関する留意
ການເຮັດວຽກກາງແຈ້ງ	屋外労働
ການເຮັດວຽກບ່ອນຕ່ຳ ແລະ ບ່ອນສູງ	上下作業
ການເຮັດວຽກບ່ອນຕ່ຳ ແລະ ບ່ອນສູງ ແລະ ຕັດຫຍ້າ	上下作業・往復刈り禁止
ການຮຽນຮູ້ກ່ຽວກັບຄວາມປອດ ແລະ ສຸຂະສຶກສາ	安全衛生教育
ກິດຈະກຳ HH	HH活動
ກິດຈະກຳການຄາດຄະເນ ອັນຕະລາຍ	危険予知活動
ກິດຈະກຳການເບິ່ງເຫັນ ອັນຕະລາຍ	危険の見える化活動
ກົດການຂອງເຮັນຣິດ (Heinrich)	ハインリッヒの法則
ກອງປະຊຸມຄາດຄະເນອັນຕະລາຍ	危険予知ミーティング
ກ່ຽວ	カマ

ພາສາລາວ	ພາສາຍີ່ປຸ່ນ
ຂາດ	断線
ຄົມ	アサリ出し
ຄູ່ມືການກິນຢ່າງສົມດຸນ	食事バランスガイド
ຄ້ອຍ	傾斜地
ຄັດເຕີ	カッター
ຄົນທີ່ມີທັກສະ	技能者
ເຄື່ອງ	機械
ເຄື່ອງເກັບກ່ຽວໄມ້	集材機
ເຄື່ອງຈັກ 2 ຮອບ	2サイクルエンジン
ເຄື່ອງຕັດເຄືອ	つる切り
ເຄື່ອງຕັດລູກມ໋ົນ	玉切り
ເຄື່ອງຕັດຫຍ້າ	刈払機
ເຄື່ອງນຸ່ງເຮັດວຽກ	作業衣
ເຄື່ອງປັ້ນດິນເຜົາ	地拵え
ເຄື່ອງມື	道具
ເຄື່ອງມື	手工具
ເຄື່ອງວັດແທກຄວາມເລິກ	デプスゲージ
ເຄື່ອງໝາຍອັນຕະລາຍ	危険マーカー
ຄວາມເສຍຫາຍຂອງປ່າໄມ້	森林被害
ຄວາມສ່ຽງຕໍ່ການດຳລົງຊີວິດ	生活習慣リスク
ຄວາມປອດໄພ	安全
ຄວາມປອດໄພ	安全力
ຄວາມຜິດປົກກະຕິທີ່ເກີດຈາກ ການສັ່ນ	振動障害
ຄວາມລາດຊັນດ້ານຫຼັງ	バックスロープ型
ຄວາມຮັບຜິດຊອບຕໍ່ສັງຄົມຂອງ ປ່າໄມ້	林業の社会的責任
ງ່າຍອດ	ため枝
ງ່	キンク
ຈ່າຍເງິນຄືນ	キックバック
ຈຸດເດັ່ນ	目立て
ສະຕິກເກີທີ່ຊີ້ບອກຄວາມ ອັນຕະລາຍ	危険ステッカー
ສາຍໂສ້	ソーチェーン
ສາຍເຊືອກ	ワイヤロープ
ສາຍພານວ່າວງ	ガイドバー
ສາຍຮັດນິລະໄພພາດບ່າ 3 ຈຸດ	3点支持肩掛けバンド
ສັດຕູພືດປ່າ	森林害虫
ສັດທີ່ເປັນອັນຕະລາຍ	危険生物
ສັດປ່າ	野生動物
ດ້ານ	ナタ
ຕະໄບ	ヤスリ
ຕັດໄມ້	伐木造材
ຕັດຫຍ້າ	下刈り
ຕັດຫຍ້າ	往復刈り
ຖົງມືຕ້ານການສັ່ນສະເທືອນ	防振手袋
ຖາດກ້າເບ້ຍ	コンテナ苗

พาสาลาว	พาสายี่ปุ่น
ທົ່ວໄປ	共通
ນ້ຳມັນໂສ້	チェーンオイル
ນ້ຳມັນປະສົມ	混合燃料
ແໝວອັດຫູ	耳栓
ໃບເລື່ອຍ	鋸刃
ໃບເລື່ອຍຕັດຫຍ້າ	刈刃
ໃບເລື່ອຍມົນ	笹刈刃
ໃບເລື່ອຍວົງເດືອນ	チップソー
ບ່ຳລຸງຮັກສາ	メンテナンス
ເບ້ຍ	苗木
ເບ້ຍ	実生苗
ເບ້ຍທີ່ມີແຕ່ກ້ຳແລະຮາກ	裸苗
ບ່ອນຕັດໄມ້	伐採箇所
ປະປົນ	スプライス
ປະເພດຂໍເກາະ	フック型
ປ່າທຳມະຊາດ	天然林
ປ່າປະດິດ	人工林
ເປັນລົມ	熱中症
ປາຍແໝມຂອງໃບເລື່ອຍຕັດຫຍ້າ	刈刃の目立て
ປັດໄຈຄວາມສ່ຽງ	危険因子
ແຜນການເຮັດວຽກ	作業計画
ເຜິ້ງ	ハチ
ເຜິ້ງຕອດ	ハチ刺され
ຜ້າຄອບປ້ອງກັນເສດແຕກຫັກ	飛散防護カバー
ພະຍາດ	病害
ພະຍາດອາຊີບ	職業病
ພາວະທີ່ຄົນງານບ່ສາມາດເຮັດວຽກໄດ້ຕັ້ມທີ່	プレゼンティーイズム損失
ພືດແລະສັດທີ່ເປັນອັນຕະລາຍ	有害な動植物
ພືດແລະສັດອັນຕະລາຍ	危険な動植物
ໄມ້ແປຮູບ	造材
ມາດຕະການຄວາມປອດໄພ	安全対策
ມາດຕະການຕ້ານກວາງ	シカ対策
ມຸມພາຍໃນ	内角
ຢຸດຕິໄພພິບັດ	無災害
ລະດັບຄວາມເມື່ອຍລ້າທີ່ສະສົມ	疲労蓄積度
ລະບົບ 6 ຈຸດ	６ポイントシステム
ໂລກແພ້ຄວາມຮ້ອນ	熱射病
ເລື່ອຍ	チェーンソー
ເລື່ອຍ	ノコ
ເລື່ອຍມື	手ノコ
ວິທີການເຂົ້າຮ່ວມ	継ぎ方
ວຽກເກັບກ່ຽວໄມ້	集材作業
ວຽກງານຕັດໄມ້	伐出作業
ວຽກງານປຸກຝັ່ງ	育林作業
ວຽກງານປຸກຝັ່ງ	下刈り作業
ວຽກຕັດ	伐倒作業
ວຽກຕັດ	伐木作業
ວຽກແປຮູບໄມ້	造材作業

พาสาลาว	พาสายี่ปุ่น
ວຽກທີ່ເກືອບຈະເກີດອຸບັດຕິເຫດ	ヒヤリハット活動
ວຽກທີ່ປອດໄພ	安全作業
ວຽກເລື່ອຍ	チェーンソーワーク
ວັດສະດຸ	資材
ແວ່ນຕາ	バイザー
ແວ່ນຕານິລະໄພ	保護眼鏡
ຫິມະຕົກ	雪起こし
ເຫດໄພພິບັດ	災害事例
ຫ້ອໜ່ວຍທຸລະກິດປ່າໄມ້	林業事業体
ຫ້ອງການກວດການມາດຕະຖານແຮງງານ	労働基準監督署
ຫ້ອງການແຮງງານແຂວງ	都道府県労働局
ໜານຕົ້ນກ້າ	苗畑
ໜ້ຍໜ້ຽນ	摩耗
ໜຸດ	巻き落とし
ຫ້ກການໃຊ້ມືຊີ້ໄປພ້ອມກັບການເວົ້າ	指差し呼称
ຫ້ກການໃຊ້ມືຊີ້ໄປພ້ອມໆກັບການເວົ້າ	指差し唱和
ແຫ່ງອັນຕະລາຍ	危険源
ອາການຊ້ກຍ້ອນໄຂ້	熱けいれん
ອາການເປັນລົມຍ້ອນຄວາມຮ້ອນ	熱失神
ອາການເມື່ອຍລ້າຈາກຄວາມຮ້ອນ	熱疲労
ອຸບັດຕິເຫດແຮງງານ	労働災害
ອຸປະກອນຄວາມປອດໄພ	安全装置
ອຸປະກອນປ້ອງກັນ	保護具
ອຸປະກອນປ້ອງກັນທີ່ໃຊ້ໃນຍາມເຮັດວຽກ	作業用防護衣
ອຸປະກອນປົດລ້ອກສຸກເສີນ	緊急離脱装置
ອົງການປ່າໄມ້	林野庁
ອັນຄອບຫຸຫຸດສ່ຽງ	イヤマフ
ຮັກສາປ່າໄມ້	森林整備
ຮອຍບາກເພື່ອຕັດ	追い口
ຮອຍບາກຫ້ກ	受け口

โรมคำสับ พาสายี่ปุ่น → พาสาลาว

พาสายี่ปุ่น	พาสาลาว
2サイクルエンジン	ເຄື່ອງຈັກ 2 ຮອບ
3点支持肩掛けバンド	ສາຍຮັດນິລະໄພພາດບ່າ 3 ຈຸດ
6ポイントシステム	ລະບົບ 6 ຈຸດ
HH活動	ກິດຈະກຳ HH
アサリ出し	ຄົ້ມ
安全	ຄວາມປອດໄພ
安全衛生教育	ການຮຽນຮູ້ກ່ຽວກັບຄວາມປອດ ແລະ ສຸຂະສຶກສາ
安全作業	ວຽກທີ່ປອດໄພ
安全装置	ອຸປະກອນຄວາມປອດໄພ
安全対策	ມາດຕະການຄວາມປອດໄພ
安全に関する留意	ການເອົາໃຈໃສ່ຄວາມປອດໄພ
安全力	ຄວາມປອດໄພ
育林作業	ວຽກງານປຸກຝັ່ງ
イヤマフ	ອັນຄອບຫູຫຸດສຽງ
植え付け	ການປຸກ
受け口	ຮອຍບາກໜ້າ
枝打ち	ການຕັດແຕ່ງກິ່ງໄມ້
枝払い	ການຕັດງ່າໄມ້
追い口	ຮອຍບາກເພື່ອຕັດ
往復刈り	ຕັດຫຍ້າ
屋外労働	ການເຮັດວຽກກາງແຈ້ງ
ガイドバー	ສາຍພານລ່ຳລຽງ
カッター	ຄັດເຕີ
カマ	ກ່ຽວ
刈刃	ໃບເລື່ອຍຕັດຫຍ້າ
刈刃の目立て	ປາຍແໜມຂອງໃບເລື່ອຍຕັດຫຍ້າ
刈払機	ເຄື່ອງຕັດຫຍ້າ
間伐作業	ການຈັດປ່າ
機械	ເຄື່ອງ
危険因子	ປັດໃຈຄວາມສ່ຽງ
危険源	ແຫ່ງອັນຕະລາຍ
危険ステッカー	ສະຕິກເກີທີ່ຊີ້ບອກຄວາມ ອັນຕະລາຍ
危険生物	ສັດທີ່ເປັນອັນຕະລາຍ
危険な動植物	ພືດແລະສັດອັນຕະລາຍ
危険の見える化活動	ກິດຈະກຳການເບິ່ງເຫັນ ອັນຕະລາຍ
危険マーカー	ເຄື່ອງໝາຍອັນຕະລາຍ
危険予知トレーニング	ການຝຶກອົບຮົມກ່ຽວກັບການຄາດຄະເນ ອັນຕະລາຍ
危険予知活動	ກິດຈະກຳການຄາດຄະເນ ອັນຕະລາຍ
危険予知ミーティング	ກອງປະຊຸມຄາດຄະເນອັນຕະລາຍ
キックバック	ຈ່າຍເງິນຄືນ
技能者	ຄົນທີ່ມີທັກສະ
共通	ທົ່ວໄປ

พาสายี่ปุ่น	พาสาลาว
緊急離脱装置	ອຸປະກອນປົດລ໋ອກສຸກເສີນ
キンク	ງ່
傾斜地	ຄ້ອຍ
健康管理	ການຄຸ້ມຄອງສຸຂະພາບ
健康経営	ການບໍ່ລິຫານສຸຂະພາບ
現場管理	ການຄຸ້ມຄອງສະຖານທີ່
厚生労働省	ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ
混合燃料	ນ້ຳມັນປະສົມ
コンテナ苗	ຖາດກ້າເບ້ຍ
災害事例	ເຫດໄພພິບັດ
作業衣	ເຄື່ອງນຸ່ງຮັດວຽກ
作業計画	ແຜນການຮັດວຽກ
作業用防護衣	ອຸປະກອນປ້ອງກັນທີ່ໃຊ້ໃນຍາມ ຮັດວຽກ
笹刈刃	ໃບເລື່ອຍມົນ
挿し木苗	ການຄັດຕົ້ນກ້າ
シカ対策	ມາດຕະການຕ້ານກວາງ
地拵え	ເຄື່ອງປັ້ນດິນເຜົາ
資材	ວັດສະດຸ
事前踏査	ການສ່ຳຫວດເບື້ອງຕົ້ນ
下刈り	ຕັດຫຍ້າ
下刈り作業	ວຽກງານປຸກຝັ່ງ
獣害防除	ການຄວບຄຸມສັດຕູພືດ
集材	ການເກັບກ່ຽວໄມ້
集材機	ເຄື່ອງເກັບກ່ຽວໄມ້
集材作業	ວຽກເກັບກ່ຽວໄມ້
手工具	ເຄື່ອງມື
主伐	ການຕັດຕົ້ນຕ່ ການຕັດຕ່
上下作業	ການຮັດວຽກບ່ອນຕ່ຳ ແລະ ບ່ອນສູງ
上下作業・往復刈り禁止	ການຮັດວຽກບ່ອນຕ່ຳ ແລະ ບ່ອນສູງ ແລະ ຕັດຫຍ້າ
職業病	ພະຍາດອາຊີບ
植栽	ການປຸກ
食事バランスガイド	ຄູ່ມືການກິນຢ່າງສົມດຸນ
除伐	ການເກັບກ
人工林	ປ່າປະດິດ
振動障害	ຄວາມຜິດປົກກະຕິທີ່ເກີດຈາກ ການສັ່ນ
森林害虫	ສັດຕູພືດປ່າ
森林整備	ຮັກສາປ່າໄມ້
森林被害	ຄວາມເສຍຫາຍຂອງປ່າໄມ້
スプライス	ປະປົນ
生活習慣リスク	ຄວາມສ່ຽງຕໍ່ການດຳລົງຊີວິດ
造材	ໄມ້ແປຮູບ
造材作業	ວຽກແປຮູບໄມ້

พาสายี่ปุ่น	พาสาลาว
造林	ການປຸກປ່າ
ソーチェーン	ສາຍໂສ້
素材生産	ການຜະລິດວັດສະດຸ
玉切り	ເຄື່ອງຕັດລຸກມົນ
ため枝	ງ່າຍອດ
断線	ຂາດ
チェーンオイル	ນ້ຳມັນໂສ້
チェーンソー	ເລື່ອຍ
チェーンソーワーク	ວຽກເລື່ອຍ
チップソー	ໃບເລື່ອຍວົງເດືອນ
継ぎ方	ວິທີການເຂົ້າຮ່ວມ
つる切り	ເຄື່ອງຕັດເຄືອ
つるの根元切断	ການຕັດຮາກເຄືອໄມ້
定期点検	ການກວດກາແຕ່ລະໄລຍະ
手ノコ	ເລື່ອຍມື
デプスゲージ	ເຄື່ອງວັດແທກຄວາມເລິກ
点検	ການກວດກາ
転倒防止	ການປ້ອງກັນການລົ້ມ
天然林	ປ່າທ່າມະຊາດ
道具	ເຄື່ອງມື
都道府県労働局	ຫ້ອງການແຮງງານແຂວງ
内角	ມຸມພາຍໃນ
苗木	ເບ້ຍ
苗畑	ໜານຕົ້ນກ້າ
ナタ	ດ້ວມ
熱けいれん	ອາການຊັກຍ້ອນໄຂ້
熱失神	ອາການເປັນລົມຍ້ອນຄວາມຮ້ອນ
熱射病	ໂລກແພ້ຄວາມຮ້ອນ
熱中症	ເປັນລົມ
熱疲労	ອາການເມື່ອຍລ້າຈາກຄວາມຮ້ອນ
ノコ	ເລື່ອຍ
鋸刃	ໃບເລື່ອຍ
バイザー	ແວ່ນຕາ
ハインリッヒの法則	ກົດຕາມຂອງເຮັນຣິດ (Heinrich)
裸苗	ເບ້ຍທີ່ມີແຕ່ກ້ຽງແລະຮາກ
ハチ	ເຜິ້ງ
ハチ刺され	ເຜິ້ງຕອດ
バックスロープ型	ຄວາມລາດລຸ່ນດ້ານຫຼັງ
伐採箇所	ບ່ອນຕັດໄມ້
伐出作業	ວຽກງານຕັດໄມ້
伐倒	ການຕັດ
伐倒作業	ວຽກຕັດ
伐木作業	ວຽກຕັດ
伐木造材	ຕັດໄມ້
刃研ぎ	ການລັບໃບມີດ
飛散防護カバー	ຝາຄອບປ້ອງກັນເສດແຕກຫັກ
ヒヤリハット活動	ວຽກທີ່ເກືອບຈະເກີດອຸບັດຕິເຫດ
病害	ພະຍາດ

พาสายี่ปุ่น	พาสาลาว
疲労蓄積度	ລະດັບຄວາມເມື່ອຍລ້າທີ່ສະສົມ
フック型	ປະເພດຂໍເກາະ
プレゼンティーイズム損失	ພາວະທີ່ຄົນງານບໍ່ສາມາດເຮັດວຽກໄດ້ເຕັມທີ່
保育間伐	ການຄັດສັນຕົ້ນກ້າ
防振手袋	ຖົງມືຕ້ານການສັ່ນສະເທືອນ
保護具	ອຸປະກອນປ້ອງກັນ
保護眼鏡	ແວ່ນຕານິລະໄພ
巻き落とし	ຫຼຸດ
摩耗	ໜ້ຍໜ້ຽນ
実生苗	ເບ້ຍ
耳栓	ແໜອຍັດຫູ
無災害	ຢຸດຕິໄພພິບັດ
目立て	ຈຸດດັ່ນ
メンテナンス	ບ່າລຸງຮັກສາ
ヤスリ	ຕະໄບ
野生動物	ສັດປ່າ
山割り	ການຈັດສັນພຸ
有害な動植物	ພືດແລະສັດທີ່ເປັນອັນຕະລາຍ
雪起こし	ຫົ່ມະຕົ່ກ
指差し呼称	ຫຼ້ກການໃຊ້ມືຊີ້ໃປພ້ອມກັບການເວົ້າ
指差し唱和	ຫຼ້ກການໃຊ້ມືຊີ້ໃປພ້ອມໆກັບການເວົ້າ
腰痛予防体操	ການອອກກ່ຳລັງກາຍເພື່ອປ້ອງກັນບ່ໃຫ້ເຈັບແອວ
リスクアセスメント	ການປະເມີນຄວາມສ່ຽງ
利用間伐	ການໃຊ້ປະໂຫຍດຈາກການຕອນ
林業事業体	ຫ້ວໜ່ວຍທຸລະກິດປ່າໄມ້
林業の社会的責任	ຄວາມຮັບຜິດຊອບຕ່ໍສັງຄົມຂອງປ່າໄມ້
林野庁	ອົງການປ່າໄມ້
労働基準監督署	ຫ້ອງການກວດກາມາດຕະຖານແຮງງານ
労働災害	ອຸບັດຕິເຫດແຮງງານ
ワイヤロープ	ສາຍເຊືອກ

ລາຍການອຸປະກອນຄວາມປອດໄພ

ອຸປະກອນຄວາມປອດໄພທີ່ຈຳເປັນ ສຳລັບການປະຕິບັດງານ ຂອງແຕ່ລະລາຍການ

ໝາຍເລກລາຍການ	ຊື່ລາຍການ	ເນື້ອໃນ ການຝຶກອົບຮົມ	ອຸປະກອນຄວາມປອດໄພ
07	ວຽກງານການປູກປ່າທີ່ ປອດໄພ	ວຽກງານກະກຽມດິນ	ໝວກກັນກະທົບ, ໝາກຫວີດ, ໜ້າກາກປ້ອງກັນຄວາມປອດໄພ (ແວ່ນບັງໜ້າ/ຕາ), ສະເບົ້າອັດຫູ (ແນວປິດຫູ), ຕາໜ່າງປ້ອງກັນ, ຖົງມືປ້ອງກັນການສັ່ນສະ ເທືອນ, ເຄື່ອງນຸ່ງປ້ອງກັນໃບເລື່ອຍ, ສາຍຫັດແອວ ເຄື່ອງຕັດຫຍ້າ, ສາຍຫັດຕົ້ນຂາ, ສະໜັບປ້ອງກັນໜ້າແຂ່ງ, ເກີບໂບກປ້ອງກັນ ຫຼື ເກີບຄວາມປອດໄພ ແລະ ອື່ນໆ. <ໃຫ້ເລືອກເອົາຕາມຄວາມຈຳເປັນ>
		ວຽກງານການປູກ	ໝວກກັນກະທົບ, ໝາກຫວີດ, ໜ້າກາກຄວາມປອດໄພ (ແວ່ນ ບັງໜ້າ/ຕາ), ຕາໜ່າງປ້ອງກັນ, ຖົງມື, ເກີບໂບກປ້ອງກັນ ຫຼື ເກີບ ຄວາມປອດໄພ ແລະ ອື່ນໆ. <ໃຫ້ເລືອກເອົາຕາມຄວາມຈຳເປັນ>
09	ການປະຕິບັດວຽກງານ ດ້ານປ່າໄມ້ ທີ່ປອດໄພ	ວຽກງານການຕັດ ຫຍ້າ	ໝວກກັນກະທົບ, ໝາກຫວີດ, ໜ້າກາກປ້ອງກັນຄວາມປອດໄພ (ແວ່ນບັງໜ້າ/ຕາ), ສະເບົ້າອັດຫູ (ແນວປິດຫູ), ຕາໜ່າງປ້ອງກັນ, ຖົງມືປ້ອງກັນການສັ່ນ ສະເທືອນ, ເຄື່ອງນຸ່ງປ້ອງກັນໃບເລື່ອຍ, ສາຍຫັດແອວ ຈັກຕັດຫຍ້າ, ສາຍຫັດຕົ້ນຂາ, ສະນັບຂາ, ເກີບ ໂບກປ້ອງກັນ ຫຼື ເກີບຄວາມປອດໄພ ແລະ ອື່ນໆ.
11	ວຽກງານການແປຮູບໄມ້ ທີ່ປອດໄພ	ວຽກງານແປຮູບໄມ້	ຫມວກກັນກະທົບ, ໝາກຫວີດ, ຫນ້າກາກໜ້າກາກປ້ອງກັນ ຄວາມປອດໄພ (ແວ່ນບັງໜ້າ/ຕາ), ສະເບົ້າອັດຫູ (ແນວປິດຫູ), ຖົງມືກັນການສັ່ນສະເທືອນ, ເຄື່ອງນຸ່ງປ້ອງກັນໃບເລື່ອຍ (ໂສ້ງ ເລື່ອຍ), ເກີບໂບກປ້ອງກັນ ຫຼື ເກີບຄວາມປອດໄພ ແລະ ອື່ນໆ.

ดัดຊະນີ

ก

ກ້າເບ້ຍໄມ້ດ້ວຍດິນ 118
ກຳຈັດສານພິດ 135
ການກະກຽມພື້ນທີ່ 17, 109, 112, 115, 131, 138
ການຂອດກັນ Kink 88, 89, 91
ການສະແດງຮູບພາບ ໃຫ້ເຫັນເຖິງຄວາມອັນຕະລາຍ 2, 23
ການສູນເສຍຍ້ອນເຮັດວຽກບໍ່ໄດ້ຕາມແຜນການ 29
ການໃຊ້ມື ລົງປະຕິບັດຕົວຈິງ 21, 178, 197
ການໃຊ້ມື ລົງປະຕິບັດຕົວຈິງ 21
ການດິດກັບ (ການຕີກັບ) 54, 60, 70, 71, 81, 156, 162, 168,183,190,196,210,220
ການຕໍ່ເຄິ່ງຍາວ 96, 99
ການຕໍ່ແບບສັ້ນ 96, 99
ການຕັດຊຳ 117
ການຕັດຕອນເພື່ອບົວລະບັດ 16, 201
ການຕັດໄມ້ທ່ອນ (ບັ່ນທ່ອນ) 196, 212, 214, 226, 230
ການປະເມີນຄວາມສ່ຽງ 2, 22, 28
ການປູກສາມຫຼ່ຽມຈັດຕຸລັດ (ການປູກສາມຫຼ່ຽມ) 123, 142, 143
ການປູກສີ່ຫຼ່ຽມຈັດຕຸລັດ (ການປູກສີ່ຫຼ່ຽມ) 123, 142, 143
ການປູກແບບຊິກແຊັກ (ການປູກແບບເຊ) 142
ການປູກເປັນຕາໜ່າງ 142, 143
ການປັກຊຳດ້ວຍກິ່ງ 109, 115, 117
ການປັບແຕ່ງ ໃນຮູບແບບຈັກສານ (Eye Splice) 96
ການປັບແຕ່ງແບບເປັນຮ່ວງ 96
ການເປັນວົນ (ໂລກລົມຊັກ) 26, 34, 35, 40, 42, 162
ການປ້ອງກັນການກໍ້ສາຍເຊືອກທີ່ບໍ່ສະໜ່ຳສະເໝີກັນ 93
ການຜະລິດເບ້ຍໄມ້ໃນເຂດພູສູງ 115
ການພັນແບບທຳມະດາ 89, 92
ການມັດແບບສະກູ (ການຫັດໄມ້) 100
ການມັດແບບຫັນນອດລັອກກະແຈ 102
ການມັດຮ່ວງປາຍເຊືອກ 100, 193
ການອັດບີບແຮງດັນ ໃນຮູບແບບແປຮູບ 97
ການອົບອຸ່ນຮ່າງກາຍ ເພື່ອປ້ອງກັນການປວດຫຼັງ ແລະ ແອວ 27
ການເຮັດປອກ 92, 94
ກອງປະຊຸມຄາດຄະເນ ເຖິງຄວາມສ່ຽງທີ່ຈະເປັນອັນຕະລາຍ 2, 8
ເກີບປ້ອງກັນຄວາມປອດໄພ 16, 132
ກ່ຽວ 55, 104, 112, 136, 138, 160, 172, 186
ກຽວແບບໂຕ Z (ຈາກຂວາ) 89
ກຽວແບບໂຕ S (ຈາກຊ້າຍ) 89, 92, 94
ກ່ຽວໃຫຍ່ 160
ກວາງ 124, 147, 149, 153

ຂ, ຄ

ແຂ້ວໃບເລື່ອຍ 54, 65, 66, 68

ຄ

ຄີມລ້ອກ ແບບພົກພາຂະໜາດນ້ອຍ 82
ຄັນເລັ່ງແບບຕາຍໂຕ 61
ຄັນເລັ່ງແບບມີເດືອ (ແບບໄກປືນ) 61
ເຄື່ອງເຈາະຮູ 113, 121, 146
ເຄື່ອງຕັດ ແລະ ແມ່ພິມ (ໃບມີດປະເພດເຄິ່ງມົນ) 78
ເຄື່ອງຕັດຫຍ້າແບບເປ້ຫຼັງ 56, 160, 180
ເຄື່ອງນຸ່ງປ້ອງກັນຈັກເລື່ອຍໄມ້ 16, 132, 216
ເຄື່ອງນຸ່ງຫົ່ມ 16, 35, 38, 177, 188
ເຄື່ອງວັດແທກຄວາມເລິກ 71, 79, 81, 85
ເຄື່ອງໝາຍຊີ້ບອກອັນຕະລາຍ 24
ຄວາມຄອຍຊັນດ້ານຫຼັງ 85

ຈ

ຈັກເຄື່ອງຕັດຫຍ້າແບບພາຍຢູ່ບ່າ 56, 60, 160, 180
ຈັກເລື່ອຍໄມ້ແບບມີແບັດເຕີລີ 75

ສ

ສະກ໊ອດເທບ/ຜ້າພັນ 148
ສະຕິກເກີທີ່ຊີ້ບອກເຖິງຄວາມອັນຕະລາຍ 24
ສາຍຮັດ 89
ສາຍຮັດ 78
ສາຍຮັດຕົ້ນຂາ 17, 60, 61, 160
ສາຍຮັບແອວ 56, 61, 160, 181
ສານຂັບໄລ່ 149, 155, 188
ສັນຍານຫຼັກ (ການຢືນຢັນການຍົກຍ້າຍ) 198
ເສັ້ນຜ່ານໃຈກາງ 89
ໂສ້ງປ້ອງກັນຄວາມປອດໄພ 16, 132, 190, 211, 216

ຊ

ຊັກເກັ່ງຍ້ອນຄວາມຮ້ອນ 26, 34
ຊ້ວນ 113, 120, 146

ດ

WBGT (ດັດສະດີວັດແທກຄວາມຮ້ອນໃນສະພາບແວດລ້ອມການເຮັດວຽກ) 40
ດ້ວງເຂົ້າກວາງ 127, 129, 169
ດ້ວງຊິດາ 127, 129
Tobikusare (ດ້ວງດຳ) 127

ຕ

ຕາໜ່າງປ້ອງກັນ 16
ໂຕແຕນ 135
ໂຕວັດ 71, 79, 85
ຕົ້ນໄມ້ງໍ 73
ຕົ້ນຢາງ 134, 189
ຕົ້ນຢາງຍີ່ປຸ່ນ 134, 189
ຕົວຕໍ່ກະດາດ (ຕົວຕໍ່ເຈ້ຍ) 135

ຖ

ຖົງມື 16, 54, 71, 99, 156, 160, 177
ຖາດ M Star 118

ท

ท่ำปูก 113, 121, 145

ม

น้ำมันใส่โส้ 71, 76, 86
น้ำมันเชื้อเพิงแบบปะสม 54, 69, 86
แนวทางการกินย่างสมดุน 26, 43, 44

บ

ใบมีด..... 71, 78, 81, 84
ใบมีดตัดหย้าแบบหมูนอ้อม (แบบวงเดือน) (JISB9212)
..... 58, 160
ใบเลื่อย (เลื่อยด้วยมื)..... 54, 59, 64, 160
ใบเลื่อยวงเดือน 54, 59, 64, 65, 68
ใบเลื่อยวงเดือน 59, 64, 65, 160
เบ้ยโถ 118, 120, 144
เบ้ยท่ำ/เบ้ยหูอด..... 118, 120
เบ้ยเป่า 115, 120, 141
บ่อมมูนออกมาย่ฎ์กของง่าไม้ 172, 192

ป

ปะเพดข็เกาะ 71, 85
ปะเพดเถิ่งชิ่ว 79, 82
ปะเพดเถื่องชิ่ว 79, 80, 82
ปะเพดชิ่วไมโถ Microchisel 79, 82
ปะเพดมือจับด้านเหิง 75
ปะเพดมือจับด้านหูัง 75
เป้นล์มย้อมถวามร้อม 26, 34

ผ

แผมภานจัดตั้งปะติบัด 8, 14, 202
แผ่นฉับเถื่อน.....78
แผมที่ชี้บอกเขดอันตะลาย 24
แผมวรุภ (แผมงาน)..... 2, 7, 10, 196, 201, 230

ฝ

ฝาโทบป้องกันฝุ่น (ฝาโทบป้องกันขี้เลื้อย)
..... 57, 60, 70, 160, 163, 177,185

พ

พะยาดมาราทาเภะ..... 128
พะยาดใบแห่วแห้งของต้มชูวิ..... 128
พะยาดใบไพ้ของต้มชูวิ 128
พะยาดปะละสิดต้มแปก (ขี้กะเดือมฝอย)..... 127
พะยาดเลชิมไทูของต้มรีโมกิ..... 128
พะยาดรากเม่ำของต้มส์ม ชะนิดใดพึ่ง 128
พาชะมะบันจุ (เบ้ย) 115, 120, 141, 144
พ้า 88, 105, 112, 120, 136, 142, 167,172,190

ม

ไม้สำลับรองสองด้าม 228
ไม้สำลับรองด้ามดรุว 228
ไม้ไร้ข้ต่ 169, 171
มุมปายใบมิด 66
มุมลาด.....67
แมงกะเบื้อยิบชิริโมกิ 127

ล

ละบับ 6 จุด..... 215, 221, 224
ไลยะห่างแข้วโส้ (เบ็โส้) 80, 90, 96
โลภพูมแพ้ถวามร้อม 26, 34
เลื่อย.....113, 120, 131, 136, 172

ว

วิทิการต่ำแบบยาว.....96, 99
วิทิการปับแต่งแบบ Flemish 98
วิทิแล้ง: Lang 89
แว่นบังหน้า/ตา.....16

ห

หินลับถ์ม 104, 106
ห้ามเธ็ดวรุภแบบแมวตั้ง ... 131, 138, 142, 176, 183, 215
เหตภานที่เกือบจะเภิดอุบัดติเหต (เหตภาน HH) 2, 4, 19, 28

หม

หมูมา 124
หน้าอรุงถ์มตัด 67
หม
หมี 124, 131, 155
หมากจ์ก 104, 113, 120, 146
หมากล้อกสะวิงแบบมือหมุน 199
หมายติก 135, 186
หมวกกันกะทับ 16
หล
หลิ้ม 212, 227, 229

อ

อาภานข่อก ย้อมพูมแพ้ 134, 162, 164
อาภานเมื่อยล้าจากถวามร้อม 26, 34
อุปะกอมปิดล้อกสุกเสิม 60, 160
อุปะกอมป้องกันภานต์ก (สายแอวมิละไพ) 170,191
อุปะกอมป้องกันสรุง 16
epipen 135, 164

ร

ริ้ว 147
รากพันกันเป้นวังม์น 116, 119

ຄູ່ມືການຝຶກອົບຮົມ
ກ່ຽວກັບວຽກງານຄຸ້ມຄອງ ແລະ ຮັກສາປ່າໄມ້
ແລະ ຜະລິດວັດສະດຸຈາກໄມ້

ເດືອນສິງຫາ ປີ2024

ເຜີຍແຜ່ໂດຍ: ສະຫະພັນກຳມະບານປ່າໄມ້ແຫ່ງຊາດ

ຊີ້ນຳໂດຍ: ອົງການປ່າໄມ້

* ບົດຝຶກອົບຮົມນີ້ໄດ້ຖືກສ້າງຂຶ້ນໃຫ້ສຳລັບຜູ້ເວົ້າພາສາຕ່າງປະເທດທີ່ເຮັດວຽກງານປ່າໄມ້ຢູ່ພາຍໃນປະເທດຍີ່ປຸ່ນ. (ສ້າງ ແລະຈັດພິມເປັນໂຄງການທີ່ສະໜັບສະໜູນໂດຍອົງການປ່າໄມ້). ສາມາດພິມ ແລະນຳໃຊ້ເປັນບົດຝຶກອົບຮົມ ສຳລັບຜູ້ເວົ້າພາສາຕ່າງປະເທດ.

* ລິຂະສິດຂອງຂໍ້ຄວາມ, ຮູບຖ່າຍ, ຮູບປະກອບ ແລະ ອື່ນໆ ໃນບົດຝຶກອົບຮົມນີ້ແມ່ນຢູ່ທີ່ສະມາຄົມປັບປຸງ ແລະ ຂະຫຍາຍປ່າໄມ້ແຫ່ງຊາດ, ແລະອື່ນໆ. ເນື້ອໃນຂອງບົດຝຶກອົບຮົມນີ້ບໍ່ສາມາດຄັດລອກ ຫຼືປ່ຽນແປງໂດຍບໍ່ໄດ້ຮັບອະນຸຍາດ, ຍົກເວັ້ນໃນກໍລະນີ "ການສຳເນົາສຳລັບການນຳໃຊ້ສ່ວນບຸກຄົນ" ຫຼື "ການອ້າງອີງ"ຕ່າງໆທີ່ຖືກອະນຸຍາດໂດຍກົດຫມາຍລິຂະສິດ.